# ການສຶກສາພຶດຕິກຳຄວາມຮຸນແຮງຂອງໄວລຸ້ນມັດທະຍົມ
# ສາທິດໃນວິທະຍາໄລຄູສາລະວັນ

**ທ້າວ ສີເຟືອງ ຈອມພະຈັນ**

ວິທະຍາໄລຄູ ສາລະວັນ

**2019- 2020**

# ການສຶກສາພຶດຕິກຳຄວາມຮຸນແຮງຂອງໄວລຸ້ນມັດທະຍົມ
# ສາທິດໃນວິທະຍາໄລຄູສາລະວັນ

ທ້າວ ສີເຟືອງ ຈອມພະຈັນ

ວິທະຍາໄລຄູ ສາລະວັນ

**2019- 2020**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**෴෴෴**

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ ເລກທີ................ສພ.ວສ

**ເອກະສານຮັບຮອງ**

**ອະນຸມັດຜ່ານການຮັບຮອງການເຮັດບົດວິໄຈສາຍວິທະຍາສາດສັງຄົມ**

**- ອີງຕາມ:** ຂໍ້ຕົກລົງວ່າດ້ວຍການຈັດຕັ້ງການເຄື່ອນໄຫວກິດຈະກຳສະພາວິທະຍາສາດຂອງວິທະຍາໄລຄູສາລະວັນປະຈຳສົກຮຽນ 2019 – 2020.

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນ, ຫຼັກການຂອງບັນດາອະນຸກຳມະການເຫັນວ່າບົດວິໄຈມີຄວາມຖືກຕ້ອງຕາມເຄົ້າໂຄງ ແລະ ເນື້ອໃນຫົວຂໍ້. ສະນັ້ນ, ສະພາວິທະຍາສາດຈຶ່ງໄດ້ຮັບຮອງເອົາປື້ມເຫຼັ້ມນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ - ການສອນໃນວິທະຍາໄລຄູສາລະວັນ.

| ຄະນະກຳມະການກວດສອບ | ລາຍເຊັນ |
|---|---|
| 1. ປທ ອຸດະມະ ແສງອາລຸນ | [signature] |
| 2. ປອ ໂພທອງ ພົງສິງຄາມ | [signature] |

**ທີ່, ສາລະວັນ, ວັນທີ .........................**

**ປະທານສະພາວິທະຍາສາດ**

ສົມບູນ ສີລິສິງຄາມ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໜໜໜໜໜໜໜໜ

ວິທະຍາໄລຄູສາລະວັນ

ສະພາວິທະຍາສາດ

## ເອກະສານຮັບຮອງການກວດແກ້ບົດວິໃຈ

| ລ/ດ | ຊື່ຫົວຂໍ້ | ພາກວິຊາ | ຜູ້ວິໃຈ-ທີມງານວິໃຈ | ທີ່ປຶກສາ |
|---|---|---|---|---|
| 1 | ການສຶກສາພຶດຕິກຳຄວາມຮຸນແຮງຂອງໄວລຸ້ນມັດທະຍົມສາທິດ ໃນວິທະຍາໄລຄູສາລະວັນສົກຮຽນ 2020 | ວິທະຍາສາດສັງຄົມ | ທ່ານ ສີເພືອງ ຈອມພະຈັນ | ທ່ານ ນ ພູວຽງ ອິນທະສອນ<br>ຊອ ປທ ສົມບູນ ຊາມູນຕີ |

| ຄະນະກຳມະການກວດແກ້ບົດ | ລາຍເຊັນ |
|---|---|
| ທ່ານ ນ ພູວຽງ ອິນທະສອນ | [signature] |
| ຊອ ປທ ສົມບູນ ຊາມູນຕີ | [signature] |

ທີ່, ສາລະວັນ, ວັນທີ .........................

ຫົວໜ້າພາກວິຊາສາຍ

[signature]

ນ. ຄຳສະຫວັນ ຈັນສີຍະວົງ

Khamsavan CHANSEEYAVONG

# ໃບກຽດຕິຄຸນ

ບົດວິໄຈສະບັບນີ້ສຳເລັດລຸລ່ວງໄດ້ຍ້ອນຄວາມເອົາໃຈໃສ່ ແລະ ຄວາມກະລຸນາຢ່າງສູງຈາກ ທ່ານ ປທ ສົມບູນ ຊານຸນຕີ ແລະ ທ່ານ ນ ພູວຽງ ອິນທະສອນ ທີ່ກະລຸນາໃຫ້ຄຳປຶກສາ ແລະ ແນະນຳແນວທາງທີ່ຖືກຕ້ອງຕະຫຼອດຈົນແກ້ໄຂຂໍ້ບົກຜ່ອງຕ່າງໆ ດ້ວຍຄວາມລະອຽດ ແລະ ເອົາໃຈໃສ່ດ້ວຍດີຕະຫຼອດ. ຂ້າພະເຈົ້ານາມຜູ້ວິໄຈຮູ້ສຶກຊາບຊຶ້ງໃນຄວາມກະລຸນາຂອງທ່ານເປັນຢ່າງຍິ່ງ, ຂ້າພະເຈົ້າໃນນາມຜູ້ວິໄຈຂໍສະແດງຄວາມຂອບໃຈເປັນຢ່າງສູງ ມານະໂອກາດນີ້ດ້ວຍ.

ຂໍຂອບໃຈຫົວໜ້າຫ້ອງການມັດທະຍົມສາທິດທີ່ໄດ້ໃຫ້ຄວາມຊ່ວຍເຫຼືອໃນການລົງເກັບກາຂໍ້ມູນຕະຫຼອດຮອດຄວາມຄິດເຫັນຕ່າງໆທີ່ປະກອບໃສ່ໃນການຂຽນບົດຄັ້ງນີ້.

ຂໍຂອບໃຈມາຍັງນັກຮຽນທີ່ຮຽນພາຍໃນມັດທະຍົມສາທິດວິທະຍາໄລຄູສາລະວັນໂດຍສະເພາະແມ່ນນັກຮຽນ ມໍ 1,ມໍ2 ແລະ ມໍ 3 ທີ່ໄດ້ໃຫ້ຄວາມຮ່ວມມືໃນການເກັບກຳຂໍ້ມູນໃນການສຶກສາວິໄຈຄັ້ງນີ້ດ້ວຍ.

ຄຸນຄ່າ ແລະ ປະໂຫຍດຂອງບົດວິໄຈສະບັບນີ້ ຂ້າພະເຈົ້າຂໍມອບເປັນຄຸນຄ່າ, ຜົນງານແກ່ນັກຮຽນທີ່ຮຽນພາຍໃນມັດທະຍົມສາທິດວິທະຍາໄລຄູສາລະວັນໂດຍສະເພາະແມ່ນນັກຮຽນ ມໍ 1,ມໍ2 ແລະ ມໍ 3 ໃນວິທະຍາໄລຄູສາລະວັນ ທີ່ເຮັດໃຫ້ຂ້າພະເຈົ້າໄດ້ຮັບຜົນສຳເລັດການສຶກສາວິໄຈຄັ້ງນີ້.

ສີເຟືອງ ຈອມພະຈັນ

# ບົດຄັດຫຍໍ້

**ຫົວຂໍ້ບົດວິໄຈ** ການສຶກສາພຶດຕິກໍາຄວາມຮຸ່ນແຮງຂອງໄວລຸ້ນມັດທະຍົມສາທິດ ໃນວິທະຍາໄລຄູສາລະວັນສົກຮຽນ 2020

ການສຶກສາຄັ້ງນີ້ເປັນນັກຮຽນໄວລຸ້ນທີ່ກໍາລັງສຶກສາໃນລະດັບມັດທະຍົມສຶກສາມີ ອາຍຸຕັ້ງແຕ່ 14-18 ປີ ພາກຮຽນທີ 2 ປີສົກຮຽນ 2019-2020 ຂອງໂຮງຮຽນມັດທະຍົມສາທິດວິທະຍາໄລຄູສາລະວັນ ຈໍານວນ 10 ຄົນ ໂດຍວິທີການສຸ່ມແບບເຈາະຈົ່ງ (Purposive sampling) ໂດຍຄູອາຈານປະຈໍາຊັ້ນແນະນໍາໃຫ້ສຶກສານັກຮຽນທັງ 10 ຄົນ ທີ່ມີພຶດຕິກໍາຄວາມຮຸນແຮງມີເກນການຄັດເລືອກດັ່ງນີ້: ລັກສະນະຂອງພຶດຕິກໍາຄວາມຮຸນແຮງທີ່ສະແດງອອກທາງກາຍ ລັກສະນະຂອງພຶດຕິກໍາຄວາມຮຸນແຮງທີ່ສະແດງອອກທາງວາຈາ

ເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ໄດ້ແກ່: ແບບສອບຖາມໄດ້ແກ່: ແບບສອບຖາມຂໍ້ມູນສ່ວນບຸກຄົນ, ແບບສໍາພາດໄດ້ແກ່: ແບບສໍາພາດຂໍ້ມູນດ້ານບຸກຄົນ, ແບບສໍາພາດຂໍ້ມູນດ້ານຄອບຄົວ, ແບບສໍາພາດຂໍ້ມູນ

**ຜົນການວິໄຈພົບວ່າ:**

ຈາກການສຶກສາພົບວ່າຂະບວນການເກີດພຶດຕິກໍາຄວາມຮຸນແຮງຂອງນັກຮຽນໄວລຸ້ນນັ້ນ ເກີດຈາກປັດໄຈຫຼາຍໆດ້ານທັງປັດໄຈດ້ານບຸກຄົນ, ປັດໄຈດ້ານຄອບຄົວ ແລະ ປັດໄຈທາງສັງຄົມ ລ້ວນແຕ່ມີຄວາມສໍາພັນຕໍ່ພຶດຕິກໍາຄວາມຮຸນແຮງຂອງນັກຮຽນໄວລຸ້ນດັ່ງຕໍ່ໄປນີ້:

ກຮຽນໄວລຸ້ນມີເລື່ອງທະເລາະຜິດກັນກັບຜູ້ປົກຄອງເປັນປະຈໍາມີທັດສະນະຄະຕິຕໍ່ພຶດຕິກໍາຄວາມຮຸນແຮງວ່າເປັນພຶດຕິກໍາທີ່ເປັນປົກກະຕິທໍາມະດາ ແລະ ການມີພຶດຕິກໍາຄວາມຮຸນແຮງແບບນີ້ເຮັດໃຫ້ເປັນທີ່ຍອມຮັບຂອງກຸ່ມໝູ່ເພື່ອນ, ເກີດຈາກການມີຄອບຄົວທີ່ບໍ່ສົມບູນ, ຄອບຄົວຢ່າຮ້າງ, ພໍ່ ຫຼື ແມ່ເສຍຊີວິດ, ນັກຮຽນຂາດການດູແລ ແລະ ເອົາໃຈໃສ່ຈາກຜູ້ປົກຄອງ, ບັນຍາກາດໃນເຮືອນບໍ່ໜ້າຢູ່ອາໄສມີການທະເລາະຜິດກັນລະຫວ່າງສະມາຊິກໃນຄອບຄົວ. ນັກຮຽນຖືກໝູ່ເພື່ອນຊັກຊວນໃຫ້ມີເລື່ອງຊົກຕ່ອຍທະເລາະວິວາດ, ນັກຮຽນມັກຕິດຕາມຂ່າວສານທາງນີ້ຫຼາຍເຮັດໃຫ້ນັກຮຽນນັກສຶກສາຍສ້າງຄວາມຮຸນແຮງທໍາຮ້າຍຮ່າງກາຍຈົນສິ່ງຜົນໃຫ້ເກີດຄວາມຊິນເຄີຍຕໍ່ພຶດຕິກໍາຄວາມຮຸນແຮງວ່າເປັນເລື່ອງທໍາມະດາຂອງໄວລຸ້ນ. ນັກຮຽນຫຼິ້ນເກມທີ່ມີເນື້ອຫາກ່ຽວກັບ ຄວາມຮຸນແຮງເປັນປະຈໍາຈະເຮັດໃຫ້ຊຶມຊັບເອົາພຶດຕິກໍາຄວາມຮຸນແຮງໄວ້ກັບຕົວເອງ ແລະ ມາສະແດງພຶດຕິກໍາຄວາມຮຸນແຮງຕໍ່ໝູ່ເພື່ອນ ຫຼື ຄົນທີ່ອ່ອນແອກວ່າ.

# ບົດທີ 1

# ບົດນຳ

## 1. ປະຫວັດຄວາມເປັນມາ

ຄວາມຮຸນແຮງໃນໄວລຸ້ນບໍ່ວ່າຈະເປັນກໍລະນີທີ່ໄວລຸ້ນເປັນຜູ້ເຄາະຮ້າຍ ຫຼື ເປັນຜູ້ກະທຳກໍຕາມ ກຳລັງເປັນບັນຫາເພີ່ມຄວາມຮຸນແຮງຂຶ້ນທົ່ວໂລກ ຄວາມຮຸນແຮງອາດເຮັດອອກມາໃນຮູບຂອງການທຳຮ້າຍຜູ້ອື່ນ ການປຸ້ນຊັບການທຳຮ້າຍທາງເພດ ຫລື ການຄາດຕະກຳ ໃນກໍລະນີຂອງການຕົກເປັນເຫຍື່ອຂອງຄວາມຮຸນແຮງນັ້ນ ອີງການອະນາໄມໂລກ ຄາດການວ່າ ໃນປີ ຄ.ສ. 2000 ມີໄວລຸ້ນອາຍຸລະຫວ່າງ 10 - 29 ປີ ຖືກໃຊ້ຄວາມຮຸນແຮງເຖິງແກ່ຊີວິດ 199,000 ຄົນທົ່ວໂລກ ສ່ວນໃນກໍລະນີໄວລຸ້ນທີ່ເປັນຜູ້ກະທຳນັ້ນພົບວ່າ 40% ຂອງໄວລຸ້ນຊາຍ ແລະ 30% ຂອງໄວລຸ້ນຊາຍມີ ອາຍຸ 17 ປີ ເຄີຍເຮັດຜິດກົດໝາຍຢ່າງຮຸນແຮງ ( serious violent offense ) ຢ່າງນ້ອຍ 1 ຄັ້ງໃນຊີວິດ (ອີງການອະນາໄມໂລກ, 2002 ອ້າງອີງຈາກ , ອຸມາບົດ ຕັງສົມບັດ, 2006 ສອດຄ່ອງກັບ ເພັດຈັນ ປະດັບເຊີເລີ ແລະ ຄະນະ (2008) ກ່າວວ່າຄວາມຮຸນແຮງໃນໄວເດັກ ແລະ ເຍົາວະຊົນມີຫຼາຍຮູບແບບທັງເປັນຜູ້ກະທຳ ແລະ ເປັນຜູ້ຖືກປະພຶດ ພຶດຕິກຳຄວາມຮຸນແຮງແຝງຢູ່ໃນຊີວິດປະຈຳວັນຂອງເຍົາວະຊົນ ຈົນກາຍເປັນເລື່ອງທຳມະດາ ໂດຍຄວາມຮຸນແຮງເກີດຂຶ້ນໃນທຸກມິຕິຂອງເດັກ ແລະ ເຍົາວະຊົນ ທັງການເຫັນຄວາມຮຸນແຮງໃນເຮືອນຖືກກະທຳຄວາມຮຸນແຮງໃນຄອບຄົວ ຫລື ຖືກກະທຳຄວາມຮຸນແຮງຈາກຄອບຄົວໄປຫາໂຮງຮຽນໃນກຸ່ມໝູ່ເພື່ອນຈົນສິ່ງດັ່ງກ່າວຖືກຮັບຮູ້ວ່າເປັນເລື່ອງທຳມະດາ.

ເທີວິນ ຂໍໜຽວກາງ (2003: ອອນໄລ ) ໄດ້ສຶກສາການໃຊ້ຄວາມຮຸນແຮງຂອງນັກຮຽນໄວລຸ້ນພົບວ່າຈຳນວນນັກຮຽນຜູ້ຊາຍທີ່ເຄີຍຖືກຄູຮ້າຍ ຫລື ລົງໂທດມີຢູ່ 16.0 % ທີ່ເຄີຍຄິດຈະທຳຮ້າຍຄູຄົນນັ້ນ 19.2% ເຄີຍທະເລາະວິວາດກັບເພື່ອນຮ່ວມສະຖາບັນ 17.1% ເຄີຍທະເລາະວິວາດກັບຄົນອື່ນນອກສະຖາບັນດ້ວຍສາເຫດສຳຄັນໄດ້ແກ່: ເກີດອາການກວນກັນ, ບໍ່ມັກໜ້າກັນ, ການດູໝິ່ນສະຖາບັນການສຶກສາ, ການຍາດແຟນ/ຍາດຈີບຜູ້ຍິງ ແລະ ການກະທົບກະທັ່ງທາງຮ່າງກາຍ ແລະ ວາຈາ (ເຊັ່ນ ຢຽບຕີນຍ່າງຊົນກັນ ແຊວກັນ ) ແລະ ທີ່ສົນໃຈກໍຄືໃນບັນດານັກຮຽນຜູ້ຊາຍທີ່ເຄີຍທະເລາະວິວາດກັບຄົນອື່ນນອກໂຮງຮຽນມີເຖິງ 62.4% ທີ່ຄິດຈະໄປທຳຮ້າຍຄົນທີ່ເຄີຍຜິດກັນນຳ ສອດຄ່ອງກັບ ສົມພົງ ຈິດລະດັບ (2003 ) ທີ່ກ່າວເຖິງ ຄວາມຮຸນແຮງວ່າ ບັນຫາຄວາມຮຸນແຮງຂອງສັງຄົມນັ້ນເພີ່ມຄວາມຮຸນແຮງຂຶ້ນຍ່ອມກໍ່ໃຫ້ເກີດຜົນກະທົບຕໍ່ບຸກຄົນໃນສັງຄົມ ໂດຍສະເພາະໄວລຸ້ນ ທີ່ນອກຈາກຈະເປັນເຫຍື່ອຂອງຄວາມຮຸນແຮງແລ້ວ ຍັງເປັນຜູ້ກໍຄວາມຮຸນແຮງເອງອີກດ້ວຍ ເພາະຂະນະນີ້ສັງຄົມໄດ້ສ້າງເດັກລຸ້ນໃໝ່ທີ່ມີລັກສະນະສະພາບຮ່າງກາຍອ່ອນແອ ສະຕິປັນຍາມີແນວໂນ້ມຕ່ຳລົງຂາດພູມຕ້ານທານ, ບັນຫາອ້ວນຕຸ້ຍ, ຫຼົງໄຫຼໃນວັດຖຸນິຍົມ ແລະ ທີ່ສຳຄັນມີຄວາມອາລົມຮຸນແຮງ ນອກຈາກນີ້ ຜົດງ ອາລະຍະວິວູ ( 1999 ) ກ່າວວ່າ ສະໄໝກ່ອນສັງຄົມບໍ່ມີບັນຫາທີ່ສະລັບຊັບຊ້ອນ ແລະ ລະບົບຄອບຄົວກໍ່ມີອິດທິພົນຕໍ່ສັງຄົມ

ຫລາຍເຮັດໃຫ້ບໍ່ມີບັນຫາກ່ຽວກັບພຶດຕິກຳຂອງເດັກເທົ່າໃດ ປັດຈຸບັນນີ້ສັງຄົມປ່ຽນໄປມີອີງປະກອບຫຼາຍຢ່າງມີຜົນຕໍ່ສັງຄົມໂດຍສະເພາະສັງຄົມໃນຕົວເມືອງໃຫຍ່ ເຊັ່ນ: ເມືອງໃຫຍ່ ມີຈຳນວນເດັກທີ່ມີບັນຫາທາງພຶດຕິກຳມີຫລາຍຂຶ້ນ ແລະ ບັນຫາທາງພຶດຕິກຳມີຄວາມຮຸນແຮງຫລາຍຂຶ້ນກວ່າແຕ່ກ່ອນ ຄວາມສັບສົນວຸ່ນວາຍຕ່າງໆໃນເມືອງໃຫຍ່ ຄວາມບໍ່ເປັນລະບຽບຂອງສັງຄົມແບບຢ່າງທີ່ບໍ່ດີຂອງຜູ້ໃຫຍ່ ບັນຫາຄວາມຄັບແຄ້ນທາງດ້ານເສດຖະກິດ ແລະ ສິ່ງຢົ່ວຢອນໃຈຕ່າງໆທີ່ມີຢູ່ອ້ອມຕົວເດັກເຮັດໃຫ້ເດັກມີພຶດຕິກຳທີ່ເປັນບັນຫາເພີ່ມຫລາຍຂຶ້ນ.

ເດັກໄວລຸ້ນອາຍຸລະຫວ່າງ 15 - 18 ປີ ມີລັກສະນະທາງຮ່າງກາຍທີ່ຈະເລີນເຕີບໂຕເຕັມທີ່ເລີ່ມມີພັດທະນາການທາງເພດ, ລັກສະນະທາງອາລົມ, ຕ້ອງການຄວາມອິດສະຫລະຫລາຍຂຶ້ນ ຈຶ່ງມັກຂັດແຍ່ງກັບພໍ່ ແມ່ພໍ່ແມ່ຢູ່ສະເໝີ ເຮັດໃຫ້ ເກີດຊ່ອງວ່າງລະຫວ່າງໄວມີການສະແດງອອກທີ່ແຂງກະດ້າງ ເປັນການປ່ຽນແປງຈາກໄວເດັກສູ່ໄວຜູ້ໃຫຍ່ ເຮັດຕາມກຸ່ມເພື່ອນມີຄວາມຂັດແຍ່ງກັບຜູ້ໃຫຍ່ຫລາຍຂຶ້ນ ສອດຄ່ອງກັບ ສີເຮືອນ ແກ້ວກັງວານ (2006) ກ່າວວ່າ ເດັກໄວລຸ້ນມີອາລົມປ່ຽນແປງງ່າຍ ສັບສົນອ່ອນໄຫວ ມີຄວາມເຂັ້ມຂອງອາລົມສູງບາງຄັ້ງຂີ້ດື້ເອົາແຕ່ໃຈຕົນເອງບໍ່ວ່າອາລົມປະເພດໃດມັກມີຄວາມຮຸນແຮງ.

ຜົນກະທົບຈາກການໃຊ້ຄວາມຮຸນແຮງພົບວ່າ ຄອບຄົວເປັນສະຖາບັນທີ່ມີຄວາມໃກ້ຊິດກັບເດັກ ແລະ ເຍົາວະຊົນຫລາຍທີ່ສຸດ ຫາກມີການໃຊ້ຄວາມຮຸນແຮງໃນຄອບຄົວ ໂອກາດທີ່ສະມາຊິກໃນຄອບຄົວໂດຍສະເພາະເດັກຈະຕົກເປັນເຫຍື່ອຈະສູງກວ່າ ໃນຂະນະດຽວກັນການໃຊ້ຄວາມຮຸນແຮງໃນຄອບຄົວເປັນພຶດຕິກຳອາດຊະຍາກອນທີ່ໃກ້ຊິດກັບເດັກ ແລະ ເຍົາວະຊົນຫລາຍທີ່ສຸດໂດຍເດັກ ແລະ ເຍົາວະຊົນສາມາດ ຮຽນຮູ້ພຶດຕິກຳດັ່ງກ່າວໄດ້ງ່າຍກວ່າພຶດຕິກຳອາດຊະຍາກອນປະເພດອື່ນໂດຍສະເພາະປັດຈຸບັນບາງປະເທດ ກຳລັງປະສົບກັບບັນຫາອາດຊະຍາກອນປະເພດໜຶ່ງ ຊຶ່ງໄດ້ເພີ່ມຄວາມຮຸນແຮງຫລາຍຂຶ້ນ ບັນຫາການກະທຳຜິດຂອງເດັກ ແລະ ເຍົາວະຊົນທີ່ມີພຶດຕິກຳການໃຊ້ຄວາມຮຸນແຮງໃນການກະທຳຜິດອັນບໍ່ແຕກຕ່າງຈາກພຶດຕິກຳຜູ້ໃຫຍ່ ຜົນກະທົບຈາກພຶດຕິກຳຄວາມຮຸນແຮງຕໍ່ເດັກ ແລະ ໄວລຸ້ນພົບວ່າ ເດັກທີ່ຖືກບິດາມານດາລົງໂທດແບບຮຸນແຮງຫຼາຍໆຄັ້ງຍ່ອມມີ ຜົນກະທົບຕໍ່ພັດທະນາການ ການຈະເລີນເຕີບໂຕຊ້າ ແຄຣະແກຣນມີອາການປະສາດ ຫລື ວິຕົກກັງວົນສູງ ຂາດຄວາມ ເຊື່ອໝັ້ນໃນຕົນເອງໃນດ້ານທັດສະນະຄະຕິຂອງເດັກຈະເບິ່ງໂລກໃນແງ່ຮ້າຍກຽດຊັງຜູ້ໃຫຍ່ ຈະມີຄວາມຮູ້ສຶກວ່າພໍ່ແມ່ປະຕິເສດຖືກຖິ້ມມີຄວາມຮູ້ສຶກວ່າພໍ່ແມ່ເຂັ້ມງວດລົງໂທດໂຫດຮ້າຍທາລຸນ.

ດັ່ງເຊັ່ນ ບາເດນ ( Barden, 1994 ) ກ່າວວ່າ ຄວາມຮຸນແຮງເປັນປາກົດການທີ່ມີຄວາມສັບຊ້ອນ ແລະ ມີສາເຫດຈາກປັດໃຈຫຼາຍດ້ານ ຊຶ່ງປັດໃຈທີ່ມີອິດທິພົນຕໍ່ຄວາມຮຸນແຮງໄດ້ແກ່ປັດໃຈສ່ວນຕົວ, ປັດໃຈດ້ານຄອບຄົວ, ປັດໃຈດ້ານອິດທິພົນທາງສັງຄົມ ໂດຍສະເພາະກຸ່ມໝູ່ເພື່ອນ ແລະ ຄົນໃກ້ຊິດປັດໃຈເຫຼົ່ານີ້ລ້ວນສົ່ງຜົນຕໍ່ພຶດຕິກຳຄວາມຮຸນແຮງຂອງກຸ່ມໄວລຸ້ນ ສອດຄ່ອງກັບ ບັນບິດ ສິນໄພສານ (2008 : ອອນໄລ ) ກ່າວວ່າ ຄວາມຮຸນແຮງຂອງໄວລຸ້ນ ເລີ່ມມີສະຖິຕິສູງຂຶ້ນໂດຍມີສາເຫດຈາກຫຼາຍປັດໃຈໄດ້ແກ່ ປັດໃຈສ່ວນຕົວຂອງເດັກໄວລຸ້ນທີ່ໃຊ້ຄວາມຮຸນແຮງສິ່ງກະຕຸ້ນທາງສັງຄົມສື່ ແລະ ເກມທີ່ມີ

ເນື້ອຫາກ່ຽວກັບຄວາມຮຸນແຮງ ລວມທັງສາເຫດສຳຄັນຄືການອົບຮົມລ້ຽງດູຈາກຄອບຄົວ ນອກຈາກນີ້ ອຸມາພອນ ຕັງ ສົມບັດ (2006) ສຶກສາກ່ຽວກັບຄວາມຮຸນແຮງໃນໄວລຸ້ນ ພົບວ່າສາເຫດການເກີດຄວາມຮຸນແຮງກ່ຽວຂ້ອງກັບປັດໃຈສ່ວນຕົວຂອງໄວລຸ້ນເອງ ເຊັ່ນ ຄ່ານິຍົມ ແລະ ໃຊ້ຄວາມຮຸນແຮງໃນການແກ້ໄຂບັນຫາ ຮ່ວມໄປກັບຄ່ານິຍົມເລື່ອງຂອງສັກສີ ເມື່ອມີເຫດການທີ່ເຮັດໃຫ້ຮູ້ສຶກຖືກທ້າທາຍສັກສີ ກໍເຮັດໃຫ້ເກີດພຶດຕິກຳຄວາມຮຸນແຮງຂຶ້ນມາ ມັກເປັນຄວາມຄຽດ, ການຄວບຄຸມອາລົມຕົນເອງບໍ່ໄດ້ ແລະ ຖືກຫມູ່ເພື່ອນຊັກຊວນໃຫ້ເຮັດຜິດ.

ເຫັນໄດ້ວ່າຄວາມຮຸນແຮງທີ່ເວົ້າມານັ້ນມັນສອດຄ່ອງກັບພຶດຕະກຳຂອງນັກຮຽນບາງຄົນໃນໂຮງຮຽນມັດທະຍົມສາທິດວິທະຍາໄລຄູສາລະວັນ ໃນກຸ່ມເດັກໄວລຸ້ນບາງຈຳນວນຍັງມີພຶດຕິກຳຄວາມຮຸນແຮງເຊິ່ງມັນສະແດງອອກເວລາຮຽນເດັກຍັງມີການປະພຶດຕົນຜິດລະບຽບ, ຂາດຮຽນ, ຍອກກັນ, ບໍ່ຟັງຄູອາຈານໃນເວລາສອນ ໃນເວລາອອກຫຼິ້ນເດັກມີການຫຼິ້ນໃຊ້ຄວາມຮຸນແຮງເຊິ່ງມັນສະແດງອອກໃຫ້ເຫັນເຊັ່ນ: ແລ່ນໄລ່ແຕະກັນ, ໃຊ້ສຽງດັງເກີນຂອບເຂດ, ບໍ່ມັກເຂົ້າຫ້ອງຮຽນ ແລະ ຜິດຖຽງກັນລາມໄປເປັນຄວາມຮຸນແຮງເຖິງຂັ້ນຕີກັນ ມັນສະແດງໃຫ້ເຫັນວ່າເດັກໄວລຸ້ນໄລຍະນີ້ຄອບຄຸມອາລົມບໍ່ໄດ້.

ຈາກບັນຫາຄວາມຮຸນແຮງທີ່ເວົ້າມາຂ້າງເທິງນີ້ໄດ້ສົ່ງຜົນກະທົບທັງຕົວໄວລຸ້ນທີ່ມີພຶດຕິກຳຄວາມຮຸນແຮງທັງດ້ານຮ່າງກາຍ ແລະ ສະພາບຈິດໃຈ ແລະ ສົ່ງຜົນຕໍ່ຄອບຄົວຕະຫລອດຈົນຜູ້ໃກ້ຊິດ ແລະ ມີແນວໂນ້ມວ່າ ພຶດຕິກຳຄວາມຮຸນແຮງຂອງໄວລຸ້ນຈະສູງຂຶ້ນໃນອະນາຄົດ ດັ່ງນັ້ນຈຶ່ງເຮັດໃຫ້ຜູ້ວິໄຈມີຄວາມສົນໃຈທີ່ຈະສຶກສາເຖິງສາເຫດຄວາມຮຸນແຮງຂອງນັກຮຽນໄວລຸ້ນຜູ້ວິໄຈໄດ້ເຮັດການສຶກສາເຖິງສາເຫດທີ່ສົ່ງຜົນຕໍ່ພຶດຕິກຳຄວາມຮຸນແຮງຂອງໄວລຸ້ນໂດຍວິທີການສຶກສາເປັນລາຍກໍລະນີ (Case study) ເນື່ອງຈາກເປັນຂະບວນການຂອງການສຶກສາລາຍລະອຽດຕ່າງໆກ່ຽວກັບບຸກຄົນຢ່າງຕໍ່ເນື່ອງໂດຍສຶກສາຄວາມເປັນມາ ແລະ ການດຳລົງຊີວິດຄວາມເປັນຢູ່ໃນປັດຈຸບັນ ເພື່ອລວບລວມເປັນຂໍ້ມູນ ແລະ ນຳໄປວິເຄາະຫາສາເຫດທີ່ເຮັດໃຫ້ບຸກຄົນມີພຶດຕິກຳຄວາມຮຸນແຮງທັງຫມົດເຖິງການແປຄວາມຫມາຍຂອງພຶດຕິກຳວ່າ: ມີຄວາມສຳພັນກັບຄວາມຮຸນແຮງແນວໃດ ມັນຈະຊ່ວຍໃຫ້ສາມາດເຂົ້າໃຈເຖິງສາເຫດຂອງບັນຫາ ແລະ ຫາແນວທາງໃຫ້ຄວາມຊ່ວຍເຫລືອໄດ້ຢ່າງເໝາະສົມ ແລະ ມີປະສິດທິພາບ.

ທັງນີ້ເພື່ອເປັນປະໂຫຍດຕໍ່ຜູ້ປົກຄອງຄູ ຫຼື ບຸກຄົນທີ່ກ່ຽວຂ້ອງໄດ້ເຂົ້າໃຈບັນຫາ ແລະ ສາເຫດຂອງພຶດຕິກຳຄວາມຮຸນແຮງທີ່ເກີດກັບໄວລຸ້ນ ແລະ ຫາວິທີປ້ອງກັນການໃຊ້ຄວາມຮຸນແຮງຂອງນັກຮຽນໄວລຸ້ນຕໍ່ໄປ ໂດຍສຶກສາກັບນັກຮຽນກຸ່ມຕົວຢ່າງຈຳນວນ 10 ຄົນ ທີ່ໄດ້ຮັບຄຳແນະນຳຈາກຄູອາຈານຜູ້ປົກຄອງໃຫ້ສຶກສານັກຮຽນກຸ່ມຕົວຢ່າງທີ່ມີພຶດຕິກຳຄວາມຮຸນແຮງ ເພື່ອລວບລວມຂໍ້ມູນມາວິເຄາະເຖິງສາເຫດພຶດຕິກຳ ຄວາມຮຸນແຮງເປັນແນວທາງໃນການປ້ອງກັນບໍ່ໃຫ້ເກີດພຶດຕິກຳທີ່ບໍ່ເຫມາະສົມ ດັ່ງທີ່ເວົ້າມາແລ້ວນັ້ນ.

ຄຳຖາມການວິໄຈ

1. ແມ່ນຫຍັງຄືສາເຫດທີ່ເຮັດໃຫ້ເກີດພຶດຕິກຳຄວາມຮຸນແຮງຂອງນັກຮຽນໄວລຸ້ນ?

## 2. ຈຸດປະສົງຂອງການວິໄຈ

ເພື່ອສຶກສາຫາສາເຫດທີ່ເຮັດໃຫ້ເກີດພຶດຕິກຳຄວາມຮຸນແຮງຂອງນັກຮຽນໄວລຸ້ນ ແລະ ແນວທາງໃນການຊ່ວຍເຫຼືອ.

## 3. ຄວາມສຳຄັນຂອງການວິໄຈ

ຜົນຂອງການສຶກສາຄັ້ງນີ້ຈະຊ່ວຍໃຫ້ຮູ້ເຖິງສາເຫດພຶດຕິກຳຄວາມຮຸນແຮງຂອງນັກຮຽນໄວລຸ້ນ ແລະ ສາມາດຊ່ວຍໃຫ້ເດັກນັກຮຽນເຂົ້າໃຈເຖິງພຶດຕິກຳການສະແດງອອກທີ່ບໍ່ເໝາະສົມຂອງຕົນເອງເປັນແນວທາງໃນການຊ່ວຍໃຫ້ເດັກສາມາດຢູ່ໃນສັງຄົມໄດ້ຢ່າງມີຄວາມສຸກ ທັງຍັງຊ່ວຍໃຫ້ຜູ້ທີ່ກ່ຽວຂ້ອງກັບເດັກ ນັກຮຽນຄື: ຄູ, ຜູ້ປົກຄອງ ໄດ້ເຫັນຄວາມສຳຄັນຂອງບັນຫາ ແລະ ຮູ້ເຖິງສາເຫດເປັນແນວທາງໃນການປ້ອງກັນການເກີດພຶດຕິກຳຄວາມຮຸນແຮງຂອງເດັກນັກຮຽນໄວລຸ້ນຕໍ່ໄປ.

## 4. ຂອບເຂດຂອງການວິໄຈ

### 4.1. ເນື້ອໃນ

ແຫຼ່ງຂໍ້ມູນທີ່ໃຊ້ໃນການສຶກສາຄັ້ງນີ້ເປັນນັກຮຽນໄວລຸ້ນທີ່ກຳລັງສຶກສາໃນລະດັບມັດທະຍົມສຶກສາມີ ອາຍຸຕັ້ງແຕ່ 14 -18 ປີ ພາກຮຽນທີ 2 ປີສົກຮຽນ 2018 - 2019 ຂອງໂຮງຮຽນມັດທະຍົມສາທິດ ວິທະຍາໄລຄູສາລະວັນ ຈຳນວນ 10 ຄົນ ໂດຍວິທີການສຸ່ມແບບເຈາະຈົງ (Purposive sampling) ໂດຍຄູອາຈານຝ່າຍປົກຄອງແນະນຳໃຫ້ສຶກສານັກຮຽນທັງ 10 ຄົນ ຍິງ 2 ຄົນ ທີ່ມີພຶດຕິກຳຄວາມຮຸນແຮງ ມີເກນການຄັດເລືອກດັ່ງນີ້:

1) ລັກສະນະຂອງພຶດຕິກຳຄວາມຮຸນແຮງທີ່ສະແດງອອກທາງກາຍໄດ້ແກ່: ການໃຊ້ຕີນເຕະ ຫຼື ຖີບ, ການໃຊ້ກຳປັ້ນຕ່ອຍ, ການໃຊ້ຝ່າມືຕົບຕີ ຫຼື ດຶງ, ການໃຊ້ອາວຸດ ຫຼື ສິ່ງຂອງທຳຮ້າຍຮ່າງກາຍເປັນເຫດໃຫ້ຜູ້ອື່ນໄດ້ຮັບບາດເຈັບ.

2) ລັກສະນະຂອງພຶດຕິກຳຄວາມຮຸນແຮງທີ່ສະແດງອອກທາງວາຈາໄດ້ແກ່: ເວົ້າເຢາະເຢີຍ, ເວົ້າຈາດູໝິ່ນຄົນຕົນອື່ນ, ໃຊ້ຄຳເວົ້າທີ່ມີລັກສະນະມຸ່ງຮ້າຍໃຫ້ຄົນອື່ນໄດ້ຮັບຜົນກະທົບທາງດ້ານຈິດໃຈ, ໃຊ້ຄຳເວົ້າຂົ່ມຂູ່ຄຸກຄາມໃຫ້ຄົນອື່ນຮູ້ສຶກຫວາດຢ້ານກົວ ແລະ ມີຄວາມຮູ້ສຶກບໍ່ປອດໄພ.

## 5. ນິຍາມສັບສະເພາະ

1) ນັກຮຽນໄວລຸ້ນໝາຍເຖິງ: ນັກຮຽນທີ່ກຳລັງສຶກສາໃນລະດັບມັດທະຍົມສຶກສາມີອາຍຸຕັ້ງແຕ່ 12-18 ປີ ພາກຮຽນທີ 2 ປີສົກຮຽນ 2018 - 2019 ຂອງໂຮງຮຽນມັດທະຍົມສາທິດ ວິທະຍາໄລຄູສາລະວັນ.

2). ພຶດຕິກຳຄວາມຮຸນແຮງໝາຍເຖິງ: ການສະແດງອອກ ຫລື ການກະທຳໃດໆທີ່ເປັນການລ່ວງລະເມີດສິດທິສ່ວນບຸກຄົນທາງຮ່າງກາຍ ແລະ ຈິດໃຈແບ່ງເປັນ 2 ລັກສະນະໄດ້ແກ່.

ລັກສະນະຂອງພຶດຕິກຳຄວາມຮຸນແຮງທີ່ສະແດງອອກທາງກາຍໄດ້ແກ່: ການໃຊ້ຕີນເຕະ ຫລື ຖີບ, ການໃຊ້ກຳປັ້ນຕ່ອຍ, ການໃຊ້ຝ່າມືຕົບຕີ ຫລື ດຶງ, ການໃຊ້ອາວຸດ ຫລື ສິ່ງຂອງທຳຮ້າຍຮ່າງກາຍເປັນເຫດໃຫ້ຜູ້ອື່ນໄດ້ຮັບບາດເຈັບ.

ລັກສະນະຂອງພຶດຕິກຳຄວາມຮຸນແຮງທີ່ສະແດງອອກທາງວາຈາໄດ້ແກ່: ເວົ້າເຢາະເຢີຍ, ເວົ້າຈາດູຖູກຄົນອື່ນ, ໃຊ້ຄຳເວົ້າທີ່ມີລັກສະນະມຸ່ງຮ້າຍໃຫ້ຄົນອື່ນໄດ້ຮັບຜົນກະທົບທາງດ້ານຈິດໃຈ, ໃຊ້ຄຳເວົ້າຂົ່ມຂູ່ຄຸກຄາມໃຫ້ຄົນອື່ນຮູ້ສຶກຫວາດຢ້ານກົວ ແລະ ມີຄວາມຮູ້ສຶກບໍ່ປອດໄພ.

- **ກອບແນວຄິດ**

ການສຶກສາເລື່ອງພຶດຕິກຳຄວາມຮຸນແຮງຂອງນັກຮຽນໄວລຸ້ນເປັນການສຶກສາເຖິງສາເຫດທີ່ກໍ່ໃຫ້ເກີດພຶດຕິກຳຄວາມຮຸນແຮງຈາກການສຶກສາເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງພົບວ່າປັດໄຈທີ່ມີແນວໂນ້ມຕໍ່ພຶດຕິກຳຄວາມຮຸນແຮງຂອງນັກຮຽນໄວລຸ້ນເກີດຈາກ 3 ປັດໄຈໄດ້ແກ່:

1) ປັດໄຈດ້ານສ່ວນຕົວ
2) ປັດໄຈດ້ານຄອບຄົວ
3) ປັດໄຈດ້ານສັງຄົມໄດ້ແກ່: ອິດທິພົນຈາກໝູ່ເພື່ອນ, ສື່ອອນໄລ໌ ແລະ ເກມອອນໄລ໌

ການສຶກສາໃນຄັ້ງນີ້ຜູ້ໄຈໄດ້ເຮັດການສຶກສາແບບລາຍກໍລະນີ (Case study) ເພື່ອໃຫ້ໄດ້ຂໍ້ມູນເລິກເຊິ່ງ. ສາມາດນຳມາອະທິບາຍເຖິງສາເຫດຂອງພຶດຕິກຳໃຫ້ລະອຽດຄົບຖ້ວນໃນທຸກດ້ານຕະຫລອດຈົນຫາແນວທາງໃນການຊ່ວຍເຫລືອຂໍ້ມູນທີ່ສຶກສາໃນຄັ້ງນີ້ເປັນປະໂຫຍດຕໍ່ພໍ່ແມ່ຜູ້ປົກຄອງ, ຄູ ແລະ ບຸກຄົນທີ່ກ່ຽວຂ້ອງໃນເລື່ອງການປ້ອງກັນບັນຫາຄວາມຮຸນແຮງຂອງໄວລຸ້ນ.

- **ຂໍ້ຕົກລົງເບື້ອງຕົ້ນ**

ນັກຮຽນໄວລຸ້ນທັງ 10 ຄົນ ແລະ ສະຖານສຶກສາທັງຫມົດທັງບຸກຄົນທີ່ກ່ຽວຂ້ອງທັງໝົດຜູ້ວິໄຈໄດ້ໃຊ້ຊື່ ສົມມຸດ ເປັນການຖືຮັກສາຄວາມລັບຂອງກຸ່ມຕົວຢ່າງທັງນີ້ເພື່ອປ້ອງກັນຜົນກະທົບດ້ານຕ່າງໆຂອງກຸ່ມຕົວຢ່າງເພາະການສຶກສາກ່ຽວກັບພຶດຕິກຳການໃຊ້ຄວາມຮຸນແຮງເປັນເລື່ອງລະອຽດອ່ອນ ແລະ ຕ້ອງການຂໍ້ມູນເລິກເຊິ່ງ.

# ບົດທີ 2
# ເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ

ການສຶກສາວິໄຈເລື່ອງ ການສຶກສາພຶດຕິກຳຄວາມຮຸນແຮງຂອງນັກຮຽນໄວລຸ້ນຜູ້ວິໄຈໄດ້ນຳສະເໜີຂໍ້ມູນດ້ານແນວຄິດ ແລະ ທິດສະດີປະກອບກັບເອກະສານ ແລະ ງານວິໄຈຈທີ່ກ່ຽວຂ້ອງມາໃຊ້ໃນການສຶກສາເພື່ອໃຫ້ເກີດຄວາມຊັດເຈນໂດຍແບ່ງເນື້ອໃນສຳຄັນຂອງຫົວຂໍ້ໃນການສຶກສາດັ່ງລາຍລະອຽດຕໍ່ໄປນີ້:

**1) ເອກະສານທີ່ກ່ຽວຂ້ອງກັບໄວລຸ້ນ.**

1.1 ຄວາມຫມາຍຂອງໄວລຸ້ນ

1.2 ເກນການແບ່ງຊ່ວງອາຍຂອງໄວລຸ້ນ

1.3 ລັກສະນະຂອງໄວລຸ້ນ

**2) ເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງກັບພຶດຕິກຳຄວາມຮຸນແຮງ**

2.1 ຄວາມຫມາຍຂອງພຶດຕິກຳຄວາມຮຸນແຮງ

2.2 ປະເພດຂອງພຶດຕິກຳຄວາມຮຸນແຮງ (Typology of Violence)

2.2.1 ຄວາມຮຸນແຮງໃນໄວລຸ້ນ

2.2.2 ຄວາມຮຸນແຮງໃນຄອບຄົວ

2.2.3 ຄວາມຮຸນແຮງຕໍ່ຕົນເອງ (Self-directed Violence)

2.3 ສາເຫດຂອງພຶດຕິກຳຄວາມຮຸນແຮງ

2.3.1 ສາເຫດຂອງພຶດຕິກຳຄວາມຮຸນແຮງຕໍ່ເພດຍິງ ແລະ ເດັກ

2.3.2 ສາເຫດຂອງພຶດຕິກຳຄວາມຮຸນແຮງໃນຄອບຄົວ

2.3.3 ສາເຫດຂອງພຶດຕິກຳຄວາມຮຸນແຮງຂອງໄວລຸ້ນ

2.3.4 ສາເຫດຄວາມຮຸນແຮງທາງສັງຄົມ

2.4 ປັດໄຈທາງສັງຄົມທີ່ສົ່ງຜົນຕໍ່ພຶດຕິກຳຄວາມຮຸນແຮງ

2.4.1 ອິດທິພົນຂອງກຸ່ມເພື່ອນ

2.4.2 ອິດທິພົນຂອງສື່

2.4.3 ອິດທິພົນຈາກເກມອອນໄລ

2.5 ຜົນກະທົບຈາກພຶດຕິກຳຄວາມຮຸນແຮງ

2.5.1 ຜົນກະທົບຈາກພຶດຕິກຳຄວາມຮຸນແຮງຕໍ່ເດັກ

2.5.2 ຜົນກະທົບຈາກພຶດຕິກຳຄວາມຮຸນແຮງຂອງໄວລຸ້ນ

2.5.3 ຜົນກະທົບຈາກາກພຶດຕິກຳຄວາມຮຸນແຮງໃນຄອບຄົວ

2.6 ແນວທາງປ້ອງກັບພຶດຕິກຳຄວາມຮຸນແຮງ

2.7 ທິດສະດີທີ່ກ່ຽວຂ້ອງກັບພຶດຕິກຳຄວາມຮຸນແຮງ

2.7.1 ທິດສະດີຈິດວິເຄາະຂອງຟຣອຍດ໌

2.7.2 ທິດສະດີຕົວແບບ (Modeling theory) ຂອງແບນດູຣາ

2.8 ງານວິໄຈທີ່ກ່ຽວຂ້ອງກັບພຶດຕິກຳການໃຊ້ຄວາມຮຸນແຮງ

2.8.1 ງານວິໄຈໃນປະເທດ

2.8.2 ງານວິໄຈໃນຕ່າງປະເທດ

**3) ເອກະສານທີ່ກ່ຽວກັບການສຶກສາລາຍກໍລະນີ**

3.1 ເອກະສານທີ່ກ່ຽວຂ້ອງກັບການສຶກສາລາຍກໍລະນີ

3.1.1 ຄວາມຫມາຍຂອງການສຶກສາລາຍກໍລະນີ

3.1.2 ເປົ້າໝາຍຂອງການສຶກສາລາຍກໍລະນີ

3.1.3 ວິທີການທີ່ໃຊ້ໃນການສຶກສາລາຍກໍລະນີ

3.1.4 ຂະບວນການສຶກສາລາຍກໍລະນີ

## 1. ເອກະສານທີ່ກ່ຽວຂ້ອງກັບໄວລຸ້ນ

### 1.1. ຄວາມຫມາຍຂອງໄວລຸ້ນ

ມີຜູ້ໃຫ້ຄວາມຫມາຍກ່ຽວກັບໄວລຸ້ນໄວ້ ດັ່ງຕໍ່ໄປນີ້: ຄຳວ່າ "ໄວລຸ້ນ" ໃນພາສາອັງກິດໃຊ້ຄຳວ່າ **"Adolescence"** ມາຈາກພາສາລາຕິນວ່າ **"Adolescer"** **ໝາຍຄວາມວ່າ** **"To Grow in to Maturity"** ແປວ່າການຈະເລີນເຕີບໂຕວຸທິພາວະ ຫລື ເປັນໄວທີ່ພັດທະນາມາຈາກສະພາວະຄວາມເປັນເດັກໄປສູ່ຄວາມເປັນຜູ້ໃຫຍ່ ເຮີຣອດ **(Hurlock, 1973:)**

**ໂຄ (Crow, 1961)** ໄດ້ໃຫ້ຄວາມຫມາຍຂອງໄວລຸ້ນວ່າ: ການຈະເລີນເຕີບໂຕເປັນໄລຍະທີ່ມີອາລົມຮຸນແຮງລະຫວ່າງໄວເດັກກັບຜູ້ໃຫຍ່ເດັກຈະພັດທະນາມາຈາກຄວາມຜູ້ໃຫຍ່ໄປສູ່ຄວາມເປັນອິດສະຫລະຢ່າງເຫັນໄດ້ແຈ້ງໃນທຸກໆດ້ານ ແລະ ການທີ່ເດັກຈະບັນລຸເຖິງຂັ້ນວຸທິພາວະນັ້ນບໍ່ແມ່ນຈະເລີນເຕີບໂຕແຕ່ພຽງດ້ານຮ່າງກາຍຢ່າງດຽວເທົ່ານັ້ນ, ທາງດ້ານຈິດໃຈກໍຈະເລີນເປັນເງົາຕາມໄປນຳນັ້ນຄືຕ້ອງມີພັດທະນາການທັງ 4 ດ້ານໄປພ້ອມໆກັນໄດ້ແກ່: ດ້ານຮ່າງກາຍ, ອາລົມ, ສັງຄົມ ແລະ ສະປັນຍາ

**ແບນ ແລະ ໂຈນສ໌ (Blair ;& Jones, 1964)** ໃຫ້ຄຳນິຍາມຄວາມໝາຍຂອງໄວລຸ້ນວ່າ ເປັນຊ່ວງຊີວິດຂອງແຕ່ລະບຸກຄົນ ຊື່ງຢູ່ລະຫວ່າງໄວເດັກ ແລະ ໄວຜູ້ໃຫຍ່ທັງນີ້ຂຶ້ນຢູ່ກັບວັດຖຸນະທຳຂອງສັງຄົມ, ຖານະທາງເສດຖະກິດ ແລະ ສັງຄົມຂອງຄອບຄົວເຊັ່ນ: ເດັກທີ່ມາຈາກຊົນຊັ້ນປານກາງເປັນໄວລຸ້ນດົນກວ່າເດັກທີ່ມາຈາກຄອບຄົວທີ່ຖານະທາງເສດຖະກິດ ແລະ ສັງຄົມຕໍ່າການເຂົ້າສູ່ໄວລຸ້ນຂອງເດັກຜູ້ຊາຍ ແລະ ເດັກຜູ້ຍິງບໍ່ພ້ອມກັນ ໂດຍປົກກະຕິເດັກຜູ້ຍິງຈະເຂົ້າສູ່ໄວລຸ້ນກ່ອນເດັກຊາຍ 1-2 ປີການເຂົ້າສູ່

ໄລຍະໄວລຸ້ນນັ້ນ ເດັກຈະເກີດພັດທະນາການໃນດ້ານຕ່າງໆໄດ້ແກ່ພັດທະນາດ້ານຮ່າງກາຍ, ອາລົມ, ຈິດໃຈ ແລະ ທາງສັງຄົມ.

**ຮອນ (Hall, 1964)** ໃຫ້ຄວາມໝາຍຂອງໄວລຸ້ນວ່າ "ເປັນໄວພາຍຸບຸແຄມ" ເປັນໄວຂອງການເຮັດຄືກັນກັບເດັກ ແລະ ຄືຜູ້ໃຫຍ່ນຳ ໄລຍະເວລາຂອງໄວລຸ້ນເປັນໄລຍະເວລາທີ່ເລີ່ມຕັ້ງແຕ່ໄວເດັກຕອນປາຍຈົນເຂົ້າສູ່ໄວຜູ້ໃຫຍ່ໃນຊ່ວງເວລາດັ່ງກ່າວອາດຈະມີການເຮັດທີ່ສະແດງອອກເຖິງຄວາມເປັນເດັກຢູ່ຫລາຍຢ່າງ ເຖິງວ່າຈະເປັນເວລາທີ່ເດັກຈະເລີນເຕີບໂຕຂຶ້ນເລື່ອຍໆກໍຕາມໄວລຸ້ນເປັນໄວທີ່ບໍ່ຄວນໄດ້ຮັບການປະຕິບັດແບບເດັກແຕ່ກໍ່ບໍ່ພ້ອມໃນການປະຕິບັດແບບຜູ້ໃຫຍ່ ຊ່ວງເວລາລະຫວ່າງໄວເດັກ ແລະ ໄວຜູ້ໃຫຍ່ຈຶ່ງເວົ້າວ່າໄວລຸ້ນ.

**ສີເຮືອນ ແກ້ວກັງວານ (2002)** ໃຫ້ຄວາມໝາຍຂອງໄວລຸ້ນວ່າເປັນໄວທີ່ມີພັດທະນາການລັກສະນະເດັ່ນໃນດ້ານຕ່າງໆ ທຸກດ້ານເຊັ່ນ: ທາງດ້ານຮ່າງກາຍ, ທາງດ້ານອາລົມ, ທາງດ້ານສັງຄົມ ແລະ ສະຕິປັນຍາມີການປ່ຽນແປງຢ່າງວ່ອງໄວຫລາຍ ແລະ ເຫັນໄດ້ຊັດເຈນໄວລຸ້ນມີຄວາມແຕກຕ່າງຈາກໄວອື່ນໆເພາະມີການປ່ຽນແປງຫລາຍໃນທຸກດ້ານຂອງພັດທະນາການ.

**ນະພາບ ສັງກະແສ (2003)** ເວົ້າວ່າໄວລຸ້ນເປັນໄວທີ່ປ່ຽນແປງຈາກໄວເດັກໄປສູ່ໄວຜູ້ໃຫຍ່ມີພັດທະນາການຈະເລີນເຕີບໂຕດ້ານຮ່າງກາຍ ແລະ ພັດທະນາການທາງເພດເດັກຜູ້ຍິງຕັ້ງແຕ່ເລີ່ມມີປະຈຳເດືອນຄັ້ງທຳອິດ ແລະ ເດັກຜູ້ຊາຍເມື່ອເລີ່ມມີການຜະລິດເຊລລ໌ສືບພັນ.

ຈາກຂໍ້ເບື້ອງຕົ້ນສະຫລຸບວ່າໄວລຸ້ນຄືພາວະການຈະເລີນເຕີບໂຕເປັນໄລຍະລະຫວ່າງໄວເດັກກັບໄວຜູ້ໃຫຍ່ມີພັດທະນາການທີ່ເດັ່ນຊັດເຈນທັງ 4 ດ້ານຄື: ດ້ານຮ່າງກາຍ, ດ້ານອາລົມ, ດ້ານສັງຄົມ ແລະ ສະຕິປັນຍາ ເດັກຜູ້ຍິງຈະເຂົ້າສູ່ຂະບວນການການເປັນໄວລຸ້ນກ່ອນເດັກຜູ້ຊາຍ 1-2 ປີ ໃນຂະນະດຽວກັນໄວລຸ້ນບໍ່ຄວນໄດ້ຮັບການປະຕິບັດແບບເດັກແຕ່ກໍ່ຍັງບໍ່ພ້ອມທີ່ຈະໄດ້ຮັບການປະຕິບັດແບບຜູ້ໃຫ່ຍ

### 1.2. ເກນການແບ່ງຊ່ວງອາຍຸຂອງໄວລຸ້ນ

ມີຜູ້ຊ່ຽວຊານແບ່ງເກນອາຍຸຊ່ວງເປັນໄວລຸ້ນດັ່ງນີ້:

**ສີເຮືອນ ແກ້ວກັງວານ (2002)** ເວົ້າວ່າຊ່ວງອາຍຸຂອງໄວລຸ້ນເລີ່ມຕັ້ງແຕ່ 12 - 25 ປີ ໂດຍໃຫ້ເຫດຜົນວ່າເນື່ອງຈາກເດັກທຸກວັນນີ້ຕ້ອງຢູ່ໃນສະຖາບັນການສຶກສາດົນຂຶ້ນ ການເປັນຜູ້ໃຫຍ່ທີ່ເພິ່ງພາຕົນເອງໄດ້ທາງເສດຖະກິດຕ້ອງແກ່ໄລຍະເວລາອອກໄປອີກທັງຮູບແບບຊີວິດສະໄໝໃໝ່ເຮັດໃຫ້ເດັກມີວຸທິພາວະທາງຈິດໃຈ (maturity) ຊ້າກວ່າຍຸກສະໄໝທີ່ຜ່ານມາ ໃນຊ່ວງຍາວຂອງຄວາມເປັນໄວລຸ້ນນັ້ນອາດແບ່ງຊ່ວງເວລາເປັນ 3 ໄລຍະໂດຍໃຊ້ເກນຄວາມເປັນເດັກ ແລະ ຜູ້ໃຫຍ່ຕັດສິນດັ່ງນີ້: ຊ່ວງອາຍຸ 12-15 ປີ ເປັນຊ່ວງໄວລຸ້ນໄລຍະທຳອິດຍັງມີພຶດຕິກຳສັ່ນຄອນໄປທາງເດັກຢູ່ຫລາຍຢ່າງ ຊ່ວງອາຍຸ 16-17 ປີ ເປັນໄລຍະໄວລຸ້ນຕອນກາງມີພຶດຕິກຳທີ່ຢູ່ລະຫວ່າງເດັກກັບຜູ້ໃຫຍ່ ຊ່ວງອາຍຸ 18-25 ປີ ເປັນໄລຍະໄວລຸ້ນຕອນປາຍຂະບວນພຶດຕິກຳສັ່ນຄອນໄປທາງຜູ້ໃຫຍ່.

**ສຸຊາ ຈັນທະເອມ (1997 )** ເວົ້າວ່າໄວລຸ້ນມີລຳດັບຂັ້ນໃນການພັດທະນາ ຊຶ່ງແບ່ງເປັນ 3 ໄລຍະ ດັ່ງນີ້:

1) ໄວລຸ້ນຕອນຕົ້ນ (Early Adolescence) ອາຍຸ 13-15 ປີ ຊຶ່ງເປັນໄລຍະທີ່ຮ່າງກາຍເລີ່ມມີການຈະເລີນເຕີບໂຕທາງເພດຢ່າງສົມບູນທັງເດັກຜູ້ຍິງ ແລະ ເດັກຜູ້ຊາຍສຳລັບເດັກຜູ້ຍິງນັ້ນສະແດງໃຫ້ເຫັນຄວາມຈະເລີນຂອງຮ່າງກາຍເຕັມທີ່ກໍຄືການມີປະຈຳເດືອນທຳອິດສ່ວນເດັກຜູ້ຊາຍນັ້ນບໍ່ມີລັກສະນະຊັດເຈນ ແຕ່ເຮົາສັງເກດໄດ້ຈາກການຫລັ່ງອະສຸຈິໃນຄັ້ງທຳອິດ ການມີຂົນຕາມອະໄວຍະວະເພດ, ນ້ຳສຽງທີ່ເວົ້າຍັງປ່ຽນເປັນສຽງແຕກຂຶ້ນ ແລະ ມີລັກສະນະນະທີ່ເວົ້າວ່າ “ແຕກພານ” ສ່ວນເດັກຜູ້ຍິງນອກຈາກການມີປະຈຳເດືອນສັດສ່ວນຕ່າງໆຂອງຮ່າງກາຍກໍປ່ຽນແປງໄປນຳ.

2) ໄວລຸ້ນຕອນກາງ (Middle Adolescence) ອາຍຸ 15-18 ປີ ມີການປ່ຽນທັງໃນດ້ານຮ່າງກາຍຈິດໃຈ ແລະ ຄວາມນຶກຄິດການຈະເລີນເຕີບໂຕໃນໄລຍະເວລານີ້ມີລັກສະນະຄ່ອຍເປັນຄ່ອຍໄປໃນຮ່າງກາຍມີການປ່ຽນແປງອຢ່າງຫລາຍ. ໃນດ້ານຈິດໃຈນັ້ນເປັນຜົນໄດ້ຈາການປ່ຽນແປງທາງຮ່າງກາຍເຖິງວ່າລັກສະນະການປ່ຽນແປງທາງຮ່າງກາຍເປັນສິ່ງປົກກະຕິຂອງເດັກທຸກຄົນແຕ່ການປ່ຽນແປງທາງຈິດໃຈຂອງເດັກແຕ່ລະຄົນບໍ່ຄືກັນ.

3) ໄວລຸ້ນຕອນປາຍ (Late Adolescence) ອາຍຸ 18-21 ປີ ໃນໄລຍະນີ້ພັດທະນາການຂອງໄວລຸ້ນເລີ່ມເຂົ້າສູ່ວຸທິພາວະຢ່າງສົມບູນ ຊຶ່ງມີການພັດທະນາການດ້ານຈິດໃຈຫລາຍກວ່າດ້ານຮ່າງກາຍໂດຍສະເພາະດ້ານກ່ຽວກັບຄວາມນຶກຄິດ ແລະ ປັດຊະຍາຊີວິດເດັກໄວນີ້ມັກພະຍາຍາມປັບປຸງຮ່າງກາຍຂອງຕົນໃຫ້ເຂົ້າກັບສະພາບແວດລ້ອມຫລາຍຂຶ້ນ ແລະ ພະຍາຍາມຕັດສິນໃຈແກ້ບັນຫາຕ່າງໆກໍ່ໃຫ້ເກີດຄວາມໝັ້ນໃຈໃນຕົນເອງ.

ເດັກໄວລຸ້ນອາຍຸລະຫວ່າງ 15-18 ປີ ມີລັກສະນະທາງຮ່າງກາຍທີ່ຈະເລີນເຕີບໂຕເຕັມທີ່ເລີ່ມມີພັດທະນະການທາງເພດລັກສະນທາງອາລົມຕ້ອງການຄວາມອິດສະຫລະຫລາຍຂຶ້ນ ຈຶ່ງມັກຂັດແຍ່ງກັບພໍ່ແມ່ຢູ່ສະເໝີເຮັດໃຫ້ເກີດຊ່ອງວ່າງລະຫວ່າງໄວມີການສະແດງອອກທີ່ແຂງກະດ້ານເປັນການປ່ຽນແປງຈາກໄວເດັກສູ່ໄວຜູ້ໃຫຍ່ເຮັດຕາມກຸ່ມເພື່ອນມີຄວາມຂັດແຍ່ງກັບຜູ້ໃຫຍ່ຫລາຍຂຶ້ນ.

ຈາກເອກະສານເບື້ອງຕົ້ນສະຫລຸບກ່ຽວກັບການແບ່ງຊ່ວງອາຍຸຂອງໄວລຸ້ນດັ່ງນີ້: ຊ່ວງອາຍຸ 12-15 ປີ ເປັນຊ່ວງໄວລຸ້ນໄລຍະທຳອິດ ຍັງມີພຶດຕິກຳສັ່ນຄອນໄປທາງເດັກນ້ອຍຫຼາຍກວ່າ. ຊ່ວງອາຍຸ 16-17 ປີ ເປັນໄລລະໄວລຸ້ນຕອນກາງມີພຶດຕິກຳຢູ່ລະຫວ່າງເດັກກັບຜູ້ໃຫຍ່. ຊ່ວງອາຍຸ 18-25 ປີ ເປັນໄລຍະໄວລຸ້ນຕອນປາຍຂະບວນພຶດຕິກຳສັ່ນຄອນໄປທາງຜູ້ໃຫຍ່ຫຼາຍຂຶ້ນ.

**1.3. ລັກສະນະຂອງໄວລຸ້ນ**

**ເຟີມັນ (Fuhrmann, 1990 ; ອ້າງອີງຈາກ ສີເຮືອນ ແກ້ວກັງວານ, 2006)** ໂດຍທົ່ວໄປໃນຊ່ວງໄວລຸ້ນເດັກຮູ້ສຶກສັບສົນທາງອາລົມຫລາຍກວ່າໃນໄວທີ່ຜ່ານມາເພາະສາເຫດກ່ຽວພັນຊັບຊ້ອນຫຼາຍປະການດ້ວຍກັນເຊັ່ນດັ່ງລຸ່ມນີ້:

1) ເປັນຊ່ວງປ່ຽນໄວເປັນໄລຍະຊັດຂື້ນຂອງຊີວິດເປັນໄລຍະທີ່ເດັກຮຽນເຮັດບົດບາດແບບຜູ້ໃຫຍ່ໃນດ້ານຄວາມປະພຶດ, ຄວາມປາດຖະໜາໃນຊີວິດ, ຄວາມຮັບຜິດຊອບ ແລະ ນິໄສໃຈຄໍ ແຕ່ເນື່ອງຈາກເປັນໄລຍະທໍາອິດເລີ່ມເດັກຈຶ່ງມີຄວາມສັບສົນ, ບໍ່ໝັ້ນໃຈ, ບໍ່ແນ່ໃຈ, ບໍ່ຮູ້ວ່າທີ່ຖືກ ຫຼື ຜິດ ແລະ ຄວນຈະເຮັດແນວໃດ.

2) ຮ່າງກາຍເຕີບໂຕເປັນໜຸ່ມ ແລະ ເປັນສາວເຕັມທີ່ ( ແຕກບ່າວແຕກສາວ ) ຕ້ອງວາງຕົວໃນສັງຄົມກັບເພື່ອນຮ່ວມໄວເພື່ອນຕ່າງເພດ ແລະ ເພື່ອນຕ່າງໄວໃນແນວໃໝ່, ການວາງຕົວຢ່າງຖືກຕ້ອງນັ້ນເຮັດບໍ່ໄດ້ງ່າຍໆຕ້ອງການເວລາດ້ວຍໃນໄລຍະທີ່ປັບຕົວບໍ່ໄດ້ເດັກຈຶ່ງມີຄວາມຮູ້ສຶກສັບສົນໃນໃຈເມື່ອກ້າວເຂົ້າສູ່ໄວລຸ້ນ.

3) ເດັກຈະຕ້ອງເລືອກອາຊີບເພື່ອກຽມຕົວສໍາລັບປະກອບອາຊີບຕໍ່ໄປໃນໄລຍະໄວຜູ້ໃຫຍ່ການເລືອກອາຊີບເປັນເລື່ອງທີ່ສໍາຄັນຕໍ່ຊີວິດຈິດໃຈ, ອາລົມ, ຄວາມຕ້ອງການຂອງເດັກ ແລະ ບຸກທີ່ກ່ຽວຂ້ອງທັງໃນບ້ານ, ໂຮງຮຽນ ແລະ ກຸ່ມເພື່ອນ ຄວາມສັບສົນທາງໃຈຈະເກີດງ່າຍເພາະເດັກຢູ່ພາຍໃຕ້ຄວາມບີບບັງຄັບ ຂໍ້ຈໍາກັດ ຂອງລະບົບການສຶກສາ, ສະຕິປັນຍາ, ຖານະເສດຖະກິດຂອງຄອບຄົວ, ຄວາມນິຍົມຂອງທ້ອງຖິ່ນ, ໂຮງຮຽນ ແລະ ສັງຄົມສ່ວນລວມ ແລະ ຍັງບໍ່ຮູ້ໃນຄວາມຖະນັດ, ຄວາມສົນໃຈ, ຄວາມຕ້ອງການ ແລະ ບຸກຄະລິກະພາບຂອງຕົວເອງ.

4) ສະພາບປັດຈຸບັນຂອງສັງຄົມເປັນສາເຫດໃຫຍ່ ຊຶ່ງແຍກຂໍ້ຍ່ອຍໄດ້ດັ່ງນີ້:

(1) ສັງຄົມປ່ຽນແປງງ່າຍ ແລະ ວ່ອງໄວເດັກປັບຕົວຕາມບໍ່ທັນເພາະຍັງມີຄວາມຊັດເຈນໃນໂລກ ແລະ ຊີວິດບໍ່ພຽງພໍ.

(2) ສະພາບເສດຖະກິດໃນສັງຄົມປັດຈຸບັນເຮັດໃຫ້ເດັກຕ້ອງໃຊ້ເວລາຝຶກຝົນອາຊີບດົນຂຶ້ນບໍ່ມີໂອກາດເປັນຜູ້ໃຫຍ່ ແລະ ປະກອບກິດຈະກໍາຂອງຊີວິດແບບຜູ້ໃຫຍ່ສົມໃຈປາດຖະໜາ, ຕ້ອງເກັບກົດຄວາມຮູ້ສຶກແບບນີ້ໄວ້ ການເກັບກົດໜັກໜ່ວງຂຶ້ນເມື່ອຜູ້ສູງໄວກວ່າເວົ້າເອົາວ່າໜຸ່ມສາວໄວລຸ້ນທີ່ກໍາລັງສຶກສາຢູ່ບໍ່ວ່າລະດັບໃດກໍຕາມຍັງຢູ່ໃນຖານະຄືເດັກ.

(3) ໄວລຸ້ນສະໄໝປັດຈຸບັນຈໍານວນບໍ່ນ້ອຍຕ້ອງອອກຈາກການຄຸ້ມຄອງຂອງພໍ່ແມ່ຕ້ອງຊ່ວຍຕົວເອງໄວຂຶ້ນ ບາງຄົນອາດຍັງບໍ່ພ້ອມສໍາລັບການອອກຈາກການຄຸ້ມຄອງຂອງພໍ່ແມ່ ຈຶ່ງຕົກໄປເປັນເຫຍື່ອຂອງຜູ້ຫວັງເອົາປະໂຫຍດຈາກເດັກໂດຍປາດສະຈາກຄວາມຫວັງດີ.

(4) ຄອບຄົວມີຂະໜາດນ້ອຍລົງ ຄວາມອົບອຸ່ນໃຈມີນ້ອຍກວ່າຄອບຄົວໃຫຍ່ ສາເຫດຄວາມສັບສົນທາງອາລົມຂອງຄົນໄວລຸ້ນຍັງມີອີກຫລາຍ ເດັກທີ່ແກ້ໄຂຄວາມສັບສົນທາງອາລົມບໍ່ໄດ້ຈະກາຍເປັນໄວລຸ້ນທີ່ມີບັນຫາ.

ຈາກເອກະສານຂ້າງເທິງສະຫລຸບກ່ຽວກັບລັກສະນະຂອງໄວລຸ້ນໄດ້ວ່າ ເປັນໄລຍະຕ້ອງການເອົາໃຈໃສ່ຂອງຊີວິດເດັກຈະເລີ່ມຮຽນເຮັດບົດບາດແບບຜູ້ໃຫຍ່ແຕ່ເປັນໄລຍະທຳອິດ ເດັກຈຶ່ງມີຄວາມຮູ້ສຶກສັບສົນ ແລະ ມີການປ່ຽນແປງທາງດ້ານຮ່າງກາຍຄ່ອນຂ້າງຊັດເຈນຕ້ອງປັບຕົວເຂົ້າກັບເພື່ອນຕ່າງໄວ, ເພື່ອນຕ່າງເພດ ແລະ ເພື່ອນຮ່ວມໄວດຽວກັນ ການເຮັດຕົວໃຫ້ຖືກຕ້ອງເໝາະສົມນັ້ນເຮັດໄດ້ບໍ່ງ່າຍ ຕ້ອງອາໃສເວລາ ຈຶ່ງອາດເວົ້າໄດ້ວ່າລັກສະນະຂອງໄວລຸ້ນນັ້ນຄືພາວະການປ່ຽນແປງ ແລະ ຈະເລີນເຕີບໂຕໃນທຸກໆດ້ານ.

## 2. ເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງກັບພັດຕິກຳຄວາມຮຸນແຮງ

### 2.1. ຄວາມຫມາຍຂອງພຶດຕິກຳຄວາມຮຸນແຮງ

ບັນຫາພຶດຕິກຳຄວາມຮຸນແຮງທັງຕົນເອງ ແລະ ຕໍ່ຜູ້ອື່ນບໍ່ເຄີຍໝົດໄປຈາກສັງຄົມ ຫລື ອາດເວົ້າໄດ້ວ່າມີເພີ່ມຫລາຍຂຶ້ນກວ່າໃນອະດີດທີ່ຜ່ານມາ ກໍ່ຜົນເສຍຫາຍຫຼວງຫຼາຍຕໍ່ຊີວິດ ແລະ ເປັນໄພຄຸກຄາມຕໍ່ຄວາມສະຫງົບສຸກຂອງສະມາຊິກໃນສັງຄົມບໍ່ວ່າຈະເປັນເຊື້ອຊາດ, ວັດທະນະທຳໃດ ລ້ວນມີຄວາມກັງວົນຕໍ່ຄວາມ ຮຸນແຮງທີ່ເກີດຂຶ້ນ ດັ່ງນັ້ນ, ມີຜູ້ໃຫ້ຄວາມຫມາຍທີ່ຫຼາກຫຼາຍຕໍ່ພຶດຕິກຳຄວາມຮຸນແຮງ ດັ່ງຕໍ່ໄປນີ້

ດອນລາ ແລະ ຄົນອື່ນໆ **(Citingin Dollard et al.1939; Reiso & Roth, 1993)** ເວົ້າວ່າພຶດຕິກຳການໃຊ້ຄວາມຮຸນແຮງທີ່ມີຕໍ່ຄວາມຮຸນແຮງລະຫວ່າງບຸກຄົນໄດ້ຖືກໃຫ້ນິຍາມຄວາມໝາຍວ່າເປັນ ພຶດຕິກາຂອງບຸກຄົນທີ່ຕໍ່ສູ້ກັບບຸກຄົນອື່ນ ຊຶ່ງຕັ້ງໃຈ ຫລື ພະຍາຍາມທີ່ຈະຄຸກຄາມ ຫລື ເຮັດໃຫ້ຮ່າງກາຍໄດ້ຮັບບາດເຈັບທຸກທໍລະມານເຈັບປວດ ພຶດຕິກາເລົ່ານີ້ຖືກລວມຢູ່ໃນນິຍາມຄວາມໝາຍທີ່ກວ້າງກວ່ານິຍາມ ຄວາມໝາຍຂອງຄວາມບໍ່ຈັກຄວາມ, ຂີ້ດື້.

ບາເດນ **(Barden, 1994)** ໃຫ້ຄວາມຫມາຍວ່າ ການໃຊ້ກຳລັງທາງກາຍ ຫລື ພະລັງອຳນາດໃນການຄຸກຄາມຜູ້ອື່ນໃຫ້ບາດເຈັບທາງກາຍ ຫລື ທາງຈິດໃຈ ຫລື ເຮັດໃຫ້ຮູ້ສຶກຂາດຄວາມປອດລວມເຖິງການເມີນເສີຍ ແລະ ການບໍ່ສົນໃຈອີກດ້ວຍ.

ອົງການອະນາໄມໂລກ **( World Health Organization, 2002)** ໃຫ້ຄວາມໝາຍວ່າການໃຊ້ ກຳລັງ ຫລື ອຳນາດທາງກາຍແບບຕັ້ງໃຈ ເພື່ອຂົ່ມຂູ່ຄຸກຄາມຜູ້ຕໍ່ຕ້ານຕົນເອງ ຫລື ຜູ້ອື່ນ ຫລື ກຸ່ມ ຫລືຊຸມຊົນຈຶ່ງກໍ່ໃຫ້ເກີດຜົນທີ່ເຮັດໃຫ້ເກີດການບາດເຈັບ, ການຕາຍ, ທຳຮ້າຍຈິດໃຈ, ການກີດກັ້ນ ແລະ ຂັດຂວາງການພັດທະນາການ.

ການກະທຳໃດໆທີ່ເປັນການລ່ວງລະເມີດສິດທິສ່ວນບຸກຄົນທັງທາງກາຍ, ວາຈາ ແລະ ຈິດໃຈ ໂດຍການບັງຄັບ, ຂູ່ເຂັນທຸບຕີ, ຖືກຄຸກຄາມ ແລະ ກີດກັ້ນເສລີພາບທັງໃນສາທາລະນະ ແລະໃນການດຳເນີນຊີວິດ ຊຶ່ງເປັນຜົນ ຫລື ອາດຈະເປັນຜົນເຮັດໃຫ້ເກີດຄວາມທຸກທໍລະມານທັງທາງຮ່າງກາຍ ແລະ ຈິດໃຈແກ່ຜູ້ຖືກ ເຮັດ.

**ພົນດີ ລິມປັດນາກອນ (2004)** ໃຫ້ຄວາມຫມາຍວ່າ ພຶດຕິກຳຄວາມຮຸນແຮງ ໝາຍເຖິງ ການ ກະທຳທີ່ເປັນການລ່ວງລະເມີດສິດທິສ່ວນບຸກຄົນທາງຮ່າງກາຍ, ວາຈາ ແລະ ຈິດໃຈ ຕໍ່ຕົນເອງ ແລະ ຜູ້ອື່ນກຸ່ມຄົນ ຫລື ຊຸມຊົນ ແບບຕັ້ງໃຈໂດຍການບັງຄັບຂູ່ເຂັນ, ທຳຮ້າຍ, ທຸບຕີ. ຖືກຄຸກຄາມ ແລະ ກີດກັ້ນເສລີພາບ ທັງໃນສາທາລະນະ ແລະ ໃນການດຳເນີນຊີວິດສ່ວນຕົວ ຈຶ່ງເປັນຜົນ ຫລື ອາດຈະເປັນຜົນໃຫ້ເກີດການບາດເຈັບ, ການຕາຍ, ຄວາມທຸກທໍລະມານທາງຮ່າງກາຍ ແລະ ຈິດໃຈແກ່ຜູ້ຖືກເຮັດ.

ຈາກເອກະສານດັ່ງກ່າວ ສະຫລຸບໄດ້ວ່າພຶດຕິກຳຄວາມຮຸນແຮງ ໝາຍເຖິງການໃຊ້ກຳລັງທາງກາຍ ກໍ່ໃຫ້ເກີດຜົນເສຍທັງຕໍ່ຮ່າງກາຍ,ຈິດໃຈ ແລະ ເພດຂອງຜູ້ອື່ນທັງໝົດທັງການຂ້າຕົວຕາຍ ແລະ ການທຳຮ້າຍຕົນເອງໃນຮູບແບບຕ່າງໆລວມທັງການໃຊ້ວາຈາກຄຸຄາມ ຫລື ການຂົ່ມຂູ່ດ້ອຍສຳລັບຜົນທີ່ເກີດຈາກຄວາມຮຸນແຮງທີ່ເວົ້າໄວ້ໃນຄຳນິຍາມນີ້ໄດ້ຄອບຄຸມທັງອັນຕະລາຍຕໍ່ຈິດໃຈ ແລະ ເຮັດໃຫ້ເກີດການພັດທະນາໄປໃນທາງທີ່ບໍ່ດີເຊັ່ນ: ການບາດເຈັບ ແລະ ການເສຍຊີວິດ.

### 2.2. ປະເພດຂອງພຶດຕິກຳຄວາມຮຸນແຮງ (Typology of Violence)

ປະເພດຂອງພຶດຕິກຳຄວາມຮຸນແຮງ ຜູ້ວິໄຈໄດ້ນຳສະເໜີສະເພາະຄວາມຮຸນແຮງທີ່ກ່ຽວຂ້ອງກັບງານວິໄຈສາມາດແບ່ງປະເພດໄດ້ດັ່ງຕໍ່ໄປນີ້:

#### 2.2.1 ຄວາມຮຸນແຮງໃນໄວລຸ້ນ

ຄວາມຮຸນແຮງໃນໄວລຸ້ນໃນສັງຄົມປັດຈຸບັນມີຈຳນວນຫລາຍຂຶ້ນ ແລະ ທະວີຄວາມຮຸນແຮງຂຶ້ນເລື້ອຍໆ ດັ່ງເຮົາຈະເຫັນເປັນຂ່າວທີ່ປາກົດຢູ່ຕາມໜ້າຫນັງສືພິມລາຍວັນທົ່ວໄປ ແລະ ຂ່າວຕ່າງປະເທດເຊັ່ນ: ເດັກນັກຮຽນຍົກພວກຕີ ກັນ, ເດັກໄວລຸ້ນໃຊ້ປືນຍິງຄູ່ກໍລະນີ ແລະ ຍິງຕົວຕາຍ. ກຸ່ມເດັກໄວລຸ້ນລຸມຂົ່ມຂືນເດັກຜູ້ຍິງ ແລະ ອື່ນໆ... ມີການໃຊ້ອາວຸດທີ່ຮຸນແຮງ ແລະ ອັນຕະລາຍ ເຊັ່ນ: ມີດ, ປືນ, ວັດຖຸລະເບີດ ຄວາມຮຸນແຮງໃນເດັກໄວລຸ້ນນຳໄປສູ່ສາເຫດການຕາຍໃນເດັກໄວລຸ້ນມີຈຳນວນຫລາຍຂຶ້ນ ນອກຈາກສາເຫດຈາກອຸປະຕິເຫດຈາກຂັບລົດຈັກໄວທີ່ເຄີຍເປັນສາເຫດການຕາຍອັນດັບໜຶ່ງເດັກໄວລຸ້ນເປັນຊ່ວງໄລຍະເວລາຂອງການປ່ຽນແປງທາງດ້ານຮ່າງກາຍ, ຈິດໃຈ, ວຸດທິພາວະທາງດ້ານອາລົມ, ການປັບຕົວເຂົ້າຢູ່ໃນສັງຄົມທີ່ສຳຄັນໂດຍທຳມະຊາດຂອງເດັກໄວລຸ້ນ ເປັນຊ່ວງໄລຍະເວລາແຫ່ງການຮຽນຮູ້ຫາປະສົບການຢາກລອງສິ່ງແປກໃໝ່ ແລະ ເຮັດໃນສິ່ງທີ່ທ້າທາຍໂດຍມີຄວາມຮູ້ສຶກວ່າຕົນເອງເກັ່ງບໍ່ຄືໃຜ ແລະ ບໍ່ມີໃຜຄື ຫຼາຍສິ່ງຫຼາຍຢ່າງທີ່ເກີດກັບຄົນອື່ນຈະບໍ່ເກີດກັບຕົນເອງ ແລະ ບໍ່ຄຳນຶງຜົນທີ່ຈະເກີດຕາມມາໃນອະນາຄົດ ຈຶ່ງເປັນສາເຫດນຳໄປສູ່ການມີພຶດຕິກຳສ່ຽງ ຫລື ພຶດຕິກຳທີ່ບໍ່ເໝາະສົມຕ່າງໆໃນໄວລຸ້ນຫຼວງຫຼາຍ

ເດັກໄວລຸ້ນຮຽນຮູ້ຊີວິດຈາກຊີວິດຈິງທີ່ທ່ານດໍາເນີນຢູ່ ຂະນະດຽວກັນທ່ານກໍຮຽນຮູ້ ຫລື ທ່າອ່ຽງຄວາມຮຸນແຮງຈາກຊີວິດຈິງທີ່ທ່ານໄດ້ເຫັນໄດ້ສໍາຜັດຈາກຄົນໃກ້ຊິດ, ຄອບຄົວ, ຊຸມຊົນ, ສັງຄົມ, ໂຮງຮຽນ ແລະ ສິ່ງແວດລ້ອມຕະຫລອດຈົນຈາກສື່ຕ່າງໆທີ່ມີຜົນກະທົບອຢ່າງຫລາຍຕໍ່ເດັກນ້ອຍໆ ແລະ ເດັກໄວລຸ້ນໃນສັງຄົມປັດຈຸບັນຄວາມຫມາຍຂອງຄໍາວ່າ Violence ຫລື ຄວາມຮຸນແຮງ ໝາຍເຖິງການປະພຶດທີ່ມີເຈຕະນາທີ່ຈະປະພຶດໃຫ້ບຸກຄົນອື່ນ ຫລື ກຸ່ມບຸກຄົນອື່ນໄດ້ຮັບບາດເຈັບ ການບາດເຈັບນີ້ອາດເນື່ອງມາຈາກການທໍາຮ້າຍຮ່າງກາຍ ແລະ ຈິດໃຈ ຕັ້ງແຕ່ຍັງນ້ອຍໄປຈົນເຖິງຂັ້ນເສຍຊີວິດໄດ້ ບົດບາດຂອງເດັກໄວລຸ້ນນັ້ນໃນຄວາມຮຸນແຮງນັ້ນອາດຈະເປັນທັງຜູ້ປະພຶດ ແລະ ຖືກເຮັດ ຈຶ່ງຂຶ້ນກັບໂອກາດປັດໄຈສິ່ງແວດລ້ອມ ແລະ ອື່ນໆ.

ຈາກການສຶກສາພົບວ່າເດັກໄວລຸ້ນຈະຕົກເປັນຜູ້ຖືກກະທໍາຖືກທໍາຮ້າຍເປັນ 2 ເທົ່າຂອງຜູ້ໃຫຍ່ ແລະ ໃນປັດຈຸບັນພົບວ່າເດັກທີ່ຖືກທໍາຮ້າຍ ແລະ ທໍາຮ້າຍຜູ້ອື່ນຈະມີອາຍຸນ້ອຍລົງເລື່ອຍໆ ແລະ ຜູ້ຊາຍໂດຍທົ່ວໄປແລ້ວຈະເປັນທັງຜູ້ທໍາຮ້າຍ ແລະ ຜູ້ຖືກທໍາຮ້າຍສູງກວ່າເດັກຜູ້ຍິງຍົກເວັ້ນບາງກໍລະນີເລື່ອງທາງເພດ ກຸ່ມເດັກຜູ້ຍິງຈະເປັນຜູ້ຖືກກະທໍາສູງກວ່າເພດຊາຍ ແລະ ທີ່ໜ້າສົນໃຈກໍຄື ເດັກທີ່ຖືກທໍາຮ້າຍຄົນທີ່ເປັນຜູ້ກະທໍາມັກຈະເປັນຄົນໃກ້ຊິດ ແລະ ມັກຈະເປັນຄົນໃນຄອບຄົວ ແລະ ສາເຫດການຕາຍ ຄວາມຮຸນແຮງໃນເດັກໄວລຸ້ນມັກຈະເປັນສາເຫດຈາກການໃຊ້ອາວຸດປືນເປັນສາເຫດອັນດັບໜຶ່ງນັກວິຊາການບາງກຸ່ມເຊື່ອວ່າສົມມຸດຖານຂອງຄວາມຮຸນແຮງເກີດມາຈາກປະສົບການ ຫລື ການຮຽນຮູ້ຄວາມຮຸນແຮງທີ່ເຄີຍໄດ້ຮັບຮູ້ໄດ້ເຫັນມາກ່ອນ **( ວິໂລດ ອາລີກຸນ, 2010: ອອນໄລ)**

ຈາກເອກະສານຂ້າງເທິງນີ້ສະຫລຸບຄວາມຮຸນແຮງໃນໄວລຸ້ນໄດ້ວ່າຄວາມຮຸນແຮງໃນໄວລຸ້ນມີຄວາມຮຸນແຮງຂຶ້ນ ຈະເຫັນປາກົດຢູ່ຕາມໜ້າສື່ຫນັງສືພິມລາຍວັນຂອງຕ່າງປະເທດ ເຊັ່ນ ນັກຮຽນຍົກພວກຕີກັນເດັກໄວລຸ້ນໃຊ້ປືນຍິງກັນ ແລະ ຍິງຕົວຕາຍ ກຸ່ມເດັກໄວລຸ້ນຊາຍລຸມຂົ່ມຂືນເດັກຜູ້ຍິງມີການໃຊ້ອາວຸດອັນຕະລາຍເຊັ່ນ ປືນ, ມີດ, ລະເບີດ ມີຄວາມຕ້ອງການຢາກລອງສິ່ງໃໝ່ໆທີ່ທ້າທາຍໂດຍມີຄວາມຮູ້ສຶກວ່າຕົນເອງເກັ່ງບໍ່ແພ້ໃຜຜົນຂອງການໃຊ້ຄວາມຮຸນແຮງກັບບຸກຄົນອື່ນຈະບໍ່ເກີດຂຶ້ນກັບຕົນເອງຈຶ່ງບໍ່ຄໍານຶງເຖິງຜົນຂອງອະນາຄົດຈົນນໍາໄປສູ່ການມີພຶດຕິກໍາສ່ຽງ ແລະ ພຶດຕິກາທີ່ເປັນບັນຫາຕ່າງໆໃນໄວລຸ້ນ ໄວລຸ້ນຮຽນຮູ້ ແລະ ຊຶມຊັບເອົາຄວາມຮຸນແຮງທີ່ຕົນໄດ້ເຫັນ ແລະ ສໍາຜັດຈາກສິ່ງແວດອ້ອມຕົວເຊັ່ນ ຄອບຄົວ, ສື່, ຊຸມຊົນສັງຄົມ.

**2.2.2 ຄວາມຮຸນແຮງໃນຄອບຄົວ**

ເດັກເປັນໄວທີ່ຊ່ວຍເຫຼືອຕົນເອງຍັງບໍ່ໄດ້ ຈຶ່ງຕ້ອງໄດ້ຮັບການດູແລເອົາໃຈໃສ່ຈາກຄອບຄົວແຕ່ປັດຈຸບັນພົບວ່າມີການທໍາຮ້າຍທາລຸນເດັກທັງຈາກຜູ້ປົກຄອງຂອງເດັກ ແລະ ບຸກຄົນອື່ນ ແລະ ການໃຊ້ແຮງງານເດັກ ຈາກການສຶກສາຂອງຜູ້ທີ່ກ່ຽວຂ້ອງກັບສິດທິເດັກໄດ້ໃຫ້ລາຍລະອຽດດັ່ງຕໍ່ໄປນີ້:

**ອົງການອະນາໄມໂລກ, (2002)** ກ່າວວ່າ ການຂົ່ມເຫັງທາລຸນເດັກ ແລະ ການທອດຖິ້ມເດັກຈາກພໍ່ແມ່ ແລະ ຜູ້ປົກຄອງດູແລເດັກເປັນບັນຫາທີ່ພົບເຫັນໄດ້ທົ່ວໂລກ ໃນປີ ຄ.ສ. 2000 ມີການປະ

ມານ ວ່າເດັກ 57,000 ຄົນຖືກຂ້າຕາຍໃນລະຫວ່າງອາຍຸຕໍ່າກວ່າ 15 ປີ ເດັກນ້ອຍອາຍຸ 0-4 ປີ ມີອັດຕາຂອງການ ຖືກຂ້າຕາຍຫລາຍທີສຸດຮອງລົງມາຄືເດັກອາຍຸລະຫວ່າງ 5-14 ປີ ສາເຫດຂອງການຕາຍທີ່ພົບຫຼາຍຄືການໄດ້ຮັບບາດເຈັບທີ່ຫົວຮອງລົງມາຄືການບາດເຈັບທີ່ທ້ອງ ແລະ ການຖືກຮັດຄໍ.

**ສາຫຼີ ຈິດຕິນັນ (1996 ; ອ້າງອີງຈາກ ຄະນະກັມມາທິການກິດຈະການຜູ້ຍິງເຍົາວະຊົນ ແລະ ຜູ້ສູງອາຍຸວຸດທິສະພາ. 2007)** ໄດ້ຈໍາແນກການທາລຸນກໍາເດັກໄວ້ 4 ປະເພດຄື:

1) ການທາລຸນຮ່າງກາຍ **(Physical abuse)** ໝາຍເຖິງການທີ່ຮ່າງກາຍໄດ້ຮັບບາດເຈັບໂດຍມີປະຫວັດຂໍ້ມູນຊັດເຈນ ຫຼື ມີຂໍ້ສົງໄສຢ່າງມີເຫດຜົນວ່າການບາດເຈັບນັ້ນມີຜູ້ເຮັດໃຫ້ເກີດຂຶ້ນການທາລຸນຮ່າງກາຍເກີດຈາກການທີ່ພໍ່ແມ່ເດັກ ຫລື ຜູ້ເບິ່ງແຍງເດັກມີອາລົມສຸນສຽວຮຸນແຮງບໍ່ສາມາດລະງັບອາລົມໄດ້ ໄດ້ເຮັດການລົງໂທດເດັກໂດຍປາດສະຈາກເຫດຜົນເຮັດໃຫ້ເກີດການລົງໂທດເດັກຢ່າງຮຸນແຮງດ້ວຍການຕີເດັກແຮງດ້ວຍມື ຫຼື ໄມ້ວັດສະດຸຂອງແຂງ, ເຕະເດັກ, ໂຍນເດັກລົງພື້ນ, ເອົາຢາສູບຈີ້, ເອົາເຕົາລີດຮ້ອນໆດາດ ຫຼື ຫົດດ້ວຍນໍ້າຮ້ອນຈົນເດັກເກີດອາການບາດເຈັບທາງຮ່າງກາຍ ຫລື ເຖິງແກ່ຊີວິດ.

2) ການທາລຸນທາງຈິດໃຈ **(Emotion abuse)** ໝາຍເຖິງການກະທໍາຕໍ່ເດັກຢ່າງຜິດໆ ຫລືການລັງກຽດເດັກຢ່າງຮຸນແຮງ ຫຼື ຢ່າງຕໍ່ເນື່ອງເຮັດໃຫ້ເກີດຜົນເສຍຢ່າງສາຫັດ ພຶດຕິກາ ແລະ ພັດທະນາການດ້ານອາລົມຂອງເດັກການກະທໍາທາລຸນທາງຈິດໃຈນັ້ນເປັນພຶດຕິກໍາທີ່ເກີດຂຶ້ນຊໍ້າໆຕໍ່ເນື່ອງ ຫຼືທັດສະນະຄະຕິທີ່ດໍາເນີນໄປໃນສ່ວນຂອງພໍ່ແມ່ ຫຼື ຜູ້ເບິ່ງດູແລທີ່ມີຕໍ່ເດັກໂດຍສະແດງອອກໃນລັກສະນະການປະຕິເສດ ການເຮັດໃຫ້ເດັກພະຫວາກັງວົນ ການເຮັດໃຫ້ເດັກຮູ້ສຶກໂດດດຽວດ້ວຍຄໍາເວົ້າຕໍານິ ແລະຍຽດຫຍາມເດັກວິຈານວ່າເວົ້າຢ່າງຕໍ່ເນື່ອງເວົ້າປະມາດເດັກດ່າເດັກ ຫຼື ການທີ່ພໍ່ແມ່ຕ້ອງການ ຫຼື ຮຽກຮ້ອງຢ່າງບໍ່ມີເຫດຜົນຕໍ່ເດັກສັງໃຫ້ເຮັດສິ່ງທີ່ເກີນຄວາມສາມາດຂອງເດັກ.

3) ການທາລຸນທາງເພດ **(Sexual abuse)** ໝາຍເຖິງປະຕິສໍາພັນລະຫວ່າງເດັກກັບຜູ້ທີ່ມີອາຍຸສູງກວ່າ ( ອາດຈະເປັນເດັກ ຫຼື ຜູ້ໃຫຍ່ກໍໄດ້ ) ໂດຍໃຊ້ເດັກເປັນເຄື່ອງມືໃນການຕອບສະໜອງທາງເພດ ແລະ ມີການສໍາພັນທາງເພດໂດຍເດັກບໍ່ຍິນຍອມມີການຫຼອກລໍ້ໃຊ້ກໍາລັງຕິດສິນບົນ ຫຼື ຂົ່ມຂູ່ ການລະເມີດທາງ ເພດອາດຈະເປັນທາງວາຈາ, ອາລົມ ເຊັ່ນ ການຈູບເພື່ອກະຕຸ້ນທາງເພດ **(Sexual Kissing)** ການສອດໃສ່ອະໄວວະເພດ, ນິ້ວ ຫຼື ວັດສະດຸໃດໆ ເຂົ້າໄປໃນປາກຊ່ອງຄອດ ຫລື ທະວານໜັກ ບັນຫາການທາລຸນທາງເພດເປັນບັນຫາທີ່ເກີດຈາກຄົນໃກ້ຕົວເດັກເຊັ່ນ ພໍ່, ອ້າຍ, ລຸງ, ອາ, ປູ່ ຫລື ຄົນຮູ້ຈັກໃກ້ຊິດ ແລະໃນບາງຄັ້ງຜູ້ເປັນແມ່ກໍມີສ່ວນຮູ້ເຫັນແຕ່ທໍາທີເປັນບໍ່ຮູ້ບໍ່ເຫັນເພາະຍ້ານຜົວທຸບຕີ, ຍ້ານເສຍຊື່ສຽງບໍ່ກ້າແຈ້ງຕໍາຫຼວດເພາະຍ້ານຜົວຖືກຈັບ ຍ້ານວ່າຕົນເອງຈະລ້ຽງດູຄອບຄົວບໍ່ໄຫວ ຈຶ່ງເຮັດໃຫ້ບໍ່ສາມາດຮູ້ຂໍ້ມູນທີ່ເກີດຂຶ້ນຢ່າງແທ້ຈິງໄດ້.

4) ການປ່ອຍປະລະເລີຍ ຫຼື ບໍ່ສົນໃຈດູແລໃຫ້ພຽງພໍຕາມສິດທິ ໝາຍເຖິງ ການປ່ອຍໃຫ້ເດັກຢູ່ຕາມຄົນດຽວ ຫຼື ບໍ່ສົນໃນເດັກຢ່າງຕໍ່ເນື່ອງ ຫຼື ຢ່າງຮຸນແຮງ ເຊັ່ນ ປ່ອຍໃຫ້ເດັກປະສົບອັນຕາລາຍແນວໃດ

ແບວໜຶ່ງ ຖືກຖິ້ມໃຫ້ອຶດອາຫານການຖືກຖິ້ມໃຫ້ຢູ່ໃນບ້ານ ຫຼື ລົດໃຫຍ່ຕາມຄົນດຽວອັນຈະເປັນເຫດໃຫ້ເກີດຜົນເສຍຕໍ່ສຸຂະພາບການຈະເລີນເຕີບໂຕ ແລະ ພັດທະນາການຂອງເດັກຢ່າງຮຸນແຮງ ແລະ ເຮັດໃຫ້ເປັນເດັກລ້ຽງບໍ່ໃຫຍ່ ຫຼື ເກີດອັນຕາລາຍເຖິງແກ່ຊີວິດໄດ້.

ຈາກຂໍ້ຄວາມຂ້າງເທິງສະຫລຸບໄດ້ວ່າ ບັນຫາຄວາມຮຸນແຮງໃນຄອບຄົວພົບວ່າມີການຖິ້ມເດັກຈາກ ພໍ່ແມ່ຕະຫຼອດຈົນການທີ່ເດັກຖືກທຳຮ້າຍຈົນເຖິງຂັ້ນເສຍຊີວິດເດັກຖືກຜູ້ປົກຄອງກະທຳທາລຸນດ້ານຈິດໃຈ ເຊັ່ນ ການເຮັດໃຫ້ເດັກຮູ້ສຶກຍ້ານກົວເວົ້າຄຳໜຽບຫຍາມເດັກ ຫຼື ການທີ່ພໍ່ແມ່ຕ້ອງການຮຽກຮ້ອງອອກຄຳສັ່ງໃຫ້ເດັກກະທຳໃນສິ່ງທີ່ເກີນຄວາມສາມາດຂອງເດັກ ນອກຈາກນີ້ຍັງພົບວ່າມີການທາລຸນທາງເພດສ່ວນໃຫຍ່ເກີດຈາກຄົນໃກ້ຊິດ ເຊັ່ນ ພໍ່, ອ້າຍ, ລຸງ, ອາ, ປູ່ ຫຼື ບຸກຄົນທີ່ຮູ້ຈັກໃກ້ຊິດ.

**2.2.3 ຄວາມຮຸນແຮງຕໍ່ຕົນເອງ (Self-directed Violence)**

**ອົງການອະນາໄມໂລກ (2002)** ໃຫ້ຄວາມເຫັນວ່າຄວາມຮຸນແຮງຕໍ່ຕົນເອງ (Self-directed Violence) ເປັນຄວາມຮຸນແຮງທີ່ກະທຳຕໍ່ຕົນເອງໂດຍກົງໄດ້ແກ່ພຶດຕິກຳຂ້າຕົວຕາຍ ແລະ ການທຳຮ້າຍຕົນເອງ, ຄອບຄົວເປັນສາເຫດໜຶ່ງທີ່ສຳຄັນທີ່ເຮັດໃຫ້ໄວລຸ້ນຂ້າຕົວຕາຍ ຍ້ອນວ່າພໍ່ແມ່ມີຄວາມຂັດແຍ້ງກັນທະເລາະກັນຢູ່ສະເໝີຄວາມສຳພັນຂອງສະມາຊິກໃນຄອບຄົວບໍ່ດີຂຶ້ນ ຄອບຄົວບໍ່ມີຄວາມອົບອຸ່ນບໍ່ສາມາດປັບປຸງຄວາມສຳພັນຕາມຄວາມຕ້ອງການຂອງສະມາຊິກໃນຄອບຄົວໄດ້.

ຈາກຂໍ້ມູນເບື້ອງຕົ້ນສະຫຼຸບໄດ້ວ່າ ຄວາມຮຸນແຮງຕໍ່ຕົນເອງຄື ການທຳຮ້າຍຕົນເອງໃຫ້ໄດ້ຮັບບາດເຈັບ ຫຼື ການຂ້າຕົວຕາຍສາເຫດສ່ວນໜຶ່ງພົບວ່າເກີດຈາກພໍ່ແມ່ທະເລາະວິວາດກັນເປັນປະຈຳບໍ່ສາມາດໃຫ້ຄວາມຮັກ, ຄວາມອົບອຸ່ນກັບສະມາຊິກໃນຄອບຄົວໄດ້.

**2.3. ສາເຫດຂອງພຶດຕິກຳຄວາມຮຸນແຮງ**

ສາເຫດຂອງການໃຊ້ພຶດຕິກຳຄວາມຮຸນແຮງອາດຈຳແນກສາເຫດຕາມປະເພດຂອງການໃຊ້ຄວາມຮຸນແຮງໄດ້ດັ່ງຕໍ່ໄປນີ້:

**2.3.1 ສາເຫດຂອງພຶດຕິກຳຄວາມຮຸນແຮງຕໍ່ເພດຍິງ ແລະ ເດັກ**

ການໃຊ້ຄວາມຮຸນແຮງຕໍ່ເດັກ ແລະ ຜູ້ຍິງຍັງເປັນບັນຫາທີ່ພົບໄດ້ທົ່ວໂລກໂດຍສະເພາະໃນກຸ່ມປະເທດທີ່ກຳລັງພັດທະນາລວມເຖິງປະເທດລາວຈະມີຄວາມຮຸນແຮງຫຼາຍກວ່າປະເທດທີ່ພັດທະນາແລ້ວທັງນີ້ເກີດຈາກຜູ້ຍິງໃນປະເທດເຫຼົ່ານັ້ນໄດ້ຮັບການສຶກສາທີ່ດີ ແລະ ສາມາດເຮັດວຽກເພິ່ງພາຕົນເອງໄດ້ລະບົບກົດໝາຍເຂົ້າເຖິງ ແລະ ຊ່ວຍເຫຼືອຜູ້ຍິງ ແລະ ເດັກທີ່ຖືກກະທຳຮຸນແຮງໄດ້ຫລາຍກວ່າປະເທດທີ່ກຳລັງພັດທະນາ ສາເຫດແບບໜຶ່ງເກີດຈາກທັດສະນະຄະຕິຄວາມບໍ່ເທົ່າທຽມກັນລະຫວ່າງຊາຍກັບຍິງມີລາຍລະອຽດດັ່ງງຕໍ່ໄປນີ້:

ສາເຫດຂອງການໃຊ້ພຶດຕິກຳຄວາມຮຸນແຮງຕໍ່ເພດຍິງ ແລະ ເດັກມີຄວາມແຕກຕ່າງຈາກຄວາມຮຸນແຮງໃນເລື່ອງອື່ນເນື່ອງຈາກຄ່ານິຍົມ ແລະ ເຈດຄະຕິຂອງສັງຄົມໃນເລື່ອງບົດບາດຂອງຍິງຊາຍເຂົ້າມາ

ກ່ຽວຂ້ອງໂດຍການໃຫ້ຄວາມສຳຄັນ ແລະ ຄາດຫວັງໃຫ້ເພດຊາຍໃນຖານະຜູ້ນຳຜູ້ຕັດສິນໃຈຜູ້ສືບທອດເຊື້ອສາຍທາງຄອບຄົວເພາະເພດຊາຍມີຮ່າງກາຍທີ່ແຂງແຮງກວ່າສາມາດປົກປ້ອງຜູ້ອ່ອນແອທາງຮ່າງກາຍຄື ເດັກ ແລະ ຜູ້ຍິງໄດ້ຈະເຫັນໄດ້ຊັດເຈນໃນກໍລະນີຄວາມຮຸນແຮງໃນຄອບຄົວ ເຊິ່ງເກີດຈາກຄວາມເຊື່ອທີ່ສັງຄົມມີມາແຕ່ ດັ່ງເດີມກ່ຽວກັບຄວາມບໍ່ເທົ່າທຽມກັນລະຫວ່າງຍິງຊາຍ ເຊັ່ນ ແນວຄິດທີ່ວ່າພັນລະຍາເປັນສົມບັດຂອງຜົວລູກເປັນສົມບັດຂອງພໍ່ແມ່ ຜູ້ຊາຍມີອຳນາດເໜືອກວ່າເພດຍິງ ເພດຍິງເປັນວັດຖຸທາງເພດ ຜູ້ຊາຍຈຶ່ງມີຖານະເປັນຜູ້ຄຸ້ມຄອງເດັກ ແລະ ຜູ້ຍິງ  ແຕ່ຂະນະດຽວກັນກໍມີສິດທີ່ຈະໃຊ້ອຳນາດບັງຄັບຄວບຄຸມ ຫຼື ແມ່ນທຳຮ້າຍຮ່າງກາຍ, ຈິດໃຈໄດ້ ທັງນີ້ຄວາມເຊື່ອດັ່ງກ່າວຍັງປາກົດຢູ່ໃນທຸກສັງຄົມທົ່ວໂລກລວມທັງສັງຄົມລາວ ສະຫຼຸບໄດ້ວ່າສາເຫດຄວາມຮຸນແຮງເກີດຈາກບັນຫາໃນມິຕິຕ່າງໆໄດ້ແກ່:

1) ຕາມຮີດຄອງປະເພນີແຕ່ດັ້ງເດີມຍົກໃຫ້ຊາຍມີອຳນາດເໜືອກວ່າຜູ້ຍິງໃນຄວາມສຳພັນລະຫວ່າງຄູ່ສົມລົດ ຜົວຈຶ່ງມີອຳນາດເໜືອເມຍ ແລະ ບຸດທີ່ຕ້ອງການທັງການປົກປ້ອງຄຸ້ມຄອງ ແລະ ການຄວບຄຸມການໃຊ້ຄວາມຮຸນແຮງຂອງຊາຍຈຶ່ງເປັນການປົກປ້ອງຖືຮັກສາອຳນາດທີ່ເໜືອກວ່າ ເຊິ່ງເພດຍິງສ່ວນໃຫຍ່ກໍຍອມຮັບສະຖານະພາບທີ່ດ້ອຍກວ່າຜູ້ຊາຍ ດັ່ງໃນຄອບຄົວ ແລະ ອານາເຂດຕ່າງໆໃນສັງຄົມ ປະເພນີດັ່ງກ່າວສະທ້ອນໃຫ້ເຫັນວ່າສັງຄົມໂດຍສ່ວນລວມຍັງບໍ່ຍອມຮັບຄວາມເທົ່າທຽມຂອງຍິງ ແລະ ຊາຍ ຊຶ່ງນຳໄປສູ່ການທີ່ສັງຄົມຍັງບໍ່ຄິດວ່າຄວາມຮຸນແຮງຕໍ່ເພດຍິງເປັນບັນຫາສຳຄັນ ແຕ່ເປັນບັນຫາພາຍໃນຄອບຄົວທີ່ບຸກຄົນພາຍນອກບໍ່ຄວນເຂົ້າໄປກ່ຽວຂ້ອງ.

2) ໂຄງສ້າງທາງສັງຄົມເນື່ອງຈາກສັງຄົມໃນປະຈຸບັນຍັງຄິດວ່າຄວາມຮຸນແຮງໃນຄອບຄົວເປັນເລື່ອງສ່ວນຕົວທີ່ສັງຄົມພາຍນອກບໍ່ສົມຄວນເຂົ້າໄປຫຍຸ້ງກ່ຽວ ການເຂົ້າໄປກ່ຽວຂ້ອງອາດເປັນການຍຸງໃຫ້ຄອບຄົວແຕກແຍກ ດັ່ງນັ້ນຈະເຫັນໄດ້ວ່າຜູ້ທີ່ກະທຳຄວາມຮຸນແຮງບໍ່ໄດ້ຮັບການແທກແຊງ ຫຼື ຫ້າມປາມຢ່າງຈິງຈັງຈາກບຸກຄົນອື່ນທີ່ຢູ່ຮ່ວມຄອບຄົວ, ເພື່ອນບ້ານ, ປະຊາຊົນໃນຊຸມຊົນ, ທີ່ອາໄສສາທາລະນະ ຜູ້ຮວມງານ ແລະ ຜູ້ຮ່ວມອາຊີບ ນອກຈາກນັ້ນບັນຫາທາງເສດຖະກິດສະພາວະວ່າງງານຄວາມລົ້ມເຫຼວໃນທາງອາຊີບການງານກໍ່ໃຫ້ເກີດຄວາມຕຶງຄຽດທາງອາລົມ, ຄັບຂ້ອງທໍ້ແທ້ສິ້ນຫວັງນຳໄປສູ່ການກະທຳຮຸນແຮງຕໍ່ຄົນໃນຄອບຄົວໂດຍສະເພາະຄົນທີ່ຕ້ອງຢູ່ໃນພາວະເພິ່ງພາຕົນ ເຖິງຂັ້ນກະທຳການຄາດຕະກຳ, ທຳຮ້າຍຄົນໃນຄອບຄົວລວມທັງ ການທຳຮ້າຍຕົວເອງອີກດ້ວຍ.

3) ໂຄງສ້າງທາງການເມືອງການບໍລິຫານ ແລະ ກົດຫມາຍຍັງມີປັດໄຈຫຼາຍປະການທີ່ເປັນອຸປະສັກໃນການແກ້ບັນຫາການໃຊ້ຄວາມຮຸນແຮງຕໍ່ເພດຍິງ ໃນດ້ານກົດໝາຍ ແລະ ໃນດ້ານການບັງຄັບໃຊ້ກົດໝາຍ ເຊັ່ນ  ປະມວນກົດໝາຍອາຍາກຳນົດວ່າ " ຜູ້ໃດກະທຳຊຳເລົາເພດຍິງຄົນອື່ນທີ່ບໍ່ແມ່ນເມຍຂອງຕົນໂດຍຂູ່ເຂັນດ້ວຍປະການໃດໆໂດຍໃຊ້ກຳລັງໂດຍຜູ້ຍິງຢູ່ໃນພາວະທີ່ບໍ່ສາມາດຂັດຂືນໄດ້ ຫຼື ໂດຍເຮັດໃຫ້ເພດຍິງເຂົ້າໃຈຜິດວ່າຕົນເປັນບຸກຄົນອື່ນຕ້ອງມີໂທດຈຳຄຸກ, ຊຶ່ງຂະບວນການບັງຄັບໃຊ້ກົດຫມາຍ ແລະ ການພິຈາລະນາຄະດີ ຜູ້ຮັກສາກົດຫມາຍມັກໃຊ້ວິທີການໄກເກຍປະນີປະນອມແທນການດຳເນີນຕາມກົດໝາຍ ຫຼື ເມຍຜູ້ຖືກກະທຳຄວາມຮຸນແຮງກໍມັກຈະເກັບງຽບບໍ່ຂໍຄວາມຊ່ວຍເຫຼືອ ຫຼື ດຳເນີນຕາມ

ກົດຫມາຍເນື່ອງຈາກຂະບວນການສອບສວນ ແລະ ພິຈາລະນາເຮັດໃຫ້ຕ້ອງອັບອາຍ ແລະ ຕົກເປັນຂ່າວ ຫຼື ຖືກສັງຄົມປະນາມວ່າເປັນຝ່າຍຜິດເອງ (**ຄະນະກຳມາທິການກິດຈະການເພດຍິງ, ຊົນອະຊົນ ແລະ ຜູ້ສູງອາຍຸວຸທິສະພາ, 2007 ໄທ**)

ຈາກຂໍ້ມູນຂ້າງເທິງສະຫຼຸບໄດ້ວ່າ ສາເຫດຄວາມຮຸນແຮງຕໍ່ເພດຍິງ ແລະ ເດັກເກີດຈາກຄ່ານິຍົມໃນສັງ ຄົມຕໍ່ບົດບາດທາງເພດຄວາມບໍ່ເທົ່າທຽມຂອງຊາຍກັບຍິງທັດສະຄະຕິໃນສັງຄົມເຊັ່ນ ແນວຄິດທີ່ວ່າເມຍເປັນສົມບັດຂອງຜົວລູກເປັນສົມບັດຂອງພໍ່ແມ່ ຜູ້ຊາຍຈຶ່ງຕ້ອງການທີ່ຈະຄວບຄຸມເພດຍິງ ແລະ ເດັກ ຫຼື ແຕ່ການລົງໂທດທີ່ໃຊ້ຄວາມຮຸນແຮງທີ່ສົ່ງຜົນຕໍ່ທາງດ້ານຮ່າງກາຍ ແລະ ຈິດໃຈ ຕະຫລອດຈົນໂຄງສ້າງທາງສັງຄົມ ເນື່ອງຈາກປັດຈຸບັນຍັງມີຄວາມຄິດວ່າຄວາມຮຸນແຮງໃນຄອບຄົວເປັນເລື່ອງສ່ວນຕົວທີ່ສັງຄົມພາຍນອກບໍ່ຄວນເຂົ້າໄປກ່ຽວຂ້ອງ ແລະ ໂຄງສ້າງທາງການເມືອງທີ່ກົດໝາຍຍັງບໍ່ຄອບຄຸມ ແລະ ເຂົ້າເຖິງການຊ່ວຍເຫຼືອເພດຍິງ ແລະ ເດັກທີ່ເປັນເຫຍື່ອຄວາມຮຸນແຮງໃນຄອບຄົວ.

**2.3.2 ສາເຫດຂອງພຶດຕິກຳຄວາມຮຸນແຮງໃນຄອບຄົວ.**

ຄອບຄົວຄືຮາກຖານຂອງທຸກຊີວິດ ບຸກຄົນຈະມີພັດທະນາການທາງຮ່າງກາຍຈິດໃຈ, ສັງຄົມທີ່ດີໄດ້ເກີດຈາກປະສົບການການອົບຮົມລ້ຽງດູໃນໄວເດັກຄອບຄົວຈຶ່ງເປັນສັງຄົມທຳອິດຂອງເດັກທີ່ຈະຮຽນຮູ້ ແລະ ທາງສັງຄົມຈົນເມື່ອເຖິງໄວທີ່ຕ້ອງເຂົ້າສູ່ຂະບວນການທາງການສຶກສາພໍ່ແມ່ກໍຍັງຕ້ອງໃຫ້ຄວາມຮັກຄວາມຫ່ວງໃຍຄອຍແນະແນວທາງຄວາມປະພຶດທີ່ດີໃຫ້ກັບລູກແຕ່ການທີ່ເດັກມີພຶດຕິກຳທີ່ບໍ່ເໝາະສົມມີຄວາມຂີ້ດື້ຕໍ່ຜູ້ອື່ນກໍໄດ້ຮັບປະສົບການທີ່ຮຸນແຮງຈາກຄອບຄົວມາກ່ອນ ດັ່ງລາຍລະອຽດຕໍ່ໄປນີ້:

**ອໍລອະນົງ ອິນທົນວິຈິດ ແລະ ນະລິນທອນ ກະລົນ ( 1999 )** ໄດ້ໃຫ້ຄວາມເຫັນເຖິງສາເຫດຄວາມຮຸນແຮງໃນຄອບຄົວໄວ້ 3 ປະການດັ່ງນີ້:

1) ຂາດຄວາມພ້ອມໃນການພັດທະນາບຸກຄະລິກະພາບຂອງບຸກຄົນ ຄື ການທີ່ບຸກຄົນບໍ່ໄດ້ຮັບການອົບຮົມລ້ຽງດູດ້ວຍຄວາມຮັກຄວາມເຂົ້າໃຈຄວາມເມດຕາ ແລະ ເອື້ອອາທອນຕໍ່ກັນໃນຖານະເປັນສະມາຊິກໃນຄອບຄົວ ຫຼື ການທີ່ບຸກຄົນເຕີບໂຕຂຶ້ນມາໃນຄອບຄົວທີ່ມັກສະແດງພຶດຕິກຳທີ່ຮຸນແຮງຕໍ່ກັນທາງກາຍ, ວາຈາ ແລະ ມີເຈດຕະຄະຕິໃນທາງລົບຕໍ່ເພດກົງກັນຂ້າມ ຊຶ່ງເປັນຄວາມຮຸນແຮງທີ່ເຮັດໃຫ້ເກີດການດູດຊັບເອົາພຶດຕິກຳການກະທຳ, ການໃຊ້ວາຈາ ແລະ ຄວາມຄິດນຳໄປສູ່ການບຽດບຽນ ແລະ ເອົາປຽບທາງເພດ.

2) ຄວາມເຈັບປ່ວຍທາງຈິດໃຈ ອາການທາງຈິດ ແລະ ທາງປະສາດ ແລະ ຕົກເປັນຂ້າທາດຂອງສຸລາ ຫຼື ສານເສບຕິດອື່ນໆເປັນສາເຫດໜຶ່ງທີ່ນຳໄປສູ່ພຶດຕິກຳຄວາມຮຸນແຮງໃນຄອບຄົວ ແລະ ສັງຄົມລາວໂດຍສ່ວນລວມ ເຊັ່ນ ການຂ້າທຳຮ້າຍລູກ, ເມຍເປັນປະຈຳເມື່ອມີອາການມຶນເມົາ ຫຼື ຢາບ້າອອກລິດ ຫຼື ເກີດອາການປະສາດຫຼອນບາງກໍລະນີຂ້າຕົວຕາຍ ແລະ ຂ້າຜູ້ອື່ນດ້ວຍວິທີການຕ່າງໆ.

3) ສາເຫດຈາກຄອບຄົວມີຫຼາຍປັດໄຈໄດ້ແກ່:

3.1 ລັກສະນະຄອບຄົວທີ່ເປັນຄອບຄົວດຽວອຢູ່ຕາມລຳພັງແຍກອອກຈາກຄົນອື່ນ ແລະ ມີການຄວບຄຸມໂດຍສັງຄົມນ້ອຍ ຫຼື ບໍ່ມີໃຜມາຍຸ່ງກັບຄອບຄົວເລີຍ ລັກສະນະແບບນີ້ຈະເກີດຄວາມຮຸນແຮງໄດ້ຫຼາຍກວ່າໂດຍສະເພາະຢ່າງຍິ່ງຄອບຄົວທີ່ກໍ່ຕັ້ງຂື້ນໂດຍປາດສະຈາກຄວາມພ້ອມ.

3.2 ຄອບຄົວວິກິດມີພາວະທີ່ສະມາຊິກໃນຄອບຄົວເສຍຊີວິດ ຫຼື ພິການກະທັນຫັນ, ພາວະການຂາດວຽກເຮັດ, ການຜິດກັນເປັນປະຈຳ.

3.3 ຖານະທາງເສດຖະກິດຂອງຄອບຄົວຍາກຈົນຂາດແຄນເປັນໜີ້ສິນ ຫຼື ທຸລະກິດລົ້ມລະລາຍ.

3.4 ຂາດຄວາມຮູ້ຄວາມເຂົ້າໃຈເລື່ອງຂອງຊີວິດສົມລົດ ແລະ ການເປັນພໍ່ແມ່ໄດ້ແກ່ຄອບຄົວທີ່ມີນລູກຫລາຍ ພໍ່ແມ່ຈະປະນາມລູກວ່າລູກເປັນຕົ້ນເຫດຂອງຄວາມທຸກຍາກລຳບາກ ແລະ ຄວາມສັບສົນຕ່າງໆ ແມ່ທີ່ທຸກທໍລະມານຫລາຍເມື່ອຕັ້ງຄັນລູກ ແລະ ເກີດຈະກຽດຊັງເດັກ ແລະ ທາລຸນຕໍ່ເດັກໄດ້ພໍ່ແມ່ທີ່ບໍ່ເຂົ້າໃຈຈິດວິທະຍາ ແລະ ຄວາມຕ້ອງການຕາມທຳມະຊາດຂອງເດັກຈະຄຽດລູກສະເໝີຫງຸດຫງິດ ແລະ ທຳຮ້າຍເດັກ ເດັກຈະເປັນເປົ້າໝາຍ ແລະ ຖືກກ່າວຫາວ່າເປັນຕົ້ນເຫດຂອງຄວາມຍຸ່ງຍາກ ແລະ ບັນຫາຕ່າງໆໃນຄອບຄົວ ແລະ ເຮັດໃຫ້ສະມາຊິກໃນຄອບຄົວມີຄວາມຄຽດ.

**ເຟີມັນ (Fuhrmann, 1990; ອ້າງອີງຈາກ ສີເຮືອນ ແກ້ວກັງວານ.2006 )** ເດັກຮັບອາລົມ ຄຽດຂອງຜູ້ໃຫຍ່ໃນບ້ານໂດຍວິທີການຕ່າງໆ ເຊັ່ນ ປະຊົດປະຊັນລົງໂທດທຳຮ້າຍຮ່າງກາຍ ຜູ້ໃຫຍ່ທີ່ລະບາຍອາລົມກັບເດັກຈະເຮັດລົງໄປດ້ວຍຄວາມກຽດຊັງຄວາມຮັກຜິດໆຄວາມເບື່ອຄວາມລຳຄານເມື່ອຜູ້ໃຫຍ່ມີເລື່ອງກະທົບຈິດໃຈຈາກສາເຫດໃດໆກໍຕາມແທນທີ່ຈະປະເຊີນ ແລະ ແກ້ໄຂບັນຫາແບບຜູ້ໃຫຍ່ກັບໄປລະບາຍອາລົມລົງທີ່ເດັກເພາະເດັກເປັນລູກໄກ່ນ້ອຍໃນກຳມືທີ່ບໍ່ມີທາງຫຼີກລ້ຽງໄດ້ຖ້າເຫດການນີ້ເກີດຂື້ນເປັນຄັ້ງຄາວກໍບໍ່ສູ່ຈະມີຜົນຈະກະທົບກະເທືອນຈິດໃຈເດັກຫລາຍນັກແຕ່ຖ້າເກີດຊ້ຳແລ້ວຊ້ຳອີກເປັນເວລາດົນ ຄວາມອາລົມເສຍ ກໍຈະຝັງໃຈເດັກບໍ່ຮູ້ລືມ ເດັກຕ້ອງທົນກຳກືນເກັບອາລົມເຫຼົ່ານີ້ໄວ້ໃນຈິດໃຕ້ສຳນຶກ ແລະ ຈິດສຳນຶກຈົນເມື່ອທ່ານເຕີບໂຕເປັນເດັກໄວລຸ້ນມີໂອກາດເປັນຕົວຂອງຕົວເອງໄດ້ແລ້ວກໍຈະລະເບີດອາລົມທີເກັບກົດເຫຼົ່ານັ້ນອອກໄປສູ່ສັງຄົມ ສຳລັບເດັກທີ່ເກັບອາລົມເຫຼົ່ານີ້ໄວ້ດ້ວຍຄວາມແຄ້ນເຄືອງ ກໍຈະລະເບີດຄວາມແຄ້ນຈະສະແດງອອກມາໃນຮູບແບບຂອງຄວາມບໍ່ພໍໃຈໃນສັງຄົມກາຍເປັນອັນຕະພານ, ອາດຊະຍາກອນ, ປະຫວັດຂອງຄົນເຫຼົ່ານີ້ທັງໄວລຸ້ນ ແລະ ຜູ້ໃຫຍ່ຫຼາຍສັງຄົມວັດທະນະທຳລ້ວນແຕ່ມີປະຫວັດຄວາມເປັນມາວ່າໄດ້ຖືກທາລຸນມາຢ່າງບອບຊ້ຳເມື່ອຕອນເປັນເດັກ.

**ເຄນ (Kent,1976; ອ້າງອີງຈາກ ຄະນະກຳມາທິການກິດຈະການເພດຍິງເຍົາວະຊົນ ແລະ ຜູ້ສູງອາຍຸວຸທິສະພາ,2007 ໄທ )** ຜົນກະທົບຈາກກໍລະນີຄວາມບົກຜ່ອງຈາກການລ້ຽງດູອາດຈະສົ່ງຜົນກະທົບທາງດ້ານຮ່າງກາຍ, ສະຕິປັນຍາ ແລະ ພຶດຕິກຳທາງສັງຄົມທາງດ້ານຮ່າງກາຍໄດ້ແກ່ພັດທະນາການດ້ານຮ່າງກາຍຊ້ຳ, ຮ່າງກາຍຂາດສານອາຫານ, ສ່ວນທາງດ້ານສະຕິປັນຍານັ້ນ Kent ກ່າວວ່າ 82 % ຂອງກຸ່ມເດັກ ທີ່ຖືກປ່ອຍປະລະເລີຍ ພົບວ່າບໍ່ປະສົບຜົນສຳເລັດດທາງດ້ານການຮຽນ ນອກຈາກນີ້ພົບວ່າ 87% ຂອງກຸ່ມເດັກທີ່ຖືກປ່ອຍປະລະເລີຍມີລະດັບຄະແນນທາງປັນຍານ້ອຍກວ່າ ຫຼື ເທົ່າກັບ 89% ສຳລັບ

ພຶດຕິກຳທາງສັງຄົມນັ້ນ ເດັກຈະມີຄວາມບົກຜ່ອງທາງອາລົມເດັກຈະບໍ່ສະແດງອາລົມຄວາມຮູ້ສຶກມີສຸຂະພາບຈິດທີ່ບໍ່ປົກກະຕິມີຄວາມບໍ່ພໍໃຈເປັນຕົ້ນ.

**ຮໍລ໌ເນຍ໌ (Karen Horney,1855-1952; ອ້າງອີງຈາກ ສຸຊາ ຈັນທະເອມ,2001)** ມີຄວາມເຫັນກົງກັບ ຟຣ໌ອຍ ແລະ ແອດເລີຣ໌ ກົງກັນກັບວ່າໄວເດັກເປັນໄວທີ່ສຳຄັນຄອບຄົວມີອິດທິພົນຕໍ່ບຸກຄະລິກະພາບຂອງເດັກ ແລະ ເຊື່ອວ່າໂຮງຮຽນກໍມີອິດທິພົນບໍ່ນ້ອຍໜ້າໃນຄອບຄົວເຊັ່ນກັນ ທາງດ້ານຄອບຄົວການຂາດຄວາມຮັກຄວາມອົບອຸ່ນທີ່ແທ້ຈິງນັ້ນເນື່ອງຈາກພໍ່ແມ່ເປັນພະຍາດທາງຈິດ ຫຼື ພະຍາດປະສາດຢູ່ກ່ອນແລ້ວ ພໍ່ແມ່ທີ່ມັກຈົ່ມ, ບໍ່ເອົາໃຈໃສ່, ປາກຮ້າຍແບບນີ້ຈະປູກຝັງທັດສະນະຄະຕິແບບດຽວກັນໃຫ້ກັບເດັກ ເດັກຈະເຕີບໂຕຂຶ້ນມາໂດຍປາດສະຈາກຄວາມຮັກ, ຄວາມອົບອຸ່ນເມື່ອເດັກໃຫຍ່ຂຶ້ນມາກໍຈະຂາດຄວາມຮັກ ບໍ່ຮູ້ຈັກຮັກໃຜ ແລະ ບໍ່ໄວ້ເຊື່ອໃຈໃຜ **ຮໍລ໌ເນຍ໌** ເຊື່ອວ່າການລ້ຽງດູກໍບໍ່ດີຈະເຮັດໃຫ້ເດັກເກີດຄວາມວິຕົກກັງ ວົນ **(Anxiety)** ຊຶ່ງຈະເປັນແຮງໜູນໃຫ້ເກີດແຮງເກັບກົດຂຶ້ນໃນຈິດໃຈ.

**ລັກຂະນາ ສະລິວຖັນ (2002)** ໃນຄອບຄົວການທີ່ຄົນເຮົາມີສະພາບທາງໃຈທີ່ແຕກຕ່າງກັນນັ້ນບໍ່ແມ່ນຄວາມສາມາດທີ່ເກີດຂຶ້ນທັນທີທັນໃດ ແຕ່ເປັນເພາະຜົນທີ່ເກີດຈາກການອົບຮົມລ້ຽງດູຂອງຄອບຄົວທີ່ມີຕໍ່ບຸກຄົນນັ້ນ ຕັ້ງແຕ່ເກີດຈົນເຕີບໂຕເປັນຜູ້ໃຫຍ່ບຸກຄົນທີ່ມີສຸຂະພາບກາຍ ແລະ ສຸຂະພາບຈິດທີ່ດີຈະສາມາດປັບຕົວໄດ້ຢ່າງເໝາະສົມນັ້ນກໍເພາະໄດ້ຮັບການອົບຮົມດູແລຈາກພໍ່ແມ່ ຫຼື ຜູ້ປົກຄອງດ້ວຍຄວາມຮັກຄວາມອົບອຸ່ນຄວາມເອົາໃຈໃສ່ຢ່າງໃກ້ຊິດໄດ້ຮັບຄວາມສຸກຢ່າງສະໝໍ່າສະເໝີຄວາມສຸກດັ່ງກ່າວຈະຊຶມຊັບເຂົ້າໄປຍັງຈິດໃຈຜູ້ນັ້ນໄດ້ເມື່ອເຕີບໃຫຍ່ຂຶ້ນກໍຈະມີບຸກຄະລິລັກສະນະທີ່ປັບຕົວໄດ້ເຮັດໃຫ້ຈິດໃຈໜັກແໜ້ນ ເຂັ້ມແຂງ ແລະ ພ້ອມທີ່ຈະປະເຊີນຕໍ່ອຸປະສັກຕ່າງໆໃນຊີວິດໄປໃນທາງທີ່ຈະບໍ່ສ້າງບັນຫາໃຫ້ກັບຕົນເອງ ແລະ ສັງຄົມແຕ່ຫາກສະພາບຄອບຄົວມີບັນຫາ ເຊັ່ນ ພໍ່ແມ່ຜິດກັນ ຫຼື ແຍກທາງກັນສະມາຊິກໃນຄອບຄົວກໍຈະເກີດບັນຫາທາງຈິດໃຈຄືບໍ່ມີຄວາມສຸກມີແຕ່ຄວາມຫວາດລະແວງ ແລະ ຄວາມກັງວົນສະມາຊິກໂດຍສະເພາະລູກໆຈະຂາດຄວາມຮັກ, ຄວາມອົບອຸ່ນຂາດທີ່ເພິ່ງເຂົາເຈົ້າກໍຈະຫັນໄປເພິ່ງທີ່ອື່ນນອກບ້ານທີ່ໃກ້ຊິດທີ່ສຸດຄື ເພື່ອນ ຊຶ່ງອາດນຳໄປສູ່ການຄົບເພື່ອນທີ່ບໍ່ດີຖືກຊັກຈູງໄປໃນທາງທີ່ຜິດ ຫຼື ຫັນໄປເພິ່ງຢາເສບຕິດສາເຫດເພາະມີບັນຫາຈາກຄອບຄົວ ຊຶ່ງໄດ້ແກ່ພໍ່ແມ່ເລີກກັນ ຫຼື ຢ່າຮ້າງກັນ ສະພາບເຮືອນບໍ່ສະອາດບໍ່ມີຄວາມເປັນລະບຽບຮຽບຮ້ອຍ ດັ່ງນັ້ນ, ເຮືອນຈຶ່ງມີຄວາມສຳຄັນຕໍ່ສຸຂະພາບກາຍ ແລະ ສຸຂະພາບຈິດຂອງບຸກຄົນໃນຄອບຄົວເປັນຢ່າງຫລາຍ.

ຈາກຂໍ້ຂ້າງເທິງສະຫຼຸບໄດ້ວ່າສາເຫດຂອງພຶດຕິກຳຄວາມຮຸນແຮງໃນຄອບຄົວເນື່ອງມາຈາກພໍ່ແມ່ຂາດຄວາມຮູ້ຄວາມເຂົ້າໃຈໃນບົດບາດການເປັນພໍ່ແມ່ທີ່ດີ ຕະຫຼອດຈົນມີຖານະຍາກຈົນບຸກຄົນໃນຄອບຄົວເສຍຊີວິດຢ່າງກະທັນຫັນມີການຜິດກັນເປັນປະຈຳເດັກພົບເຫັນຄວາມຮຸນແຮງຂອງຜູ້ປົກຄອງ ຫຼື ເປັນທີ່ຮອງຮັບອາລົມຄຽດຂອງຜູ້ປົກຄອງເດັກຈະເກັບກົດຄວາມຮູ້ສຶກແຄ້ນເຄືອງໄວ້ເມື່ອເຕີບໂຕເປັນຜູ້ໃຫຍ່ສິ່ງຜົນຕໍ່ພຶດຕິກຳທີ່ມີລັກສະນະເປັນອັນທະພານ ຫຼື ໃຊ້ຄວາມຮຸນແຮງກັບບຸກຄົນອື່ນທີ່ອ່ອນແອກວ່າ.

### 2.3.3 ສາເຫດຂອງພຶດຕິກຳຄວາມຮຸນແຮງຂອງໄວລຸ້ນ

ສາເຫດຂອງພຶດຕິກຳຄວາມຮຸນແຮງໃນໄວລຸ້ນມີລາຍລະອຽດດັ່ງຕໍ່ໄປນີ້:

ປັດໃຈສ່ຽງຂອງຄວາມຮຸນແຮງໃນໄວລຸ້ນ **ອົງການອະນາໄມໂລກ (2002 )** ໄດ້ໃຫ້ຄວາມເຫັນໄວ້ 2 ປະການຄື:

1) ປັດໃຈສ່ວນບຸກຄົນເປັນປັດໃຈທີ່ກ່ຽວຂ້ອງກັບບຸກຄະລິກກະພາບ ແລະ ພຶດຕິກຳຂອງໄວລຸ້ນໄດ້ແກ່ ທາມະຊາດຂອງໄວລຸ້ນເປັນໄວທີ່ມີຄວາມໃຈຮ້ອນ, ຫາວຫັນ, ແຂ້ງກະດ້າມເປັນຕົ້ນຂາດການຄວບຄຸມພຶດຕິກຳທີ່ເໝາະສົມດ້ອຍການສຶກສາມີບັນຫາຂາດການດູແລເອົາໃຈໃສ່ ແລະ ມີປະສົບການໃນການທຳຮ້າຍຜູ້ອື່ນ ມີເຈດຕະຄະຕິຄວາມເຊື່ອທີ່ຜິດໆ ມີປະສົບການຖືກລົງໂທດທາງກາຍ ຫຼື ເຄີຍພົບເຫັນຄວາມຮຸນແຮງ.

2) ປັດໃຈຄອບຄົວ ແລະ ຄົນໃກ້ຊິດ ສິ່ງແວດລ້ອມທາງຄອບຄົວເປັນປັດໃຈທີ່ສຳຄັນໃນການພັດທະນາພຶດຕິກຳຄວາມຮຸນແຮງຂອງໄວລຸ້ນໄດ້ແກ່:

✓ ພໍ່ແມ່ຜູ້ປົກຄອງຂາດການດູແລເບິ່ງແຍງເອົາໃຈໃສ່ຄວບຄຸມຕັ້ງແຕ່ເດັກ ແລະ ໃຊ້ການລົງໂທດເດັກ ດ້ວຍຄວາມຮຸນແຮງຫຍາບຄາຍເວົ້າບໍ່ສຸພາບ.

✓ ພໍ່ແມ່ມີຄວາມຂັດແຍ່ງກັນຄອບຄົວຂາດຄວາມສຳພັດທະພາບຄວາມຜູກພັນກັນມັກມີການທຳຮ້າຍກັນໃນຄອບຄົວ.

✓ ແມ່ມີລູກເມື່ອອາຍຸຍັງນ້ອຍ

✓ ມີປະສົບການທີ່ບໍ່ດີພໍ່ແມ່ແຕກແຍກ ຫຼື ຢ່າຮ້າງກັນຕັ້ງແຕ່ໄວເດັກ

✓ ຄົບເພື່ອນບໍ່ດີ

ສະຫຼຸບສາເຫດຂອງພຶດຕິກຳຄວາມຮຸນແຮງໃນໄວລຸ້ນເກີດຈາກການບໍ່ພ້ອມພຽງຂອງຄອບຄົວທີ່ຈະລ້ຽງເບິ່ງລູກ ເຊັ່ນ ພໍ່ແມ່ມີອາຍຸຍັງນ້ອຍ ຫຼື ຄອບຄົວຢ່າຮ້າງພໍ່ແມ່ຂາດການດູແລເອົາໃຈໃສ, ໄວລຸ້ນຂາດຄວາມຮັກຄວາມອົບອຸ່ນຈາກຄອບຄົວ ແລະ ລັກສະນະຂອງໄວລຸ້ນເອງທີ່ມີອາລົມຮຸນແຮງ, ແຂ້ງກະດ້ານ, ຂາດການສຶກສາ, ຂາດການຄວບຄມຸອາລົມ ແລະ ພຶດຕິກາໃຫ້ມີຄວາມເໝາະສົມມີປະສົບການຖືກທຳຮ້າຍ ຫຼື ພົບເຫັນຄວາມຮຸນແຮງມາກ່ອນ.

### 2.3.4 ສາເຫດຄວາມຮຸນແຮງທາງສັງຄົມ

**ອົງການອະນາໄມໂລກ (2002 )** ໄດ້ໃຫ້ຄວາມເຫັນວ່າສາເຫດຂອງພຶດຕິກຳຄວາມຮຸນແຮງທາງ ສັງຄົມປັດໃຈຊຸມຊົນ ແລະ ສັງຄົມເປັນປັດໃຈທີ່ນຳໄປສູ່ຄວາມຮຸນແຮງ ແລະ ເປັນປັດໃຈທີ່ກ່ຽວຂ້ອງທັງສັງຄົມການເມືອງ ແລະ ວັດທະນະທຳໄດ້ແກ່:

1) ການລວມກຸ່ມ ເປັນແກ໊ງຂອງໄວລຸ້ນມີການຈັດຫາອາວຸດປືນ, ຢາ ແລະ ໃຊ້ກຳລັງຕໍ່ສູ້ກັນລະຫວ່າງກຸ່ມ.

2) ມີສື່ທີ່ປາກົດໃຫ້ເຫັນຄວາມຮຸນແຮງ ແລະ ມີພຶດຕິກຳແຂ້ງກະດ້າງ

3) ຂາດຄວາມຮ່ວມມືປະສານງານ ແລະ ຄວາມສຳພັນຂອງຊຸມຊົນຢູ່ໃນລະດັບຕໍ່າເປັນຊຸມຊົນເມືອງໃຫຍ່ທີ່ຕ່າງຄົນຕ່າງຢູ່ຂາດຄວາມສຳພັນທີ່ດີຕໍ່ກັນຊຸມຊົນມີການທຳຮ້າຍຄາດຕະກຳກັນສູງມີຄວາມຍາກຈົນເມືອງທີ່ບໍ່ມີຄວາມສະຫງົບ, ຈະລາຈົນ ຫຼື ສົງຄາມມີການປ່ຽນແປງການປົກຄອງ.

4) ປະເທດທີ່ມີການປົກປ້ອງສິດທິມະນຸດຊຸມຊົນຕໍ່າ ຄວາມແຕກຕ່າງຂອງຊົນຊັ້ນສູງວັດທະນະທຳທີ່ເຮັດໃຫ້ເກີດຄວາມຮຸນແຮງ.

ສະຫຼຸບ ຄວາມຮຸນແຮງໃນສັງຄົມນັ້ນເກີດຈາກການຈັບກຸ່ມຂອງແກ໊ງໄວລຸ້ນການຈັດຫາອາວຸປືນ ຫຼື ສິ່ງເສບຕິດການຕໍ່ສູ່ກັນລະຫວ່າງກຸ່ມໄວລຸ້ນຕະຫລອດຈົນສື່ທີ່ນຳສະເໜີໃຫ້ເຫັນພາບຂອງຄວາມຮຸນແຮງ ແລະພຶດຕິກຳແຂ້ງກະດ້າງສັງຄົມຕ່າງຄົນຕ່າງຢູ່ ລວມເຖິງກົດຫມາຍພາຍໃນປະເທດທີ່ປົກປ້ອງດ້ານສິດທິມະນຸດ.

## 2.4. ປັດໃຈທາງສັງຄົມສົ່ງຜົນຕໍ່ພຶດຕິກຳຄວາມຮຸນແຮງ

### 2.4.1 ອິດທິພົນຂອງກຸ່ມເພື່ອນ

**ສີເຮືອນ ແກ້ວກັງວານ (2006)** ເດັກໃຫ້ຄວາມສຳຄັນກັບເພື່ອນຮ່ວມໄວຫຼາຍກວ່າໃນໄລຍະໄວເດັກຕອນກາງ ເດັກຈັດກຸ່ມກັນໄດ້ຈົນແໜ້ນແຟ້ນ ແລະ ຜູກພັນກັບເພື່ອນໃນກຸ່ມຫຼາຍຂຶ້ນກຸ່ມຂອງເດັກບໍ່ມີສະເພາະເພື່ອນເພດດຽວກັນເທົ່ານັ້ນແຕ່ມີເພື່ອນຕ່າງເພດເຂົ້າມາເປັນໝູ່ດ້ວຍ ເດັກທີ່ສາມາດເຂົ້າກຸ່ມໄດ້ ແລະ ມີກຸ່ມໃນໄລຍະໄວເດັກຕອນກາງຈະເຂົ້າກັບກຸ່ມ ແລະ ມີຊີວິດທາງສັງຄົມທີ່ສະໜຸກສະໜານໄດ້ດີກວ່າເດັກທີ່ບໍ່ມີພັດທະນາການດັ່ງກ່າວໃນຊ່ວງໄວທີ່ຜ່ານມາເດັກເລີ່ມມີຄວາມເອົາໃຈໃສ່ກັບບຸກຄົນຕ່າງໄວບໍ່ວ່າເປັນຜູ້ໃຫຍ່ ຫຼື ເດັກກວ່າ ໄລຍະນີ້ຈຶ່ງເລີ່ມຕົ້ນຊີວິດກຸ່ມທີ່ແທ້ຈິງ (gang age) ການປ່ຽນແປງທາງກາຍຢ່າງວ່ອງໄວ ແລະ ຫຼວງຫຼາຍເປັນແຮງກະຕຸ້ນໃຫ້ເດັກລວມກຸ່ມເພາະສາມາດຮ່ວມສຸກຮ່ວມທຸກແກ້ໄຂ ແລະ ເຂົ້າໃຈບັນຫາຂອງກັນ ແລະ ກັນດີກວ່າຄົນຕ່າງໄວ ເຊິ່ງມີຄວາມຄັບຂ້ອງໃຈຕ່າງກັນ ກຸ່ມຍັງສະໜອງຄວາມຕ້ອງການທາງສັງຄົມດ້ານຕ່າງໆ ເຊິ່ງເດັກຕ້ອງການຫລາຍໃນໄລຍະນີ້ເຊັ່ນ ການເປັນບຸກຄົນສຳຄັນການຕໍ່ຕ້ານຜູ້ມີອຳນາດການໜີສະພາບອັນໜ້າເບື່ອຂອງຄອບຄົວ ແລະ ອື່ນໆ ຈຶ່ງກ່າວໄດ້ວ່າກຸ່ມມີຄວາມສຳຄັນຕໍ່ຊີວິດຈິດໃຈ ແລະ ອະນາຄົດຂອງເດັກຢ່າງຫຼາຍທີ່ສຸດ ຄອບຄົວເລີ່ມມີອິດທິພົນນ້ອຍລົງ ສະນັ້ນລັກສະນະຊໍ່ວດີຂອງກຸ່ມ ຈຶ່ງເປັນເຄື່ອງຊີ້ຊະຕາຊີວິດຂອງເດັກໃນໄລຍະໄວລຸ້ນ ແລະ ໄລຍະໄວຜູ້ໃຫຍ່ ການຄົບເພື່ອນຮ່ວມໄວດຽວກັນເປັນພຶດຕິກຳສັງຄົມທີ່ສຳຄັນຢ່າງຍິ່ງຕໍ່ຈິດໃຈຂອງເດັກໄວລຸ້ນແຕ່ການຄົບເພື່ອນກໍຄວນມີອັນດີ ແລະ ໂທດເພື່ອນອາດເປັນຜູ້ປະຄໍ້າປະຄອງຈິດໃຈຂອງໄວລຸ້ນໃນຍາມທຸກຮ້ອນໃຈແນະສິ່ງມີປະໂຫຍດເພື່ອນເຮັດໃຫ້ໄວລຸ້ນຮູ້ສຶກວ່າຕ່າງຄົນຕ່າງເປັນເຈົ້າຂອງຊີວິດຂອງກັນ ແລະ ກັນ ເພື່ອນກໍຈະເກືອບນຳໄວລຸ້ນໄປໃນທາງເສື່ອມຖອຍຜູ້ເປັນອາດຊະຍາກອນໄວລຸ້ນຫຼວງຫຼາຍໃນທຸກປະເທດນັ້ນ ເມື່ອຄົ້ນຫາສາເຫດກຸ່ມມັກຈະພົບວ່າປັດໃຈໜຶ່ງເກີດຈາກເພື່ອນຊັກຈູງໃຈປະຫວັດເດັກໄວລຸ້ນຕາມ

ສະຖານທີ່ການສຶກສາທີ່ເສຍຄົນເສຍເດັກໄປໂດຍປະການຕ່າງໆ ເຊັ່ນ ຂີ້ດື້, ຕິດຢາເສບຕິດນັ້ນລ້ວນມີສາເຫດສຳຄັນຈາກການຖືກເພື່ອນຊັກຈູງໃຈ.

**ນອກຈາກນີ້ ສຸຊາ ຈັນທະແອມ (2006)** ກ່າວວ່າເມື່ອມະນຸດເຂົ້າມາຢູ່ໃນກຸ່ມ ຫຼື ສະມາຊິກແຕ່ລະຄົນພາຍໃນກຸ່ມຍ່ອມຈະມີອິດທິພົນຕໍ່ກັນ ເຊິ່ງຈະສະຫຼຸບໄດ້ດັ່ງນີ້:

1) ກຸ່ມມີອິດທິພົນຕໍ່ການເຮັດສິ່ງຕ່າງໆເມື່ອບຸກຄົນເຂົ້າມາຢູ່ໃນກຸ່ມແຜນງານຕ່າງໆທີ່ເປັນລັກສະນະຂອງແຕ່ລະຄົນກໍຈະປ່ຽນໄປເປັນລັກສະນະຂອງກຸ່ມລັກສະນະການກະທຳກໍເປັນການຮ່ວມມືກັນເຮັດໃຫ້ງານສຳເລັດໄວທີ່ສຸດ.

2) ກຸ່ມມີອິດທິພົນຕໍ່ຄວາມສຳພັນ ແລະ ຄວາມຄິດ **ອັບພອດ (1920)** ໄດ້ເຮັດການທົດລອງກ່ຽວກັບເດັກ ໂດຍໃຫ້ເດັກກຸ່ມໜຶ່ງຂຽນຄຳ ຫຼື ປະໂຫຍກທີ່ສະແດງຄວາມສຳພັນແບບອິດສະຫຼະຕໍ່ເນື່ອງກັນ (Free-Association) ປາກົດວ່າເດັກທີ່ເປັນກຸ່ມເຮັດໄດ້ສຳເລັດໄວກວ່າເດັກທີ່ເຮັດຄົນດຽວສະແດງວ່າຄວາມສຳພັນພາຍໃນກຸ່ມມີຜົນຕໍ່ພຶດຕິກຳຂອງເດັກ ນອກຈາກນີ້ ອັບພອຣດ ທ່ານຍັງໄດ້ເຮັດການສຶກສາອິດທິພົນຂອງກຸ່ມຕໍ່ແນວຄວາມຄິດຂອງເດັກ ແລະ ພົບວ່າອິດທິພົນຂອງກຸ່ມມີອິດທິພົນຕໍ່ແນວຄວາມຄິດ ແລະ ການໃຫ້ເຫດຜົນຂອງເດັກ ຖ້າເຮົາໃຫ້ມີການສະແດງຄວາມຄິດເຫັນກັນຢ່າງເປີດເຜີຍຈະມີອິດທິພົນຫຼາຍຂຶ້ນ.

3) ກຸ່ມມີອິດທິພົນຕໍ່ການຈູງໃຈໃນການເຮັດສິ່ງຕ່າງໆ ພຶດຕິກາພາຍໃນກຸ່ມມີດັ່ງລັກດສະນະທີ່ມີການແຂ່ງຂັນ (Competitive) ແລະ ມີລັກສະນະທີ່ໃຫ້ຄວາມຮ່ວມມື (Cooperative) ສະນັ້ນໃນການວາງແຜນ ຫຼື ການຈູງໃຈນັ້ນເຮົາຄຳນຶງເຖິງມາດຕະຖານຂອງກຸ່ມເປັນໃຫຍ່ ເມື່ອເດັກເຂົ້າມາຢູ່ໃນກຸ່ມກໍພະຍາຍາມປັບປຸງຕົນເອງເພື່ອຍອມຮັບມາດຕະຖານຂອງກຸ່ມເພາະຈະເຮັດໃຫ້ເກີດຄວາມຮູ້ສຶກເປັນພວກດຽວກັນ

ຈາກເອກະສານຂ້າງເທິງສະຫຼຸບໄດ້ວ່າການຄົບເພື່ອນຂອງເດັກໄວລຸ້ນເປັນໄປຕາມຄວາມຕ້ອງການທີ່ຈະເປັນສ່ວນໜຶ່ງຂອງກຸ່ມ ແລະ ເປັນທີ່ຍອມຮັບຂອງກຸ່ມເພື່ອນໂດຍການເຂົ້າກຸ່ມຂອງໄວລຸ້ນແຕ່ລະຄົນມີເຫດຜົນທີ່ແຕກຕ່າງກັນໄປ ເຊັ່ນ ໄວດຽວກັນເພດດຽວກັນມີທັດສະນະຄະຕິຄ້າຍໆຄືກັນບາງຄົນຢາກຫຼົບໜີຄວາມ ເບື່ອຫນ່າຍພາຍໃນຄອບຄົວ ໄວລຸ້ນໃຫ້ຄວາມສຳຄັນກັບເພື່ອນຫຼາຍເພາະເພື່ອນມີຄວາມເຂົ້າໃຈໄວລຸ້ນດ້ວຍ ກັນຫລາຍກວ່າໄວອື່ນໆ ແຕ່ບາງຄັ້ງການຄົບເພື່ອນຂອງໄວລຸ້ນກໍຖືກເພື່ອນຊັກນຳໄປສູ່ພຶດຕິກຳທີ່ບໍ່ເໝາະສົມຕ່າງໆໄດ້.

### 2.4.2 ອິດທິພົນຂອງສື່

ສື່ມີທັງປະໂຫຍດ ແລະ ໂທດ ສື່ເປັນແຫຼ່ງໃຫ້ຄວາມຮູ້ຫຼວງຫຼາຍແຕ່ໃນຂະນະດຽວກັນ ສື່ກໍແຝງໄປດ້ວຍພິດໄພທັງພາບຄວາມຮຸນແຮງຈາກຂ່າວອາດຊະຍາກອນ, ພາບຂອງລະຄົນທີ່ມີເນື້ອໃນຮຸນແຮງຄວາມຮຸນແຮງທີ່ເດັກຈະຈົດຈຳ ແລະ ນຳໄປຮຽນແບບໄດ້ ສິ່ງຜົນຕໍ່ພຶດຕິກຳຮຸນແຮງ ດັ່ງລາຍລະອຽດຕໍ່ໄປນີ້:

**ສີເຮືອນ ແກ້ວກັງວານ (2006)** ບັນຫາຂອງໄວລຸ້ນສ່ວນໜຶ່ງນັ້ນມີອິດທິພົນມາຈາກສື່ສານມວນຊົນ, ຮູບເງົາ, ໂທລະພາບ, ວິດີໂອ ແລະ ສື່ອອນໄລຣ ມີບົດບາດຕໍ່ຄວາມຄິດທັດສະນະຄະຕິຂອງເດັກພາບຄວາມຮຸນແຮງຄວາມສຳພັນທາງເພດ ມີອິດທິພົນຕໍ່ສິ່ງທີ່ເດັກເຊື່ອຖືຍຶດເອົາເປັນແບບຢ່າງ ເດັກໄດ້ເຫັນພາບສິ່ງບໍ່ດີໃນຂະນະທີ່ເດັກຍັງຢູ່ໃນໄວທີ່ຮັບເລື່ອງເຫຼົ່ານັ້ນບໍ່ໄດ້ ຫຼື ຍັງບໍ່ສາມາດຈຳແຍກໄຕ່ຕອງໄດ້ວ່າສິ່ງທີ່ເຫັນ ຫຼື ໄດ້ຍິນນັ້ນມີຂໍ້ດີຂໍ້ເສຍແບບໃດ ວາລະສານໜັງສືພິມ ຫຼື ວິດີໂອ ສ່ວນໃຫຍ່ມັກເປັນບຸກຄົນທີ່ມີຄວາມ ເກັ່ງເກີນຈິງມີຄວາມສາມາດໃນດ້ານຕ່າງໆທຸກດ້ານເດັກໄວລຸ້ນມີສະພາບທຳມະຊາດທີ່ສຳຄັນຄືສະແຫວງຫາປັດຊະຍາອຸດົມການຊີວິດຮຽນແບບ ແລະ ນັບຖືບຸກຄົນທີ່ຕົນເອງປະທັບໃຈ ຈຶ່ງຍຶດຖືບຸກຄົນເຫຼົ່ານັ້ນເປັນແບບຢ່າງ ເຊິ່ງເດັກຈະມີຄວາມສາມາດບໍ່ພຽງພໍ ຫລື ບຸກຄົນເຫຼົ່ານັ້ນຈະເປັນພຽງຜູ້ສ້າງຄິດຝັນຂຶ້ນບໍ່ມີບຸກຄົນເຊັ່ນ  ນັ້ນໃນຊີວິດຈິງ ເມື່ອທ່ານບໍ່ສາມາດນຳຕົວໄປເຖິງເປົ້າໝາຍທີ່ເປົ້າໝາຍວາງໄວ້ຈຶ່ງເຮັດໃຫ້ເກີດຄວາມສັບສົນຈົນຈະເປັນໄວລຸ້ນທີ່ຕ້ອງໃຊ້ກົນໄກປ້ອງກັນຕົວຢ່າຫຼວງຫຼາຍເພີ້ຝັນ ຫຼື ສະແດງອອກແປກໆຕາເພື່ອໃຫ້ຕົນໄດ້ເປັນ “ພະເອກ” “ນາງເອກ” ຕາມທີ່ຕົນຮຽນຮູ້ ແລະ ຮຽນແບບຈາກສື່ມວນຊົນໂດຍຮູ້ຕົວ ແລະ ບໍ່ຮູ້ຕົວໃນບາງກໍລະນີກາຍເປັນເດັກຕຶງຄຽດ ຫຼື ປະພຶດຜິດທາງເພດແນວໃດແນວໜຶ່ງ.

ນອກຈາກນີ້ **ຍິງຍຸທອນ ວົງພົນມະສານ (2004 )** ກ່າວວ່າອິດທິພົນຂອງສື່ໂທລະພາບທີ່ມີຜົນຕໍ່ພຶດຕິກຳເດັກບັນຫາຄອບຄົວໂດຍສະເພາະໃນຕົວເມືອງສ່ວນໃຫຍ່ພໍ່ແມ່ບໍ່ມີເວລາໃຫ້ລູກເນື່ອງຈາກບໍ່ຮູ້ວິທີຈັດການເວລາເມື່ອຕ້ອງເຮັດວຽກຂອງຕົນຈຶ່ງມັກປ່ອຍໃຫ້ລູກຢູ່ນິ່ງໆໜ້າຈໍໂທລະພາບ ນອກຈາກນີ້ຍັງບໍ່ມີກິດຈະກຳສ້າງສັນເນື່ອງຈາກບໍ່ເຫັນຜົນຮ້າຍທີ່ຈະຕາມມາ ດັ່ງນັ້ນຈຶ່ງບໍ່ຄວນໃຫ້ເດັກເບິ່ງໂທລະພາບດົນເກີນ 1-2 ຊົ່ວໂມງຕໍ່ມື້ເພາະການດເບິ່ງໂທລະພາບຫລາຍຈະເຮັດໃຫ້ເດັກມີສະມະທິສັ້ນບໍ່ຮູ້ຈັກການເຮັດວຽກໃຫ້ສຳເລັດຄວາມຄິດສ້າງສັນຫຼຸດລົງມີບັນຫາເລື່ອງສະຕິປັນຍາເກີດບັນຫາຄວາມຮຸນແຮງໃນດ້ານການຮຽນແບບຄວາມເຢັນຊາ.

ສາເຫດແຫ່ງຄວາມຮຸນແຮງປະການໜຶ່ງເກີດຈາກສື່ທີ່ຜະລິດໃນຮູບແບບຕ່າງໆມີຄວາມສຳພັນກັບພຶດຕິກຳກອນຮຽນຮູ້ບຸກຄົນອາດຮຽນຮູ້ການກະທຳຄວາມຮຸນແຮງຈາກສື່ໃນຮູບແບບຕ່າງໆດົນໆເຂົ້າຈົນກາຍເປັນຄ່ານິຍົມ ຫຼື ຄວາມເຢັນຊາທີ່ຮູ້ສຶກວ່າການເຮັດແບບນັ້ນເປັນເລື່ອງປົກກະຕິທຳມະດາບໍ່ເປັນຄວາມຜິດແຕ່ຢ່າງໃດໂດຍສາມາດຖ່າຍທອດຈາກລຸ້ນໜຶ່ງສູ່ຄົນອີກລຸ້ນໜຶ່ງໄດ້ ເຊັ່ນ ຄວາມຮຸນແຮງຈາກສື່ສິ່ງພິມ, ຮູບເງົາ, ໂທລະພາບ, ວິດີໂອ  ແລະ ສື່ອອນໄລຣເປັນຕົ້ນ.

ນອກຈາກນີ້ **ວິໂລດ ອາລີກຸນ (2010:ອອນໄລ໌ )**  ບັນຫາຄວາມຮຸນແຮງໃນເດັກໄວລຸ້ນຈະມີ ປັດໃຈຕ່າງໆເຂົ້າມາມີສ່ວນກ່ຽວຂ້ອງຫຼາຍປັດໃຈຮ່ວມກັນສົ່ງເສີມໃຫ້ມີຄວາມຮຸນແຮງເກີດຂຶ້ນ ເຊັ່ນ ບັນຫາທາງດ້ານພັນທຸກຳ, ຮໍໂມນ ຄວາມຜິດປົກກະຕິທາງດ້ານຮ່າງກາຍພື້ນຖານທາງດ້ານອາລົມການລ້ຽງດູສະພາບທາງດ້ານຄອບຄົວ, ວັດທະນະທຳ, ຄ່ານິຍົມ, ຄວາມເຊື່ອຖື, ເຊື້ອຊາດ ຕະຫລອດຈົນກົດເກນທາງດ້ານສັງຄົມ ແລະ ກົດໝາຍຕ່າງໆ ແຕ່ປັດໃຈທີ່ສຳຄັນທີ່ນຳໄປສູ່ຄວາມຮຸນແຮງທີ່ເຮົາພົບເຫັນເປັນປະຈຳທີ່ປັດຈຸບັນມີອິດທິພົນຫຼາຍຄື: ສື່ຕ່າງໆ ເຊັ່ນ ໂທລະພາບ, ວິທະຍຸ, ວິດີໂອ ເກມພິວເຕີ ຫຼື ມືຖື, ຮູບເງົາ

ແລະ ສື່ອອນໄລຣ ສິ່ງທີ່ຈະຊັກຈູງນໍາໄປສູ່ຄວາມຮຸນແຮງໄດ້ງ່າຍຫລາຍຂຶ້ນຄື ພວກເຫຼົ້າ, ເບຍ ເຄື່ອງດື່ມທີ່ມີແອນກໍຮໍປະສົມຕ່າງໆ, ຢາເສບຕິດ ແລະ ອື່ນໆ ເຊິ່ງກຸ່ມເດັກໄວລຸ້ນເປັນກຸ່ມສ່ຽງ ແລະ ລໍ້ແຫຼມຕໍ່ສິ່ງດັ່ງກ່າວຖ້າຫາກບໍ່ມີການຄວບຄຸມກໍາກັບດູແລທີ່ດີໃນປັດໃຈສ່ຽງຕ່າງໆເຫຼົ່ານີ້ຈະມີຜົນເສຍເກີດຂຶ້ນຕາມມາກັບເດັກໄວລຸ້ນຫຼາຍກວ່າຜົນດີທີ່ເດັກໄວລຸ້ນຄວນຈະໄດ້ຮັບ.

ຈາກຂໍ້ມູນຂ້າງເທິງສະຫລຸບອິດທິພົນຂອງສື່ຕໍ່ຄວາມຮຸນແຮງໄດ້ວ່າເດັກທີ່ໄດ້ຮັບຊົມພາບຄວາມຮຸນແຮງຈາກສື່ບໍ່ວ່າຈະເປັນຮູບເງົາສັ້ນ ຫລື ພາບຂ່າວຄວາມຮຸນແຮງເດັກຍັງຈໍາແຍກບໍ່ໄດ້ວ່າສິ່ງທີ່ຮັບຊົມເປັນສິ່ງທີ່ຄວນເຮັດ ຫລື ບໍ່ຄວນເຮັດ ຈິ່ງເກີດການຮຽນແບບຈາກສື່ການໄດ້ຮັບຊົມພາບທີ່ມີຄວາມຮຸນແຮງຫຼາຍຄັ້ງເຮັດໃຫ້ເດັກເຊື່ອມຊຶມເອົາຄວາມຮຸນແຮງນັ້ນໄວ້ກັບຕົນເອງສົ່ງຜົນຕໍ່ການມີພຶດຕິກໍາຄວາມຮຸນແຮງ

### 2.4.3 ອິດທິພົນຈາກເກມສື່ອອນໄລ

ເກມສື່ອອນໄລຣເປັນໄພຄຸກຄາມຕໍ່ພັດທະນາການທາງຮ່າງກາຍ ແລະ ສະຕິປັນຍາຂອງເດັກໃນຮູບແບບໃໝ່ທີ່ຍຶດພື້ນທີ່ຄວາມສໍາພັນລະຫວ່າງຄົນໃນຄອບຄົວໄປເຮັດໃຫ້ເດັກຂາດຄວາມຮັບຜິດຊອບຕໍ່ໜ້າທີ່ຂອງຕົນເອງສົ່ງຜົນຕໍ່ການຮຽນເດັກທີ່ຫຼິ້ນເກມອອນໄລຣປະເພດທີ່ມີເນື້ອຫາກ່ຽວກັບຄວາມຮຸນແຮງສົ່ງຜົນກະທົບຕໍ່ພຶດຕິກໍາການຮຽນແບບຄວາມຮຸນແຮງດັ່ງລາຍລະອຽດຕໍ່ໄປນີ້:

**ສົມຊາຍ ຈະເລີນອໍານວຍສຸກ (2006 : ອອນໄລ** ) ກ່າວວ່າສໍາລັບຜົນກະທົບຂອງການຫຼິ້ນເກມອອນໄລຣນັ້ນສົ່ງຜົນໃຫ້ສຸຂະພາບເສື່ອມໂຊມສໍາພັນລະຫວ່າງເພື່ອນຫຼຸດລົງເຮັດໃຫ້ເກີດບັນຫາການ ໜີຮຽນ ແລະ ການຫລິ້ນເກມທີ່ມີເນື້ອຫາກ່ຽວກັບຄວາມຮຸນແຮງເຮັດໃຫ້ເດັກກາຍເປັນຄົນແຂ້ງກະດ້ານສ່ວນສາເຫດການຫຼິ້ນເກມມາຈາກຄວາມຍາກລອງເກມມີຄວາມທ້າທາຍເພື່ອນຊັກຊວນຮູ້ສຶກເຂົ້າກຸ່ມເພື່ອນມີເລື່ອງເວົ້ານໍາກັນ ແລະ ເກມຕ່າງໆ ມີຄວາມຫຼາກຫຼາຍຊວນໃຫ້ເດັກຄົ້ນຫາ.

ນອກຈາກນີ້ **ອໍາພົນ ເບນຈະພົນພິດທັດ (2006 : ອອນໄລ )** ຜູ້ອໍານວຍການສູນສຸຂະພາບຈິດສະແດງຄວາມເຫັນວ່າທີ່ຜ່ານມາມີຜູ້ປົກຄອງສົ່ງຄົນໄຂ້ເຂົ້າມາພົບຈິດຕະແພດໃນຈໍານວນນັ້ນມີເດັກທີ່ຖືກພິຈາລະນາວ່າເປັນໂລດຈິດມີບັນຫາກ່ຽວກັບສໍາພັນຕະພາບ ຜົນການຮຽນຕົກລົງພະຍາຍາມເຮັດຕົວແປກແຍກ ແລະ ທໍາຮ້າຍຜູ້ອື່ນໂດຍແກ່ນຂອງບັນຫາຄືການທີ່ເດັກຕິດເກມ ແຕ່ລະດັບປະຖົມສຶກສາທັງນີ້ ເດັກຈະ ເລີ່ມຕົ້ນຫຼິ້ນຈາກເກມສ້າງສັນກ້າວໄປສູ່ເກມເນື້ອຫາຮຸນແຮງບາງຄອບຄົວເອົາເກມ ແລະ ເຄື່ອງຄອມພິວເຕີ ຫຼື ມືຖື ເປັນຂອງລາງວັນລໍ້ໃຈເດັກໃຫ້ເດັກຮຽນດີເຮັດໃຫ້ເດັກຮູ້ສຶກວ່າເກມສ ແລະ ເຄື່ອງຄອມພິວເຕີ ຫຼື ມືຖືເປັນຂອງລໍ້າຄ່າພໍ່ແມ່ຕ້ອງເບິ່ງກ່ອນວ່າເດັກມີຄວາມພ້ອມບໍ່ຫາກຈະເອົາເກມເຂົ້າເຮືອນລວມເຖິງຄອບຄົວທີ່ມີຄວາມຮຸນແຮງຢູ່ໃນຄອບຄົວຢູ່ແລ້ວຍິ່ງອັນຕະລາຍ ຫາກເດັກກໍາລັງຫຼິ້ນເກມຢູ່ພໍ່ແມ່ໄປຕົບຫົວໃຫ້ເລີກຫຼິ້ນ ຫຼື ຕິເຂົາຈະເຮັດໃຫ້ເດັກໂມໂຫ ສະນັ້ນ ພໍ່ແມ່ຄວນຊັດເຈນ ແລະ ໜັກແໜ້ນພໍໃນການບອກໃຫ້ລູກເລີກຫຼິ້ນ ຫາກເດັກລົງໄປຊັກດິ້ນຊັກງໍ້ກໍຕ້ອງທໍາໃຈ.

ສະຫຼຸບຈາກຂໍ້ມູນຂ້າງເທິງ ເກມອອນໄລ ສົ່ງຜົນເສຍຕໍ່ຕໍ່ພັດທະນາການຂອງເດັກທາງດ້ານຈິດໃຈ ແລະ ອາລົມສົ່ງຜົນໃຫ້ມີອາລົມແຂ້ງກະດ້ານ ເປັນການຜ່ອນເພາະພຶດຕິກໍາຄວາມຮຸນແຮງໃນເດັກ

ທີ່ຫຼິ້ນເກມປະເພດເນື້ອຫາທີ່ກ່ຽວຂ້ອງກັບຄວາມຮຸນແຮງ ນອກຈາກນີ້ຈະເຮັດໃຫ້ເດັກຂາດຄວາມຮັບຜິດຊອບຕໍ່ການຮຽນໃຊ້ເວລາໝົດໄປກັບການຫຼິ້ນເກມອອນໄລ ຂາດຄວາມໃກ້ຊິດກັບພໍ່ແມ່ສົ່ງຜົນໃຫ້ສຳພັນທະພາບໃນຄອບຄົວຫຼຸດລົງ.

## 2.5. ຜົນກະທົບຈາກພຶດຕິກຳຄວາມຮຸນແຮງ.

ຜົນກະທົບຕໍ່ຄວາມຮຸນແຮງອາດແບ່ງປະເພດຜົນກະທົບແຕ່ລະດ້ານໄດ້ດັ່ງຕໍ່ໄປນີ້:

### 2.5.1 ຜົນກະທົບຈາກພຶດຕິກຳຄວາມຮຸນແຮງຕໍ່ເດັກ.

ເດັກທີ່ໄດ້ຮັບການກະທຳຄວາມຮຸນແຮງສົ່ງຜົນກະທົບໃຫຍ່ຫຼວງຕໍ່ພັດທະນາການທາງດ້ານຮ່າງກາຍ ສະຕິປັນຍາ ທັດສະນະຄະຕິຕໍ່ພຶດຕິກຳຄວາມຮຸນແຮງ ດັ່ງລາຍລະອຽດຕໍ່ໄປນີ້:

ຜົນກະທົບຈາກການຖືກທາລຸນດ້ານຮ່າງກາຍຈາກຜົນການສຶກສາຂອງ **ອິງເຟີ ແລະ ຊີວິນ (Engfer ; Schneewind ; ອ້າງອີງຈາກ ຄະນະກຳມາທິການກິດຈະການເພດເຍົາວະຊົນ ແລະ ຜູ້ສູງອາຍຸວຸດທິພາວະ, 2007)** ພົບວ່າເດັກທີ່ຖືກພໍ່ແມ່ລົງໂທດຢ່າງຮຸນແຮງເລື້ອຍໆນັ້ນຄວນມີຜົນກະທົບຕໍ່ພັດທະນາການຂອງເດັກການຈະເລີນເຕີບໃຫຍ່ຊ້າ ມີອາການປະສາດ ຫລື ວິດຕົກກັງວົນຂາດຄວາມເຊື່ອໝັ້ນໃນຕົນເອງໃນດ້ານທັດສະນະຄະຕິຂອງເດັກຈະເບິ່ງໂລກໃນແງ່ຮ້າຍ ກຽດຊັງຜູ້ໃຫຍ່ ຈະມີຄວາມຮູ້ສຶກວ່າພໍ່ແມ່ປະຕິເສດ ຖິ້ມປະເຂົາເຈົ້າ ມີຄວາມຮູ້ສຶກວ່າພໍ່ແມ່ເຂັ້ມງວດກວດກາໂຫດຮ້າຍທາລຸນ.

- ❖ ດ້ານພຶດຕິກຳເດັກຈະສະແດງອອກສອງກໍລະນີຄື:

1) ເດັກຈະມີບຸກຄະລິກະພາບແຂງກະດ້າງ ແລະ ມີບັນຫາດ້ານຄວາມປະພຶດຈຶ່ງມີໂອກາດທີ່ຈະເຮັດຜິດກົດໝາຍໄດ້ສູງຫຼາຍ ແລະ ເຊື່ອວ່າເດັກທີ່ຖືກກະທຳທາລຸນ ຈົນມີບຸກຄະລິກກະພາບແຂງກະດ້າງມັກຈະກໍ່ອາດຊະຍາກອນຕໍ່ຊີວິດຜູ້ອື່ນ ແລະ ລົງມືຢ່າງຮຸນແຮງ.

2) ເດັກຈະມີຄວາມວິຕົກກັງວົນສູງເຮັດຫຍັງມັກຈະບໍ່ປະສົບຄວາມສຳເລັດ ແລະ ຍັງເຮັດໃຫ້ເດັກຮູ້ສຶກສິ້ນຫວັງຂາດຄວາມໝັ້ນໃຈທໍ້ແທ້ບາງເທື່ອມີພຶດຕິກຳທຳຮ້າຍຕົນເອງ ຫລື ຂ້າຕົວຕາຍເປັນຕົ້ນ.

3) ຜົນກະທົບຈາກການຖືກກະທຳທາລຸນທາງຈິດໃຈຈະສົ່ງຜົນຕໍ່ພັດທະນາການດ້ານອາລົມພຶດຕິກຳ ແລະ ສະຕິປັນຍາຂອງເດັກ ເຊັ່ນ ເຮັດໃຫ້ເດັກຮູ້ສຶກວ່າຂາດຄວາມຮັກ, ຄວາມອົບອຸ່ນ ເປັນຄົນບໍ່ມີຄ່າຕໍ່ຄົນອື່ນ ເຊິ່ງຈະສົ່ງຜົນໃຫ້ເດັກເປັນຄົນເກັບຕົວເກັບກົດ ແລະ ເຊື່ອມຊຶມບໍ່ເວົ້າຈາກັບໃຜ ໃນບາງຂະນະກໍຈະມີອາການຕໍ່ຕ້ານຢ່າງຮຸນແຮງ ຕໍ່ຄຳສັ່ງຂອງຜູ້ໃຫຍ່ຕະຫລອດຈົນມີພຶດຕິກຳທາງອາລົມທີ່ຜິດປົກກະຕິອື່ນໆ ແລະ ສົ່ງຜົນຕໍ່ພຶດຕິກຳຂອງເດັກໍໃນໄລຍະຍາວອີກດ້ວຍ ເດັກຈະສະສົມການຮຽນຮູ້ວິທີການແກ້ບັນຫາຄວາມຂັດແຍ່ງດ້ວຍວິທີການໃຊ້ຄວາມຮຸນແຮງ ແລະ ໃຊ້ກຳລັງໃນການຕັດສິນບັນຫາແທນການໃຊ້ເຫດຜົນມີຜົນເຮັດໃຫ້ເດັກກາຍເປັນຄົນຕໍ່ຕ້ານສັງຄົມແຂງກະດ້າງ ແລະ ຈະເຮັດຜິດ ຫລື ກໍ່ອາຊະຍາກຳໄດ້ໃນທີ່ສຸດ.

ສະຫຼຸບຜົນກະທົບຈາກພຶດຕິກຳທີ່ມີຄວາມຮຸນແຮງຕໍ່ເດັກໄດ້ວ່າເດັກທີ່ໄດ້ຮັບຄວາມຮຸນແຮງຈະສົ່ງຜົນຕໍ່ສະພາບດ້ານຮ່າງກາຍ ເຊັ່ນ ລະດັບສະຕິປັນຍາຕ່ຳເບິ່ງໂລກໃນແງ່ຮ້າຍມີບຸກຄະລິກແຂງກະດ້າງມີ

ຄວາມວິຕົກກັງວົນສູງເຮັດສິ່ງໃດມັກບໍ່ປະສົບຄວາມສຳເລັດມີຄວາມຮູ້ສຶກສິ້ນຫວັງທໍ້ແທ້ບາງເທື່ອຈະທຳຮ້າຍຕົນເອງ ຕະຫລອດຈົນສົ່ງຜົນຕໍ່ພຶດຕິກຳຂອງເດັກໃນໄລຍະຍາວ ເດັກຈະສະສົມວິທີແກ້ໄຂຄວາມຂັດແຍ່ງດ້ວຍວິທີທີ່ມີຄວາມຮຸນແຮງແທນການໃຊ້ເຫດຜົນທຳໃຫ້ເດັກເປັນຄົນຕໍ່ຕ້ານສັງຄົມ ແລະ ກາຍມາເປັນອາຊະຍາກອນໃນທີ່ສຸດ.

### 2.5.2 ຜົນກະທົບຈາກຄວາມຮຸນແຮງຂອງໄວລຸ້ນ

ຄວາມຮຸນແຮງໃນໄວລຸ້ນ (Youth violence) ອີງການອະນາໄມໂລກ (2002 ) ຄວາມຮຸນແຮງທີ່ເກີດໂດຍໄວລຸ້ນ ເຊິ່ງເປັນໄວທີ່ຢູ່ໃນຊ່ວງອາຍຸລະຫວ່າງ 10-29 ປີເປັນຄວາມຮຸນແຮງທີ່ເຫັນໄດ້ຊັດເຈນຕັ້ງແຕ່ມີຄວາມຮຸນແຮງຫລາຍຈົນເຖິງຂັ້ນເສຍຊີວິດ ແລະ ບໍ່ເຖິງແກ່ຊີວິດເຊັ່ນ ການຕໍ່ສູ້ໂຈມຕີກັນ, ການຂົ່ມຂືນ, ການທຳລາຍສິ່ງຂອງ ຮູບແບບການໃຊ້ຄວາມຮຸນແຮງຕັ້ງແຕ່ໃຊ້ອະໄວຍະວະຂອງຮ່າງກາຍ ເຊັ່ນການໃຊ້ມືຕ່ອຍຕີ, ໃຊ້ຕີນເຕະຖີບ ຫລື ໃຊ້ອາວຸ ເຊັ່ນ ໄມ້, ມີດ ໄປຈົນເຖິງການໃຊ້ປືນ ຈຶ່ງເປັນບັນຫາທີ່ເຮັດໃຫ້ເກີດການຕາຍກ່ອນໄວອັນຄວນ, ການບາດເຈັບ ແລະ ຂາດຄວາມສາມາດ ຄວາມຮຸນແຮງໃນໄວລຸ້ນບໍ່ໄດ້ສ້າງຄວາມເສຍຫາຍສະເພາະກັບເຫຍື່ອທີ່ຖືກໃຊ້ຄວາມຮຸນແຮງເທົ່ານັ້ນແຕ່ຍັງສົ່ງຜົນກະທົບໄປເຖິງຄອບຄົວ, ເພື່ອນ  ແລະ ຊຸມຊົນອີກດ້ວຍຄວາມຮຸນແຮງໃນໄວລຸ້ນມີຄວາມສຳພັນກັບຄວາມຮຸນແຮງຮູບແບບອື່ນໆ ແລະ ນຳໄປສູ່ການກໍອາຊະຍາກຳທີ່ເປັນບັນຫາສັງຄົມອີກດ້ວຍ ສ່ວນຫລາຍເພດທີ່ກໍ່ຄວາມຮຸນແຮງມັກເປັນເພດຊາຍເກີດຂຶ້ນໄດ້ທຸກໆພາກຂອງໂລກ.

ສະຫຼຸບຈາກຂໍ້ມູນຂ້າງເທິງໄດ້ວ່າ ຜົນກະທົບຈາກບັນຫາການໃຊ້ຄວາມຮຸນແຮງຂອງໄວລຸ້ນເປັນຄວາມຮຸນແຮງທີ່ເຫັນໄດ້ຊັດເຈນ ເຊັ່ນ ການຍົກພວກທຳຮ້າຍກັນ, ການຂົ່ມຂືນ, ການທຳລາຍວັດຖຸສິ່ງຂອງ ແລະການໃຊ້ອາວຸ, ມີດ, ປືນທຳຮ້າຍຜູ້ອື່ນ ເປັນບັນຫາເຮັດໃຫ້ເກີດການຕາຍກ່ອນໄວອັນຄວນ, ການບາດເຈັບ ແລະ ຂາດຄວາມສາມາດ, ຄວາມຮຸນແຮງໃນໄວລຸ້ນຍັງສົ່ງຜົນກະທົບຕໍ່ສະມາຊິກໃນຄອບຄົວເພື່ອນ ແລະ ຊຸມຊົນອີກດ້ວຍ.

### 2.5.3  ຜົນກະທົບຈາກພຶດຕິກຳຄວາມຮຸນແຮງໃນຄອບຄົວ

**ສຸມົນທິບ ໃຈເຫຼັກ (2003: ອອນໄລ )** ສຶກສາເຖິງຜົນກະທົບຂອງເດັກ ແລະ ໄວລຸ້ນທີ່ໄດ້ຮັບຄວາມຮຸນແຮງໃນຄອບຄົວພົບວ່າ:

1) ຜົນກະທົບທີ່ໄດ້ຮັບຈາກການໃຊ້ຄວາມຮຸນແຮງໃນຄອບຄົວຜູ້ທີ່ໄດ້ຮັບຄວາມຮຸນແຮງໃນະຄອບຄົວ ໂດຍເຫັນການໃຊ້ຄວາມຮຸນແຮງ ແລະ ຖືກໃຊ້ຄວາມຮຸນແຮງໂດຍການທຳຮ້າຍຮ່າງກາຍທັງເຈດຕະນາ ແລະ  ບໍ່ເຈດຕະນາຈະໄດ້ຮັບຜົນກະທົບທາງດ້ານຮ່າງກາຍ ແລະ ຈິດໃຈຫລາຍກວ່າຜູ້ທີ່ເຄີຍເຫັນຄວາມຮຸນແຮງເປັນແນວດຽວໂດຍສະເພາະຍິ່ງໄລຍະເວລາໃນການສຳພັນ ຫຼື ໃກ້ຊິດກັບຄວາມຮຸນແຮງຫລາຍເທົ່າໃດອາດສົ່ງຜົນກະທົບຫຼາຍຂຶ້ນເທົ່ານັ້ນ ໃນດ້ານຮ່າງກາຍ, ອາລົມ, ຈິດໃຈ, ບຸກຄະລິກລັກສະນະການປັບຕົວເຂົ້າສູ່ສັງຄົມ.

2) ທັດສະນະຕະຕິຕໍ່ການກັບໄປໃຊ້ຊີວິດໃນຄອບຄົວທີ່ມີການໃຊ້ຄວາມຮຸນແຮງຜູ້ທີ່ມີປະສົບການກົງໃນແງ່ຂອງການເຫັນ ແລະ ການຖືກໃຊ້ຄວາມຮຸນແຮງໃນການທຳຮ້າຍຮ່າງກາຍລວມທັງຜູ້ທີ່ເຫັນຄວາມຮຸນແຮງໃນະຄອບຄົວພຽງອຍ່າງດຽວເປັນໄລຍະເວລາດົນບໍ່ຕ້ອງການກັບເຂົ້າສູ່ຄອບເດີມ ເຊິ່ງຖ້າເລືອກໄດ້ຜູ້ມີປະສົບການກົງບໍ່ຕ້ອງການຢູ່ກັບຄອບຄົວທີ່ມີຄວາມສົມບູນແບບບໍ່ຈຳເປັນຕ້ອງມີພໍ່ ແລະ ແມ່ຢູ່ນຳກັນພ້ອມ ໜ້າຄືເກົ່າກັບຄອບຄົວອື່ນ ແຕ່ຂໍ່ໃຫ້ເປັນຄອບຄົວທີ່ບໍ່ຕ້ອງມີການໃຊ້ຄວາມຮຸນແຮງໃນຄອບຄົວກໍມີຄວາມສຸກແລ້ວ.

3) ສັງຄົມເບິ່ງການໃຊ້ຄວາມຮຸນແຮງໃນຄອບຄົວເປັນເລື່ອງສ່ວນຕົວຈາກກໍລະນີສຶກສາຂອງເດັກ ແລະ ເຍົາວະຊົນທີ່ຄອບຄົວມີການໃຊ້ຄວາມຮຸນແຮງໄດ້ສະທ້ອນໃຫ້ເຫັນເຖິງສັງຄົມຍັງເບິ່ງການໃຊ້ຄວາມຮຸນແຮງ ໃນຄອບຄົວວ່າເປັນເລື່ອງສ່ວນຕົວທີ່ບໍ່ຄວນເຂົ້າໄປຍຸ່ງກ່ຽວເຊິ່ງເດັກ ແລະ ເຍົາວະຊົນດັ່ງກ່າວມີການຮຽນຮູ້ ອັນດຽວກັນວ່າການໃຊ້ຄວາມຮຸນແຮງໃນຄອບຄົວເປັນເລື່ອງສ່ວນຕົວທີ່ສັງຄົມບໍ່ຄວນເຂົ້າໄປກ່ຽວຂ້ອງ.

ສະຫຼຸບຜົນກະທົບຈາກການໃຊ້ຄວາມຮຸນແຮງໃນຄອບຄົວໄດ້ວ່າ ບຸກຄົນທີ່ສຳພັນກັບຄວາມຮຸນແຮງໃນຄອບຄົວເປັນໄລຍະກະຕຸ້ນໃຫ້ດົນ ສິ່ງຜົນກັບການປັບຕົວໃນສັງຄົມ ແລະ ສິ່ງຜົນທັດສະນະຄະຕິຕໍ່ການໃຊ້ຊີວິດຄອບຄົວວ່າບໍ່ຈຳເປັນທີ່ຈະຕ້ອງມີຄອບຄົວທີ່ສົມບູນພໍ່ແມ່ບໍ່ຕ້ອງຢູ່ພ້ອມໜ້າກັນກໍໄດ້ ຂໍໃຫ້ບໍ່ມີຄວາມຮຸນແຮງໃນຄອບຄົວ ເດັກທີ່ເຕີບໂຕມາໃນຄອບຄົວທີ່ໃຊ້ຄວາມຮຸນແຮງຈະຮັບເອົາທັດສະນະຄະຕິທາງສັງຄົມວ່າຄວາມຮຸນແຮງໃນຄອບຄົວເປັນເລື່ອງສ່ວນຕົວບຸກຄົນອື່ນບໍ່ສົມຄວນເຂົ້າໄປກ່ຽວຂ້ອງເປັນພາບສະທ້ອນໃຫ້ເຫັນທັດສະນະຄະຕິຂອງສັງຄົມທີ່ມີຕໍ່ຄວາມຮຸນແຮງໃນຄອບຄົວ.

### 2.6. ແນວທາງປ້ອງກັນພຶດຕິກຳຄວາມຮຸນແຮງ

ບັນຫາຄວາມຮຸນແຮງໃນສັງຄົມເປັນບັນຫາແກ່ຍາວທີ່ຍັງມີໃນສັງຄົມມາດົນນານສ້າງຄວາມເສຍຫາຍໃຫ້ກັບຊີວິດ ແລະ ຊັບສິນລວມເຖິງຜົນກະທົບຕໍ່ສະພາບຈິດໃຈຂອງຜູ້ເຄາະຮ້າຍ ແລະ ຜູ້ໃກ້ຊິດໃນຄອບຄົວ ທີ່ປະເມີນຄ່າບໍ່ໄດ້ ຫຼາຍຫນ່ວຍງານຮ່ວມກັນຕໍ່ຕ້ານຄວາມຮຸນແຮງຕໍ່ດເພດຍິງ ແລະ ເດັກແຕ່ໃນປັດຈຸບັນ ຄວາມຮຸນແຮງໃນສັງຄົມກໍຍັງບໍ່ໄດ້ຫຼຸດລົງໄປ ນັກວິຊາການຫຼາຍທ່ານໄດ້ໃຫ້ຄວາມຄິດເຫັນໃນການປ້ອງກັນບັນຫາຄວາມຮຸນແຮງດັ່ງຕໍ່ໄປນີ້:

**ສາໂລດ ບົວສີ (ສາໂລດ ບົວສີ 1994; ອ້າງອີງຈາກ ປັດຊະຍາ ກ້າຜົນ.2005)** ກ່າວ ວ່າມະນຸດໄດ້ຮັບອິດທິພົນຈາກສິ່ງແວດລ້ອມເມື່ອເກີດມາແລ້ວຖ້າໄດ້ມີໂອກາດຢູ່ໃນສິ່ງແວດລ້ອມທີ່ເລືອກຈັດສັນໄວ້ເປັນຢ່າງດີ ເຊັ່ນ ໄດ້ຢູ່ໃນສັງຄົມຂອງຜູ້ທີ່ມີວັດທະນະທຳ ໄດ້ຮັບການຝຶກຝົນໃຫ້ອ່ານອອກຂຽນໄດ້, ໄດ້ຮັບການຝຶກຝົນໃນໜ້າທີຂອງພົນລະເມືອງທີ່ດີ, ໄດ້ຮັບການຝຶກຝົນໃນເລື່ອງການປະກອບອາຊີບທີ່ຖືກຕ້ອງຕາມກົດໝາຍ ແລະ ໄດ້ຮັບການສັ່ງສອນ ແລະ ຝຶກຝົນໃນເລື່ອງຈະລິຍະທຳຢ່າງພຽງພໍ ແລະ ອື່ນໆ ມະນຸດຜູ້ນັ້ນກໍຈະເກີດການຮຽນຮູ້ ແລະ ເຂົ້າໃຈຊີວິດຂອງຕົນຮູ້ຈັກລະອາຍ ແລະ ຢ້ານຕໍ່ຄວາມຊົ່ວ ປະຕິບັດຕົນຕາມແນວທາງຂອງຈະລິຍະທຳທີ່ຕົນເອງໄດ້ຮ່ຳຮຽນ ແລະ ຝຶກຝົນມາ ໂລພະ ໂທ

ສະ ໂມຫະ ຂອງທ່ານກໍຫຼຸດລົງໄປຕາມລຳດັບບັນຫາຕ່າງໆໃນຊີວິດກໍ່ຫຼຸດລົງຕາມໄປດ້ວຍ ແລະ ຈະກ່າວໄດ້ວ່າໄດ້ປະສົບກັບຊີວິດທີ່ດີພໍສົມຄວນ.

ການປ້ອງກັນການຂົ່ມເຫັງທາລຸນເດັກຕ້ອງໄດ້ຮັບຄວາມຮ່ວມມືຈາກທຸກຝ່າຍທີ່ມີສ່ວນກ່ຽວຂ້ອງກັບເດັກ ເຊັ່ນ ພໍ່ແມ່, ຜູ້ປົກຄອງ, ຜູ້ປະກອບວິຊາຊີບທີ່ກ່ຽວກັບເດັກ, ຄູອາຈານ,ແພດພະຍາບານ, ນັກກົດໝາຍ, ນັກສັງຄົມສົງເຄາະເປັນຕົ້ນ ສຳລັບການປ້ອງກັນການທາລຸນເດັກກໍມີດັ່ງນີ້:

1) ໃຫ້ຄວາມຊ່ວຍເຫຼືອສະໜັບສະໜູນພໍ່ແມ່ຜູ້ປົກຄອງ ເຊັ່ນ ໃຫ້ມີການແນະນຳປຶກສາແນະແນວຄອບຄົວຝຶກອົບຮົມຫາກຸ່ມສະໜັບສະໜູນຄອບຄົວໃນເລື່ອງທັກສະໃນການຈັດການບັນຫາທັກສະໃນການເປັນພໍ່ແມ່ຄວາມຮັບຜິດມັກໃນຄອບຄົວ.

2) ສ້າງຄວາມສຳນຶກໃນຖານະເປັນພໍ່ແມ່ວ່າຕ້ອງມີຄວາມຮັບຜິດຊອບຕໍ່ລູກກ່ຽວກັບພັດທະນາການທາງການສຶກສາ, ສະຕິປັນຍາ, ໄດ້ຮັບຄວາມອົບອຸ່ນ ຈະເລີນເຕີບໃຫຍ່ໃນສັງຄົມຢ່າງມີຄຸນນະພາບ.

3) ປ້ອງກັນສະເພາະກໍລະນີບໍ່ໃຫ້ຜູ້ເຮັດຜິດສາມາດເຮັດຊໍ້າຕໍ່ເດັກຄົນເກົ່າ ຫຼື ຄົນອື່ນຄວບຄຸມຜູ້ເຮັດຜິດ ບຳບັດຟື້ນຟູປັບປ່ຽນພຶດຕິກຳເພາະການລົງໂທດໂດຍການຄຸມຂັງໃນເຮືອນຈຳຢ່າງດຽວບໍ່ພຽງພໍທີ່ຈະປ່ຽນພຶດຕິກຳທີ່ເກີດຈາກຄວາມຜິດປົກກະຕິຂອງຈິດໃຈ ແລະ ອາລົມ ດັ່ງນັ້ນ, ນັກຈິດວິທະຍາ, ນັກສັງຄົມສົງເຄາະ ຈຶ່ງມີຄວາມສຳຄັນຫລາຍຕ້ອງເຂົ້າມາເຮັດວຽກຮ່ວມກັບນັກກົດໝາຍ.

4) ຕ້ອງຝຶກເດັກໃຫ້ຮູ້ຈັກການປະເມີນອັນຕະລາຍ, ຫຼົບຫຼີກອັນຕະລາຍ ສາມາດເອົາຕົວລອດປອດໄພ ຮູ້ຈັກບອກ ແລະ ຂໍຄວາມຊ່ວຍເຫຼືອຈາກຜູ້ໃຫຍ່ທີ່ສາມາດໄວ້ວາງໃຈຈົນກວ່າຈະໄດ້ຮັບຄວາມຊ່ວຍເຫຼືອມີການຕິດຕໍ່ສື່ສານກັບພໍ່ແມ່ຜູ້ປົກຄອງແບບໃກ້ຊິດຕະຫລອດເວລາ.

5) ສ້າງກົນໄກຄຸ້ມຄອງຄວາມປອດໄພໃນສະຖານທີ່ ເຊິ່ງເດັກຕ້ອງໄປໃຊ້ບໍລິການເປັນປະຈຳ ເຊັ່ນ ໂຮງຮຽນຄວນມີຄູ ຫຼື ຜູ້ເບິ່ງດູແລຕັ້ງແຕ່ເດັກຄົນທຳອິດມາໂຮງຮຽນ ແລະ ຈົນກວ່າເດັກຄົນສຸດທ້າຍຈະອອກຈາກໂຮງຮຽນ ບໍ່ອະນຸຍາດໃຫ້ຜູ້ໃຫຍ່ຄົນໃດຢູ່ຕາມລຳພັງສອງຄົນກັບເດັກໃນທີ່ສະຖານທີ່ພາຍໃນບໍລິເວນໂຮງຮຽນ ແລະ ຄວນສ້າງລະບົບ ເຊັ່ນ ມີນັກຈິດວິທະຍາປະຈຳໂຮງຮຽນແທນຄູຜູ້ປົກຄອງ ຫຼື ຄູແນະແນວ ເພື່ອຊ່ວຍແກ້ບັນຫາໃນດ້ານພຶດຕິກຳຂອງເດັກ ແລະ ຊ່ວຍເຫຼືອຄຸ້ມຄອງເດັກເມືອເດັກຕົກຢູ່ໃນຄວາມສ່ຽງ ຫຼື ເມື່ອຖືກກະທຳ ສະນັ້ນຈຶ່ງບໍ່ຄວນທີ່ຈະເອົາຄູຜູ້ປົກຄອງ ຫຼື ຄູແນະແນວມາເປັນຫຼັກຄວນຈະໃຊ້ນັກຈິດວິທະຍາແທນເພາະເມື່ອເດັກມີບັນຫາ ຫຼື ມີພຶດຕິກຳຜິດປົກກະຕິກໍໃຫ້ນັກຈິດວິທະຍາຕິດຕາມດສາເຫດວ່າເກີດຈາກຫຍັງແລ້ວຈຶ່ງເຊື່ອມໂຍງກັບເຈົ້າໜ້າທີ່ຝ່າຍອື່ນໆ...

**ອົງການອະນາໄມໂລກ (2002) ເຊິ່ງແບ່ງເປັນການປ້ອງກັນຫຼາຍດ້ານດັ່ງນີ້:**

1. ການປ້ອງກັນດ້ານຕົວບຸກຄົນ, ການປ້ອງກັນທີ່ຕົວບຸກຄົນມີຈຸດປະສົງສອງປະການຄື ປະການທະອິດຕ້ອງສະໜັບສະໜຸແລະ ເສີມສ້າງເຈດຕະຄະຕິ ແລະ ພຶດຕິກຳທີ່ດີໃນເດັກ ແລະ ໄວລຸ້ນເພື່ອເປັນການປ້ອງກັນກ່ອນທີ່ຈະເຕີບໃຫຍ່ເປັນຜູ້ໃຫຍ່ທີ່ມີພຶດຕິກຳຄວາມຮຸນແຮງປະການທີ່ສອງປ່ຽນເຈດຕະຄະຕິແ

ລະ ພຶດຕິກຳໃນບຸກຄົນທີ່ກໍ່ຄວາມຮຸນແຮງ ຫລື ມີຄວາມສ່ຽງທີ່ຈະໃຊ້ຄວາມຮຸນແຮງ ເຊິ່ງປະກອບໄປດ້ວຍວິທີການດັ່ງນີ້:

1) ການໃຫ້ການສຶກສາໄດ້ແກ່ການຈັດການຮຽນການສອນໃນໂຮງຮຽນໃຫ້ເທົ່າທຽມກັນໂດຍສະເພາະນັກຮຽນທີ່ຍາກຈົນໃຫ້ມີໂອກາດໄດ້ສຶກສາກ່ຽວກັບການຝຶກອາຊີບ ແລະ ໃຫ້ຄວາມຮູ້ກ່ຽກັບຢາເສບຕິດ.

2) ການພັດທະນາທາງສັງຄົມມີການສົ່ງເສີມການປ້ອງກັນການທາລຸນຕັ້ງແຕ່ໃນລະດັບກ່ອນເຂົ້າໂຮງຮຽນ ການສົ່ງເສີມການສ້າງຄວາມສຳພັນທາງສັງຄົມໂດຍສະເພາະເດັກ ແລະ ໄວລຸ້ນຕ້ອງສ້າງເສີມພັດທະນາທັກສະທາງສັງຄົມ ເຊັ່ນ ການຈັັດການກັບຄວາມຄຽດການແກ້ໄຂບັນຫາ ແລະ ການສ້າງເສີມຄຸນນະທຳ ແລະ ຈະລິຍະທຳ.

3) ການບຳບັດເປັນການແນະແນວໃຫ້ຄຳປຶກສາກັບຜູ້ເຄາະຮ້າຍຂອງຄວາມຮຸນແຮງ ຫຼື ບຸກຄົນທີ່ມີຄວາມສ່ຽງຕໍ່ການໃຊ້ຄວາມຮຸນແຮງ ການສະໜັບສະໜຸນຂອງກຸ່ມ ແລະ ການບຳບັດພຶດຕິກຳຊຶມເສົ້າຄວາມ ຜິດປົກຕິທາງຈິດລວມທັງພຶດຕິກຳການຂ້າຕົວຕາຍ.

4) ການຮັກສາສຳລັບປະຊາຊົນທີ່ສ່ຽງຕໍ່ການທຳຮ້າຍຕົວເອງລວມທັງການໃຫ້ຢາໃນການປິ່ນປົວຮັກສາຜູ້ມີຄວາມຜິດປົກກະຕິທາງຈິດ ການຈັດເຮັດໂຄງການສຳລັບຜູ້ເຮັດຄວາມຜິດ ແລະ ບຸກຄົນທີ່ກະທຳທາລຸນ ຫຼື ຂົ່ມຂູ່ເພດຍິງ ຫຼື ເດັກ ເຊິ່ງໂຄງການເຫຼົ່ານີ້ໃຊ້ຮູບແບບຂະບວນການກຸ່ມເພື່ອອົບຮົມກ່ຽວກັບບົດບາດທາງເພດ ການຝຶກທັກສະການຈັດການກັັບຄວາມຄຽດ ແລະ ຄວາມຮັບຜິດຊອບໃນບົດບາດໜ້າທີ່ຂອງຕົນເອງ.

2. ການປ້ອງກັນທາງດ້ານຄວາມສຳພັນຂອງບຸກຄົນ

ເປັນການປ້ອງກັນໃນລະດັບຄອບຄົວຄື ສົ່ງເສີມສຳພັນທະພາບທີ່ດີງາມຂອງຄອບຄົວ ແລະ ແກ້ໄຂສຳພັນທະພາບທີ່ບໍ່ຖືກຕ້ອງໃນຄອບຄົວ ຈະເປັນຄວາມສຳພັນລະຫວ່າງຜູ້ເຄາະຮ້າຍ ແລະ ຜູ້ກະທຳຄວາມຮຸນແຮງ ເຊັ່ນ ຄວາມຂັດແຍ່ງໃນຊີວິດແຕ່ງງານການຂາດຄວາມສຳພັນໃກ້ຊິດລະຫວ່າງພໍ່ແມ່ຜູ້ປົກຄອງ ແລະ ເດັກ ແລະ ອິດທິພົນທາງລົບຈາກຜູ້ໃກ້ຊິດ ຫລື ເພື່ອນ ເຊິ່ງປະກອບດ້ວຍວິທີການດັ່ງນີ້:

1) ການຝຶກຝົນຄວາມເປັນພໍ່ແມ່ມີເປົ້າໝາຍທີ່ຈະປັບປຸງຄວາມສຳພັນລະຫວ່າງພໍ່ແມ່ຜູ້ປົກຄອງກັບເດັກ ສະໜັບສະໜຸນພໍ່ແມ່ຜູ້ປົກຄອງໃນການອົບຮົມສັ່ງສອນເດັກ ແລະ ຊ່ວຍໃຫ້ສາມາດພັດທະນາການຄວບຄຸມຕົນເອງສຳລັບເດັກທີ່ມີຄວາມສ່ຽງຕໍ່ການຖືກທາລຸນຈາກພໍ່ແມ່ ແລະ ເປັນການປ້ອງກັນການກະທຳຜິດ ກົດໝາຍໃນອະນາຄົດອີກດ້ວຍ.

2) ການໃຫ້ຄຳປຶກສາແນະນຳແກ່ຄູ່ສົມລົດທີ່ອາຍຸນ້ອຍໂດຍສະເພາະກຸ່ມທີ່ສ່ຽງຕໍ່ພຶດຕິກຳຕໍ່ຕ້ານສັງຄົມ ເດັກພະເນຈອນ.

3) ຄອບຄົວບຳບັດມີເປົ້າໝາຍເພື່ອປັບປຸງແກ້ໄຂການສື່ສານ ແລະ ຄວາມສຳພັນລະຫວ່າງສະມາຊິກໃນຄອບຄົວການສອນທັກສະການແກ້ໄຂບັນຫາ.

4) ການຢ້ຽມຊົມເຮືອນປະກອບດ້ວຍການຢ້ຽມເຮືອນຂອງພະຍາບານ ແລະ ຜູ້ຊ່ຽວຊານທາງສຸຂະພາບທີ່ຈະສະໜັບສະໜຸນ ແລະ ແນະແນວດູແລເພື່ອແຍກເດັກທີ່ມີຄວາມສ່ຽງຕໍ່ການຖືກກະທຳທາລຸນທີ່ຈະມີພຶດຕິກຳໃນການກະທຳຄວາມຜິດ.

5) ການອົບຮົມທັກສະຄວາມສຳພັນເປັນການອົບຮົມກຸ່ມຕ່າງໆທັງຊາຍ ແລະ ຍິງໃຫ້ຮຽນຮູ້ບົດບາດທາງເພດ ຄວາມສຳພັນທີ່ນຳໄປສູ່ຄວາມຮຸນແຮງ ແລະ ທັກສະຊີວິດ.

3. ການປ້ອງກັນທາງດ້ານຊຸມຊົນເປັນການສ້າງຄວາມຮັບຮູ້ ແລະ ຕື່ນຕົວເລື່ອງຄວາມຮຸນແຮງໃຫ້ແກ່ສັງຄົມ ກະຕຸ້ນໃຫ້ຊຸມຊົນເຂົ້າມາມີບົດບາດຮ່ວມແກ້ບັນຫາ ແລະ ສົ່ງເສີມໃຫ້ມີລະບົບດູແລຜູ້ເຄາະຮ້າຍທີ່ໄດ້ຮັບຄວາມຮຸນແຮງເຊິ່ງມີວິທີດັ່ງນີ້:

1) ການໃຫ້ການສຶກສາແກ່ສາທາລະນະໂດຍການໃຊ້ສື່ຕ່າງໆທີ່ຈະເຂົ້າໄປສູ່ຊຸມຊົນ ຫຼື ມຸ້ງເປົ້າໝາຍໄປທີ່ໂຮງຮຽນສະຖານທີ່ເຮັດວຽກ, ສະຖານພະຍາບານ ແລະ ສະຖາບັນຕ່າງໆ.

2) ການປັບປຸງແກ້ໄຂສະພາບແວດລ້ອມ ເຊັ່ນ ຄວາມສະຫວ່າງຂອງຖະໜົນຫົນທາງເພີ່ມຄວາມປອດໄພໃນເສັ້ນທາງຍ່າງຂອງເດັກ ແລະ ເຍົາວະຊົນຈາກການໄປກັບໂຮງຮຽນ ກວດກາ ແລະ ກຳຈັດສະພາບແວດລ້ອມທີ່ເປັນມົນລະພິດທີ່ມີຜົນຕໍ່ການພັດທະນາຂອງເດັກ.

3) ສົ່ງເສີມກິດຈະກຳນອກຫຼັກສູດສຳລັບເຍົາວະຊົນ ເຊັ່ນ ກິລາ, ສິລະປະດົນຕີ, ແລະ ການສະແດງລະຄອນ.

4) ການຝຶກອົບຮົມເຈົ້າໜ້າທີ່ຕຳຫຼວດຜູ້ຊ່ຽວຊານທາງສຸຂະພາບ ແລະ ການສຶກສາອາສາສະໝັກໃຫ້ມີຄວາມສາມາດໃນການແຍກ ແລະ ຈັດການຄວາມຮຸນແຮງໃນຮູບແບບຕ່າງໆໄດ້.

5) ສະໜັບສະໜຸນໃຫ້ກຸ່ມຕ່າງໆໃນຊຸມຊົນມີສ່ວນຮ່ວມກັບເຈົ້າໜ້າທີ່ຕຳຫຼວດໃນການກວດກາຖືວ່າຮັກສາຄວາມສະຫງົບຮຽບຮ້ອຍໃນຊຸມຊົນສັງຄົມ.

6) ສ້າງຄວາມຮ່ວມມືການເຮັດລະບົບດູແລຮ່ວມກັນແລກປ່ຽນຂໍ້ມູນຂ່າວສານຄວາມຮູ້ຜູ້ຊ່ຽວຊານເພື່ອຊ່ວຍກັນຫຼຸດບັນຫາຄວາມຮຸນແຮງໃນຊຸມຊົນ ເຊັ່ນ ໂຮງຮຽນ, ສະຖານທີ່ເຮັດວຽກ, ສູນບຳບັດ, ສະຖານດູແລຜູ້ສູງອາຍຸ, ສະຖານພະຍາບານ ຫຼື ໂຮງໝໍ.

4. ການປ້ອງກັນທາງດ້ານສັງຄົມ

ເປັນການປ້ອງກັນທີ່ມີເປົ້າໝາຍໄປທີ່ປັດໄຈດ້ານວັດທະນະທຳ, ສັງຄົມ ແລະ ເສດຖະກິດເນັ້ນໄປທີ່ການປ່ຽນແປງກົດຫມາຍນະໂຍບາຍສັງຄົມມໂດຍທັງຫມົດ ແລະ ວັດທະນະທຳຄວາມເຊື່ອດັ່ງນີ້:

1) ປັບປຸງແກ້ໄຂຂະບວນການຍຸດຕິທຳ ແລະ ການອອກກົດຫມາຍໃຫ້ມີຄວາມຖືກຕ້ອງຍຸດຕິທຳເຊັ່ນ ກົດຫມາຍກ່ຽວກັບການກະທຳຄວາມຮຸນແຮງທາງເພດຂອງຄູ່ຄອງ ການລົງໂທດທາງກາຍແກ່ເດັກໃນບ້ານເຮືອນ, ໃນໂຮງຮຽນ ຫຼື ສະຖານທີ່ອື່ນໆ ຕ້ອງມີການລາຍງານ ແລະ ລະບົບການຊ່ວຍເຫຼືອເມື່ອເດັກຖືກກະທຳທາລຸນ ຫຼື ການທາລຸນຜູ້ສູງອາຍຸ ຫຼື ການກະທຳຄວາມຮຸນແຮງທາງເພດໃນຄອບຄົວ.

2) ຮ່ວມເຮັດສົນທິສັນຍາກັບນານາປະເທດໃນການປ້ອງກັນຄວາມຮຸນແຮງ.

3) ປັບປຽງນະໂຍບາຍເພື່ອແກ້ບັນຫາຄວາມທຸກຍາກຄວາມເທົ່າທຽມກັນ ແລະ ສົ່ງເສີມຄວາມເຂັ້ມແຂງຂອງຄອບຄົວ.

4) ປັບປຽງວັດທະນະທຳຄວາມເຊື່ອຂອງສັງຄົມທີ່ສຳຄັນຄື ບົດບາດທາງເພດ, ຊົນຊາດການແບ່ງແຍກເຊື້ອຊາດ, ປະເພນີທີ່ນຳໄປສູ່ຄວາມຮຸນແຮງ.

5) ການປະຕິບັດໃນການຫຼຸດອາວຸ ແລະ ການຖອນທະຫານໃນປະເທດທີ່ມີຄວາມຂັດແຍ່ງລວມທັງທະຫານຮັບຈ້າງ.

6) ປັບປຽງນະໂຍບາຍ ແລະ ກົດຫມາຍໃນການຄອບຄອງອາວຸດ.

ຈາກຂໍ້ມູນເບື້ອງເທິງສະຫຼຸບແນວທາງປ້ອງກັນພຶດຕິກຳຄວາມຮຸນແຮງໄດ້ວ່າເດັກຄວນໄດ້ຮັບການປູກຝັງດ້ານຄຸນນະທຳ, ຈະລິຍະທຳຕັ້ງແຕຍັງນ້ອຍຢູ່ໃນສິ່ງແວດລ້ອມທີ່ເໝາະສົມໄດ້ຮັບການອົບຮົມ ແລະການ ສຶກສາຢ່າງພຽງພໍ ກົດຫມາຍຄວບຄຸມ ແລະ ເຂົ້າເຖິງສາມາດຊ່ວຍເຫຼືອຜູ້ທີ່ຕົກເປັນຜູ້ເຄາະຮ້າຍຂອງຄວາມຮຸນແຮງຜູ້ຄົນໃນສັງຄົມທຸກຫນ່ວຍຮ່ວມກັນປ້ອງກັນຄວາມຮຸນແຮງພັກລັດ ແລະ ເອກະຊົນຮ່ວມມືກັນ ເຊັ່ນ ມີມາດຕະການໄລຍະສັ້ນ ຄື ຮ່ວມກັນສື່ເຖິງໃຫ້ຫນ່ວຍງານຕ່າງໆບໍ່ໃຫ້ໃຊ້ຄວາມຮຸນແຮງມາດຕະການໄລຍະຍາວຄື ຮ່າງກົດລະບຽບກົດໝາຍໃຫ້ຄອບຄຸມສາມາດປ້ອງກັນຊ່ວຍເຫຼືອບຸກຄົນຖຸກທີ່ຕົກເປັນຜູ້ເຄາະຮ້າຍຂອງຄວາມຮຸນແຮງໄດ້.

## 2.7. ທິດສະດີທີ່ກ່ຽວຂ້ອງກັບພຶດຕິກຳຄວາມຮຸນແຮງ

ພຶດຕິກຳການໃຊ້ຄວາມຮຸນແຮງເປັນບັນຫາທີ່ຄຸກຄາມຄວາມສະຫງົບສຸກຂອງຊີວິດສິ່ງຜົນກະທົບເສຍຫາຍຕໍ່ຊີວິດ ແລະ ຊັບສິນຂອງປະຊາຊົນຍິ່ງໄປກວ່ານັ້ນ ຄື ຜົນກະທົບດ້ານຈິດໃຈທີ່ສິ່ງຜົນໄລຍະຍາວຕໍ່ ຜູ້ຖືກກະທຳທາລຸນພຶດຕິກຳການໃຊ້ຄວາມຮຸນແຮງຂອງມະນຸດທີ່ທຳຮ້າຍ ແລະ ຄຸກຄາມຜູ້ອື່ ນ ນີ້ເປັນສາເຫດທີ່ເຮັດໃຫ້ນັກຈິດຕະວິທະຍາຫຼາຍຄົນສຶກສາຄົ້ນຄວ້າຫາວ່າສາເຫດຂອງພຶດຕິກຳເກີດຈາກຫຍັງ ເຊິ່ງຈະເປັນຜົນດີຕໍ່ການຫາທາງປ້ອງກັນບໍ່ໃຫ້ເກີດພຶດຕິກຳຄວາມຮຸນແຮງແນວໃດກໍຕາມນັກຈິດຕະວິທະຍາໃຫ້ຄວາມເຫັນທີ່ແຕກຕ່າງກັນໄປດັ່ງຕໍ່ໄປນີ້:

### 2.7.1 ທິດສະດີຈິດວິເຄາະຂອງຟຣອຍ

**ທິດສະດີຂອງຟຣອຍ ( Freud.1973 )** ພາຍໃຕ້ຄວາມຄິດທີ່ວ່າ ຄວາມແຂງກະດ້ານເປັນສັນຊາດຕະຍານທີ່ເກີດຂຶ້ນພາຍໃນຕົວມະນຸດບໍ່ໄດ້ກ່ຽວກັບສິ່ງແວດລ້ອມພາຍນອກ ຟຣອຍ ກ່າວວ່າສັນຊາດຕະຍານມີ 2 ປະເພດຄືສັນຊາດຕະຍານແຫ່ງການດຳລົງຊີວິດ (Life Instinct) ແລະ ສັນຊາດຕະຍານແຫ່ງຄວາມຕາຍ (Deat Instinct) ນອກຈາກນີ້ຍັງກ່າວເຖິງຄວາມເພິ່ງພໍໃຈໃນຄວາມຮຸນແຮງທາງເພດເຊິ່ງຈະເຮັດໃຫ້ເຈັບປວດທາງກາຍ ຫຼື ຈິດໃຈ (Masochism) ວ່າເປັນແນວໂນ້ມທີ່ບຸກຄົນຈະເພີ່ມຄວາມຮູ້ສຶກເພິ່ງພໍໃຈ ຈາກການທຳຮ້າຍຕົນເອງ ເຊິ່ງເປັນຜົນມາຈາກຄວາມແຂງກະດ້ານ ຫລື ມີຄວາມຕ້ອງການທຳຮ້າຍຜູ້ອື່ນແຕ່ບໍ່ສາມາດສະແດງອອກມາໄດ້ ຈຶ່ງຫັນມາທຳຮ້າຍຕົນເອງ ເນື່ອງຈາກບຸກຄົນມີຄວາມຮູ້ສຶກ

ຜິດເກັບໄວ້ໃນຈິດໃຕ້ສຳນຶກ ຟຣອຍ ຈຶ່ງມີຄວາມເຫັນວ່າບຸກຄົນບໍ່ຄວນເກັບຄວາມຄຽດ ຫຼື ຄວາມແຂງກະດ້າງໄວ້ພາຍໃນຄວນຈະຫາວິທີສະແດງອອກໃນທາງທີ່ສັງຄົມຍອມຮັບ ແລະ ບໍ່ສ້າງຄວາມເດືອດຮ້ອນໃຫ້ຜູ້ອື່ນ

ຈາກເອກະສານຂ້າງເທິງສະຫຼຸບໄດ້ວ່າບຸກຄົນມີຄວາມແຂງກະດ້າງເປັນສັນຊາດຕະຍານທີ່ເກີດຂຶ້ນຈາກພາຍໃນໂດຍຄວາມແຂງກະດ້າງບໍ່ໄດ້ຮັບອິດທິພົນຈາກສິ່ງແວດລ້ອມ ແລະ ບຸກຄົນມີແນວໂນ້ມທີ່ຈະທຳຮ້າຍຕົນເອງອັນເນື່ອງມາຈາກຄວາມຮູ້ສຶກຜິດຕໍ່ຄວາມຕ້ອງການຢາກທຳຮ້າຍຄົນອື່ນແຕ່ບໍ່ສາມາດເຮັດໄດ້ດັ່ງນັ້ນ, ບຸກຄົນຈຶ່ງຄວນສະແດງອອກໃນທາງທີ່ສັງຄົມຍອມຮັບບໍ່ສົ່ງຜົນກະທົບຕໍ່ຜູ້ອື່ນ.

**2.7.2 ທິດສະດີຕົວແບບ (Modeling theory)**

ແບນດູລາ ມີຄວາມເຊື່ອກົງກັນຂ້າມກັບສະກິນເນີຣໃນດ້ານຂະບວນການຮຽນຮູ້ (ແສງສຸລິສຳອິງສະກຸນ .2000) ຄື ແບນດູລາ ເຊື່ອວ່າ ການຮຽນຮູ້ເກີດຂຶ້ນໄດ້ໂດຍບໍ່ຕ້ອງມີການລົງມືກະທຳ ແລະ ການເສີມແຮງໂດຍກົງກໍໄດ້ເວົ້າວ່າ “ການຮຽນຮູ້ດ້ວຍວິທີການສັງເກດຕົວແບບ” ເຊິ່ງບໍ່ແມ່ນກະບວນການທີ່ເກີດຂຶ້ນພຽງເພື່ອການບຳບັດທາງຈິດເທົ່ານັ້ນ ເພາະຄົນເຮົາສ່ວນໃຫຍ່ຮຽນຮູ້ໄດ້ໂດຍການຮັບສິ່ງເສີມແຮງທາງອ້ອມມາຕັ້ງແຕ່ເປັນເດັກນ້ອຍທາລົກຢູ່ແລ້ວ.

ການຮຽນຮູ້ດ້ວຍການສັງເກດຈາກບຸກຄົນອື່ນໆ ນີ້ມີປະໂຫຍດທັງເພື່ອຄວາມຢູ່ລອດ ແລະ ເພື່ອການພັດທະນາໃຫ້ເກີດຄວາມຈະເລີນງອກງາມຍິ່ງຂຶ້ນ ຄວາມຜິດພາດຂອງບຸກຄົນອື່ນໆ ມີຄຸນຄ່າເປັນບົດຮຽນແກ່ຄົນທີ່ຊ່າງສັງເກດ ແລະ ຊ່າງຄິດ ເພາະເຂົາບໍ່ຕ້ອງລອງຜິດລອງຖືກຈົນຕ້ອງຮັບຄວາມທຸກທໍລະມານ ຊໍ້າຮອຍກັບຜູ້ອື່ນທີ່ເຄີຍທົດລອງ ຫລື ເຮັດຜິດພາດມາກ່ອນແລ້ວ.

ການຕອບສະໜອງທີ່ເກີດຈາກການຮຽນຮູ້ໂດຍວິທີການສັງເກດນີ້ ອາດຈະເປັນການຕອບສະໜອງໃໝ່ໆ ຫຼື ເປັນການຕອບສະໜອງຕາມແບບຢ່າງທີ່ເຄີຍໄດ້ຮັບລາງວັນມາກ່ອນ ເຊິ່ງເວົ້າໄດ້ວ່າຜູ້ເຮັດຕາມແບບຢ່າງໄດ້ຮັບ “ ແຮງເສີມທາງອ້ອມ ” (vicarious reinforcement) ແຕ່ຖ້າຕົວແບບເຄີຍເຮັດແບບການໃດແລ້ວຖືກລົງໂທດຄົນທີ່ຍອມເຮັດຕາມທັງໆທີ່ຮູ້ດີ ກໍຄວນຈະຮູ້ສຶກວ່າຈົນໄດ້ຮັບ “ການລົງໂທດໂດຍທາງອ້ອມ” (vicarious punishment) ອາດຈະເຂົ້າຄ້າຍຄື ກົນປູຮ້ອງຫ້ອງ.

ແບນດູລາ ເຊື່ອທັດສະນະທີ່ວ່າ “ເຂົ້າເມືອງຕາຫຼິ່ວໃຫ້ຫຼິ່ວຕາຕາມ” (When in Rome, do as the Roman do) ຈຶ່ງເຫັນໄດ້ວ່າ ແບນດູລາ ມີຄວາມເຊື່ອຄ້າຍຄືກັບນັກທິດສະດີຄົນອື່ນໆ (ເຊັ່ນ ໂຣເຈີຣດແລະ ຟອມມ໌ ) ທີ່ວ່າພຶດຕິກຳຄວາມຮຸນແຮງຂອງມະນຸດເກີດຈາກການຮຽນຮູ້ດ້ວຍວິທີການສັງເກດຫລາຍກວ່າຈະເປັນໄປຕາມສັນຊາດຕະຍານທີ່ຄົນເຮົາໄດ້ຮັບຕິດຕົວມາ

ດັ່ງນັ້ນ, ການຮຽນຮູ້ດ້ວຍການສັງເກດເກີດຂຶ້ນໄດ້ໂດຍການໃຊ້ປັນຍາໄຕຕອງ ຫຼື ໃຊ້ ວິຈານນະຍານກຳໜົດສັນຍະລັກໃຫ້ແກ່ສິ່ງຕ່າງໆ ລວມທັງການຈິນຕະນາການວ່າຕົນຢູ່ໃນສະຖານນະການດຽວກັນກັບຜູ້ທີ່ເປັນຕົວແບບການຮຽນຮູ້ແບບນີ້ສາມາດຊ່ວຍພັດທະນາຄວາມຄິດສ້າງສັນອີກດ້ວຍ ແບນດູລາ

ເຫັນວ່າ ຄົນມັກໂດດດຽວທີ່ບໍ່ເຫັນແກ່ເງິນ ຫຼື ຄໍາຊົມນັ້ນຈະປ່ຽນພຶດຕິກໍາໄດ້ນ້ອຍຫລາຍເມື່ອໃຫ້ລາງວັນ ຫຼື ສິ່ງເສີມແຮງ ແລະ ຄົນທົ່ວໄປກໍອາດປ່ຽນແປງພຶດຕິກໍາໄດ້ນ້ອຍ ຫາກທ່ານສັງເກດເຫັນວ່າບຸກຄົນອື່ນໆ ເຄີຍ ກະທໍາສິ່ງດຽວກັນແລ້ວໄດ້ຮັບສິ່ງຕອບແທນຫລາຍກວ່າການຮຽນຮູ້ດ້ວຍວິທີການສັງເກດທີ່ເກີດຂຶ້ນໂດຍປາດສະຈາກຕົວແບບ ຫຼື ການເສີມແຮງໂດຍກົງນັ້ນ ພຶດຕິກໍາມັກຈະບໍ່ປ່ຽນແປງຫາກຜູ້ຮຽນບໍ່ສາມາດຮັບຮູ້ວ່າກິດຈະກໍາທີ່ຕ້ອງການໃຫ້ຮຽນມີຄວາມສໍາຄັນ ຫຼື ມີຄວາມຫມາຍຕໍ່ທ່ານ (ອາດຈະເບື່ອບໍ່ມັກບໍ່ເກັ່ງ ຫຼື ເບິ່ງແລ້ວບໍ່ສະບາຍກາຍ ແລະ ໃຈ ) ເຊັ່ນ ການຈົດຈໍາຄໍາສໍາພັນທີ່ບໍ່ໜ້າສົນໃຈ ຫຼື ສາພັນວິຊາການທີ່ຈໍາ ແລະ ເຂົ້າໃຈຍາກເປັນຕົ້ນປະສິດທິພາບຂອງການຮຽນຮູ້ດ້ວຍວິທີການສັງເກດຂຶ້ນຢູ່ກັບລັກສະນະສະເພາະຕົວຂອງຕົວແບບ ແລະ ຂອງຜູ້ຮຽນເອົ້າ ຄື ຜົນການຮຽນຮູ້ທີ່ດີມັກຈະເກີດຂຶ້ນເມື່ອຕົວແບບມີສະຖານພາບສູງ ແລະ ໜ້າດຶງດູດໃຈ ຫຼື ມີຄວາມຄ້າຍຄືກັບນັກຮຽນດ້ານກາຍຍະພາບ ແລະ ປະຫວັດສ່ວນຕົວ ເຊັ່ນ ເປັນເພດດຽວກັນ, ອາຍຸ, ໃກ້ຄຽງກັນ, ຖ້ານັກຮຽນເປັນຄົນທີ່ມັກເພິ່ງພາ (Dependent) ຫຼື ມັກເປັນພຽງຜູ້ຮັບບໍ່ໃຝ່ໃຈທີ່ຈະຄົ້ນຄິດຫາຄວາມຮູ້ດ້ວຍຕົນເອງ ( ເປັນບຸກຄົນທີ່ເຊື່ອອໍານາດພາຍນອກຫລາຍກວ່າອໍານາດພາຍໃນຕົນຕາມທິດສະດີ ລອດເຕີ ) ທ່ານຈະມັກຮຽນແບບບຸກຄົນອື່ນໆທີ່ມີລັກສະນະດີເດັ່ນຫລາຍກວ່າຈະເປັນຕົວຂອງຕົວເອງ.

ຈາກຂໍ້ມູນຂ້າງເທິງສະຫຼຸບໄດ້ວ່າ ແບນດູລາ (Bandura) ມີຄວາມເຊື່ອວ່າປະສິດທິພາບຂອງການຮຽນຮູ້ດ້ວຍວິທີການສັງເກດຂຶ້ນຢູ່ກັບລັກສະນະສະເພາະຕົວຂອງຕົວແບບ ແລະ ຂອງນັກຮຽນເວົ້າວ່າ ຜົນການຮຽນຮູ້ທີ່ດີມັກຈະເກີດຂຶ້ນເມື່ອຕົວແບບມີສະຖານພາບສູງ ແລະ ໜ້າດຶງດູດໃຈ ຫລື ມີຄວາມຄ້າຍຄືກັບຜູ້ຮຽນດ້ານກາຍຍະພາບ ແລະ ປະຫວັດສ່ວນຕົວ ເຊັ່ນ ເປັນເພດດຽວກັນ, ອາຍຸໃກ້ຄຽງກັນ ຖ້ານັກຮຽນເປັນຄົນທີ່ມັກເພິ່ງພາ (dependent) ຫຼື ມັກເປັນພຽງຜູ້ຮັບບໍ່ໃຝ່ໃຈທີ່ຈະຄົ້ນຄິດຫາຄວາມຮູ້ດ້ວຍຕົນເອງເຂົາເຈົ້າຈະມັກຮຽນແບບບຸກຄົນອື່ນໆທີ່ມີລັກສະນະດີເດັ່ນຫລາຍກວ່າຈະເປັນຕົວຂອງຕົວເອງ.

## 2.8. ງານວິໄຈທີ່ກ່ຽວຂ້ອງກັບພຶດຕິກໍາຄວາມຮຸນແຮງ

### 2.8.1 ງານວິໄຈພາຍໃນປະເທດ

1. ງານວິໄຈຈົບຊັ້ນຂອງນັກສຶກສາຈິດຕະວິທະຍາລຸ້ນທີ 1 ພາກຈິດວິທະຍາການສຶກສາຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ສົກສຶກ 2007 – 2012 ສົນໄຊ ມົນວິໃນ ແລະ ຫຼ້ານ້ອຍ ມິ່ງເມືອງແສນ ( ສຶກສາພຶດຕິກໍາໃນຫ້ອງຮຽນຂອງນັກຮຽນຊັ້ນ ມ7 ທີ່ໂຮງຮຽນມັດທະຍົມສົມບູນສາທິດ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ພາກຮຽນທີ II ສົກຮຽນ 2011 – 2012 ) ນັກຮຽນທີ່ມີພຶດຕິກໍາທີ່ດີຍ່ອມເຮັດໃຫ້ນັກຮຽນຜູ້ນັ້ນປະສົບຜົນສໍາເລັດໃນການຮຽນມີຄວາມສຸກໃນການຮຽນ, ສັງຄົມມີຄວາມສະຫງົບສຸກ ແລະ ປະເທດຊາດກໍ່ຈະເລີນກ້າວໜ້າ.

ພຶດຕິກໍາໝາຍເຖິງ ການກະທໍາ ຫຼື ການສະແດງອອກທຸກຢ່າງຂອງມະນຸດ ທີ່ສັງເກດໄດ້ໂດຍກົງ, ສັງເກດບໍ່ໄດ້ໂດຍກົງ, ຜູ້ກະທໍາຮູ້ຕົວ ແລະ ຜູ້ກະທໍາບໍ່ຮູ້ຕົວ ຫຼື ພຶດຕິກໍາທີ່ເພິ່ງປາຖະໜາ ແລະ ພຶດຕິກໍາທີ່ບໍ່ເພິ່ງປາຖະໜາກໍ່ຕາມ.

ສະນັ້ນແລ້ວ, ການສ້າງໃຫ້ນັກຮຽນມີພຶດຕິກຳທີ່ດີນັ້ນຈຶ່ງມີຄວາມສຳຄັນຢ່າງຍິ່ງທັງນີ້ກໍ່ເພາະນັກຮຽນໃນວັນນີ້ເປັນຜູ້ໃຫຍ່ໃນວັນໜ້າ ເປັນພະລັງທີ່ສຳຄັນທີ່ສ້າງສາພັດທະນາປະເທດຊາດຂອງພວກເຮົາໃຫ້ຈະເລີນກ້າວໜ້າ, ໃນເວລາຮຽນຢູ່ໃນຫ້ອງນັກຮຽນກໍ່ສະແດງພຶດຕິກຳຕ່າງໆອອກມາບາງຄັ້ງກໍ່ສ້າງບັນຫາໃຫ້ແກ່ ຄູ-ອາຈານ ແລະ ເຮັດໃຫ້ເສຍບັນຍາກາດໃນການຮຽນ-ການສອນ, ການສິດສອນບໍ່ເປັນໄປຕາມຈຸດປະສົງທີ່ຄູ-ອາຈານ ຕັ້ງໄວ້. ດັ່ງນັ້ນ, ພວກຂ້າພະເຈົ້າຄະນະສຶກສາຈຶ່ງສົນໃຈສຶກສາພຶດຕິກຳທີ່ສະແດງອອກໃນຫ້ອງຮຽນຂອງນັກຮຽນຊັ້ນ ມ໋7 ທີ່ໂຮງຮຽນມັດທະຍົມບູນສາທິດ ໃນສົກຮຽນ 2011-2012 ວ່າມີພຶດຕິກຳການສະແດງອອກຄືແນວໃດໃນເວລາເຂົາເຈົ້າຮຽນຢູ່ໃນຫ້ອງຮຽນ, ເພື່ອເປັນແນວທາງໃຫ້ແກ່ຄູ-ອາຈານໃນການແນະແນວພຶດຕິກຳດ້ານຕ່າງໆ ຂອງນັກຮຽນສະແດງອອກເໝາະສົມກັບຊ່ຳອາຍຸ ແລະ ເໝາະສົມຄວາມເປັນຈິງ.

❖ **ຜົນການສຶກສາ**

**1) ພຶດຕິກຳທາງດ້ານຮ່າງກາຍ**

ພົບວ່າ: ນັກຮຽນມີຮ່າງກາຍແຂງແຮງ, ສົມບູນ, ມີການເຄື່ອນໄຫວຄ່ອງແຄ້ວ, ວ່ອງໄວເຊິ່ງເປັນໄປຕາມພັດທະນາການທາງດ້ານຮ່າງກາຍຂອງເດັກໄວລຸ່ນ; ສ່ວນການນຸ່ງຖືຂອງນັກຮຽນຊັ້ນ ມ໋7 ເຫັນວ່າ: ນັກຮຽນຊາຍນຸ່ງເສື້ອຂາວ ຫຼື ເສື້ອຊາວໜຸ່ມ, ເອົາເສື້ອເຂົ້າໃນ, ນຸ່ງໂສ້ງສີດຳ, ຫວີຜົມເປັນລະບຽບ, ໃສ່ເກີບສຸບສີດຳ, ນັກຮຽນຍິງນຸ່ງເສື້ອຂາວ ຫຼື ເສື້ອຊາວໜຸ່ມ, ເອົາເສື້ອເຂົ້າໃນ, ນຸ່ງສິ້ນສີຟ້າ ຫຼື ສີດຳມີຕີນ.

ນອກຈາກນັ້ນ, ມີນັກຮຽນສ່ວນໜ້ອຍບໍ່ມັກເອົາເສື້ອເຂົ້າໃນ, ນັກຮຽນຊາຍຈື່ງຜົມຍາວ ແລະ ເຮັດຊົງຜົມຕັ້ງຂຶ້ນລັກສະນະຂັນເໜັ້ນ, ສ່ວນນັກຮຽນຍິງສ່ວນໜ້ອຍໃສ່ເກີບຄີບ, ນຸ່ງສິ້ນເຂີນມາໂຮງຮຽນ.

**2) ພຶດຕິກຳທາງດ້ານອາລົມ**

ພົບວ່າ: ໃນຫ້ອງຮຽນ ສ່ວນຫຼາຍນັກຮຽນມີຄວາມຫ້າວຫັນ, ເບີກບານມ່ວນຊື່ນ, ຍິ້ມແຍ້ມແຈ່ມໃສ, ມີຄວາມກະຕືລືລົ້ນຕໍ່ການຮຽນເຊິ່ງສະແດງອອກເມື່ອຄູຖາມບົດຮຽນນັກຮຽນກໍ່ລຸກຂຶ້ນຕອບດ້ວຍຄວາມເຕັມໃຈ, ເພິ່ງພໍໃຈ ແລະ ໃຊ້ຄຳເວົ້າທີ່ສຸພາບຕໍ່ຄູ-ອາຈານ, ເມື່ອບໍ່ເຂົ້າໃຈບົດຮຽນນັກຮຽນກໍ່ຖາມໝູ່ເພື່ອນ ແລະ ຄູ-ອາຈານ ເຊິ່ງສະແດງອອກໃຫ້ເຫັນໃນການຮຽນຂອງແຕ່ລະລາຍວິຊາ.

ນອກຈາກນັ້ນ, ໃນເວລາຮຽນມີນັກຮຽນຈຳນວນໜ້ອຍບໍ່ມັກຕອບຄຳຖາມຂອງຄູ-ອາຈານ, ບັນຍາກາດໃນຫ້ອງຮຽນມິດງຽບ, ອາຈານເອີ້ນຊື່ໃຫ້ຕອບຄຳຖາມແຕ່ນັກຮຽນກໍ່ຕອບບໍ່ໄດ້ ແລະ ໃນເວລາກວດກາໄດ້ຄະແນນໜ້ອຍນັກຮຽນກໍ່ເກີດຄວາມບໍ່ພໍໃຈໂດຍການສະແດງພຶດຕິກຳຕ່າງໆອອກມາເຊັ່ນ: ໜ້າບູດ, ຖິ້ມເຈ້ຍກວດກາທີ່ຄູສົ່ງໃຫ້ໃສ່ໜ້າໂຕະ.

**3) ພຶດຕິກຳທາງດ້ານສັງຄົມ**

ພົບວ່າ: ເວລາຄູ-ອາຈານຍ່າງເຂົ້າຫ້ອງນັກຮຽນທຸກຄົນລຸກຢືນເຄົາລົບຄູ ພ້ອມດ້ວຍການທັກທາຍທຸກຄົນກ່າວວ່າ: ສະບາຍດີອາຈານ, ແລ້ວອາຈານກໍ່ໃຫ້ນັກຮຽນນັ່ງລົງ, ເວລາຄູຖາມບົດຮຽນ ນັກຮຽນລຸກຕອບອາຈານດ້ວຍຖ້ອຍຄຳທີ່ສຸ  ພາບເຊັ່ນ: ໃຊ້ຖ້ອຍຄຳທີ່ວ່າ: ຮຽນອາຈານ ນ້ອງຂໍຕອບ, ຫຼານຂໍຕອບ, ຂ້ານ້ອຍຂໍຕອບ ແລະ ນັກຮຽນມີການແລກປ່ຽນຄວາມເຫັນເຊິ່ງກັນ ແລະ ກັນ, ໃຊ້ຄຳເວົ້າທີ່ສຸພາບຕໍ່ກັນ

ນອກຈາກນັ້ນ, ນັກຮຽນຈຳນວນໜ້ອຍມັກຢູ່ເປັນກຸ່ມຍ່ອຍ, ບາງຄົນຈຳແນກຊົນຊັ້ນວັນນະ "ຜູ້ມີ, ຜູ້ທຸກ".

4) **ພຶດຕິກຳທາງດ້ານສະຕິປັນຍາ**

ພົບວ່າ: ນັກຮຽນສ່ວນຫຼາຍແມ່ນເອົາໃຈໃສ່ໃນການຮຽນດີເຊິ່ງສະແດງອອກໃຫ້ເຫັນຄື: ນັກຮຽນມັກລຸກຕອບບົດຮຽນທຸກໆຄັ້ງທີ່ອາຈານຖາມໃນແຕ່ລະລາຍວິຊາດ້ວຍການອາສາສະມັກຕອບ, ແຂ່ງຂັນກັນຕອບເອົາຄະແນນສ່ວນຮ່ວມ, ຕັ້ງໃຈຈົດບົດຮຽນ, ນັກຮຽນອອກແກ້ເລກຢູ່ກະດານ, ສົ່ງວຽກບ້ານທັນຕາມເວລາກຳນົດ, ນັກຮຽນສະເໜີຖາມຂໍ້ຂ້ອງໃຈ ແລະ ຂໍ້ທີ່ບໍ່ເຂົ້າໃຈຕໍ່ຄູ-ອາຈານ ແລະ ໝູ່ເພື່ອນດ້ວຍກັນ.

ນອກຈາກນັ້ນ, ມີນັກຮຽນຈຳນວນໜ້ອຍບໍ່ມັກປະກອບສ່ວນ ແລະ ບໍ່ໃສ່ໃຈຕໍ່ບົດຮຽນເຊັ່ນ: ບໍ່ມັກລຸກຕອບຄູ-ອາຈານ, ອາຈານເອີ້ນຊື່ໃຫ້ຕອບຈຶ່ງລຸກຕອບ ແລະ ບາງຄັ້ງກໍ່ບໍ່ຕອບ, ບໍ່ຈົດບົດຮຽນ, ລົມກັນເວລາຄູ-ອາຈານອະທິບາຍບົດຮຽນ, ຫຼິ້ນໂທລະສັບ, ເຫງົານອນ ແລະ ນອນຫຼັບໃນເວລາຮຽນ, ຫຼິ້ນໄພ້ໃນເວລາພັກຜ່ອນ, ນັກຮຽນເອົາປຶ້ມເລື່ອງກະຕູນຂຶ້ນມາອ່ານ, ລໍຖ້າແຕ່ຄູ-ອາຈານແກ້ວຽກບ້ານໃຫ້.

2. ງານວິໄຈຈົບຊັ້ນຂອງນັກສຶກສາຈິດຕະວິທະຍາລຸ້ນທີ 1 ພາກຈິດວິທະຍາການສຶກສາຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ສົກສຶກ 2007 – 2012 ມະໄລແພງ ເພັງມະນີ ແລະ ແຂກ ຄຳມະນີວົງ ( ສຶກສາພຶດຕິກຳທາງສັງຂອງນັກຮຽນຊັ້ນ ມ 7 ທີ່ມັດທະຍົມສົມບູນສາທິດ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ສົກຮຽນ 2011 – 2012 ) ເວົ້າວ່າໂຮງຮຽນມັດທະຍົມສົມບູນສາທິດ ເປັນສະຖາບັນການສຶກສາລະບົບສາມັນແຫ່ງໜຶ່ງທີ່ຂຶ້ນກັບຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ມີໜ້າທີ່ກໍ່ສ້າງ ແລະ ຫຼໍ່ຫຼອມຊັບພະຍາ ກອນມະນຸດໃຫ້ແກ່ສັງຄົມ ໂດຍສະເພາະແມ່ນນັກຮຽນຊັ້ນ ມ 7 ເປັນຊ່ວງໄວອາຍຸທີ່ມີການພັດທະນາດ້ານຮ່າງກາຍ, ອາລົມ, ສັງຄົມ ແລະ ສະຕິປັນຍາ, ມີພຶດຕິກຳພົວພັນທາງສັງຄົມຢ່າງກວ້າງຂວາງ ດັ່ງນັ້ນ, ຈຶ່ງເອົາໃຈໃສ່ໃຫ້ມີການພັດທະນາທີ່ດີ, ມີພຶດຕິກຳທີ່ເໝາະສົມ, ກໍ່ເຮັດໃຫ້ເຂົາເຈົ້າປະສົບຜົນສຳເລັດໃນການສຶກສາຂັ້ນຕໍ່ໄປ ແລະ ການປະກອບອາຊີບໃນອະນາຄົດ.

ເມື່ອເຫັນໄດ້ເຖິງຄວາມສຳຄັນດັ່ງກ່າວ, ພວກຂ້າພະເຈົ້າໃນນາມຄະນະຜູ້ສຶກສາ ແລະ ຈະເປັນຄູສອນໃນອະນາຄົດ ຈຶ່ງມີຄວາມສົນໃຈສຶກສາພຶດຕິກຳທາງສັງຄົມຂອງນັກຮຽນຊັ້ນ ມ 7 ທີ່ມັດທະຍົມສົມບູນສາທິດ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ສົກຮຽນ 2011 - 2012 ເພື່ອເປັນແນວທາງໃນການພັດທະນາ ແລະ ສົ່ງເສີມພຶດຕິກຳທາງສັງຄົມຂອງນັກຮຽນຊັ້ນ ມ 7 ໃຫ້ດີຂຶ້ນເປັນກ້າວໆ.

ຈາກຜົນການສຶກສາ ເຮັດໃຫ້ຮູ້ເຖິງພຶດຕິກຳທາງສັງຄົມຂອງນັກຮຽນຊັ້ນ ມ 7 ດັ່ງນັ້ນ, ຄູອາຈານ, ຄູປະຈຳຫ້ອງ ແລະ ພໍ່ແມ່ຜູ້ປົກຄອງ ຄວນຈະນຳຜົນການສຶກສານີ້ເປັນແນວທາງໃນການໃຫ້ຄຳປຶກສາແນະນຳ, ອົບຮົມສັ່ງສອນນັກຮຽນ ເພື່ອປັບປຸງພຶດຕິກຳໃຫ້ຖືກຕ້ອງ ແລະ ເໝາະສົມກັບຊ່ວງອາຍຸ.

3. ງານວິໄຈຈົບຊັ້ນຂອງນັກສຶກສາຈິດຕະວິທະຍາລຸ້ນທີ 1 ພາກຈິດວິທະຍາການສຶກສາຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ສົກສຶກ 2007 – 2012 ສັງທອງ ແພງບຸດດີ ແລະ ໂຊວຽດ ພິທັກ (

ທັດສະນະຄະຕິຕໍ່ກັບການຄົບເພື່ອນຕ່າງເພດໃນຊັ້ນມັດທະຍົມປາຍໂຮງຮຽນມັດທະຍົມສົມບູນສາທິດ ຄະນະສຶກສາສາດ ສົກຮຽນ 2011 – 2012 "ກໍລະນີສຶກສານັກຮຽນ ມ 5" ) ເວົ້າວ່າ ພວກເຮົາຮູ້ນຳກັນແລ້ວວ່າໃນຊ່ຳອາຍຸໄວລຸ້ນເປັນໄວທີ່ມີການປ່ຽນແປງທາງດ້ານຮ່າງກາຍ ແລະຈິດໃຈເປັນໄວທີ່ຢາກຮູ້ຢາກເຫັນຢາກທົດລອງ ແລະ ຢາກມີເພື່ອນຕ່າງເພດກົງກັນຂ້າມແຕ່ວ່າໃນຊ່ຳອາຍຸນີ້. ຍັງຂາດຫຼັກ ແລະ ຂອບເຂດ ໃນການປະຕິບັດຕົນຕໍ່ເພື່ອນຕ່າງເພດ ແລະ ຍັງບໍ່ທັນຮູ້ຈັກປ້ອງກັນຕົນເອງສິ່ງເຫຼົ່ານີ້ຈຶ່ງເຮັດໃຫ້ມີບັນຫາຕາມມາຕໍ່ຕົນເອງ, ໂຮງຮຽນ,ຄອບຄົວ ແລະສັງຄົມ.

ດັ່ງນັ້ນ, ທີມງານຜູ້ສຶກສາຈຶ່ງມີຄວາມສົນໃຈຢາກສຶກສາທັດສະນະຄະຕິຂອງນັກຮຽນຕໍ່ເພື່ອນຕ່າງເພດໃນໂຮງຮຽນມັດທະຍົມສົມບູນສາທິດ ເພື່ອເປັນຂໍ້ມູນພື້ນຖານໃຫ້ແກ່ຜູ້ບໍລິຫານ ນຳໄປໃຊ້ໃນການສຶກສາອົບຮົມໄວລຸ້ນໃນການພົບເພື່ອນຕ່າງເພດໃຫ້ຖືກຕ້ອງເພື່ອຫຼີກເວັ້ນບັນຫາທີ່ຈະຕາມມາ

❖ **ຜົນການສຶກສາ**

1) ນັກຮຽນສ່ວນຫຼາຍເປັນເພດຍິງກວມ 51.2% ແລະ ມີອາຍຸລະຫວ່າງ 14 – 16 ປີ ກວມ 95% ສ່ວນຫຼາຍແມ່ນອາໄສຢູ່ນຳພໍ່,ແມ່ ເຊິ່ງກວມເອົາ 81.2%

2) ຜົນການວິເຄາະທັດສະນະຄະຕິຂອງນັກຮຽນໃນການຄົບເພື່ອນຕ່າງເພດ ໂດຍແຍກໃຫ້ເຫັນໃນກຸ່ມທີ່ມີຄຳຕອບເຫັນດີ ແລະ ບໍ່ເຫັນດີ

2.1 ດ້ານການຄົບຄ້າສະມາຄົມກັບເພື່ອນຕ່າງເພດພົບວ່າ: ນັກຮຽນສ່ວນຫຼາຍເຫັນດີວ່າ ການມີນັດລະຫວ່າງເພື່ອນຍິງ ຫຼື ເພື່ອນຊາຍຄວນຊວນເພື່ອນໄປນຳກວມເອົາ (97%); ສ່ວນກຸ່ມບໍ່ເຫັນດີມີພຽງ 3% ການນັດກັບການຄົບຄ້າສະມາຄົມກັບເພື່ອນຕ່າງເພດເປັນສິ່ງບໍເສຍຫາຍ ກວມເອົາ (92%); ສ່ວນບໍ່ເຫັນດີມີພຽງ 8%; ຊາຍໜຸ່ມ ຫຼື ຍິງສາວທີ່ຍັງບໍ່ມີຄົນຮັກສາມາດນັດທ່ຽວກັບເພື່ອນຕ່າງເພດຫຼາຍໆຄົນໄດ້ ກວມເອົາ (77%); ສ່ວນກຸ່ມບໍ່ເຫັນດີມີພຽງ 23%

2.2 ດ້ານການວາງຕົວກັບເພື່ອນຕ່າງເພດໂດຍຈຳແນກ ໃນກຸ່ມທີ່ເຫັນດີ ແລະ ກຸ່ມທີ່ບໍ່ເຫັນດີ ພົບວ່າ: ນັກຮຽນສ່ວນຫຼາຍເຫັນດີວ່າ:ຜູ້ຊາຍເປັນຝ່າຍສະແດງຄວາມສົນໃຈຕໍ່ຜູ້ຍິງ,ສວນຜູ້ຍິງຄວນເກັບທ່າທີບໍ່ສະແດງອອກ ກວມເອົາ (83%); ສ່ວນກຸ່ມບໍ່ເຫັນດີມີພຽງ 17%; ຊາຍ ແລະ ຍິງບໍ່ຄວນຢູ່ດ້ວຍກັນຕາມລຳພັງໃນທີ່ລັບຕາ (81%); ສ່ວນກຸ່ມບໍ່ເຫັນດີມີພຽງ19%.

2.3 ດ້ານການປະຕິບັດຕໍ່ກັບເພື່ອນຕ່າງເພດໂດຍຈຳແນກ ໃນກຸ່ມທີ່ເຫັນດີ ແລະ ກຸ່ມທີ່ບໍ່ເຫັນດີ ພົບວ່າ: ນັກຮຽນສ່ວນຫຼາຍເຫັນດີວ່າ: ການມີຄວາມສຳພັນທາງເພດເຖິງຂັ້ນໄດ້ເສຍກັນຂະນະກຳລັງຮຽນຢູ່ຖືວ່າເປັນເລື່ອງເສຍຫາຍ ແລະ ການໄປພັກຄ້າງຄືນເຮືອນຄົນຮັກຂອງຍິງ ຫຼື ຊາຍເປັນສິ່ງບໍ່ເໝາະສົມ ກວມເອົາ (72%); ສ່ວນກຸ່ມບໍ່ເຫັນດີມີພຽງ28%.

3) ຜົນການວິເຄາະລະດັບຄວາມຄິດເຫັນຕໍ່ທັດສະນະຄະຕິຂອງນັກຮຽນໃນການຄົບເພື່ອນຕ່າງເພດ. ໂດຍແຍກລະດັບຄວາມຄິດເຫັນຂອງກຸ່ມທີ່ມີຄຳຕອບເຫັນດີ ແລະ ລະດັບຄວາມຄິດເຫັນຂອງກຸ່ມທີ່ມີຄຳຕອບບໍ່ເຫັນດີ.

4. ງານວິໄຈຈົບຊັ້ນຂອງນັກສຶກສາຈິດຕະວິທະຍາລຸ້ນທີ 1 ພາກຈິດວິທະຍາການສຶກສາຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ສົກສຶກ 2007 – 2012 ຄຳພູ ຈັນດາວົງ ແລະ ຕຽງຄຳ ສີສົມພອນ (

ສຶກສາການປັບຕົວຂອງນັກສຶກສາປີ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດສຶກສຶກສາ 2011-2012 ) ເວົ້າວ່າ ຈາກສະພາບຄວາມເປັນຢູ່ຂອງບຸກຄົນໃນປັດຈຸບັນຈະເຫັນໄດ້ວ່າມີບັນຫາສິ່ງຜົນຕໍ່ການດຳລົງຊີວິດຫຼາຍກວ່າສະໄໝກ່ອນເຮັດໃຫ້ບຸກຄົນຕ້ອງປັບຕົວເພື່ອໃຫ້ສາມາດຢູ່ລອດໄດ້ໃນສັງຄົມ.

ສຳລັບນັກສຶກສາປີທີ 1 ຖືວ່າ ເປັນກ້າວທຳອິດ ແລະ ເປັນກ້າວທີ່ສຳຄັນສຳລັບຊີວິດທາງການສຶກສາ ເພາະຖືວ່າເປັນຊ່ວງຊີວິດຂອງການປັບຕົວ ເພື່ອໃຫ້ຕົນເອງມີຄວາມພ້ອມຕໍ່ການເປັນຜູ້ຮຽນໃນລະດັບມະຫາວິທະຍາໄລ ແລະ ພ້ອມທີ່ຈະກ້າວຢ່າງຢ່າງໝັ້ນຄົງຕໍ່ການຮຽນຮູ້ທາງດ້ານວິຊາຊີບໃນລະດັບທີ່ສູງຂຶ້ນ

ຈາກສະພາບບັນຫາ ແລະ ຄວາມສຳຄັນຂ້າງເທິງ ຄະນະນັກສຶກສາສົນໃຈທີ່ຈະສຶກສາການປັບຕົວຂອງນັກສຶກສາປີທີ 1 ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດສຶກສຶກສາ 2011-2012 ວ່າມີການປັບຕົວໃນລະດັບໃດ ? ເຊິ່ງຜົນການສຶກສາ ຈະເປັນຂໍ້ພິຈາລະນາໃນການປັບປຸງດ້ານການຈັດການສຶກສາໃຫ້ມີຄຸນນະພາບ ແລະ ສົ່ງເສີມສະໜັບສະໜູນໃຫ້ນັກສຶກສາປະສົບຄວາມສຳເລັດໃນການສຶກສາອັນຈະສົ່ງຜົນໃຫ້ນັກສຶກສາສຳເລັດເປັນບັນດິດທີ່ມີຄຸນນະພາບໃນອະນາຄົດ.

❖ **ຜົນການສຶກສາ**

ດ້ານການຮຽນ: ຄວນໃຫ້ນັກສຶກສາມີສ່ວນຮ່ວມໃນການອະພິປາຍ ແລະ ມີສ່ວນຮ່ວມໃນການຮຽນຫຼາຍກວ່າເກົ່າ

ດ້ານອາລົມ: ຄວນໃຫ້ນັກສຶກສາມີການຮຽນຮູ້ທີ່ຈະປະຕິບັດກິດຈະກຳຮ່ວມກັບບຸກຄົນອື່ນດ້ວຍການໃຊ້ເຫດ ແລະ ຜົນ ເພື່ອໃຫ້ນັກສຶກສາເຂົ້າໃຈເຫດການສະພາບຄວາມເປັນຈິງ.

ດ້ານສັງຄົມ: ຄະນະສຶກສາສາດຄວນຈັດກິດຈະກຳທີ່ເໝາະສົມ ແລະ ມີຄວາມໜ້າສົນໃຈໃຫ້ແກ່ນັກສຶກສາ ລວມທັງໃຫ້ນັກສຶກສາໄດ້ມີສ່ວນຮ່ວມຮັບຜິດຊອບໃນວຽກງານຕ່າງໆ ເພື່ອສ້າງຄວາມສຳພັນລະຫວ່າງນັກສຶກສາກັບຄູ-ອາຈານ ແລະ ນັກສຶກສາກັບນັກສຶກສາດ້ວຍກັນ.

ດ້ານບຸກຄະລິກພາບ: ຄວນມີການຈັດຕັ້ງກົດລະບຽບດ້ານການຮຽນ ແລະ ການນຸ່ງຖືໃຫ້ເຄັ່ງຄັດກວ່ານີ້ ເພື່ອສ້າງຄວາມລົ້ງເຄີຍໃຫ້ແກ່ນັກສຶກສາ ໃຫ້ນັກສຶກສາມີຄວາມໝັ້ນໃຈ ແລະ ອອກໄປຮັບໃຊ້ສັງຄົມຢ່າງມີປະສິດທິພາບ.

### 2.8.2. ງານວິໄຈໃນຕ່າງປະເທດ

ເທວິນທອນຣ໌ ຂໍທານງວກລາງ (2003: ອອນໄລ ) ໄດ້ເຮັດການສຳຫຼວດນັກຮຽນຜູ້ຊາຍລະດັບມັດທະຍົມປາຍ ແລະ ລະດັບປະກາດນີບັດຊັ້ນຕົ້ນວິຊາຊີບໃນກຸງເທບມະຫານະຄອນຈຳນວນ 1,226 ຄົນພົບວ່ານັກຮຽນມີຄວາມຂັດແຍ່ງໃນເລື່ອງຕ່າງໆທີ່ມີໂອກາດນຳໄປສູ່ຄວາມຮຸນແຮງດັ່ງນີ້:

ເຫດຜິດກັບຄົນອ້ອມຂ້າງນັກຮຽນຜູ້ຊາຍ 46.0 % ໄດ້ຜິດກັບພໍ່ແມ່ຜູ້ປົກຄອງເຖິງຂັ້ນໂຕ້ຖຽງປະທະອາລົມໃສ່ກັນອີກດ້ວຍ ເຫດສຳຄັນຄືເລື່ອງການທ່ຽວກາງເວັນກາງຄືນບໍ່ຄ່ອຍກັບບ້ານບໍ່ສົນໃຈການຮຽນ ໃຊ້ຈ່າຍຟຸ່ມເຟືອຍບໍ່ເຊື່ອຟັງຄຳສັ່ງສອນ ແລະ ຄົບໝູ່ເພື່ອນທີ່ບໍ່ຖືກໃຈຜູ້ປົກຄອງ ແລະ ໃນຈຳນວນ

ນີ້ມີເຖິງ 48.2% ທີ່ມີຄວາມຮູ້ສຶກຄຽດທີ່ຖືກຜູ້ປົກຄອງຈົ່ມຮ້າຍວ່າ ນອກຈາກນີ້ໃນບັນດານັກຮຽນຜູ້ຊາຍທີ່ມີແຟນ ຫລື ຄົນຮັກ ເຊິ່ງມີຢູ່ຮູ້ 32.1 % ຂອງນັກຮຽນຜູ້ຊາຍທີ່ສຳຫຼວດ ພົບວ່າໃນຮອບ 3 ເດືອນທີ່ຜ່ານມາມີຢູ່ເຖິງ 44.0 % ທີ່ເຄີຍຜິດກັບແຟນດ້ວຍສາເຫດສຳຄັຍ ຄື ການບໍ່ເຂົ້າໃຈກັນ, ຄວາມຫຶງຫວງ, ຖືກຖິ້ມ, ຍິງຄົນຮັກປັ່ນໃຈໃຫ້ຊາຍອື່ນ, ອີກຝ່າຍເອົາແຕ່ໃຈຕົນເອງ, ບໍ່ໄດ້ຮັບການເອົາໃຈໃສ່ 40.0 % ເຄີຍຖືກຄູຮ້າຍວ່າ ຫລື ລົງໂທດດ້ວຍເຫດສຳຄັນໄດ້ແກ່ການຝ່າຝືນກົດລະບຽບໂຮງຮຽນ, ມາສວຍ, ບໍ່ຍອມສົ່ງວຽກບ້ານ, ໂດດຮຽນ ແລະ ບໍ່ຕັ້ງໃຈຮຽນ ເຊິ່ງໃນຈຳນວນນັກຮຽນຜູ້ຊາຍທີ່ເຄີຍຖືກຄູຮ້າຍວ່າ ຫລື ລົງໂທດມີຢູ່ 16.0 % ທີ່ເຄີຍຄິດຈະທຳຮ້າຍຄູຄົນນັ້ນ 19.2 % ເຄີຍທະເລາະວິວາດກັບເພື່ອນຮ່ວມສະຖາບັນ 17.1 % ເຄີຍທະເລາະວິວາດກັບຄົນອື່ນນອກສະຖາບັນດ້ວຍສາເຫດສຳຄັນໄດ້ແກ່ ເກີດອາການບໍ່ພໍໃຈບໍ່ມັກໜ້າກັນການດູໝິ່ນສະຖາບັນການສຶກສາ, ການຍາດແຟນຍາດຈີບຜູ້ຍິງ ແລະ ການກະທົບກະທັ່ງອາລົມ, ທາງຮ່າງກາຍ ແລະ ວາຈາ ( ເຊັ່ນ ຍຽບຕີນ, ຍ່າງຕຳກັນ, ແຊວກັນ ) ແລະ ທີ່ໜ້າສົນໃຈກໍຄືໃນບັນດານັກຮຽນຜູ້ຊາຍທີ່ເຄີຍທະເລາະວິວາດກັບຄົນອື່ນນອກໂຮງຮຽນມີເຖິງ 62.4 % ທີ່ຄິດຈະໄປທຳຮ້າຍຄົນທີ່ເຄີຍຜິດກັນດ້ວຍ ( ທີ່ເຫຼືອ 15.2 % ບໍ່ແນ່ໃຈ ແລະ ທີ່ບໍ່ຄິດຈະທຳຮ້າຍມີພຽງ 22.4 % ) 18 % ກັງວົນວ່າຈະຖືກທຳຮ້າຍຮ່າງກາຍໃນຂະນະທີ່ 30.1 % ບໍ່ແນ່ໃຈ ແລະ 52.3 % ບໍ່ຫວາດລະແວງ ໂດຍສະເພາະນັກຮຽນທີ່ເຄີຍມີເລື່ອງທະເລາະວິວາດກັບຄົນອື່ນຈະມີຄວາມກັງວົນເລື່ອງການຖືກທຳຮ້າຍຈາກການສຳຫຼວດຄັ້ງນີ້ພົບວ່າມີຕົວຢ່າງນັກຮຽນຜູ້ຊາຍ 17.6 %ທີ່ມີຊີວິດຢູ່ຫວາດລະແວງວ່າຈະຖືກທຳຮ້າຍສູງຫລາຍກວ່າປົກກະຕິ ແລະ ຝັນໃຝ່ຫາອາວຸດມາໃຊ້ ສຳລັບຕົວເລກຂອງນັກັຮຽນທີ່ມີຄວາມຄິດວ່າຢາກຈະມີອາວຸດຕິດຕົວ (ເຊັ່ນປືນ ຫລື ມີດ) ມີ 21.1 % ຂອງນັກຮຽນຜູ້ຊາຍທັງໝົດໂດຍທີ່ນັກຮຽນທີ່ເຄີຍມີບັນຫາເລື່ອງການທະເລາະວິວາດມີສູງເຖິງ 34.1 % ທີ່ຕ້ອງການຖືອາວຸດ ແລະ ທີ່ໜ້າສົນໃຈກໍຄືນັກຮຽນທີ່ເຄີຍມີເລື່ອງທະເລາະວິວາດມີເຖິງ 44.2 % ໝັ້ນໃຈວ່າຕົນເອງຈະຫາອາວຸດປືນມາໃຊ້ໄດ້ຖ້າຫາກວ່າມີຄວາມຕ້ອງການໃຊ້ຂຶ້ນມາ ( ໃນຂະນະທີ່ມີພຽງ 29.8 % ທີ່ຫາບໍ່ໄດ້ 26.0 % ຍັງ ບໍ່ແນ່ໃຈວ່າຈະຫາໄດ້ ຫລື ບໍ່ )

ນອກຈາກນີ້ງານວິໄຈຂອງ ລະພີພັດ ສະລິມາລາ (2004:ອອນໄລ ) ສຶກສາເລື່ອງປັດໄຈ ແລະ ຄວາມຄິດເຫັນຂອງນັກຮຽນມັດທະຍົມສຶກສາຕໍ່ການໃຊ້ຄວາມຮຸນແຮງໃນກຸງເທບມະຫານະຄອນ ພົບວ່າສາເຫດທີ່ນັກຮຽນມັດທະຍົມສຶກສາໃຊ້ຄວາມຮຸນແຮງເກີດຈາກປັດໄຈພາຍໃນຕົວເດັກເອງໄດ້ແກ່ການຂາດການຄວບຄຸມອາລົມການສະແດງອອກເພື່ອສ້າງຈຸດເດັ່ນໃຫ້ຜູ້ອື່ນຍອມຮັບທັງຫມົດທັງເປັນຄ່ານິຍົມ ແລະ ເລື່ອງຂອງສັກສີ ສ່ວນປັດໄຈພາຍນອກໄດ້ແກ່ການບໍ່ເຊື່ອຟັງຄຳສັ່ງສອນຂອງຜູ້ປົກຄອງການຂາດຄວາມອົບອຸ່ນໃນຄອບຄົວການສະແດງຄວາມຮຸນແຮງໃນຄອບຄົວກົດລະບຽບຂອງໂຮງຮຽນບໍ່ເຂັ້ມງວດການແກ້ແຄ້ນແທນເພື່ອນ ການລົງໂທດຂອງຄູ ແລະ ອິດທິພົນຂອງສື່ ໃນປັດຈຸບັນສ່ວນຄວາມເຫັນຕໍ່ການໃຊ້ຄວາມຮຸນແຮງນັ້ນ ເດັກມັດທະຍົມໃນກຸງເທບ ເຫັນວ່າການໃຊ້ຄວາມຮຸນແຮງເປັນສິ່ງເໝາະສົມກັບເຫັນວ່າການໃຊ້ຄວາມຮຸນແຮງເປັນເລື່ອງທີ່ບໍ່ເຫມາະສົມແຕ່ຈຳເປັນຕ້ອງໃຊ້.

ຈາກການສຶກສາເພື່ອຫາຄຳຕອບກ່ຽວກັບຄວາມຮຸນແຮງໃນຄອບຄົວກັບການກະທຳຜິດຂອງເດັກ ແລະ ເຍົາວະຊົນຈາກເດັກ ໂດຍການສຳພາດແບບເຈາະເລິກເດັກ ແລະ ເຍົາວະຊົນໃນສະຖານພິນິດ 3 ແຫ່ງຄື ສະຖານພິນິດ ແລະ ຄຸ້ມຄອງເດັກ ແລະ ເຍົາວະຊົນ ບ້ານກະລຸນາປານີ ແລະ ແຂວງລາດບຸລີ ຈຳນວນ 9 ຄົນ ເຊິ່ງໄດ້ແບ່ງເປັນ 3 ກຸ່ມຄື ກຸ່ມຜູ້ທີ່ເຄີຍເຫັນຄວາມຮຸນແຮງ ແລະ ເຄີຍຖືກທຳຮ້າຍຮ່າງກາຍຈາກການໃຊ້ຄວາມຮຸນແຮງໃນຄອບຄົວ ເຊິ່ງມີອາຍລະຫວ່າງ 16 – 18 ປີ ຈົບການສຶກສາລະດັບປະຖົມສຶກສາປີທີ 6 ເຖິງຊັ້ນມັດທະຍົມສຶກສາປີທີ 3 ຕ້ອງລົງໂທດດ້ວຍຄະດີຮ່ວມກັນປຸ້ນຊັບ ແລະ ທຳຮ້າຍຮ່າງກາຍ ຄະດີປຸ້ນຊັບ ແລະ ຄະດີຄ້າຢາເສບຕິດລາຍຍ່ອຍຖືກສານຕັດສິນຈັບຄວບຄຸມຕົວໃນສະຖານພິນິດ ເປັນໄລຍະເວລາລະຫວ່າງ 1 ປີ – 4 ປີ ກຸ່ມຜູ້ທີ່ເຄີຍເຫັນຄວາມຮຸນແຮງໃນຄອບຕົວແຕ່ບໍ່ເຄີຍຖືກທຳຮ້າຍຮ່າງກາຍຈາກການໃຊ້ຄວາມຮຸນແຮງໃນຄອບຄົວ ເຊິ່ງມີອາຍຸລະຫວ່າງ 15 – 21 ປີ ຈົບການສຶກສາລະດັບຊັ້ນປະຖົມສຶກສາປີທີ 1 ຊັ້ນປະຖົມສຶກສາປີທີ 4 ແລະ ຊັ້ນປະຖົມສຶກສາປີທີ 6 ຕ້ອງລົງໂທດດ້ວຍຄະດີຮ່ວມກັນປຸ້ນຊັບ ແລະ ທຳຮ້າຍຮ່າງກາຍຜູ້ອື່ນ ຈຳນວນຫລາຍເຖິງ 10 ຄັ້ງ 1 ຄົນ ແລະ ຕ້ອງລົງໂທດດ້ວຍຄະດີລັກຈັກ ແລະ ຄະດີກະທຳຜິດທາງເພດ ຖືກສານຕັດສິນຈັບຄວບຄຸມຕົວ ໃນສະຖານພິນິດ ເປັນໄລຍະເວລາ 6 ເດືອນ – 4 ປີ ແລະ ກຸ່ມຜູ້ທີ່ບໍ່ເຄີຍເຫັນຄວາມຮຸນແຮງໃນຄອບຄົວ ເຊິ່ງມີອາຍລະຫວ່າງ 13 – 17 ປີ ຈົບການສຶກສາລະດັບຊັ້ນປະຖົມສຶກສາປີທີ 5 ຈຳນວນ 1 ຄົນ ມັດທະຍົມສຶກສາປີທີ 3 ຈຳນວນ 2 ຄົນ ຕ້ອງລົງໂທດດ້ວຍຄະດີກະທຳຜິດທາງເພດ 1 ຄົນ ແລະ ຄະດີລັກຊັບ 2 ຄົນ ຖືກສານຕັດສິນຈັບຄວບຄຸມຕົວໃນສະຖານພິນິດ ເປັນໄລຍະເວລາ 1 – 3 ປີ ( ສະຖານພິນິດ ແລະ ຄຸ້ມຄອງເດັກ ແລະ ເຍົາວະຊົນ ອ້າງອີງຈາກ ສະມຸນ ທົບໃຈເຫຼັກ.2003:ອອນໄລ ).

ຈາກງານວິໄຈ ດັ່ງກ່າວລັກສະນະຂອງຄວາມຮຸນແຮງໃນໄວລຸ້ນທີ່ພົບ ເຊັ່ນ ການທະເລາະວິວາດກັບເພື່ອນໃນສະຖາບັນການທະເລະວິວາດນອກສະຖາບັນນັກຮຽນທີ່ເຄີຍມີເລື່ອງທະເລາະວິວາດໝັ້ນໃຈວ່າຈະຫາອາວຸດປືນມາໃຊ້ໄດ້ເມື່ອຕ້ອງການ ສາເຫດຂອງພຶດຕິກຳຄວາມຮຸນແຮງພົບວ່າມາຈາກປັດໄຈດ້ານສ່ວນຕົວ ຄື ການຂາດການຄວບຄຸມອາລົມ ຕ້ອງການສ້າງຈຸດເດັ່ນໃຫ້ເປັນທີ່ຍອມຮັບຂອງບຸກຄົນອື່ນ ປັດໄຈພາຍນອກຄື ບໍ່ເຊື່ອຟັງພໍ່ແມ່ ຂາດຄວາມອົບອຸ່ນໃນຄອບຄົວ ຕ້ອງການແກ້ແຄ້ນແທນເພື່ອນ ແລະ ໄດ້ຮັບອິດທິພົນຈາກສື່ຕ່າງໆ ນອກຈາກນີ້ເດັກທີ່ຖືກທຳຮ້າຍຮ່າງກາຍ ຫລື ພົບເຫັນຄວາມຮຸນແຮງໃນຄອບຄົວສົ່ງຜົນຕໍ່ພຶດຕິກຳໃນໄລຍະຍາວ ຕ້ອງກາຍເປັນອາດຊະຍາກອນ ເດັກຕ້ອງໂທດໃນຄະດີຕ່າງໆ ເຊັ່ນ ຄະດີລັກຊັບ, ຢາເສບຕິດ, ທຳຮ້າຍຮ່າງກາຍຜູ້ອື່ນ.

ສະເຕລາເກ ແລະ ສເຕີຣມ (StrausGelles ;& Steinmetz. 1980. Behind Closed Door: Violence in the America Family.p. ອ້າງອີງຈາກ ວິນພົນ ໃຫຍ່ອະລຸນ, 1999 ) ໄດ້ສຶກສາເຖິງຄວາມຮຸນແຮງໃນຄອບຄົວຈຳນວນ 2,143 ຄອບຄົວ ປະເພດຂອງຄວາມຮຸນແຮງໃນຄອຄົວທີ່ສຶກສາຄືການຂົ່ມເຫັງເມຍ (Wife abuse) ການຂົ່ມເຫັງຜົວ (Husband abuse) ການຂົ່ມເຫັງລູກການຂົ່ມເຫັງລະຫວ່າງພີ່ນ້ອງ (Sibling abuse) ປັດໄຈທີ່ນຳມາສຶກສາຄືເຊື້ອຊາດ, ສາດສະໜາ, ອາຍຸ, ລາຍໄດ້, ລະດັບການສຶກສາ, ອາຊີບ, ຈຳນວນລູກ, ຄວາມຄຽດ, ອຳນາດການຕັດສິນໃຈຂອງຄູ່ສົມລົດ ຜົນການສຶກສາ

ພົບວ່າ ໃນກໍລະນີການຂົ່ມເຫັງເມຍຕົວແປທີ່ມີຄວາມສໍາພັນຄື ອາຍຸ, ລະດັບການສຶກສາ, ລາຍໄດ້ ແລະ ຈໍານວນລູກ.

ອໍເທີ, ເບນ ແລະ ຄິວຣອດ (Authur , Brende ;& Quiroz. 2003 ) ໄດ້ສຶກສາເຫດການ ແລະ ອັດຕາຄວາມຮຸນແຮງທັງທາງດ້ານຮ່າງກາຍ ແລະ ຈິດໃຈທີ່ມີຕໍ່ບຸກຄະລາກອນທາງດ້ານສຸກຂະພາບຈິດໃນລັດຈໍເຈຍ ເຊິ່ງປະກອບດ້ວຍນັກສັງຄົມສົງເຄາະ, ເຈົ້າໜ້າທີ່ອະນາໄມຄອບຄົວຜູ້ໃຫ້ຄໍາປຶກສາແນະແນວ ຈິດຕະແພດ ນັກຈິດຕະວິທະຍາ ຈໍານວນ 1,131 ຄົນ ເຊິ່ງໄດ້ຮັບຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ຈິດໃຈຈາກຜູ້ເຮັດທີ່ເປັນຄົນໄຂ້ທີ່ມາຮັບການຮັກສາໃນສະຖາບັນສຸກຂະພາບຈິດຈໍານວນ 14,120 ຄົນ ພົບວ່າ ມີ 61 % ຂອງບຸກຄະລາກອນທາງດ້ານສຸກຂະພາບຈິດໄດ້ຮັບການກະທໍາຄວາມຮຸນແຮງທາດ້ານຮ່າງກາຍ ແລະ ຈິດໃຈ ແລະ ມີ 29 % ໄດ້ຮັບຄວາມອາດຍ້ານລະຫວ່າງການປະຕິບັດງານ ເຊິ່ງສອດຄອງກັບການສຶກສາອື່ນໆ ທີ່ພົບວ່າ 6 ໃນ 10 ຂອງບຸກຄະລາກອນເຄີຍໄດ້ຮັບຄວາມຮຸນແຮງລະຫວ່າງປະຕິບັດງານໃນອາຊີບ.

ຈອນສັນ ແລະ ເຟີຣາໂຣ (Johnson ;& Ferraro. 2000) ໄດ້ເວົ້າເຖິງແນວທາງສໍາຄັນຂອງການສຶກສາວິໄຈດ້ານຄວາມຮຸນແຮງໃນຄອບຄົວໃນຊ່ວງປີ ຄ.ສ. 1990 ວ່າງານວິໄຈທີ່ຜ່ານມາມີລັກສະນະທີ່ສໍາຄັນ 2 ປະການຄື: ປະການທໍາອິດຄວາມສໍາຄັນຂອງການຈໍາແຍກຄວາມແຕກຕ່າງໆຂອງຊະນິດຄວາມຮຸນແຮງ ເຮັດໃຫ້ເຂົ້າໃຈເຖິງແນວຄິດທິດສະດີ ແລະ ການປະຕິບັດຕາມທໍາມະຊາດຂອງບັນຫາຄວາມຮຸນແຮງຕໍ່ຜູ້ຍິງໃນຊີວິດຄູ່ ແລະ ປະການທີສອງຄວາມເຂົ້າໃຈກ່ຽວກັບບັນຫາການຄວບຄຸມຂອງຜູ້ຊາຍທີ່ມັກໃຊ້ອໍານາດຄວບຄຸມຜູ້ຍິງ ເນື່ອງຈາກທັດສະນະຄະຕິທີ່ຜູ້ຊາຍໃນທຸກສັງຄົມ ເປັນສົມບັດສ່ວນຕົວມີສິດທິທີ່ຈະຈັດການຄວບຄຸມຢ່າງໃດກໍໄດ້ຕາມຕ້ອງການ ງານວິໄຈດເຫຼົ່ານີ້ເປັນພື້ນຖານຂອງແນວຄິດເພດຍິງນິຍົມ(Feminism)

ຈາກງານວິໄຈ ດັ່ງກ່າວພົບວ່າສາເຫດຂອງຄວາມຮຸນແຮງໃນຄອບຄົວເນື່ອງມາຈາກການຂົ່ມເຫັງລູກ,ການຂົ່ມເຫັງລະຫວ່າງພີ່ນ້ອງກອນ, ຂົ່ມເຫັງລະຫວ່າງຜົວ ແລະ ເມຍ ເກີດຈາກອາຍຸ, ລະດັບການສຶກສາ, ລາຍໄດ້ ແລະ ຈໍານວນລູກຫຼາຍ ນອກຈາກນີ້ການສຶກສາຊະນິດຂອງຄວາມຮຸນແຮງເຮັດໃຫ້ເຂົ້າໃຈເຖິງທໍາມະຊາດຂອງຄວາມຮຸນແຮງທີ່ມີຕໍ່ຜູ້ຍິງໃນຊີວິດສົມລົດ ແລະ ການທໍາຄວາມເຂົ້າໃຈກ່ຽວກັບບັນຫາການຄວບຄມຸຜູ້ຍິງຂອງຜົວມີສິດທີ່ຈະຄວບຄຸມ ແນວໃດກໍໄດ້ຕາມຄວາມຕ້ອງການເນື່ອງຈາກຊາຍໃນທຸກສັງຄົມມີທັດສະນະກຄະຕິທີ່ມັກຈະເບິ່ງວ່າຜູ້ຍິງເປັນສົມບັດສ່ວນຕົວ.

## 3. ເອກະສານທີ່ກ່ຽວກັບການສຶກສາລາຍກໍລະນີ

### 3.1. ເອກະສານທີ່ກ່ຽວຂ້ອງກັບການສຶກສາລາຍກໍລະນີ

#### 3.1.1 ຄວາມໝາຍຂອງການສຶກສາລາຍກໍລະນີ

ການສຶກສາລາຍກໍລະນີເປັນວິທີການໜຶ່ງຂອງການວິໄຈເຊີງບັນລະຍາຍນັກວິຊາການໄດ້ໃຫ້ຄວາມໝາຍຂອງການສຶກສາລາຍກໍລະນີໄວ້ດັ່ງນີ້:

**ອຳນວຍ ແສງສະວ່າງ (2001)** ໃຫ້ຄວາມຫມາຍຂອງການສຶກສາລາຍກໍລະນີຄື ການສຶກສາສະເພາະກໍລະນີສະພາບການທີ່ເປັນບັນຫາຂອງອົງການທີ່ເກີດຂຶ້ນໃນອະດີດ ແລະ ປັດຈຸບັນໂດຍຜ່ານຂະບວນການທາງວິທະຍາສາດ ມີການຈັດເກັບລາຍລະອຽດຂໍ້ມູນຂ່າວສານນິເທດທີ່ສຳຄັນ ແລະ ມີສ່ວນກ່ຽວຂ້ອງສຳພັນກັບບັນຫາຂອງອົງການ ການວິເຄາະຂໍ້ມູນ, ສະຫລຸບຂໍ້ມູນ, ສະເໜີແນວທາງເລືອກໃນການແກ້ບັນຫາ ແລະ ສະເໜີຂໍ້ສະເໜີແນະທີ່ເປັນປະໂຫຍດຕໍ່ການບໍລິຫານວຽກຂອງອົງການໂດຍຈະຕ້ອງຄຳນຶງເຖິງບັນຫາ ການດຳເນີນວຽກທີ່ເປັນລະບົບຜົນກະທົບຕໍ່ສ່ວນລວມຫລາຍກວ່າຜົນປະໂຫຍດຂອງບຸກຄະລາກອນ ຫຼື ກຸ່ມບຸກຄະລາກອນ ເພື່ອນຳຜົນທີ່ໄດ້ຈາກການສຶກສາມາປະຍຸກໃຊ້ແກ້ບັນຫາການບໍລິຫານວຽກຂອງອົງການຢ່າງມີປະສິດທິພາບ ແລະ ປະສິດທິຜົນລິສູງສຸດ.

ອົງອາດ ໃນພັດທະນະ (2003) ກ່າວວ່າ ຄວາມຫມາຍການສຶກສາລາຍກໍລະນີ ໝາຍເຖິງ ການຄົ້ນຄວ້າຫາຄວາມຮູ້, ຄວາມຈິງຢ່າງລະອຽດລຶງເລິກກ່ຽວກັບປາກົດການບາງຢ່າງທີ່ໜ້າສົນໃຈ ເຊິ່ງເກີດຂຶ້ນໃນລະບົບທີ່ມີຂອບເຂດສະເພາະເຈາະຈົ່ງ (Specific context or bounded system) ປາກົດການທີ່ສົນໃຈສຶກສາອາດເປັນບຸກຄົນ, ເປັນກຸ່ມບຸກຄົນ, ໂຄງກອນ, ເຫດການຊຸມຊົນ ຫລື ອົງການສະເພາະແບບໃດແບບໜຶ່ງ ຫຼື ຫຼາຍແບບກໍໄດ້ ນັກວິໄຈເລືອກມາເຮັດການສຶກສາວິໄຈເປັນລາຍກໍລະນີບໍ່ໄດ້ມີຄວາມຫມາຍຈຳ ກັດຢູ່ ພຽງການບັນທຶກ ແລະ ການລວບລວມຂໍ້ມູນກ່ຽວກັບປະຫວັດບຸກຄົນ (Case record or case history) ສຳລັບນຳໄປໃຊ້ດ້ານການໃຫ້ບໍລິການການຮັກສາພະຍາບານການແນະແນວ ແລະ ການໃຫ້ຄຳປຶກສາ ຫຼື ການສືບສວນຂອງຕຳຫຼວດເທົ່ານັ້ນ ແຕ່ຍັງມີຄວາມຫມາຍຄອບຄຸມເຖິງການນຳຂໍ້ມູນທີ່ກ່ຽວຂ້ອງກັບ ບັນຫາການວິໄຈທີ່ຕ້ອງການສືບສວນຫາຄວາມຮູ້, ຄວາມຈິງຈາກລາຍກໍລະນີນັ້ນມາເຮັດການວິເຄາະ ແລະ ຕີຄວາມຫມາຍແບບລະອຽດ ໂດຍມີເປົ້າໝາຍໜັກເພື່ອຕ້ອງການສຶກສາ ຫລື ຮຽນຮູ້ກໍລະນີທີ່ສົນໃຈເປັນການສະເພາະ ແລະ ເພື່ອເຂົ້າໃຈປາກົດການດັ່ງກ່າວຈະແຈ້ງ.

ນິພາ ສີໄພໂລດ (2004:ອອນໄລ ) ກ່າວວ່າ ການສຶກສາລາຍກໍລະນີໝາຍເຖິງ ການສຶກສາທີ່ມຸ້ງສຶກສາບັນຫາກໍລະນີສະເພາະເລື່ອງເພື່ອທີ່ຈະໃຫ້ໄດ້ຄວາມຮູ້ທີ່ເລິກຊຶ້ງ ໂດຍຕົວຢ່າງທີ່ສຶກສານັ້ນເປັນພຽງຫນ່ວຍດຽວຂອງປະຊາກອນ ເຊັ່ນ ອາດເປັນບຸກຄົນດຽວ, ສະຖາບັນດຽວ, ຫນ່ວຍງານດຽວ ຫລື ຄອບຄົວດຽວ ເປັນຕົ້ນ ການວິໄຈປະເພດນີ້ມຸ້ງທີ່ຈະພິຈາລະນາທຳນາຍສາເຫດຂອງກໍລະນີ ຫຼື ບັນຫາ, ປາກົດການໃຫ້ຊັດເຈນໂດຍວິເຄາະເຫດ ແລະ ຜົນຂອງກໍລະນີພາຍໃນຂອບເຂດຂອງສັງຄົມ ແລະ ສິ່ງແວດລ້ອມທີ່ກໍລະນີນັ້ນເກີດຂຶ້ນໂດຍການສຶກສາຈາກຂໍ້ມູນຕ່າງໆ ເຊັ່ນ ຈົດຫມາຍສ່ວນຕົວບັນທຶກຕ່າງໆຂໍ້ມູນທີ່ໄດ້ຮັບຈາກ ບຸກຄະລາກອນອື່ນທີ່ກ່ຽວຂ້ອງຂໍ້ມູນຈາກສະຖານທີ່ເຮັດວຽກເປັນຕົ້ນຂໍ້ມູນທີ່ໄດ້ຮັບອາດເປັນຂໍ້ມູນໃນອດີດ ຫຼື ປັດຈຸບັນ ເມື່ອຜູ້ວິໄຈໄດ້ຂໍ້ຄວາມຈິງແລ້ວກໍໃຊ້ແນວທາງໃນການສະເໜີແນະການປ້ອງກັນການແກ້ໄຂບັນຫາຕ່າງໆໄດ້.

ລັກຂະນາ ສີລະວັດ (2005) ກ່າວວ່າ ການສຶກສາລາຍກໍລະນີ ໝາຍເຖິງ ຂະບວນການຂອງການສຶກສາລາຍລະອຽດຕ່າງໆກ່ຽວກັບບຸກຄົນແບບຕໍ່ເນື່ອງໂດຍສຶກສາປະຫັວດຄວາມເປັນມາ ແລະ ການ

ດຳລົງຊີວິດຄວາມເປັນຢູ່ໃນປັດຈຸບັນເພື່ອລວບລວມເປັນຂໍ້ມູນ ແລະ ນຳໄປວິເຄາະສາເຫດທີ່ເຮັດໃຫ້ບຸກຄົນມີພຶດຕິກຳແບບນັ້ນ ຫຼື ພຶດຕິກາທີ່ເປັນມາຈາກສາເຫດຫຍັງ, ລວມເຖິງການແປລຄວາມຫມາຍຂອງພຶດຕິກຳດັ່ງກ່າວ ມີຄວາມສຳພັນກັບການປັບຕົວທີ່ດີ ຫລື ລັກສະນະຂອງການປັບຕົວທີ່ເປັນບັນຫາຂອງບຸກຄົນນັ້ນແນວໃດ ການສະໜັບສະໜູນ ຫຼື ການໃຫ້ຄວາມຊ່ວຍເຫຼືອໄດ້ຢ່າງເໝາະສົມ ແລະ ມີປະສິດທິພາບ.

**ນັດທະພົມ ອິນທຸເປດ ( 2007: ອອນໄລ)** ການສຶກສາລາຍກໍລະນີ ໝາຍເຖິງ ການສຶກສາຂໍ້ມູນໂດຍລະອຽດຂອງລາຍບຸກຄົນໂດຍໃຊ້ວິທີການຫຼາກຫຼາຍແບບຕັ້ງແຕ່ການສັງເກດ, ສຳພາດ ແລະ ການໃຊ້ແບບສອບຖາມທາງຈິດຕະວິທະຍາເປັນຕົ້ນ ເພື່ອລວບລວມຂໍ້ມູນກ່ຽວກັບຄວາມຄິດຄວາມຝັນ, ປະສົບການ, ຄວາມຫວັງ ຫຼື ອື່ນໆ ທີ່ຈະເຮັດໃຫ້ມີຄວາມເຂົ້າໃຈໃນພຶດຕິກຳ ເຂົ້າໃຈໃນບັນຫາຂອງບຸກຄົນຜູ້ນັ້ນໄດ້ດີ ແລະ ເຮັດໃຫ້ເຫັນແນວທາງກັບການວິໄຈເພື່ອຫາຂໍ້ມູນໃໝ່ໆໄດ້.

ຈາກຄວາມໝາຍຂອງການສຶກສາລາຍກໍລະນີທີ່ກ່າວມາຂ້າງເທິງ ສະຫຼຸບໄດ້ວ່າ ການສຶກສາລາຍກໍລະນີ ໝາຍເຖິງ ຂະບວນການຂອງການສຶກສາລາຍລະອຽດຕ່າງໆກ່ຽວກັບບຸກຄົນແບບຕໍ່ເນື່ອງໂດຍສຶກສາປະຫວັດສ່ວນຕົວ ແລະ ການດຳລົງຊີວິດຄວາມເປັນຢູ່ໃນປັດຈຸບັນເພື່ອລວບລວມເປັນຂໍ້ມູນ ແລະ ນຳໄປວິເຄາະສາເຫດທີ່ເຮັດໃຫ້ເກີດພຶດຕິກຳຂອງບຸກຄົນ.

### 3.1.2 ຈຸດມຸ້ງໝາຍຂອງການສຶກສາລາຍກໍລະນີ

**ລັກຂະນາ ສີລະວັດ (2005) ສະຫລຸບຈຸດມຸ້ງໝາຍການສຶກສາລາຍກໍລະນີໄວ້ດັ່ງນີ້:**

1) ເພື່ອສຶກສາຮູບແບບການພັດທະນາການຂອງບຸກຄົນທາງດ້ານຮ່າງກາຍ, ສະຕິປັນຍາ, ອາລົມ ແລະ ສັງຄົມອັນຈະເປັນປະໂຫຍດໃນການພັດທະນາສິ່ງເສີມສະໜັບສະໜູນ ຫລື ໃຫ້ຄວາມຊ່ວຍເຫຼືອ ແລະ ແກ້ໄຂໄດ້ຖືກຕ້ອງເໝາະສົມ.

2) ເພື່ອຄົ້ນຄວ້າຫາສາເຫດທີ່ເຮັດໃຫ້ບຸກຄົນມີພຶດຕິກຳຜິດປົກກະຕິ ແລະ ຈະໄດ້ແນວທາງໃຫ້ການຊ່ວຍເຫຼືອແກ້ໄຂໄດ້ຖືກຕ້ອງເໝາະສົມ ແລະ ໄດ້ຜົນ.

3) ເພື່ອໃຫ້ບຸກຄົນເກີດຄວາມເຂົ້າໃຈຕົນເອງຍອມຮັບຄວາມເປັນຈິງກ່ຽວກັບຕົນເອງເພື່ອນຳໄປສູ່ການມີຄວາມສາມາດພັດທະນາຕົນເອງໄດ້ສາມາດວາງແຜນຊີວິດ ແລະ ເລືອກແນວທາງການສຶກສາຕໍ່ ແລະ ເລືອກອາຊີບທີ່ເໝາະສົມກັບຕົນເອງໄດ້ຈົນເຮັດໃຫ້ມີການດຳເນີນຊີວິດໄດ້ຢ່າງມີປະສິດທິພາບ ແລະ ມີຄວາມສຸກ.

4) ເພື່ອຊ່ວຍໃຫ້ບຸກຄົນທີ່ກ່ຽວຂ້ອງໄດ້ມີແນວທາງໃນການຈັດກິດຈະກຳຢ່າງຖືກຕ້ອງເໝາະສົມກັບບຸກຄະລິກລັກສະນະຂອງເຂົາເຈົ້າ ເຊິ່ງເປັນແນວທາງໜຶ່ງໃນການໃຫ້ຄວາມຊ່ວຍເຫຼືອໄດ້ອຢ່າງມີປະສິດທິພາບ.

ຈາກແນວຄິດຂ້າງເທິງສະຫຼຸບໄດ້ວ່າ ການສຶກສາລາຍກໍລະນີມີຈຸດມຸ້ງໝາຍເພື່ອໃຫ້ຜູ້ສຶກສາເຂົ້າໃຈເຖິງສາເຫດການເກີດພຶດຕິກຳຂອງຜູ້ຮັບການສຶກສາໄດ້ຢ່າງຖືກຕ້ອງ ຈາກການສຶກສາໃນລາຍລະອຽດຕ່າງໆທີ່ກ່ຽວຂ້ອງກັບຜູ້ຮັບການສຶກສາເຮັດໃຫ້ຜູ້ສຶກສາ ແລະ ຜູ້ທີ່ກ່ຽວຂ້ອງກັບຜູ້ຮັບການສຶກສາລວມເຖິງຜູ້ຮັບການສຶກສາໄດ້ມີຄວາມເຂົ້າໃຈໃນພຶດຕິກຳ ແລະ ທຳການປັບພຶດຕິກຳປ້ອງກັນແກ້ໄຂ ຫຼືສົ່ງເສີມພຶດຕິກຳໃຫ້ເປັນໄປຕາມແນວທາງທີ່ຖືກຕ້ອງເໝາະສົມຕໍ່ຕົນເອງ ແລະ ສັງຄົມທີ່ກ່ຽວຂ້ອງ.

**3.1.3 ວິທີການທີ່ໃຊ້ໃນການສຶກສາຍກໍລະນີ**

ວິທີການສຶກສາຂອງການສຶກສາລາຍກໍລະນີໃຫ້ບັນລຸເປົ້າໝາຍ ແລະ ເກີດປະໂຫຍດທັງຜູ້ສຶກສາ ແລະ ຜູ້ຖືກສຶກສານັ້ນຈະຕ້ອງໃຊ້ວິທີຄວບຄູ່ກັນໄປ 2 ວິທີດັ່ງນີ້: **( ພົນຈັນທອນ ຈຽນອະດິດສັກດິ້ .1993 )**

1) ການສຶກສາປະຫວັດລາຍກໍລະນີ (Case history) ຄື ການລວບລວມຂໍ້ມູນຕັ້ງແຕ່ອະດີດຈົນເຖິງປັດຈຸບັນຂອງຜູ້ຖືກສຶກສາເຂົ້ານຳກັນຕາມລຳດັບເຫດການເພື່ອນຳລາຍລະອຽດ ແລະ ຂໍ້ມູນເຫຼົ່ານັ້ນມາປະມວນຜົນເປັນຂັ້ນຕອນຕໍ່ຈາກນັ້ນ ຈຶ່ງນຳຂໍ້ມູນທີ່ໄດ້ມາວິເຄາະພິຈາລະນາ ແລະວາງແນວທາງການຊ່ວຍເຫຼືອ.

2) ການປະຊຸມລາຍກໍລະນີ (Case conference) ຄື ການປະຊຸມຮ່ວມກັນລະຫວ່າງຜູ້ຊ່ຽວຊານສາຂາຕ່າງໆທີ່ກ່ຽວຂ້ອງກັບຜູ້ເຮັດການສຶກສາໂດຍພິຈາລະນາສຶກສາຫາຂໍ້ມູນຄວາມຈິງຈາກລາຍລະອຽດຂອງຂໍ້ມູນທີ່ຜູ້ເຮັດການສຶກສາລາຍກໍລະນີນຳມາລາຍງານເພື່ອນຳມາຕີຄວາມວິເຄາະ ແລະ ຮ່ວມກັນ ພິຈາລະນາຫາແນວທາງຊ່ວຍເຫຼືອປ້ອງກັນ ແລະ ສົ່ງເສີມ.

ສະຫຼຸບຈາກຂໍ້ມູນຂ້າງເທິງໄດ້ວ່າ ວິທີການທີ່ໃຊ້ໃນການສຶກສາລາຍກໍລະນີໃຊ້ວິທີຄວບຄູ່ກັນໄປ 2 ວິທີ ຄື: ການສຶກສາປະຫວັດລາຍກໍລະນີການລວບລວມຂໍ້ມູນຕັ້ງແຕ່ອະດີດຈົນເຖິງປະຈຸບັນຂອງຜູ້ຖືກສຶກສາ ເພື່ອນຳລາຍລະອຽດ ແລະ ຂໍ້ມູນເຫຼົ່ານັ້ນໄດ້ມາວິເຄາະ ພິຈາລະນາ ແລະ ວາງແນວທາງການຊ່ວຍເຫຼືອ ແລະ ການປະຊຸມລາຍກໍລະນີ ເພື່ອນຳມາຕີຄວາມວິເຄາະ ແລະ ຮ່ວມກັນພິຈາລະນາຫາແນວທາງຊ່ວຍເຫຼືອ.

**3.1.4 ຂະບວນການສຶກສາລາຍກໍລະນີ**

ຂະບວນການສຶກສາລາຍກໍລະນີແບ່ງເປັນ 3 ຂັ້ນຕອນ ກົມລັດຕະນະ ຫຼ້າສຸວົງ (1984) ດັ່ງນີ້:

**ຂັ້ນທີ 1 ກຳໜົດບັນຫາ**

ກຳນົດບັນຫາ ໝາຍເຖິງການທີ່ຜູ້ສຶກສາລາຍກໍລະນີຕັ້ງຈຸດມຸ້ງໝາຍ ຫລື ກຳນົດວ່າຈະສຶກສາສິ່ງໃດໃນບຸກຄົນໜຶ່ງ ເຊິ່ງອາດເປັນບັນຫາ ຫລື ບໍ່ແມ່ນບັນຫາແຕ່ເປັນຄວາມສົນໃຈຄວາມສາມາດພິເສດ ຫລືອື່ນໆ.

**ຂັ້ນທີ 2 ການລວບລວມຂໍ້ມູນ ແລະ ວິເຄາະຂໍ້ມູນ**

ການລວບລວມຂໍ້ມູນຄື ການຫາຂໍ້ມູນຄວາມຈິງ ຫຼັງຈາກທີມີການກຳນົດບັນຫາ ແລະ ຕັ້ງສົມມຸດຕິຖານແລ້ວໂດຍໃຊ້ເຄື່ອງມືໃນການແນະແນວເກັບລວບລວມຂໍ້ມູນຜູ້ທີ່ສົນໃຈຈະສຶກສາໂດຍລວບລວມຈາກແຫຼ່ງຕ່າງໆ ເຊັ່ນ ການສຳພາດ ການທົດສອບທາງຈິດຕະວິທະຍາແຜນຜັງສັງຄົມມິຕິເປັນຕົ້ນ.

ການວິເຄາະຂໍ້ມູນ ຄື ການຕີຄວາມ ຫຼື ແປຄວາມໝາຍຂອງຂໍ້ມູນທີ່ໄດ້ຈາກການລວບລວມປະຊຸມປຶກສາດ້ວຍການເຊີນບຸກຄົນທີ່ກ່ຽວຂ້ອງກັບຜູ້ທີ່ເຮົາສຶກສາມາຮ່ວມພິຈາລະນາ ແລະ ສຶກສາຂໍ້ມູນຄວາມຈິງທີ່ໄດ້ຈາກການລວບລວມຂໍ້ມູນ.

ການເກັບຂໍ້ມູນໂດຍການສຳພາດປະເພດມີໂຄງສ້າງຄື ລາຍລະອຽດໃນການສົນທະນາມັກຈະເປັນເລື່ອງສ່ວນຕົວຂອງບຸກຄົນໃດບຸກຄົນໜຶ່ງ ເຊິ່ງຄວນຕ້ອງເກັບເປັນຄວາມລັບ ດັ່ງນັ້ນ, ໃນການສົນທະນານີ້ຈຶ່ງຈຳເປັນຕ້ອງອາໄສທັກສະ ແລະ ສຳພັນລະຫວ່າງບຸກຄົນເປັນຢ່າງຫລາຍການສຳພາດທີ 1 ການ ສາພາດເພື່ອຄົ້ນຄວ້າຫາ ຫຼື ຮູ້ຄວາມຈິງ (Fact finding interview) ເປັນການສຳພັນາດທີ່ຜູ້ສຳພາດສົນທະນາ ຫຼື ຊັກຖາມຂໍ້ຄວາມຈິງຕ່າງໆກ່ຽວກັບຜັດສຳພາດໃນດ້ານຄວາມຄິດເຫັນຄວາມຮູ້ສຶກ, ຄວາມສົນໃຈເຈດຈະຄະຕິ, ຄ່ານິຍົມກ່ຽວກັບຕົນເອງ ແລະ ສິ່ງແວດລ້ອມທັງນີ້ເພື່ອເປັນການຫາຂໍ້ມູນຄວາມຈິງ ຫຼື ຂໍ້ມູນເພີ່ມເຕີມຈາກ ທີ່ມີຢູ່ແລ້ວທັງຫມົດທັງເປັນການກວດສອບວ່າຂໍ້ມູນທີ່ມີຢູ່ກົງກັບຄວາມຈິງ ຫຼື ບໍ່.

**ຂະບວນການສຳພາດມີ 3 ຂັ້ນຕອນດັ່ງນີ້ ( ພະນົມ ລິ້ມອາລີ 1995 )**

- ກ່ອນສຳພາດຂະບວນການນີ້ມີອົງປະກອບ 3 ປະການດັ່ງນີ້:

1) ການກຽມບຸກຄົນເປັນການກຽມທັງຜູ້ສຳພາດ ແລະ ຜູ້ຖືກສຳພາດໃຫ້ມີຄວາມພ້ອມທັງສອງຝ່າຍຈະຕ້ອງມີການກຳໜົດມື້, ເວລາສະຖານທີ່ໃນການສຳພາດ ແລະ ອາດຕ້ອງບອກຈຸດມຸ້ງໝາຍທີ່ຕັ້ງໄວ້.

2) ການກຽມຈຸດມຸ້ງໝາຍ ແລະ ຫົວຂໍ້ໃນການສຳພາດ ແລະ ອາດມີການບັນທຶກຫົວຂໍ້ກ່ອນການສຳພາດ ແລະ ມີການບັນທຶກໃນຂະນະສຳພາດອີກດ້ວຍແຕຖ້າເປັນການສຳພາດທີ່ບໍ່ບອກຈຸດມຸ້ງໝາຍທີ່ແທ້ຈິງບໍ່ຄວນບັນທຶກຫົວຂໍ້ທີ່ຈະສຳພາດ.

3) ການກຽມສະຖານທີ່ ເຊິ່ງຈະຕ້ອງມີລັກສະນະສະດວກສະບາຍ ແລະ ຄວນເປັນທີ່ມິດບໍ່ມີສຽງລົບກວນ ຈະຊ່ວຍໃຫ້ໄດ້ຂໍ້ມູນຄວາມຈິງຫຼາຍຂຶ້ນ.

- ຂະນະສຳພາດໃຊ້ເຕັກນິກທົ່ວໄປ 4 ປະການດັ່ງນີ້:

1) ການສັງເກດໂດຍໃຊ້ອະໄວອະຮັບສຳຜັດທັງ 5 ຄື: ຕາ, ຫູ, ດັງ, ລີ້ນ ແລະ ການຜິວໜັງ.

2) ການຟັງເປັນເຕັກນິກທີ່ດີທີ່ສຸດໃນການແນະແນວ ແລະ ການໃຫ້ຄຳປຶກສາ.

3) ການໃຊ້ຄຳຖາມຜູ້ສຳພາດອາດຈະຕ້ອງຖາມຜູ້ຖືກສຳພາດໃນສິ່ງທີ່ບໍ່ຈະແຈ້ງໂດຍໃຊ້ຄຳຖາມທີ່ມີລັກສະນະເປັນມິດ ຜູ້ຖືກສຳພາດຟັງແລ້ວເຂົ້າໃຈວ່າຜູ້ສຳພາດມີຄວາມຕັ້ງໃຈທີ່ຈະຊ່ວຍເຫຼືອຢ່າງແທ້ຈິງ.

4) ການເບິ່ງທີ່ດີນັ້ນຈະຕ້ອງສະແດງການຍອມຮັບເຈດຕະຄະຕິ ແລະ ຄວາມຮູ້ສຶກຂອງຜູ້ຖືກສຳພາດໃຊ້ພາສາ ແລະ ຖ້ອຍຄຳເໝາະສົມ ແລະ ຈະຕ້ອງພະຍາຍາມໃຫ້ການສຳພາດນັ້ນເປັນໄປຕາມຈຸດໝາຍທີ່ໄດ້ກຳນົດໄວ້ດ້ວຍ ນອກຈາກນີ້ຍັງມີເຕັກນິກສະເພາະທີ່ສຳພາດຄວນໄດ້ຮັບການຝຶກຝົນເປັນຢ່າງດີ ເຕັກນິກເຫຼົ່ານີ້ຈະຊ່ວຍໃຫ້ການສຳພາດມີປະສິດທິພາບຫລາຍຂຶ້ນເຕັກນິກພື້ນຖານມີດັ່ງນີ້:

- ການສ້າງສາຍສຳພັນ (Rapport)
- ການສະແດງຄວາມເຫັນໃຈ (Empathy)
- ການເຮັດໃຫ້ເກີດຄວາມໝັ້ນໃຈ (Assurance)
- ການສະແດງຄວາມເຫັນ (Approval)
- ການເຮັດໃຫ້ເກີດຄວາມຈະແຈ້ງ (Clarification)
- ການສະທ້ອນຄວາມຮູ້ສຶກ (Reflection of felling)
- ການໃຊ້ຄວາມງຽບສະຫງົບ (Silence technique)

- ການຢຸດຕິການສຳພາດ ການຢຸດຕິການສຳພາດເປັນສິ່ງສຳຄັນ ເຊິ່ງຜູ້ສຳພາດຄວນຢຸດຕິການສຳພາດໃຫ້ໄດ້ຜົນໃນທາງບວກເຮັດໃຫ້ຜູ້ສຳພາດຈາກໄປດ້ວຍຄວາມເພິ່ງພໍໃຈ ແລະ ຢາກກັບມາສຳພາດອີກດັ່ງນີ້:

ການຢຸດຕິການສຳພາດຈຶ່ງຕ້ອງພະຍາຍາມໃຫ້ເປັນທຳມະຊາດຫລາຍທີ່ສຸດເພື່ອທີ່ຈະເປັນຜົນດີຕໍ່ການສຳພາດຄັ້ງຕໍ່ໆໄປຈຶ່ງຄວນປະຕິບັດດັ່ງນີ້:

1) ຄວນໃຫ້ຜູ້ຖືກສຳພາດມີຄວາມເຂົ້າໃຈເປັນຢ່າງດີວ່າສິ່ງທີ່ເຂົາເຈົ້າເວົ້າໄປນັ້ນຈະເປັນຜົນດີແກ່ເຂົາເຈົ້າ ແລະ ໝັ້ນໃຈວ່າຈະໄດ້ຮັບການຮັກສາເປັນຄວາມລັບ.

2) ຜູ້ສຳພາດຈະຕັ້ງຄຳຖາມໃຫ້ຜູ້ສຳພາດໄດ້ນຳໄປຄິດກ່ອນຢຸດຕິການສຳພາດເພື່ອຈະໄດ້ເປັນເລື່ອງຕໍ່ເນື່ອງ ໃນການສຳພາດຄັ້ງຕໍ່ໄປ.

3) ຜູ້ສຳພາດຈະຕ້ອງໃຊ້ຄຳເວົ້າ ແລະ ທ່າທີທີ່ເໝາະສົມມີຄວາມຈິງໃຈຕໍ່ຜູ້ສຳພາດສະແດງໃຫ້ເຫັນວ່າຕ້ອງການສຳພາດໃນຄັ້ງຕໍ່ໄປອີກ.

4) ມີການນັດວັນ, ເວລາ, ສະຖານທີ່ໃນການສຳພາດຄັ້ງຕໍ່ໄປ.

5) ເມື່ອຢຸດຕິການສຳພາດແລ້ວຜູ້ສຳພາດຈະຕ້ອງບັນທຶກຜົນການສຳມັພາດລົງໃນແບບຟອມບັນທຶກການສຳພາດທັນທີ ທັງນີ້ເພື່ອປ້ອງກັນຂໍ້ມູນຜິດພລາດ.

**ຂັ້ນທີ 3 ການສະຫຼຸບຜົນ ແລະ ຂໍ້ສະເໜີແນະ**

ການສະຫຼຸບຜົນ ແລະ ຂໍ້ສະເໜີແນະສາມາດເຮັດໄດ້ທັງໃນຂະນະທີ່ເຮັດການສຶກສາ ແລະ ຫຼັງຈາກ ສຶກສາລາຍກໍລະນີແລ້ວໂດຍທົ່ວໄປມັກຈະເຮັດຄວບຄູ່ກັນໄປເພື່ອປະສິດທິພາບຂອງການສຶກສາລາຍກໍລະນີ  ແລະ ກ່ອນປິດການສຶກສາລາຍກໍລະນີເປັນຄັ້ງສຸດທ້າຍຄວນສະຫຼຸບຜົນການສຶກສາໄວ້ທັງໝົດ ແລະ ໃຫ້ຂໍ້ສະ ເໜີແນະໄວ້ສໍາລັບຜູ້ທີ່ຈະມາສຶກສາບຸກຄົນນີ້ ຫຼື ຜູ້ສົນໃຈຕໍ່ໄປ **( ກົມລັດ ຫຼ້າສຸວົງ 1984)**

**ຈາກຂໍ້ຄວາມຂ້າງເທິງສະຫລຸບໄດ້ວ່າຂະບວນການສຶກສາໃນຄັ້ງນີ້ແບ່ງເປັນ 3 ຂັ້ນຄື: 1**

1) ກໍານົດບັນຫາ ໝາຍເຖິງ ການທີ່ຜູ້ສຶກສາລາຍກໍລະນີຕັ້ງຈຸດມຸ້ງໝາຍ ຫຼື ກໍານົດວ່າຈະສຶກສາສິ່ງໃດໃນບຸກຄົນໜຶ່ງ ເຊິ່ງອາດເປັນບັນຫາ ຫຼື ບໍ່ແມ່ນບັນຫາແຕ່ເປັນຄວາມສົນໃຈ.

2) ການລວບລວມຂໍ້ມູນຄືການຫາຂໍ້ມູນຄວາມຈິງຫຼັງຈາກທີ່ມີການກໍານົດບັນຫາ ແລະ ຕັ້ງສົມມຸດຕິຖານແລ້ວໂດຍໃຊ້ເຄື່ອງມືໃນການແນະແນວເກັບລວບລວມຂໍ້ມູນຜູ້ທີ່ສົນໃຈຈະສຶກສາໂດຍລວບລວມຈາກແຫຼ່ງຕ່າງໆ ເຊັ່ນ ການສໍາພາດ, ການທົດສອບທາງຈິດຕະວິທະຍາ.

3) ການສະຫຼຸບຜົນ ແລະ ຂໍ້ສະເໜີແນະສາມາດເຮັດໄດ້ທັງໃນຂະນະທີ່ເຮັດການສຶກສາ ແລະ ຫຼັງຈາກສຶກສາລາຍກໍລະນີແລ້ວໂດຍທົ່ວໄປມັກຈະເຮັດຄວບຄູ່ກັນໄປເພື່ອປະສິດທິພາບຂອງການສຶກສາ.

# ບົດທີ 3

# ວິທີດຳເນີນການວິໄຈ

## ໃນການວິໄຈຄັ້ງນີ້ ຜູ້ວິໄຈໄດ້ດຳເນີນການຕາມຂັ້ນຕອນດັ່ງນີ້:

1. ແຫຼ່ງຂໍ້ມູນທີ່ໃຊ້ໃນການວິໄຈ
2. ເຄື່ອງມືທີ່ໃຊ້ໃນການວິໄຈ
3. ການສ້າງເຄື່ອງມືໃນການວິໄຈ
4. ການເກັບລວບລວມຂໍ້ມູນ
5. ການວິເຄາະຂໍ້ມູນ

## 1. ແຫຼ່ງຂໍ້ມູນທີ່ໃຊ້ໃນການວິໄຈ

ແຫຼ່ງຂໍ້ມູນທີ່ໃຊ້ໃນການສຶກສາຄັ້ງນີ້ເປັນນັກຮຽນໄວລຸ້ນທີ່ກຳລັງສຶກສາໃນລະດັບຊັ້ນມັດທະຍົມສຶກສາມີອາຍຸຕັ້ງແຕ່ 14-18 ປີ ພາກຮຽນທີ 2 ສົກຮຽນ 2018-2019 ຂອງໂຮງຮຽນມັດທະຍົມສາທິດໃນວິທະຍາໄລຄູສາລະວັນ ຈຳນວນ 10 ຄົນໂດຍວິທີການສຸ່ມແບບເຈາະຈົງ (Purposive sampling) ໂດຍອາຈານຝ່າຍແນະນຳໃຫ້ສຶກສານັກຮຽນທັງ 10 ຄົນຍິງ 2 ຄົນທີ່ມີພຶດຕິກຳຄວາມຮຸນແຮງມີເກນການຄັດເລືອກດັ່ງນີ້:

1) ລັກສະນະຂອງພຶດຕິກຳຄວາມຮຸນແຮງທີ່ສະແດງອອກທາງກາຍໄດ້ແກ່: ການໃຊ້ຕີນເຕະ ຫຼື ຖີບ, ການໃຊ້ກຳປັ້ນຕ່ອຍ, ການໃຊ້ຝ່າມືຕົບຕີ ຫລື ດຶງ, ການໃຊ້ອາວຸດ ຫຼື ສິ່ງຂອງທຳຮ້າຍຮ່າງກາຍເປັນເຫດໃຫ້ຜູ້ອື່ນໄດ້ຮັບບາດເຈັບ.

2) ລັກສະນະຂອງພຶດຕິກຳຄວາມຮຸນແຮງທີ່ສະແດງອອກທາງວາຈາໄດ້ແກ່: ເວົ້າເຢາະເຢີ້ຍ, ເວົ້າຈາດູໝິ່ນຄົນຕົນອື່ນ, ໃຊ້ຄຳເວົ້າທີ່ມີລັກສະນະມຸ່ງຮ້າຍໃຫ້ຄົນອື່ນໄດ້ຮັບຜົນກະທົບທາງດ້ານຈິດໃຈ, ໃຊ້ຄຳເວົ້າຂົ່ມຂູ່ຄຸກຄາມໃຫ້ຄົນອື່ນຮູ້ສຶກຫວາດຢ້ານກົວ ແລະ ມີຄວາມຮູ້ສຶກບໍ່ປອດໄພ.

## 2. ເຄື່ອງມືທີ່ໃຊ້ໃນການສຶກສາງານວິໄຈ

ເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ໄດ້ແກ່:

1. ແບບສອບຖາມໄດ້ແກ່: ແບບສອບຖາມຂໍ້ມູນສ່ວນບຸກຄົນ

2. ແບບສຳພາດໄດ້ແກ່: ແບບສຳພາດຂໍ້ມູນດ້ານບຸກຄົນ, ແບບສຳພາດຂໍ້ມູນດ້ານຄອບຄົວ,

ແບບ

ສຳພາດຂໍ້ມູນດ້ານອິດທິພົນທາງສັງຄົມ.

3. ແບບສັງເກດ

4. ການຢ້ຽມຢາມເຮືອນ

5. ລະບຽບສະສົມ

6. ບັນທຶກປະຈໍາວັນ

## 3. ການສ້າງເຄື່ອງມືໃນການວິໄຈ

**ແບບສອບຖາມໄດ້ແກ່ແບບສອບຖາມຂໍ້ມູນສ່ວນບຸຄົນ.**

ຜູ້ວິໄຈໄດ້ສ້າງແບບສອບຖາມເພື່ອຫາຂໍ້ມູນກ່ຽວກັບປະຫວັດສ່ວນຕົວແລ້ວນໍາໄປໃຫ້ກຸ່ມຕົວຢ່າງຕອບແບບສອບຖາມໃຫ້ຄົບທຸກຂໍ້ ເພື່ອເປັນປະໂຫຍດໃນການວິເຄາະຂໍ້ມູນ

ຜູ້ວິໄຈໄດ້ສ້າງແບບສໍາພາດເພື່ອຖາມຕອບກ່ຽວກັບຂໍ້ມູນ ແລະ ປັດໄຈຕ່າງໆທີ່ສົ່ງຜົນໃຫ້ເກີດພຶດຕິກໍາຄວາມຮຸນແຮງຂອງໄວລຸ້ນ ສໍາພາດໃຫ້ໄດ້ຫຼາຍຄໍາຖາມເພື່ອເປັນປະໂຫຍດໃນການວິເຄາະຂໍ້ມູນ

ຜູ້ວິໄຈໄດ້ສຶກສາການສ້າງເຄື່ອງມື ແລະ ເກັບລວບລວມຂໍ້ມູນຕາມວິທີຂອງການສຶກສາເປັນລາຍກໍລະນີດັ່ງນີ້:

### 1. ການກຽມ ແລະ ສ້າງຄໍາຖາມໃນການສໍາພາດ ແລະ ກວດສອບ

### 1.1 ກ່ອນລົງມືເກັບຂໍ້ມູນສໍາພາດ

ຜູ້ວິໄຈສ້າງຫົວຂໍ້ ແລະ ແນວຄໍາຖາມຕ່າງໆໃຫ້ຊັດເຈນວ່າຈະຖາມກ່ຽວກັບຫຍັງ ແລະ ເລື່ອງຫຍັງ ທີ່ກ່ຽວຂ້ອງກັບເນື້ອໃນຂອງການວິໄຈແນວທາງ ແລະ ຄໍາຖາມໄດ້ແກ່ເລື່ອງຫຍັງ ທີ່ກ່ຽວຂ້ອງກັບເນື້ອໃນຂອງການວິໄຈທີ່ຕ້ອງການຈະຮູ້ໃຫ້ເລິກຊຶ່ງເລືອກຫົວຂໍ້ທີ່ຈະສໍາພາດຫົວຂໍ້ທີ່ຈະສໍາພາດໃນກຄັ້ງໜຶ່ງໆ ຄວນຈໍາກັດໃຫ້ພໍເໝາະກັບເວລາບໍ່ຖາມຫຼາຍໆເລື່ອງໃນການສໍາພາດຄັ້ງດຽວເວລາໃນການສໍາພາດທີ່ພໍເໝາະຄືເວລາປະມານ 30-45 ນາທີ.

### 1.2 ການສ້າງຄໍາຖາມແຕ່ລະຂໍ້

1.2.2 ເລືອກສັບໃຫ້ເໝາະສົມກັບຄວາມຮູ້ອາຊີບ, ໄວອາຍຸ, ອາລົມ, ຂອງຜູ້ໃຫ້ສໍາພາດ

1.2.2 ໃຊ້ຄໍາຖາມເປີດ ເຊັ່ນ ແນວໃດບໍ່ໃຊ້ຄໍາຖາມທີ່ແນະໃຫ້ຕອບ ເຊັ່ນ: ແມ່ນ ຫຼື ບໍ່ແມ່ນ.

1.2.3 ຕ້ອງກຽມຄໍາຖາມຫຼາຍໆຄໍາຖາມສໍາລັບຄໍາຕອບໃນເລື່ອງດຽວກັນເມື່ອຜູ້ຕອບບໍ່ເຂົ້າໃຈຄໍາຖາມທໍາອິດກໍຈະໄດ້ໃຊ້ຄໍາຖາມຕໍ່ໄປທັນທີ.

### 1.3 ຜູ້ວິໄຈນໍາຫົວຂໍ້ແນວທາງໃນການສໍາພາດໄປຫາຄວາມຖືກຕ້ອງຂອງເນື້ອໃນ

ເນື້ອໃນໃຫ້ສອດຄອງກັບບັນຫາຂອງການວິໄຈໂດຍໃຫ້ຜູ້ຊ່ຽວຊານຈໍານວນ 3 ທ່ານກວດສອບຄວາມຖືກູຕ້ອງເໝາະສົມແລ້ວຈຶ່ງນໍາໄປໃຊ້ກັບກຸ່ມຕົວຢ່າງຕໍ່ໄປ.




**1.4 ການຫາຄຸນນະພາບເຄື່ອງໃນການວິໄຈ**

ໃນການວິໄຈຄັ້ງນີ້ຜູ້ວິໄຈນຳແບບສຳພາດທີ່ສ້າງຂຶ້ນເອງ ແລະ ແບບສຳພາດທີ່ໄດ້ປັບປຸງຈາກການດັດແປງມາຈາກຜູ້ອື່ນ ໄປຫາຄຸນນະພາບເຄື່ອງມືທີ່ມີຂັ້ນຕອນລຳດັບດັ່ງນີ້:

**ຄວາມຍາກງ່າຍ ( Difficulty )**

ຄ່າ P ທີ່ໃຊ້ໄດ້ເທົ່າກັບ 0,20 ຂຶ້ນໄປ, ຄ່າ P ທີ່ເໝາະສົມແມ່ນເທົ່າກັບ 0,50

$$P = \frac{R}{N}$$

$$P = \frac{10}{45}$$

P= 0,22

P= ຄວາມຍາກງ່າຍຂອງແບບສໍາພາດ

R= ຈໍານວນນັກຮຽນກຸ່ມຕົວຢ່າງ

N= ຈໍານວນປະຊາກອນທັງໝົດ

## 4. ການເກັບລວບລວມຂໍ້ມູນ

ເທັກນິກໃນການລວບລວມຂໍມູນມີ 6 ເທັກນິກດັ່ງຕໍ່ໄປນີ້:

**1. ແບບສອບຖາມ** ໄດ້ແກ່ແບບສອບຖາມຂໍ້ມູນສ່ວນບຸກຄົນຜູ້ໃຈໄດ້ສ້າງແບບສອບຖາມເພື່ອຫາຂໍ້ມູນກ່ຽວກັບປະຫວັດສ່ວນຕົວແລ້ວນໍາໄປໃຫ້ກຸ່ມຕົວຢ່າງຕອບແບບສອບຖາມໃຫ້ຄົບທຸກຂໍ້ຄໍາຖາມເພື່ອເປັນປະໂຫຍດໃນການວິເຄາະຂໍ້ມູນ.

**2. ແບບສໍາພາດ** ໄດ້ແກ່ແບບສໍາພາດຂໍ້ມູນດ້ານບຸກຄົນແບບສໍາພາດຂໍ້ມູນດ້ານຄອບຄົວ, ແບບສໍາພາດຂໍ້ມູນດ້ານອິດທິພົນທາງສັງຄົມ, ເພື່ອຫາຂໍ້ມູນກັບນັກຮຽນ ແລະ ບຸກຄົນທີ່ກ່ຽວຂ້ອງກັບນັກຮຽນໂດຍສໍາພາດ ກັບບຸກຄົນຕໍ່ໄປນີ້

2.1 ນັກຮຽນທີ່ເປັນກຸ່ມຕົວຢ່າງ

2.2 ອາຈານປະຈໍາຫ້ອງອາຈານຝ່າຍປົກຄອງ ອາຈານປະຈໍາວິຊາ

2.3 ເພື່ອນສະນິດໃນຫ້ອງ ແລະ ເພື່ອນພາຍໃນໂຮງຮຽນ

2.4 ຜູ້ປົກຄອງເມື່ອໄປຢ້ຽມຢາມເຮືອນ

**3. ການສັງເກດ** ເພື່ອເກັບຂໍ້ມູນໄວ້ພິຈາລະນາປະກອບຂໍ້ມູນການວິນິໃສເພື່ອໃຫ້ເຂົ້າໃຈພຶດຕິກໍາ ແລະ ຫາແນວທາງການຊ່ວຍເຫຼືອຕໍ່ໄປໂດຍການສັງເກດໃນສະຖານນະການຕ່າງໆທັງທີ່ຢູ່ໃນຫ້ອງຮຽນ ແລະ ນອກຫ້ອງຮຽນ ເຊັ່ນ ໃນຫ້ອງຮຽນການເຮັດກິດຈະກໍາຕ່າງໆ ໃນການສັງເກດແຕ່ລະຄັ້ງໃຊ້ເວລາປະມານ 30 ນາທີໂດຍຫຼັງຈາກການສັງເກດສາມາດບັນທຶກ ແລະ ສະຫຼຸບພຶດຕິກໍາທີ່ສະແດງອອກມາ.

**4. ການເມືອຢ້ຽມຢາມເຮືອນ** ເພື່ອສໍາພາດນລວບລວມຂໍ້ມູນກ່ຽວກັບທາງຄອບຄົວ ແລະ ເປັນການຮ່ວມມືກັບຜູ້ປົກຄອງທີ່ຈະຫາທາງຊ່ວຍເຫຼືອນັກຮຽນ ແລະ ສັງເກດສໍາມັດສະພາບລະຫວ່າງຜູ້ຮັບການສຶກສາກັບຜູ້ປົກຄອງ ແລະ ຮູ້ຂໍ້ມູນດ້ານທັດສະນະຄະຕິຂອງຜູ້ປົກຄອງຕໍ່ຜູ້ຮັບການສຶກສາ.

**5. ລະບຽບສະສົມ** ເພື່ອຫາຂໍ້ມູນຂອງຜູ້ຮັບການສຶກສາຈາກທາງໂຮງຮຽນທີ່ໄດ້ຮຽບຮຽງໄວ້ແລ້ວຜູ້ວິໄຈໄດ້ນໍາຂໍ້ມູນມາຈາກການກະທໍາ ແລະ ຂໍ້ມູນຈາກແຫຼ່ງອື່ນໆມາປະກອບການພິຈາລະນາເຖິງສາເຫດຂອງພຶດຕິກໍາ ຄວາມຮຸນແຮງ

**6. ບັນທຶກປະຈຳວັນ** ຄືການໃຫ້ຜູ້ຮັບການສຶກສາບັນທຶກເລື່ອງລາວຂອງຕົນເອງເປັນການເປີດເຜີຍຄວາມຮູ້ສຶກຂອງຕົນເອງທີ່ມີຕໍ່ເຫດການ ຫຼື ສະພາບສິ່ງແວດລ້ອມອ້ອມຕົວໂດຍຊີ້ແຈ້ງເຖິງເຫດຜົນທີ່ຜູ້ຮັບການສຶກສາຂຽນບັນທຶກປະຈຳວັນຕະຫຼອດໄລຍະເວລາ 1 ອາທິດໂດຍມີຂັ້ນຕອນດັ່ງນີ້:

- ຊື່, ເພດ, ອາຍຸຂອງຜູ້ບັນທຶກ
- ວັນ, ເດືອນ, ປີທີ່ບັນທຶກ
- ກິດຈະກຳທີ່ເຮັດໃນວັນນັ້ນ

ນຳຂໍ້ທີ່ໄດ້ຈາກການບັນທຶກປະຈຳວັນມາວິເຄາະເພື່ອຫາຂໍ້ມູນໃນການດຳເນີນຊີວິດປະຈຳວັນ ແລະ ທັດສະນະຄະຕິຕໍ່ເຫດການນັ້ນໆ

## 5. ການວິເຄາະຂໍ້ມູນ

ເນື່ອງຈາກໃນຄັ້ງນີ້ເປັນການສຶກສາລາຍກໍລະນີ (case study) ໃນລັກສະນະຂອງການວິໄຈ ເຊີ່ງສຳພັນ (Interrelationship studies) ຜູ້ວິໄຈເກັບລວບລວມຂໍ້ມູນດ້ວຍຕົນເອງຢ່າງລະອຽດທຸກຂັ້ນຕອນໂດຍໃຊ້ເຄື່ອງມືຕ່າງໆ ດັ່ງລາຍລະອຽດທີ່ກ່າວໄວ້ໃນຫົວຂໍ້ເລື່ອງເທັກນິກທີ່ໃຊ້ໃນການເກັບລວບລວມຂໍ້ມູນ ຕະຫລອດຈົນການວິເຄາະຂໍ້ມູນ ຈື່ງເປັນການນຳຂໍ້ມູນມາສະຫລຸບເພື່ອຫາຂໍ້ຄວາມຈິງ ດັ່ງນັ້ນການລາຍງານຜົນການວິໄຈຄັ້ງນີ້ເປັນການສັງເຄາະ,ວິເຄາະແປຄວາມຫມາຍ ແລະ ສະຫລຸບຜົນຜູ້ວິໄຈເກັບຂໍ້ມູນໂດຍລະອຽດທຸກຂັ້ນຕອນໂດຍໃຊ້ເຄື່ອງມືຕ່າງໆຈື່ງຂຽນສະຫລຸບເປັນລາຍບຸກຄົນ ແລະ ໂດຍລວມທັງໝົດທັງ 10 ຄົນຍິງ 2 ຄົນ

# ບົດທີ 4
# ຜົນການວິເຄາະຂໍ້ມູນ

ການສຶກສາວິໄຈເລື່ອງພຶດຕິກຳຄວາມຮຸນແຮງຂອງນັກຮຽນໄວລຸ້ນຜູ້ວິໄຈໄດ້ເຮັດການສຶກສາລາຍກໍລະນີ (case study) ເພື່ອຄົ້ນຫາຄວາມຈິງໃນທາງສັງຄົມທີ່ມີຄວາມສຳພັນ ແລະ ເຊື່ອມໂຍງຕໍ່ພຶດຕິກຳຄວາມຮຸນແຮງຂອງນັກຮຽນໄວລຸ້ນທັງປັດໄຈພາຍໃນບຸກຄົນຂອງນັກຮຽນໄວລຸ້ນເອງປັດໄຈດ້ານຄອບຄົວ ແລະ ປັດໄຈດ້ານສັງຄົມ ຜູ້ວິໄຈນຳຂໍ້ມູນທີ່ໄດ້ສຶກສາມາວິເຄາະຫາສາເຫດຂອງການເກີດພຶດຕິກຳຄວາມຮຸນແຮງມີລາຍລະອຽດດັ່ງຕໍ່ໄປນີ້:

## ກໍລະນີສຶກສາຄົນທີ 1 ທ້າວ ບີ (ນາມສົມມຸດ )

ທ້າວ ບີ ໄລຍະເວລາທີ່ສຶກສາຕັ້ງແຕວັນທີ 15 ມີກັນຍາ ປີ 2018 ເຖິງ ວັນທີ 21 ກັນຍາ ປີ 2018.

- **ລັກສະນະທົ່ວໄປ.**

ຈາກການສັງເກດພົບວ່າທ້າວບີເປັນຄົນຮູບຮ່າງຜອມສູງຜິວສີດຳແດງແຕ່ງກາຍສຸພາບຮຽບຮ້ອຍໃນຂະນະໃຫ້ສຳພາດເວົ້າຈາຊັດເຈນສຽງດັງຟັງຊັດ ແລະ ສຸພາບອ່ອນນ້ອມເປັນຄົນອາລົມດີຍິ້ມແຍ້ມແຈ່ມໃສໃນໄລຍະທຳອິດບໍ່ຄ່ອຍໃຫ້ຂໍ້ມູນດ້ານທະເລາະວິວາດບໍ່ຫຼາຍ ແຕ່ເມື່ອໄດ້ພົບກັນເລື້ອຍໆຂຶ້ນທ້າວບີຈຶ່ງເລີ່ມມີ ຄວາມໄວ້ວາງໃຈ ແລະ ໃຫ້ຂໍ້ມູນຢ່າງຕໍ່ເນື່ອງດ້ວຍດີຕະຫຼອດໄລຍະເວລາໃນການສຳພາດ

ຈາກການໃຊ້ເຕັກນິກການລວບລວມຂໍ້ມູນທັງ 6 ເຕັກນິກໄດ້ແກ່ແບບສອບຖາມດ້ານສ່ວນບຸກຄົນ, ແບບສັງເກດ, ການຢ້ຽມຢາມເຮືອນ, ລະບຽບສະສົມ, ບັນທຶກປະຈຳວັນ ແລະ ການສຳພາດດັ່ງ 3 ດ້ານຄື: ດ້ານສ່ວນຕົວ, ດ້ານຄອບຄົວ ແລະ ດ້ານສັງຄົມ ສາມາດສະຫຼຸບ ແລະ ວິເຄາະຂໍ້ມູນໄດ້ດັ່ງນີ້:

## 1. ຂໍ້ມູນຈາກແບບສອບຖາມ

ທ້າວ ບີ ອາຍຸ 15 ປີ ຮຽນຢູ່ຊັ້ນມັດທະຍົມສຶກສາປີທີ 3 ມີພີ່ນ້ອງ 2 ຄົນອາໄສຢູ່ກັບແມ່ ພໍ່ເສຍຊີວິດ.

## 2. ຂໍ້ມູນຈາກແບບສັງເກດ

ການວິໄຈໃນຄັ້ງນີ້ຜູ້ວິໄຈໄດ້ເຮັດການສັງເກດໃນຫ້ອງຮຽນວິຊາພາສາອັງກິດ ວັນທີ 15 ກັນຍາ ປີ 2018 ໃນການສັງເກດໃຊ້ເວລາ 30 ນາທີ ພົບວ່າທ້າວ ບີ ບໍ່ຄ່ອຍສົນໃຈໃນການຮຽນເວົ້າໂສກັນກັບເພື່ອນໃນຂະນະຮຽນບໍ່ຄ່ອຍມີສະມາທິໃນການຮຽນສິ່ງກິດຈະກຳບໍ່ທັນໃນຊົ່ວໂມງຮຽນ ແລະ ໄດ້ເຮັດການສັງເກດນອກຫ້ອງຮຽນ ເວລາ 12.30 - 13.00ໂມງ. ໃນມື້ດຽວກັນ ພົບວ່າທ້າວບີຫຼິ້ນເຕະກະຕໍ້ກັບເພື່ອນໆໃນເດີ່ນໂຮງຮຽນຈົນເຖິງເວລາເຂົ້າຮຽນ.

## 3. ຂໍ້ມູນຈາກການສຳພາດ

### 3.1. ຂໍ້ມູນດ້ານບຸກຄົນ

#### 3.1.1 ປະຫວັດສ່ວນຕົວ

ຈາກການສຳພາດທ້າວ ບີ ເຮັດໃຫ້ຮູ້ວ່າ ທ້າວ ບີ ມີອາຍຸ 15 ປີ ກຳລັງສຶກສາຢູ່ຊັ້ນມັດທະຍົມສຶກສາປີທີ 3 ໃນມັດທະຍົມສາທິດວິທະຍາໄລຄູສາລະວັນ ມີຖິ່ນລຳເນົາເປັນຄົນບ້ານນາໂດນ ເມືອງ ແລະ ແຂວງສາລະວັນ ພັກອາໄສຢູ່ກັບແມ່ ແລະ ອ້າຍ ພໍ່ຂອງທ້າວ ບີ ເສຍຊີວິດຕັ້ງແຕທ້າວບີອາຍຸໄດ້ 3 ປີ ທ້າວບີເລົ່າວ່າ ຕັ້ງແຕ່ພໍ່ເສຍຊີວິດໄປແມ່ຕ້ອງເປັນຄົນຫາລາຍໄດ້ລ້ຽງດູຕົນເອງກັບອ້າຍຈົນຮຽນຈົບສຳເລັດລະດັບປະກາມິຍະບັດວິຊາຊີບຊັ້ນສູງແລ້ວ ຈຶ່ງໄດ້ອອກໄປເຮັດຊ່ວຍແມ່ແບ່ງເບົາພາລະຄ່າໃຊ້ຈ່າຍໃນການຮຽນຂອງຕົນເອງ ທ້າວບີ ມັກຫຼິ້ນກິລາບານເຕະ ແລະ ກະຕໍ້ ເປັນຊີວິດຈິດໃຈທ້າວ ບີ ເລົ່າວ່າຫຼິ້ນບານເຕະກັບເພື່ອນໆຕັ້ງແຕ່ເຊົ້າກ່ອນຂຶ້ນຫ້ອງຮຽນຕອນພັກທ່ຽງກິນເຂົ້າສຳເລັດ ກໍຫຼິ້ນບານເຕະ ຫຼັງເລີກຮຽນກໍຫຼິ້ນບານເຕະຕັ້ງແຕ່ເລີກຮຽນຈົນເຖິງເວລາປະມານ 18.30 ໃນວັນເສົາອາທິດທ້າວ ບີ ກໍຈະຫຼິ້ນບານເຕະກັບເພື່ອນໆໃນຊຸມຊົນໃກ້ກັບທີ່ພັກອາໄສຂອງຕົນ ເຊິ່ງເປັນທີ່ພັກອາໄສຄ່ອນຂ້າງໜາແໜ້ນຢູ່ບໍ່ຫ່າງໄກຈາກໂຮງຮຽນເທົ່າໃດສາມາດຍ່າງໄປໂຮງຮຽນໄດ້ພາຍໃນໄລຍະເວລາ ປະມານ 10 ນາທີ ທ້າວ ບີ ເປັນນັກກິລາບານເຕະຂອງໂຮງຮຽນ ທ້າວ ບີ ເລົ່າວ່າເປັນຫ່ວງຜົນການຮຽນເພາະການຊ້ອມກິລາກໍເຮັດໃຫ້ຕົນເອງນັ້ນມີຜົນການຮຽນທີ່ບໍ່ຄ່ອຍດີປານໃດ ຕອນນີ້ເລີ່ມອ່ານໜັງສືເພື່ອກຽມຕົວສອບເສັງທ້າຍພາກຮຽນ 2

#### 3.1.2 ດ້ານທັດສະນະຄະຕິຕໍ່ພຶດຕິກຳຄວາມຮຸນແຮງ

ຈາກການສຳພາດພົບວ່າ ທ້າວ ບີ ຄິດວ່າການມີພຶດຕິກຳຄວາມຮຸນແຮງເປັນເລື່ອງທຳມະດາຂອງຜູ້ຊາຍບາງເທື່ອຈະມີຕີກັນເປັນບາງຄັ້ງ ເປັນເລື່ອງຂອງການຍອມຮັບໃນກຸ່ມເພື່ອນການຍົກພວກທຳຮ້າຍກັນ ທ້າວ ບີ ມີຄວາມເຊື່ອວ່າເປັນການຊ່ວຍເຫຼືອເພື່ອນ.

#### 3.1.3 ການໃຊ້ເວລາວ່າງ

ຈາກການສຳພາດພົບວ່າ ທ້າວ ບີ ມັກໃຊ້ເວລາວ່າງໄປເຕະບານກັບເພື່ອນໆທີ່ໂຮງຮຽນ ຫຼື ບໍລິເວນດ້ານລຸ່ມຂອງທີ່ພັກອາໄສ ໄປຍ່າງຫຼິ້ນທີ່ສວນອິງແກ້ວກັບເພື່ອນໆໃນກຸ່ມທ້າວ ບີ ເລົ່າວ່າການໄປຍ່າງຫຼິ້ນທີ່ສວນອິງແກ້ວຕ້ອງຄອຍຖ້າລະວັງນັກຮຽນຈາກໂຮງຮຽນທີ່ເປັນຕ່າງຖິ່ນ ຈຶ່ງມັກມາກັບເພື່ອນຫຼາຍໆຄົນ ຖ້າມີເຫດການຄວາມຮຸນແຮງຂຶ້ນ ຈະໄດ້ຊ່ວຍເຫຼືອກັນໄດ້ ແລະ ມັກຫຼິ້ນເກມອອນໄລຣ ທັງໃນຮ້ານເກມ ແລະ ທີ່ມືຖື  ແລະ ຄອມພິວເຕີໃນເຮືອນ ສ່ວນຫລາຍບໍ່ໄດ້ເຮັດກິດຈະກຳຫຍັງກັບສະມາຊິກໃນຄອບຄົວ.

### 3.2. ຂໍ້ມູນດ້ານະຄອບຄົວ

ຈາກການສຳພາດ ທ້າວ ບີ ມີອ້າຍນ້ອງ 2 ຄົນເປັນຜູ້ຊາຍທັງໝົດ ທ້າວ ບີ ເປັນລູກຄົນທີ 2 ທ້າວບີເລົ່າວ່າແມ່ເປັນຄົນເຮັດວຽກຫາລ້ຽງຄອບຄົວເພາະພໍ່ເສຍຊີວິດຕັ້ງແຕ່ ທ້າວ ບີ ອາຍຸໄດ້ພຽງ 3 ປີ ແມ່ເປັນພະ ນັກງານບໍລິສັດ ອອກຈາກເຮືອນຕັ້ງແຕ່ເຊົ້າ ແລະ ກັບເຖິງເຮືອນຕອນປະມານ 18:00. ສ່ວນ

ອ້າຍທີ່ມີອາຍຸຫ່າງກັນ 9 ປີ ເປັນພະນັກງານບໍລິສັດເຮັດວຽກເດິກ ທ້າວ ບີ ເລົ່າວ່າພໍ່ກັບເຂົ້າເຮືອນຕອນແລງອ້າຍກໍຈະອອກໄປເຮັດວຽກ ຈຶ່ງບໍ່ຄ່ອຍໄດ້ພົບກັນ ເມື່ອມີບັນຫາເລື່ອງຜິດໃຈກັນກັບແມ່ກໍຈະຫັນໄປປຶກສາກັບເພື່ອນໆໃນກຸ່ມ ເຊິ່ງບາງຄັ້ງເພື່ອນໆຄົນອື່ນໆກໍຜິດໃຈກັນກັບພໍ່ແມ່ຄືກັນມີຄວາມຮູ້ສຶກສະບາຍໃຈເມື່ອໄດ້ລະບາຍໃຫ້ເພື່ອນຟັງ ບາງຄັ້ງກໍ່ມີເລື່ອງທະເລາະວິວາດທີ່ໂຮງຮຽນ ຄູໂທມາເຊີນແມ່ໄປ ທ້າວ ບີບອກວ່າແມ່ກໍບໍ່ຄ່ອຍເຂົ້າໃຈວ່າໄປມີເລື່ອງຕີກັນໄດ້ແບບໃດເວລາມີບັນຫາ ຈຶ່ງບໍ່ກ້າເລົ່າໃຫ້ແມ່ຟັງ.

## 3.3. ຂໍ້ມູນທາງສັງຄົມ

### 3.3.1 ດ້ານໝູ່ເພື່ອນ

ຈາກການສຳພາດ ທ້າວ ບີ ພົບວ່າ ມີເພື່ອນສະນິດ 9 ຄົນບໍ່ວ່າຈະໄປໃສ ຫຼື ເຮັດຫຍັງກໍຈະເຮັດນຳກັນ ທ້າວ ບີ ຮັກເພື່ອຫຼາຍ ແລະ ຍອມຮັບວ່າຊີວິດໃນຊ່ວງມັດທະຍົມປາຍຂອງຕົນເອງນັ້ນ ເພື່ອນມີສ່ວນສຳຄັນຫຼາຍທີ່ສຸດ ບໍ່ວ່າຈະມີບັນຫາຫຍັງເພື່ອນສາມາດໃຫ້ຄຳປຶກສາໄດ້ທຸກເລື່ອງມີຫຍັງກໍຊ່ວຍເຫຼືອກັນບາງຄັ້ງເພື່ອນໆມີເລື່ອງຕີກັນກໍຕ້ອງເຂົ້າໄປຊ່ວຍເພື່ອນຫຼາຍຄັ້ງ ທ້າວ ບີ ຈຶ່ງຖືກເອີ້ນຕົວເຂົ້າຫ້ອງປົກຄອງ ເວລາວ່າງນອກຈາກຊ້ອມກິລາກັບເພື່ອນໆທີ່ໂຮງຮຽນແລ້ວກໍຈະໄປຍ່າງຫຼິ້ນທີ່ສະຖານທີ່ແຫ່ງໜຶ່ງທ້າວ ບີເລົ່າວ່ານັກຮຽນລຸ້ນນ້ອງກັບເພື່ອນຂອງຕົນເອງຖືກລຸມທຳຮ້າຍຈາກນັກຮຽນຕ່າງໂຮງຮຽນຫຼາຍຄັ້ງກຸ່ມນັ້ນຫຼາຍສິບກວ່າຄົນ ເວລາໄປຍ່າງໃນເດີ່ນອິງແກ້ວ ຈຶ່ງມັກຈະໄປນຳກັນເປັດກຸ່ມ ເຖິງຈະມີຄວາມປອດໄພ.

### 3.3.2 ຈາກການສຳພາດ

ເພື່ອນສະນິດໃນໂຮງຮຽນຂອງ ທ້າວ ບີ 3 ຄົນ ຈາກຈຳນວນເພື່ອນສະນິດທັງໝົດຈຳນວນ 9 ຄົນໃຫ້ການສຳພາດຄົນລະ 30 ນາທີ ພົບວ່າ ທ້າວ ບີເປັນຄົນຮັກເພື່ອນຫຼາຍເວລາເພື່ອນມີບັນຫາເລື່ອງຕີກັນທະເລາະວິວາດ ທ້າວ ບີຈະໃຫ້ຄວາມຊ່ວຍເຫຼືອທຸກຄັ້ງມີຄວາມສະໜິດສະໜົມກັນຫລາຍບໍ່ວ່າຢູ່ທີ່ໂຮງຮຽນ ຫຼື ໄປທ່ຽວຕາມແຫ່ງອື່ນໆ ຈະໄປດ້ວຍກັນສະເໝີເພາະບາງຄັ້ງຈະມີນັກຮຽນຈາກໂຮງຮຽນອື່ນມາຫາເລື່ອງຈຶ່ງຕ້ອງໄປກັນເປັນກຸ່ມ ເວລາມີເລື່ອງຕີກັນກັບໂຮງຮຽນອື່ນຈະໄດ້ຊ່ວຍເຫຼືອກັນໄດ້.

### 3.3.3 ຈາກການສຳພາດອາຈານວິຊາ

ຈາກການສຳພາດຄູປະຈຳວິຊາ ພົບວ່າ ທ້າວ ບີ ເປັນເດັກຄ່ອນຂ້າງມີຜົນການຮຽນຕ່ຳເວລາຢູ່ໃນຫ້ອງຮຽນບໍ່ຄ່ອຍສົນໃຈການຮຽນມັກນັ່ງໂສກັນກັບເພື່ອນ ບາງຄັ້ງກໍໂດດຮຽນ ບໍ່ຄ່ອຍໃຫ້ຄວາມຮ່ວມມືໃນການເຮັດກິດຈະກຳ ບໍ່ມີຄວາມຮັບຜິດຊອບ ບໍ່ຄ່ອຍສົ່ງວຽກບ້ານທີ່ໄດ້ຮັບມອບໝາຍເວົ້າຈາແຂງກະດ້າງກັບເພື່ອນໃນຫ້ອງຮຽນ.

### 3.3.4 ຈາກການສຳພາດຄູປົກຄອງນັກຮຽນ

ພົບວ່າ ທ້າວ ບີ ເປັນຄົນຮັກເພື່ອນຫລາຍຕິດເພື່ອນມີເລື່ອງທະເລາະວິວາດກັບນັກຮຽນໂຮງຮຽນດຽວກັນຫຼາຍຄັ້ງທີ່ບໍລິເວນສະໜາມບານ ແລະ ມີເລື່ອງທະເລາະວິວາດກັບນັກຮຽນຕ່າງສະຖາບັນອື່ນ.

### 3.3.5 ດ້ານສື່

ຈາກການສຳພາດ ທ້າວ ບີເລົ່າວ່າໄດ້ຕິດຕາມຂ່າວນັກຮຽນຕີກັນຈາກໂທລະທັດກໍມີຄວາມຮູ້ສຶກວ່າການໃຊ້ຄວາມຮຸນແຮງເປັນເລື່ອງຂອງສັກສີ ເປັນທີ່ຍອມຮັບຂອງກຸ່ມເພື່ອນ ສ່ວນຕົວທ້າວ ບີນັ້ນຄິດວ່າການຍົກພວກຕີກັນເປັນເລື່ອງຂອງສະຖາບັນອີກດ້ວຍ ແລະ ການທີ່ໄດ້ຮັບຊົມພາບເລື້ອຍໆທ້າວ ບີມີຄວາມຄິດເຫັນວ່າການທຳຮ້າຍກັນຂອງນັກຮຽນບໍ່ໄດ້ເປັນເລື່ອງຮ້າຍແຮງຫຍັງເລີຍ.

### 3.3.6 ດ້ານເກມອອນໄລ

ຈາກການສຳພາດ ທ້າວ ບີ ພົບວ່າເກມທີ່ຫຼິ້ນນັ້ນເປັນເກມກ່ຽວກັບການແຂ່ງຂັນບານເຕະ ແລະ ເກມຕໍ່ສູ້ກັນຫຼິ້ນທຸກມື້ມື້ລະ 2 ຊົ່ວໂມງ ຕັ້ງແຕ່ເວລາປະມານ 18.00 . ເຖິງ ເວລາ 20.00. ທ້າວ ບີ ບອກວ່າຂໍ້ດີຂອງເກມຄືເຮັດໃຫ້ຮູ້ຈັກການວາງແຜນການຫຼິ້ນບານເຕະ ແລະ ໄດ້ຄວາມສາມັກຄີກັບເພື່ອນໆ ແລະ ຊ່ວຍໃຫ້ຄາຍຄຽດໄດ້ດີ.

## 4. ຂໍ້ມູນຈາກການໄປຢ້ຽມເຮືອນ

### 4.1.ຈາກການສຳພາດ ແລະ ການສັງເກດ

ພົບວ່າ ທ້າວ ບີ ອາໄສຢູ່ເຮືອນເປັນອາຄານ ສີ່ຫຼ່ຽມພື້ນທີ່ສູນກາງອາຄານປັບແຕ່ງເປັນສະໜາມນ້ອຍໆເຕະບານ ແລະ ເຕະກະຕໍ້ ຫຼື ທຳກິດຈະກຳອື່ນໆ ນັ່ງຫລິ້ນພົບປະກັບໝູ່ເພື່ອນ ອາຄານມີ 2 ຫ້ອງນອນພາຍໃນຫ້ອງພັກຂອງທ້າວ ບີ ມີຫ້ອງນອນ 2 ຫ້ອງ ຫ້ອງຮັບແຂກອຢູ່ສ່ວນກາງໃຊ້ພື້ນທີ່ດ້ານຫຼັງເປັນຫ້ອງຄົວ ເຄື່ອງໃຊ້ຕ່າງໆຖືກຈັດວາງໄວ້ຢ່າງເປັນລະບຽບສະພາບທົ່ວໄປສະອາດພໍໃຊ້ໄດ້ ທ້າວ ບີບໍ່ຄ່ອຍໄດ້ເວົ້າ ຫຼື ເຮັດກິດຈະກຳກັບອ້າຍເພາະຕອນກາງເວັນເປັນເວລາ ພັກຜ່ອນຂອງອ້າຍເພາະເຮັດວຽກກາຕອນກາງຄືນ

### 4.2. ຈາກການສຳພາດແມ່ຂອງທ້າວ ບີ

ພົບວ່າ ທ້າວ ບີ ບໍ່ຄ່ອຍປຶກສາບັນຫາເລື່ອງສ່ວນຕົວເປັນເດັກຂີ້ດື້ບໍ່ຄ່ອຍເຊື່ອຟັງໃຜຕິດໝູ່ເພື່ອນຫຼາຍ ເຊື່ອໝູ່ເພື່ອນ ເວລາໝູ່ເພື່ອນຊວນອອກໄປທ່ຽວໃນມື້ພັກ ສ່ວນຫລາຍບໍ່ເຄີຍປະຕິເສດໝູ່ເພື່ອນເລີຍ ເມື່ອມີບັນຫາເລື່ອງທະເລາະວິວາດທີ່ໂຮງຮຽນເກີດຂຶ້ນ ຈຶ່ງໄດ້ອົບຮົມລູກວ່າບໍ່ຄວນເຮັດອີກ ແມ່ກັບທ້າວ ບີ ບໍ່ຄ່ອຍມີກິດຈະກຳຮ່ວມກັນເພາະແມ່ຕ້ອງອອກໄປເຮັດວຽກແຕ່ເຊົ້າ ເລີກວຽກກັບເຮືອນປະມານ 18.00 ພັກວຽກສະເພາະວັນອາທິດຕົນເອງຈະເຮັດວຽກເຮືອນ ສ່ວນທ້າວ ບີນັ້ນຈະອອກໄປຫລິ້ນກັບໝູ່ເພື່ອນໆທີ່ແຫ່ງອື່ນໆ

### 4.3. ຈາກການສຳພາດອ້າຍຂອງທ້າວ ບີ

ພົບວ່າບໍ່ຄ່ອຍສະໜິດສະໜົມກັນເທົ່າທີ່ຄວນເພາະຕົນເອງຈະເຮັດວຽກໃນຊ່ວງເວລາກາງຄືນກັບເຮືອນໃນຕອນເຊົ້າເຖິງເຮືອນເວລາປະມານ 05.00 ເຄີຍຜິດກັນໃນບາງຄັ້ງເລື່ອງຢາກໃຫ້ທ້າວ ບີ ຊ່ວຍເຫຼືອວຽກເຮືອນບໍ່ຢາກໃຫ້ອອກໄປທ່ຽວກັບໝູ່ເພື່ອນໃນວັນພັກເສົາ ແລະ ອາທິດ.

ຈາກການໄປຢ້ຽມຢາມເຮືອນຂອງ ທ້າວບີ ພໍສະຫຼຸບໄດ້ວ່າ ສະຖານທີ່ອາໄສຈະຄັບແຄບ, ບໍລິເວນໂດຍອ້ອມຕົວອາຄານບໍ່ຄ່ອຍສະອາດຮຽບຮ້ອຍ ມີຜູ້ພັກອາໄສຄ່ອນຂ້າງໜາແໜ້ນ ພາຍໃນຫ້ອງພັກອາດຈະມີຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສະອາດພໍໃຊ້ໄດ້ ສະມາຊິກໃນຄອບຄົວຄ່ອນຂ້າງຫ່າງເຫີນ.

## 5. ຂໍ້ມູນຈາກຜົດລະບຽບສະສົມ

ຂໍ້ມູນຈາກລະບຽບສະສົມພົບວ່າທ້າວ ບີ ມີຜົນການຮຽນຕ່ຳ, ບໍ່ມີບັນຫາດ້ານສຸກຂະພາບ, ພໍ່ເສຍຊີວິດ ອາໄສຢູ່ກັບແມ່ ແລະ ອ້າຍ ປັດຈຸບັນອາໄສຢູ່ໃນເຮືອນຂອງຕົນເອງ.

## 6. ຂໍ້ມູນຈາກບັນທຶກປະຈຳວັນ

ຈາກການບັນທຶກປະຈຳວັນ ຕະຫຼອດໄລຍະເວລາ 1 ອາທິດພົບວ່າທ້າວ ບີ ມີກິດຈະກຳປະຈຳວັນຄ້າຍຄືກັນ ຄືຕື່ນນອນເວລາ 06.30 ຈາກນັ້ນເຮັດພາລະກິດສ່ວນຕົວແລ້ວເດີນທາງໄປໂຮງຮຽນຕອນເລີກຮຽນຊ້ອມຫຼິ້ນກິລາທີ່ໂຮງຮຽນ ແລະ ໄປຍ່າງຫລິ້ນທີ່ເດີ່ນອີງແກ້ວ, ກັບບ້ານຮັບປະທານອາຫານແລ້ງແລ້ວຫຼິ້ນເກມອອນໄລຣເວລາ 18.00-20.00 ແລ້ວເບິ່ງໂທລະທັດ ເຂົ້ານອນເວລາ 22.00.

ຈາກການບັນທຶກປະຈຳວັນ ສະຫຼຸບໄດ້ວ່າ ທ້າວ ບີ ມັກຫລິ້ນກິລາທີໂຮງຮຽນກັບໝູ່ເພື່ອນໄປຍ່າງຫຼິ້ນທີ່ເດີ່ນສວນອີງແກ້ວບໍ່ມີການທົບທວນບົດຮຽນ ຫຼື ເຮັດວຽກບ້ານໃຊ້ເວລາວ່າງໄປກັບການຫຼິ້ນເກມອ່ອນໄລຣ.

## 7. ຂໍ້ມູນດ້ານພຶດຕິກຳຄວາມຮຸນແຮງ

ຈາກການສຳພາດ ທ້າວ ບີ ເລົ່າເຫດການທີ່ກຽວກັບພຶດຕິກຳຄວາມຮຸນແຮງຂອງຕົນເອງໃນໂຮງຮຽນວ່າຖືກແຊວເລື່ອງຜູ້ຍິງ ແລະ ຜິດໃຈກັນຫຼາຍຄັ້ງກັບນັກຮຽນຫ້ອງອື່ນເຫດເກີດທີ່ສະໜາມບານເຕະໃນຊ່ວງເວລາພັກກາງເວັນຖືກເຂົາເບິ່ງໜ້າຫຼາຍຄັ້ງກໍທົນບໍ່ໄຫວຈຶ່ງຍ່າງເຂົ້າໄປຖາມວ່າມີບັນຫາຫຍັງບໍ່ເທົ່ານັ້ນ ແລ້ວເຂົາກໍຕ່ອຍເຂົ້າທີ່ໜ້າຂອງທ້າວ ບີ ທ້າວ ບີຈຶ່ງຕ່ອຍກັບ ແລະ ໃນຂະນະນັ້ນໝູ່ເພື່ອນຂອງທ້າວ ບີ ກໍເຂົ້າມາຊ່ວຍ ຈາກນັ້ນໝູ່ເພື່ອນຂອງຝ່າຍກົງກັນຂ້າມຈຶ່ງເຂົ້າມາລຸມທຳຮ້າຍກັນທັງສອງຝ່າຍມີຈຳນວນຄົນເທົ່າໆກັນຄືປະມານ ສິບກ່ວາຄົນ.

ຈາກນັ້ນ ທ້າວ ບີ ເລົ່າວ່າອາຈານຝ່າຍປົກຄອງເຂົ້າມາຫ້າມ ແລະ ພາໄປເຂົ້າຫ້ອງປົກຄອງລົງບັນທຶກ ແລະ ຖືກຕີພ້ອມທັງອົບຮົມດ້ານພຶດຕິກຳ ທ້າວ ບີ ບອກວ່າຕົນເອງບໍ່ໄດ້ເປັນຄົນຜິດເພາະອີກຝ່າຍເປັນຄົນເລີ່ມ ກ່ອນແຕ່ເມື່ອມີເລື່ອງກັນແລ້ວອາຈານຈະລົງໂທດຄືກັນໝົດ ແລະ ຕົນເອງນັ້ນບໍ່ມັກໄປຫາເລື່ອງໃຜກ່ອນ ແຕ່ຖ້າມີໃຜມາຫາເລື່ອງຈະບໍ່ຄອນ ທ້າວ ບີ ບອກອີກວ່າເລື່ອງທະເລາະວິວາດຫຼາຍຄັ້ງອາດຈະບໍ່ແມ່ນເລື່ອງຂອງເຮົາມັກມີສາເຫດມາຈາກໝູ່ເພື່ອນ ຖ້າໝູ່ເພື່ອນມີເລື່ອງກໍຕ້ອງເຂົ້າໄປຊ່ວຍ ທ້າວ ບີ ບອກວ່າການເຂົ້າຫ້ອງປົກຄອງກໍເຮັດໃຫ້ກັງວົນເລື່ອງຖືກໄລ່ອອກຈາກໂຮງຮຽນເພາະຖ້າໃຜບໍ່ເຊື່ອຟັງ ແລະ ມີການທະເລາະວິວາດຫຼາຍຄັ້ງອາຈານຈະໃຫ້ຂຽນໃບລາອອກຕອນນີ້ ທ້າວ ບີ ໃກ້ຈະສອບເສັງ

ຄວບລິກລ້ຽງທີ່ຈະໃຊ້ຄວາມຮຸນແຮງທ້າວ ບີ ບອກວ່າພະຍາຍາມຍ່າງໜີໃຫ້ໄກທີ່ສຸດ ຖ້າຫາກມີໃຜທະເລາະວິວາດເພາະ ຍ້ານຈະຖືກລູກຫຼົງໄປນຳຖ້າຖືກອາຈານຈັບໄດ້ແລ້ວມັນສິ່ງຜົນດີຕໍ່ເຂົາເອງ.

- **ການວິເຄາະຂໍ້ມູນ**

ຈາກການໃຊ້ເຕັກນິກການລວບລວມຂໍ້ມູນທັງ 6 ເຕັກນິກໄດ້ແກ່ ແບບສອບຖາມດ້ານສ່ວນບຸກຄົນ, ແບບສັງເກດ, ການຢ້ຽມຢາມເຮືອນ, ລະບຽນບສະສົມ, ບັນທຶກປະຈຳວັນ ແລະ ການສຳພາດທັງ 3 ດ້ານ ຄື ດ້ານສ່ວນຕົວ, ດ້ານຄອບຄົວ ແລະ ດ້ານສັງຄົມ ສາມາດສະຫຼຸບ ແລະ ວິເຄາະຂໍ້ມູນສາເຫດທີ່ເປັນແນວໂນ້ມຂອງການເກີດພຶດຕິກຳຄວາມຮຸນແຮງຂອງ ທ້າວ ບີ ໄດ້ດັ່ງຕໍ່ໄປນີ້:

1. ສາເຫດດ້ານສ່ວນຕົວ

ຈາກການສຳພາດ ແລະ ການສັງເກດເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ ທ້າວ ບີ ມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນເກີດຈາກຕົວຂອງ ທ້າວ ບີເອງຄືມີທັດສະນະຄະຕິກ່ຽວກັບພຶດຕິກຳການໃຊ້ ຄວາມຮຸນແຮງວ່າເປັນທີ່ຍອມຮັບໃນໝູ່ເພື່ອນ ເປັນການໃຫ້ຄວາມຊ່ວຍເຫຼືອໝູ່ເພື່ອນເມື່ອຖືກທຳຮ້າຍ ໃຊ້ເວລາວ່າງໄປກັບການທ່ຽວຫຼິ້ນກັບໝູ່ເພື່ອນໆປະກອບກັບອາລົມຂອງໄວລຸ້ນທີ່ໂມໂຫງ່າຍຂາດຄວາມອົດທົນອົດກັ້ນໃຫ້ຄວາມສຳຄັນກັບໝູ່ເພື່ອນຫລາຍຕ້ອງເຂົ້າໄປຊ່ວຍເຫຼືອເພື່ອນເມື່ອມີເຫດທະເລາະວິວາດກັນ.

2. ສາເຫດດ້ານຄອບຄົວ

ຈາກການສັງເກດການສຳພາດ ແລະ ການຢ້ຽມຢາມເຮືອນເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ ທ້າວ ບີ ມີພຶດຕິກາຄວາມຮຸນແຮງໃນໂຮງຮຽນເກີດຈາກສະພາບທາງຄອບຄົວທີ່ຂາດຄວາມຮັກຄວາມອົບອຸ່ນຈາກພໍ່ທີ່ເສຍໄປຕັ້ງແຕ່ ທ້າວ ບີອາຍຸໄດ້ພຽງ 3 ປີ ແມ່ຈຶ່ງຮັບພາລະທີ່ຕ້ອງເຮັດວຽກຫາເງິນລ້ຽງ ທ້າວ ບີກັບອ້າຍໂດຍລຳພັງເຮັດໃຫ້ບໍ່ມີເວລາເອົາໃຈໃສ່ເທົ່າທີ່ຄວນສຳພັນທີ່ຫ່າງເຫີນເພາະຕ່າງຄົນຕ່າງມີພາລະໜ້າທີ່ຂອງຕົນເອງຄອບຄົວບໍ່ສາມາດໃຫ້ຄວາມຮັກຄວາມອົບອຸ່ນຢ່າງພຽງພໍ.

3. ສາເຫດທາງສັງຄົມ

ຈາກການສຳພາດ ແລະ ການສັງເກດເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ ທ້າວບີມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນເກີດຈາກອິດທິພົນຂອງກຸ່ມໝູ່ເພື່ອນທ້າວບີໃຫ້ຄວາມສຳຄັນກັບໝູ່ເພື່ອນຫຼາຍ ເມື່ອໝູ່ເພື່ອນມີເລື່ອງຜິດກັນ ທ້າວບີ ຕ້ອງເຂົ້າໄປມີສ່ວນຮ່ວມທຸກຄັ້ງ ທ້າວບີໄດ້ຮັບຊົມພາບກ່ຽວກັບນັກຮຽນຕີກັນທາງໂທລະສັບເລື້ອຍໆຈົນເກີດຄວາມຊິນຊາ ແລະ ມີທັດສະນະຄະຕິຕໍ່ພາບທີ່ໄດ້ຮັບຊົມວ່າຄວາມຮຸນແຮງຂອງໄວລຸ້ນເປັນເລື່ອງທຳມະດາ ທ້າວບີໃຊ້ເວລາໃນການຫຼິ້ນເກມອອນໄລຣທີ່ມີເນື້ອໃນກ່ຽວຂ້ອງກັບຄວາມຮຸນແຮງມື້ລະ 2 ຊົ່ວໂມງ ຈຶ່ງເປັນແນວໂນ້ມໃຫ້ ທ້າວ ບີຊຶມຊັບຮັບເອົາພຶດຕິກຳຄວາມຮຸນແຮງນັ້ນໄວ້ພາຍໃນຕົນເອງ ແລະ ຍັງສິ່ງຜົນໃຫ້ໃຫ້ ທ້າວບີກັບສະມາຊິກໃນຄອບຄົວມີຄວາມສຳພັນທີ່ຫ່າງເຫີນ.

- ແນວທາງໃນການຊ່ວຍເຫຼືອ

ຈາກການວິເຄາະແນວໂນ້ມທີ່ເປັນສາເຫດຂອງການເກີດພຶດຕິກຳຄວາມຮຸນແຮງຂອງ ທ້າວບີ ທັງ 3 ດ້ານ ໄດ້ແກ່ ດ້ານຕົນເອງ, ດ້ານຄອບຄົວ ແລະ ດ້ານອິດທິພົນທາງສັງຄົມ ຜູ້ວິໄຈໄດ້ດຳເນີນການຫາແນວທາງ ຊ່ວຍເຫຼືອດັ່ງຕໍ່ໄປນີ້:

1. ການຊ່ວຍເຫຼືອທີ່ໂຮງຮຽນ

1.1 ໃຫ້ຄຳປຶກສາແນະນຳແນວທາງໃຫ້ມີການປັບປ່ຽນພຶດຕິກຳໃຫ້ມີຄວາມເໝາະສົມ ແລະ ມີຄວາມຮັບຜິດຊອບຮູ້ເຖິງຜົນເສຍຂອງພຶດຕິກຳຄວາມຮຸນແຮງຂອງຕົນເອງມີຄວາມຮັບຜິດຊອບໃນຖານະລູກ ແລະການເປັນນັກຮຽນ ໃຫ້ຄວາມໝັ້ນໃຈ ແລະ ໃຫ້ກຳລັງໃຈຕະຫຼອດຈົນເອົາໃຈໃສ່ຢ່າງໃກ້ຊິດກັບທ້າວ ບີ ເພື່ອໃຫ້ມີຄວາມອົບອຸ່ນເຊື່ອໝັ້ນໃນຕົນເອງສາມາດປັບປຸງພຶດຕິກຳໃຫ້ມີຄວາມເໝາະສົມຫຼຸດພຶດຕິກຳຄວາມຮຸນແຮງ.

1.2 ຂໍຄວາມຊ່ວຍເຫຼືອຈາກໝູ່ເພື່ອນໃນຫ້ອງຮຽນໂດຍສະເພາະໝູ່ເພື່ອນສະໜິດຂອງ ທ້າວ ບີ ເມື່ອມີເວລາວ່າງຄວນເຮັດກິດຈະກຳທີ່ສ້າງສັນແທນທີ່ຈະໃຊ້ເວລາສ່ວນໃຫຍ່ໄປກັບການຍ່າງທ່ຽວໃນແຫ່ງອື່ນໆ ຫຼື ຫຼິ້ນເກມອອນໄລຣທີ່ມີເນື້ອຫາຄວາມຮຸນແຮງ.

2. ການຊ່ວຍເຫຼືອຢູ່ເຮືອນມີດັ່ງຕໍ່ໄປນີ້

2.1 ປຶກສາບັນຫາທີ່ເກີດຂຶ້ນກັບຜູ້ປົກຄອງຢູ່ເຮືອນຂອງຜູ້ຮັບການສຶກສາເພື່ອໃຫ້ເຂົ້າໃຈໃນຕົວທ້າວ ບີ ຫຼາຍຂຶ້ນຂໍໃຫ້ແມ່ກັບອ້າຍໃຫ້ຄວາມຮັກຄວາມອົບອຸ່ນ ແລະ ໃຫ້ເວລາກັບ ທ້າວ ບີໃຫ້ຫຼາຍຂຶ້ນ.

- ການທຳນາຍຜົນ

ຈາກການສຶກສາບັນຫາຂອງທ້າວ ບີ ພົບວ່າການມີພຶດຕິກຳຄວາມຮຸນແຮງຂອງທ້າວບີນັ້ນມີແນວທາງ ໃນການຊ່ວຍເຫຼືອໃຫ້ປັບປຸງພຶດຕິກຳທີ່ບໍ່ເໝາະສົມໄດ້ຫາກທ້າວບີໄດ້ຮັບຄວາມຮັກ ແລະ ການເອົາໃຈໃສ່ ໃຫ້ກຳລັງໃຈຈາກຄອບຄົວຫຼາຍຂຶ້ນຕະຫຼອດຈົນສະມາຊິກໃນະຄອບຄົວໃຫ້ຄວາມຮ່ວມມືໃນແນວທາງການຊ່ວຍເຫຼືອເປັນຢ່າງດີ.

- ຂໍ້ສະເໜີແນະ

1. ຂໍ້ສະເໜີແນະສຳລັບຜູ້ຮັບການສຶກສາ

ທ້າວບີຄວນທົບທວນຄືນວ່າພຶດຕິກຳການໃຊ້ຄວາມຮຸນແຮງນັ້ນເປັນພຶດຕິກຳທີ່ບໍ່ເໝາະສົມ ແລະສິ່ງຜົນເສຍຕົນເອງ ແລະ ສະມາຊິກໃນຄອບຄົວ ຄວນຫາເວລາເວົ້າກັບຜູ້ປົກຄອງນຳ ເພື່ອຄວາມໃກ້ຊິດ ແລະ ສ້າງບັນຍາກາດພາຍໃນຄອບຄົວໃຫ້ມີຄວາມອົບອຸ່ນເລືອກທີ່ຈະປະຕິເສດໝູ່ເພື່ອນເວລາໝູ່ເພື່ອນມີເລື່ອງຕີກັນກັບ ຄົນອື່ນເລືອກຄົບໝູ່ເພື່ອນທີ່ດີ ແລະ ມີກິດຈະກຳທີ່ສ້າງສັນຮ່ວມກັນ ແລະ ຂໍໃຫ້ປະຕິບັດຕາມແນວທາງໃນການຊ່ວຍເຫຼືອຢ່າງຈິງຈັງ.

2. ຂໍ້ສະເໜີແນະສໍາລັບຜູ້ທີ່ກ່ຽວຂ້ອງມີດັ່ງຕໍ່ໄປນີ້

2.1 ສະມາຊິກໃນຄອບຄົວຄວນໃຫ້ກໍາລັງໃຈໃນສິ່ງທີ່ທ້າວບີເຮັດໄດ້ດີ ເຊັ່ນ ການຫຼິ້ນກິລາເພື່ອໃຫ້ທ້າວ ບີ ເກີດຄວາມພາກພູມໃຈໃນຕົນເອງໃຫ້ກໍາລັງໃຈເມື່ອປັບປຸງພຶດຕິກໍາໃຫ້ດີກຂຶ້ນ ເພື່ອສ້າງຄວາມໝັ້ນໃຈໃນຕົນເອງໃຫ້ຄໍາປຶກສາກັບລູກເມືອມີບັນຫາ.

2.2 ອາຈານປະຈໍາຫ້ອງແນະແນວ ແລະ ອາຈານປະຈໍາວິຊາ ຄວນໃຫ້ຄວາມສົນໃຈ ແລະ ດູແລຢ່າງຕໍ່ເນື່ອງ ແລະ ເຂົ້າໃຈຍອມຮັບຄວາມແຕກຕ່າງລະຫວ່າງບຸກຄົນຄວນໃຫ້ຄວາມຮັກກັບເດັກແບບຈິງໃຈ ເພື່ອໃຫ້ເກີດຄວາມໄວ້ວາງໃຈ ເຊື່ອໃຈບໍ່ຢ້ານຄູ ກ້າທີ່ຈະປຶກສາເລື່ອງພຶດຕິກໍາຄວາມຮຸນແຮງຊຶມເຊີຍ ແລະ ໃຫ້ກໍາລັງໃຈເມືອທ້າວບີສາມາດປັບປຸງພຶດຕິກໍາຂອງຕົນເອງໃຫ້ດີຂຶ້ນ.

2.3 ໝູ່ເພື່ອນຂອງທ້າວບີຄວນຄິດວ່າການຍົກພວກລຸມທໍາຮ້າຍກັນເປັນພຶດຕິກໍາທີບໍ່ເໝາະສົມ ແລະ ທົບທວນເຖິງຜົນເສຍທີ່ຈະຕາມມາ ແລະ ໃຫ້ກໍາລັງໃຈກັນ ແລະ ກັນທີ່ຈະຫຼຸດພຶດຕິກໍາການທະເລາະວິວາດ ເຮັດກິດຈະກໍາທີ່ສ້າງສັນເມື່ອມີເວລາວ່າງ.

## ກໍລະນີສຶກສາຄົນທີ 2 ທ້າວ ນິດ ( ນາມສົມມຸດ )

ທ້າວ ນິດ ໄລຍະເວລາທີ່ສຶກສາຕັ້ງແຕ່ວັນທີ 23 ກັນຍາ 2018 ເຖິງ ວັນທີ 29 ກັນຍາ 2018.

- **ລັກສະນະທົ່ວໄປ**

ຈາກການສັງເກດພົບວ່າ ທ້າວ ນິດ ເປັນຄົນຮູບຮ່າງຜອມຕົວນ້ອຍຜິວຂາວແຕ່ງຕົວສະອາດຮຽບຮ້ອຍ ໃນຂະນະໃຫ້ສໍາພາດເວົ້າຈາສຸພາບແຕ່ສຽງຄ່ອນຂ້າງເບົາ ແຕ່ມີຄວາມຊັດເຈນໃນການຕອບທຸກຄັ້ງ ໃນໄລຍະທໍາອິດບໍ່ຄ່ອຍໃຫ້ຂໍ້ມູນດ້ານທະເລາະວິວາດຫຼາຍ ແຕ່ເມື່ອໄດ້ພົບກັນເລື້ອຍໆຂຶ້ນທ້າວ ນິດ ຈຶ່ງເລີ່ມມີຄວາມໄວ້ວາງໃຈ ແລະ ໃຫ້ຂໍ້ມູນຢ່າງຕໍ່ເນື່ອງດ້ວຍດີຕະຫຼອດໄລຍະເວລາໃນການສໍາພາດ.

ຈາກການໃຊ້ເຕັກນິກການລວບລວມຂໍ້ມູນທັງ 6 ເຕັກນິກ ໄດ້ແກ່ ແບບສອບຖາມດ້ານສ່ວນບຸກຄົນ, ແບບສັງເກດ, ການຢ້ຽມຢາມບ້ານ, ລະບຽບສະສົມ, ບັນທຶກປະຈໍາວັນ ແລະ ການສໍາພາດດັ່ງ 3 ດ້ານຄື ດ້ານສ່ວນຕົວ, ດ້ານະຄອບຄົວ ແລະ ດ້ານສັງຄົມສາມາດສະຫລຸບ ແລະ ວິເຄາະຂໍ້ມູນໄດ້ດັ່ງນີ້:

## 1. ຂໍ້ມູນຈາກແບບສອບຖາມ

ທ້າວ ນິດ ອາຍຸ 14 ປີ ສຶກສາຢູ່ຊັ້ນມັດທະຍົມສຶກສາປີທີ 2 ມີອ້າຍນ້ອງ 2 ຄົນ ພັກອາໄສຢູ່ກັບຍາດພີ່ນ້ອງ.

## 2. ຂໍ້ມູນຈາກແບບສັງເກດ

ໃນການວິໄຈໃນຄັ້ງນີ້ຜູ້ວິໄຈໄດ້ເຮັດການສັງເກດໃນຫ້ອງຮຽນວິຊາພາສາອັງກິດວັນທີ 23 ກັນຍາ 2018 ໃນການສັງເກດໃຊ້ເວລາ 30 ນາທີ ພົບວ່າທ້າວ ນິດ ບໍ່ຄ່ອຍສົນໃຈໃນການຮຽນໂສກັນກັບໝູ່

ເພື່ອນໃນຂະນະຮຽນບໍ່ຄ່ອຍມີສະມາທິໃນການຮຽນເວົ້າຈາບໍ່ສຸພາບແຂງກະດ້າງກັບໝູ່ເພື່ອນ ແລະ ໄດ້ເຮັດການສັງເກດ ນອກຫ້ອງຮຽນ ເວລາ 12.30-13.00. ໃນວັນດຽວກັນ ພົບວ່າທ້າວບິດນັ່ງໂສກັນຫຼິ້ນກັບໝູ່ເພື່ອນທີ່ບໍລິເວນໂຕະຫີນໜ້າອາຄານຮຽນ ແລະ ເບິ່ງນັກຮຽນຄົນອື່ນໆຍ່າງຜ່ານໄປມາໃນບໍລິເວນນັ້ນຈົນເຖິງເວລາເຂົ້າຮຽນ.

# 3. ຂໍ້ມູນຈາກການສໍາພາດ

## 3.1. ຂໍ້ມູນດ້ານບຸກຄົນ

### 3.1.1 ປະຫວັດສ່ວນຕົວ

ຈາກການສໍາພາດທ້າວ ບິດ ເຮັດໃຫ້ຮູ້ວ່າ ທ້າວ ບິດມີອາຍຸ 14 ປີ ກໍາລັງສຶກສາຢູ່ຊັ້ນມັດທະຍົມສຶກສາປີທີ 2 ໃນມັດທະຍົມຕົ້ນສາທິດວິທະຍາໄລຄູສາລະວັນ ທ້າວ ບິດເລົ່າວ່າຜົນການຮຽນບໍ່ຄ່ອຍດີເພາະເວລາ ຮຽນບໍ່ມັກຟັງອາຈານສອນ ມັກນັ່ງໂສກັນກັບໝູ່ເພື່ອນບາງຄັ້ງກໍໜີຮຽນໄປຢູ່ເຮືອນໝູ່ເພື່ອນທີ່ຢູ່ໃກ້ກັບ ໂຮງຮຽນ ທ້າວ ບິດເລົ່າວ່າພັກອາໄສຢູ່ກັບຍາດພີ່ນ້ອງໄດ້ແກ່ ຍ່າ, ປ້າ, ລຸງ, ອາ, ອາວ ແລະລູກຊາຍຂອງອາ ອາຍຸ 5 ປີ ແລະ ອ້າຍ ທ້າວ ບິດຈະມັກຜິດກັບລູກຂອງອາເປັນປະຈໍາເພາະຍາດກັນຫຼິ້ນເກມຄອມພິວເຕີແລ້ວອາກໍຈະຮ້າຍດ່າຕົນ ສ່ວນລຸງກັບປ້າແທ້ໆກໍມັກຜິດກັນເປັນປະຈໍາ ທ້າວບິດເລົ່າວ່າຮູ້ສຶກເບື່ອຄົນໃນເຮືອນ ອ້າຍກໍມັກແກ້ງຍ່າງມາຕົບຫົວ ອ້າຍຂອງທ້າວບິດມີເລື່ອງຕີເປັນປະຈໍາຈົນໂຮງຮຽນຍືນຂໍ້ສະເໜີໃຫ້ພັກການຮຽນໄວ້ ກ່ອນໃນຂະນະທີ່ຢູ່ມັດທະຍົມສຶກສາປີທີ 2 ຈົນຜ່ານມາ 1 ປີແລ້ວອ້າຍກໍບໍ່ໄດ້ກັບເຂົ້າໄປຮຽນອີກເລີຍ ບໍ່ໄດ້ເຮັດຫຍັງນອນຢູ່ເຮືອນ ແລະ ມັກອອກໄປທ່ຽວກັບໝູ່ເພື່ອນ ທ້າວບິດກັບພໍ່ແມ່ບໍ່ໄດ້ອາໄສຢູ່ດ້ວຍກັນທ້າວ ບິດ ເລົ່າວ່າ ແມ່ຢູ່ອີກເຮືອນຫຼັງໜຶ່ງ ສ່ວນພໍ່ກໍຢູ່ຄົນລະບ້ານ ພໍ່ເດີນທາງໄປເຮັດວຽກທີ່ຕ່າງແຂວງຄົນເຖິງສາມເດືອນແລ້ວບໍ່ເຄີຍໄດ້ພົບໜ້າ ຫຼື ເວົ້ານໍາກັນເລີຍ ທ້າວບິດຈະໄປພັກຢູ່ກັບແມ່ໃນວັນເສົາ ແລະ ຈົນເຖິງຍາມແລງຂອງວັນອາທິດເພາະ ແມ່ໄປເຊົ່າຫ້ອງພັກໃກ້ກັບບ່ອນເຮັດວຽກແມ່ມີອາຊີບເປັນພະນັກງານບໍລິສັດ ທ້າວ ບິດ ມີທີ່ພັກອາໄສບໍ່ໄກຈາກໂຮງຮຽນຫລາຍປານໃດເດີນທາງໂດຍລົດຖີບໃຊ້ເວລາປະມານ 15 ເຖິງ 20 ນາທີ ເມື່ອທ້າວບິດມາເຖິງໂຮງຮຽນກ່ອນເວລາເຂົ້າແຖວເຄົາລົບທຸງຊາດ ທ້າວບິດຈະໄປລວມກຸ່ມກັບໝູ່ເພື່ອນກ່ອນທີ່ເຮືອນໝູ່ເພື່ອນ ຊຶ່ງເປັນທີ່ຢູ່ພັກອາໄສທີ່ຢູ່ບໍລິເວນໃກ້ຄຽງກັບໂຮງຮຽນ ທ້າວບິດເລົ່າວ່າໝູ່ເພື່ອນຄົນນີ້ລາວທະກະລາອອກຈາກໂຮງຮຽນອາທິດຫຼັງທີ່ແລ້ວ ເພາະມີເລື່ອງຕີກັນໃນໂຮງຮຽນຫຼາຍຄັ້ງ ແຕ່ກໍ່ຍັງຄົບເປັນເພື່ອນທີ່ສະໜິດຄືເກົ່າ ຕົນເອງເຄີຍຊ່ວຍໝູ່ເພື່ອນຄົນນີ້ຕີກັນກັບນັກຮຽນກຸ່ມອື່ນໃນໂຮງຮຽນ ແລະ ບາງຄັ້ງກໍຕາມໄປຊ່ວຍເພື່ອນຄົນນີ້ເວລາເຂົາຊວນໄປມີເລື່ອງຕີກັນກັບໂຮງຮຽນອື່ນ ທ້າວບິດໄປບ້ານເພື່ອນຄົນນີ້ກັບເພື່ອນຄົນອື່ນໆໃນກຸ່ມ 7 ຄົນ ຈາກນັ້ນທຸກຄົນກໍຈະຍ່າງມາໂຮງຮຽນພ້ອມກັນຕອນເລີກຮຽນກ່ອນກັບບ້ານ ທ້າວບິດກັບໝູ່ເພື່ອນກໍຈະໄປລວມຕົວກັນທ່ເຮືອນໝູ່ອີກຄັ້ງເພື່ອໂສກັນວ່າຈະໄປເຮັດຫຍັງກັນກ່ອນກັບບ້ານສ່ວນຫລາຍທ້າວ ບິດ ກັບເພື່ອນກໍຈະໄປຫຼິ້ນເກມອ່ອນໄລຣກັບເມືອເຮືອນເວລາປະມານ 17.00.

**3.1.2 ດ້ານທັດສະນະຄະຕິຕໍ່ພຶດຕິກຳຄວາມຮຸນແຮງ**

ຈາກການສຳພາດພົບວ່າທ້າວ ນິດ ມີທັດສະນະຄະຕິວ່າເລື່ອງພຶດຕິກຳຄວາມຮຸນແຮງຂອງນັກຮຽນເປັນເລື່ອງທຳມະດາເຮັດໃຫ້ເປັນທີ່ຍອມຮັບໃນກຸ່ມເພື່ອນເປັນການຊ່ອຍເຫຼືອໝູ່ເພື່ອນສະແດງເຖິງຄວາມຮັກ ຄວາມສາມັກຄີຕໍ່ກັນ.

**3.1.3 ການໃຊ້ເວລາວ່າງ**

ຈາກການສຳພາດພົບວ່າທ້າວນິດມັກໃຊ້ເວລາວ່າງຍ່າງທຽວໃນຕະຫຼາດນັດກັບໝູ່ເພື່ອນ ແລະຫຼິ້ນເກມອອນໄລ.

**3.2. ຂໍ້ມູນດ້ານະຄອບຄົວ**

ທ້າວ ນິດ ມີອ້າຍນ້ອງຮ່ວມກັນ 2 ຄົນ ອາໄສຢູ່ກັບຍາດ ຄື ຍ່າ, ປ້າ ແລະ ລຸງ ອາກັບອາວ ແລະລູກ ຊາຍຂອງອາອາຍຸ 5 ປີ ທ້າວ ນິດ ເລົ່າວ່າ ອ້າຍຂອງລາວນັ້ນຮຽນບໍ່ຈົບຊັ້ນມັດທະຍົມຕົ້ນທີ່ໂຮງຮຽນອື່ນ ອາຈານໃຫ້ພັກການຮຽນ ແຕ່ອ້າຍບໍ່ຍອມກັບເຂົ້າໄປຮຽນອີກ ຈຶ່ງຕ້ອງຂຽນໃບລາອອກຈາກໂຮງຮຽນເມື່ອ 1 ປີມາແລ້ວ ປ້າກັບລຸງກໍຜິດກັນເປັນປະຈຳ ສ່ວນອາກັບອາວກໍມັກຮ້າຍ ແລະ ດ່າທ້າວນິດເພາະທ້າວນິດກັບລູກຊາຍຂອງອາມັກຍາດກັນຫຼິ້ນເກມຄອມພິວເຕີກັນສະເໝີເຮັດໃຫ້ທ້າວນິດເບື່ອໜ່າຍເຮືອນຫຼາຍທ້າວນິດເລົ່າວ່າມັກໄປຢູ່ກັບແມ່ໃນວັນເສົາ ແລະ ມື້ອາທິດແມ່ຍ້າຍອອກຈາກເຮືອນໄປເຊົ່າເຮືອນຢູ່ໃກ້ກັບບ່ອນເຮັດວຽກແມ່ມີອາຊີບເປັນພະນັກງານບໍລິສັດເອກຊົນແຫ່ງໜຶ່ງ ສ່ວນພໍ່ນັ້ນເຮັດວຽກຢູ່ຕ່າງແຂວງ.

**3.3. ຂໍ້ມູນທາງສັງຄົມ**

**3.3.1 ດ້ານໝູ່ເພື່ອນ**

ຈາກການສຳພາດທ້າວນິດເລົ່າວ່າ ມີເພື່ອນສະໜິດ 7 ຄົນ ໝູ່ເພື່ອນທຸກຄົນຮັກກັນຫລາຍມີຄວາມຈິງໃຈຕໍ່ກັນເວລາມີບັນຫາຫຍັງໝູ່ເພື່ອນກໍຈະຄອຍຖ້າຊ່ອຍເຫລືອກັນທຸກຢ່າງ ເວລາຢູ່ໃນຫ້ອງຮຽນທ້າວນິດເລົ່າວ່າຕົນເອງກັບໝູ່ເພື່ອນຈະເບື່ອໜ່າຍການຮຽນກໍຈະນັ່ງໂສກັນຢູ່ໃນຫ້ອງ ອາຈານບອກໃຫ້ງຽບກໍບໍ່ຄ່ອຍເຊື່ອຟັງບາງຄັ້ງກໍໜີຮຽນເພາະຄວາມເບື່ອໜ່າຍ ບາງຄັ້ງເພື່ອນຈະຊວນໄປມີເລື່ອງທະເລາະວິວາດຕີກັນກັບນັກຮຽນຄົນອື່ນ ຊຶ່ງການຍົກພວກທຳຮ້າຍກັນຂອງນັກຮຽນທັງສອງສະຖາບັນນີ້ທ້າວນິດບອກວ່າມັນເກີດຂຶ້ນເລື້ອຍໆ ສ່ວນຫລາຍກໍແຖວທີ່ພັກອາໄສ ແລະ ບໍລິເວນໜ້າໂຮງຮຽນ ໃນຕອນເຊົ້າກ່ອນເຂົ້າຮຽນ ແລະ ຫຼັງເລີກຮຽນ ທ້າວນິດກັບໝູ່ເພື່ອນຈະໄປລວມກັນທີ່ເຮືອນພັກຂອງເພື່ອນຊຶ່ງເປັນທີ່ພັກໃກ້ກັບໂຮງຮຽນ ແລະ ຈະມັກພາກັນໄປຍ່າງຫຼິ້ນທີ່ຕະຫຼາດນັດ ບາງຄັ້ງກໍໄປຫຼິ້ນເກມທີ່ຮ້ານເກມບໍລິເວນໃກ້ກັບຊຸມຊົນ ເມື່ອທ້າວນິດກັບຮອດເຮືອນກໍຈະຕິດຕໍ່ກັບໝູ່ເພື່ອນຜ່ານທາງການຫຼິ້ນສື່ອອນໄລຣ ແລະ ຈະຫຼິ້ນເກມມື້ລະປະມານ 2 ຊົ່ວໂມງ.

**3.3.2 ຈາກການສຳພາດ**

ຈາກການສຳພາດເພື່ອນສະໜິດທີ່ໂຮງຮຽນຂອງທ້າວ ນິດມີ 3 ຄົນ ຈາກຈຳນວນໝູ່ເພື່ອນສະໜິດທັງໝົດຈຳນວນ 7 ຄົນ ເຮັດການສຳພາດຄົນລະ 30 ນາທີພົບວ່າທ້າວນິດເປັນຄົນຮັກໝູ່ເພື່ອນຫຼາຍ

ເວລາ ໝູ່ເພື່ອນມີບັນຫາເລື່ອງທະເລາະວິວາດຈະໃຫ້ຄວາມຊ່ວຍເຫຼືອໝູ່ເພື່ອນທຸກຄັ້ງ ມີຄວາມສະໜິດສະໜົມກັນຫຼາຍບໍ່ວ່າຢູ່ທີ່ໂຮງຮຽນ ຫຼື ໄປທ່ຽວຕາມຕະຫຼາດນັດຈະໄປນຳກັນຕະຫຼອດເວລາເປັນຄົນທີ່ມີຄວາມຈິງໃຈກັບໝູ່ເພື່ອນ.

**3.3.3 ຈາກການສຳພາດອາຈານປະວິຊາ**

ຈາກການສຳພາດອາຈານປະຈຳວິຊາ ແລະ ອາຈານປະຈຳຫ້ອງ ມ 2 ພົບວ່າທ້າວນິດເປັນເດັກຄ່ອນຂ້າງມີຜົນການຮຽນຕ່ຳ ເວລາຢູ່ໃນຫ້ອງຮຽນບໍ່ຄ່ອຍສົນໃຈການຮຽນມັກນັ່ງໂສກັບໝູ່ເພື່ອນ ບາງຄັ້ງກໍໜີຮຽນບໍ່ຄ່ອຍໃຫ້ຄວາມຮ່ວມມືໃນການເຮັດກິດຈະກຳ ມັກເວົ້າຈາບໍ່ສຸພາບແຂງກະດ້າງກັບໝູ່ເພື່ອນ ມັກຍອກໝູ່ບໍ່ມີຄວາມຮັບຜິດຊອບບໍ່ຄ່ອຍສົ່ງວຽກບ້ານທີ່ໄດ້ຮັບມອບໝາຍ.

**3.3.4 ຈາກການສຳພາດອາຈານຝ່າຍປົກຄອງນັກຮຽນ**

ພົບວ່າທ້າວນິດມີພຶດຕິກຳຄວາມຮຸນແຮງຕີກັນກັບນັກຮຽນໂຮງຮຽນດຽວກັນ ແລະ ນັກຮຽນຕ່າງໂຮງຮຽນມີການຕີກັນແບບຕົວຕໍ່ຕົວ ແລະ ແບບຍົກພວກລຸມທຳຮ້າຍກັນ.

**3.3.5 ດ້ານສື່**

ຈາກການສຳພາດພົບວ່າ ທ້າວນິດ ມັກຕິດຕາມຂ່າວນັກຮຽນຕີກັນຈາກໂທລະທັດກໍມີຄວາມຮູ້ສຶກຕື່ນເຕັ້ນ ແລະ ຮູ້ສຶກມ່ວນຢາກຕິດຕາມຂ່າວຢູ່ຕະຫຼອດເວລາ.

3.3.6 ດ້ານເກມອ່ອນໄລຣ

ຈາກການສຳພາດພົບວ່າ ທ້າວນິດ ຫລິ້ນເກມອ່ອນໄລຣທີ່ມີເນື້ອຫາຄວາມຮຸນແຮງຕໍ່ສູ້ກັນຖ້າເຮັດໃຫ້ອີກຝ່າຍເສຍຊີວິດຕົນເອງກໍຈະເປັນຝ່າຍຊະນະ ຫຼິ້ນທຸກມື້ ມື້ລະປະມານ 2 ຊົ່ວໂມງຕັ້ງແຕ່ເວລາປະມານ 18.00 ເຖິງ ເວລາ 20.00.

## 4. ຂໍ້ມູນຈາກການຢ້ຽມຢາມເຮືອນ

### 4.1. ຈາກການສຳພາດ ແລະ ການສັງເກດ

ພົບວ່າບ້ານຂອງທ້າວນິດເປັນເຮືອນ 2 ຊັ້ນໃນບ້ານຄັນທະລາດມີຫຼາຍຫຼັງຄາເຮືອນໃນບໍລິເວນໃກ້ຄຽງທາງເຂົ້າບ້ານເປັນເຮືອນໄມ້ຫຼາຍຫຼັງ ມີຜູ້ຄົນຄ່ອນຂ້າງໜາແໜ້ນມີຮ້ານຂາຍເຄື່ອງຍ່ອຍຫຼາຍຮ້ານສອງຂ້າງທາງເຂົ້າຫມູ່ບ້ານ ພາຍໃນຫໝູ່ບ້ານມີເຮືອນກໍ່ງສີ່ແປກ ເປັນຮ້ານປ້ອມແປງລົດ ບ້ານບາງຫຼັງເປີດເປັນຮ້ານເກມອ່ອນໄລຣພ້ອມດ້ວຍໂຕະສະໜຸກເກີ ມີດັ່ງເດັກນ້ອຍ ແລະ ຜູ້ໃຫຍ່ປ່ຽນກັນມາຫລິ້ນທີ່ຮ້ານເກມນີ້ພາຍໃນເຮືອນຂອງທ້າວນິດມີຄວາມສະອາດພໍໃຊ້ໄດ້ ມີເຄື່ອງໃຊ້ໄຟຟ້າ, ຕູ້ເຢັນ, ທີວີ, ເຄື່ອງສຽງ ແລະ ເຄື່ອງ ຄອມພິວເຕີ ກົງບໍລິເວນຫ້ອງຮັບແຂກຊັ້ນລຸ່ມບໍລິເວນຊັ້ນ 2 ມີ 2 ຫ້ອງນອນ ທ້າວນິດພັກຢູ່ຫ້ອງດຽວກັນກັບອ້າຍ ຊັ້ນລຸ່ມມີ 2 ຫ້ອງນອນ ແລະ ຫ້ອງນ້ຳ 2 ຫ້ອງ ຫ້ອງຄົວກິນຢູ່ບໍລິເວນພື້ນທີ່ດ້ານຫຼັງຂອງຕົວບ້ານ.

### 4.2. ຈາກການສໍາພາດຍ່າຂອງທ້າວນິດ

ພົບວ່າທ້າວນິດບໍ່ຄ່ອຍປຶກສາບັນຫາເລື່ອງສ່ວນຕົວເປັນເດັກຂີ້ດື້, ບໍ່ຄ່ອຍເຊື່ອຟັງ, ບໍ່ຄ່ອຍຊ່ວຍເຫຼືອວຽກເຮືອນ ເອົາແຕ່ໃຈມັກຫຼິ້ນເກມຄອມພິວເຕີ ຜິດກັບຫຼານເປັນປະຈໍາ ແລະ ມີເລື່ອງຕີກັນກັບອ້າຍຫຼາຍຄັ້ງ.

### 4.3. ຈາກການສໍາພາດອ້າຍຂອງທ້າວນິດ

ພົບວ່າບໍ່ຄ່ອຍສະໜິດສະໜົມກັນເທົ່າທີ່ຄວນ ບໍ່ເຄີຍເຮັດກິດຈະກໍາຮ່ວມກັນບໍ່ຄ່ອຍໄດ້ເວົ້າຈານໍາກັນ ຕ່າງຄົນຕ່າງຢູ່.

ຈາກການຢ້ຽມຢາມເຮືອນຂອງທ້າວນິດ ພໍສະຫຼຸບໄດ້ວ່າ ສະຖານທີ່ພັກອາໄສຄ່ອນຂ້າງສະດວກສະບາຍມີຜູ້ພັກອາໄສຄ່ອນຂ້າງໜາແໜ້ນ ຄວາມສະອາດພາຍໃນເຮືອນພັກອາໄສພໍໃຊ້ຄວາມສໍາພັນພາຍໃນລະຫວ່າງສະມາຊິກໃນຄອບຄົວຄ່ອນຂ້າງຫ່າງເຫີນມີການຜິດໃຈກັນເປັນປະຈໍາ.

## 5. ຂໍ້ມູນຈາກລະບຽບສະສົມ

ພົບວ່າ ທ້າວ ນິດ ມີຜົນການຮຽນຕໍ່າບໍ່ມີບັນຫາດ້ານສຸຂະພາບອາໄສຢູ່ກັບຍາດພີ່ນ້ອງ.

## 6. ຂໍ້ມູນຈາກບັນທຶກປະຈໍາວັນ

ຈາກການບັນທຶກປະຈໍາວັນຕະຫຼອດໄລຍະເວລາ 1 ອາທິດ ພົບວ່າທ້າວນິດ ມີກິດຈະກໍາປະຈໍາວັນຄ້າຍຄືກັນ ຕື່ນນອນເວລາ 06.00 ຈາກນັ້ນເຮັດພາລະກິດສ່ວນຕົວແລ້ວເດີນທາງໄປໂຮງຮຽນກ່ອນເຂົ້າໄປ ໃນໂຮງຮຽນໄປລວມຕົວກັບໝູ່ເພື່ອນຄົນອື່ນໆທີ່ບໍລິເວນໃກ້ໂຮງຮຽນ ຕອນເລີກຮຽນໄປຍ່າງຫຼິ້ນທີ່ຕະຫຼາດນັດ ກັບເຮືອນຮັບປະທານອາຫານແລງແລ້ວຫຼິ້ນເກມອອນໄລຣເວລາ 18.00-20.00. ແລ້ວເຂົ້ານອນ.

ຈາກການບັນທຶກປະຈໍາວັນ ສະຫຼຸບໄດ້ວ່າ ທ້າວ ນິດ ມັກໄປຍ່າງຫຼິ້ນທີ່ຕະຫຼາດນັດ ບໍ່ມີການທົບທວນບົດຮຽນ ຫຼື ເຮັດວຽກບ້ານໃຊ້ເວລາວ່າງໄປກັບການຫຼິ້ນເກມອອນໄລຣປະເພດທີ່ມີເນື້ອຫາຄວາມຮຸນແຮງ.

## 7. ຂໍ້ມູນດ້ານພຶດຕິກໍາຄວາມຮຸນແຮງ

ທ້າວ ນິດ ເລົ່າວ່າໄດ້ກພວກທໍາຮ້າຍກັນກັບນັກຮຽນຫ້ອງອື່ນສາເຫດມາຈາການເບິ່ງໜ້າກັນຝ່າຍນັ້ນເປັນຄົນເລີ່ມທ້າກ່ອນ ຈຶ່ງຕີເຂົ້າທີ່ໜ້າ ແລະ ຕາມຕົວຂອງນັກຮຽນໄວລຸ້ນອີກຝ່າຍ ສ່ວນທ້າວນິດນັ້ນກໍໄດ້ຮັບບາດແຜຊໍ້າຕາມໃບໜ້າ ບາງຄັ້ງໝູ່ເພື່ອນໃນກຸ່ມຂອງທ້າວຈະຊວນໄປມີເລື່ອງຕີກັນກັບນັກຮຽນແຫ່ງອື່ນ ບໍລິເວນລັງໂຮງຮຽນ ແລະ ຕະຫຼາດນັດທີ່ມີຜູ້ຄົນຫຼາຍຍ່າງຊື້ເຄື່ອງແຖວນັ້ນ.

- ການວິເຄາະຂໍ້ມູນ

ຈາກການໃຊ້ເຕັກນິກການລວບລວມຂໍ້ມູນທັງ 6 ເຕັກນິກໄດ້ແກ່ ແບບສອບຖາມດ້ານສ່ວນບຸກຄົນ, ແບບສັງເກດ, ການຢ້ຽມຢາມເຮືອນ, ລະບຽບສະສົມ, ບັນທຶກປະຈໍາວັນ ແລະ ການສໍາພາດດັ່ງ 3 ດ້ານ ຄື ດ້ານສ່ວນຕົວ, ດ້ານຄອບຄົວ ແລະ ດ້ານສັງຄົມ ສາມາດສະຫຼຸບ ແລະ ວິເຄາະຂໍ້ມູນ ສາເຫດທີ່ເປັນແນວໂນ້ມຂອງການເກີດພຶດຕິກໍາຄວາມຮຸນແຮງຂອງທ້າວ ນິດ ໄດ້ດັ່ງຕໍ່ນີ້:

1. ສາເຫດດ້ານຕົນເອງ

ຈາກການສໍາພາດ ແລະ ການສັງເກດເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ທ້າວນິດມີພຶດຕິກໍາຄວາມຮຸນແຮງໃນໂຮງຮຽນເກີດຈາກຕົວຂອງທ້າວນິດເອງຄື ມີທັດສະນະຄະຕິກ່ຽວກັບພຶດຕິກໍາການໃຊ້ຄວາມຮຸນແຮງວ່າເປັນທີ່ຍອມຮັບໃນໝູ່ເພື່ອນເປັນການຊ່ວຍເຫລືອໝູ່ເພື່ອນ ເມື່ອໝູ່ເພື່ອນຖືກທໍາຮ້າຍ ສະແດງເຖິງຄວາມສາມັກຄີໃນກຸ່ມໃຊ້ເວລາວ່າງໄປກັບການທ່ຽວຫຼິ້ນກັບໝູ່ເພື່ອນປະກອບກັບອາລົມຂອງໄວລຸ້ນທີ່ໂມໂຫງ່າຍຂາດຄວາມອົດທົນອົດກັ້ນໃຫ້ຄວາມສໍາຄັນກັບໝູ່ເພື່ອນຫລາຍ ແລະ ມີລັກສະນະບຸກຄຸລິກທີ່ຄ່ອນຂ້າງບໍ່ຍອມໃຜອາລົມຮ້ອນບໍ່ຄ່ອຍເຊື່ອຟັງການອົບຮົມຂອງຜູ້ປົກຄອງ ແລະ ຄູອາຈານ.

2. ສາເຫດດ້ານຄອບຄົວ

ຈາກການສັງເກດການສໍາພາດ ແລະ ການຢ້ຽມຢາມເຮືອນເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ທ້າວນິດມີພຶດຕິກໍາຄວາມຮຸນແຮງໃນໂຮງຮຽນເກີດຈາກສະພາບທາງຄອບຄົວທີ່ຂາດຄວາມຮັກຄວາມອົບອຸ່ນຈາກສະມາຊິກໃນຄອບຄົວບັນຍາກາດພາຍໃນເຮືອນບໍ່ໜ້າຢູ່ອາໄສ ມີການຜິດໃຈກັນໃນໝູ່ອ້າຍນ້ອງຄວາມສໍາພັນຂອງສະມາຊິກໃນຄອບຄົວຄ່ອນຂ້າງຫ່າງເຫີນຂີ້ດື້ບໍ່ຄ່ອຍເຊື່ອຟັງຜູ້ປົກຄອງ.

3. ສາເຫດທາງສັງຄົມ

ຈາກການສໍາພາດ ແລະ ການສັງເກດທໍາໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ມີພຶດຕິກໍາຄວາມຮຸນແຮງໃນໂຮງຮຽນເກີດຈາກອິດທິພົນຂອງກຸ່ມໝູ່ເພື່ອນທ້າວນິດໃຫ້ຄວາມສໍາຄັນກັບໝູ່ເພື່ອນຫລາຍເມື່ອໝູ່ເພື່ອນມີເລື່ອງຕີກັນຕ້ອງເຂົ້າໄປຮ່ວມຕີທຸກຄັ້ງ ປະກອບກັບທ້າວນິດມັກຕິດຕາມຮັບຊົມພາບຂ່າວກ່ຽວກັບນັກຮຽນຕີກັນທາງໂທລະທັດເລື້ອຍໆຈົນເກີດຄວາມຊິນຊາ ແລະ ມີທັດສະນະຄະຕິຕໍ່ພາບທີ່ໄດ້ຮັບຊົມວ່າຄວາມຮຸນແຮງໃນໄວລຸ້ນເປັນເລື່ອງທໍາມະດາ ທ້າວນິດໃຊ້ເວລາໃນການຫລິ້ນເກມອ່ອນໄລຣທີ່ມີເນື້ອຫາກ່ຽວຂ້ອງກັບຄວາມຮຸນແຮງ ມື້ລະປະມານ 2 ຊົ່ວໂມງຈຶ່ງເປັນແນວໂນ້ມໃຫ້ລາວຊຶມຊັບຮັບເອົາພຶດຕິກໍາຄວາມຮຸນແຮງນັ້ນໄວ້ ແລະ ຍັງສົ່ງຜົນໃຫ້ມີຄວາມສໍາພັນລະຫວ່າງສະມາຊິກໃນຄອບຄົວຫ່າງເຫີນ.

- ແນວທາງໃນການຊ່ວຍເຫຼືອ

ຈາກການວິເຄາະແນວໂນ້ມທີ່ເປັນສາເຫດຂອງການເກີດພຶດຕິກຳຄວາມຮຸນແຮງຂອງທ້າວນິດທັງ 3 ດ້ານ ໄດ້ແກ່ ດ້ານຕົນເອງ, ດ້ານຄອບຄົວ ແລະ ດ້ານອິດທິພົນທາງສັງຄົມ ຜູ້ວິໄຈໄດ້ດຳເນີນການຫາແນວທາງ ຊ່ວຍເຫຼືອດັ່ງຕໍ່ໄປນີ້:

1. ການຊ່ວຍຢເຫຼືອທີ່ໂຮງຮຽນ

1.1 ແນະແນວທາງໃຫ້ມີການປັບປ່ຽນພຶດຕິກຳໃຫ້ມີຄວາມເໝາະສົມ ແລະ ມີກວາມຮັບຜິດຊອບຮູ້ຈັກເຖິງຜົນເສຍຂອງພຶດຕິກຳຄວາມຮຸນແຮງຂອງຕົນເອງ ມີຄວາມຮັບຜິດຊອບໃນຖານະລູກ ແລະ ການເປັນນັກຮຽນໃຫ້ຄວາມໝັ້ນໃຈ ແລະ ໃຫ້ກຳລັງໃຈຕະຫລອດຈົນເອົາໃຈໃສ່ຢ່າງໃກ້ຊິດກັບທ້າວນິດ ເພື່ອໃຫ້ມີຄວາມອົບອຸ່ນ ເຊື່ອໝັ້ນໃນຕົນເອງສາມາດປັບປຸງພຶດຕິກຳໃຫ້ມີຄວາມເໝາະສົມຫຼຸດພຶດຕິກຳຄວາມຮຸນແຮງ.

1.2 ຂໍຄວາມຊ່ວຍເຫຼືອຈາກໝູ່ເພື່ອນໃນຫ້ອງໂດຍສະເພາະໝູ່ເພື່ອນສະໜິດຂອງທ້າວນິດເມື່ອມີເວລາວ່າງໃຫ້ເຮັດກິດຈະກຳທີ່ສ້າງສັນແທນທີ່ຈະໃຊ້ເວລາສ່ວນໃຫຍ່ໄປກັບການຍ່າງທ່ຽວຫຼິ້ນ ຫລື ຫຼິ້ນເກມອອນໄລຮທີ່ມີເນື້ອຫາຄວາມຮຸນແຮງ.

2. ການຊ່ວຍເຫຼືອໃນຄອບຄົວມີດັ່ງຕໍ່ໄປນີ້:

2.1 ປຶກສາບັນຫາທີ່ເກີດຂຶ້ນກັບຜູ້ປົກຄອງໃນຄອບຄົວຂອງຜູ້ຮັບການສຶກສາເພື່ອໃຫ້ເຂົ້າໃຈໃນຕົວທ້າວນິດຫລາຍຂຶ້ນຂໍໃຫ້ຜູ້ປົກຄອງໃຫ້ຄວາມຮັກຄວາມອົບອຸ່ນ ແລະໃຫ້ເວລາກັບທ້າວນິດໃຫ້ຫລາຍຂຶ້ນ.

- ການທຳນາຍຜົນ

ຈາກການສຶກສາບັນຫາຂອງທ້າວນິດພົບວ່າ ການມີພຶດຕິກຳຄວາມຮຸນແຮງຂອງລາວນັ້ນມີແນວທາງໃນການຊ່ວຍເຫຼືອໃຫ້ປັບປຸງພຶດຕິກຳທີ່ບໍ່ເໝາະສົມໄດ້ຫາກທ້າວນິດໄດ້ຮັບຄວາມຮັກ ແລະ ການເອົາໃຈໃສ່ ໃຫ້ກຳລັງໃຈຈາກຄອບຄົວຫລາຍຂຶ້ນຕະຫລອດຈົນສະມາຊິກໃນຄອບຄົວໃຫ້ຄວາມຮ່ວມມືໃນແນວທາງການຊ່ວຍເຫຼືອເປັນຢ່າງດີ.

- ຂໍ້ສະເໜີແນະ

1. ຂໍ້ສະເໜີແນະສຳລັບຜູ້ຮັບການສຶກສາ ທ້າວ ນິດຄວນທົບທວນວ່າພຶດຕິກຳການໃຊ້ຄວາມຮຸນແຮງນັ້ນເປັນພຶດຕິກຳທີ່ບໍ່ເໝາະສົມ ແລະ ສິ່ງຜົນກະທົບຕໍ່ຕົນເອງ ແລະ ຜູ້ອື່ນ ຄວນຫາເວລາເວົ້າກັບຜູ້ປົກຄອງເພື່ອຄວາມໃກ້ຊິດ ແລະ ສ້າງບັນຍາກາດພາຍໃນຄອບຕຄົວໃຫ້ມີຄວາມອົບອຸ່ນເລືອກທີ່ຈະປະຕິເສດໝູ່ເພື່ອນເວລາໝູ່ເພື່ອນມີເລື່ອງຕີກັນກັບຄົນອື່ນ ເລືອກຄົບໝູ່ເພືອນທີ່ດີ ແລະ ມີກິດຈະກຳທີ່ສ້າງສັນຮ່ວມກັນ ແລະ ຂໍໃຫ້ປະຕິບັດຕາມແນວທາງໃນການຊ່ວຍເຫຼືອຢ່າງຈິງຈັງ.

2. ຂໍ້ສະເໜີແນະສຳລັບຜູ້ທີ່ກ່ຽວຂ້ອງມີດັ່ງຕໍ່ໄປນີ້

2.1 ສະມາຊິກໃນຄອບຄົວຄວນໃຫ້ກຳລັງໃຈໃນສິ່ງທີ່ທ້າວນິດເຮັດໄດ້ດີ ເຊັ່ນການຫລິ້ນກິລາ ເພື່ອໃຫ້ລາວເກີດຄວາມພາກພູມໃຈໃນຕົນເອງໃຫ້ກຳລັງໃຈເມື່ອປັບປຸງພຶດຕິກຳໃຫ້ດີຂຶ້ນເພື່ອສ້າງຄວາມໝັ້ນໃຈໃນຕົນເອງໃຫ້ຄຳປຶກສາກັບນຄູເມື່ອມີບັນຫາຄວນໃຫ້ເວລາກັບຄູໃຫ້ຫລາຍຂຶ້ນ.

2.2 ອາຈານປະຈຳຊັ້ນແນະແນວ ແລະ ອາຈານປະຈຳວິຊາ ຄວນໃຫ້ຄວາມສົນໃຈ ແລະ ດູແລແບບຕໍ່ເນື່ອງ ແລະ ເຂົ້າໃຈຍອມຮັບຄວາມແຕກຕ່າງລະຫວ່າງບຸກຄົນ ຄວນໃຫ້ຄວາມຮັກກັບເດັກຢ່າງຈິງໃຈ ເພື່ອໃຫ້ເກີດຄວາມໄວ້ວາງໃຈເຊື່ອໃຈບໍ່ຍ້ານຄູ ກ້າທີ່ຈະປຶກສາເລື່ອງພຶດຕິກຳຄວາມຮຸນແຮງຊຶມເຊຍ ແລະ ໃຫ້ກຳລັງໃຈເມື່ອລາວສາມາດປັບປຸງພຶດຕິກຳຂອງຕົນເອງໃຫ້ດີຂຶ້ນ.

2.3 ໝູ່ເພື່ອນຂອງທ້າວນິດຄວນທົບທວນວ່າການຍົກພວກລຸມທຳຮ້າຍກັນເປັນພຶດຕິກຳທີ່ບໍ່ເໝາະສົມ ແລະ ຄານຶ່ງເຖິງຜົນເສຍທີ່ຈະຕາມມາ ແລະ ໃຫ້ກຳລັງໃຈກັນ ແລະ ກັນທີ່ຈະຫຼຸດພຶດຕິກຳຄວາມຮຸນແຮງ ເຮັດກິດຈະກຳທີ່ສ້າງສັນເມື່ອມີເວລາວ່າງ.

## ກໍລະນີສຶກສາຄົນທີ 3 ທ້າວ ປອງ ( ນາມສົມມົດ )

ທ້າວ ປອງ ໄລຍະເວລາທີ່ສຶກສາຕັ້ງແຕ່ວັນທີ 01 ຕຸລາ 2018 ເຖິງວັນທີ 7 ຕຸລາ 2018

- **ລັກສະນະທົ່ວໄປ**

ຈາກການສັງເກດພົບວ່າ ທ້າວ ປອງ ຜິວຂາວຮູບຮ່າງຄ່ອນຂ້າງອວມແຕ່ງກາຍສະອາດຮຽບຮ້ອຍໃນຂະນະໃຫ້ສຳພາດເວົ້າຈາສຸພາສຽງດັງຟັງຊັດ ເປັນຄົນອາລົມດີຍິ້ມແຍ້ມແຈ່ມໃສໃນໄລຍະທຳອິດທີ່ບໍ່ຄ່ອຍໃຫ້ຂໍ້ມູນດ້ານທະເລາະວິວາດບໍ່ຫຼາຍ ແຕ່ເມື່ອໄດ້ພົບກັນຫຼາຍຂຶ້ນລາວຈຶ່ງເລີ່ມມີຄວາມໄວ້ວາງໃຈ ແລະ ໃຫ້ຂໍ້ມູນ ຢ່າງຕໍ່ເນື່ອງດ້ວຍດີຕະຫຼອດໄລຍະເວລາໃນການສຳພາດ.

ຈາກການໃຊ້ເຕັກນິກການລວບລວມຂໍ້ມູນທັງ 6 ເຕັກນິກ ໄດ້ແກ່ ແບບສອບຖາມດ້ານສ່ວນບຸກຄົນ, ແບບສັງເກດ, ການຢ້ຽມຢາມເຮືອນ, ລະບຽບສະສົມ, ບັນທຶກປະຈຳວັນ ແລະ ການສຳພາດດັ່ງ 3 ດ້ານ ຄື ດ້ານສ່ວນຕົວ, ດ້ານຄອບຄົວ ແລະ ດ້ານສັງຄົມສາມາດສະຫຼຸບ ແລະ ວິເຄາະຂໍ້ມູນໄດ້ດັ່ງນີ້:

### 1. ຂໍ້ມູນຈາກແບບສອບຖາມ

ພົບວ່າ ທ້າວ ປອງ ອາຍຸ 14 ປີ ສຶກສາຢູ່ຊັ້ນມັດທະຍົມສຶກສາປີທີ 2 ມີອ້າຍນ້ອງ 2 ຄົນ ອາໄສຢູ່ກັບ ພໍ່ ແລະ ແມ່.

### 2. ຂໍ້ມູນຈາກແບບສັງເກດ

ການວິໄຈໃນຄັ້ງນີ້ຜູ້ວິໄຈໄດ້ທຳການສັງເກດໃນຫ້ອງຮຽນວິຊາອື່ນໆວັນທີ່ 1 ຕຸລາ 2018 ໃນການສັງ ເກດໃຊ້ເວລາ 30 ນາທີ ພົບວ່າ ທ້າວ ປອງ ບໍ່ຄ່ອຍສົນໃຈໃນການຮຽນເວົ້າໂສກັນກັບໝູ່ເພື່ອນໃນ

ຂະນະຮຽນ ບໍ່ຄ່ອຍເຊື່ອຟັງຄູຜູ້ສອນ ເວົ້າຈາບໍ່ສຸພາບ ແລະ ແຂງກະດ້າງກັບໝູ່ເພື່ອນ ແລະ ໄດ້ເຮັດການສັງເກດນອກຫ້ອງຮຽນ ເວລາ 15.10-15.40. ໃນມື້ດຽວກັນ ພົບວ່າ ທ້າວປອງ ນັ່ງຫຼີ້ນກັບໝູ່ເພື່ອນທີ່ບໍລິເວນໂຕະຫີນໜ້າໂຮງຮຽນ ແລະ ຍ່າງອອກຈາກໂຮງຮຽນໄປພ້ອມກັນກັບໝູ່ເພື່ອນໃນກຸ່ມ.

# 3. ຂໍ້ມູນຈາກການສໍາພາດ

## 3.1. ຂໍ້ມູນດ້ານບຸກຄົນ

### 3.1.1 ປະຫວັດສ່ວນຕົວ

ຈາກການສໍາພາດ ທ້າວ ປອງ ເຮັດໃຫ້ຮູ້ວ່າ ລາວມີອາຍຸ 14 ປີ ກໍາລັງສຶກສາຢູ່ຊັ້ນມັດທະຍົມສຶກສາປີທີ 2 ໃນມັດທະຍົມຕົ້ນສາທິດວິທະຍາໄລຄູສາລະວັນ ພັກອາໄສຢູ່ກັບພໍ່ແມ່ ແລະ ອ້າຍ ທ້າວ ປອງບໍ່ຄ່ອຍຕັ້ງໃຈຮຽນເວລາຢູ່ໃນຫ້ອງຮຽນມັກໂສກັນກັບໝູ່ເພື່ອນ ແລະ ເວລາເລີກຮຽນມັກໄປຫຼິ້ນເກມອອນໄລຣປະມານ 2 ຊົ່ວໂມງກ່ອນກັບເຂົ້າເຮືອນ ເມື່ອກັບເຮືອນແລ້ວກໍຈະຫຼິ້ນເກມອອນໄລຣຕໍ່ໄປອີກຈົນເຖິງເວລາປະມານ 23.00 . ດ້ວຍເຫດນີ້ ຈຶ່ງເຮັດໃຫ້ຖືກພໍ່ຮ້າຍເປັນປະຈໍາ ເມື່ອມີເວລາວ່າງຈະຫຼິ້ນຕີປີງປອງກັບພໍ່ແມ່ ແລະ ອ້າຍທີ່ເດີ່ນບ້ານຂອງເພື່ອນບ້ານທີ່ຢູ່ຕິດກັນ ທ້າວປອງເລົ່າວ່າລາວກັບອ້າຍແຕກຕ່າງກັນຫຼາຍອ້າຍເປັນເດັກຮຽນດີແຕ່ ທ້າວປອງຮຽນບໍ່ເກັ່ງມັກມີເລື່ອງທະເລາະວິວາດຕີກັນກັບໝູ່ເພື່ອນພາຍໃນໂຮງຮຽນຕັ້ງແຕ່ມັດທະຍົມສຶກສາປີທີ 1 ກໍມີເລື່ອງມາແລ້ວປະມານ 5 ຄັ້ງ. ນອກຈາກປະສົບການຕີກັນພາຍໃນໂຮງຮຽນແລ້ວທ້າວປອງ ເຄີຍຖືກນັກຮຽນໄວລຸ້ນຕ່າງໂຮງຮຽນ 5 ຄົນລຸ່ມຕີທໍາຮ້າຍທີ່ແຄມທາງ ໃນຂະນະຍ່າງກັບເຮືອນທ້າວປອງເລົ່າວ່າເຂົາເຈົ້າມາລຸມຕີແລ້ວກໍດຶງໂຕ ເຫດການໃນລັກສະນະນີ້ເກີດຂຶ້ນຫຼາຍເທື່ອແລ້ວ ສ່ວນຫລາຍບໍລິເວນດ້ານໜ້າໂຮງຮຽນ ແລະ ເດີ່ນຂ້າງໆໂຮງຮຽນ.

### 3.1.2 ດ້ານທັດສະນະຄະຕິຕໍ່ພຶດຕິກໍາຄວາມຮຸນແຮງ

ຈາກການສໍາພາດທ້າວປອງ ພົບວ່າ ການມີພຶດຕິກໍາຄວາມຮຸນແຮງເປັນເລື່ອງທໍາມະດາຂອງເດັກຜູ້ຊາຍອາດຈະມີຕີກັນເປັນເລື່ອງຂອງການຍອມຮັບໃນກຸ່ມໝູ່ເພື່ອນການຍົກພວກທໍາຮ້າຍກັນທ້າວປອງ ມີຄວາມເຊື່ອວ່າເປັນການຊ່ວຍເຫຼືອໝູ່ເພືອນ ແລະ ການຕີກັນຕົວຕໍ່ຕົວເປັນເລື່ອງຂອງການບໍ່ສາມາດຄວບຄຸມອາລົມຄຽດແຄ້ນຂອງຕົນເອງໄດ້.

### 3.1.3 ການໃຊ້ເວລາວ່າງ

ຈາກການສໍາພາດພົບວ່າ ທ້າວປອງມັກໃຊ້ເວລາວ່າງໄປຍ່າງທີ່ເດີ່ນອິງແກ້ວກັບໝູ່ເພື່ອນ ແລະ ມັກຫຼີ້ນເກມອອນໄລຣ ໃນຮ້ານເກມ ແລະ ຢູ່ເຮືອນ ສ່ວນຫຼາຍບໍ່ໄດ້ເຮັດກິດຈະກໍາຫຍັງກັບສະມາຊິກໃນຄອບຄົວ.

## 3.2. ຂໍ້ມູນດ້ານຄອບຄົວ

ທ້າວ ປອງ ອາໄສຢູ່ກັບພໍ່ແມ່ ແລະ ອ້າຍ ເຮືອນບໍ່ໄກຈາກໂຮງຮຽນຫຼາຍປານໃດ ທ້າວ ປອງ ເລົ່າວ່າຜິດກັບອ້າຍເປັນປະຈໍາເພາະເລື່ອງຍ້ານຄອມພິວເຕີກັນເພື່ອຫຼິ້ນເກມອອນໄລຣ ແຕ່ແລ້ວພໍ່ກໍຢຸດຕິບັນຫາໂດຍຊື້ເຄື່ອງຄອມພິວເຕີໃໝ່ ຈຶ່ງເລີກຜິດກັນກັບອ້າຍ ຕອນນີ້ຫັນມາຜິດກັບພໍ່ເພາະ ທ້າວປອງຈະ

ຫຼິ້ນເກມທຸກຄືນ ແລະ ບໍ່ຄ່ອຍເຊື່ອຟັງພໍ່ ທ້າວປອງ ບອກວ່າພໍ່ຄ່ອນຂ້າງຈະຮ້າຍເວລາມີບັນຫາເລື່ອງຕີກັນທີ່ໂຮງຮຽນຈຶ່ງບໍ່ຄ່ອຍກ້າເລົ່າໃຫ້ພໍ່ຟັງແຕ່ທ້າວປອງ ຢາກຈະເລົ່າໃຫ້ພໍ່ຟັງຈະໄດ້ຂໍຄໍາປຶກສາໄປນໍາແຕ່ກໍຍັງບໍ່ເຄີຍເລີຍຈັກຄັ້ງທີ່ຈະຂໍຄໍາປຶກສາຈາກພໍ່.

## 3.3. ຂໍ້ມູນທາງສັງຄົມ

### 3.3.1 ດ້ານໝູ່ເພື່ອນ

ຈາກການສໍາພາດທ້າວປອງ ພົບວ່າເປັນຄົນຮັກໝູ່ເພື່ອນຫລາຍເພາະໝູ່ເພື່ອນໃນກຸ່ມບໍ່ວ່າຈະມີບັນຫາຫຍັງຈະຄອຍຖ້າຊ່ວຍເຫລືອກັນສະເໝີ ຫລິ້ນນໍາກັນຮຽນນໍາກັນຢູ່ກັບໝູ່ເພື່ອນແລ້ວຮູ້ສຶກສະບາຍໃຈເພື່ອນໃນກຸ່ມທຸກຄົນຈໍານວນ 8 ຄົນເຄີຍມີເລື່ອງທະເລາະວິວາດກັນທຸກຄົນເວລາໝູ່ເພື່ອນມີບັນຫາເລື່ອງຕີກັນກໍຈະຄອຍຖ້າຊ່ວຍເຫລືອກັນປຶກສາໝູ່ເພື່ອນເລື່ອງຮຽນນໍາບາງຄັ້ງ ບາງຄັ້ງມີຄົນອື່ນມາຫາເລື່ອງກໍປຶກສາໝູ່ເພື່ອນວ່າຈະຕີກັບຄົນທີ່ມາທ້າຕີບໍ່ ທ້າວປອງບອກວ່າສຸດທ້າຍແລ້ວຄໍາຕອບຈົບລົງທີ່ການຕີກັນສະເໝີເມື່ອຢູ່ເຮືອນ ທ້າວ ປອງກໍຈະແຕ່ຫຼິ້ນເກມອອນໄລຣກັບໝູ່ເພື່ອນຈົນຢູ່ເດິກທຸກຄືນ.

### 3.3.2 ຈາກການສໍາພາດໝູ່ເພື່ອນສະໜິດ

ໝູ່ເພື່ອນສະໜິດທີ່ໂຮງຮຽນຂອງທ້າວປອງ 3 ຄົນ ຈາກຈໍານວນໝູ່ເພື່ອນສະໜິດທັງໝົດຈໍານວນ 8 ຄົນເຮັດການສໍາພາດຈົນລະ 30 ນາທີພົບວ່າທ້າວປອງເປັນຄົນຮັກໝູ່ເພື່ອນຫຼາຍເວລາເພື່ອນມີບັນຫາເລື່ອງຕີກັນຈະໃຫ້ຄວາມຊ່ວຍເຫລືອທຸກຄັ້ງ ມີຄວາມສະໜິດສະໜົມກັນຫລາຍບໍ່ວ່າຢູ່ທີ່ໂຮງຮຽນ ຫຼື ໄປທ່ຽວຕາມຮ້ານຄ້າຕ່າງໆຈະໄປນໍາກັນສະເໝີຕອນກາງຄືນກໍມີການຫຼິ້ນເກມອອນໄລຣເປັນປະຈໍາ.

### 3.3.3 ຈາກການສໍາພາດອາຈານວິຊາ ແລະ ປະຈໍາຊັ້ນ

ພົບວ່າທ້າວປອງ ເປັນເດັກຄ່ອນຂ້າງມີຜົນການຮຽນຕໍ່າເວລາຢູ່ໃນຫ້ອງຮຽນບໍ່ຄ່ອຍສົນໃຈການຮຽນມັກນັ່ງໂສກັນກັບເພື່ອນ ບາງຄັ້ງກໍໜີຮຽນບໍ່ຄ່ອຍໃຫ້ຄວາມຮ່ວມມືໃນການເຮັດກິດຈະກໍາບໍ່ມີຄວາມຮັບຜິດຊອບບໍ່ຄ່ອຍສົ່ງວຽກບ້ານທີ່ໄດ້ຮັບມອບໝາຍ ເວົ້າຈາບໍ່ສຸພາບແຂງກະດ້າງກັບໝູ່ເພື່ອນໃນຊັ້ນຮຽນມັກຍອກໝູ່ເພື່ອນຕົບຫົວໝູ່ເພື່ອນແຮງໆ.

### 3.3.4 ຈາກການສໍາພາດອາຈານຝ່າຍປົກຄອງ

ພົບວ່າທ້າວປອງ ເປັນຄົນຮັກໝູ່ເພື່ອນຫລາຍຕິດໝູ່ເພື່ອນຕັ້ງແຕ່ ມໍ 1 ຈົນກະທັ້ງຂຶ້ນ ມໍ 2 ມີເລື່ອງຕີກັນແລ້ວຫລາຍກວ່າ 5 ຄັ້ງ.

### 3.3.5 ດ້ານສື່

ຈາກການສໍາພາດທ້າວປອງ ພົບວ່າມັກຕິດຕາມຂ່າວນັກຮຽນຕີກັນຈາກໂທລະທັດມີຄວາມຮູ້ສຶກວ່າການໃຊ້ຄວາມຮຸນແຮງເປັນເລື່ອງຂອງສັກສີເປັນທີ່ຍອມຮັບຂອງກຸ່ມໝູ່ເພື່ອນ ແລະ ເປັນເລື່ອງຂອງສະຖາບັນທີ່ນັກຮຽນຕ້ອງການຈະປົກປ້ອງສັກສີຂອງສະຖາບັນ.

**3.3.6 ດ້ານເກມອອນໄລ**

ຈາກການສຳພາດທ້າວປອງ ພົບວ່າຫລິ້ນເກມອ່ອນໄລຣທີ່ມີເນື້ອຫາຄວາມຮຸນແຮງຜູ້ຫລິ້ນຈະຕ້ອງຕໍ່ສູ້ຂ້າພັນຝ່າຍກົງກັນຂ້າມໃຫ້ເສຍຊີວິດເຖິງຈະເປັນຜູ້ຊະນະ ທ້າວປອງໃຊ້ເວລາໃນການຫຼິ້ນເກມອ່ອນໄລຣມື້ລະ 4 ຊົ່ວໂມງ.

# 4. ຂໍ້ມູນຈາກການຢ້ຽມຢາມເຮືອນ

## 4.1. ຈາກການສຳພາດ ແລະ ການສັງເກດ

ພົບວ່າທ້າວປອງອາໄສຢູ່ກັບພໍ່ແມ່ ແລະ ອ້າຍສະພາບໃນຊຸມຊົນເປັນໝູ່ບ້ານຂະໜາດ 80 ຫຼັງຄາເຮືອນທາງເຂົ້າໝູ່ບ້ານແຍກຕົວຈາກຖະໜົນຫົນທາງໃຫຍ່ຄ່ອນຂ້າງຍາກ ໄລຍະທາງປະມານ 50 ແມັດພາຍໃນຊຸມຊົນມີຮ້ານຂາຍເຄື່ອງຍ່ອຍທຳມະດາ ສ່ວນຮ້ານກິນດື່ມພ້ອມດ້ວຍຮ້ານສະໜຸກເກີ ແລະ ຮ້ານເກມຄອມພິວເຕີມີແມ່ນຢູ່ຕົວເມືອງປະມານ 2 ກິໂລແມັດ ເດັກຈາມາໃຊ້ບໍລິການຄ່ອນຂ້າງຫລາຍບໍລິເວນຮ້ານເກມມີກຸ່ມໄວລຸ້ນມານັ່ງກິນເຫຼົ້າ ແລະ ສິ່ງສຽງດັງ ມີຜູ້ຄົນອາໄສຄ່ອນຂ້າງຫນາແໜ້ນ ເຮືອນຂອງທ້າວປອງ ເປັນເຮືອນຊັ້ນດຽວມີຮົ້ວອ້ອມບໍລິເວນເຮືອນ ພາຍໃນຕົວເຮືອນມີຫ້ອງນອນ 3 ຫ້ອງ, ຫ້ອງນໍ້າ 2 ຫ້ອງ, ຫ້ອງຄົວກິນຢູ່ຖັດເຂົ້າໄປຈາກຫ້ອງນັ່ງຫຼິ້ນ ທ້າວປອງມີຫ້ອງພັກສ່ວນຕົວພາຍໃນຫ້ອງຈັດເກັບເຄື່ອງໃຊ້ຄ່ອນຂ້າງເປັນລະບຽບມີເຄື່ອງໃຊ້ໄຟຟ້າຄື ເຄື່ອງສຽງ ແລະ ເຄື່ອງຄອມພິວເຕີ.

## 4.2. ຈາກການສຳພາດແມ່ຂອງທ້າວປອງ

ພົບວ່າເປັນເດັກຂີ້ດື້ບໍ່ຄ່ອຍເຊື່ອຟັງມັກຜິດກັນກັບພໍ່ ແລະ ແມ່ເປັນປະຈຳຫຼາຍຄັ້ງເພາະຫຼິ້ນເກມອ່ອນໄລຣມື້ລະຫຼາຍຊົ່ວໂມງ ບໍ່ຄ່ອຍເຮັດວຽກບ້ານສິ່ງຄູ ເວົ້າຈາແຂງກະດ້າງ ແລະ ຕີກັບອ້າຍມີກິດຈະກຳເຮັດຮ່ວມກັນບາງຄັ້ງຄືການຫຼິ້ນປີງປອງ.

## 4.3. ຈາກການສຳພາດອ້າຍຂອງທ້າວປອງ

ພົບວ່າບໍ່ຄ່ອຍສະໜິດສະໜົມກັນເທົ່າທີ່ຄວນເພາະຕົນເອງຕ້ອງຮຽນຫຼາຍວິຊາຢ່າງໜັກເພື່ອກຽມສອບເຂົ້າຈົບມໍ 7 ສ່ວນທ້າວປອງນັ້ນຫວັງແຕ່ຫຼິ້ນກັບໝູ່ເພື່ອນບໍ່ສົນໃຈການຮຽນມີເລື່ອງຕີກັນທີ່ໂຮງຮຽນເປັນປະຈຳ ຈຶ່ງບໍ່ຢາກເວົ້ານຳ.

ຈາກການຢ້ຽມຢາມເຮືອນຂອງທ້າວປອງ ພໍສະຫຼຸບໄດ້ວ່າ ສະຖານທີ່ພັກອາໄສຄ່ອນຂ້າງມີຄວາມສະດວກສະບາຍຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສະອາດພາຍໃນຫ້ອງພັກອາໄສຄ່ອນຂ້າງດີສະພາບທົ່ວໄປຂອງໝູ່ບ້ານມີຜູ້ພັກອາໄສຄ່ອນຂ້າງໜາແໜ້ນ ຄວາມສຳພັນພາຍໃນລະຫວ່າງສະມາຊິກໃນຄອບຄົວຄ່ອນຂ້າງຫ່າງເຫີນ.

# 5. ຂໍ້ມູນຈາກລະບຽບສະສົມ

ພົບວ່າທ້າວປອງ ມີຜົນການຮຽນຕໍ່າບໍ່ມີບັນຫາດ້ານສຸຂະພາບອາໄສຢູ່ກັບພໍ່ແມ່ ແລະ ອ້າຍ ເກີດທີ່ສາລະວັນ.

## 6. ຂໍ້ມູນຈາກບັນທຶກປະຈຳວັນ

ຈາກການບັນທຶກປະຈຳວັນຕະຫລອດໄລຍະເວລາ 1 ອາທິດພົບວ່າທ້າວປອງມີກິດຈະກຳປະຈຳວັນຄ້າຍຄືກັນຕື່ນນອນເວລາ 06.30. ຈາກນັ້ນເຮັດພາລະກິດສ່ວນຕົວແລ້ວຍ່າງໄປໂຮງຮຽນ ຫຼັງເລີກຮຽນໄປຫຼິ້ນເກມອອນໄລຣກັບໝູ່ເພື່ອນແລ້ວກັບເຮືອນ ຫຼັງຮັບປະທານອາຫານແລງຫຼິ້ນເກມອອນໄລຣຕໍ່ຈົນຮອດເດິກຈຶ່ງເຂົ້ານອນເວລາ 22.00 .

ຈາກການບັນທຶກປະຈຳວັນ ສະຫຼຸບໄດ້ວ່າທ້າວປອງ ມັກໄປຍ່າງຫຼິ້ນບໍ່ມີການທົບທວນບົດຮຽນ ຫຼືເຮັດວຽກບ້ານໃຊ້ເວລາວ່າງໄປກັບການຫລິ້ນເກມອອນໄລຣທີ່ມີເນື້ອຫາຄວາມຮຸນແຮງວັນລະ 4 ຊົ່ວໂມງ.

## 7. ຂໍ້ມູນດ້ານພຶດຕິກຳຄວາມຮຸນແຮງ

ຈາກການສຳພາດທ້າວປອງ ພົບວ່າສາເຫດຂອງການຍົກພວກຕີກັນນັ້ນສ່ວນໃຫຍ່ເກີດຈາກການແຊວກັນເລື່ອງຜູ້ຍິງ ຫຼື ການຍ່າງມາເຮັດທ່າທາງກວນກັນ ແລະ ບາງຄັ້ງທ້າວປອງກໍໄປຫາເລື່ອງເຂົາກ່ອນເຫດເພາະອີກຝ່າຍນັ້ນມີທ່າທາງ ແລະ ບຸກຄະລິກທີ່ເຮັດໃຫ້ທ້າວປອງບໍ່ພໍໃຈ ແລະ ທ້າວເປັນຝ່າຍຍ່າງເຂົ້າໄປຫາກ່ອນແລ້ວເວົ້າວ່າ “ມາດກວນແທ້“ ແລ້ວກໍຕີເຂົ້າທີ່ໜ້າຂອງອີກຝ່າຍທັນທີ່ຈາກນັ້ນໝູ່ເພື່ອນຝ່າຍນັ້ນ ແລະ ໝູ່ເພື່ອນຂອງທ້າວປອງກໍເຂົ້າລຸມກັນ ອາຈານກໍນຳຕົວເຂົ້າຫ້ອງປົກຄອງລົງໂທດທັງສອງຝ່າຍທ້າວປອງ ບອກວ່າບໍ່ໄດ້ຮູ້ສຶກຫຍັງແຕ່ຄວນຮັບຜິດວ່າໄປຕີເຂົາກ່ອນ ແລະ ຕອນນັ້ນຮູ້ສຶກອາລົມບໍ່ດີອາລົມພາໄປຈຶ່ງເກີດການຕີກັນຂຶ້ນ.

- ການວິເຄາະຂໍ້ມູນ

ຈາກການໃຊ້ເຕັກນິກການລວບລວມຂໍ້ມູນທັງ 6 ເຕັກນິກ ໄດ້ແກ່ ແບບສອບຖາມດ້ານສ່ວນບຸກຄົນ, ແບບສັງເກດ, ການຢ້ຽມຢາມເຮືອນ, ລະບຽບສະສົມ, ບັນທຶກປະຈຳວັນ ແລະ ການສຳພາດດັ່ງ 3 ດ້ານ ຄື ດ້ານສ່ວນຕົວ, ດ້ານຄອບຄົວ ແລະ ດ້ານສັງຄົມ ສາມາດສະຫລຸບ ແລະ ວິເຄາະຂໍ້ມູນ ສາເຫດທີ່ເປັນແນວໂນ້ມຂອງການເກີດພຶດຕິກຳຄວາມຮຸນແຮງຂອງທ້າວປອງໄດ້ດັ່ງຕໍ່ນີ້:

1. ສາເຫດດ້ານຕົນເອງ

ຈາກການສຳພາດ ແລະ ການສັງເກດເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ທ້າວປອງມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນເກີດຈາກຕົວຂອງລາວເອງຄື ມີທັດສະນະຄະຕິກ່ຽວກັບພຶດຕິກຳການໃຊ້ຄວາມຮຸນແຮງວ່າເປັນທີ່ຍອມຮັບໃນໝູ່ເພື່ອນເປັນການໃຫ້ຄວາມຊ່ວຍເຫຼືອໝູ່ເພື່ອນເມື່ອຖືກທຳຮ້າຍໃຊ້ເວລາວ່າງໄປກັບການທ່ຽວຫຼິ້ນກັບໝູ່ເພື່ອນປະກອບກັບອາລົມຂອງໄວລຸ້ນທີ່ໂມໂຫງ່າຍຂາດຄວາມອົດທົນອົດກັ້ນ ໃຫ້ຄວາມສຳຄັນກັບໝູ່ເພື່ອນຫລາຍຕ້ອງເຂົ້າໄປຊ່ວຍເຫຼືອໝູ່ເພື່ອນເມື່ອມີເຫດທະເລາະວິວາດ, ຄວບຄຸມອາລົມຕົນເອງບໍ່ໄດ້ມັກຫາເລື່ອງກໍກວນຜູ້ອື່ນ.

2. ສາເຫດດ້ານຄອບຄົວ

ຈາກການສັງເກດການສຳພາດ ແລະ ການຢ້ຽມຢາມເຮືອນເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ທ້າວປອງມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນເກີດຈາກການທີ່ພໍ່ແມ່ບໍ່ຄ່ອຍໃຫ້ຄວາມເອົາໃຈໃສລາວເທົ່າທີ່ຄວນເຮັດໃຫ້ຂາດຄວາມໄວ້ໃຈບໍ່ກ້າທີ່ຈະປຶກສາບັນຫາຂອງຕົນເອງ ມີເລື່ອງຜິດກັນກັບພໍ່ແມ່ ແລະ ອ້າຍຄວາມສຳພັນລະຫ່າງສະມາຊິກໃນຄອບຄົວຄ່ອນຂ້າງຫ່າງເຫີນ.

3. ສາເຫດທາງສັງຄົມ

ຈາກການສຳພາດ ແລະ ການສັງເກດເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ທ້າວປອງມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນເກີດຈາກອິດທິພົນຂອງກຸ່ມໝູ່ເພື່ອນລາວໃຫ້ຄວາມສຳຄັນກັບໝູ່ເພື່ອນຫຼາຍເມື່ອເພື່ອນມີເລື່ອງຕີກັນຕ້ອງເຂົ້າໄປຮ່ວມຕີນຳທຸກຄັ້ງທ້າວປອງມັກຕິດຕາມຮັບຊົມພາບກ່ຽວກັບນັກຮຽນຕີກັນທາງໂທລະທັດເລື່ອຍໆຈົນເກີດຄວາມຊິນຊາ ແລະ ມີທັດສະນະຄະຕິຕໍ່ພາບທີ່ໄດ້ຮັບຊົມວ່າຄວາມຮຸນແຮງໃນໄວຍລຸ້ນເປັນເລື່ອງທຳມະດາ ທ້າວປອງໃຊ້ເວລາໃນການຫຼິ້ນເກມອອນໄລຣທີ່ມີເນື້ອຫາກ່ຽວຂ້ອງກັບຄວາມຮຸນແຮງມື້ລະ 4 ຊົ່ວໂມງ ຈຶ່ງເປັນແນວໂນ້ມໃຫ້ທ້າວປອງຊຶມຊັບຮັບເອົາພຶດຕິກຳຄວາມຮຸນແຮງນັ້ນໄວ້ ແລະ ຍັງສົ່ງຜົນຕໍ່ຄວາມສຳພັນໃນຄອບຄົວໃຫ້ມີຄວາມຫ່າງເຫີນ.

ແນວທາງໃນການຊ່ວຍເຫຼືອຈາກການວິເຄາະແນວໂນ້ມທີ່ເປັນສາເຫດຂອງການເກີດພຶດຕິກຳຄວາມຮຸນແຮງຂອງທ້າວ ປອງທັງ 3 ດ້ານ ໄດ້ແກ່ ດ້ານຕົນເອງ, ດ້ານຄອບຄົວ ແລະ ດ້ານອິດທິພົນທາງສັງກຄົມຜູ້ວິໄຈໄດ້ດຳເນີນການຫາແນວທາງຊ່ວຍເຫຼືອດັ່ງຕໍ່ໄປນີ້.

1. ແນວທາງການຊ່ວຍເຫຼືອທີ່ໂຮງຮຽນ

1.1 ຄູແນະແນວທາງໃຫ້ມີການປັບປ່ຽນພຶດຕິກຳໃຫ້ມີຄວາມເໝາະສົມ ແລະ ມີກຄວາມຮັບຜິດຊອບຮູ້ຈັກຄຳນຶງເຖິງຜົນເສຍຂອງພຶດຕິກຳຄວາມຮຸນແຮງຂອງຕົນເອງມີຄວາມຮັບຜິດຊອບໃນຖານະລູກ ແລະ ການເປັນນັກຮຽນໃຫ້ຄວາມໝັ້ນໃຈ ແລະ ໃຫ້ກຳລັງໃຈຕະຫຼອດຈົນເອົາໃຈໃສ່ຢ່າງໃກ້ຊິດກັບທ້າວປອງ ເພື່ອໃຫ້ມີຄວາມອົບອຸ່ນເຊື່ອໝັ້ນໃນຕົນເອງ ສາມາດປັບປຸງພຶດຕິກຳໃຫ້ມີຄວາມເໝາະສົມຫຼຸດຈາກພຶດຕິກຳຄວາມຮຸນແຮງ.

1.2 ຂໍຄວາມຊ່ວຍເຫຼືອຈາກໝູ່ເພື່ອນໃນຫ້ອງໂດຍສະເພາະໝູ່ເພື່ອນສະໜິດຂອງທ້າວປອງ ເມື່ອມີເວລາວ່າງໃຫ້ເຮັດກິດຈະກຳທີ່ສ້າງສັນແທນທີ່ຈະໃຊ້ເວລາສ່ວນໃຫຍ່ໄປກັບການຍ່າງທ່ຽວ ຫລື ຫຼິ້ນເກມອອນໄລຣທີ່ມີເນື້ອຫາຄວາມຮຸນແຮງ.

2. ແນວທາງການຊ່ວຍເຫຼືອຢູ່ເຮືອນມີດັ່ງຕໍ່ໄປນີ້

2.1 ປຶກສາບັນຫາທີ່ເກີດຂຶ້ນກັບຜູ້ປົກຄອງຢູ່ເຮືອນຂອງຜູ້ຮັບການສຶກສາ ເພື່ອໃຫ້ເຂົ້າໃຈໃນຕົວຂອງ ທ້າວປອງຫຼາຍຂຶ້ນຂໍໃຫ້ພໍ່ແມ່ກັບອ້າຍໃຫ້ຄວາມຮັກຄວາມອົບອຸ່ນ ແລະ ໃຫ້ເວລາກັບລາວໃຫ້ຫຼາຍຂຶ້ນ ການທຳນາຍຜົນຈາກການສຶກສາບັນຫາຂອງທ້າວປອງ ພົບວ່າ ການມີພຶດຕິກຳຄວາມຮຸນແຮງ

ຂອງລາວນັ້ນມີແນວທາງໃນການຊ່ວຍເຫຼືອໃຫ້ປັບປຸງພຶດຕິກຳທີ່ບໍ່ເໝາະສົມໄດ້ຫາກທ້າວປອງໄດ້ຮັບຄວາມຮັກ ແລະ ການເອົາໃຈໃສ່ ໃຫ້ກຳລັງໃຈຈາກຄອບຄົວຫຼາຍຂຶ້ນຕະຫຼອດຈົນສະມາຊິກໃນຄອບຄົວໃຫ້ຄວາມຮ່ວມມືໃນແນວທາງການຊ່ວຍເຫຼືອເປັນອຢ່າງດີ.

- ຂໍ້ສະເໜີແນະ

1. ຂໍ້ສະເໜີແນະສຳລັບບຜູ້ຮັບການສຶກສາທ້າວປອງຄວນຄິດວ່າພຶດຕິກຳການໃຊ້ຄວາມຮຸນແຮງນັ້ນເປັນພຶດຕິກຳທີ່ບໍ່ເໝາະສົມ ແລະ ສິ່ງຜົນເສຍຕໍ່ຕົນເອງ ແລະ ສະມາຊິກໃນຄອບຄົວ ຄວນຫາເວລາເວົ້າກັບຜູ້ປົກຄອງນຳ ເພື່ອຄວາມໃກ້ຊິດ ແລະ ສ້າງບັນຍາກາດພາຍໃນຄອບຄົວໃຫ້ມີຄວາມອົບອຸ່ນເລືອກທີ່ຈະປະຕິເສດໝູ່ເພື່ອນເວລາໝູ່ເພື່ອນມີເລື່ອງບັນຫາກັບຄົນອື່ນ ເລືອກຄົບໝູ່ເພື່ອນທີ່ດີ ແລະ ມີກິດຈະກຳທີ່ສ້າງສັນຮ່ວມກັນ ແລະ ຂໍໃຫ້ປະຕິບັດຕາມແນວທາງໃນການຊ່ວຍເຫຼືອຢ່າງຈິງຈັງ.

2. ຂໍ້ສະເໜີແນະສຳລັບຜູ້ທີ່ກ່ຽວຂ້ອງມີດັ່ງຕໍ່ໄປນີ້

2.1 ສະມາຊິກໃນຄອບຄົວຄວນໃຫ້ກຳລັງໃຈໃນສິ່ງທີ່ທ້າວປອງເຮັດໄດ້ດີ ເພື່ອໃຫ້ລາວເກີດຄວາມພາກພູມໃຈໃນຕົນເອງ ໃຫ້ກຳລັງໃຈເມື່ອປັບປຸງພຶດຕິກຳໃຫ້ດີຂຶ້ນ ເພື່ອສ້າງຄວາມໝັ້ນໃຈໃນຕົນເອງ ໃຫ້ຄຳປຶກສາກັບຄູເມື່ອມີບັນຫາ.

2.2 ອາຈານປະຈຳຫ້ອງ ແລະ ອາຈານປະຈຳວິຊາ ຄວນໃຫ້ຄວາມສົນໃຈ ແລະ ເບິ່ງແຍງແບບຕໍ່ເນື່ອງ ແລະ ເຂົ້າໃຈຍອມຮັບຄວາມແຕກຕ່າງລະຫວ່າງບຸກຄົນ ຄວນໃຫ້ຄວາມຮັກກັບລາວຢ່າງຈິງໃຈເພື່ອໃຫ້ເກີດຄວາມໄວ້ວາງໃຈເຊື່ອໃຈບໍ່ຍ້ານຄູກ້າທີ່ຈະປຶກສາເລື່ອງພຶດຕິກຳຄວາມຮຸນແຮງຊຶມເຊົາ ແລະ ໃຫ້ກຳລັງໃຈເມືອທ້າວປອງສາມາດປັບປຸງພຶດຕິກຳຂອງຕົນເອງໃຫ້ດີຂຶ້ນ.

2.3 ໝູ່ເພື່ອນຂອງທ້າວປອງຄວນທົບທວນວ່າການຍົກພວກທຳຮ້າຍກັນເປັນພຶດຕິກຳທີ່ບໍ່ເໝາະສົມ ແລະ ຄຳນຶ່ງເຖິງຜົນເສຍທີ່ຈະຕາມມາ ແລະ ໃຫ້ກຳລັງໃຈເຊິ່ງກັນ ແລະ ກັນທີ່ຈະເລີກພຶດຕິກຳການທະເລາະວິວາດເຮັດກິດຈະກຳທີ່ສ້າງສັນເມືອມີເວລາວ່າງ.

## ກໍລະນີສຶກສາຄົນທີ 4 ທ້າວ ລຸນ ( ນາມສົມມຶດ )

ທ້າວ ລຸນ ໄລຍະເວລາທີ່ສຶກສາຕັ້ງແຕ່ວັນທີ 8 ຕຸລາ 2018 ເຖິງວັນທີ 14 ຕຸລາ 2018

- ລັກສະນະທົ່ວໄປ

ຈາກການສັງເກດພົບວ່າ ທ້າວ ລຸນ ເປັນຄົນຮູບຮ່າງຈ່ອຍສູງຜິວສີດຳແດງແຕ່ງຕົວສະອາດຮຽບຮ້ອຍ ໃນຂະນະໃຫ້ສຳພາດເວົ້າຈາຊັດເຈນສຽງດັງຟັງຊັດ ແລະ ສຸພາບ ເປັນຄົນອາລົມດີຍິ້ມແຍ້ມແຈ່ມໃສໃນໄລຍະທຳອິດບໍ່ຄ່ອຍໃຫ້ຂໍ້ມູນດ້ານທະເລາະວິວາດຫຼາຍປານໃດແຕ່ເມື່ອໄດ້ພົບກັນຫຼາຍຂຶ້ນນລາວຈຶ່ງເລີ່ມມີຄວາມໄວ້ວາງໃຈ ແລະ ໃຫ້ຂໍ້ມູນແບບຕໍ່ເນື່ອງດ້ວຍດີຕະຫຼອດໄລຍະເວລາໃນການສຳພາດ.

ຈາກການໃຊ້ເຕັກນິກການລວບລວມຂໍ້ມູນທັງ 6 ເຕັກນິກ ໄດ້ແກ່ ແບບສອບຖາມດ້ານສ່ວນບຸກຄົນ, ແບບສັງເກດ, ການຢ້ຽມຢາມເຮືອນ, ລະບຽນສະສົມ, ບັນທຶກປະຈຳວັນ ແລະ ການສຳພາດດັ່ງ 3 ດ້ານ ຄື ດ້ານສ່ວນຕົວ, ດ້ານຄອບຄົວ ແລະ ດ້ານສັງຄົມ ສາມາດສະຫຼຸບ ແລະ ວິເຄາະຂໍ້ມູນໄດ້ດັ່ງນີ້:

## 1. ຂໍ້ມູນຈາກແບບສອບຖາມ

ທ້າວ ລຸນ ອາຍຸ 15 ປີ ສຶກສາຢູ່ຊັ້ນມັດທະຍົມສຶກສາປີທີ 3 ມີອ້າຍນ້ອງ 2 ຄົນ ອາໄສຢູ່ກັບຍາດພີ່ ນ້ອງ.

## 2. ຂໍ້ມູນຈາກແບບສັງເກດ

ການວິໄຈໃນຄັ້ງນີ້ຜູ້ວິໄຈໄດ້ເຮັດການສັງເກດໃນຫ້ອງຮຽນວິຊາພາສາອັງກິດ ວັນທີ 8 ຕຸລາ 2018 ໃນການສັງເກດໃຊ້ເວລາ 30 ນາທີ ພົບວ່າ ທ້າວ ລຸນ ບໍ່ຄ່ອຍສົນໃຈໃນການຮຽນເວົ້າກັບໝູ່ເພື່ອນໃນຂະນະຮຽນບໍ່ຄ່ອຍມີສະມາທິໃນການຮຽນ ແລະ ໄດ້ເຮັດການສັງເກດນອກຫ້ອງຮຽນ ເວລາ 12.30-13.00. ໃນວັນດຽວກັນ ພົບວ່າ ທ້າວ ລຸນ  ກິນເຂົ້າໜົມກັບໝູ່ເພື່ອນໃນກຸ່ມຈຳນວນ 5 ຄົນ ເວົ້າຈາສຽງດັງແຂງກະດ້າງ ແລະ ບໍ່ສຸພາບກັບໝູ່ເພື່ອນຮ່ວມຫ້ອງຄົນອື່ນຈົນເຖິງເວລາເຂົ້າຮຽນ.

## 3. ຂໍ້ມູນຈາກການສຳພາດ

### 3.1. ຂໍ້ມູນດ້ານບຸກຄົນ

#### 3.1.1 ປະຫວັດສ່ວນຕົວ

ຈາກການສຳພາດ ທ້າວ ລຸນ ເຮັດໃຫ້ຮູ້ວ່າ ທ້າວ ລຸນ ມີອາຍຸ 15 ປີ ກຳລັງສຶກສາຢູ່ຊັ້ນມັດຍົມສຶກສາປີທີ 3 ໃນມັດທະຍົມຕົ້ນສາທິດວິທະຍາໄລຄູສາລະວັນ ທ້າວ ລຸນ ມີຖິ່ນເດີມເປັນຄົນຕ່າງແຂວງປັດຈຸບັນອາໄສຢູ່ກັບຍາດຄື ລຸງກັບປ້າ ສ່ວນພໍ່ແມ່ ແລະ ອ້າຍ ນັ້ນອາໄສຢູ່ທີ່ຕ່າງແຂວງ ທ້າວ ລຸນ ຍ້າຍມາຮຽນຢູ່ແຂວງສາລະວັນຕັ້ງແຕ່ຊັ້ນປະຖົມສຶກສາປີທີ 5 ເພາະພໍ່ແມ່ຕ້ອງການໃຫ້ໄດ້ຮັບການສຶກສາທີ່ດີ ລາວເປັນນັກກິລາຂອງໂຮງຮຽນ ເວລາວ່າງກໍຈະມັກຊ້ອມທີ່ໂຮງຮຽນກັບໝູ່ເພື່ອນໆ ທ້າວລຸນເລົ່າວ່າຊ່ວງນີ້ຈະຄຽດກັບເລື່ອງການຮຽນເພາະຕ້ອງກຽມຕົວສອບ ເມື່ອມີບັນຫາເລື່ອງການຮຽນ ແລະ ເລື່ອງທະເລາະວິວາດທີ່ໂຮງຮຽນຈະປຶກສາປ້າເປັນສ່ວນໃຫຍ່ບໍ່ຄ່ອຍໄດ້ພົບກັບພໍ່ ແລະ ແມ່ເພາະຢູ່ຫ່າງໄກຈະໄດ້ເວົ້າກັນບາງຄັ້ງທາງໂທລະສັບ.

#### 3.1.2 ດ້ານທັດສະນະຄະຕິຕໍ່ພຶດຕິກຳຄວາມຮຸນແຮງ

ຈາກການສຳພາດພົບວ່າ ທ້າວ ລຸນ ຄິດວ່າການມີພຶດຕິກຳຄວາມຮຸນແຮງເປັນເລື່ອງທຳມະດາຂອງເດັກຜູ້ຊາຍອາດຈະມີຕີກັນບາງຄັ້ງບາງຄາວເປັນເລື່ອງຂອງການຍອມຮັບໃນກຸ່ມໝູ່ເພື່ອນ ແລະ ເປັນເລື່ອງຂອງ ຄວາມເກັ່ງມີເລື່ອງຂອງສັກສີເປັນການສະແດງອອກວ່າບໍ່ຍອມໃຜ.

### 3.1.3 ການໃຊ້ເວລາວ່າງ

ຈາກການສມັ ພາດນີ້ພບວ່າ ນາຍຮຸ່ງອຣຸນ ມັກໃຊ້ເວລາວ່າງ ໄປຍ່າງຫລິ້ນທີ່ຫ້າງສັບສິນຄ້າ ກບັເພື່ອນໆໃນກລ່ມຸ ແລະມັກຫລິ້ນເກມສ໌ອິນໄລນ໌ດງັ່ອໃນຮ້ານເກມສ໌ທີ່ຫ້າງສັບສິນຄ້າ ແລະທີ່ບ້ານ ສ່ວນຫລາຍ ໄມເ່ດ້ທໍາກິດຈະກໍາຫຍັງກບັສະມາຊິກໃນະຄອບອືບຄຮົວ ແລະມັກເລ່ນກີລາເທກວນ໌ໂດທົ່ນງັ ເລີກຮຽນ

## 3.2. ຂໍ້ມູນດ້ານຄອບຄົວ

ທ້າວ ລຸນ ມີອ້າຍນ້ອງ 2 ຄົນ ຄືນ້ອງຊາຍອາໄສຢູ່ກັບພໍ່ ແລະ ແມ່ຢູ່ຕ່າງແຂວງ ທ້າວ ລຸນ ອາໄສຢູ່ກັບປ້າ ແລະ ລຸງຢູ່ສາລະວັນແລ້ວເປັນເວລາ 5 ປີ ເວລາມີບັນຫາບໍ່ສະບາຍໃຈຈະປຶກສາກັບປ້າຜູ້ປົກຄອງມີຄວາມເຂັ້ມງວດເລື່ອງການຮຽນຫລາຍຄາດຫວັງໃຫ້ລາວມີຜົນການຮຽນທີ່ດີເຮັດໃຫ້ຮູ້ສຶກຄຽດກັບການຮຽນຕັ້ງແຕ່ມາອາໄສຢູ່ກັບລຸງ ແລະ ປ້າກໍເຮັດໃຫ້ຄວາມສໍາພັນ ແລະ ຄວາມໃກ້ຊິດກັບພໍ່ແມ່ນັ້ນຫຼຸດລົງເພາະໄດ້ເວົ້າກັບພໍ່ແມ່ບາງຄັ້ງທາງໂທລະສັບ ທ້າວ ລຸນເລົ່າວ່າຕົນຮູ້ສຶກສະບາຍໃຈເມື່ອມາພັກອາໄສກັບລຸງ ແລະ ປ້າເພາະພໍ່ກັບແມ່ມັກຜິດກັນຕົບຕີກັນເປັນປະຈໍາຕົນເອງຈຶ່ງມີຄວາມຍິນດີທີ່ຈະພັກອາໄສຢູ່ກັບປ້າ ແລະ ລຸງ.

## 3.3. ຂໍ້ມູນທາງສັງຄົມ

### 3.3.1 ດ້ານໝູ່ເພື່ອນ

ຈາກການສໍາພາດ ທ້າວ ລຸນ ເຮັດໃຫ້ຮູ້ວ່າມີໝູ່ເພື່ອນສະໜິດ 5 ຄົນ ແລະ ເປີດກຸ່ມຈະໄປໃສມາໃສນໍາກັນຕະຫລອດ ໝູ່ເພື່ອນມີຄວາມຈິງໃຈຢູ່ກັບໝູ່ເພື່ອນແລ້ວສະບາຍໃຈ ໝູ່ເພື່ອນໃນກຸ່ມທຸກຄົນເປັນເດັກຮຽນດີຂອງຫ້ອງມີເກດສະເລ່ຍສູງທຸກຄົນ ທ້າວລຸນ ບອກວ່າເທີມແລ້ວເກດສະເລ່ຍຜົນການຮຽນຕົກມາ 3.5 ຈາກປົກກະຕິປະມານ 3.7 ເພາະຊ້ອມກິລາຫລາຍເກີນໄປແຕເທີມນີ້ດຈະທຸ່ມເທໃຫ້ກັບການຮຽນຫລາຍຂຶ້ນ ແລະ ເວລາມີເລື່ອງບໍ່ສະບາຍໃຈໝູ່ເພື່ອນຄືຄົນທີ່ພ້ອມຮັບຟັງທຸກຢ່າງເຮັດໃຫ້ກ້າທີ່ຈະເປີດເຜີຍທຸກເລື່ອງກັບໝູ່ເພື່ອນ ແລະ ຮູ້ສຶກສະບາຍໃຈເມື່ອໄດ້ປຶກສາບັນຫາຕ່າງໆກັບໝູ່ເພື່ອນ.

### 3.3.2 ຈາກການສໍາພາດໝູ່ເພື່ອນສະໜິດຢູ່ໂຮງຮຽນ

ທ້າວ ລຸນ ຈໍານວນ 3 ຄົນ ເຮັດໃຫ້ຮູ້ວ່າ ລຸນ ເປັນຄົນຮັກໝູ່ເພື່ອນມີຄວາມຈິງໃຈກັບໝູ່ເພື່ອນມັກຊ່ວຍເຫລືອໝູ່ເພື່ອນທັງເລື່ອງຮຽນ ແລະ ເລື່ອງຕີກັນທະເລາະວິວາດ ຖ້າຫາກໝູ່ເພື່ອນໃນກຸ່ມມີບັນຫາເລື່ອງຕີກັນລາວຈະເຂົ້າມາຊ່ວຍເຫລືອຢູ່ສະເໝີ.

### 3.3.3 ຈາກການສໍາພາດອາຈານປະຈໍາວິຊາ ແລະ ປະຈໍາຊັ້ນ

ພົບວ່າ ທ້າວ ລຸນ ເປັນເດັກຄ່ອນຂ້າງມີຜົນການຮຽນດີເວລາຢູ່ໃນຫ້ອງຮຽນໃຫ້ຄວາມສົນໃຈໃນການຮຽນດີແຕ່ເປັນເດັກຄ່ອນຂ້າງຂີ້ດື້ມັກໃຊ້ອາຈາແຂງກະດ້າງກັບໝູ່ເພື່ອນໃນຫ້ອງ ແລະ ມັກຍອກໝູ່ເພື່ອນ.

#### 3.3.4 ຈາກການສຳພາດອາຈານຝ່າຍປົກຄອງ

ພົບວ່າ ທ້າວ ລຸນ ມີເລື່ອງຕີກັນທະເລາະວິວາດຫຼາຍຄັ້ງທີ່ບໍລິເວນຫ້ອງຮຽນໃນຊ່ວງພັກກາງເວັນ.

#### 3.3.5 ດ້ານສື່

ຈາກການສຳພາດ ທ້າວ ລຸນ ເຮັດໃຫ້ຮູ້ວ່າມັກຕິດຕາມຂ່າວນັກຮຽນຕີກັນຈາກໂທລະທັດມີຄວາມຄິດເຫັນວ່າການໃຊ້ຄວາມຮຸນແຮງເປັນເລື່ອງຂອງສັກສີ ເປັນທີ່ຍອມຮັບຂອງກຸ່ມໝູ່ເພື່ອນເປັນຄວາມກ້າສະແດງເຖິງຄວາມເຂັ້ມແຂງບໍ່ຄອນໃຫ້ໃຜມາຂົ່ມເຫັງ.

#### 3.3.6 ດ້ານເກມອອນໄລ

ຈາກການສຳພາດ ທ້າວ ລຸນ ເຮັດໃຫ້ຮູ້ວ່າ ຫລິ້ນເກມຕໍ່ສູ້ກັນມີເນື້ອຫາຄວາມຮຸນແຮງ ຫລິ້ນທຸກມື້ ມື້ລະ 2 ຊົ່ວໂມງຕັ້ງແຕ່ເວລາປະມານ 18.00. ເຖິງ ເວລາ 20.00 . ການຫຼີ້ນເກມນັ້ນສາມາດເຮັດໃຫ້ຕົນເອງຄາຍຄວາມຄຽດຈາກເລື່ອງການຮຽນ.

## 4. ຂໍ້ມູນຈາກການຢ້ຽມຢາມເຮືອນ

### 4.1. ຈາກການສຳພາດ ແລະ ການສັງເກດ

ຈາກການສຳພາດ ແລະສັງເກດເຮັດໃຫ້ຮູ້ວ່າ ທ້າວ ລຸນ ພັກອາໄສຢູ່ທີ່ພັກແຫ່ງໜຶ່ງໃກ້ກັບສະຖານທີ່ສຶກສາບໍລິເວນໃກ້ຄຽງດ້ານຫຼັງງທີ່ພັກເປັນຄອງທີ່ມີນ້ຳເປັນສີດຳ ແລະ ສິ່ງກິ່ນເໝັນ ຫ່າງອອກໄປດ້ານຂ້າງຂອງຕົວອາຄານເປັນຮ້ານຂາຍອາຫານ ແລະ ຮ້ານເກມຄອມພິວເຕີ ມີຄົນຄ່ອນຂ້າງໜາແໜ້ນຕົວອາຄານຢູ່ໃກ້ກັບທົນທາງ ຈຶ່ງເຮັດໃຫ້ມີສຽງດັງອຶກທຶກຄຶກໂຄມ ແລະ ມີກິ່ນຂອງຄົວກິນໂດຍອ້ອມບໍລິເວນດ້ານລຸມຂອງຕົວອາຄານພາຍໃນຫ້ອງພັກຄ່ອນຂ້າງຄັບແຄບລັກສະນະເປັນ 1 ຫ້ອງນອນ 1 ຫ້ອງນ້ຳ ທີ່ນອນຖືກເກັບພັບໄວ້ຢ່າງເປັນລະບຽບ ແລະ ໃຊ້ເປັນຫ້ອງນັ່ງຫລິ້ນ ພື້ນທີ່ດ້ານຫຼັງຫ້ອງຖືກຈັດໃຫ້ເປັນຫ້ອງຄົວກິນ ພາຍໃນທີ່ພັກມີຄວາມສະອາດພໍໃຊ້ມີເຄື່ອງໃຊ້ໄຟຟ້າຕູ້ເຢັນພັດລົມເຄື່ອງຄອມພິວເຕີ ແລະ ໂທລະທັດ.

### 4.2. ຈາກການສຳພາດປ້າຂອງທ້າວ ລຸນ

ພົບວ່າ ທ້າວ ລຸນ ບໍ່ຄ່ອຍໄດ້ຊ່ວຍວຽກເຮືອນ ມື້ພັກບໍ່ຍອມຊັກເສື້ອຜ້າຂອງຕົນເອງອອກໄປທ່ຽວຫລິ້ນກັບໝູ່ເພື່ອນທີ່ແຫ່ງອື່ນໆ ເລື່ອງຮຽນບໍ່ຄ່ອຍມີບັນຫາຕົນເອງຈະຄອຍຖ້າເຕືອນໃຫ້ເຮັດວຽກບ້ານ ແລະ ອ່ານໜັງສືກຽມສອບທຸກຄັ້ງເພາະພໍ່ ແລະ ແມ່ ຂອງລາວຝາກຝັງໃຫ້ຊ່ວຍເບິ່ງແຍງເຂັ້ມງວດ ກວດກາເລື່ອງຮຽນເປັນພິເສດຈະມີບັນຫາຄືເລື່ອງຕີກັນ ແລະ ທະເລາະວິວາດ.

ຈາກການຢ້ຽມຢາມເຮືອນຂອງທ້າວ ລຸນ ພໍສະຫລຸບໄດ້ວ່າ ສະຖານທີ່ພັກອາໄສຄ່ອນຂ້າງຄັບແຄບ ບໍລິເວນໂດຍອ້ອມຕົວອາຄານບໍ່ຄ່ອຍສະອາດຮຽບຮ້ອຍຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສະອາດພາຍໃນຫ້ອງພັກອາໄສພໍໃຊ້ ຄວາມສຳພັນພາຍໃນລະຫວ່າງສະມາຊິກໃນຄອບຄົວຄ່ອນຂ້າງຫ່າງ

ເຫັນ ທ້າວ ລຸນ ຕ້ອງການເປັນອິດສະຫລະບໍ່ຢາກຖືກບັງຄັບເລື່ອງການຮຽນຈຶ່ງຕ້ອງໜີໄປທ່ຽວລິ້ນກັບໝູ່ເພື່ອນ.

## 5. ຂໍ້ມູນຈາກລະບຽບສະສົມ

ພົບວ່າ ທ້າວ ລຸນມີຜົນການຮຽນດີບໍ່ມີບັນຫາດ້ານສຸກຂະພາບ, ອາໄສຢູ່ກັບຍາດພີ່ນ້ອງ, ຖິ່ນເດີມເປັນຄົນຕ່າງແຂວງ.

## 6. ຂໍ້ມູນຈາກບັນທຶກປະຈໍາວັນ

ຈາກການບັນທຶກປະຈໍາວັນຕະຫຼອດໄລຍະເວລາ 1 ອາທິດພົບວ່າ ທ້າວ ລຸນ ມີກິດຈະກໍາປະຈໍາວັນ ຄ້າຍຄືກັນຕື່ນນອນເວລາ 07.00 . ຈາກນັ້ນພາລະກິດສ່ວນຕົວແລ້ວເດີນທາງໄປໂຮງຮຽນ ຕອນເລີກຮຽນຊ້ອມຫລິ້ນກິລາທີ່ໂຮງຮຽນ ແລະ ໄປຍ່າງຫລິ້ນບ່ອນອື່ນໆກັບໝູ່ເພື່ອນ ກັບບ້ານຮັບປະທານອາຫານເຢັນແລ້ວຫລິ້ນເກມອ໋ອນໄລຣເວລາ 18.00-20.00. ແລ້ວເບິ່ງໂທລະທັດ, ເຮັດວຽກບ້ານ ແລະ ເຂົ້ານອນເວລາ 23.00 .

ຈາກການບັນທຶກປະຈໍາວັນສະຫລຸບໄດ້ວ່າ ທ້າວ ລຸນ ມັກຫລິ້ນກິລາ ແລະ ໄປຍ່າງຫລິ້ນກັບໝູ່ເພື່ອນເຮັດວຽກບ້ານ ແລະ ເກມອ໋ອນໄລຣ.

## 7. ຂໍ້ມູນດ້ານພຶດຕິກໍາຄວາມຮຸນແຮງ

ຈາກການສໍາພາດ ທ້າວ ລຸນ ເຮັດໃຫ້ຮູ້ວ່າ ລາວກັບຄົນທີ່ມີເລື່ອງຕີກັນພາຍໃນຫ້ອງຮຽນຂອງຕົນເອງມີສາເຫດມາຈາກການບໍ່ມັກໜ້າກັນ ຄົນທີ່ມີເລື່ອງກັບລາວມີອາຍຸລຸ້ນດຽວກັນແຕ່ຢູ່ຄົນລະຫ້ອງ ເມື່ອໄປເຖິງ ທ້າວ ລຸນເປັນຄົນຊົກເຂົ້າທີ່ໜ້າຂອງເຂົາເຈົ້າກ່ອນ ຕີກັນໄປປະມານ 5 ນາທີ ໝູ່ເພື່ອນຂອງເຂົາເຈົ້າອີກ 5 ຄົນກໍເຂົ້າລຸມທໍາຮ້າຍຕົນ ຈຶ່ງເຮັດໃຫ້ໝູ່ເພື່ອນຂອງຕົນເອງອີກ 4 ຄົນເຂົ້າມາດຕີຊ່ວຍແລ້ວອາຈານຝ່າຍປົກຄອງກໍຂຶ້ນມາພົບ ແລະ ນໍາຕົວໄປອົບຮົມ ດ້ານພຶດຕິກໍາ ທ້າວ ລຸນ ມີເລືອດໄຫຼທີ່ດັງ ແລະ ມີຮອຍຊໍ້າຕາມໃບໜ້າ ແລະ ລໍາຕົວ.

- ການວິເຄາະຂໍ້ມູນ

ຈາກການໃຊ້ເຕັກນິກການລວບລວມຂໍ້ມູນທັງ 6 ເຕັກນິກໄດ້ແກ່ ແບບສອບຖາມດ້ານສ່ວນບຸກຄົນ, ແບບສັງເກດ, ການຍ້ຽມຢາມເຮືອນ, ລະບຽບສະສົມ, ບັນທຶກປະຈໍາວັນ ແລະ ການສໍາພາດດັ່ງ 3 ດ້ານ ຄື ດ້ານສ່ວນຕົວ, ດ້ານຄອບຄົວ ແລະ ດ້ານສັງຄົມ ສາມາດສະຫລຸບ ແລະ ວິເຄາະຂໍ້ມູນ ສາເຫດທີ່ເປັນແນວໂນ້ມຂອງການເກີດພຶດຕິກໍາຄວາມຮຸນແຮງທ້າວລຸນໄດ້ດັ່ງຕໍ່ນີ້:

1. ສາເຫດດ້ານຕົນເອງ

ຈາກການສໍາພາດ ແລະ ການສັງເກດເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ ທ້າວ ລຸນ ມີພຶດຕິກໍາຄວາມຮຸນແຮງໃນໂຮງຮຽນເກີດຈາກຕົວັຂອງລາວເອງຄື ມີທັດສະນຄະຕິກ່ຽວກັບພຶດຕິກໍາການ

ໃຊ້ຄວາມຮຸນແຮງວ່າເປັນທີ່ຍອມຮັບໃນໝູ່ເພື່ອນເປັນການໃຫ້ຄວາມຊ່ວຍເຫລືອໝູ່ເພື່ອນເມື່ອຖືກທຳຮ້າຍປະກອບກັບອາລົມຂອງໄວລຸ້ນທີ່ໃນໂຫງ່າຍຂາດຄວາມອົດທົນໃຫ້ຄວາມສຳຄັນກັບໝູ່ເພື່ອນຫລາຍຕ້ອງເຂົ້າໄປຊ່ວຍເຫຼືອໝູ່ເພື່ອນເມື່ອມີເຫດທະເລາະວິວາດກັນ.

2. ສາເຫດດ້ານຄອບຄົວ

ຈາກແບບສອບຖາມການສັງເກດ, ການສຳພາດ ແລະ ການຢ້ຽມຢາມເຮືອນເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ ທ້າວລຸນ ມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນເກີດຈາກພໍ່ແມ່ບໍ່ໄດ້ເອົາໃຈໃສ່ເທົ່າທີ່ຄວນພັກອາໄສກັບຍາດ ຜູ້ປົກຄອງເຂັ້ມງວດກວດກາເລື່ອງຜົນການຮຽນ ແລະ ລາວບໍ່ມີຫ້ອງພັກອາໄສທີ່ເປັນສ່ວນຕົວຕ້ອງການອິດສະຫລະມັກໜີໄປທ່ຽວຫຼິ້ນກັບໝູ່ເພື່ອນໃນມື້ພັກ.

3. ສາເຫດທາງສັງຄົມ

ຈາກການສຳພາດ ແລະ ການສັງເກດເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມທຳໃຫ້ທ້າວ ລຸນ ມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນເກີດຈາກອິດທິພົນຂອງກຸ່ມໝູ່ເພື່ອນ ທ້າວລຸນໃຫ້ຄວາມສຳຄັນກັບໝູ່ເພື່ອນ ຫລາຍເມື່ອໝູ່ເພື່ອນມີເລື່ອງຕີກັນຕ້ອງເຂົ້າໄປຮ່ວມທຸກຄັ້ງ ລາວໄດ້ຮັບຊົມພາບກ່ຽວກັບນັກຮຽນຕີກັນທາງໂທລະທັດຫຼາຍຄັ້ງ ຈົນເກີດຄວາມຊິນຊາ ແລະ ມີທັດສະນະຄະຕິຕໍ່ພາບທີ່ໄດ້ຮັບຊົມວ່າຄວາມຮຸນແຮງໃນໄວລຸ້ນເປັນເລື່ອງທຳມະດາ ເປັນການສະແດງອອກເຖິງຄວາມເກັ່ງ ແລະ ກ້າຫານບໍ່ຍອມໃຫ້ໃຜຂົ່ມເຫັງ ທ້າວລຸນໃຊ້ເວລາໃນການຫຼິ້ນເກມອ່ອນໄລທີ່ມີເນື້ອຫາກ່ຽວຂ້ອງກັບຄວາມຮຸນແຮງມື້ລະ 2 ຊົ່ວໂມງຈຶ່ງເປັນແນວໂນ້ມໃຫ້ລາວຊຶມຊັບຮັບເອົາພຶດຕິກຳຄວາມຮຸນແຮງນັ້ນໄວ້ ແລະ ຍັງສົ່ງຜົນໃຫ້ລາວກັບສະມາຊິກໃນຄອບຄົວມີຄວາມສຳພັນທີ່ຫ່າງເຫີນ.

- **ແນວທາງໃນການຊ່ວຍເຫຼືອ**

ຈາກການວິເຄາະແນວໂນ້ມທີ່ເປັນສາເຫດຂອງການເກີດພຶດຕິກຳຄວາມຮຸນແຮງຂອງ ທ້າວ ລຸນທັງ 3 ດ້ານ ໄດ້ແກ່ ດ້ານຕົນເອງ, ດ້ານຄອບຄົວ ແລະ ດ້ານອິດທິພົນທາງສັງຄົມຜູ້ວິໄຈໄດ້ດຳເນີນການຫາແນວທາງ ຊ່ວຍເຫຼືອດັ່ງຕໍ່ໄປນີ້:

1. ການຊ່ວຍເຫຼືອຢູ່ໂຮງຮຽນ

1.1 ຄູແນະແນວທາງໃຫ້ມີການປັບປ່ຽນພຶດຕິກຳໃຫ້ມີຄວາມເໝາະສົມ ແລະ ມີຄວາມຮັບຜິດຊອບຮູ້ຈັກທົບທວນເຖິງຜົນເສຍຂອງພຶດຕິກຳຄວາມຮຸນແຮງຂອງຕົນເອງ ມີຄວາມຮັບຜິດຊອບໃນຖານະລູກ ແລະການເປັນນັກຮຽນ ໃຫ້ຄວາມໝັ້ນໃຈ ແລະ ໃຫ້ກຳລັງໃຈຕະຫລອດຈົນເອົາໃຈໃສ່ແບບໃກ້ຊິດກັບທ້າວ ລຸນ ເພື່ອໃຫ້ມີຄວາມອົບອຸ່ນ ເຊື່ອໝັ້ນໃນຕົນເອງສາມາດປັບປຸງພຶດຕິກຳໃຫ້ມີຄວາມເໝາະສົມຫຼຸດພຶດຕິກຳຄວາມຮຸນແຮງ.

1.2 ຂໍຄວາມຊ່ວຍເຫຼືອຈາກໝູ່ເພື່ອນໃນຫ້ອງໂດຍສະເພາະໝູ່ເພື່ອນສະໜິດຂອງ ທ້າວ ລຸນ ເມື່ອມີເວລາວ່າງໃຫ້ເຮັດກິດຈະກຳທີ່ສ້າງສັນແທນທີ່ຈະໃຊ້ເວລາສ່ວນໃຫຍ່ໄປກັບການຍ່າງທ່ຽວ ຫລື ຫຼິ້ນເກມອ່ອນໄລທີ່ມີເນື້ອຫາຄວາມຮຸນແຮງ.

2. ການຊ່ວຍເຫຼືອຢູ່ເຮືອນມີດັ່ງຕໍ່ໄປນີ້

2.1 ປຶກສາບັນຫາທີ່ເກີດຂື້ນກັບຜູ້ປົກຄອງຢູ່ເຮືອນຂອງຜູ້ຮັບການສຶກສາເພື່ອໃຫ້ເຂົ້າໃຈໃນຕົວ ທ້າວ ລຸນ ຫລາຍຂຶ້ນຂໍໃຫ້ພໍ່ກັບແມ່ໃຫ້ຄວາມຮັກຄວາມອົບອຸ່ນ ແລະ ໃຫ້ເວລາກັບ ທ້າວ ລຸນ ໃຫ້ຫລາຍຂຶ້ນ.

- ການທໍານາຍຜົນ

ຈາກການສຶກສາບັນຫາຂອງ ທ້າວ ລຸນ ພົບວ່າການມີພຶດຕິກໍາຄວາມຮຸນແຮງຂອງ ທ້າວ ລຸນ ນັ້ນມີແນວທາງໃນການຊ່ວຍເຫລືອໃຫ້ປັບປຸງພຶດຕິກໍາທີ່ບໍ່ເໝາະສົມໄດ້ຫາກ ທ້າວລຸນ ໄດ້ຮັບຄວາມຮັກ ແລະ ການເອົາໃຈໃສ່ໃຫ້ກໍາລັງໃຈຈາກຄອບຄົວຫລາຍຂຶ້ນຕະຫລອດຈົນສະມາຊິກໃນຄອບຄົວໃຫ້ຄວາມຮ່ວມມືໃນແນວທາງການຊ່ວຍເຫຼືອເປັນຢ່າງດີ.

- ຂໍ້ສະເໜີແນະ

1. ຂໍ້ສະເໜີແນະສໍາລັບຜູ້ຮັບການສຶກສາ.

ທ້າວ ລຸນ ຄວນທົບທວນວ່າພຶດຕິກໍາການໃຊ້ຄວາມຮຸນແຮງນັ້ນເປັນພຶດຕິກໍາທີ່ບໍ່ເໝາະສົມ ແລະ ສິ່ງຜົນເສຍຕໍ່ຕົນເອງ ແລະ ສະມາຊິກໃນຄອບຄົວຄວນຫາເວລາເວົ້າກັບຜູ້ປົກຄອງ ເພື່ອຄວາມໃກ້ຊິດ ແລະ ສ້າງບັນຍາກາດພາຍໃນເຮືອນໃຫ້ມີຄວາມອົບອຸ່ນເລືອກທີ່ຈະປະຕິເສດໝູ່ເພື່ອນເວລາໝູ່ເພື່ອນມີເລື່ອງຕີກັນກັບຄົນອື່ນເລືອກຄົບໝູ່ເພື່ອນທີ່ດີ ແລະ ມີກິດຈະກໍາທີ່ສ້າງສັນຮ່ວມກັນ ແລະ ຂໍໃຫ້ປະຕິບັດຕາມແນວທາງໃນ ການຊ່ວຍເຫຼືອອແບບຈິງຈັງ.

2. ຂໍ້ສະເໜີແນະສໍາລັບຜູ້ທີ່ກ່ຽວຂ້ອງມີດັ່ງຕໍ່ໄປນີ້

2.1 ສະມາຊິກໃນຄອບຄົວຄວນໃຫ້ກໍາລັງໃຈໃນສິ່ງທີ່ ທ້າວ ລຸນ ເຮັດໄດ້ດີ ເຊັ່ນການຫລິ້ນກິລາ ເພື່ອໃຫ້ ລາວເກີດຄວາມພາກພູມໃຈໃນຕົນເອງໃຫ້ກໍາລັງໃຈເມື່ອປັບປຸງພຶດຕິກໍາໃຫ້ດີຂຶ້ນເພື່ອສ້າງຄວາມໝັ້ນໃຈໃນຕົນເອງໃຫ້ຄໍາປຶກສາກັບທ້ວລຸນ ເມື່ອມີບັນຫາພໍ່ແມຄວນໃຫ້ເວລາກັບລູກໃຫ້ຫລາຍຂຶ້ນ.

2.2 ອາຈານປະຈໍາຊັ້ນແນະແນວ ແລະ ອາຈານປະຈໍາວິຊາ ຄວນໃຫ້ຄວາມສົນໃຈ ແລະ ເບິ່ງແຍງຢ່າງຕໍ່ເນື່ອງ ແລະ ເຂົ້າໃຈຍອມຮັບຄວາມແຕກຕ່າງລະຫວ່າງບຸກຄົນຄວນໃຫ້ຄວາມຮັກກັບເດັກແບບຈິງໃຈ ເພື່ອໃຫ້ເກີດຄວາມໄວ້ວາງໃຈເຊື່ອໃຈບໍ່ຢ້ານຄູ ກ້າທີ່ຈະປຶກສາເລື່ອງພຶດຕິກໍາຄວາມຮຸນແຮງຊົມເຊີຍ ແລະ ໃຫ້ ກໍາລັງໃຈເມື່ອລາວສາມາດປັບປຸງພຶດຕິກໍາຂອງຕົນເອງໃຫ້ດີຂຶ້ນ.

2.3 ໝູ່ເພື່ອນຂອງ ທ້າວລຸນ ຄວນທົບທວນວ່າການຍົກພວກລຸມທໍາຮ້າຍກັນເປັນພຶດຕິກໍາທີ່ບໍ່ເໝາະສົມ ແລະ ຕໍານຶ່ງເຖິງຜົນເສຍທີ່ຈະຕາມມາ ແລະ ໃຫ້ກໍາລັງໃຈເຊິ່ງກັນ ແລະ ກັນທີ່ຈະເລີກພຶດຕິກໍາການທະເລາະວິວາດເຮັດກິດຈະກໍາທີ່ສ້າງສັນເມື່ອມີເວລາວ່າງ.

## ກໍລະນີສຶກສາຄົນທີ 5 ນາງ ຟ້າໃສ ( ນາມສົມມົດ )

ນາງ ຟ້າໃສ ໄລຍະເວລາທີ່ສຶກສາຕັ້ງແຕ່ວັນທີ 15 ຕຸລາ 2018 ເຖິງວັນທີ 21 ຕຸລາ 2018.

- **ລັກສະນະທົ່ວໄປ**

ຈາກການສັງເກດພົບວ່າ ນາງຟ້າໃສ ເປັນຄົນຮູບຮ່າງນ້ອຍຜິວຂາວແຕ່ງຕົວສະອາດຮຽບຮ້ອຍໃນຂະນະໃຫ້ສຳພາດເວົ້າຈາສຽງດັງຟັງຊັດ ແລະ ສຸພາບ ເປັນຄົນອາລົມດີຍິ້ມແຍ້ມແຈ່ມໃສໃນໄລຍະທຳອິດບໍ່ຄ່ອຍໃຫ້ຂໍ້ມູນດ້ານທະເລາະວິວາດເທົ່າທີ່ຄວນ ແຕ່ເມື່ອໄດ້ພົບກັນຫຼາຍຂຶ້ນ ນາງຟ້າໃສຈຶ່ງເລີ່ມມີຄວາມໄວ້ວາງໃຈ ແລະ ໃຫ້ຂໍ້ມູນຢ່າງຕໍ່ເນື່ອງດ້ວຍດີຕະຫລອດໄລຍະເວລາໃນການສຳພາດ.

ຈາກການໃຊ້ເຕັກນິກການລວບລວມຂໍ້ມູນທັງ 6 ເຕັກນິກໄດ້ແກ່ ແບບສອບຖາມດ້ານສ່ວນບຸກຄົນ, ແບບສັງເກດ, ການຢ້ຽມຢາມເຮືອນ, ລະບຽບສະສົມ, ບັນທຶກປະຈຳວັນ ແລະ ການສຳພາດດັ່ງ 3 ດ້ານ ຄື ດ້ານສ່ວນຕົວ, ດ້ານຄອບຄົວ ແລະ ດ້ານສັງຄົມ ສາມາດສະຫລຸບ ແລະ ວິເຄາະຂໍ້ມູນໄດ້ດັ່ງນີ້:

## 1. ຂໍ້ມູນຈາກແບບສອບຖາມ

ນາງ ຟ້າໃສ ອາຍຸ 14 ປີ ມີອ້າຍນ້ອງ 2 ຄົນອາໄສຢູ່ກັບແມ່ພໍ່ລ້ຽງ ແລະ ແມ່ເຖົ້າ.

## 2. ຂໍ້ມູນຈາກແບບສັງເກດ

ການວິໄຈໃນຄັ້ງນີ້ຜູ້ວິໄຈໄດ້ເຮັດການສັງເກດໃນຫ້ອງຮຽນລາຍວິຊາ ວັນທີ 15 ຕຸລາ 2018 ໃນການສັງເກດໃຊ້ເວລາ 30 ນາທີ ພົບວ່າ ນາງຟ້າໃສ ບໍ່ຄ່ອຍສົນໃຈໃນການຮຽນໂສກັນກັບໝູ່ເພື່ອນໃນຂະນະຮຽນ ບໍ່ຄ່ອຍມີສະມາທິໃນການຮຽນ ສິ່ງກິດຈະກຳບໍ່ທັນໃນຊົ່ວໂມງຮຽນ ແລະ ໄດ້ເຮັດການສັງເກດນອກຫ້ອງຮຽນ ເວລາ 12.30-13.00. ໃນວັນດຽວກັນ ພົບວ່າ ນາງຟ້າໃສ ໄປຫາຊື້ແນວກິນກາງເວັນທີ່ຂ້າງນອກໂຮງຮຽນກັບໝູ່ເພື່ອນຈາກນັ້ນໄປນັ່ງໂສກັນກັບໝູ່ເພື່ອນທີ່ບໍລິເວນໂຕະຫີນໜ້າໂຮງຮຽນຈົນເຖິງເວລາເຂົ້າຮຽນ.

## 3. ຂໍ້ມູນຈາກການສຳພາດ

### 3.1. ຂໍ້ມູນດ້ານບຸກຄົນ

#### 3.1.1 ປະຫວັດສ່ວນຕົວ

ຈາກການສຳພາດນາງຟ້າໃສ ເຮັດໃຫ້ຮູ້ວ່າ ນາງຟ້າໃສ ມີອາຍຸ 14 ປີ ກຳລັງສຶກສາຢູ່ຊັ້ນມັດທະຍົມສຶກສາປີທີ 2 ໃນໂຮງຮຽນແຫ່ງໜຶ່ງໃນແຂວງ ສາລະວັນ ນາງຟ້າໃສອາໄສຢູ່ກັບແມ່ ແລະ ພໍ່ລ້ຽງ ແລະ ແມ່ເຖົ້າແລະ ນ້ອງຊາຍ ນາງຟ້າໃສເລົ່າວ່າພໍ່ປະຢ່າຮ້າງກັບແມ່ໄປມີເມຍໃໝ່ ແລະ ບໍ່ເຄີຍຕິດຕໍ່ມາອີກເລີຍຕັ້ງແຕ່ນາງຟ້າໃສອາຍຸໄດ້ 8 ປີ ຕໍ່ມາແມ່ໄດ້ແຕ່ງງານໃໝ່ຕອນນາງຟ້າໃສອາຍຸໄດ້ 11 ປີ ນາງຟ້າໃສເລົ່າວ່າເວລາວ່າງມັກໄປຢ່າງຫຼິ້ນທີ່ຕະຫຼາດນັດກັບໝູ່ເພື່ອນສະໜິດແຕ່ແມ່ຈະຄອຍຖ້າຫ້າມບໍ່ຢາກໃຫ້ໄປ ຈຶ່ງຜິດໃຈກັນເປັນປະຈຳ ແລະ ຜິດກັບແມ່ເຖົ້າເລື່ອງຂົ່ມເຫັງນ້ອງຊາຍ ນາງຟ້າໃສເຄີຍຄິດໜີອອກຈາກເຮືອນດ້ວຍຄວາມເບື່ອໜ່າຍຄົນໃນຄອບຄົວ ສ່ວນທີ່ໂຮງຮຽນນາງຟ້າໃສເລົ່າວ່າຖືກຕັດຄະແນນຫຼາຍເພາະຕັກ

ເຕືອນຫຼາຍຄັ້ງເລື່ອງຊີງຜິມຜິດລະບຽບຂອງໂຮງຮຽນ ຜົນການຮຽນນັ້ນບໍ່ຄ່ອຍດີເພາະໂດນໜີຮຽນເລື້ອຍໆບາງຄັ້ງໝູ່ເພື່ອນຊວນກໍໜີຮຽນກັບໝູ່ເພື່ອນ ບາງຄັ້ງກໍບໍ່ຢາກຮຽນເອງເພາະບໍ່ມັກຄູບາງຄົນ ນາງຟ້າໃສຕ້ອງການທີ່ຈະສຶກສາຕໍ່ໃນລະດັບຊັ້ນມັດທະຍົມປາຍທີ່ນີ້ເພາະແມ່ຈະເປັນຫ່ວງເລື່ອງນີ້ຫຼາຍ ໂດຍຈະຄອຍຖ້າກວດສອບຜົນການຮຽນຂອງລູກຢູ່ສະເໝີນາງຟ້າໃສ ເລົ່າວ່າຖືກແມ່ກົດດັນເລື່ອງການຮຽນຈົນເຮັດໃຫ້ຕົນເອງນັ້ນຮູ້ສຶກຄຽດ ແລະ ເບື່ອໜ່າຍການຮຽນ ບໍ່ຢາກຢູ່ບ້ານຢາກຢູ່ກັບໝູ່ເພື່ອນຫລາຍກວ່າ.

### 3.1.2 ດ້ານທັດສະນະຄະຕິຕໍ່ພຶດຕິກຳຄວາມຮຸນແຮງ

ຈາກການສຳພາດນາງຟ້າໃສ ບອກວ່າຄິດວ່າການທີ່ນັກຮຽນໄວລຸ້ນມີພຶດຕິກຳການໃຊ້ຄວາມຮຸນແຮງທຳຮ້າຍກັນນັ້ນເປັນເລື່ອງທີ່ທຳມະດາຂອງໄວລຸ້ນທີ່ຕ້ອງທະເລາະກັນເປັນປົກກະຕິເມື່ອມີເລື່ອງບໍ່ເຂົ້າໃຈກັນ.

### 3.1.3 ການໃຊ້ເວລາວ່າງ

ຈາກການສຳພາດ ນາງຟ້າໃສ ພົບວ່າ ມັກໄປຍ່າງຫລິ້ນຕະຫຼາດນັດກັບໝູ່ເພື່ອນໃນກຸ່ມໃນຕອນເລີກຮຽນ ແລະ ໃນມື້ພັກເວລາວ່າງທີ່ບ້ານມັກຫຼິ້ນເກມອອນໄລຣ.

## 3.2. ຂໍ້ມູນດ້ານຄອບຄົວ

ຈາກການສຳພາດນາງຟ້າໃສ ພົບວ່າ ອາໄສຢູ່ກັບແມ່ ແລະ ພໍ່ລ້ຽງ, ແມ່ເຖົ້າ ແລະ ນ້ອງຊາຍ ນາງຟ້າໃສບໍ່ໄດ້ພົບກັບພໍ່ອີກເລີຍຕັ້ງແຕ່ອາຍຸ 8 ປີ ແມ່ແຕ່ງງານໃໝ່ຕອນນາງຟ້າໃສອາຍຸໄດ້ 11 ປີ ຕອນທີ່ພໍ່ຍັງຢູ່ທີ່ເຮືອນຈະເກາະຜິດຕົບຕີກັບແມ່ສະເໝີຈົນພໍ່ຕ້ອງໜີໄປແຕ່ງງານໃໝ່ນາງຟ້າໃສເລົ່າວ່າແມ່ຈະຄອຍຖ້າຫ້າມບໍ່ໃຫ້ອອກໄປຂ້າງນອກກັບໝູ່ເພື່ອນບໍ່ວ່າຈະໄປຊື້ເຄື່ອງ ຫລື ໄປຍ່າງຫລິ້ນທີ່ຕະຫຼາດນັດ ແລະ ຈະຫ້າມບໍ່ໃຫ້ຄົບໝູ່ເພື່ອນເພາະບໍ່ຢາກໃຫ້ອອກໄປນອກເຮືອນ ຈິ່ງເຮັດໃຫ້ຜິດກັນເປັນປະຈຳ ນ້ອງຊາຍນັ້ນເປັນເດັກພິເສດເວລານ້ອງລົ້ມແມ່ເຖົ້າກໍຈະມັກມາດ່າວ່ານາງຟ້າໃສນັ້ນຂົ່ມເຫັງ ນ້ອງຊາຍບອກວ່ານ້ອງລົ້ມເອງແມ່ເຖົ້າກໍບໍ່ເຊື່ອເວລາຄະແນນສອບບໍ່ດີແມ່ກໍດ່າວ່ານາງຟ້າໃສບໍ່ຕັ້ງໃຈຮຽນ ແລະ ບອກວ່າຈະບໍ່ສົ່ງຮຽນອີກຖ້າຜົນການຮຽນບໍ່ດີກຂຶ້ນນາງຟ້າໃສເຄີຍຄິດທີ່ຈະໜີອອກຈາກບ້ານເພາະຄິດວ່າບໍ່ມີໃຜເຂົ້າໃຈ ແລະ ເກີດຄວາມເບືອໜ່າຍບັນຍາກາດພາຍໃນເຮືອນ.

## 3.3. ຂໍ້ມູນທາງສັງຄົມ

### 3.3.1 ດ້ານໝູ່ເພື່ອນ

ຈາກການສຳພາດນາງຟ້າໃສ ພົບວ່າ ລາວມີໝູ່ເພື່ອນສະໜິດ 1 ຄົນ ລາວເລົ່າວ່າໝູ່ເພື່ອນມີຄວາມຈິງໃຈຕໍ່ຕົນເອງ ແລະ ຮັກເພື່ອນຫລາຍໄປໃສກໍຈະໄປນຳກັນເຫັນໝູ່ເພື່ອນຢູ່ທີ່ໃດຕົນເອງກໍຈະຢູ່ທີ່ນັ້ນນຳກັນເວລາວ່າງຈະມັກໄປຍ່າງຫຼິ້ນຕະຫຼາດນັດກັບໝູ່ເພື່ອນ ບາງຄັ້ງກໍໜີຮຽນນຳກັນ, ບາງຄັ້ງກໍປຶກສາກັນເລື່ອງບັນຫາທາງຄອບຄົວ ແລະ ເລື່ອງການຮຽນ ເມື່ອກັບເຖິງເຮືອນຕອນແລງກໍຈະຂໍແມ່ອອກມາຫາໝູ່ເພື່ອນເພາະເຮືອນຢູ່ກົງກັນຂ້າມກັນແຕ່ແມ່ກໍບໍ່ຢາກໃຫ້ໄປຕ້ອງການໃຫ້ຢູ່ເຮືອນ ຫຼັງຮັບປະທານອາຫານ

ແລງຮຽບຮ້ອຍແລ້ວນາງຟ້າໃສຈະເກັບຕົວງຽບຢູ່ໃນຫ້ອງຂອງຕົວເອງ ແລະ ໂສກັບເພື່ອນທາງເຟດບຸກ ຫຼື ແອັບອື່ນໆ...

### 3.3.2 ຈາກການສຳພາດໝູ່ເພື່ອນສະໜິດ

ຈາກການສຳພາດໝູ່ເພື່ອນສະໜິດທີ່ໂຮງຮຽນຂອງນາງຟ້າໃສຈຳນວນ 1 ຄົນ ເຮັດການສຳພາດເວລາ 30 ນາທີພົບວ່ານາງຟ້າໃສ ເປັນຄົນຮັກໝູ່ເພື່ອນຫລາຍເວລາໝູ່ເພື່ອນມີບັນຫາເລື່ອງຕົບຕີ ຈະໃຫ້ຄວາມຊ່ວຍເຫຼືອທຸກຄັ້ງ ມີຄວາມສະໜິດສະໜົມກັນຫລາຍບໍ່ວ່າຢູ່ທີ່ໂຮງຮຽນ ຫລື ໄປທ່ຽວຕາມຕະຫຼາດນັດຈະໄປນຳກັນສະເໝີ ສາມາດປຶກສາເຖິງບັນຫາພາຍໃນຄອບຄົວກັບຕົນໄດ້.

### 3.3.3 ຈາກການສຳພາດອາຈານປະຈຳວິຊາ ແລະ ປະຈຳຊັ້ນ

ພົບວ່ານາງຟ້າໃສ ເປັນເດັກຄ່ອນຂ້າງມີຜົນການຮຽນຕໍ່າເວລາຢູ່ໃນຫ້ອງຮຽນບໍ່ຄ່ອຍສົນໃຈການຮຽນມັກນັ່ງໂສກັນກັບເພື່ອນ ບາງຄັ້ງກໍໜີຮຽນບໍ່ຄ່ອຍໃຫ້ຄວາມຮ່ວມມືໃນການເຮັດກິດຈະກຳບໍ່ມີຄວາມຮັບຜິດຊອບບໍ່ຄ່ອຍສົ່ງກິດຈະກຳທີ່ໄດ້ຮັບມອບໝາຍ ເວົ້າຈາບໍ່ສຸພາບກັບໝູ່ເພື່ອນໃນຫ້ອງຮຽນ.

### 3.3.4 ຈາກການສຳພາດອາຈານຝ່າຍປົກຄອງ

ພົບວ່ານາງຟ້າໃສ ມີເລື່ອງຈົບຕີກັນທະເລາະວິວາດກັບໝູ່ເພື່ອນໃນຫ້ອງດຽວກັນຫຼາຍຄັ້ງທີ່ບໍລິເວນຫ້ອງຮຽນຊ່ວງພັກກາງເວັນ.

### 3.3.5 ດ້ານສື່

ຈາກການສຳພາດນາງຟ້າໃສ ພົບວ່າມັກຕິດຕາມຂ່າວນັກຮຽນນັກສຶກສາທຳຮ້າຍກັນທາງໂທລະທັດ ແລະ ສື່ອອນໄລຣ ເພາະຈະໄດ້ຮູ້ວ່າໂຮງຮຽນໃດເປັນຄູ່ກໍລະນີກັບໃຜ ບາງຄັ້ງໝູ່ເພື່ອນກໍສົ່ງເປັນຄລິບວີດີໂອທີ່ນັກຮຽນຜູ້ຍິງຕົບກັນມາໃຫ້ທາງໂທລະສັບ ໄດ້ຮັບຊົມພາບຄວາມຮຸນແຮງຂອງນັກຮຽນທຳຮ້າຍກັນກໍຄິດວ່າເປັນເລື່ອງປົກກະຕິຂອງໄວລຸ້ນ.

### 3.3.6 ດ້ານເກມອອນໄລ

ຈາກການສຳພາດເດັກນາງຟ້າໃສ ພົບວ່າມັກຫລິ້ນເກມອ່ອນໄລຣກັບໝູ່ເພື່ອນຄືເກມການຕໍ່ສູ້ຖ້າອີກຝ່າຍເສຍຊີວິດຕົນເອງເຖິງຈະຊະນະຫລິ້ນເກືອບທຸກມື້ ໃນຕອນແລງມື້ລະປະມານ 3 ຊົ່ວໂມງ ນາງຟ້າໃສບອກວ່າການຫຼິ້ນເກມເຮັດໃຫ້ຮູ້ສຶກມ່ວນ ແລະ ຄາຍຄຽດໄດ້.

## 4. ຂໍ້ມູນຈາກການຢ້ຽມຢາມເຮືອນ

### 4.1. ຈາກການສຳພາດ ແລະ ການສັງເກດ

ເຮັດໃຫ້ຮູ້ວ່ານາງຟ້າໃສພັກຢູ່ຕຶກແຖວ 2 ຊັ້ນພາຍໃນທີ່ພັກອາໄສຄ່ອນຂ້າງແຄບມີຄວາມສະອາດພໍໃຊ້ຊັ້ນລຸ່ມເປີດໂລ່ງເປັນຫ້ອງນັ່ງຫລິ້ນມີເຄື່ອງໃຊ້ໄຟຟ້າຕູ້ເຢັນ, ພັດລົມ, ໂທລະທັດ, ມີຫ້ອງນອນ 1 ຫ້ອງສຳລັບແມ່ເຖົ້າກັບນ້ອງຊາຍ, ພໍ່ ແລະ ແມ່ພັກຢູ່ບໍລິເວນຊັ້ນ 2 ນາງຟ້າໃສມີຫ້ອງພັກສ່ວນຕົວຢູ່ບໍລິເວນຊັ້ນ 2 ພາຍໃນຫ້ອງສະອາດໜັງສືຮຽນຈັດວາງຮຽບຮ້ອຍມີເຄື່ອງຄອມພິວເຕີ 1 ໜ່ວຍ ທີ່ພັກອາໄສຢູ່

ຫ່າງຈາກຖະໜົນຫົນທາງໃຫຍ່ປະມານ 30 ແມັດຕະຫລອດ ສອງຂ້າງທາງເຂົ້າມາໃນທີ່ພັກມີຮ້ານອາຫານ ແລະ ຮ້ານເສີມສວຍງາມ ບໍລິເວນທົ່ວໄປອ້ອມນອກທີ່ພັກອາໄສບໍ່ຄ່ອຍສະອາດປານໃດ ມີຂີ້ເຫຍື້ອສີດໍາ ຫຼາຍວາງຖິ້ມໄວ້ບໍລິເວນເສົາໄຟຟ້າທາງຜ່ານເຂົ້າມາຍັງທີພັກອາໄສ.

### 4.2. ຈາກການສໍາພາດແມ່ຂອງນາງຟ້າໃສ

ພົບວ່ານາງຟ້າໃສ ເປັນເດັກຄ່ອນຂ້າງຂີ້ດື້ເອົາແຕ່ໃຈມັກອອກໄປທ່ຽວກັບໝູ່ເພື່ອນບໍ່ຄ່ອຍເຊື່ອຟັງ ເຄີຍທະເລາະກັນຫຼາຍຄັ້ງເລື່ອງການໜີຮຽນ ແລະ ການເຮັດຜິດກົດລະບຽບຂອງໂຮງຮຽນຈົນຕ້ອງຖືກຕັດຄະແນນ ລວມເຖິງການທະເລາະວິວາດກັບໝູ່ເພື່ອນໃນຫ້ອງຮຽນນໍາກັນ.

### 4.3. ຈາກການສໍາພາດແມ່ເຖົ້າຂອງນາງຟ້າໃສ

ພົບວ່າເປັນເດັ້ຂີ້ດື້ບໍ່ຄ່ອຍເຊື່ອຟັງບໍ່ຄອຍຊ່ວຍເຫຼືອວຽກເຮືອນ ມັກອອກໄປທ່ຽວຫຼີ້ນກັບໝູ່ເພື່ອນໃນມື້ພັກ ມັກຢອກນ້ອງຈຶ່ງມີເລື່ອງຜິດໃຈກັນເປັນປະຈໍາ.

ຈາກການຢ້ຽມຢາມເຮືອນບ້ານຂອງນາງຟ້າໃສ ພໍສະຫລຸບໄດ້ວ່າ ສະຖານທີ່ພັກອາໄສຄ່ອນຂ້າງຄັບແຄບ ບໍລິເວນໂດຍອ້ອມທີ່ພັກອາໄສບໍ່ຄ່ອຍສະອາດຮຽບຮ້ອຍ ສະມາຊິກພາຍໃນຄອບຄົວມີການທະເລາະຜິດໃຈກັນຢູ່ເປັນປະຈໍາ ຄວາມສໍາພັນພາຍໃນລະຫວ່າງສະມາຊິກໃນຄອບຄົວຄ່ອນຂ້າງຫ່າງເຫີນ.

## 5. ຂໍ້ມູນຈາກລະບຽບສະສົມ

ພົບວ່ານາງຟ້າໃສ ມີຜົນການຮຽນຕໍ່າບໍ່ມີບັນຫາດ້ານສຸຂະພາບ, ອາໄສກັບແມ່ ແລະ ພໍ່ລ້ຽງ, ນ້ອງຊາຍແລະ ແມ່ເຖົ້າ.

## 6. ຂໍ້ມູນຈາກບັນທຶກປະຈໍາວັນ

ຈາກການບັນທຶກປະຈໍາວັນຕະຫລອດໄລຍະເວລາ 1 ອາທິດພົບວ່ານາງຟ້າໃສມີກິດຈະກໍາປະຈໍາວັນ ຄ້າຍຄືກັນ ຄື ຕື່ນນອນເວລາ 06.30 ຈາກນັ້ນເຮັດພາລະກິດສ່ວນຕົວແລ້ວເດີນທາງໄປໂຮງຮຽນ ຕອນເລີກ ຮຽນໄປຍ່າງຫລິ້ນຕະຫຼາດນັດກັບໝູ່ເພື່ອນ ກັບເຮືອນຮັບປະທານອາຫານແລງແລ້ວລົມກັນກັບໝູ່ເພື່ອນທາງ ເຟດບຸກ ແລະ ແອັບອື່ນໆ ຫລິ້ນເກມອອນໄລຣເວລາ 18.00-21.00 . ແລ້ວເບິ່ງໂທລະທັດເຂົ້ານອນເວລາ 22.00.

ຈາກການບັນທຶກປະຈໍາວັນ ສະຫລຸບໄດ້ວ່າ ນາງຟ້າໃສ ມັກໄປຍ່າງຫລິ້ນກັບໝູ່ເພື່ອນບໍ່ມີການທົບທວນບົດຮຽນ ຫລື ເຮັດວຽກບ້ານໃຊ້ເວລາວ່າງໄປກັບການຫລິ້ນເກມອອນໄລຣແລ້ວລົມກັນກັບໝູ່ເພື່ອນທາງ ເຟດບຸກ ແລະ ແອັບອື່ນໆ...

## 7. ຂໍ້ມູນດ້ານພຶດຕິກໍາຄວາມຮຸນແຮງ

ຈາກການສໍາພາດ ນາງຟ້າໃສ ເລົ່າວ່າສາເຫດທີ່ເຮັດໃຫ້ມີເລື່ອງທະເລາະວິວາດກັນເພາະມີນັກຮຽນຍິງຄົນໜຶ່ງຮຽນຢູ່ໃນຫ້ອງດຽວກັນມາທ້າໃຫ້ຕົບຕີກັນມາດົນແລ້ວທົນບໍ່ໄຫວກໍເລີຍຮັບຄໍາທ້າເຂົາໄປ

ອາລົມພາໄປນຳແດກຳເລີຍເປັນຄົນຕົບຕີເຂົາກ່ອນທີ່ຫ້ອງຮຽນໃນຊ່ວງພັກກາງເວັນໝູ່ເພື່ອນຈະຄອຍຖ້າເຝົ້າເບິ່ງຕົ້ນທາງໃຫ້ທີ່ໜ້າຫ້ອງຮຽນບໍ່ມີໃຜຫ້າມສຸດທ້າຍອາຈານມາພົບກຳເລີຍໄດ້ເຂົ້າຫ້ອງປົກຄອງ ນາງຟ້າໃສເລົ່າວ່າຖືກຕີກົ້ນລະ 3 ບາດ ແລະ ບອກອີກວ່າເຄີຍຖືກອາຈານລົງໂທດມາແລ້ວຫຼາຍຄັ້ງ.

- **ການວິເຄາະຂໍ້ມູນ**

ຈາກການໃຊ້ເຕັກນິກການລວບລວມຂໍ້ມູນທັງ 6 ເຕັກນິກໄດ້ແກ່ ແບບສອບຖາມດ້ານສ່ວນບຸກຄົນ, ແບບສັງເກດ, ການຢ້ຽມຢາມເຮືອນ, ລະບຽບສະສົມ, ບັນທຶກປະຈຳວັນ ແລະ ການສຳພາດດັ່ງ 3 ດ້ານ ຄື ດ້ານສ່ວນຕົວ, ດ້ານຄອບຄົວ ແລະ ດ້ານສັງຄົມ ສາມາດສະຫລຸບ ແລະ ວິເຄາະຂໍ້ມູນສາເຫດທີ່ເປັນແນວໂນ້ມຂອງການເກີດພຶດຕິກຳຄວາມຮຸນແຮງຂອງນາງຟ້າໃສໄດ້ດັ່ງຕໍ່ນີ້:

1. ສາເຫດດ້ານນສ່ວນຕົວ

ຈາກການສຳພາດ ແລະ ການສັງເກດເຮັດໃຫ້ຮູ້ວ່າ ສາເຫດທີ່ເປັນແນວໂນ້ມເຮັດໃຫ້ນາງຟ້າໃສມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນເກີດຈາກຕົວຂອງນາງຟ້າໃສເອງຄື ມີທັດສະນະຄະຕິກ່ຽວກັບພຶດຕິກຳການໃຊ້ຄວາມຮຸນແຮງວ່າເປັນເລື່ອງທຳມະດາຂອງໄວລຸ້ນ ໃຊ້ເວລາວ່າງໄປກັບການທ່ຽວຫຼິ້ນກັບໝູ່ເພື່ອນປະກອບກັບ ອາລົມຂອງໄວລຸ້ນທີ່ໂມໂຫງ່າຍຂາດຄວາມອົດທົນ ແລະ ມີລັກສະນະບຸກຄະລິກທີ່ຄ່ອນຂ້າງບໍ່ຍອມໃຜອາລົມຮ້ອນບໍ່ຄ່ອຍມີສະມາທິໃນການຮຽນ.

2. ສາເຫດດ້ານຄອບຄົວ

ຈາກການສັງເກດການສຳພາດ ແລະ ການຢ້ຽມຢາມເຮືອນເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ນາງຟ້າໃສມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນເກີດຈາກບັນຍາກາດທີ່ບໍ່ໜ້າຢູ່ອາໄສສະມາຊິກພາຍໃນຄອບຄົວທະເລາະວິວາດກັນຢູ່ສະເໝີ ແມ່ເຂັ້ມງວດຫຼາຍບໍ່ຢາກໃຫ້ອອກໄປທ່ຽວຫລິ້ນກັບໝູ່ເພື່ອນ ຈຶ່ງເຮັດໃຫ້ລູກຮູ້ສຶກຕໍ່ຕ້ານ ແລະ ຕ້ອງການອິດສະຫລະຈຶ່ງຢາກຫຼີກໜີຈາກເຮືອນມາຢູ່ກັບໝູ່ເພື່ອນປະກອບກັບນາງຟ້າໃສເຄີຍເຫັນພໍ່ແມ່ຜິດກັນຢູ່ສະເໝີກ່ອນພໍ່ຈະແຍກໄປມີຄອບຄົວໃໝ່.

3. ສາເຫດທາງສັງຄົມ

ຈາກການສຳພາດ ແລະ ການສັງເກດເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ນາງຟ້າໃສມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນ ເກີດຈາກອິດທິພົນຂອງໝູ່ເພື່ອນ ລາວໃຫ້ຄວາມສຳຄັນກັບໝູ່ເພື່ອນຫລາຍເມື່ອມີບັນຫາຕ່າງໆຈະປຶກສາໝູ່ເພື່ອນແຕ່ບາງຄັ້ງໝູ່ເພື່ອນກໍບໍ່ສາມາດໃຫ້ຄຳແນະນຳວິທີແກ້ບັນຫາແບບເໝາະສົມໄດ້ ນາງຟ້າໃສໄດ້ຮັບຊົມພາບກ່ຽວກັບນັກຮຽນຕີກັນທາງໂທລະທັດເລື່ອຍໆຈົນເກີດຄວາມຊິນຊາ ແລະ ມີທັດສະນະຄະຕິຕໍ່ພາບທີ່ໄດ້ຮັບຊົມວ່າຄວາມຮຸນແຮງຂອງໄວລຸ້ນເປັນເລື່ອງທຳມະດາ ນາງຟ້າໃສໃຊ້ເວລາໃນການຫຼິ້ນເກມອອນໄລຣທີ່ມີເນື້ອຫາກ່ຽວຂ້ອງກັບຄວາມຮຸນແຮງມື້ລະ 3 ຊົ່ວໂມງຈຶ່ງເປັນແນວໂນ້ມໃຫ້ລາວຊຶມຊັບຮັບເອົາພຶດຕິກຳຄວາມຮຸນແຮງນັ້ນໄວ້ ແລະ ຍັງສົ່ງຜົນໃຫ້ນາງຟ້າໃສກັບສະມາຊິກໃນຄອບຄົວມີດມີຕວາມສຳພັນທີ່ຫ່າງເຫີນ.

- ແນວທາງໃນການຊ່ວຍເຫລືອ

ຈາກການວິເຄາະແນວໂນ້ມທີ່ເປັນສາເຫດຂອງການເກີດພຶດຕິກຳຄວາມຮຸນແຮງຂອງນາງຟ້າໃສທັງ 3 ດ້ານ ໄດ້ແກ່ ດ້ານຕົນເອງ, ດ້ານຄອບຄົວ ແລະ ດ້ານອິດທິພົນທາງສັງຄົມ ຜູ້ວິໄຈໄດ້ດຳເນີນການຫາແນວທາງຊ່ວຍເຫຼືອດັ່ງຕໍ່ໄປນີ້:

1. ການຊ່ວຍເຫຼືອທີ່ໂຮງຮຽນ

1.1 ຄູແນະແນວທາງໃຫ້ມີການປັບປ່ຽນພຶດຕິກຳໃຫ້ມີຄວາມເໝາະສົມ ແລະ ມີຄວາມຮັບຜິດຊອບຮູ້ຈັກເຖິງຜົນເສຍຂອງພຶດຕິກຳຄວາມຮຸນແຮງຂອງຕົນເອງ ມີຄວາມຮັບຜິດຊອບໃນຖານະລູກ ແລະ ການເປັນນັກຮຽນໃຫ້ຄວາມໝັ້ນໃຈ ແລະ ໃຫ້ກຳລັງໃຈຕະຫລອດຈົນເອົາໃຈໃສ່ແບບໃກ້ຊິດກັບເດັກ ເພື່ອໃຫ້ມີຄວາມອົບອຸ່ນເຊື່ອໝັ້ນໃນຕົນເອງສາມາດປັບປຸງພຶດຕິກຳໃຫ້ມີຄວາມເໝາະສົມຫຼຸດພຶດຕິກຳຄວາມຮຸນແຮງ.

1.2 ຂໍຄວາມຊ່ວຍເຫຼືອຈາກໝູ່ເພື່ອນໃນຫ້ອງໂດຍສະເພາະໝູ່ເພື່ອນສະໜິດຂອງນາງຟ້າໃສເມື່ອມີເວລາວ່າງໃຫ້ເຮັດກິດຈະກຳທີ່ສ້າງສັນແທນທີ່ຈະໃຊ້ເວລາສ່ວນໃຫຍ່ໄປກັບການຍ່າງທ່ຽວໃນ ຫລືຫຼິ້ນເກມອອນໄລຣທີ່ມີເນື້ອຫາຄວາມຮຸນແຮງ.

2. ການຊ່ວຍເຫຼືອຢູ່ເຮືອນມີດັ່ງຕໍ່ໄປນີ້

2.1 ປຶກສາບັນຫາທີ່ເກີດຂຶ້ນກັບຜູ້ປົກຄອງທີ່ບ້ານຂອງຜູ້ຮັບການສຶກສາ ເພື່ອໃຫ້ເຂົ້າໃຈໃນຕົວນາງຟ້າໃສຫຼາຍຂຶ້ນຂໍໃຫ້ແມ່ກັບພໍ່ລ້ຽງ ແລະ ແມ່ເຖົ້າໃຫ້ຄວາມຮັກຄວາມອົບອຸ່ນ ແລະ ໃຫ້ເວລາກັບລາວໃຫ້ຫຼາຍຂຶ້ນ.

- **ການທຳນາຍຜົນ**

ຈາກການສຶກສາບັນຫາຂອງນາງຊາວຟ້າໃສ  ພົບວ່າ ການມີພຶດຕິກຳຄວາມຮຸນແຮງຂອງລາວນັ້ນມີແນວທາງໃນການຊ່ວຍເຫຼືອໃຫ້ປັບປຸງພຶດຕິກຳທີ່ບໍ່ເໝາະສົມໄດ້ຫາກນາງຟ້າໃສໄດ້ຮັບຄວາມຮັກ ແລະ ການເອົາໃຈໃສ່ໃຫ້ກຳລັງໃຈຈາກຄອບຄົວຫຼາຍຂຶ້ນຕະຫລອດຈົນສະມາຊິກໃນຄອບຄົວໃຫ້ຄວາມຮ່ວມມືໃນແນວທາງການຊ່ວຍເຫຼືອເປັນຢ່າງດີ.

- **ຂໍ້ສະເໜີແນະ**

1. ຂໍ້ສະເໜີແນະສຳລັບຜູ້ຮັບການສຶກສາ

ນາງຟ້າໃສຟ້າໃສຄວນຄິດວ່າພຶດຕິກຳການໃຊ້ຄວາມຮຸນແຮງນັ້ນເປັນພຶດຕິກຳທີ່ບໍ່ເໝາະສົມ ແລະ ສິ່ງຜົນເສຍຕໍ່ຕົນເອງ ແລະ ສະມາຊິກໃນຄອບຄົວ ຄວນຫາເວລາເວົ້າກັບຜູ້ປົກຄອງເພື່ອຄວາມໃກ້ຊິດ ແລະ ສ້າງບັນຍາກາດພາຍໃນຄອບຄົວໃຫ້ມີຄວາມອົບອຸ່ນ ຂໍໃຫ້ປະຕິບັດຕາມແນວທາງໃນການຊ່ວຍເຫຼືອແບບງຈິງຈັງ.

2. ຂໍ້ສະເໜີແນະສຳລັບຜູ້ທີ່ກ່ຽວຂ້ອງມີດັ່ງຕໍ່ໄປນີ້

2.1 ສະມາຊິກໃນຄອບຄົວຄວນໃຫ້ກຳລັງໃຈໃນສິ່ງທີ່ນາງຟ້າໃສເຮັດໄດ້ດີເພື່ອເກີດຄວາມພາກພູມໃຈໃນຕົນເອງ ໃຫ້ກຳລັງໃຈເມື່ອປັບປຸງພຶດຕິກຳໃຫ້ດີຂຶ້ນເພື່ອສ້າງຄວາມໝັ້ນໃຈໃນຕົນເອງໃຫ້ຄຳປຶກສາກັບຄູເມື່ອມີບັນຫາ.

2.2 ອາຈານປະຈຳຊັ້ນແນະແນວ ແລະ ອາຈານປະຈຳວິຊາ ຄວນໃຫ້ຄວາມສົນໃຈ ແລະ ເບິ່ງແຍງ ແບບຕໍ່ເນື່ອງ ແລະ ເຂົ້າໃຈຍອມຮັບຄວາມແຕກຕ່າງລະຫວ່າງບຸກຄົນ ຄວນໃຫ້ຄວາມຮັກກັບເດັກແບບຈິງໃຈ ເພື່ອໃຫ້ເກີດຄວາມໄວ້ວາງໃຈເຊື່ອໃຈບໍ່ຢ້ານຄູ ກ້າທີ່ຈະປຶກສາເລື່ອງພຶດຕິກຳຄວາມຮຸນແຮງຊຶມເຊຍ ແລະໃຫ້ ກຳລັງໃຈເມື່ອນາງຟ້າໃສສາມາດປັບປຸງພຶດຕິກຳຂອງຕົນເອງໃຫ້ດີຂຶ້ນ.

2.3 ໝູ່ເພື່ອນຂອງນາງຟ້າໃສຄວນທົບທວນວ່າ ການທະເລາະຕົບຕີກັນເປັນພຶດຕິກຳທີ່ບໍ່ເໝາະສົມ ແລະ ຮູ້ເຖິງຜົນເສຍທີ່ຈະຕາມມາ ແລະ ໃຫ້ກຳລັງໃຈເຊິ່ງກັນ ແລະ ກັນທີ່ຈະເລີກພຶດຕິກຳການທະເລາະວິວາດ ເຮັດກິດຈະກຳທີ່ສ້າງສັນເມື່ອມີເວລາວ່າງ.

## ກໍລະນີສຶກສາຄົນທີ 6 ທ້າວ ສາລີ (ນາມສົມມຸດ )

ທ້າວ ສາລີ ໄລຍະເວລາທີ່ສຶກສາຕັ້ງແຕວັນທີ 4 ກຸມພາ ປີ 2019 ເຖິງ ວັນທີ 10 ກັນຍາ ປີ 2019.

- **ລັກສະນະທົ່ວໄປ.**

ຈາກການສັງເກດພົບວ່າທ້າວບີເປັນຄົນຮູບຮ່າງຕຸ້ຍຜິວສີດຳແດງແຕ່ງກາຍສຸພາບຮຽບຮ້ອຍໃນຂະນະໃຫ້ສຳພາດເວົ້າຈາຊັດເຈນສຽງດັງຟັງຊັດ ແລະ ສຸພາບອ່ອນນ້ອມເປັນຄົນອາລົມດີຍິ້ມແຍ້ມແຈ່ມໃສໃນໄລຍະທຳອິດບໍ່ຄ່ອຍໃຫ້ຂໍ້ມູນດ້ານທະເລາະວິວາດເທົ່າບໍ່ຫຼາຍ ແຕ່ເມື່ອໄດ້ພົບກັນເລື້ອຍໆຂຶ້ນທ້າວສາລີຈິ່ງເລີ່ມມີ ຄວາມໄວ້ວາງໃຈ ແລະ ໃຫ້ຂໍ້ມູນຢ່າງຕໍ່ເນື່ອງດ້ວຍດີຕະຫຼອດໄລຍະເວລາໃນການສຳພາດ.

ຈາກການໃຊ້ເຕັກນິກການລວບລວມຂໍ້ມູນທັງ 6 ເຕັກນິກໄດ້ແກ່ແບບສອບຖາມດ້ານສ່ວນບຸກຄົນ, ແບບສັງເກດ, ການຢ້ຽມຢາມເຮືອນ, ລະບຽນບສະສົມ, ບັນທຶກປະຈຳວັນ ແລະ ການສຳພາດດັ່ງ 3 ດ້ານຄື: ດ້ານສ່ວນຕົວ, ດ້ານຄອບຄົວ ແລະ ດ້ານສັງຄົມ ສາມາດສະຫລຸບ ແລະ ວິເຄາະຂໍ້ມູນໄດ້ດັ່ງນີ້:

## 1. ຂໍ້ມູນຈາກແບບສອບຖາມ

ທ້າວ ສາລີ ອາຍຸ 15 ປີ ຮຽນຢູ່ຊັ້ນມັດທະຍົມສຶກສາປີທີ 3 ມີພີ່ນ້ອງ 3 ຄົນອາໄສຢູ່ກັບພໍ່, ແມ່ເສຍຊີວິດ.

## 2. ຂໍ້ມູນຈາກແບບສັງເກດ

ການວິໄຈໃນຄັ້ງນີ້ຜູ້ວິໄຈໄດ້ເຮັດການສັງເກດໃນຫ້ອງຮຽນວິຊາພາສາອັງກິດ ວັນທີ 4 ກຸມພາ ປີ 2019 ໃນການສັງເກດໃຊ້ເວລາ 30 ນາທີ ພົບວ່າທ້າວ ສາລີ ບໍ່ຄ່ອຍສົນໃຈໃນການຮຽນ ເວົ້າໂສກັນກັບໝູ່ເພື່ອນໃນຂະນະຮຽນ ບໍ່ຄ່ອຍມີສະມາທິໃນການຮຽນ ສິ່ງກິດຈະກຳບໍ່ທັນໃນຊົ່ວໂມງຮຽນ ແລະ ໄດ້

ເຮັດການສັງເກດນອກຫ້ອງຮຽນ ເວລາ 12.30 - 13.00ໂມງ. ໃນວັນດຽວກັນ ພົບວ່າທ້າວສາລີນັ່ງຫຼິ້ນກັບໝູ່ເພື່ອນໃນເດີ່ນໂຮງຮຽນຈົນເຖິງເວລາເຂົ້າຮຽນ.

# 3. ຂໍ້ມູນຈາກການສຳພາດ

## 3.1. ຂໍ້ມູນດ້ານບຸກຄົນ

### 3.1.1 ປະຫວັດສ່ວນຕົວ

ຈາກການສຳພາດທ້າວ ສາລີ ເຮັດໃຫ້ຮູ້ວ່າ ລາວມີອາຍຸ 15 ປີ ກຳລັງສຶກສາຢູ່ຊັ້ນມັດທະຍົມສຶກສາປີທີ 3 ໃນມັດທະຍົມສາທິດວິທະຍາໄລຄູສາລະວັນ ມີຖິ່ນລຳເນົາເປັນຄົນບ້ານນາໂດນ ເມືອງ ແລະ ແຂວງສາລະວັນ ພັກອາໄສຢູ່ກັບພໍ່ ແລະ ນ້ອງອີກ 2 ຄົນ ແມ່ຂອງທ້າວ ສາລີ ເສຍຊີວິດຕັ້ງແຕທ້າວບີອາຍຸໄດ້ 4 ປີ ທ້າວສາລີເລົ່າວ່າຕັ້ງແຕ່ແມ່ເສຍຊີວິດໄປ ພໍ່ຕ້ອງເປັນຄົນຫາລາຍໄດ້ລ້ຽງດູຕົນເອງກັບນ້ອງຊາຍທ້າວສາລີມັກຫຼິ້ນກິລາບານເຕະ ແລະ ກະຕໍ້ ເປັນຊີວິດຈິດໃຈທ້າວ ສາລີ ເລົ່າວ່າຫລິ້ນບານເຕະກັບເພື່ອນຕັ້ງແຕ່ເຊົ້າກ່ອນຂຶ້ນຫ້ອງຮຽນຕອນພັກທ່ຽງກິນເຂົ້າສຳເລັດ ກໍຫຼິ້ນບານເຕະ ຫຼັງເລີກຮຽນກໍຫຼິ້ນບານເຕະຕັ້ງແຕ່ເລີກຮຽນຈົນເຖິງເວລາປະມານ 18.30 ໃນວັນເສົາອາທິດທ້າວສາລີກໍຈະຫຼິ້ນບານເຕະກັບໝູ່ເພື່ອນໃນຊຸມຊົນໃກ້ກັບທີ່ພັກອາໄສຂອງຕົນ ເຊິ່ງເປັນທີ່ມີຜູ້ພັກອາໄສຄ່ອນຂ້າງໜາແໜ້ນຢູ່ບໍ່ຫ່າງໄກຈາກໂຮງຮຽນເທົ່າໃດສາມາດຍ່າງໄປໂຮງຮຽນໄດ້ພາຍໃນໄລຍະເວລາ ປະມານ 10 ນາທີ ທ້າວ ສາລີ ເປັນນັກກິລາບານເຕະຂອງໂຮງຮຽນ ລາວເລົ່າວ່າເປັນຫ່ວງຜົນການຮຽນເພາະການຊ້ອມກິລາກໍເຮັດໃຫ້ຕົນເອງນັ້ນມີຜົນການຮຽນທີ່ບໍ່ຄ່ອຍດີປານໃດ ຕອນນີ້ເລີ່ມອ່ານໜັງສືເພື່ອກຽມຕົວສອບເສັງປະຈຳເດືອນ.

### 3.1.2 ດ້ານທັດສະນະຄະຕິຕໍ່ພຶດຕິກຳຄວາມຮຸນແຮງ

ຈາກການສຳພາດພົບວ່າ ທ້າວ ສາລີ ຄິດວ່າການມີພຶດຕິກຳຄວາມຮຸນແຮງເປັນເລື່ອງທຳມະດາຂອງເດັກຜູ້ຊາຍອາດຈະມີຕີກັນເປັນບາງຄັ້ງດ້ວຍເປັນເລື່ອງຂອງການຍອມຮັບໃນກຸ່ມເພື່ອນການຍົກພວກທຳຮ້າຍກັນທ້າວ ສາລີມີຄວາມເຊື່ອວ່າເປັນການຊ່ວຍເຫຼືອເພື່ອນ.

### 3.1.3 ການໃຊ້ເວລາວ່າງ

ຈາກການສຳພາດພົບວ່າ ທ້າວ ສາລີ ມັກໃຊ້ເວລາວ່າງໄປເຕະບານກັບໝູ່ເພື່ອນທີ່ໂຮງຮຽນ ແລະ ໄປຍ່າງຫລິ້ນທີ່ສວນອີງແກ້ວກັບເພື່ອນໃນກຸ່ມ ທ້າວ ສາລີ ເລົ່າວ່າການໄປຍ່າງທີ່ເດີ່ນທີ່ສວນອີງແກ້ວຕ້ອງຄອຍຖ້າລະວັງນັກຮຽນຈາກໂຮງຮຽນທີ່ເປັນຕ່າງຖິ່ນ ຈຶ່ງມັກມາກັບເພືອນຫຼາຍໆຄົນ ຖ້າມີເຫດການຄວາມຮຸນແຮງຂຶ້ນ ຈະໄດ້ຊ່ວຍເຫຼືອກັນໄດ້ ແລະ ມັກຫລິ້ນເກມອອນໄລຣ ທັງໃນຮ້ານເກມ ຫຼື ໃນມືຖືແລະ ຄອມພິວເຕີໃນເຮືອນ ສ່ວນຫລາຍບໍ່ໄດ້ເຮັດກິດຈະກຳຫຍັງກັບສະມາຊິກໃນຄອບຄົວ.

## 3.2. ຂໍ້ມູນດ້ານະຄອບຄົວ

ຈາກການສຳພາດ ທ້າວສາລີ ມີອ້າຍນ້ອງ 3 ຄົນເປັນຜູ້ຊາຍທັງໝົດ ທ້າວ ສາລີເປັນລູກຄົນທີ 1 ທ້າວ ສາລີເລົ່າວ່າພໍ່ເປັນຄົນເຮັດວຽກຫາລ້ຽງຄອບຄົວເພາະແມ່ເສຍຊີວິດຕັ້ງແຕ່ ທ້າວ ສາລີອາຍຸໄດ້ພຽງ 4 ປີ ພໍ່ເປັນພະນັກງານລັດແຫ່ງໜຶ່ງ ອອກຈາກບ້ານຕັ້ງແຕ່ເຊົ້າ ແລະ ກັບເຖິງບ້ານຕອນປະມານ 18:00.

ສ່ວນນ້ອງທີ່ມີອາຍຸຫ່າງກັນ 3 ປີ ເປັນນັກຮຽນຢູ່ຊັ້ນ ມ2 ຮຽນບ່ອນດຽວກັນ ທ້າວ ສາລີເລົ່າວ່າພໍ່ເລີກຮຽນນ້ອງຊາຍຈະກັບມາເຮືອນກ່ອນ ຈຶ່ງບໍ່ຄ່ອຍໄດ້ກັບພ້ອມກັນຈັກເທື່ອ ເມື່ອມີບັນຫາເລື່ອງຜິດໃຈກັນກັບພໍ່ກໍຈະຫັນໄປປຶກສາກັບໝູ່ເພື່ອນໃນກຸ່ມ ເຊິ່ງບາງຄັ້ງໝູ່ເພື່ອນຄົນອື່ນໆກໍຜິດໃຈກັນກັບພໍ່ແມ່ຄືກັນມີຄວາມຮູ້ສຶກສະບາຍໃຈເມືອໄດ້ລະບາຍໃຫ້ໝູ່ເພື່ອນຟັງ ບາງຄັ້ງກໍ່ມີເລື່ອງທະເລາະວິວາດທີ່ໂຮງຮຽນ ຄູໂທມາເຊີຍພໍ່ໄປ ທ້າວ ສາລີບອກວ່າພໍ່ກໍບໍ່ຄ່ອຍເຂົ້າໃຈວ່າໄປມີເລື່ອງຕີໄດ້ແບບໃດເວລາມີບັນຫາຈຶ່ງບໍ່ກ້າເລົ່າໃຫ້ພໍ່ຟັງ.

### 3.3. ຂໍ້ມູນທາງສັງຄົມ

#### 3.3.1 ດ້ານໝູ່ເພື່ອນ

ຈາກການສຳພາດ ທ້າວ ສາລີ ພົບວ່າມີໝູ່ເພື່ອນສະໜິດ 4 ຄົນບໍ່ວ່າຈະໄປໃດ ຫຼື ເຮັດຫຍັງກໍຈະເຮັດນຳກັນ ລາວຮັກເພື່ອນຫລາຍ ແລະ ຍອມຮັບວ່າຊີວິດໃນຊ່ວງມັດທະຍົມຕົ້ນຂອງຕົນເອງນັ້ນໝູ່ເພື່ອນມີສ່ວນສຳຄັນຫລາຍທີ່ສຸດ ບໍ່ວ່າຈະມີບັນຫາຫຍັງເພື່ອນສາມາດໃຫ້ຄຳປຶກສາໄດ້ທຸກເລື່ອງມີຫຍັງກໍຊ່ວຍເຫຼືອກັນບາງຄັ້ງເພື່ອນມີເລື່ອງຕີກັນກໍຕ້ອງເຂົ້າໄປຊ່ວຍເພື່ອນຫຼາຍຄັ້ງ ທ້າວ ສາລີ ຈຶ່ງຖືກເອີ້ນຕົວເຂົ້າຫ້ອງປົກຄອງເວລາວ່າງນອກຈາກຊ້ອມກິລາກັບໝູ່ເພື່ອນທີ່ໂຮງຮຽນແລ້ວກໍຈະໄປຍ່າງຫລິ້ນທີ່ສະຖານທີ່ແຫ່ງອື່ນ ທ້າວ ສາລີເລົ່າວ່ານັກຮຽນລຸ້ນນ້ອງກັບເພື່ອນຂອງຕົນເອງຖືກລຸມທຳຮ້າຍຈາກນັກຮຽນຕ່າງໂຮງຮຽນຫຼາຍຄັ້ງ ກຸ່ມນັ້ນຫລາຍ7ກວ່າຄົນ ເວລາໄປຍ່າງໃນເດີ່ນອິງແກ້ວ ຈຶ່ງມັກຈະໄປນຳກັນເປີດກຸ່ມ ເຖິງຈະມີຄວາມປອດໄພ.

#### 3.3.2 ຈາກການສຳພາດ

ເພື່ອນສະໜິດໃນໂຮງຮຽນຂອງ ທ້າວ ສາລີ 2 ຄົນ ຈາກຈຳນວນເພື່ອນສະນິດທັງ 4 ໝົດ ຈຳນວນ 4 ຄົນໃຫ້ການສຳພາດຄົນລະ 30 ນາທີ ພົບວ່າ ທ້າວ ສາລີ ເປັນຄົນຮັກເພື່ອນຫລາຍເວລາເພື່ອນມີບັນຫາເລື່ອງຕີກັນທະເລາະວິວາດ ທ້າວ ສາລີຈະໃຫ້ຄວາມຊ່ວຍເຫຼືອທຸກຄັ້ງມີຄວາມສະໜິດສະໜົມກັນຫລາຍບໍ່ວ່າຢູ່ທີ່ໂຮງຮຽນ ຫຼື ໄປທ່ຽວຕາມແຫ່ງອື່ນໆ ຈະໄປນຳກັນສະເໝີເພາະບາງຄັ້ງຈະມີນັກຮຽນຈາກໂຮງຮຽນອື່ນມາຫາເລື່ອງຈຶ່ງຕ້ອງໄປກັນເປັນກຸ່ມເວລາມີເລື່ອງຕີກັນກັບໂຮງຮຽນອື່ນຈະໄດ້ຊ່ວຍເຫຼືອກັນໄດ້.

#### 3.3.3 ຈາກການສຳພາດອາຈານວິຊາ

ຈາກການສຳພາດຄູປະຈຳວິຊາ ພົບວ່າ ທ້າວບີເປັນເດັກຄ່ອນຂ້າງມີຜົນການຮຽນຕ່ຳເວລາຢູ່ໃນຫ້ອງຮຽນບໍ່ຄ່ອຍສົນໃຈການຮຽນມັກນັ່ງໂສກັນກັບເພື່ອນ ບາງຄັ້ງກໍໂດນຮຽນ ບໍ່ຄ່ອຍໃຫ້ຄວາມຮ່ວມມືໃນການເຮັດກິດຈະກຳ ບໍ່ມີຄວາມຮັບຜິດຊອບບໍ່ຄ່ອຍສົ່ງວຽກບ້ານທີ່ໄດ້ຮັບມອບໝາຍເວົ້າຈາແຂງກະດ້າງກັບເພື່ອນໃນຊັ້ນຮຽນ.

#### 3.3.4 ຈາກການສຳພາດຄູອາຈານຝ່າຍປົກຄອງນັກຮຽນ

ພົບວ່າ ທ້າວ ບີ ເປັນຄົນຮັກເພື່ອນຫລາຍຕິດເພື່ອນມີເລື່ອງທະເລາະວິວາດກັບນັກຮຽນໂຮງຮຽນດຽວກັນຫຼາຍຄັ້ງທີ່ບໍລິເວນສະໜາມບານ ແລະ ມີເລື່ອງທະເລາະວິວາດກັບນັກຮຽນຕ່າງສະຖາບັນອື່ນ.

#### 3.3.5 ດ້ານສື່

ຈາກການສຳພາດ ທ້າວ ບີເລົ່າວ່າໄດ້ຕິດຕາມຂ່າວນັກຮຽນຕີກັນຈາກໂທລະທັດກໍມີຄວາມຮູ້ສຶກວ່າການໃຊ້ຄວາມຮຸນແຮງເປັນເລື່ອງຂອງສັກສີ ເປັນທີ່ຍອມຮັບຂອງກຸ່ມເພື່ອນ ສ່ວນຕົວທ້າວ ບີນັ້ນຄິດວ່າການຍົກພວກຕີກັນເປັນເລື່ອງຂອງສະຖາບັນອີກດ້ວຍ ແລະ ການທີ່ໄດ້ຮັບຊົມພາບເລື້ອຍໆທ້າວ ບີ ມີຄວາມຄິດເຫັນວ່າການທຳຮ້າຍກັນຂອງນັກຮຽນບໍ່ໄດ້ເປັນເລື່ອງຮ້າຍແຮງຫຍັງເລີຍ.

#### 3.3.6 ດ້ານເກມອອນໄລ

ຈາກການສຳພາດ ທ້າວ ບີ ພົບວ່າເກມທີ່ຫລິ້ນນັ້ນເປັນເກມກ່ຽວກັບການແຂ່ງຂັນບານເຕະ ແລະ ເກມຕໍ່ສູ້ກັນ ຫລິ້ນທຸກວັນວັນລະ 2 ຊົ່ວໂມງ ຕັ້ງແຕ່ເວລາປະມານ 18.00 . ເຖິງ ເວລາ 20.00. ທ້າວ ບີ ບອກວ່າຂໍ້ດີຂອງເກມຄືເຮັດໃຫ້ຮູ້ຈັກການວາງແຜນການຫລິ້ນບານເຕະ ແລະ ໄດ້ຄວາມສາມັກຄີກັບເພື່ອນໆ ແລະ ຊ່ວຍໃຫ້ຄາຍຄຽດໄດ້ດີ.

## 4. ຂໍ້ມູນຈາກການໄປຢ້ຽມເຮືອນ

### 4.1.ຈາກການສຳພາດ ແລະ ການສັງເກດ

ພົບວ່າ ທ້າວ ບີ ອາໄສຢູ່ເຮືອນເປັນອາຄານ ສີຫຼຽມພື້ນທີ່ສູນກາງອາຄານປັບແຕ່ງເປັນສນາມບາດເກັດບອນທີນາຍບີກັບເພື່ອນໆພາຍໃນແຟນຕາໃຊ້ຫລິ້ນ ເຕະບອນ ແລະ ເຕະກະຕໍ້ ຫລື ເຮັດກິດຈະກຳອື່ນໆນັ່ງຫລິ້ນພົບປະກັບເພື່ອນໆ ອາຄານມີ 2 ຊັ້ນ ທ້າວ ບີ ກັບອ້າຍອາໄສຢູ່ຊັ້ນ 2 ກັບອ້າຍ ແລະ ແມ່ ບໍລິເວນດ້ານໜ້າເຮືອນມີຮ້ານອາຫານ ແລະ ຮ້ານຄາລາໂອເກະຫຼາຍຮ້ານລຽນຕາມຖະໜົນທາງເຂົ້າມາໃນເຮືອນ ພາຍໃນຫ້ອງພັກຂອງນາຍບີມີຫ້ອງນອນ 2 ຫ້ອງ ຫ້ອງຮັບແຂກຢູ່ສ່ວນກາງໃຊ້ພື້ນທີ່ດ້ານຫລັງເປັນຫ້ອງຄົວ ເຄື່ອງໃຊ້ຕ່າງໆຖືກຈັດວາງໄວ້ຢ່າງເປັນລະບຽບສະພາບທົ່ວໄປສະອາດພໍໃຊ້ທ້າວບີບໍ່ຄ່ອຍໄດ້ເວົ້າ ຫລື ເຮັດກິດຈະກຳກັບອ້າຍເພາະຕອນກາງເວັນເປັນເວລາ ພັກຜ່ອນຂອງອ້າຍເພາະເຮັດວຽກຕອນກາງຄືນ

### 4.2. ຈາກການສຳພາດແມ່ຂອງທ້າວ ບີ

ພົບວ່າ ທ້າວ ບີ ບໍ່ຄ່ອຍປຶກສາບັນຫາເລື່ອງສ່ວນຕົວເປັນເດັກຂີ້ດື້ບໍ່ຄ່ອຍເຊື່ອຟັງໃຜຕິດໝູ່ເພື່ອນຫລາຍ ເຊື່ອໝູເພື່ອນເວລາໝູ່ເພື່ອນຊວນອອກໄປທ່ຽວໃນມື້ພັກ ສ່ວນຫລາຍບໍ່ເຄີຍປະຕິເສດໝູ່ເພືອນເລີຍ ເມື່ອມີບັນຫາເລື່ອງທະເລາະວິວາດທີ່ໂຮງຮຽນເກີດຂຶ້ນ ຈຶ່ງໄດ້ອົບຮົມລູກວ່າບໍ່ຄວນເຮັດອີກ ແມ່ກັບທ້າວ ບີ ບໍ່ຄ່ອຍມີກິດຈະກຳຮ່ວມກັນເພາະແມ່ຕ້ອງອອກໄປເຮັດວຽກແຕ່ເຊົ້າ ເລີກວຽກກັບເຮືອນປະມານ 18.00 ພັກວຽກສະເພາະວັນອາທິດຕົນເອງຈະເຮັດວຽກເຮືອນ ສ່ວນທ້າວ ບີນັ້ນຈະອອກໄປຫລິ້ນກັບໝູ່ເພື່ອນໆທີ່ແຫ່ງອື່ນໆ...

**4.3.** ຈາກການສຳພາດອ້າຍຂອງທ້າວ ບີ

ພົບວ່າບໍ່ຄ່ອຍສະໜິດສະໜົມກັນເທົ່າທີ່ຄວນເພາະຕົນເອງຈະເຮັດວຽກໃນຊ່ວງເວລາກາງຄືນກັບເຮືອນໃນຕອນເຊົ້າເຖິງເຮືອນເວລາປະມານ 05.00 ເຄີຍຜິດກັນໃນບາງຄັ້ງເລື່ອງ ຢາກໃຫ້ທ້າວ ບີ ຊ່ວຍເຫລືອວຽກເຮືອນບໍ່ຢາກໃຫ້ອອກໄປທ່ຽວກັບໝູ່ເພື່ອນໃນວັນພັກເສົາ ແລະ ອາທິດ.

ຈາກການໄຢ້ຽມບ້ານຂອງ ທ້າວບີ ພໍສະຫລຸບໄດ້ວ່າ ສະຖານທີ່ອາດຈະຄັບແຄບ, ບໍລິເວນໂດຍອ້ອມຕົວອາຄານບໍ່ຄ່ອຍສະອາດຮຽບຮ້ອຍ ມີຜູ້ພັກອາໄສຄ່ອນຂ້າງຫນາແຫນ້ນ ພາຍໃນຫ້ອງພັກອາດຈະມີຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສະອາດພໍໃຊ້ໄດ້ ສະມາຊິກໃນຄອບອົບຄົວຄ່ອນຂ້າງຫ່າງເຫີນ.

## 5. ຂໍ້ມູນຈາກຜົດລະບຽບສະສົມ

ຂໍ້ມູນຈາກລະບຽບສະສົມພົບວ່າທ້າວບີມີຜົນການຮຽນຕ່ຳ, ບໍ່ມີບັນຫາດ້ານສຸກຂະພາບ, ພໍ່ເສຍຊີວິດ ອາໄສຢູ່ກັບແມ່ ແລະ ອ້າຍ ປັດຈຸບັນອາໄສຢູ່ໃນເຮືອນຂອງຕົນເອງ.

## 6. ຂໍ້ມູນຈາກບັນທຶກປະຈຳວັນ

ຈາກການບັນທຶກປະຈຳວັນ ຕະຫລອດໄລຍະເວລາ 1 ອາທິດພົບວ່າທ້າວບີ ມີກິດຈະກຳປະຈຳວັນຄ້າຍຄືກັນ ຄື ຕື່ນນອນເວລາ 06.30 ຈາກນັ້ນເຮັດພາລະກິດສ່ວນຕົວແລ້ວເດີນທາງໄປໂຮງຮຽນຕອນເລີກ ຮຽນຊ້ອມຫຼິ້ນກິລາທີ່ໂຮງຮຽນ ແລະ ໄປຍ່າງຫລິ້ນທີ່ເດີ່ນອີງແກ້ວ, ກັບບ້ານຮັບປະທານອາຫານແລງແລ້ວຫລິ້ນເກມອ໋ອນໄລຣເວລາ 18.00-20.00 ແລ້ວເບິ່ງໂທລະທັດ ເຂົ້ານອນເວລາ 22.00.

ຈາກການບັນທຶກປະຈຳວັນ ສະຫລຸບໄດ້ວ່າ ທ້າວ ບີ ມັກຫລິ້ນກິລາທີໂຮງຮຽນກັບໝູ່ເພືອນໄປຍ່າງຫລິ້ນທີ່ເດີ່ນສວນອີງແກ້ວບໍ່ມີການທົບທວນບົດຮຽນ ຫລື ເຮັດວຽກບ້ານໃຊ້ເວລາວ່າງໄປກັບການຫຼິ້ນເກມອ໋ອນໄລຣ.

## 7. ຂໍ້ມູນດ້ານພຶດຕິກຳຄວາມຮຸນແຮງ

ຈາກການສຳພາດ ທ້າວ ບີ ເລົ່າເຫດການທີ່ກຽວກັບພຶດຕິກຳຄວາມຮຸນແຮງຂອງຕົນເອງໃນໂຮງຮຽນວ່າຖືກແຊວເລື່ອງຜູ້ຍິງ ແລະ ຜິດໃຈກັນຫຼາຍຄັ້ງກັບນັກຮຽນຫ້ອງອື່ນເຫດເກີດທີ່ສະໜາມບານເຕະໃນຊ່ວງເວລາພັກກາງວັນຖືກເຂົາເບິ່ງໜ້າຫຼາຍຄັ້ງກໍທົນບໍ່ໄຫວຈຶ່ງຍ່າງເຂົ້າໄປຖາມວ່າມີບັນກາຫຍັງບໍ່ເທົ່ານັ້ນ ແລ້ວເຂົາກໍຕ່ອຍເຂົ້າທີ່ໜ້າຂອງທ້າວ ບີ ທ້າວ ບີຈຶ່ງຕ່ອຍກັບ ແລະ ໃນຂະນະນັ້ນໝູ່ເພື່ອນຂອງທ້າວ ບີ ກໍເຂົ້າມາຊ່ວຍ ຈາກນັ້ນໝູ່ເພື່ອນຂອງຝ່າຍກົງກັນຂ້າມຈຶ່ງເຂົ້າມາລຸມທຳຮ້າຍກັນທັງສອງຝ່າຍມີຈຳນວນຄົນເທົ່າໆກັນຄືປະມານ ສິບກ່ວາຄົນ.

ຈາກນັ້ນ ທ້າວ ບີ ເລົ່າວ່າອາຈານຝ່າຍປົກຄອງເຂົ້າມາຫ້າມ ແລະ ພາໄປເຂົ້າຫ້ອງປົກຄອງລົງບັນທຶກ ແລະ ຖືກຕີພ້ອມທັງອົບຮົມດ້ານພຶດຕິກຳ ທ້າວ ບີ ບອກວ່າຕົນເອງບໍ່ໄດ້ເປັນຄົນຜິດເພາະອີກຝ່າຍ

ເປັນຄົນເລີ່ມ ກ່ອນແຕ່ເມື່ອມີເລື່ອງກັນແລ້ວອາຈານຈະລົງໂທດຄືກັນໝົດ ແລະ ຕົນເອງນັ້ນບໍ່ມັກໄປຫາເລື່ອງໃຜກ່ອນ ແຕ່ຖ້າມີໃຜມາຫາເລື່ອງຈະບໍ່ຄອນ ທ້າວ ບີ ບອກອີກວ່າເລື່ອງທະເລາະວິວາດຫຼາຍຄັ້ງອາດຈະບໍ່ແມ່ນເລື່ອງຂອງເຮົາມັກມີສາເຫດມາຈາກໝູ່ເພື່ອນ ຖ້າໝູ່ເພື່ອນມີເລື່ອງກໍຕ້ອງເຂົ້າໄປຊ່ວຍ ທ້າວ ບີ ບອກວ່າການເຂົ້າຫ້ອງປົກຄອງກໍເຮັດໃຫ້ກັງວົນເລື່ອງຖືກໄລ່ອອກຈາກໂຮງຮຽນເພາະຖ້າໃຜບໍ່ເຊື່ອຟັງ ແລະ ມີການທະເລາະວິວາດຫຼາຍຄັ້ງອາຈານຈະໃຫ້ຂຽນໃບລາອອກຕອນນີ້ ທ້າວ ບີ ໃກ້ຈະສອບເສັງຄວນລຶກລ້ຽງທີ່ຈະໃຊ້ຄວາມຮຸນແຮງທ້າວ ບີ ບອກວ່າພະຍາຍາມຢ່າງໜີໃຫ້ໄກທີ່ສຸດ ຖ້າຫາກມີໃຜທະເລາະວິວາດເພາະ ຍ້ານຈະຖືກລູກຫຼົງໄປນຳຖ້າຖືກອາຈານຈັບໄດ້ແລ້ວມັນສິ່ງຜົນດີຕໍ່ເຂົາເອງ.

- **ການວິເຄາະຂໍ້ມູນ**

ຈາກການໃຊ້ເຕັກນິກການລວບລວມຂໍ້ມູນທັງ 6 ເຕັກນິກໄດ້ແກ່ ແບບສອບຖາມດ້ານສ່ວນບຸກຄົນ, ແບບສັງເກດ, ການຢ້ຽມບ້ານ, ລະບຽນບສະສົມ, ບັນທຶກປະຈຳວັນ ແລະ ການສຳພາດທັງ 3 ດ້ານ ຄື ດ້ານສ່ວນຕົວ, ດ້ານຄອບຄົວ ແລະ ດ້ານສັງຄົມ ສາມາດສະຫລຸບ ແລະ ວິເຄາະຂໍ້ມູນສາເຫດທີ່ເປັນແນວໂນ້ມຂອງການເກີດພຶດຕິກຳຄວາມຮຸນແຮງຂອງ ທ້າວ ບີ ໄດ້ດັ່ງຕໍ່ໄປນີ້:

4. ສາເຫດດ້ານສ່ວນຕົວ

ຈາກການສຳພາດ ແລະ ການສັງເກດເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ ທ້າວ ບີ ມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນເກີດຈາກຕົວຂອງ ທ້າວ ບີເອງຄືມີທັດສະນະຄະຕິກ່ຽວກັບພຶດຕິກຳການໃຊ້ ຄວາມຮຸນແຮງວ່າເປັນທີ່ຍອມຮັບໃນຫໝູ່ເພື່ອນ ເປັນການໃຫ້ຄວາມຊ່ວຍເຫລືອໝູ່ເພື່ອນເມື່ອຖືກທຳຮ້າຍ ໃຊ້ເວລາວ່າງໄປກັບການທ່ຽວຫຼິ້ນກັບໝູ່ເພື່ອນໆປະກອບກັບອາລົມຂອງໄວລຸ້ນທີ່ໂມໂຫງ່າຍຂາດຄວາມອົດທົນອົດກັ້ນໃຫ້ຄວາມສຳຄັນກັບໝູ່ເພື່ອນຫລາຍຕ້ອງເຂົ້າໄປຊ່ວຍເຫຼືອເພື່ອນເມື່ອມີເຫດທະເລາະວິວາດກັນ.

5. ສາເຫດດ້ານຄອບຄົວ

ຈາກການສັງເກດການສຳພາດ ແລະ ການຢ້ຽມຢາມເຮືອນເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ ທ້າວ ບີ ມີພຶດຕິກາຄວາມຮຸນແຮງໃນໂຮງຮຽນເກີດຈາກສະພາບທາງຄອບຄົວທີ່ຂາດຄວາມຮັກຄວາມອົບອຸ່ນຈາກພໍ່ທີ່ເສຍໄປຕັ້ງແຕ່ ທ້າວ ບີອາຍຸໄດ້ພຽງ 3 ປີ ແມ່ຈຶ່ງຮັບພາລະທີ່ຕ້ອງເຮັດວຽກຫາເງິນລ້ຽງ ທ້າວ ບີກັບອ້າຍໂດຍລຳພັງເຮັດໃຫ້ບໍ່ມີເວລາເອົາໃຈໃສ່ເທົ່າທີ່ຄວນສຳພັນທີ່ຫ່າງເຫີນເພາະຕ່າງຄົນຕ່າງມີພາລະໜ້າທີ່ຂອງຕົນເອງຄອບຄົວບໍ່ສາມາດໃຫ້ຄວາມຮັກຄວາມອົບອຸ່ນຢ່າງພຽງພໍ.

6. ສາເຫດທາງສັງຄົມ

ຈາກການສຳພາດ ແລະ ການສັງເກດເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ ທ້າວບີມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນເກີດຈາກອິດທິພົນຂອງກຸ່ມໝູ່ເພື່ອນທ້າວບີໃຫ້ຄວາມສຳຄັນກັບໝູ່ເພື່ອນຫລາຍ ເມື່ອໝູ່ເພື່ອນມີເລື່ອງຜິດກັນ ທ້າວບີຕ້ອງເຂົ້າໄປມີສ່ວນຮ່ວມທຸກຄັ້ງ ທ້າວບີໄດ້ຮັບຊົມພາບ

ກ່ຽວກັບນັກຮຽນຕີກັນທາງໂທລະສັບເລື້ອຍໆຈົນເກີດຄວາມຊິນຊາ ແລະ ມີທັດສະນະຄະຕິຕໍ່ພາບທີ່ໄດ້ຮັບຊົມວ່າຄວາມຮຸນແຮງຂອງໄວລຸ້ນເປັນເລື່ອງທຳມະດາ ທ້າວບີໃຊ້ເວລາໃນການຫລິ້ນເກມອອນໄລຣທີ່ມີເນື້ອໃນກ່ຽວຂ້ອງກັບຄວາມຮຸນແຮງວັນລະ 2 ຊົ່ວໂມງ ຈຶ່ງເປັນແນວໂນ້ມໃຫ້ ທ້າວ ບີຊຶມຊັບຮັບເອົາພຶດຕິກຳຄວາມຮຸນແຮງນັ້ນໄວ້ພາຍໃນຕົນເອງ ແລະ ຍັງສົ່ງຜົນໃຫ້ໃຫ້ ທ້າວບີກັບສະມາຊິກໃນຄອບຄົວມີຄວາມສຳພັນທີ່ຫ່າງເຫີນ.

- ແນວທາງໃນການຊ່ວຍເຫລືອ

ຈາກການວິເຄາະແນວໂນ້ມທີ່ເປັນສາເຫດຂອງການເກີດພຶດຕິກຳຄວາມຮຸນແຮງຂອງ ທ້າວບີ ທັ້ງ 3 ດ້ານ ໄດ້ແກ່ ດ້ານຕົນເອງ, ດ້ານຄອບຄົວ ແລະ ດ້ານອິດທິພົນທາງສັງຄົມ ຜູ້ວິໄຈໄດ້ດຳເນີນການຫາແນວທາງ ຊ່ວຍເຫຼືອດັ່ງຕໍ່ໄປນີ້:

1. ການຊ່ວຍເຫຼືອທີ່ໂຮງຮຽນ

1.1 ໃຫ້ຄຳປຶກສາແນະນຳແນວທາງໃຫ້ມີການປັບປ່ຽນພຶດຕິກຳໃຫ້ມີຄວາມເໝາະສົມ ແລະ ມີຄວາມຮັບຜິດຊອບຮູ້ເຖິງຜົນເສຍຂອງພຶດຕິກຳຄວາມຮຸນແຮງຂອງຕົນເອງມີຄວາມຮັບຜິດຊອບໃນຖານະລູກ ແລະການເປັນນັກຮຽນ ໃຫ້ຄວາມໝັ້ນໃຈ ແລະ ໃຫ້ກຳລັງໃຈຕະຫລອດຈົນເອົາໃຈໃສ່ຢ່າງໃກ້ຊິດກັບ ທ້າວ ບີ ເພື່ອໃຫ້ມີຄວາມອົບອຸ່ນເຊື່ອໝັ້ນໃນຕົນເອງສາມາດປັບປຸງພຶດຕິກຳໃຫ້ມີຄວາມເໝາະສົມຫຼຸດພຶດຕິກຳຄວາມຮຸນແຮງ.

1.2 ຂໍຄວາມຊ່ວຍເຫລືອຈາກໝູ່ເພື່ອນໃນຫ້ອງຮຽນໂດຍສະເພາະໝູ່ເພື່ອນສະໜິດຂອງ ທ້າວ ບີ ເມື່ອມີເວລາວ່າງຄວນເຮັດກິດຈະກຳທີ່ສ້າງສັນແທນທີ່ຈະໃຊ້ເວລາສ່ວນໃຫຍ່ໄປກັບການຍ່າງທ່ຽວໃນແຫ່ງອື່ນໆ ຫລື ຫຼິ້ນເກມອອນໄລຣທີ່ມີເນື້ອຫາຄວາມຮຸນແຮງ.

2. ການຊ່ວຍເຫຼືອຢູ່ເຮືອນມີດັ່ງຕໍ່ໄປນີ້

2.1 ປຶກສາບັນຫາທີ່ເກີດຂຶ້ນກັບຜູ້ປົກຄອງຢູ່ເຮືອນຂອງຜູ້ຮັບການສຶກສາເພື່ອໃຫ້ເຂົ້າໃຈໃນຕົວທ້າວ ບີ ຫລາຍຂຶ້ນຂໍໃຫ້ແມ່ກັບອ້າຍໃຫ້ຄວາມຮັກຄວາມອົບອຸ່ນ ແລະ ໃຫ້ເວລາກັບທ້າວບີໃຫ້ຫລາຍຂຶ້ນ.

- ການທຳນາຍຜົນ

ຈາກການສຶກສາບັນຫາຂອງທ້າວບີພົບວ່າການມີພຶດຕິກຳຄວາມຮຸນແຮງຂອງທ້າວບີນັ້ນມີແນວທາງ ໃນການຊ່ວຍເຫລືອໃຫ້ປັບປຸງພຶດຕິກຳທີບໍ່ເໝາະສົມໄດ້ຫາກທ້າວບີໄດ້ຮັບຄວາມຮັກ ແລະ ການເອົາໃຈໃສ່ ໃຫ້ກຳລັງໃຈຈາກຄອບຄົວຫລາຍຂຶ້ນຕະຫລອດຈົນສະມາຊິກໃນະຄອບຄົວໃຫ້ຄວາມຮ່ວມມືໃນແນວທາງການຊ່ວຍເຫລືອເປັນຢ່າງດີ.

- ຂໍ້ສະເໜີແນະ

4. ຂໍ້ສະເໜີແນະສຳລັບຜູ້ຮັບການສຶກສາ

ທ້າວບີຄວນທົບທວນຄືນວ່າພຶດຕິກຳການໃຊ້ຄວາມຮຸນແຮງນັ້ນເປັນພຶດຕິກຳທີ່ບໍ່ເໝາະສົມ ແລະ ສິ່ງຜົນເສຍຕົນເອງ ແລະ ສະມາຊິກໃນຄອບຄົວ ຄວນຫາເວລາເວົ້າກັບຜູ້ປົກຄອງນຳ ເພື່ອຄວາມໃກ້ຊິດ ແລະ ສ້າງບັນຍາກາດພາຍໃນບ້ານໃຫ້ມີຄວາມອົບອຸ່ນເລືອກທີ່ຈະປະຕິເສດໝູ່ເພື່ອນເວລາໝູ່ເພື່ອນມີເລື່ອງຕີກັນກັບ ຄົນອື່ນເລືອກຄົບໝູ່ເພືອນທີ່ດີ ແລະ ມີກິດຈະກຳທີ່ສ້າງສັນຮ່ວມກັນ ແລະ ຂໍໃຫ້ປະຕິບັດຕາມແນວທາງໃນການຊ່ວຍເຫຼືອຢ່າງຈິງຈັງ.

2. ຂໍ້ສະເໜີແນະສຳລັບຜູ້ທີ່ກ່ຽວຂ້ອງມີດັ່ງຕໍ່ໄປນີ້

2.1 ສະມາຊິກໃນຄອບຄົວຄວນໃຫ້ກຳລັງໃຈໃນສິ່ງທີ່ທ້າວບີເຮັດໄດ້ດີ ເຊັ່ນ ການຫລິ້ນກິລາເພື່ອໃຫ້ທ້າວ ບີ ເກີດຄວາມພາກພູມໃຈໃນຕົນເອງໃຫ້ກຳລັງໃຈເມື່ອປັບປຸງພຶດຕິກຳໃຫ້ດີກຂຶ້ນ ເພື່ອສ້າງຄວາມໝັ້ນໃຈໃນຕົນເອງໃຫ້ຄຳປຶກສາກັບລູກເມືອມີບັນຫາ.

2.2 ອາຈານປະຈຳຊັ້ນແນະແນວ ແລະ ອາຈານປະຈຳວິຊາ ຄວນໃຫ້ຄວາມສົນໃຈ ແລະ ດູແລຢ່າງຕໍ່ເນື່ອງ ແລະ ເຂົ້າໃຈຍອມຮັບຄວາມແຕກຕ່າງລະຫວ່າງບຸກຄົນຄວນໃຫ້ຄວາມຮັກກັບເດັກແບບຈິງໃຈ ເພື່ອໃຫ້ເກີດຄວາມໄວ້ວາງໃຈ ເຊື່ອໃຈບໍ່ຢ້ານຄູ ກ້າທີ່ຈະປຶກສາເລື່ອງພຶດຕິກຳຄວາມຮຸນແຮງຊົມເຊີຍ ແລະ ໃຫ້ກຳລັງໃຈເມືອທ້າວບີສາມາດປັບປຸງພຶດຕິກຳຂອງຕົນເອງໃຫ້ດີຂຶ້ນ.

2.3 ໝູ່ເພື່ອນຂອງທ້າວບີຄວນຄິດວ່າການຍົກພວກລຸມທຳຮ້າຍກັນເປັນພຶດຕິກຳທີບໍ່ເໝາະສົມ ແລະ ທົບທວນເຖິງຜົນເສຍທີ່ຈະຕາມມາ ແລະ ໃຫ້ກຳລັງໃຈກັນ ແລະ ກັນທີ່ຈະຫຼຸດພຶດຕິກຳການທະເລາະວິວາດ ເຮັດກິດຈະກຳທີ່ສ້າງສັນເມື່ອມີເວລາວ່າງ.

## ກໍລະນີສຶກສາຄົນທີ 7 ທ້າວ ຈອນນີ ( ນາມສົມມົດ )

ທ້າວ ນິດ ໄລຍະເວລາທີ່ສຶກສາຕັ້ງແຕ່ວັນທີ 23 ກັນຍາ 2018 ເຖິງ ວັນທີ 29 ກັນຍາ 2018.

- **ລັກສະນະທົ່ວໄປ**

ຈາກການສັງເກດພົບວ່າ ທ້າວ ນິດເປັນຄົນຮູບຮ່າງຜອມຕົວນ້ອຍຜິວຂາວແຕ່ງຕົວສະອາດຮຽບຮ້ອຍ ໃນຂະນະໃຫ້ສຳພາດເວົ້າຈາສຸພາບແຕ່ສຽງຄ່ອນຂ້າງເບົາ ແຕ່ມີຄວາມຊັດເຈນໃນການຕອບທຸກຄັ້ງໃນໄລຍະທຳອິດບໍ່ຄ່ອຍໃຫ້ຂໍ້ມູນດ້ານທະເລາະວິວາດເທົ່າໃດ ແຕ່ເມື່ອໄດ້ພົບກັນເລື່ອຍໆຂຶ້ນທ້າວ ນິດຈຶ່ງເລີ່ມມີຄວາມໄວ້ວາງໃຈ ແລະ ໃຫ້ຂໍ້ມູນຢ່າງຕໍ່ເນື່ອງດ້ວຍດີຕະຫລອດໄລຍະເວລາໃນການສຳພາດ.

ຈາກການໃຊ້ເຕັກນິກການລວບລວມຂໍ້ມູນທັງ 6 ເຕັກນິກ ໄດ້ແກ່ ແບບສອບຖາມດ້ານສ່ວນບຸກຄົນ, ແບບສັງເກດ, ການຢ້ຽມຢາມບ້ານ, ລະບຽບສະສົມ, ບັນທຶກປະຈຳວັນ ແລະ ການສຳພາດດັ່ງ 3 ດ້ານຄື ດ້ານສ່ວນຕົວ, ດ້ານະຄອບຄົວ ແລະ ດ້ານສັງຄົມສາມາດສະຫລຸບ ແລະ ວິເຄາະຂໍ້ມູນໄດ້ດັ່ງນີ້:

## 1. ຂໍ້ມູນຈາກແບບສອບຖາມ

ທ້າວ ນິດ ອາຍຸ 14 ປີ ສຶກສາຢູ່ຊັ້ນມັດທະຍົມສຶກສາປີທີ 2 ມີອ້າຍນ້ອງ 2 ຄົນ ພັກອາໄສຢູ່ກັບຍາດພີ່ນ້ອງ.

## 2. ຂໍ້ມູນຈາກແບບສັງເກດ

ໃນການວິໄຈໃນຄັ້ງນີ້ຜູ້ວິໄຈໄດ້ເຮັດການສັງເກດໃນຫ້ອງຮຽນວິຊາພາສາອັງກິດວັນທີ 23 ກັນຍາ 2018 ໃນການສັງເກດໃຊ້ເວລາ 30 ນາທີ ພົບວ່າທ້າວ ນິດ ບໍ່ຄ່ອຍສົນໃຈໃນການຮຽນໂສກັນກັບໝູ່ເພື່ອນໃນຂະນະຮຽນບໍ່ຄ່ອຍມີສະມາທິໃນການຮຽນເວົ້າຈາບໍ່ສຸພາບແຂງກະດ້າງກັບໝູ່ເພື່ອນ ແລະ ໄດ້ເຮັດການສັງເກດ ນອກຫ້ອງຮຽນ ເວລາ 12.30-13.00. ໃນວັນດຽວກັນ ພົບວ່າທ້າວນິດນັ່ງໂສກັນຫລິ້ນກັບໝູ່ເພື່ອນທີ່ບໍລິເວນດຕະຫີນໜ້າອາຄານຮຽນ ແລະ ເບິ່ງນັກຮຽນຄົນອື່ນໆຍ່າງຜ່ານໄປມາໃນບໍລິເວນັ້ນຈົນເຖິງເວລາເຂົ້າຮຽນ.

## 3. ຂໍ້ມູນຈາກການສຳພາດ

### 3.1. ຂໍ້ມູນດ້ານບຸກຄົນ

#### 3.1.1 ປະຫວັດສ່ວນຕົວ

ຈາກການສຳພາດທ້າວ ນິດ ເຮັດໃຫ້ຮູ້ວ່າ ທ້າວ ນິດມີອາຍຸ 14 ປີ ກຳລັງສຶກສາຢູ່ຊັ້ນມັດທະຍົມສຶກສາປີທີ 2 ໃນມັດທະຍົມຕົ້ນສາທິດວິທະຍາໄລຄູສາລະວັນ ທ້າວ ນິດເລົ່າວ່າຜົນການຮຽນບໍ່ຄ່ອຍດີເພາະເວລາ ຮຽນບໍ່ມັກຟັງອາຈານສອນ ມັກນັ່ງໂສກັນກັບໝູ່ເພື່ອນບາງຄັ້ງກໍໜີຮຽນໄປຢູ່ເຮືອນໝູ່ເພື່ອນທີ່ຢູ່ໃກ້ກັບ ໂຮງຮຽນ ທ້າວ ນິດເລົ່າວ່າພັກອາໄສຢູ່ກັບຍາດພີ່ນ້ອງໄດ້ແກ່ ຍ່າ, ປ້າ, ລຸງ, ອາ, ອາວ ແລະ ລູກຊາຍຂອງອາ ອາຍຸ 5 ປີ ແລະ ອ້າຍ ທ້າວ ນິດຈະມັກຜິດກັບລູກຂອງອາເປັນປະຈຳເພາະຍາດກັນຫຼິ້ນເກມຄອມພິວເຕີແລ້ວອາກໍຈະຮ້າຍດ່າຕີນ ສ່ວນລຸງກັບປ້າແທ້ໆກໍມັກຜິດກັນເປັນປະຈຳ ທ້າວນິດເລົ່າວ່າຮູ້ສຶກເບື່ອຄົນໃນເຮືອນ ອ້າຍກໍມັກແກ້ງຍ່າງມາຕົບຫົວ ອ້າຍຂອງທ້າວນິດມີເລື່ອງຕີເປັນປະຈຳຈົນໂຮງຮຽນຢືນຂໍ້ສະເໜີໃຫ້ພັກການຮຽນໄວ້ ກ່ອນໃນຂະນະທີ່ຢູ່ມັດທະຍົມສຶກສາປີທີ 2 ຈົນຜ່ານມາ 1 ປີແລ້ວອ້າຍກໍບໍ່ໄດ້ກັບເຂົ້າໄປຮຽນອີກເລີຍ ບໍ່ໄດ້ເຮັດຫຍັງນອນຢູ່ເຮືອນ ແລະ ມັກອອກໄປທ່ຽວກັບໝູ່ເພື່ອນ ທ້າວນິດກັບພໍ່ແມ່ບໍ່ໄດ້ອາໄສຢູ່ດ້ວຍກັນທ້າວ ນິດ ເລົ່າວ່າ ແມ່ຢູ່ອີກບ້ານໜຶ່ງ ສ່ວນພໍ່ກໍຢູ່ຄົນລະບ້ານ ພໍ່ເດີນທາງໄປເຮັດວຽກທີ່ຕ່າງແຂວງດົນເຖິງສາມເດືອນແລ້ວບໍ່ເຄີຍໄດ້ພົບໜ້າ ຫລື ເວົ້ານຳກັນເລີຍ ທ້າວນິດຈະໄປພັກຢູ່ກັບແມ່ໃນວັນເສົາ ແລະ ຈົນເຖິງຍາມແລງຂອງວັນອາທິດເພາະ ແມ່ໄປເຊົ່າຫ້ອງພັກໃກ້ກັບບ່ອນເຮັດວຽກແມ່ມີອາຊີບເປັນພະນັກງານບໍລິສັດ ທ້າວນິດມີທີ່ພັກອາໄສບໍ່ໄກຈາກໂຮງຮຽນຫລາຍປານໃດເດີນທາງໂດຍລົດຖີບໃຊ້ເວລາປະມານ 15 ເຖິງ 20 ນາທີ ເມື່ອນທ້າວນິດ ມາເຖິງໂຮງຮຽນກ່ອນເວລາເຂົ້າແຖວເຄົາລົບທົງຊາດ ທ້າວນິດຈະໄປລວມກຸ່ມກັບໝູ່ເພື່ອນກ່ອນທີ່ເຮືອນໝູ່ເພືອນ ຊຶ່ງເປັນທີ່ຢູ່ພັກອາໄສທີ່ຢູ່ບໍລິເວນໃກ້ຄຽງກັບໂຮງຮຽນ ທ້າວນິດເລົ່າວ່າໝູ່ເພື່ອນຄົນນີ້ລາວທະກະລາອອກຈາກໂຮງຮຽນອາທິດຫຼັງທີ່ແລ້ວ ເພາະມີເລື່ອງຕີກັນໃນໂຮງຮຽນຫຼາຍຄັ້ງ ແຕ່ກໍ່ຍັງຄົບເປັນເພື່ອນທີ່ສະໜິດຄືເກົ່າ ຕົນເອງເຄີຍ

ຊ່ວຍໝູ່ເພື່ອນຄົນນີ້ຕີກັນກັບນັກຮຽນກຸ່ມອື່ນໃນໂຮງຮຽນ ແລະ ບາງຄັ້ງກໍຕາມໄປຊ່ວຍເພື່ອນຄົນນີ້ເວລາເຂົາຊວນໄປມີເລື່ອງຕີກັນກັບໂຮງຮຽນອື່ນ ທ້າວນິດໄປບ້ານເພື່ອນຄົນນີ້ກັບເພື່ອນຄົນອື່ນໆໃນກຸ່ມ 7 ຄົນ ຈາກນັ້ນທຸກຄົນກໍຈະຍ່າງມາໂຮງຮຽນພ້ອມກັນຕອນເລີກຮຽນກ່ອນກັບບ້ານ ທ້າວນິດກັບໝູ່ເພື່ອນກໍຈະໄປລວມຕົວກັນທີ່ເຮືອນໝູ່ອີກຄັ້ງເພື່ອໂສກັນວ່າຈະໄປເຮັດຫຍັງກັນກ່ອນກັບບ້ານສ່ວນຫລາຍທ້າວນິດກັບເພື່ອນກໍຈະໄປຫລິ້ນເກມອອນໄລກັບເຮືອນເວລາປະມານ 17.00.

**3.1.2 ດ້ານທັດສະນະຄະຕິຕໍ່ພຶດຕິກຳຄວາມຮຸນແຮງ**

ຈາກການສຳພາດພົບວ່າທ້າວນິດມີທັດສະນະຄະຕິວ່າເລື່ອງພຶດຕິກຳຄວາມຮຸນແຮງຂອງນັກຮຽນເປັນເລື່ອງທຳມະດາເຮັດໃຫ້ເປັນທີ່ຍອມຮັບໃນກຸ່ມເພື່ອນເປັນການຊ່ວຍເຫລືອໝູ່ເພື່ອນສະແດງເຖິງຄວາມຮັກ ຄວາມສາມັກຄີຕໍ່ກັນ.

**3.1.3 ການໃຊ້ເວລາວ່າງ**

ຈາກການສຳພາດພົບວ່າທ້າວນິດມັກໃຊ້ເວລາວ່າງຍ່າງຫລິ້ນໃນຕະຫລາດນັດກັບໝູ່ເພື່ອນ ແລະຫຼິ້ນເກມອອນໄລ.

**3.2. ຂໍ້ມູນດ້ານຄອບຄົວ**

ທ້າວນິດມີອ້າຍນ້ອງຮ່ວມກັນ 2 ຄົນ ອາໄສຢູ່ກັບຍາດ ຄື ຍ່າ, ປ້າ ແລະ ລຸງ ອາກັບອາວ ແລະລູກ ຊາຍຂອງອາອາຍຸ 5 ປີ ທ້າວນິດເລົ່າວ່າ ອ້າຍຂອງລາວນັ້ນຮຽນບໍ່ຈົບຊັ້ນມັດທະຍົມຕົ້ນທີ່ໂຮງຮຽນອື່ນ ອາຈານ ໃຫ້ພັກການຮຽນ ແຕ່ອ້າຍບໍ່ຍອມກັບເຂົ້າໄປຮຽນອີກ ຈຶ່ງຕ້ອງຂຽນໃບລາອອກຈາກໂຮງຮຽນເມື່ອ 1 ປີມາແລ້ວ ປ້າກັບລຸງກໍຜິດກັນເປັນປະຈຳ ສ່ວນອາກັບອາວກໍມັກຮ້າຍ ແລະ ດ່າທ້າວນິດເພາະທ້າວນິດກັບລູກຊາຍຂອງອາມັກຍາດກັນຫລິ້ນເກມຄອມພິວເຕີກັນສະເໝີເຮັດໃຫ້ທ້າວນິດັ້ນເບື່ອໜ່າຍເຮືອນຫລາຍທ້າວນິດເລົ່າວ່າມັກໄປຢູ່ກັບແມ່ໃນວັນເສົາ ແລະ ມື້ອາທິດແມ່ຍ້າຍອອກຈາກເຮືອນໄປເຊົ່າເຮືອນຢູ່ໃກ້ກັບບ່ອນເຮັດວຽກແມ່ມີອາຊີບເປັນພະນັກງານບໍລິສັດເອກຊົນແຫ່ງໜຶ່ງ ສ່ວນພໍ່ນັ້ນເຮັດວຽກຢູ່ຕ່າງແຂວງ.

**3.3. ຂໍ້ມູນທາງສັງຄົມ**

**3.3.1 ດ້ານໝູ່ເພື່ອນ**

ຈາກການສຳພາດທ້າວນິດເລົ່າວ່າ ມີເພື່ອນສະໜິດ 7 ຄົນ ໝູ່ເພື່ອນທຸກຄົນຮັກກັນຫລາຍມີຄວາມຈິງໃຈຕໍ່ກັນເວລາມີບັນຫາຫຍັງໝູ່ເພື່ອນກໍຈະຄອຍຖ້າຊ່ວຍເຫລືອກັນທຸກຢ່າງ ເວລາຢູ່ໃນຫ້ອງຮຽນທ້າວນິດເລົ່າວ່າຕົນເອງກັບໝູ່ເພື່ອນຈະເບື່ອໜ່າຍການຮຽນກໍຈະນັ່ງໂສກັນຢູ່ໃນຫ້ອງ ອາຈານບອກໃຫ້ງຽບກໍບໍ່ຄ່ອຍເຊື່ອຟັງບາງຄັ້ງກໍໜີຮຽນເພາະຄວາມເບື່ອໜ່າຍ ບາງຄັ້ງເພື່ອນຈະຊວນໄປມີເລື່ອງທະເລາະວິວາດຕີກັນກັບນັກຮຽນຄົນອື່ນ ຊຶ່ງການຍົກພວກທຳຮ້າຍກັນຂອງນັກຮຽນທັງສອງສະຖາບັນນີ້ທ້າວນິດບອກວ່າມັນເກີດຂຶ້ນເລື້ອຍໆ ສ່ວນຫລາຍກໍແຖວທີ່ພັກອາໄສ ແລະ ບໍລິເວນໜ້າໂຮງຮຽນ ໃນຕອນເຊົ້າກ່ອນເຂົ້າຮຽນ ແລະ ຫຼັງເລີກຮຽນ ທ້າວນິດກັບໝູ່ເພື່ອນຈະໄປລວມກັນທີ່ເຮືອນພັກຂອງເພື່ອນ

ຊຶ່ງເປັນທີ່ພັກໃກ້ກັບໂຮງຮຽນ ແລະ ຈະມັກພາກັນໄປຍ່າງຫຼິ້ນທີ່ຕະຫຼາດນັດ ບາງຄັ້ງກໍໄປຫລິ້ນເກມທີ່ຮ້ານເກມບໍລິເວນໃກ້ກັບຊຸມຊົນ ເມື່ອທ້າວນິດກັບເຖິງເຮືອນກໍຈະຕິດຕໍ່ກັບໝູ່ເພື່ອນຜ່ານທາງການຫຼິ້ນສື່ອອນໄລຣ ແລະ ຈະຫຼິ້ນເກມວັນລະປະມານ 2 ຊົ່ວໂມງ.

### 3.3.2 ຈາກການສໍາພາດ

ຈາກການສໍາພາດເພື່ອນສະໜິດທີ່ໂຮງຮຽນຂອງທ້າວ ນິດມີ 3 ຄົນ ຈາກຈໍານວນໝູ່ເພື່ອນສະໜິດທັງໝົດຈໍານວນ 7 ຄົນ ເຮັດການສໍາພາດຄົນລະ 30 ນາທີພົບວ່າທ້າວນິດເປັນຄົນຮັກໝູ່ເພື່ອນຫລາຍເວລາ ໝູ່ເພື່ອນມີບັນຫາເລື່ອງທະເລາະວິວາດຈະໃຫ້ຄວາມຊ່ວຍເຫຼືອໝູ່ເພື່ອນທຸກຄັ້ງ ມີຄວາມສະໜິດສະໜົມກັນຫລາຍບໍ່ວ່າຢູ່ທີ່ໂຮງຮຽນ ຫລື ໄປທ່ຽວຕາມຕະຫລາດນັດຈະໄປນໍາກັນຕະຫລອດເວລາເປັນຄົນທີ່ມີຄວາມຈິງໃຈກັບໝູ່ເພື່ອນ.

### 3.3.3 ຈາກການສໍາພາດອາຈານປະວິຊາ

ຈາກການສໍາພາດອາຈານປະຈໍາວິຊາ ແລະ ອາຈານປະຈໍາຊັ້ນ ມ 2  ພົບວ່າທ້າວນິດເປັນເດັກຄ່ອນຂ້າງມີຜົນການຮຽນຕໍ່າ ເວລາຢູ່ໃນຫ້ອງຮຽນບໍ່ຄ່ອຍສົນໃຈການຮຽນມັກນັ່ງໂສກັບໝູ່ເພື່ອນ ບາງຄັ້ງກໍໜີຮຽນບໍ່ຄ່ອຍໃຫ້ຄວາມຮ່ວມມືໃນການເຮັດກິດຈະກໍາ ມັກເວົ້າຈາບໍ່ສຸພາບແຂງກະດ້າງກັບໝູ່ເພື່ອນມັກຍອກໝູ່ບໍ່ມີຄວາມຮັບຜິດຊອບບໍ່ຄ່ອຍສົ່ງວຽກບ້ານທີ່ໄດ້ຮັບມອບໝາຍ.

### 3.3.4 ຈາກການສໍາພາດອາຈານຝ່າຍປົກຄອງນັກຮຽນ

ພົບວ່າທ້າວນິດມີພຶດຕິກໍາຄວາມຮຸນແຮງຕີກັນກັບນັກຮຽນໂຮງຮຽນດຽວກັນ ແລະ ນັກຮຽນຕ່າງໂຮງຮຽນມີການຕີກັນແບບຕົວຕໍ່ຕົວ ແລະ ແບບຍົກພວກລຸມທໍາຮ້າຍກັນ.

### 3.3.5 ດ້ານສື່

ຈາກການສໍາພາດພົບວ່າ ທ້າວນິດ ມັກຕິດຕາມຂ່າວນັກຮຽນຕີກັນຈາກໂທລະທັດກໍມີຄວາມຮູ້ສຶກຕື່ນເຕັ້ນ ແລະ ຮູ້ສຶກມ່ວນຢາກຕິດຕາມຂ່າວຢູ່ຕະຫຼອດເວລາ.

### 3.3.6 ດ້ານເກມອອນໄລ

ຈາກການສໍາພາດພົບວ່າ ທ້າວນິດ ຫລິ້ນເກມອ່ອນໄລຣທີ່ມີເນື້ອຫາຄວາມຮຸນແຮງຕໍ່ສູ້ກັນຖ້າເຮັດໃຫ້ອີກຝ່າຍເສຍຊີວິດຕົນເອງກໍຈະເປັນຝ່າຍຊະນະ ຫຼິ້ນທຸກມື້ ມື້ລະປະມານ 2 ຊົ່ວໂມງຕັ້ງແຕ່ເວລາປະມານ 18.00 ເຖິງ ເວລາ 20.00.

## 4. ຂໍ້ມູນຈາກການຢ້ຽມຢາມເຮືອນ

### 4.1. ຈາກການສໍາພາດ ແລະ ການສັງເກດ

ພົບວ່າບ້ານຂອງທ້າວນິດເປັນເຮືອນ 2 ຊັ້ນໃນບ້ານຄັນທະລາດມີຫຼາຍຫຼັງຄາເຮືອນໃນບໍລິເວນໃກ້ຄຽງທາງເຂົ້າບ້ານເປັນເຮືອນໄມ້ຫຼາຍຫຼັງ ມີຜູ້ຄົນຄ່ອນຂ້າງໜາແໜ້ນມີຮ້ານຂາຍເຄື່ອງຍ່ອຍຫຼາຍຮ້ານສອງຂ້າງທາງເຂົ້າຫມູ່ບ້ານ ພາຍໃນຫໝູ່ບ້ານມີເຮືອນກົງສີ່ແຢກ ເປັນຮ້ານປ້ອມແປງລົດ ບ້ານບາງຫຼັງເປີດເປັນ

ຮ້ານເກມອອນໄລຣພ້ອມດ້ວຍໂຕະສະໜຸກເກີ ມີດັ່ງເດັກນ້ອຍ ແລະ ຜູ້ໃຫຍ່ປ່ຽນກັນມາຫລິ້ນທີ່ຮ້ານເກມນີ້ພາຍໃນເຮືອນຂອງທ້າວນິດມີຄວາມສະອາດພໍໃຊ້ໄດ້ ມີເຄື່ອງໃຊ້ໄຟຟ້າ, ຕູ້ເຢັນ, ທີວີ, ເຄື່ອງສຽງ ແລະ ເຄື່ອງ ຄອມພິວເຕີ ກົງບໍລິເວນຫ້ອງຮັບແຂກຊັ້ນລຸ່ມບໍລິເວນຊັ້ນ 2 ມີ 2 ຫ້ອງນອນ ທ້າວນິດພັກຢູ່ຫ້ອງດຽວກັນກັບອ້າຍ ຊັ້ນລຸ່ມມີ 2 ຫ້ອງນອນ ແລະ ຫ້ອງນ້ຳ 2 ຫ້ອງ ຫ້ອງຄົວກິນຢູ່ບໍລິເວນພື້ນທີ່ດ້ານຫຼັງຂອງຕົວບ້ານ.

### 4.2. ຈາກການສຳພາດຍ່າຂອງທ້າວນິດ

ພົບວ່າທ້າວນິດບໍ່ຄ່ອຍປຶກສາບັນຫາເລື່ອງສ່ວນຕົວເປັນເດັກຂີ້ດື້, ບໍ່ຄ່ອຍເຊື່ອຟັງ, ບໍ່ຄ່ອຍຊ່ວຍເຫລືອວຽກເຮືອນ ເອົາແຕ່ໃຈມັກຫລິ້ນເກມຄອມພວິເຕີ ຜິດກັບັຫຼານເປັນປະຈຳ ແລະ ມີເລື່ອງຕີກັນກັບອ້າຍຫຼາຍຄັ້ງ.

### 4.3. ຈາກການສຳມພາດອ້າຍຂອງທ້າວນິດ

ພົບວ່າບໍ່ຄ່ອຍສະໜິດສະໜົມກັນເທົ່າທີ່ຄວນ ບໍ່ເຄີຍເຮັດກິດຈະກຳຮ່ວມກັນບໍ່ຄ່ອຍໄດ້ເວົ້າຈານຳກັນ ຕ່າງຄົນຕ່າງຢູ່.

ຈາກການຍ້ຽມຢາມເຮືອນຂອງທ້າວນິດ ພໍສະຫລຸບໄດ້ວ່າ ສະຖານທີ່ພັກອາໄສຄ່ອນຂ້າງສະດວກສະບາຍມີຜູ້ພັກອາໄສຄ່ອນຂ້າງໜາແໜ້ນ ຄວາມສະອາດພາຍໃນເຮືອນພັກອາໄສພໍໃຊ້ຄວາມສຳພັນພາຍໃນລະຫວ່າງສະມາຊິກໃນຄອບຄົວຄ່ອນຂ້າງຫ່າງເຫີນມີການຜິດໃຈກັນເປັນປະຈຳ.

## 5. ຂໍ້ມູນຈາກລະບຽບສະສົມ

ພົບວ່າ ທ້າວ ນິດ ມີຜົນການຮຽນຕ່ຳບໍ່ມີບັນຫາດ້ານສຸຂະພາບອາໄສຢູ່ກັບຍາດພີ່ນ້ອງ.

## 6. ຂໍ້ມູນຈາກບັນທຶກປະຈຳວັນ

ຈາກການບັນທຶກປະຈຳວັນຕະຫລອດໄລຍະເວລາ 1 ອາທິດ ພົບວ່າທ້າວນິດ ມີກິດຈະກຳປະຈຳວັນ ຄ້າຍຄືກັນ ຕື່ນນອນເວລາ 06.00 ຈາກນັ້ນເຮັດພາລະກິດສ່ວນຕົວແລ້ວເດີນທາງໄປໂຮງຮຽນກ່ອນເຂົ້າໄປ ໃນໂຮງຮຽນໄປລວມຕົວກັບໝູ່ເພື່ອນຄົນອື່ນໆທີ່ບໍລິເວນໃກ້ໂຮງຮຽນ ຕອນເລີກຮຽນໄປຍ່າງຫລິ້ນທີ່ຕະຫຼາດນັດ ກັບເຮືອນຮັບປະທານອາຫານແລງແລ້ວຫລິ້ນເກມອອນໄລຣເວລາ 18.00-20.00. ແລ້ວເຂົ້າ ນອນ.

ຈາກການບັນທຶກປະຈຳວັນ ສະຫລຸບໄດ້ວ່າ ທ້າວ ນິດ ມັກໄປຍ່າງຫລິ້ນທີ່ຕະຫຼາດນັດ ບໍ່ມີການທົບທວນບົດຮຽນ ຫລື ເຮັດວຽກບ້ານໃຊ້ເວລາວ່າງໄປກັບການຫລິ້ນເກມອອນໄລຣປະເພດທີ່ມີເນື້ອຫາຄວາມ ຮຸນແຮງ.

## 7. ຂໍ້ມູນດ້ານພຶດຕິກຳຄວາມຮຸນແຮງ

ທ້າວ ນິດ ເລົ່າວ່າໄດ້ກພວກທຳຮ້າຍກັນກັບນັກຮຽນຫ້ອງອື່ນສາເຫດມາຈາກການເບິ່ງໜ້າກັນຝ່າຍນັ້ນເປັນຄົນເລີ່ມທ້າກ່ອນນ ຈຶ່ງຕີເຂົ້າທີ່ໜ້າ ແລະ ຕາມຕົວຂອງນັກຮຽນໄວລຸ້ນອີກຝ່າຍ ສ່ວນທ້າວນິດນັ້ນກໍໄດ້ຮັບບາດແຜຊ້ຳຕາມໃບໜ້າ ບາງຄັ້ງໝູ່ເພື່ອນໃນກຸ່ມຂອງທ້າວຈະຊວນໄປມີເລື່ອງຕີກັນກັບນັກຮຽນແຫ່ງອື່ນ ບໍລິເວນລັງໂຮງຮຽນ ແລະ ຕະຫຼາດນັດທີ່ມີຜູ້ຄົນຫຼາຍຍ່າງຊື້ເຄື່ອງແຖວນັ້ນ.

- ການວິເຄາະຂໍ້ມູນ

ຈາກການໃຊ້ເຕັກນິກການລວບລວມຂໍ້ມູນທັງ 6 ເຕັກນິກໄດ້ແກ່ ແບບສອບຖາມດ້ານສ່ວນບຸກຄົນ, ແບບສັງເກດ, ການຢ້ຽມຢາມເຮືອນ, ລະບຽບສະສົມ, ບັນທຶກປະຈຳວັນ ແລະ ການສຳພາດດັ່ງ 3 ດ້ານ ຄື ດ້ານສ່ວນຕົວ, ດ້ານຄອບຄົວ ແລະ ດ້ານສັງຄົມ ສາມາດສະຫລຸບ ແລະ ວິເຄາະຂໍ້ມູນ ສາເຫດທີ່ເປັນແນວໂນ້ມຂອງການເກີດພຶດຕິກຳຄວາມຮຸນແຮງຂອງທ້າວ ນິດ ໄດ້ດັ່ງຕໍ່ນີ້:

4. ສາເຫດດ້ານຕົນເອງ

ຈາກການສຳພາດ ແລະ ການສັງເກດເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ທ້າວນິດມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນເກີດຈາກຕົວຂອງທ້າວນິດເອງຄື ມີທັດສະນະຄະຕິກ່ຽວກັບພຶດຕິກຳການໃຊ້ຄວາມຮຸນແຮງວ່າເປັນທີ່ຍອມຮັບໃນໝູ່ເພື່ອນເປັນການຊ່ວຍເຫລືອໝູ່ເພື່ອນ ເມື່ອໝູ່ເພື່ອນຖືກທຳຮ້າຍ ສະແດງເຖິງຄວາມສາມັກຄີໃນກຸ່ມໃຊ້ເວລາວ່າງໄປກັບການທ່ຽວຫຼິ້ນກັບໝູ່ເພື່ອນປະກອບກັບອາລົມຂອງໄວລຸ້ນທີ່ໂມໂຫງ່າຍຂາດຄວາມອົດທົນອົດກັ້ນໃຫ້ຄວາມສຳຄັນກັບໝູ່ເພື່ອນຫລາຍ ແລະ ມີລັກສະນະບຸກຄຸລິກທີ່ຄ່ອນຂ້າງບໍ່ຍອມໃຜອາລົມຮ້ອນບໍ່ຄ່ອຍເຊື່ອຟັງການອົບຮົມຂອງຜູ້ປົກຄອງ ແລະ ຄູອາຈານ.

5. ສາເຫດດ້ານຄອບຄົວ

ຈາກການສັງເກດການສຳພາດ ແລະ ການຢ້ຽມຢາມເຮືອນເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ທ້າວນິດມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນເກີດຈາກສະພາບທາງຄອບຄົວທີ່ຂາດຄວາມຮັກຄວາມອົບອຸ່ນຈາກສະມາຊິກໃນຄອບຄົວບັນຍາກາດພາຍໃນເຮືອນບໍ່ໜ້າຢູ່ອາໄສ ມີການຜິດໃຈກັນໃນໝູ່ອ້າຍນ້ອງຄວາມສຳພັນຂອງສະມາຊິກໃນຄອບຄົວຄ່ອນຂ້າງຫ່າງເຫີນຂີ້ດື້ບໍ່ຄ່ອຍເຊື່ອຟັງຜູ້ປົກຄອງ.

6. ສາເຫດທາງສັງຄົມ

ຈາກການສຳພາດ ແລະ ການສັງເກດທຳໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນເກີດຈາກອິດທິພົນຂອງກຸ່ມໝູ່ເພື່ອນທ້າວນິດໃຫ້ຄວາມສຳຄັນກັບໝູ່ເພື່ອນຫລາຍເມື່ອໝູ່ເພື່ອນມີເລື່ອງຕີກັນຕ້ອງເຂົ້າໄປຮ່ວມຕີທຸກຄັ້ງ ປະກອບກັບທ້າວນິດມັກຕິດຕາມຮັບຊົມພາບຂ່າວກ່ຽວກັບນັກຮຽນຕີກັນທາງໂທລະທັດເລື່ອຍໆຈົນເກີດຄວາມຊິນຊາ ແລະ ມີທັດສະນະຄະຕິຕໍ່ພາບທີ່ໄດ້ຮັບຊົມວ່າຄວາມຮຸນແຮງໃນໄວລຸ້ນເປັນເລື່ອງທຳມະດາ ທ້າວນິດໃຊ້ເວລາໃນການຫລິ້ນເກມອ່ອນໄລຣທີ່ມີເນື້ອຫາກ່ຽວຂ້ອງກັບຄວາມຮຸນແຮງ ມື້ລະປະມານ 2 ຊົ່ວໂມງຈຶ່ງເປັນແນວໂນ້ມໃຫ້ລາວຊົມ

ຊັບຮັບເອົາພຶດຕິກຳຄວາມຮຸນແຮງນັ້ນໄວ້ ແລະ ຍັງສົ່ງຜົນໃຫ້ມີຄວາມສຳພັນລະຫວ່າງສະມາຊິກໃນຄອບຄົວຫ່າງເຫີນ.

- ແນວທາງໃນການຊ່ວຍເຫຼືອ

ຈາກການວິເຄາະແນວໂນ້ມທີ່ເປັນສາເຫດຂອງການເກີດພຶດຕິກຳຄວາມຮຸນແຮງຂອງທ້າວນິດທັງ 3 ດ້ານ ໄດ້ແກ່ ດ້ານຕົນເອງ, ດ້ານຄອບຄົວ ແລະ ດ້ານອິດທິພົນທາງສັງຄົມ ຜູ້ວິໄຈໄດ້ດຳເນີນການຫາແນວທາງ ຊ່ວຍເຫຼືອດັ່ງຕໍ່ໄປນີ້:

1. ການຊ່ວຍຍເຫຼືອທີ່ໂຮງຮຽນ

1.1 ແນະແນວທາງໃຫ້ມີການປັບປ່ຽນພຶດຕິກຳໃຫ້ມີຄວາມເໝາະສົມ ແລະ ມີກວາມຮັບຜິດຊອບຮູ້ຈັກເຖິງຜົນເສຍຂອງພຶດຕິກຳຄວາມຮຸນແຮງຂອງຕົນເອງ ມີຄວາມຮັບຜິດຊອບໃນຖານະລູກ ແລະ ການເປັນນັກຮຽນໃຫ້ຄວາມໝັ້ນໃຈ ແລະ ໃຫ້ກຳລັງໃຈຕະຫລອດຈົນເອົາໃຈໃສ່ຢ່າງໃກ້ຊິດກັບທ້າວນິດເພື່ອໃຫ້ມີຄວາມອົບອຸ່ນ ເຊື່ອໝັ້ນໃນຕົນເອງສາມາດປັບປຸງພຶດຕິກຳໃຫ້ມີຄວາມເໝາະສົມຫຼຸດພຶດຕິກຳຄວາມຮຸນແຮງ.

1.2 ຂໍຄວາມຊ່ວຍເຫຼືອຈາກໝູ່ເພື່ອນໃນຫ້ອງໂດຍສະເພາະໝູ່ເພື່ອນສະໜິດຂອງທ້າວນິດເມື່ອມີເວລາວ່າງໃຫ້ເຮັດກິດຈະກຳທີ່ສ້າງສັນແທນທີ່ຈະໃຊ້ເວລາສ່ວນໃຫຍ່ໄປກັບການຍ່າງທ່ຽວຫຼິ້ນ ຫລື ຫຼິ້ນເກມອອນໄລທີ່ມີເນື້ອຫາຄວາມຮຸນແຮງ.

2. ການຊ່ວຍເຫຼືອໃນຄວບຄົວມີດັ່ງຕໍ່ໄປນີ້:

2.1 ປຶກສາບັນຫາທີ່ເກີດຂຶ້ນກັບຜູ້ປົກຄອງໃນຄວບຄົວຂອງຜູ້ຮັບການສຶກສາເພື່ອໃຫ້ເຂົ້າໃຈໃນຕົວທ້າວນິດຫລາຍຂຶ້ນຂໍໃຫ້ຜູ້ປົກຄອງໃຫ້ຄວາມຮັກຄວາມອົບອຸ່ນ ແລະໃຫ້ເວລາກັບທ້າວນິດໃຫ້ຫລາຍຂຶ້ນ.

- ການທຳນາຍຜົນ

ຈາກການສຶກສາບັນຫາຂອງທ້າວນິດພົບວ່າ ການມີພຶດຕິກຳຄວາມຮຸນແຮງຂອງລາວນັ້ນມີແນວທາງໃນການຊ່ວຍເຫຼືອໃຫ້ປັບປຸງພຶດຕິກຳທີ່ບໍ່ເໝາະສົມໄດ້ຫາກທ້າວນິດໄດ້ຮັບຄວາມຮັກ ແລະ ການເອົາໃຈໃສ່ ໃຫ້ກຳລັງໃຈຈາກຄອບຄົວຫລາຍຂຶ້ນຕະຫລອດຈົນສະມາຊິກໃນຄອບຄົວໃຫ້ຄວາມຮ່ວມມືໃນແນວທາງການຊ່ວຍເຫຼືອເປັນຢ່າງດີ.

- ຂໍ້ສະເໜີແນະ

1. ຂໍ້ສະເໜີແນະສຳລັບຜູ້ຮັບການສຶກສາ ທ້າວ ນິດຄວນທົບທວນວ່າພຶດຕິກຳການໃຊ້ຄວາມຮຸນແຮງນັ້ນເປັນພຶດຕິກຳທີ່ບໍ່ເໝາະສົມ ແລະ ສົ່ງຜົນກະທົບຕໍ່ຕົນເອງ ແລະ ຜູ້ອື່ນ ຄວນຫາເວລາເວົ້າກັບຜູ້ປົກຄອງເພື່ອຄວາມໃກ້ຊິດ ແລະ ສ້າງບັນຍາກາດພາຍໃນຄອບຕຄົວໃຫ້ມີຄວາມອົບອຸ່ນເລືອກທີ່ຈະປະຕິເສດ

ໝູ່ເພື່ອນເວລາໝູ່ເພື່ອນມີເລື່ອງຕີກັນກັບຄົນອື່ນ ເລືອກຄົບໝູ່ເພື່ອນທີ່ດີ ແລະ ມີກິດຈະກຳທີ່ສ້າງສັນ ຮ່ວມກັນ ແລະ ຂໍໃຫ້ປະຕິບັດຕາມແນວທາງໃນການຊ່ວຍເຫຼືອຢ່າງຈິງຈັງ.

2. ຂໍ້ສະເໜີແນະສຳລັບຜູ້ທີ່ກ່ຽວຂ້ອງມີດັ່ງຕໍ່ໄປນີ້

2.1 ສະມາຊິກໃນຄອບຄົວຄວນໃຫ້ກຳລັງໃຈໃນສິ່ງທີ່ທ້າວນິດເຮັດໄດ້ດີ ເຊັ່ນການຫລິ້ນກິລາ ເພື່ອໃຫ້ລາວເກີດຄວາມພາກພູມໃຈໃນຕົນເອງໃຫ້ກຳລັງໃຈເມື່ອປັບປຸງພຶດຕິກຳໃຫ້ດີຂຶ້ນເພື່ອສ້າງຄວາມໝັ້ນໃຈໃນຕົນເອງໃຫ້ຄຳປຶກສາກັບນຄູເມື່ອມີບັນຫາຄວນໃຫ້ເວລາກັບຄູໃຫ້ຫລາຍຂຶ້ນ.

2.2 ອາຈານປະຈຳຊັ້ນແນະແນວ ແລະ ອາຈານປະຈຳວິຊາ ຄວນໃຫ້ຄວາມສົນໃຈ ແລະ ດູແລແບບຕໍ່ເນື່ອງ ແລະ ເຂົ້າໃຈຍອມຮັບຄວາມແຕກຕ່າງລະຫວ່າງບຸກຄົນ ຄວນໃຫ້ຄວາມຮັກກັບເດັກຢ່າງຈິງໃຈ ເພື່ອໃຫ້ເກີດຄວາມໄວ້ວາງໃຈເຊື່ອໃຈບໍ່ຢ້ານຄູ ກ້າທີ່ຈະປຶກສາເລື່ອງພຶດຕິກຳຄວາມຮຸນແຮງຊຶມເຊຍ ແລະ ໃຫ້ກຳລັງໃຈເມື່ອລາວສາມາດປັບປຸງພຶດຕິກຳຂອງຕົນເອງໃຫ້ດີຂຶ້ນ.

2.3 ໝູ່ເພື່ອນຂອງທ້າວນິດຄວນທົບທວນວ່າການຍົກພວກລຸມທຳຮ້າຍກັນເປັນພຶດຕິກຳທີ່ບໍ່ເໝາະສົມ ແລະ ຄານຶງເຖິງຜົນເສຍທີ່ຈະຕາມມາ ແລະ ໃຫ້ກຳລັງໃຈກັນ ແລະ ກັນທີ່ຈະຫຼຸດພຶດຕິກຳຄວາມຮຸນແຮງເຮັດກິດຈະກຳທີ່ສ້າງສັນເມື່ອມີເວລາວ່າງ.

## ກໍລະນີສຶກສາຄົນທີ 8 ທ້າວ ອິດ ( ນາມສົມມົດ )

ທ້າວ ປອງ ໄລຍະເວລາທີ່ສຶກສາຕັ້ງແຕ່ວັນທີ 01 ຕຸລາ 2018 ເຖິງວັນທີ 7 ຕຸລາ 2018

- **ລັກສະນະທົ່ວໄປ**

ຈາກການສັງເກດພົບວ່າ ທ້າວ ປອງ ຜິວຂາວຮູບຮ່າງຄ່ອນຂ້າງອວນແຕ່ງກາຍສະອາດຮຽບຮ້ອຍໃນຂະນະໃຫ້ສຳພາດເວົ້າຈາສຸພາສຽງດັງຟັງຊັດ ເປັນຄົນອາລົມດີຍິ້ມແຍ້ມແຈ່ມໃສໃນໄລຍະທຳອິດທີດບໍ່ຄ່ອຍໃຫ້ຂໍ້ມູນດ້ານທະເລາະວິວາດເທົ່າໃດ ແຕ່ເມື່ອໄດ້ພົບກັນຫຼາຍຂຶ້ນລາວຈຶ່ງເລີ່ມມີຄວາມໄວ້ວາງໃຈ ແລະ ໃຫ້ຂໍ້ມູນຢ່າງຕໍ່ເນື່ອງດ້ວຍດີຕະຫຼອດໄລຍະເວລາໃນການສຳພາດ.

ຈາກການໃຊ້ເຕັກນິກການລວບລວມຂໍ້ມູນທັງ 6 ເຕັກນິກ ໄດ້ແກ່ ແບບສອບຖາມດ້ານສ່ວນບຸກຄົນ, ແບບສັງເກດ, ການຢ້ຽມຢາມເຮືອນ, ລະບຽບສະສົມ, ບັນທຶກປະຈຳວັນ ແລະ ການສຳພາດດັ່ງ 3 ດ້ານ ຄື ດ້ານສ່ວນຕົວ, ດ້ານຄອບຄົວ ແລະ ດ້ານສັງຄົມສາມາດສະຫລຸບ ແລະ ວິເຄາະຂໍ້ມູນໄດ້ດັ່ງນີ້:

## 1. ຂໍ້ມູນຈາກແບບສອບຖາມ

ພົບວ່າ ທ້າວ ປອງ ອາຍຸ 14 ປີ ສຶກສາຢູ່ຊັ້ນມັດທະຍົມສຶກສາປີທີ 2 ມີອ້າຍນ້ອງ 2 ຄົນ ອາໄສຢູ່ກັບ ພໍ່ ແລະ ແມ່.

## 2. ຂໍ້ມູນຈາກແບບສັງເກດ

ການວິໄຈໃນຄັ້ງນີ້ຜູ້ວິໄຈໄດ້ທຳການສັງເກດໃນຫ້ອງຮຽນວິຊາອື່ນໆວັນທີ່ 1 ຕຸລາ 2018 ໃນການສັງ ເກດໃຊ້ເວລາ 30 ນາທີ ພົບວ່າ ທ້າວ ປອງ ບໍ່ຄ່ອຍສົນໃຈໃນການຮຽນເວົ້າໂສກັນກັບໝູ່ເພື່ອນໃນຂະນະຮຽນ ບໍ່ຄ່ອຍເຊື່ອຟັງຄູຜູ້ສອນ ເວົ້າຈາບໍ່ສຸພາບ ແລະ ແຂງກະດ້າງກັບໝູ່ເພື່ອນ ແລະ ໄດ້ເຮັດການສັງເກດນອກຫ້ອງຮຽນ ເວລາ 15.10-15.40. ໃນວັນດຽວກັນ ພົບວ່າ ທ້າວປອງ ນັ່ງຫລິ້ນກັບໝູ່ເພື່ອນທີ່ບໍລິເວນໂຕະຫີນໜ້າໂຮງຮຽນ ແລະ ຍ່າງອອກຈາກໂຮງຮຽນໄປພ້ອມກັນກັບໝູ່ເພື່ອນໃນກຸ່ມ.

## 3. ຂໍ້ມູນຈາກການສຳພາດ

### 3.1. ຂໍ້ມູນດ້ານບຸກຄົນ

#### 3.1.1 ປະຫວັດສ່ວນຕົວ

ຈາກການສຳພາດ ທ້າວ ປອງ ເຮັດໃຫ້ຮູ້ວ່າ ລາວມີອາຍຸ 14 ປີ ກຳລັງສຶກສາຢູ່ຊັ້ນມັດທະຍົມສຶກສາປີທີ 2 ໃນມັດທະຍົມຕົ້ນສາທິດວິທະຍາໄລຄູສາລະວັນ ພັກອາໄສຢູ່ກັບພໍ່ແມ່ ແລະ ອ້າຍ ທ້າວ ປອງບໍ່ຄ່ອຍຕັ້ງໃຈຮຽນເວລາຢູ່ໃນຫ້ອງຮຽນມັກໂສກັນກັບໝູ່ເພື່ອນ ແລະ ເວລາເລີກຮຽນມັກໄປຫລິ້ນເກມອອນໄລຮປະມານ 2 ຊົ່ວໂມງກ່ອນກັບເຂົ້າເຮືອນ ເມື່ອກັບເຮືອນແລ້ວກໍຈະຫລິ້ນເກມອອນໄລຮຕໍ່ໄປອີກຈົນເຖິງເວລາປະມານ 23.00 . ດ້ວຍເຫດນີ້ ຈຶ່ງເຮັດໃຫ້ຖືກພໍ່ຮ້າຍເປັນປະຈຳ ເມື່ອມີເວລາວ່າງຈະຫລິ້ນຕີປີງປອງກັບພໍ່ແມ່ລະອ້າຍທີ່ເດີ່ນບ້ານຂອງເພື່ອນບ້ານທີ່ຢູ່ຕິດກັນ ທ້າວປອງເລົ່າວ່າລາວກັບອ້າຍແຕກຕ່າງກັນຫລາຍອ້າຍເປັນເດັກຮຽນດີແຕ່ ທ້າວປອງຮຽນບໍ່ເກັ່ງມັກມີເລື່ອງທະເລາະວິວາດຕີກັນກັບໝູ່ເພື່ອນພາຍໃນໂຮງຮຽນຕັ້ງແຕ່ມັດທະຍົມສຶກສາປີທີ 1 ກໍມີເລື່ອງມາແລ້ວປະມານ 5 ຄັ້ງ. ນອກຈາກປະສົບການຕີກັນພາຍໃນໂຮງຮຽນແລ້ວທ້າວປອງ ເຄີຍຖືກນັກຮຽນໄວລຸ້ນຕ່າງໂຮງຮຽນ 5 ຄົນລຸ່ມຕີທຳຮ້າຍທີ່ແຄມທາງ ໃນຂະນະຍ່າງກັບເຮືອນທ້າວປອງເລົ່າວ່າເຂົາເຈົ້າມາລຸມຕີແລ້ວກໍດຶງໂຕ ເຫດການໃນລັກສະນະນີ້ເກີດຂຶ້ນຫຼາຍເທື່ອແລ້ວ ສ່ວນຫລາຍບໍລິເວນດ້ານໜ້າໂຮງຮຽນ ແລະ ເດີ່ນຂ້າງໆໂຮງຮຽນ.

#### 3.1.2 ດ້ານທັດສະນະຄະຕິຕໍ່ພຶດຕິກຳຄວາມຮຸນແຮງ

ຈາກການສຳພາດທ້າວປອງ ພົບວ່າ ການມີພຶດຕິກຳຄວາມຮຸນແຮງເປັນເລື່ອງທຳມະດາຂອງເດັກຜູ້ຊາຍອາດຈະມີຕີກັນເປັນເລື່ອງຂອງການຍອມຮັບໃນກຸ່ມໝູ່ເພື່ອນການຍົກພວກທຳຮ້າຍກັນທ້າວປອງ ມີຄວາມເຊື່ອວ່າເປັນການຊ່ວຍເຫຼືອໝູ່ເພືອນ ແລະ ການຕີກັນຕົວຕໍ່ຕົວເປັນເລື່ອງຂອງການບໍ່ສາມາດຄວບຄຸມອາລົມຄຽດແຄ້ນຂອງຕົນເອງໄດ້.

#### 3.1.3 ການໃຊ້ເວລາວ່າງ

ຈາກການສຳພາດພົບວ່າ ທ້າວປອງມັກໃຊ້ເວລາວ່າງໄປຍ່າງທີ່ເດີ່ນອີງແກ້ວກັບໝູ່ເພື່ອນ ແລະ ມັກຫລິ້ນເກມອອນໄລຮ ໃນຮ້ານເກມ ແລະ ຢູ່ເຮືອນ ສ່ວນຫລາຍບໍ່ໄດ້ເຮັດກິດຈະກຳຫຍັງກັບສະມາຊິກໃນຄອບຄົວ.

## 3.2. ຂໍ້ມູນດ້ານຄອບຄົວ

ທ້າວປອງ ອາໄສຢູ່ກັບພໍ່ແມ່ ແລະ ອ້າຍ ເຮືອນບໍ່ໄກຈາກໂຮງຮຽນຫລາຍປານໃດ ທ້າວ ປອງ ເລົ່າວ່າຜິດກັບອ້າຍເປັນປະຈຳເພາະເລື່ອງຍ້ານຄອມພິວເຕີກັນເພື່ອຫລິ້ນເກມອອນໄລຣ ແຕ່ແລ້ວພໍ່ກໍຢຸດຕິບັນຫາໂດຍຊື້ເຄື່ອງຄອມພິວເຕີໃໝ່ ຈຶ່ງເລີກຜິດກັນກັບອ້າຍ ຕອນນີ້ຫັນມາຜິດກັບພໍ່ເພາະ ທ້າວປອງຈະຫຼິ້ນເກມທຸກຄືນ ແລະ ບໍ່ຄ່ອຍເຊື່ອຟັງພໍ່ ທ້າວປອງ ບອກວ່າພໍ່ຄ່ອນຂ້າງຈະຮ້າຍເວລາມີບັນຫາເລື່ອງຕີກັນທີ່ໂຮງຮຽນຈຶ່ງບໍ່ຄ່ອຍກ້າເລົ່າໃຫ້ພໍ່ຟັງແຕ່ທ້າວປອງ ຢາກຈະເລົ່າໃຫ້ພໍ່ຟັງຈະໄດ້ຂໍຄຳປຶກສາໄປນຳແຕ່ກໍຍັງບໍ່ເຄີຍເລີຍຈັກຄັ້ງທີ່ຈະຂໍຄຳປຶກສາຈາກພໍ່.

## 3.3. ຂໍ້ມູນທາງສັງຄົມ

### 3.3.1 ດ້ານໝູ່ເພື່ອນ

ຈາກການສຳພາດທ້າວປອງ ພົບວ່າເປັນຄົນຮັກໝູ່ເພື່ອນຫລາຍເພາະໝູ່ເພື່ອນໃນກຸ່ມບໍ່ວ່າຈະມີບັນຫາຫຍັງຈະຄອຍຖ້າຊ່ວຍເຫລືອກັນສະເໝີ ຫລິ້ນນຳກັນຮຽນນຳກັນຢູ່ກັບໝູ່ເພື່ອນແລ້ວຮູ້ສຶກສະບາຍໃຈເພື່ອນໃນກຸ່ມທຸກຄົນຈຳນວນ 8 ຄົນເຄີຍມີເລື່ອງທະເລາະວິວາດກັນທຸກຄົນເວລາໝູ່ເພື່ອນມີບັນຫາເລື່ອງຕີກັນກໍຈະຄອຍຖ້າຊ່ວຍເຫລືອກັນປຶກສາໝູ່ເພື່ອນເລື່ອງຮຽນນຳບາງຄັ້ງ ບາງຄັ້ງມີຄົນອື່ນມາຫາເລື່ອງກໍປຶກສາໝູ່ເພື່ອນວ່າຈະຕີກັບຄົນທີ່ມາທ້າຕີບໍ່ ທ້າວປອງບອກວ່າສຸດທ້າຍແລ້ວຄຳຕອບຈົບລົງທີ່ການຕີກັນສະເໝີເມື່ອຢູ່ເຮືອນ ທ້າວ ປອງກໍຈະແຕ່ຫຼິ້ນເກມອອນໄລຣກັບໝູ່ເພື່ອນຈົນຢູ່ເດິກທຸກຄືນ.

### 3.3.2 ຈາກການສຳພາດໝູ່ເພື່ອນສະໜິດ

ໝູ່ເພື່ອນສະໜິດທີ່ໂຮງຮຽນຂອງທ້າວປອງ 3 ຄົນ ຈາກຈຳນວນໝູ່ເພື່ອນສະໜິດທັງໝົດຈຳນວນ 8 ຄົນເຮັດການສຳພາດຈົນລະ 30 ນາທີພົບວ່າທ້າວປອງເປັນຄົນຮັກໝູ່ເພື່ອນຫລາຍເວລາເພື່ອນມີບັນຫາເລື່ອງຕີກັນຈະໃຫ້ຄວາມຊ່ວຍເຫລືອທຸກຄັ້ງ ມີຄວາມສະໜິດສະໜົມກັນຫລາຍບໍ່ວ່າຢູ່ທີ່ໂຮງຮຽນຫລື ໄປທ່ຽວຕາມຮ້ານຄ້າຕ່າງໆຈະໄປນຳກັນສະເໝີຕອນກາງຄືນກໍມີການຫລິ້ນເກມອອນໄລຣກັນເປັນປະຈຳ.

### 3.3.3 ຈາກການສຳພາດອາຈານວິຊາ ແລະ ປະຈຳຊັ້ນ

ພົບວ່າທ້າວປອງ ເປັນເດັກຄ່ອນຂ້າງມີຜົນການຮຽນຕ່ຳເວລາຢູ່ໃນຫ້ອງຮຽນບໍ່ຄ່ອຍສົນໃຈການຮຽນມັກນັ່ງໂສກັນກັບເພື່ອນ ບາງຄັ້ງກໍໜີຮຽນບໍ່ຄ່ອຍໃຫ້ຄວາມຮ່ວມມືໃນການເຮັດກິດຈະກຳບໍ່ມີຄວາມຮັບຜິດຊອບບໍ່ຄ່ອຍສົ່ງວຽກບ້ານທີ່ໄດ້ຮັບມອບໝາຍ ເວົ້າຈາບໍ່ສຸພາບແຂງກະດ້າງກັບໝູ່ເພື່ອນໃນຊັ້ນຮຽນມັກຍອກໝູ່ເພື່ອນຕົບຫົວໝູ່ເພື່ອນແຮງໆ.

### 3.3.4 ຈາກການສຳພາດອາຈານຝ່າຍປົກຄອງ

ພົບວ່າທ້າວປອງ ເປັນຄົນຮັກໝູ່ເພື່ອນຫລາຍຕິດໝູ່ເພື່ອນຕັ້ງແຕ່ ມໍ 1 ຈົນກະທັ້ງຂຶ້ນ ມໍ 2 ມີເລື່ອງຕີກັນແລ້ວຫລາຍກວ່າ 5 ຄັ້ງ.

**3.3.5 ດ້ານສື່**

ຈາກການສຳພາດທ້າວປອງ ພົບວ່າມັກຕິດຕາມຂ່າວນັກຮຽນຕີກັນຈາກໂທລະທັດມີຄວາມຮູ້ສຶກວ່າການໃຊ້ຄວາມຮຸນແຮງເປັນເລື່ອງຂອງສັກສີເປັນທີ່ຍອມຮັບຂອງກຸ່ມໝູ່ເພື່ອນ ແລະ ເປັນເລື່ອງຂອງສະຖາບັນທີ່ນັກຮຽນຕ້ອງການຈະປົກປ້ອງສັກສີຂອງສະຖາບັນ.

**3.3.6 ດ້ານເກມອອນໄລ**

ຈາກການສຳພາດທ້າວປອງ ພົບວ່າຫລິ້ນເກມອ່ອນໄລຣທີ່ມີເນື້ອຫາຄວາມຮຸນແຮງຜູ້ຫລິ້ນຈະຕ້ອງຕໍ່ສູ້ຂ້າພັນຝ່າຍກົງກັນຂ້າມໃຫ້ເສຍຊີວິດເຖິງຈະເປັນຜູ້ຊະນະ ທ້າວປອງໃຊ້ເວລາໃນການຫຼິ້ນເກມອ່ອນໄລຣວັນລະ 4 ຊົ່ວໂມງ.

# 4. ຂໍ້ມູນຈາກການຍ້ຽມຢາມເຮືອນ

## 4.2. ຈາກການສຳພາດ ແລະ ການສັງເກດ

ພົບວ່າທ້າວປອງອາໄສຢູ່ກັບພໍ່ແມ່ ແລະ ອ້າຍສະພາບໃນຊຸມຊົນເປັນໝູ່ບ້ານຂະໜາດ 80 ຫຼັງຄາເຮືອນທາງເຂົ້າໝູ່ບ້ານແຍກຕົວຈາກຖະໜົນຫົນທາງໃຫຍ່ຄ່ອນຂ້າງຍາກ ໄລຍະທາງປະມານ 50 ແມັດພາຍໃນຊຸມຊົນມີຮ້ານຂາຍເຄື່ອງຍ່ອຍທຳມະດາ ສ່ວນຮ້ານກິນດື່ມພ້ອມດ້ວຍຮ້ານສະໜຸກເກີ ແລະ ຮ້ານເກມຄອມພິວເຕີມີແມ່ນຢູ່ຕົວເມືອງປະມານ 2 ກິໂລແມັດ ເດັກຈາມາໃຊ້ບໍລິການຄ່ອນຂ້າງຫລາຍບໍລິເວນຮ້ານເກມມີກຸ່ມໄວລຸ້ນມານັ່ງກິນເຫຼົ້າ ແລະ ສົ່ງສຽງດັງ ມີຜູ້ຄົນອາໄສຄ່ອນຂ້າງຫນາແໜ້ນ ເຮືອນຂອງທ້າວປອງ ເປັນເຮືອນຊັ້ນດຽວມີຮົ້ວອ້ອມບໍລິເວນເຮືອນ ພາຍໃນຕົວເຮືອນມີຫ້ອງນອນ 3 ຫ້ອງ, ຫ້ອງນ້ຳ 2 ຫ້ອງ, ຫ້ອງຄົວກິນຢູ່ຖັດເຂົ້າໄປຈາກຫ້ອງນັ່ງຫລິ້ນ ທ້າວປອງມີຫ້ອງພັກສ່ວນຕົວພາຍໃນຫ້ອງຈັດເກັບເຄື່ອງໃຊ້ຄ່ອນຂ້າງເປັນລະບຽບມີເຄື່ອງໃຊ້ໄຟຟ້າຄື ເຄື່ອງສຽງ ແລະ ເຄື່ອງຄອມພິວເຕີ.

## 4.3. ຈາກການສຳພາດແມ່ຂອງທ້າວປອງ

ພົບວ່າເປັນເດັກຂີ້ດື້ບໍ່ຄ່ອຍເຊື່ອຟັງມັກຜິດກັນກັບພໍ່ ແລະ ແມ່ເປັນປະຈຳຫຼາຍຄັ້ງເພາະຫລິ້ນເກມອ່ອນໄລຣມື້ລະຫຼາຍຊົ່ວໂມງ ບໍ່ຄ່ອຍເຮັດວຽກບ້ານສິ່ງຄູ ເວົ້າຈາແຂງກະດ້ານ ແລະ ຕີກັບອ້າຍມີກິດຈະກຳເຮັດຮ່ວມກັນບາງຄັ້ງຄືການຫຼິ້ນປິງປອງ.

## 4.4. ຈາກການສຳພາດອ້າຍຂອງທ້າວປອງ

ພົບວ່າບໍ່ຄ່ອຍສະໜິດສະໜົມກັນເທົ່າທີ່ຄວນເພາະຕົນເອງຕ້ອງຮຽນຫຼາຍວິຊາຢ່າງໜັກເພື່ອກຽມສອບເຂົ້າມະຫາວິທະຍາໄລ ສ່ວນທ້າວປອງນັ້ນຫວັງແຕ່ຫຼິ້ນກັບໝູ່ເພື່ອນບໍ່ສົນໃຈການຮຽນມີເລື່ອງຕີກັນທີ່ໂຮງຮຽນເປັນປະຈຳ ຈຶ່ງບໍ່ຢາກເວົ້ານຳ.

ຈາກການຍ້ຽມຢາມເຮືອນຂອງທ້າວປອງ ພໍສະຫລຸບໄດ້ວ່າ ສະຖານທີ່ພັກອາໄສຄ່ອນຂ້າງມີຄວາມສະດວກສະບາຍຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສະອາດພາຍໃນຫ້ອງພັກອາໄສຄ່ອນ

ຂ້າງດີ ສະພາບທົ່ວໄປຂອງໝູ່ບ້ານມີຜູ້ພັກອາໄສຄ່ອນຂ້າງໜາແໜ້ນ ຄວາມສຳພັນພາຍໃນລະຫວ່າງສະມາຊິກໃນ ຄອບຄົວຄ່ອນຂ້າງຫ່າງເຫີນ.

## 5. ຂໍ້ມູນຈາກລະບຽບສະສົມ

ພົບວ່າທ້າວປອງ ມີຜົນການຮຽນຕ່ຳບໍ່ມີບັນຫາດ້ານສຸຂະພາບອາໄສຢູ່ກັບພໍ່ແມ່ ແລະ ອ້າຍ ເກີດທີ່ສາລະວັນ.

## 6. ຂໍ້ມູນຈາກບັນທຶກປະຈຳວັນ

ຈາກການບັນທຶກປະຈຳວັນຕະຫລອດໄລຍະເວລາ 1 ອາທິດພົບວ່າທ້າວປອງມີກິດຈະກຳປະຈຳວັນຄ້າຍຄືກັນຕື່ນນອນເວລາ 06.30. ຈາກນັ້ນເຮັດພາລະກິດສ່ວນຕົວແລ້ວຍ່າງໄປໂຮງຮຽນ ຫຼັງເລີກຮຽນໄປຫຼິ້ນເກມອ່ອນໄລຣກັບໝູ່ເພື່ອນແລ້ວກັບເຮືອນ ຫຼັງຮັບປະທານອາຫານແລງຫຼິ້ນເກມອ່ອນໄລຣຮອດເດິກະທັ້ງເຂົ້ານອນເວລາ 22.00 .

ຈາກການບັນທຶກປະຈຳວັນ ສະຫລຸບໄດ້ວ່າທ້າວປອງ ມັກໄປຍ່າງຫລິ້ນບໍ່ມີການທົບທວນບົດຮຽນ ຫລື ເຮັດວຽກບ້ານໃຊ້ເວລາວ່າງໄປກັບການຫລິ້ນເກມອ່ອນໄລຣທີ່ມີເນື້ອຫາຄວາມຮຸນແຮງວັນລະ 4 ຊົ່ວໂມງ.

## 7. ຂໍ້ມູນດ້ານພຶດຕິກຳຄວາມຮຸນແຮງ

ຈາກການສຳພາດທ້າວປອງ ພົບວ່າສາເຫດຂອງການຍົກພວກຕີກັນນັ້ນສ່ວນໃຫຍ່ເກີດຈາກການແຊວກັນເລື່ອງຜູ້ຍິງ ຫລື ການຍ່າງມາເຮັດທ່າທາງກວນກັນ ແລະ ບາງຄັ້ງທ້າວປອງກໍໄປຫາເລື່ອງເຂົາກ່ອນເຫດເພາະອີກຝ່າຍນັ້ນມີທ່າທາງ ແລະ ບຸກຄະລິກທີ່ເຮັດໃຫ້ທ້າວປອງບໍ່ພໍໃຈ ແລະ ທ້າວເປັນຝ່າຍຍ່າງເຂົ້າໄປຫາກ່ອນແລ້ວເວົ້າວ່າ "ມາດກວນແທ້" ແລ້ວກໍຕີເຂົ້າທີ່ໜ້າຂອງອີກຝ່າຍທັນທີ່ຈາກນັ້ນໝູ່ເພື່ອນຝ່າຍນັ້ນແລະໝູ່ເພື່ອນຂອງທ້າວປອງກໍເຂົ້າລຸມກັນ ອາຈານກໍນຳຕົວເຂົ້າຫ້ອງປົກຄອງລົງໂທດທັງສອງຝ່າຍທ້າວປອງ ບອກວ່າບໍ່ໄດ້ຮູ້ສຶກຫຍັງແຕ່ຄວນຮັບຜິດວ່າໄປຕີເຂົາກ່ອນ ແລະ ຕອນນັ້ນຮູ້ສຶກອາລົມບໍ່ດີອາລົມພາໄປຈຶ່ງເກີດການຕີກັນຂຶ້ນ.

- ການວິເຄາະຂໍ້ມູນ

ຈາກການໃຊ້ເຕັກນິກການລວບລວມຂໍ້ມູນທັງ 6 ເຕັກນິກ ໄດ້ແກ່ ແບບສອບຖາມດ້ານສ່ວນບຸກຄົນ, ແບບສັງເກດ, ການຢ້ຽມຢາມເຮືອນ, ລະບຽບສະສົມ, ບັນທຶກປະຈຳວັນ ແລະ ການສຳພາດດັ່ງ 3 ດ້ານ ຄື ດ້ານສ່ວນຕົວ, ດ້ານຄອບຄົວ ແລະ ດ້ານສັງຄົມ ສາມາດສະຫລຸບ ແລະ ວິເຄາະຂໍ້ມູນ ສາເຫດທີ່ເປັນແນວໂນ້ມຂອງການເກີດພຶດຕິກຳຄວາມຮຸນແຮງຂອງທ້າວປອງໄດ້ດັ່ງຕໍ່ນີ້:

4. ສາເຫດດ້ານຕົນເອງ

ຈາກການສໍາພາດ ແລະ ການສັງເກດເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ທ້າວປອງມີພຶດຕິກໍາຄວາມຮຸນແຮງໃນໂຮງຮຽນເກີດຈາກຕົວຂອງລາວເອງຄື ມີທັດສະນະຄະຕິກ່ຽວກັບພຶດຕິກໍາການໃຊ້ຄວາມຮຸນແຮງວ່າເປັນທີ່ຍອມຮັບໃນໝູ່ເພື່ອນເປັນການໃຫ້ຄວາມຊ່ວຍເຫຼືອໝູ່ເພື່ອນເມື່ອຖືກທໍາຮ້າຍໃຊ້ເວລາວ່າງໄປກັບການທ່ຽວຫຼິ້ນກັບໝູ່ເພື່ອນປະກອບກັບອາລົມຂອງໄວລຸ້ນທີ່ໃມໂຫງ່າຍຂາດຄວາມອົດທົນອົດກັ້ນ ໃຫ້ຄວາມສໍາຄັນກັບໝູ່ເພື່ອນຫລາຍຕ້ອງເຂົ້າໄປຊ່ວຍເຫຼືອໝູ່ເພື່ອນເມື່ອມີເຫດທະເລາະວິວາດ, ຄວບຄຸມອາລົມຕົນເອງບໍ່ໄດ້ມັກຫາເລື່ອງກໍາກວນຜູ້ອື່ນ.

5. ສາເຫດດ້ານຄອບຄົວ

ຈາກການສັງເກດການສໍາພາດ ແລະ ການຍ້ຽມຢາມເຮືອນເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ທ້າວປອງມີພຶດຕິກໍາຄວາມຮຸນແຮງໃນໂຮງຮຽນເກີດຈາກການທີ່ພໍ່ແມ່ບໍ່ຄ່ອຍໃຫ້ຄວາມເອົາໃຈໃສລາວເທົ່າທີ່ຄວນເຮັດໃຫ້ຂາດຄວາມໄວ້ໃຈບໍ່ກ້າທີ່ຈະປຶກສາບັນຫາຂອງຕົນເອງ ມີເລື່ອງຜິດກັນກັບພໍ່ແມ່ ແລະ ອ້າຍຄວາມສໍາພັນລະຫ່າງສະມາຊິກໃນຄອບຄົວຄ່ອນຂ້າງຫ່າງເຫີນ.

6. ສາເຫດທາງສັງຄົມ

ຈາກການສໍາພາດ ແລະ ການສັງເກດເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ທ້າວປອງມີພຶດຕິກໍາຄວາມຮຸນແຮງໃນໂຮງຮຽນເກີດຈາກອິດທິພົນຂອງກຸ່ມໝູ່ເພື່ອນລາວໃຫ້ຄວາມສໍາຄັນກັບໝູ່ເພື່ອນຫລາຍເມື່ອເພື່ອນມີເລື່ອງຕີກັນຕ້ອງເຂົ້າໄປຮ່ວມຕີນໍາທຸຄັ້ງທ້າວປອງມັກຕິດຕາມຮັບຊົມພາບກ່ຽວກັບນັກຮຽນຕີກັນທາງໂທລະທັດເລື່ອຍໆຈົນເກີດຄວາມຊິນຊາ ແລະ ມີທັດສະນະຄະຕິຕໍ່ພາບທີ່ໄດ້ຮັບຊົມວ່າຄວາມຮຸນແຮງໃນໄວຍລຸ້ນເປັນເລື່ອງທໍາມະດາ ທ້າວປອງໃຊ້ເວລາໃນການຫລິ້ນເກມອອນໄລທີ່ມີເນື້ອຫາກ່ຽວຂ້ອງກັບຄວາມຮຸນແຮງມື້ລະ 4 ຊົ່ວໂມງ ຈຶ່ງເປັນແນວໂນ້ມໃຫ້ທ້າວປອງຊຶມຊັບຮັບເອົາພຶດຕິກໍາຄວາມຮຸນແຮງນັ້ນໄວ້ ແລະ ຍັງສົ່ງຜົນຕໍ່ຄວາມສໍາພັນໃນຄອບຄົວໃຫ້ມີຄວາມຫ່າງເຫີນ.

ແນວທາງໃນການຊ່ວຍເຫລືອຈາກການວິເຄາະແນວໂນ້ມທີ່ເປັນສາເຫດຂອງການເກີດພຶດຕິກໍາຄວາມຮຸນແຮງຂອງທ້າວ ປອງທັງ 3 ດ້ານ ໄດ້ແກ່ ດ້ານຕົນເອງ, ດ້ານຄອບຄົວ ແລະ ດ້ານອິດທິພົນທາງສັງຄົມຜູ້ວິໄຈໄດ້ດໍາເນີນການຫາແນວທາງຊ່ວຍເຫຼືອດັ່ງຕໍ່ໄປນີ້.

1. ແນວທາງການຊ່ວຍເຫຼືອທີ່ໂຮງຮຽນ

1.1 ຄູແນະແນວທາງໃຫ້ມີການປັບປ່ຽນພຶດຕິກໍາໃຫ້ມີຄວາມເໝາະສົມ ແລະ ມີກຄວາມຮັບຜິດຊອບຮູ້ຈັກຕໍານຶງເຖິງຜົນເສຍຂອງພຶດຕິກໍາຄວາມຮຸນແຮງຂອງຕົນເອງມີຄວາມຮັບຜິດຊອບໃນຖານະລູກ ແລະ ການເປັນນັກຮຽນໃຫ້ຄວາມໝັ້ນໃຈ ແລະ ໃຫ້ກໍາລັງໃຈຕະຫລອດຈົນເອົາໃຈໃສ່ຢ່າງໃກ້ຊິດກັບທ້າວປອງ ເພື່ອໃຫ້ມີຄວາມອົບອຸ່ນເຊື່ອໝັ້ນໃນຕົນເອງ ສາມາດປັບປຸງພຶດຕິກໍາໃຫ້ມີຄວາມເໝາະສົມຫຼຸດຈາກພຶດຕິກໍາຄວາມຮຸນແຮງ.

1.2 ຂໍຄວາມຊ່ວຍເຫລືອຈາກໝູ່ເພື່ອນໃນຫ້ອງໂດຍສະເພາະໝູ່ເພື່ອນສະໜິດຂອງທ້າວປອງ ເມື່ອມີເວລາວ່າງໃຫ້ເຮັດກິດຈະກຳທີ່ສ້າງສັນແທນທີ່ຈະໃຊ້ເວລາສ່ວນໃຫຍ່ໄປກັບການຍ່າງທ່ຽວ ຫລື ຫຼິ້ນເກມອອນໄລຣທີ່ມີເນື້ອຫາຄວາມຮຸນແຮງ.

2. ແນວທາງການຊ່ວຍເຫຼືອຢູ່ເຮືອນມີດັ່ງຕໍ່ໄປນີ້

2.1 ປຶກສາບັນຫາທີ່ເກີດຂຶ້ນກັບຜູ້ປົກຄອງຢູ່ເຮືອນຂອງຜູ້ຮັບການສຶກສາ ເພື່ອໃຫ້ເຂົ້າໃຈໃນຕົວຂອງ ທ້າວປອງຫລາຍຂຶ້ນຂໍໃຫ້ພໍ່ແມ່ກັບອ້າຍໃຫ້ຄວາມຮັກຄວາມອົບອຸ່ນ ແລະ ໃຫ້ເວລາກັບລາວໃຫ້ຫລາຍຂຶ້ນ ການທຳນາຍຜົນຈາກການສຶກສາບັນຫາຂອງທ້າວປອງ ພົບວ່າ ການມີພຶດຕິກຳຄວາມຮຸນແຮງຂອງລາວນັ້ນມີແນວທາງໃນການຊ່ວຍເຫລືອໃຫ້ປັບປຸງພຶດຕິກຳທີ່ບໍ່ເໝາະສົມໄດ້ຫາກທ້າວປອງໄດ້ຮັບຄວາມຮັກ ແລະ ການເອົາໃຈໃສ່ ໃຫ້ກຳລັງໃຈຈາກຄອບຄົວຫລາຍຂຶ້ນຕະຫລອດຈົນສະມາຊິກໃນຄອບຄົວໃຫ້ຄວາມຮ່ວມມືໃນແນວທາງການຊ່ວຍເຫຼືອເປັນອຢ່າງດີ.

- ຂໍ້ສະເໜີແນະ

1. ຂໍ້ສະເໜີແນະສຳລັບຜູ້ຮັບການສຶກສາທ້າວປອງຄວນຄິດວ່າພຶດຕິກຳການໃຊ້ຄວາມຮຸນແຮງນັ້ນເປັນພຶດຕິກຳທີ່ບໍ່ເໝາະສົມ ແລະ ສົ່ງຜົນເສຍຕໍ່ຕົນເອງ ແລະ ສະມາຊິກໃນຄອບຄົວ ຄວນຫາເວລາເວົ້າກັບຜູ້ປົກຄອງນຳ ເພື່ອຄວາມໃກ້ຊິດ ແລະ ສ້າງບັນຍາກາດພາຍໃນຄອບຄົວໃຫ້ມີຄວາມອົບອຸ່ນເລືອກທີ່ຈະປະຕິເສດໝູ່ເພື່ອນເວລາໝູ່ເພື່ອນມີເລື່ອງບັນຫາກັບຄົນອື່ນ ເລືອກຄົບໝູ່ເພື່ອນທີ່ດີ ແລະ ມີກິດຈະກຳທີ່ສ້າງສັນຮ່ວມກັນ ແລະ ຂໍໃຫ້ປະຕິບັດຕາມແນວທາງໃນການຊ່ວຍເຫຼືອຢ່າງຈິງຈັງ.

2. ຂໍ້ສະເໜີແນະສຳລັບຜູ້ທີ່ກ່ຽວຂ້ອງມີດັ່ງຕໍ່ໄປນີ້

2.1 ສະມາຊິກໃນຄອບຄົວຄວນໃຫ້ກຳລັງໃຈໃນສິ່ງທີ່ເດັກຊາຍປອງເຮັດໄດ້ດີ ເພື່ອໃຫ້ລາວເກີດຄວາມພາກພູມໃຈໃນຕົນເອງ ໃຫ້ກຳລັງໃຈເມື່ອປັບປຸງພຶດຕິກຳໃຫ້ດີຂຶ້ນ ເພື່ອສ້າງຄວາມໝັ້ນໃຈໃນຕົນເອງ ໃຫ້ຄຳປຶກສາກັບຄູເມື່ອມີບັນຫາ.

2.2 ອາຈານປະຈຳຊັ້ນແນະແນວ ແລະ ອາຈານປະຈຳວິຊາ ຄວນໃຫ້ຄວາມສົນໃຈ ແລະ ດູແລແບບຕໍ່ເນື່ອງ ແລະ ເຂົ້າໃຈຍອມຮັບຄວາມແຕກຕ່າງລະຫວ່າງບຸກຄົນ ຄວນໃຫ້ຄວາມຮັກກັບລາວຢ່າງຈິງໃຈ ເພື່ອໃຫ້ເກີດຄວາມໄວ້ວາງໃຈເຊື່ອໃຈບໍ່ຍ້ານຄູກ້າທີ່ຈະປຶກສາເລື່ອງພຶດຕິກຳຄວາມຮຸນແຮງຊົມເຊີຍ ແລະ ໃຫ້ກຳລັງໃຈເມືອທ້າວປອງສາມາດປັບປຸງພຶດຕິກຳຂອງຕົນເອງໃຫ້ດີຂຶ້ນ.

2.3 ໝູ່ເພື່ອນຂອງທ້າວປອງຄວນທົບທວນວ່າການຍົກພວກທຳຮ້າຍກັນເປັນພຶດຕິກຳທີ່ບໍ່ເໝາະສົມ ແລະ ຄຳນຶ່ງເຖິງຜົນເສຍທີ່ຈະຕາມມາ ແລະ ໃຫ້ກຳລັງໃຈເຊິ່ງກັນ ແລະ ກັນທີ່ຈະເລີກພຶດຕິກຳການທະເລາະວິວາດເຮັດກິດຈະກຳທີ່ສ້າງສັນເມືອມີເວລາວ່າງ.

## ກໍລະນີສຶກສາຄົນທີ 9 ທ້າວ ອາທິດ ( ນາມສົມມຸດ )

ທ້າວ ລຸນ ໄລຍະເວລາທີ່ສຶກສາຕັ້ງແຕ່ວັນທີ 8 ຕຸລາ 2018 ເຖິງວັນທີ 14 ຕຸລາ 2018

- ລັກສະນະທົ່ວໄປ

ຈາກການສັງເກດພົບວ່າ ທ້າວ ລຸນ ເປັນຄົນຮູບຮ່າງຈ່ອຍສູງຜິວສີດຳແດງແຕ່ງຕົວສະອາດຮຽບຮ້ອຍ ໃນຂະນະໃຫ້ສຳພາດເວົ້າຈາຊັດເຈນສຽງດັງຟັງຊັດ ແລະ ສຸພາບ ເປັນຄົນອາລົມດີຍິ້ມແຍ້ມແຈ່ມໃສ ໃນໄລຍະທຳອິດບໍ່ຄ່ອຍໃຫ້ຂໍ້ມູນດ້ານທະເລາະວິວາດຫຼາຍປານໃດແຕ່ເມື່ອໄດ້ພົບກັນຫຼາຍຂຶ້ນນລາວຈຶ່ງເລີ່ມມີຄວາມໄວ້ວາງໃຈ ແລະ ໃຫ້ຂໍ້ມູນແບບຕໍ່ເນື່ອງດ້ວຍດີຕະຫຼອດໄລຍະເວລາໃນການສຳພາດ.

ຈາກການໃຊ້ເຕັກນິກການລວບລວມຂໍ້ມູນທັງ 6 ເຕັກນິກ ໄດ້ແກ່ ແບບສອບຖາມດ້ານສ່ວນບຸກຄົນ, ແບບສັງເກດ, ການຢຽມຢາມເຮືອນ, ລະບຽສະສົມ, ບັນທຶກປະຈຳວັນ ແລະ ການສຳພາດດັ່ງ 3 ດ້ານ ຄື ດ້ານສ່ວນຕົວ, ດ້ານຄອບຄົວ ແລະ ດ້ານສັງຄົມ ສາມາດສະຫລຸບ ແລະ ວິເຄາະຂໍ້ມູນໄດ້ດັ່ງນີ້:

## 1. ຂໍ້ມູນຈາກແບບສອບຖາມ

ທ້າວ ລຸນ ອາຍຸ 15 ປີ ສຶກສາຢູ່ຊັ້ນມັດທະຍົມສຶກສາປີທີ 3 ມີອ້າຍນ້ອງ 2 ຄົນ ອາໄສຢູ່ກັບຍາດພີ່ ນ້ອງ.

## 2. ຂໍ້ມູນຈາກແບບສັງເກດ

ການວິໄຈໃນຄັ້ງນີ້ຜູ້ວິໄຈໄດ້ເຮັດການສັງເກດໃນຫ້ອງຮຽນວິຊາພາສາອັງກິດ ວັນທີ 8 ຕຸລາ 2018 ໃນການສັງເກດໃຊ້ເວລາ 30 ນາທີ ພົບວ່າ ທ້າວ ລຸນ ບໍ່ຄ່ອຍສົນໃຈໃນການຮຽນເວົ້າກັບໝູ່ເພື່ອນ ໃນຂະນະຮຽນບໍ່ຄ່ອຍມີສະມາທິໃນການຮຽນ ແລະ ໄດ້ເຮັດການສັງເກດນອກຫ້ອງຮຽນ ເວລາ 12.30-13.00. ໃນວັນດຽວກັນ ພົບວ່າ ທ້າວ ລຸນ  ກິນເຂົ້າໜົມກັບໝູ່ເພື່ອນໃນກຸ່ມຈຳນວນ 5 ຄົນ ເວົ້າຈາສຽງດັງແຂງກະດ້າງ ແລະ ບໍ່ສຸພາບກັບໝູ່ເພື່ອນຮ່ວມຫ້ອງຄົນອື່ນຈົນເຖິງເວລາເຂົ້າຮຽນ.

## 3. ຂໍ້ມູນຈາກການສຳພາດ

### 3.1. ຂໍ້ມູນດ້ານບຸກຄົນ

#### 3.1.1 ປະຫວັດສ່ວນຕົວ

ຈາກການສຳພາດ ທ້າວ ລຸນ ເຮັດໃຫ້ຮູ້ວ່າ ທ້າວ ລຸນ ມີອາຍຸ 15 ປີ ກຳລັງສຶກສາຢູ່ຊັ້ນມັດຍົມສຶກສາປີທີ 3 ໃນມັດທະຍົມຕົ້ນສາທິດວິທະຍາໄລຄູສາລະວັນ ທ້າວ ລຸນ ມີຖິ່ນເດີມເປັນຄົນຕ່າງແຂວງປັດຈຸບັນອາໄສຢູ່ກັບຍາດຄື ລຸງກັບປ້າ ສ່ວນພໍ່ແມ່ ແລະ ອ້າຍ ນັ້ນອາໄສຢູ່ທີ່ຕ່າງແຂວງ ທ້າວ ລຸນ ຍ້າຍມາຮຽນຢູ່ແຂວງສາລະວັນຕັ້ງແຕ່ຊັ້ນປະຖົມສຶກສາປີທີ 5 ເພາະພໍ່ແມ່ຕ້ອງການໃຫ້ໄດ້ຮັບການສຶກສາທີ່ດີ ລາວເປັນນັກກິລາຂອງໂຮງຮຽນ ເວລາວ່າງກໍຈະມັກຊ້ອມທີ່ໂຮງຮຽນກັບໝູ່ເພື່ອນໆ ທ້າວລຸນເລົ່າວ່າຊ່ວງນີ້ຈະຄຽດກັບເລື່ອງການຮຽນເພາະຕ້ອງກຽມຕົວສອບ ເມືອມີບັນຫາເລື່ອງການຮຽນ ແລະ ເລື່ອງທະເລາະວິວາດທີ່

ໂຮງຮຽນຈະປຶກສາປ້າເປັນສ່ວນໃຫຍ່ບໍ່ຄ່ອຍໄດ້ພົບກັບພໍ່ ແລະ ແມ່ເພາະຢູ່ຫ່າງໄກຈະໄດ້ເວົ້າກັນບາງຄັ້ງທາງໂທລະສັບ.

**3.1.2 ດ້ານທັດສະນະຄະຕິຕໍ່ພຶດຕິກຳຄວາມຮຸນແຮງ**

ຈາກການສຳພາດພົບວ່າ ທ້າວ ລຸນ ຄິດວ່າການມີພຶດຕິກຳຄວາມຮຸນແຮງເປັນເລື່ອງທຳມະດາຂອງເດັກຜູ້ຊາຍອາດຈະມີຕີກັນບາງຄັ້ງບາງຄາວເປັນເລື່ອງຂອງການຍອມຮັບໃນກຸ່ມໝູ່ເພື່ອນ ແລະ ເປັນເລື່ອງຂອງ ຄວາມເກັ່ງມີເລື່ອງຂອງສັກສີເປັນການສະແດງອອກວ່າບໍ່ຍອມໃຜ.

**3.1.3 ການໃຊ້ເວລາວ່າງ**

ຈາກການສມັ ພາດນົບບວ່າ ນາຍຣຸ່ງອຣຸນ ມັກໃຊ້ເວລາວ່າງ ໄປຍ່າງຫລິ້ນທີຫ້າງສັບສິນຄ້າ ກບັເພືອນໆໃນກລ່ມຸ ແລະ ມັກຫລິ້ນເກມອອນໄລໃນຮ້ານເກມທີ່ຕະຫຼາດນັດ ແລະ ໃນເຮືອນສ່ວນຫລາຍບໍ່ໄດ້ທຳກິດຈະກຳຫຍັງກບັສະມາຊິກໃນະຄອບຄົວ ແລະ ມັກຫຼິ້ນກິລາ

**3.2. ຂໍ້ມູນດ້ານຄອບຄົວ**

ທ້າວ ລຸນ ມີອ້າຍນ້ອງ 2 ຄົນ ຄືນ້ອງຊາຍອາໄສຢູ່ກັບພໍ່ ແລະ ແມ່ຢູ່ຕ່າງແຂວງ ທ້າວ ລຸນ ອາໄສຢູ່ກັບປ້າ ແລະ ລຸງຢູ່ສາລະວັນແລ້ວເປັນເວລາ 5 ປີ ເວລາມີບັນຫາບໍ່ສະບາຍໃຈຈະປຶກສາກັບປ້າຜູ້ປົກຄອງມີຄວາມເຂັ້ມງວດເລື່ອງການຮຽນຫລາຍຄາດຫວັງໃຫ້ລາວມີຜົນການຮຽນທີ່ດີເຮັດໃຫ້ຮູ້ສຶກຄຽດກັບການຮຽນຕັ້ງແຕ່ມາອາໄສຢູ່ກັບລຸງ ແລະ ປ້າກໍເຮັດໃຫ້ຄວາມສຳພັນ ແລະ ຄວາມໃກ້ຊິດກັບພໍ່ແມ່ນັ້ນຫຼຸດລົງເພາະໄດ້ເວົ້າກັບພໍ່ແມ່ບາງຄັ້ງທາງໂທລະສັບ ທ້າວ ລຸນເລົ່າວ່າຕົນຮູ້ສຶກສະບາຍໃຈເມືອມາພັກອາໄສກັບລຸງ ແລະ ປ້າເພາະພໍ່ກັບແມ່ມັກຜິດກັນຕົບຕີກັນເປັນປະຈຳຕົນເອງຈຶ່ງມີຄວາມຍິນດີທີ່ຈະພັກອາໄສຢູ່ກັບປ້າ ແລະ ລຸງ.

**3.3. ຂໍ້ມູນທາງສັງຄົມ**

**3.3.1 ດ້ານໝູ່ເພື່ອນ**

ຈາກການສຳພາດ ທ້າວ ລຸນ ເຮັດໃຫ້ຮູ້ວ່າມີໝູ່ເພື່ອນສະໜິດ 5 ຄົນ ແລະ ເປີດກຸ່ມຈະໄປໃສມາໃສນຳກັນຕະຫລອດ ໝູ່ເພື່ອນມີຄວາມຈິງໃຈຢູ່ກັບໝູ່ເພື່ອນແລ້ວສະບາຍໃຈ ໝູ່ເພື່ອນໃນກຸ່ມທຸກຄົນເປັນເດັກຮຽນດີຂອງຫ້ອງມີເກດສະເລ່ຍສູງທຸກຄົນ ທ້າວລຸນ ບອກວ່າເທີມແລ້ວເກດສະເລ່ຍຜົນການຮຽນຕົກມາ 3.5 ຈາກປົກກະຕິປະມານ 3.7 ເພາະຊ້ອມກິລາຫລາຍເກີນໄປແຕເທີມນີ້ດຈະທຸ່ມເທໃຫ້ກັບການຮຽນຫລາຍຂຶ້ນ ແລະ ເວລາມີເລື່ອງບໍ່ສະບາຍໃຈໝູ່ເພື່ອນຄືຄົນທີ່ພ້ອມຮັບຟັງທຸກຢ່າງເຮັດໃຫ້ກ້າທີ່ຈະເປີດເຜີຍທຸກເລື່ອງກັບໝູ່ເພື່ອນ ແລະ ຮູ້ສຶກສະບາຍໃຈເມື່ອໄດ້ປຶກສາບັນຫາຕ່າງໆກັບໝູ່ເພື່ອນ.

### 3.3.2 ຈາກການສຳພາດໝູ່ເພື່ອນສະໜິດຢູ່ໂຮງຮຽນ

ທ້າວ ລຸນ ຈຳນວນ 3 ຄົນ ເຮັດໃຫ້ຮູ້ວ່າ ລຸນ ເປັນຄົນຮັກໝູ່ເພື່ອນມີຄວາມຈິງໃຈກັບໝູ່ເພື່ອນມັກຊ່ວຍເຫລືອໝູ່ເພື່ອນທັງເລື່ອງຮຽນ ແລະ ເລື່ອງຕີກັນທະເລາະວິວາດ ຖ້າຫາກໝູ່ເພື່ອນໃນກຸ່ມມີບັນຫາເລື່ອງຕີກັນລາວຈະເຂົ້າມາຊ່ວຍເຫລືອຢູ່ສະເໝີ.

### 3.3.3 ຈາກການສຳພາດອາຈານປະຈຳວິຊາ ແລະ ປະຈຳຊັ້ນ

ພົບວ່າ ທ້າວ ລຸນ ເປັນເດັກຄ່ອນຂ້າງມີຜົນການຮຽນດີເວລາຢູ່ໃນຫ້ອງຮຽນໃຫ້ຄວາມສົນໃຈໃນການຮຽນດີແຕ່ເປັນເດັກຄ່ອນຂ້າງຂີ້ດື້ມັກໃຊ້ອາຈາແຂງກະດ້າງກັບໝູ່ເພື່ອນໃນຫ້ອງ ແລະ ມັກຍອກໝູ່ເພື່ອນ.

### 3.3.4 ຈາກການສຳພາດອາຈານຝ່າຍປົກຄອງ

ພົບວ່າ ທ້າວ ລຸນ ມີເລື່ອງຕີກັນທະເລາະວິວາດຫຼາຍຄັ້ງທີ່ບໍລິເວນຫ້ອງຮຽນໃນຊ່ວງພັກກາງເວັນ.

### 3.3.5 ດ້ານສື່

ຈາກການສຳພາດ ທ້າວ ລຸນ ເຮັດໃຫ້ຮູ້ວ່າມັກຕິດຕາມຂ່າວນັກຮຽນຕີກັນຈາກໂທລະທັດມີຄວາມຄິດເຫັນວ່າການໃຊ້ຄວາມຮຸນແຮງເປັນເລື່ອງຂອງສັກສີ ເປັນທີ່ຍອມຮັບຂອງກຸ່ມໝູ່ເພື່ອນເປັນຄວາມກ້າສະແດງເຖິງຄວາມເຂັ້ມແຂງບໍ່ຄອນໃຫ້ໃຜມາຂົ່ມເຫັງ.

### 3.3.6 ດ້ານເກມອອນໄລ

ຈາກການສຳພາດ ທ້າວ ລຸນ ເຮັດໃຫ້ຮູ້ວ່າ ຫລິ້ນເກມຕໍ່ສູ້ກັນມີເນື້ອຫາຄວາມຮຸນແຮງ ຫລິ້ນທຸກມື້ ມື້ລະ 2 ຊົ່ວໂມງຕັ້ງແຕ່ເວລາປະມານ 18.00. ເຖິງ ເວລາ 20.00 . ການຫຼິ້ນເກມນັ້ນສາມາດເຮັດໃຫ້ຕົນເອງຄາຍຄວາມຄຽດຈາກເລື່ອງການຮຽນ.

## 4. ຂໍ້ມູນຈາກການຢ້ຽມຢາມເຮືອນ

### 4.1. ຈາກການສຳພາດ ແລະ ການສັງເກດ

ຈາກການສຳພາດ ແລະສັງເກດເຮັດໃຫ້ຮູ້ວ່າ ທ້າວ ລຸນ ພັກອາໄສຢູ່ທີ່ພັກແຫ່ງໜຶ່ງໃກ້ກັບສະຖານທີ່ສຶກສາບໍລິເວນໃກ້ຄຽງດ້ານຫຼັງງທີ່ພັກເປັນຄອງທີ່ມີນ້ຳເປັນສີດຳ ແລະ ສົ່ງກິ່ນເໝັນ ຫ່າງອອກໄປດ້ານຂ້າງຂອງຕົວອາຄານເປັນຮ້ານຂາຍອາຫານ ແລະ ຮ້ານເກມຄອມພິວເຕີ ມີຄົນຄ່ອນຂ້າງໜາແໜ້ນຕົວອາຄານຢູ່ໃກ້ກັບຫົນທາງ ຈິ່ງເຮັດໃຫ້ມີສຽງດັງອຶກທຶກຄຶກໂຄມ ແລະ ມີກິ່ນຂອງຄົວກິນໂດຍອ້ອມບໍລິເວນດ້ານລຸມຂອງຕົວອາຄານພາຍໃນຫ້ອງພັກຄ່ອນຂ້າງຄັບແຄບລັກສະນະເປັນ 1 ຫ້ອງນອນ 1 ຫ້ອງນ້ຳ ທີ່ນອນຖືກເກັບພັບໄວ້ຢ່າງເປັນລະບຽບ ແລະ ໃຊ້ເປັນຫ້ອງນັ່ງຫລິ້ນ ພື້ນທີ່ດ້ານຫຼັງຫ້ອງຖືກຈັດໃຫ້ເປັນຫ້ອງຄົວກິນ ພາຍໃນທີ່ພັກມີຄວາມສະອາດພໍໃຊ້ມີເຄື່ອງໃຊ້ໄຟຟ້າຕູ້ເຢັນພັດລົມເຄື່ອງຄອມພິວເຕີ ແລະ ໂທລະທັດ.

### 4.2. ຈາກການສຳພາດປ້າຂອງທ້າວ ລຸນ

ພົບວ່າ ທ້າວ ລຸນ ບໍ່ຄ່ອຍໄດ້ຊ່ວຍວຽກເຮືອນ ມື້ພັກບໍ່ຍອມຊັກເສື້ອຜ້າຂອງຕົນເອງອອກໄປທ່ຽວຫລິ້ນກັບໝູ່ເພື່ອນທີ່ແຫ່ງອື່ນໆ ເລື່ອງຮຽນບໍ່ຄ່ອຍມີບັນຫາຕົນເອງຈະຄອຍຖ້າເຕືອນໃຫ້ເຮັດວຽກບ້ານ ແລະ ອ່ານໜັງສືກຽມສອບທຸກຄັ້ງເພາະພໍ່ ແລະ ແມ່ ຂອງລາວຝາກຝັງໃຫ້ຊ່ວຍເບິ່ງແຍງເຂັ້ມງວດ ກວດກາເລື່ອງຮຽນເປັນພິເສດຈະມີບັນຫາຄືເລື່ອງຕີກັນ ແລະ ທະເລາະວິວາດ.

ຈາກການຢ້ຽມຢາມເຮືອນຂອງທ້າວ ລຸນ ພໍສະຫລຸບໄດ້ວ່າ ສະຖານທີ່ພັກອາໄສຄ່ອນຂ້າງຄັບແຄບ ບໍລິເວນໂດຍອ້ອມຕົວອາຄານບໍ່ຄ່ອຍສະອາດຮຽບຮ້ອຍຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສະອາດພາຍໃນຫ້ອງພັກອາໄສພໍໃຊ້ ຄວາມສຳພັນພາຍໃນລະຫວ່າງສະມາຊິກໃນຄອບຄົວຄ່ອນຂ້າງຫ່າງເຫີນ ທ້າວ ລຸນ ຕ້ອງການເປັນອິດສະຫລະບໍ່ຢາກຖືກບັງຄັບເລື່ອງການຮຽນຈຶ່ງຕ້ອງໜີໄປທ່ຽວລິ້ນກັບໝູ່ເພື່ອນ.

## 5. ຂໍ້ມູນຈາກລະບຽບສະສົມ

ພົບວ່າ ທ້າວ ລຸນມີຜົນການຮຽນດີບໍ່ມີບັນຫາດ້ານສຸກຂະພາບ, ອາໄສຢູ່ກັບຍາດພີ່ນ້ອງ, ຖິ່ນເດີມເປັນຄົນຕ່າງແຂວງ.

## 6. ຂໍ້ມູນຈາກບັນທຶກປະຈຳວັນ

ຈາກການບັນທຶກປະຈຳວັນຕະຫຼອດໄລຍະເວລາ 1 ອາທິດພົບວ່າ ທ້າວ ລຸນ ມີກິດຈະກຳປະຈຳວັນ ຄ້າຍຄືກັນຕື່ນນອນເວລາ 07.00 . ຈາກນັ້ນພາລະກິດສ່ວນຕົວແລ້ວເດີນທາງໄປໂຮງຮຽນ ຕອນເລີກຮຽນຊ້ອມຫລິ້ນກິລາທີ່ໂຮງຮຽນ ແລະ ໄປຍ່າງຫລິ້ນບ່ອນອື່ນໆກັບໝູ່ເພື່ອນ ກັບບ້ານຮັບປະທານອາຫານເຢັນແລ້ວຫລິ້ນເກມອອນໄລຣເວລາ 18.00-20.00. ແລ້ວເບິ່ງໂທລະທັດ, ເຮັດວຽກບ້ານ ແລະ ເຂົ້ານອນເວລາ 23.00 .

ຈາກການບັນທຶກປະຈຳວັນສະຫລຸບໄດ້ວ່າ ທ້າວ ລຸນ ມັກຫລິ້ນກິລາ ແລະ ໄປຍ່າງຫລິ້ນກັບໝູ່ເພື່ອນເຮັດວຽກບ້ານ ແລະ ເກມອອນໄລຣ.

## 7. ຂໍ້ມູນດ້ານພຶດຕິກຳຄວາມຮຸນແຮງ

ຈາກການສຳພາດ ທ້າວ ລຸນ ເຮັດໃຫ້ຮູ້ວ່າ ລາວກັບຄົນທີ່ມີເລື່ອງຕີກັນພາຍໃນຫ້ອງຮຽນຂອງຕົນເອງມີສາເຫດມາຈາກການບໍ່ມັກໜ້າກັນ ຄົນທີ່ມີເລື່ອງກັບລາວມີອາຍຸລຸ້ນດຽວກັນແຕ່ຢູ່ຄົນລະຫ້ອງ ເມື່ອໄປເຖິງ ທ້າວ ລຸນເປັນຄົນຊົກເຂົ້າທີ່ໜ້າຂອງເຂົາເຈົ້າກ່ອນ ຕີກັນໄປປະມານ 5 ນາທີ ໝູ່ເພື່ອນຂອງເຂົາເຈົ້າອີກ 5 ຄົນກໍເຂົ້າລຸມທຳຮ້າຍຕົນ ຈຶ່ງເຮັດໃຫ້ໝູ່ເພື່ອນຂອງຕົນເອງອີກ 4 ຄົນເຂົ້າມາດຕີຊ່ວຍແລ້ວອາຈານຝ່າຍປົກຄອງກໍຂຶ້ນມາພົບ ແລະ ນຳຕົວໄປອົບຮົມ ດ້ານພຶດຕິກຳ ທ້າວ ລຸນ ມີເລືອດໄຫຼທີ່ດັງ ແລະ ມີຮອຍຊ້ຳຕາມໃບໜ້າ ແລະ ລຳຕົວ.

- ການວິເຄາະຂໍ້ມູນ

ຈາກການໃຊ້ເຕັກນິກການລວບລວມຂໍ້ມູນທັງ 6 ເຕັກນິກໄດ້ແກ່ ແບບສອບຖາມດ້ານສ່ວນບຸກຄົນ, ແບບສັງເກດ, ການຢ້ຽມຢາມເຮືອນ, ລະບຽບສະສົມ, ບັນທຶກປະຈຳວັນ ແລະ ການສຳພາດດັ່ງ 3 ດ້ານ ຄື ດ້ານສ່ວນຕົວ, ດ້ານຄອບຄົວ ແລະ ດ້ານສັງຄົມ ສາມາດສະຫລຸບ ແລະ ວິເຄາະຂໍ້ມູນ ສາເຫດທີ່ເປັນແນວໂນ້ມຂອງການເກີດພຶດຕິກຳຄວາມຮຸນແຮງທ້າວລຸນໄດ້ດັ່ງຕໍ່ນີ້:

2. ສາເຫດດ້ານຕົນເອງ

ຈາກການສຳພາດ ແລະ ການສັງເກດເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ ທ້າວ ລຸນ ມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນເກີດຈາກຕົວັຂອງລາວເອງຄື ມີທັດສະນຄະຕິກ່ຽວກັບພຶດຕິກຳການໃຊ້ຄວາມຮຸນແຮງວ່າເປັນທີ່ຍອມຮັບໃນໝູ່ເພື່ອນເປັນການໃຫ້ຄວາມຊ່ວຍເຫລືອໝູ່ເພື່ອນເມື່ອຖືກທຳຮ້າຍປະກອບກັບອາລົມຂອງໄວລຸ້ນທີ່ໂມໂຫງ່າຍຂາດຄວາມອົດທົນໃຫ້ຄວາມສຳຄັນກັບໝູ່ເພື່ອນຫລາຍຕ້ອງເຂົ້າໄປຊ່ວຍເຫຼືອໝູ່ເພື່ອນເມື່ອມີເຫດທະເລາະວິວາດກັນ.

8. ສາເຫດດ້ານຄອບຄົວ

ຈາກແບບສອບຖາມການສັງເກດ, ການສຳພາດ ແລະ ການຢ້ຽມຢາມເຮືອນເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ ທ້າວລຸນ ມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນເກີດຈາກພໍ່ແມ່ບໍ່ໄດ້ເອົາໃຈໃສ່ເທົ່າທີ່ຄວນພັກອາໄສກັບຍາດ ຜູ້ປົກຄອງເຂັ້ມງວດກວດກາເລື່ອງຜົນການຮຽນ ແລະ ລາວບໍ່ມີຫ້ອງພັກອາໄສທີ່ເປັນສ່ວນຕົວຕ້ອງການອິດສະຫລະມັກໜີໄປທ່ຽວຫຼິ້ນກັບໝູ່ເພື່ອນໃນມື້ພັກ.

9. ສາເຫດທາງສັງຄົມ

ຈາກການສຳພາດ ແລະ ການສັງເກດເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມທຳໃຫ້ທ້າວ ລຸນ ມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນເກີດຈາກອິດທິພົນຂອງກຸ່ມໝູ່ເພື່ອນ ທ້າວລຸນໃຫ້ຄວາມສຳຄັນກັບໝູ່ເພື່ອນ ຫລາຍເມື່ອໝູ່ເພື່ອນມີເລື່ອງຕີກັນຕ້ອງເຂົ້າໄປຮ່ວມທຸກຄັ້ງ ລາວໄດ້ຮັບຊົມພາບກ່ຽວກັບນັກຮຽນຕີກັນທາງໂທລະທັດຫຼາຍຄັ້ງ ຈົນເກີດຄວາມຊິນຊາ ແລະ ມີທັດສະນະຄະຕິຕໍ່ພາບທີ່ໄດ້ຮັບຊົມວ່າຄວາມຮຸນແຮງໃນໄວລຸ້ນເປັນເລື່ອງທຳມະດາ ເປັນການສະແດງອອກເຖິງຄວາມເກັ່ງ ແລະ ກ້າຫານບໍ່ຍອມໃຫ້ໃຜຂົ່ມເຫັງ ທ້າວລຸນໃຊ້ເວລາໃນການຫຼິ້ນເກມອ່ອນໄລຄທີ່ມີເນື້ອຫາກ່ຽວຂ້ອງກັບຄວາມຮຸນແຮງມື້ລະ 2 ຊົ່ວໂມງຈຶ່ງເປັນແນວໂນ້ມໃຫ້ລາວຊຶມຊັບຮັບເອົາພຶດຕິກຳຄວາມຮຸນແຮງນັ້ນໄວ້ ແລະ ຍັງສົ່ງຜົນໃຫ້ລາວກັບສະມາຊິກໃນຄອບຄົວມີຄວາມສຳພັນທີ່ຫ່າງເຫີນ.

- **ແນວທາງໃນການຊ່ວຍເຫຼືອ**

ຈາກການວິເຄາະແນວໂນ້ມທີ່ເປັນສາເຫດຂອງການເກີດພຶດຕິກຳຄວາມຮຸນແຮງຂອງ ທ້າວ ລຸນທັງ 3 ດ້ານ ໄດ້ແກ່ ດ້ານຕົນເອງ, ດ້ານຄອບຄົວ ແລະ ດ້ານອິດທິພົນທາງສັງຄົມຜູ້ວິໄຈໄດ້ດຳເນີນການຫາແນວທາງ ຊ່ວຍເຫຼືອດັ່ງຕໍ່ໄປນີ້:

3. ການຊ່ວຍເຫຼືອຢູ່ໂຮງຮຽນ

1.1 ຄູແນະແນວທາງໃຫ້ມີການປັບປ່ຽນພຶດຕິກຳໃຫ້ມີຄວາມເໝາະສົມ ແລະ ມີຄວາມຮັບຜິດຊອບຮູ້ຈັກທົບທວນເຖິງຜົນເສຍຂອງພຶດຕິກຳຄວາມຮຸນແຮງຂອງຕົນເອງ ມີຄວາມຮັບຜິດຊອບໃນຖານະລູກ ແລະການເປັນນັກຮຽນ ໃຫ້ຄວາມໝັ້ນໃຈ ແລະ ໃຫ້ກຳລັງໃຈຕະຫລອດຈົນເອົາໃຈໃສ່ແບບໃກ້ຊິດກັບທ້າວ ລຸນ ເພື່ອໃຫ້ມີຄວາມອົບອຸ່ນ ເຊື່ອໝັ້ນໃນຕົນເອງສາມາດປັບປຸງພຶດຕິກຳໃຫ້ມີຄວາມເໝາະສົມຫຼຸດພຶດຕິກຳຄວາມຮຸນແຮງ.

1.2 ຂໍຄວາມຊ່ວຍເຫຼືອຈາກໝູ່ເພື່ອນໃນຫ້ອງໂດຍສະເພາະໝູ່ເພື່ອນສະໜິດຂອງ ທ້າວ ລຸນ ເມື່ອມີເວລາວ່າງໃຫ້ເຮັດກິດຈະກຳທີ່ສ້າງສັນແທນທີ່ຈະໃຊ້ເວລາສ່ວນໃຫຍ່ໄປກັບການຍ່າງຫຼິ້ນ ຫລື ຫຼິ້ນເກມອອນໄລຣທີ່ມີເນື້ອຫາຄວາມຮຸນແຮງ.

4. ການຊ່ວຍເຫຼືອຢູ່ເຮືອນມີດັ່ງຕໍ່ໄປນີ້

2.1 ປຶກສາບັນຫາທີ່ເກີດຂຶ້ນກັບຜູ້ປົກຄອງຢູ່ເຮືອນຂອງຜູ້ຮັບການສຶກສາເພື່ອໃຫ້ເຂົ້າໃຈໃນຕົວທ້າວ ລຸນ ຫລາຍຂຶ້ນຂໍໃຫ້ພໍ່ກັບແມ່ໃຫ້ຄວາມຮັກຄວາມອົບອຸ່ນ ແລະ ໃຫ້ເວລາກັບ ທ້າວ ລຸນ ໃຫ້ຫລາຍຂຶ້ນ.

- ການທຳນາຍຜົນ

ຈາກການສຶກສາບັນຫາຂອງ ທ້າວ ລຸນ ພົບວ່າການມີພຶດຕິກຳຄວາມຮຸນແຮງຂອງ ທ້າວ ລຸນ ນັ້ນມີແນວທາງໃນການຊ່ວຍເຫລືອໃຫ້ປັບປຸງພຶດຕິກຳທີ່ບໍ່ເໝາະສົມໄດ້ຫາກ ທ້າວລຸນ ໄດ້ຮັບຄວາມຮັກ ແລະ ການເອົາໃຈໃສ່ໃຫ້ກຳລັງໃຈຈາກຄອບຄົວຫລາຍຂຶ້ນຕະຫລອດຈົນສະມາຊິກໃນຄອບຄົວໃຫ້ຄວາມຮ່ວມມືໃນແນວທາງການຊ່ວຍເຫຼືອເປັນຢ່າງດີ.

- ຂໍ້ສະເໜີແນະ

3. ຂໍ້ສະເໜີແນະສຳລັບຜູ້ຮັບການສຶກສາ.

ທ້າວ ລຸນ ຄວນທົບທວນວ່າພຶດຕິກຳການໃຊ້ຄວາມຮຸນແຮງນັ້ນເປັນພຶດຕິກຳທີ່ບໍ່ເໝາະສົມ ແລະ ສິ່ງຜົນເສຍຕໍ່ຕົນເອງ ແລະ ສະມາຊິກໃນຄອບຄົວຄວນຫາເວລາເວົ້າກັບຜູ້ປົກຄອງ ເພື່ອຄວາມໃກ້ຊິດ ແລະ ສ້າງບັນຍາກາດພາຍໃນເຮືອນໃຫ້ມີຄວາມອົບອຸ່ນເລືອກທີ່ຈະປະຕິເສດໝູ່ເພື່ອນເວລາໝູ່ເພື່ອນມີເລື່ອງຕີກັນກັບຄົນອື່ນເລືອກຄົບໝູ່ເພື່ອນທີ່ດີ ແລະ ມີກິດຈະກຳທີ່ສ້າງສັນຮ່ວມກັນ ແລະ ຂໍໃຫ້ປະຕິບັດຕາມແນວທາງໃນ ການຊ່ວຍເຫຼືອອແບບຈິງຈັງ.

4. ຂໍ້ສະເໜີແນະສຳລັບຜູ້ທີ່ກ່ຽວຂ້ອງມີດັ່ງຕໍ່ໄປນີ້

2.1 ສະມາຊິກໃນຄອບຄົວຄວນໃຫ້ກຳລັງໃຈໃນສິ່ງທີ່ ທ້າວ ລຸນ ເຮັດໄດ້ດີ ເຊັ່ນການຫລິ້ນກິລາ ເພື່ອໃຫ້ ລາວເກີດຄວາມພາກພູມໃຈໃນຕົນເອງໃຫ້ກຳລັງໃຈເມື່ອປັບປຸງພຶດຕິກຳໃຫ້ດີຂຶ້ນເພື່ອສ້າງຄວາມໝັ້ນໃຈໃນຕົນເອງໃຫ້ຄຳປຶກສາກັບທ້າວລຸນ ເມື່ອມີບັນຫາພໍ່ແມ່ຄວນໃຫ້ເວລາກັບລູກໃຫ້ຫລາຍຂຶ້ນ.

2.2 ອາຈານປະຈຳຊັ້ນແນະແນວ ແລະ ອາຈານປະຈຳວິຊາ ຄວນໃຫ້ຄວາມສົນໃຈ ແລະ ເບິ່ງແຍງຢ່າງຕໍ່ເນື່ອງ ແລະ ເຂົ້າໃຈຍອມຮັບຄວາມແຕກຕ່າງລະຫວ່າງບຸກຄົນຄວນໃຫ້ຄວາມຮັກກັບເດັກແບບຈິງໃຈ ເພື່ອໃຫ້ເກີດຄວາມໄວ້ວາງໃຈເຊື່ອໃຈບໍ່ຢ້ານຄູ ກ້າທີ່ຈະປຶກສາເລື່ອງພຶດຕິກຳຄວາມຮຸນແຮງ ຊຶມເຊົາ ແລະ ໃຫ້ ກຳລັງໃຈເມື່ອລາວສາມາດປັບປຸງພຶດຕິກຳຂອງຕົນເອງໃຫ້ດີຂຶ້ນ.

2.3 ໝູ່ເພື່ອນຂອງ ທ້າວລຸນ ຄວນທົບທວນວ່າການຍົກພວກລຸມທຳຮ້າຍກັນເປັນພຶດຕິກຳທີ່ບໍ່ເໝາະສົມ ແລະ ຕຳນຶ່ງເຖິງຜົນເສຍທີ່ຈະຕາມມາ ແລະ ໃຫ້ກຳລັງໃຈເຊິ່ງກັນ ແລະ ກັນທີ່ຈະເລີກພຶດຕິກຳການທະເລາະວິວາດເຮັດກິດຈະກຳທີ່ສ້າງສັນເມື່ອມີເວລາວ່າງ.

## ກໍລະນີສຶກສາຄົນທີ 10 ນາງ ສອນ ( ນາມສົມມຸດ )

ນາງ ຟ້າໃສ ໄລຍະເວລາທີ່ສຶກສາຕັ້ງແຕ່ວັນທີ 15 ຕຸລາ 2018 ເຖິງວັນທີ 21 ຕຸລາ 2018.

- **ລັກສະນະທົ່ວໄປ**

ຈາກການສັງເກດພົບວ່າ ນາງຟ້າໃສ ເປັນຄົນຮູບຮ່າງນ້ອຍຜິວຂາວແຕ່ງຕົວສະອາດຮຽບຮ້ອຍໃນຂະນະໃຫ້ສຳພາດເວົ້າຈາສຽງດັງຟັງຊັດ ແລະ ສຸພາບ ເປັນຄົນອາລົມດີຍິ້ມແຍ້ມແຈ່ມໃສໃນໄລຍະທຳອິດບໍ່ຄ່ອຍໃຫ້ຂໍ້ມູນດ້ານທະເລາະວິວາດເທົ່າທີ່ຄວນ ແຕ່ເມື່ອໄດ້ພົບກັນຫຼາຍຂຶ້ນ ນາງຟ້າໃສຈຶ່ງເລີ່ມມີຄວາມໄວ້ວາງໃຈ ແລະ ໃຫ້ຂໍ້ມູນຢ່າງຕໍ່ເນື່ອງດ້ວຍດີຕະຫລອດໄລຍະເວລາໃນການສຳພາດ.

ຈາກການໃຊ້ເຕັກນິກການລວບລວມຂໍ້ມູນທັງ 6 ເຕັກນິກໄດ້ແກ່ ແບບສອບຖາມດ້ານສ່ວນບຸກຄົນ, ແບບສັງເກດ, ການຢ້ຽມຢາມເຮືອນ, ລະບຽບສະສົມ, ບັນທຶກປະຈຳວັນ ແລະ ການສຳພາດດັ່ງ 3 ດ້ານ ຄື ດ້ານສ່ວນຕົວ, ດ້ານຄອບຄົວ ແລະ ດ້ານສັງຄົມ ສາມາດສະຫລຸບ ແລະ ວິເຄາະຂໍ້ມູນໄດ້ດັ່ງນີ້:

## 1. ຂໍ້ມູນຈາກແບບສອບຖາມ

ນາງ ຟ້າໃສ ອາຍຸ 14 ປີ ມີອ້າຍນ້ອງ 2 ຄົນອາໄສຢູ່ກັບແມ່ພໍ່ລ້ຽງ ແລະ ແມ່ເຖົ້າ.

## 2. ຂໍ້ມູນຈາກແບບສັງເກດ

ການວິໄຈໃນຄັ້ງນີ້ຜູ້ວິໄຈໄດ້ເຮັດການສັງເກດໃນຫ້ອງຮຽນລາຍວິຊາ ວັນທີ 15 ຕຸລາ 2018 ໃນການສັງເກດໃຊ້ເວລາ 30 ນາທີ ພົບວ່າ ນາງຟ້າໃສ ບໍ່ຄ່ອຍສົນໃຈໃນການຮຽນໂສກັນກັບໝູ່ເພື່ອນໃນຂະນະຮຽນ ບໍ່ຄ່ອຍມີສະມາທິໃນການຮຽນ ສົ່ງກິດຈະກຳບໍ່ທັນໃນຊົ່ວໂມງຮຽນ ແລະ ໄດ້ເຮັດການສັງເກດນອກຫ້ອງຮຽນ ເວລາ 12.30-13.00. ໃນວັນດຽວກັນ ພົບວ່າ ນາງຟ້າໃສ ໄປຫາຊື້ແນວກິນກາງເວັນທີ່ຂ້າງນອກໂຮງຮຽນກັບໝູ່ເພື່ອນຈາກນັ້ນໄປນັ່ງໂສກັນກັບໝູ່ເພື່ອນທີ່ບໍລິເວນໂຕະຫີນໜ້າໂຮງຮຽນຈົນເຖິງເວລາເຂົ້າຮຽນ.

# 3. ຂໍ້ມູນຈາກການສຳພາດ

## 3.1. ຂໍ້ມູນດ້ານບຸກຄົນ

### 3.1.1 ປະຫວັດສ່ວນຕົວ

ຈາກການສຳພາດນາງຟ້າໃສ ເຮັດໃຫ້ຮູ້ວ່າ ນາງຟ້າໃສ ມີອາຍຸ 14 ປີ ກຳລັງສຶກສາຢູ່ຊັ້ນມັດທະຍົມສຶກສາປີທີ 2 ໃນໂຮງຮຽນແຫ່ງໜຶ່ງໃນແຂວງ ສາລະວັນ ນາງຟ້າໃສອາໄສຢູ່ກັບແມ່ ແລະ ພໍ່ລ້ຽງ ແລະ ແມ່ເຖົ້າແລະ ນ້ອງຊາຍ ນາງຟ້າໃສເລົ່າວ່າພໍ່ປະຢ່າຮ້າງກັບແມ່ໄປມີເມຍໃໝ່ ແລະ ບໍ່ເຄີຍຕິດຕໍ່ມາອີກເລີຍຕັ້ງແຕ່ນາງຟ້າໃສອາຍຸໄດ້ 8 ປີ ຕໍ່ມາແມ່ໄດ້ແຕ່ງງານໃໝ່ຕອນນາງຟ້າໃສອາຍຸໄດ້ 11 ປີ ນາງຟ້າໃສເລົ່າວ່າເວລາວ່າງມັກໄປຢ່າງຫຼິ້ນທີ່ຕະຫຼາດນັດກັບໝູ່ເພື່ອນສະໜິດແຕ່ແມ່ຈະຄອຍຖ້າຫ້າມບໍ່ຢາກໃຫ້ໄປ ຈຶ່ງຜິດໃຈກັນເປັນປະຈຳ ແລະ ຜິດກັບແມ່ເຖົ້າເລື່ອງຂົ່ມເຫັງນ້ອງຊາຍ ນາງຟ້າໃສເຄີຍຄິດໜີອອກຈາກເຮືອນດ້ວຍຄວາມເບື່ອໜ່າຍຄົນໃນຄອບຄົວ ສ່ວນທີ່ໂຮງຮຽນນາງຟ້າໃສເລົ່າວ່າຖືກຕັດຄະແນນຫຼາຍເພາະຕັກເຕືອນຫຼາຍຄັ້ງເລື່ອງຊິງຜົມຜິດລະບຽບຂອງໂຮງຮຽນ ຜົນການຮຽນນັ້ນບໍ່ຄ່ອຍດີເພາະໂຕນໜີຮຽນເລື້ອຍໆບາງຄັ້ງໝູ່ເພື່ອນຊວນກໍໜີຮຽນກັບໝູ່ເພື່ອນ ບາງຄັ້ງກໍບໍ່ຢາກຮຽນເອງເພາະບໍ່ມັກຄູບາງຄົນ ນາງຟ້າໃສຕ້ອງການທີ່ຈະສຶກສາຕໍ່ໃນລະດັບຊັ້ນມັດຍົມປາຍທີ່ນີ້ເພາະແມ່ຈະເປັນຫ່ວງເລື່ອງນີ້ຫຼາຍ ໂດຍຈະຄອຍຖ້າກວດສອບຜົນການຮຽນຂອງລູກຢູ່ສະເໝີນາງຟ້າໃສ ເລົ່າວ່າຖືກແມ່ກົດດັນເລື່ອງການຮຽນຈົນເຮັດໃຫ້ຕົນເອງນັ້ນຮູ້ສຶກຄຽດ ແລະ ເບື່ອໜ່າຍການຮຽນ ບໍ່ຢາກຢູ່ບ້ານຢາກຢູ່ກັບໝູ່ເພື່ອນຫລາຍກວ່າ.

### 3.1.2 ດ້ານທັດສະນະຄະຕິຕໍ່ພຶດຕິກຳຄວາມຮຸນແຮງ

ຈາກການສຳພາດນາງຟ້າໃສ ບອກວ່າຄິດວ່າການທີ່ນັກຮຽນໄວລຸ້ນມີພຶດຕິກຳການໃຊ້ຄວາມຮຸນແຮງທຳຮ້າຍກັນນັ້ນເປັນເລື່ອງທີ່ທຳມະດາຂອງໄວລຸ້ນທີ່ຕ້ອງທະເລາະກັນເປັນປົກກະຕິເມື່ອມີເລື່ອງບໍ່ເຂົ້າໃຈກັນ.

### 3.1.3 ການໃຊ້ເວລາວ່າງ

ຈາກການສຳພາດ ນາງຟ້າໃສ ພົບວ່າ ມັກໄປຢ່າງຫລິ້ນຕະຫຼາດນັດກັບໝູ່ເພື່ອນໃນກຸ່ມໃນຕອນເລີກຮຽນ ແລະ ໃນມື້ພັກເວລາວ່າງທີ່ບ້ານມັກຫຼິ້ນເກມອອນໄລຣ.

## 3.2. ຂໍ້ມູນດ້ານຄອບຄົວ

ຈາກການສຳພາດນາງຟ້າໃສ ພົບວ່າ ອາໄສຢູ່ກັບແມ່ ແລະ ພໍ່ລ້ຽງ, ແມ່ເຖົ້າ ແລະ ນ້ອງຊາຍ ນາງຟ້າໃສບໍ່ໄດ້ພົບກັບພໍ່ອີກເລີຍຕັ້ງແຕ່ອາຍຸ 8 ປີ ແມ່ແຕ່ງງານໃໝ່ຕອນນາງຟ້າໃສອາຍຸໄດ້ 11 ປີ ຕອນທີ່ພໍ່ຍັງຢູ່ທີ່ເຮືອນຈະເກາະຜິດຕົບຕີກັບແມ່ສະເໝີຈົນພໍ່ຕ້ອງໜີໄປແຕ່ງງານໃໝ່ນາງຟ້າໃສເລົ່າວ່າແມ່ຈະຄອຍຖ້າຫ້າມບໍ່ໃຫ້ອອກໄປຂ້າງນອກກັບໝູ່ເພື່ອນບໍ່ວ່າຈະໄປຊື້ເຄື່ອງ ຫລື ໄປຢ່າງຫລິ້ນທີ່ຕະຫຼາດນັດ ແລະ ຈະຫ້າມບໍ່ໃຫ້ຄົບໝູ່ເພື່ອນເພາະບໍ່ຢາກໃຫ້ອອກໄປນອກເຮືອນ ຈຶ່ງເຮັດໃຫ້ຜິດກັນເປັນປະຈຳ ນ້ອງຊາຍນັ້ນເປັນເດັກພິເສດເວລານ້ອງລົ້ມແມ່ເຖົ້າກໍຈະມັກມາດ່າວ່ານາງຟ້າໃສນັ້ນຂົ່ມເຫັງ ນ້ອງຊາຍບອກວ່ານ້ອງລົ້ມເອງແມ່ເຖົ້າກໍບໍ່ເຊື່ອເວລາຄະແນນສອບບໍ່ດີແມ່ກໍດ່າວ່ານາງຟ້າໃສບໍ່ຕັ້ງໃຈຮຽນ ແລະ ບອກວ່າຈະບໍ່ສົ່ງ

ຮຽນອີກຖ້າຜົນການຮຽນບໍ່ດີກຂຶ້ນນາງຟ້າໃສເຄີຍຄິດທີ່ຈະໜີອອກຈາກບ້ານເພາະຄິດວ່າບໍ່ມີໃຜເຂົ້າໃຈ ແລະ ເກີດຄວາມເບື່ອໜ່າຍບັນຍາກາດພາຍໃນເຮືອນ.

### 3.3. ຂໍ້ມູນທາງສັງຄົມ

#### 3.3.1 ດ້ານໝູ່ເພື່ອນ

ຈາກການສຳພາດນາງຟ້າໃສ ພົບວ່າ ລາວມີໝູ່ເພື່ອນສະໜິດ 1 ຄົນ ລາວເລົ່າວ່າໝູ່ເພື່ອນມີຄວາມຈິງໃຈຕໍ່ຕົນເອງ ແລະ ຮັກເພື່ອນຫລາຍໄປໃສກໍຈະໄປນຳກັນເຫັນໝູ່ເພື່ອນຢູ່ທີ່ໃດຕົນເອງກໍຈະຢູ່ທີ່ນັ້ນນຳກັນເວລາວ່າງຈະມັກໄປຍ່າງຫຼິ້ນຕະຫຼາດນັດກັບໝູ່ເພື່ອນ ບາງຄັ້ງກໍໜີຮຽນນຳກັນ, ບາງຄັ້ງກໍປຶກສາກັນເລື່ອງບັນຫາທາງຄອບຄົວ ແລະ ເລື່ອງການຮຽນ ເມື່ອກັບເຖິງເຮືອນຕອນແລງກໍຈະຂໍແມ່ອອກມາຫາໝູ່ເພື່ອນເພາະເຮືອນຢູ່ກົງກັນຂ້າມກັນແຕ່ແມ່ກໍບໍ່ຢາກໃຫ້ໄປຕ້ອງການໃຫ້ຢູ່ເຮືອນ ຫຼັງຮັບປະທານອາຫານແລງຮຽບຮ້ອຍແລ້ວນາງຟ້າໃສຈະເກັບຕົວງຽບຢູ່ໃນຫ້ອງຂອງຕົວເອງ ແລະ ໂສກັບເພື່ອນທາງເຟດບຸກ ຫຼືແອັບອື່ນໆ...

#### 3.3.2 ຈາກການສຳພາດໝູ່ເພື່ອນສະໜິດ

ຈາກການສຳພາດໝູ່ເພື່ອນສະໜິດທີ່ໂຮງຮຽນຂອງນາງຟ້າໃສຈຳນວນ 1 ຄົນ ເຮັດການສຳພາດເວລາ 30 ນາທີພົບວ່ານາງຟ້າໃສ ເປັນຄົນຮັກໝູ່ເພື່ອນຫລາຍເວລາໝູ່ເພື່ອນມີບັນຫາເລື່ອງຕົບຕີ ຈະໃຫ້ຄວາມຊ່ວຍເຫຼືອທຸກຄັ້ງ ມີຄວາມສະໜິດສະໜົມກັນຫລາຍບໍ່ວ່າຢູ່ທີ່ໂຮງຮຽນ ຫລື ໄປທ່ຽວຕາມຕະຫຼາດນັດຈະໄປນຳກັນສະເໝີ ສາມາດປຶກສາເຖິງບັນຫາພາຍໃນຄອບຄົວກັບຕົນໄດ້.

#### 3.3.3 ຈາກການສຳພາດອາຈານປະຈຳວິຊາ ແລະ ປະຈຳຊັ້ນ

ພົບວ່ານາງຟ້າໃສ ເປັນເດັກຄ່ອນຂ້າງມີຜົນການຮຽນຕໍ່າເວລາຢູ່ໃນຫ້ອງຮຽນບໍ່ຄ່ອຍສົນໃຈການຮຽນມັກນັ່ງໂສກັນກັບເພື່ອນ ບາງຄັ້ງກໍໜີຮຽນບໍ່ຄ່ອຍໃຫ້ຄວາມຮ່ວມມືໃນການເຮັດກິດຈະກຳບໍ່ມີຄວາມຮັບຜິດຊອບບໍ່ຄ່ອຍສົ່ງກິດຈະກຳທີ່ໄດ້ຮັບມອບໝາຍ ເວົ້າຈາບໍ່ສຸພາບກັບໝູ່ເພື່ອນໃນຫ້ອງຮຽນ.

#### 3.3.4 ຈາກການສຳພາດອາຈານຝ່າຍປົກຄອງ

ພົບວ່ານາງຟ້າໃສ ມີເລື່ອງຈົບຕີກັນທະເລາະວິວາດກັບໝູ່ເພື່ອນໃນຫ້ອງດຽວກັນຫຼາຍຄັ້ງທີ່ບໍລິເວນຫ້ອງຮຽນຊ່ວງພັກກາງເວັນ.

#### 3.3.5 ດ້ານສື່

ຈາກການສຳພາດນາງຟ້າໃສ ພົບວ່າມັກຕິດຕາມຂ່າວນັກຮຽນນັກສຶກສາທຳຮ້າຍກັນທາງໂທລະທັດ ແລະ ສື່ອອນໄລຣ ເພາະຈະໄດ້ຮູ້ວ່າໂຮງຮຽນໃດເປັນຄູ່ກໍລະນີກັບໃຜ ບາງຄັ້ງໝູ່ເພື່ອນກໍສົ່ງເປັນຄລິບວິດີໂອທີ່ນັກຮຽນຜູ້ຍິງຕົບກັນມາໃຫ້ທາງໂທລະສັບ ໄດ້ຮັບຊົມພາບຄວາມຮຸນແຮງຂອງນັກຮຽນທຳຮ້າຍກັນກໍຄິດວ່າເປັນເລື່ອງປົກກະຕິຂອງໄວລຸ້ນ.

### 3.3.6 ດ້ານເກມອອນໄລ

ຈາກການສຳພາດເດັກນາງຟ້າໃສ ພົບວ່າມັກຫລິ້ນເກມອ່ອນໄລຮກັບໝູ່ເພື່ອນຄືເກມການຕໍ່ສູ້ຖ້າອີກຝ່າຍເສຍຊີວິດຕົນເອງເຖິງຈະຊະນະຫລິ້ນເກືອບທຸກມື້ ໃນຕອນແລງມື້ລະປະມານ 3 ຊົ່ວໂມງ ນາງຟ້າໃສບອກວ່າການຫຼິ້ນເກມເຮັດໃຫ້ຮູ້ສຶກມ່ວນ ແລະ ຄາຍຄຽດໄດ້.

# 4. ຂໍ້ມູນຈາກການຍ້ຽມຢາມເຮືອນ

## 4.1. ຈາກການສຳພາດ ແລະ ການສັງເກດ

ເຮັດໃຫ້ຮູ້ວ່ານາງຟ້າໃສພັກຢູ່ຕຶກແຖວ 2 ຊັ້ນພາຍໃນທີ່ພັກອາໄສຄ່ອນຂ້າງແຄບມີຄວາມສະອາດພໍໃຊ້ຊັ້ນລຸ່ມເປີດໂລ່ງເປັນຫ້ອງນັ່ງຫລິ້ນມີເຄື່ອງໃຊ້ໄຟຟ້າຕູ້ເຢັນ, ພັດລົມ, ໂທລະທັດ, ມີຫ້ອງນອນ 1 ຫ້ອງສຳລັບແມ່ເຖົ້າກັບນ້ອງຊາຍ, ພໍ່ ແລະ ແມ່ພັກຢູ່ບໍລິເວນຊັ້ນ 2 ນາງຟ້າໃສມີຫ້ອງພັກສ່ວນຕົວຢູ່ບໍລິເວນຊັ້ນ 2 ພາຍໃນຫ້ອງສະອາດໜັງສືຮຽນຈັດວາງຮຽບຮ້ອຍມີເຄື່ອງຄອມພິວເຕີ 1 ໜ່ວຍ ທີ່ພັກອາໄສຢູ່ຫ່າງຈາກຖະໜົນຫົນທາງໃຫຍ່ປະມານ 30 ແມັດຕະຫລອດ ສອງຂ້າງທາງເຂົ້າມາໃນທີ່ພັກມີຮ້ານອາຫານ ແລະ ຮ້ານເສີມສວຍງາມ ບໍລິເວນທົ່ວໄປອ້ອມນອກທີ່ພັກອາໄສບໍ່ຄ່ອຍສະອາດປານໃດ ມີຂີ້ເຫຍື້ອສີດຳຫຼາຍວາງຖິ້ມໄວ້ບໍລິເວນເສົາໄຟຟ້າທາງຜ່ານເຂົ້າມາຍັງທີພັກອາໄສ.

## 4.2. ຈາກການສຳພາດແມ່ຂອງນາງຟ້າໃສ

ພົບວ່ານາງຟ້າໃສ ເປັນເດັກຄ່ອນຂ້າງຂີ້ດື້ເອົາແຕ່ໃຈມັກອອກໄປທ່ຽວກັບໝູ່ເພື່ອນບໍ່ຄ່ອຍເຊື່ອຟັງເຄີຍທະເລາະກັນຫຼາຍຄັ້ງເລື່ອງການໜີຮຽນ ແລະ ການເຮັດຜິດກົດລະບຽບຂອງໂຮງຮຽນຈົນຕ້ອງຖືກຕັດຄະແນນ ລວມເຖິງການທະເລາະວິວາດກັບໝູ່ເພື່ອນໃນຫ້ອງຮຽນນຳກັນ.

## 4.3. ຈາກການສຳພາດແມ່ເຖົ້າຂອງນາງຟ້າໃສ

ພົບວ່າເປັນເດັກຂີ້ດື້ບໍ່ຄ່ອຍເຊື່ອຟັງບໍ່ຄອຍຊ່ວຍເຫຼືອວຽກເຮືອນ ມັກອອກໄປທ່ຽວຫຼິ້ນກັບໝູ່ເພື່ອນໃນມື້ພັກ ມັກຍອກນ້ອງຈຶ່ງມີເລື່ອງຜິດໃຈກັນເປັນປະຈຳ.

ຈາກການຍ້ຽມຢາມເຮືອນບ້ານຂອງນາງຟ້າໃສ ພໍສະຫລຸບໄດ້ວ່າ ສະຖານທີ່ພັກອາໄສຄ່ອນຂ້າງຄັບແຄບ ບໍລິເວນໂດຍອ້ອມທີ່ພັກອາໄສບໍ່ຄ່ອຍສະອາດຮຽບຮ້ອຍ ສະມາຊິກພາຍໃນຄອບຄົວມີການທະເລາະຜິດໃຈກັນຢູ່ເປັນປະຈຳ ຄວາມສຳພັນພາຍໃນລະຫວ່າງສະມາຊິກໃນຄອບຄົວຄ່ອນຂ້າງຫ່າງເຫີນ.

# 5. ຂໍ້ມູນຈາກລະບຽບສະສົມ

ພົບວ່ານາງຟ້າໃສ ມີຜົນການຮຽນຕໍ່າບໍ່ມີບັນຫາດ້ານສຸຂະພາບ, ອາໄສກັບແມ່ ແລະ ພໍ່ລ້ຽງ, ນ້ອງຊາຍແລະ ແມ່ເຖົ້າ.

# 6. ຂໍ້ມູນຈາກບັນທຶກປະຈຳວັນ

ຈາກການບັນທຶກປະຈຳວັນຕະຫລອດໄລຍະເວລາ 1 ອາທິດພົບວ່ານາງຟ້າໃສມີກິດຈະກຳປະຈຳວັນ ຄ້າຍຄືກັນ ຄື ຕື່ນນອນເວລາ 06.30 ຈາກນັ້ນເຮັດພາລະກິດສ່ວນຕົວແລ້ວເດີນທາງໄປໂຮງຮຽນ ຕອນ

ເລີກ ຮຽນໄປຍ່າງຫລິ້ນຕະຫຼາດນັດກັບໝູ່ເພື່ອນ ກັບເຮືອນຮັບປະທານອາຫານແລງແລ້ວລິນກັນກັບໝູ່ເພື່ອນທາງ ເຟດບຸກ ແລະ ແອັບອື່ນໆ ຫລິ້ນເກມອອນໄລຣເວລາ 18.00-21.00 . ແລ້ວເບິ່ງໂທລະທັດເຂົ້ານອນເວລາ 22.00.

ຈາກການບັນທຶກປະຈຳວັນ ສະຫລຸບໄດ້ວ່າ ນາງຟ້າໃສ ມັກໄປຍ່າງຫລິ້ນກັບໝູ່ເພື່ອນບໍ່ມີການທົບທວນບົດຮຽນ ຫລື ເຮັດວຽກບ້ານໃຊ້ເວລາວ່າງໄປກັບການຫລິ້ນເກມອອນໄລຣແລ້ວລິນກັນກັບໝູ່ເພື່ອນທາງ ເຟດບຸກ ແລະ ແອັບອື່ນໆ...

## 7. ຂໍ້ມູນດ້ານພຶດຕິກຳຄວາມຮຸນແຮງ

ຈາກການສຳພາດ ນາງຟ້າໃສ ເລົ່າວ່າສາເຫດທີ່ເຮັດໃຫ້ມີເລື່ອງທະເລາະວິວາດກັນເພາະມີນັກຮຽນຍິງຄົນໜຶ່ງຮຽນຢູ່ໃນຫ້ອງດຽວກັນມາທ້າໃຫ້ຕົບຕີກັນມາດົນແລ້ວທົນບໍ່ໄຫວກໍເລີຍຮັບຄຳທ້າເຂົາໄປອາລົມພາໄປນຳແດກໍເລີຍເປັນຄົນຕົບຕີເຂົາກ່ອນທີ່ຫ້ອງຮຽນໃນຊ່ວງພັກກາງເວັນໝູ່ເພື່ອນຈະຄອຍຖ້າເຝົ້າເບິ່ງຕົ້ນທາງໃຫ້ທີ່ໜ້າຫ້ອງຮຽນບໍ່ມີໃຜຫ້າມສຸດທ້າຍອາຈານມາພົບກໍເລີຍໄດ້ເຂົ້າຫ້ອງປົກຄອງ ນາງຟ້າໃສເລົ່າວ່າຖືກຕີກັນລະ 3 ບາດ ແລະ ບອກອີກວ່າເຄີຍຖືກອາຈານລົງໂທດມາແລ້ວຫຼາຍຄັ້ງ.

- **ການວິເຄາະຂໍ້ມູນ**

ຈາກການໃຊ້ເຕັກນິກການລວບລວມຂໍ້ມູນທັງ 6 ເຕັກນິກໄດ້ແກ່ ແບບສອບຖາມດ້ານສ່ວນບຸກຄົນ, ແບບສັງເກດ, ການຢ້ຽມຢາມເຮືອນ, ລະບຽບສະສົມ, ບັນທຶກປະຈຳວັນ ແລະ ການສຳພັນພາດດັ່ງ 3 ດ້ານ ຄື ດ້ານສ່ວນຕົວ, ດ້ານຄອບຄົວ ແລະ ດ້ານສັງຄົມ ສາມາດສະຫລຸບ ແລະ ວິເຄາະຂໍ້ມູນສາເຫດທີ່ເປັນແນວໂນ້ມຂອງການເກີດພຶດຕິກຳຄວາມຮຸນແຮງຂອງນາງຟ້າໃສໄດ້ດັ່ງຕໍ່ນີ້:

1. ສາເຫດດ້ານນສ່ວນຕົວ

ຈາກການສຳພາດ ແລະ ການສັງເກດເຮັດໃຫ້ຮູ້ວ່າ ສາເຫດທີ່ເປັນແນວໂນ້ມເຮັດໃຫ້ນາງຟ້າໃສມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນເກີດຈາກຕົວຂອງນາງຟ້າໃສເອງຄື ມີທັດສະນະຄະຕິກ່ຽວກັບພຶດຕິກຳການໃຊ້ຄວາມຮຸນແຮງວ່າເປັນເລື່ອງທຳມະດາຂອງໄວລຸ້ນ ໃຊ້ເວລາວ່າງໄປກັບການທ່ຽວຫຼີ້ນກັບໝູ່ເພື່ອນປະກອບກັບ ອາລົມຂອງໄວລຸ້ນທີ່ໂມໂຫງ່າຍຂາດຄວາມອົດທົນ ແລະ ມີລັກສະນະບຸກຄະລິກທີ່ຄ່ອນຂ້າງບໍ່ຍອມໃຜອາລົມຮ້ອນບໍ່ຄ່ອຍມີສະມາທິໃນການຮຽນ.

2. ສາເຫດດ້ານຄອບຄົວ

ຈາກການສັງເກດການສຳພາດ ແລະ ການຢ້ຽມຢາມເຮືອນເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ນາງຟ້າໃສມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນເກີດຈາກບັນຍາກາດທີ່ບໍ່ໜ້າຢູ່ອາໄສສະມາຊິກພາຍໃນຄອບຄົວທະເລາະວິວາດກັນຢູ່ສະເໝີ ແມ່ເຂັ້ມງວດຫຼາຍບໍ່ຢາກໃຫ້ອອກໄປທ່ຽວຫລິ້ນກັບໝູ່ເພື່ອນ ຈຶ່ງເຮັດໃຫ້ລູກຮູ້ສຶກຕໍ່ຕ້ານ ແລະ ຕ້ອງການອິດສະຫລະຈຶ່ງຢາກຫຼີກໜີຈາກເຮືອນມາຢູ່ກັບໝູ່ເພື່ອນປະກອບກັບນາງຟ້າໃສເຄີຍເຫັນພໍ່ແມ່ຜິດກັນຢູ່ສະເໝີກ່ອນພໍ່ຈະແຍກໄປມີຄອບຄົວໃໝ່.

3. ສາເຫດທາງສັງຄົມ

ຈາກການສຳພາດ ແລະ ການສັງເກດເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ນາງຟ້າໃສມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນ ເກີດຈາກອິດທິພົນຂອງໝູ່ເພື່ອນ ລາວໃຫ້ຄວາມສຳຄັນກັບໝູ່ເພື່ອນຫລາຍເມື່ອມີບັນຫາຕ່າງໆຈະປຶກສາໝູ່ເພື່ອນແຕ່ບາງຄັ້ງໝູ່ເພື່ອນກໍບໍ່ສາມາດໃຫ້ຄຳແນະນຳວິທີແກ້ບັນຫາແບບເໝາະສົມໄດ້ ນາງຟ້າໃສໄດ້ຮັບຊົມພາບກ່ຽວກັບນັກຮຽນຕີກັນທາງໂທລະທັດເລື້ອຍໆຈົນເກີດຄວາມຊິນຊາ ແລະ ມີທັດສະນະຄະຕິຕໍ່ພາບທີ່ໄດ້ຮັບຊົມວ່າຄວາມຮຸນແຮງຂອງໄວລຸ້ນເປັນເລື່ອງທຳມະດາ ນາງຟ້າໃສໃຊ້ເວລາໃນການຫຼິ້ນເກມອອນໄລທີ່ມີເນື້ອຫາກ່ຽວຂ້ອງກັບຄວາມຮຸນແຮງມື້ລະ 3 ຊົ່ວໂມງຈຶ່ງເປັນແນວໂນ້ມໃຫ້ລາວຊຶມຊັບຮັບເອົາພຶດຕິກຳຄວາມຮຸນແຮງນັ້ນໄວ້ ແລະ ຍັງສົ່ງຜົນໃຫ້ນາງຟ້າໃສກັບສະມາຊິກໃນຄອບຄົວມີດມີຕວາມສຳພັນທີ່ຫ່າງເຫີນ.

- ແນວທາງໃນການຊ່ວຍເຫລືອ

ຈາກການວິເຄາະແນວໂນ້ມທີ່ເປັນສາເຫດຂອງການເກີດພຶດຕິກຳຄວາມຮຸນແຮງຂອງນາງຟ້າໃສທັງ 3 ດ້ານ ໄດ້ແກ່ ດ້ານຕົນເອງ, ດ້ານຄອບຄົວ ແລະ ດ້ານອິດທິພົນທາງສັງຄົມ ຜູ້ວິໄຈໄດ້ດຳເນີນການຫາແນວທາງຊ່ວຍເຫຼືອດັ່ງຕໍ່ໄປນີ້:

1. ການຊ່ວຍເຫຼືອທີ່ໂຮງຮຽນ

1.1 ຄູແນະແນວທາງໃຫ້ມີການປັບປ່ຽນພຶດຕິກຳໃຫ້ມີຄວາມເໝາະສົມ ແລະ ມີຄວາມຮັບຜິດຊອບຮູ້ຈັກເຖິງຜົນເສຍຂອງພຶດຕິກຳຄວາມຮຸນແຮງຂອງຕົນເອງ ມີຄວາມຮັບຜິດຊອບໃນຖານະລູກ ແລະ ການເປັນນັກຮຽນໃຫ້ຄວາມໝັ້ນໃຈ ແລະ ໃຫ້ກຳລັງໃຈຕະຫລອດຈົນເອົາໃຈໃສ່ແບບໃກ້ຊິດກັບເດັກເພື່ອໃຫ້ມີຄວາມອົບອຸ່ນເຊື່ອໝັ້ນໃນຕົນເອງສາມາດປັບປຸງພຶດຕິກຳໃຫ້ມີຄວາມເໝາະສົມຫຼຸດພຶດຕິກຳຄວາມຮຸນແຮງ.

1.2 ຂໍຄວາມຊ່ວຍເຫຼືອຈາກໝູ່ເພື່ອນໃນຫ້ອງໂດຍສະເພາະໝູ່ເພື່ອນສະໜິດຂອງນາງຟ້າໃສເມື່ອມີເວລາວ່າງໃຫ້ເຮັດກິດຈະກຳທີ່ສ້າງສັນແທນທີ່ຈະໃຊ້ເວລາສ່ວນໃຫຍ່ໄປກັບການຍ່າງທ່ຽວໃນ ຫລືຫຼິ້ນເກມອອນໄລທີ່ມີເນື້ອຫາຄວາມຮຸນແຮງ.

2. ການຊ່ວຍເຫຼືອຢູ່ເຮືອນມີດັ່ງຕໍ່ໄປນີ້

2.1 ປຶກສາບັນຫາທີ່ເກີດຂຶ້ນກັບຜູ້ປົກຄອງທີ່ບ້ານຂອງຜູ້ຮັບການສຶກສາ ເພື່ອໃຫ້ເຂົ້າໃຈໃນຕົວນາງຟ້າໃສຫຼາຍຂຶ້ນຂໍໃຫ້ແມ່ກັບພໍ່ລ້ຽງ ແລະ ແມ່ເຖົ້າໃຫ້ຄວາມຮັກຄວາມອົບອຸ່ນ ແລະ ໃຫ້ເວລາກັບລາວໃຫ້ຫຼາຍຂຶ້ນ.

- **ການທຳນາຍຜົນ**

ຈາກການສຶກສາບັນຫາຂອງນາງຊາວຟ້າໃສ ພົບວ່າ ການມີພຶດຕິກຳຄວາມຮຸນແຮງຂອງລາວນັ້ນມີແນວທາງໃນການຊ່ວຍເຫຼືອໃຫ້ປັບປຸງພຶດຕິກຳທີ່ບໍ່ເໝາະສົມໄດ້ຫາກນາງຟ້າໃສໄດ້ຮັບຄວາມຮັກ ແລະ

ການເອົາໃຈໃສ່ໃຫ້ກຳລັງໃຈຈາກຄອບຄົວຫຼາຍຂຶ້ນຕະຫລອດຈົນສະມາຊິກໃນຄອບຄົວໃຫ້ຄວາມຮ່ວມມື ໃນແນວທາງການຊ່ວຍເຫຼືອເປັນຢ່າງດີ.

- **ຂໍ້ສະເໜີແນະ**

2. ຂໍ້ສະເໜີແນະສຳລັບຜູ້ຮັບການສຶກສາ

ນາງຟ້າໃສຟ້າໃສຄວນຄິດວ່າພຶດຕິກຳການໃຊ້ຄວາມຮຸນແຮງນັ້ນເປັນພຶດຕິກຳທີ່ບໍ່ເໝາະສົມ ແລະ ສົ່ງຜົນເສຍຕໍ່ຕົນເອງ ແລະ ສະມາຊິກໃນຄອບຄົວ ຄວນຫາເວລາເວົ້າກັບຜູ້ປົກຄອງເພື່ອຄວາມໃກ້ຊິດ ແລະ ສ້າງບັນຍາກາດພາຍໃນຄອບຄົວໃຫ້ມີຄວາມອົບອຸ່ນ ຂໍໃຫ້ປະຕິບັດຕາມແນວທາງໃນການຊ່ວຍເຫຼືອ ແບບງຈິງຈັງ.

2. ຂໍ້ສະເໜີແນະສຳລັບຜູ້ທີ່ກ່ຽວຂ້ອງມີດັ່ງຕໍ່ໄປນີ້

2.1 ສະມາຊິກໃນຄອບຄົວຄວນໃຫ້ກຳລັງໃຈໃນສິ່ງທີ່ນາງຟ້າໃສເຮັດໄດ້ດີເພື່ອເກີດຄວາມ ພາກພູມໃຈໃນຕົນເອງ ໃຫ້ກຳລັງໃຈເມື່ອປັບປຸງພຶດຕິກຳໃຫ້ດີຂຶ້ນເພື່ອສ້າງຄວາມໝັ້ນໃຈໃນຕົນເອງໃຫ້ຄຳ ປຶກສາກັບຄູເມື່ອມີບັນຫາ.

4.2 ອາຈານປະຈຳຊັ້ນແນະແນວ ແລະ ອາຈານປະຈຳວິຊາ ຄວນໃຫ້ຄວາມສົນໃຈ ແລະ ເບິ່ງ ແຍງ ແບບຕໍ່ເນື່ອງ ແລະ ເຂົ້າໃຈຍອມຮັບຄວາມແຕກຕ່າງລະຫວ່າງບຸກຄົນ ຄວນໃຫ້ຄວາມຮັກກັບເດັກ ແບບຈິງໃຈ ເພື່ອໃຫ້ເກີດຄວາມໄວ້ວາງໃຈເຊື່ອໃຈບໍ່ຢ້ານຄູ ກ້າທີ່ຈະປຶກສາເລື່ອງພຶດຕິກຳຄວາມຮຸນແຮງ ຊົມເຊຍ ແລະໃຫ້ ກຳລັງໃຈເມື່ອນາງຟ້າໃສສາມາດປັບປຸງພຶດຕິກຳຂອງຕົນເອງໃຫ້ດີຂຶ້ນ.

4.3 ໝູ່ເພື່ອນຂອງນາງຟ້າໃສຄວນທົບທວນວ່າ ການທະເລາະຕົບຕີກັນເປັນພຶດຕິກຳທີ່ບໍ່ເໝາະ ສົມ ແລະ ຮູ້ເຖິງຜົນເສຍທີ່ຈະຕາມມາ ແລະ ໃຫ້ກຳລັງໃຈເຊິ່ງກັນ ແລະ ກັນທີ່ຈະເລີກພຶດຕິກຳການທະ ເລາະວິວາດ ເຮັດກິດຈະກຳທີ່ສ້າງສັນເມື່ອມີເວລາວ່າງ.

❖ **ສະຫຼຸບສາເຫດທີ່ສົ່ງຜົນຕໍ່ການເກີດພຶດຕິກຳຄວາມຮຸນແຮງຂອງນັກຮຽນໄວລຸ້ນ.**

ຈາກການສຶກສາພົບວ່າ ຂະບວນການເກີດພຶດຕິກຳຄວາມຮຸນແຮງຂອງນັກຮຽນໄວລຸ້ນນັ້ນເກີດຈາກ ປັດໄຈຫຼາຍໆດ້ານທັງປັດໄຈດ້ານບຸກຄະລິກ, ປັດໄຈດ້ານະຄອບຄົວ, ປັດໄຈດ້ານສັງຄົມ ລ້ວນແຕ່ເຊື່ອມ ໂຢງກັນ ແລະ ສົ່ງຜົນຕໍ່ນັກຮຽນໄວລຸ້ນດັ່ງຕໍ່ໄປນີ້:

1. ສາເຫດດ້ານຕົນເອງ

ພົບວ່ານັກຮຽນໄວລຸ້ນມີເລື່ອງຜິດກັນກັບຜູ້ປົກຄອງເປັນປະຈຳມີທັດສະນະຄະຕິຕໍ່ພຶດຕິກຳຄວາມ ຮຸນແຮງວ່າເປັນພຶດຕິກຳທີ່ເປັນປົກກະຕິທຳມະດາ ແລະ ການມີພຶດຕິກຳຄວາມຮຸນແຮງເຮັດໃຫ້ເປັນທີ່ ຍອມຮັບຂອງກຸ່ມໝູ່ເພື່ອນປະກອບກັບນັກຮຽນເປັນໄວລຸ້ນມີລັກສະນະເປັນຄົນໃນໂຫງ່າຍອາລົມປ່ຽນ ແປງໄດ້ງ່າຍ.

2. ສາເຫດດ້ານຄອບຄົວ

ພົບວ່າເກີດຈາກການມີຄອບຄົວທີ່ບໍ່ສົມບູນຄອບຄົວຢ່າຮ້າງພໍ່ ຫລື ແມ່ເສຍຊີວິດນັກຮຽນຂາດການເບິ່ງແຍງ ແລະ ເອົາໃຈໃສ່ຈາກຜູ້ປົກຄອງບັນຍາກາດຢູ່ເຮືອນບໍ່ໜ້າຢູ່ອາໄສມີການຜິດກັນລະຫວ່າງສະມາຊິກໃນຄອບຄົວ.

3. ສາເຫດທາງສັງຄົມ

3.1 ດ້ານໝູ່ເພື່ອນ ຈາກການສຶກສາພົບວ່າ ນັກຮຽນຖືກໝູ່ເພື່ອນຊັກຊວນໃຫ້ມີເລື່ອງຕີກັນທະເລາະ ວິວາດ, ຄົບໝູ່ເພື່ອນທີ່ເຄີຍກໍ່ເຫດທະເລາະວິວາດມາກ່ອນ.

3.2 ດ້ານສື່ ຈາກການສຶກສາພົບວ່າ ນັກຮຽນມັກຕິດຕາມຂ່າວນັກຮຽນນັກສຶກສາພຶດຕິກຳທຳຮ້າຍກັນສິ່ງຜົນໃຫ້ເກີດຄວາມຊິນເຄີຍຕໍ່ພຶດຕິກຳຄວາມຮຸນແຮງວ່າເປັນເລື່ອງທຳມະດາຂອງໄວລຸ້ນ

3.3 ດ້ານເກມອອນໄລຣ ຈາກການສຶກສາພົບວ່ານັກຮຽນຫລິ້ນເກມທີ່ມີເນື້ອຫາກ່ຽວກັບຄວາມຮຸນແຮງເປັນປະຈຳເຮັດໃຫ້ຊຶມຊັບເອົາພຶດຕິກຳຄວາມຮຸນແຮງໄວ້ກັບຕົວເອງ ແລະ ມາສະແດງພຶດຕິກຳຄວາມຮຸນແຮງຕໍ່ໝູ່ເພື່ອນ ຫຼື ຄົນທີ່ອ່ອນແອກວ່າ.

# ບົດທີ 5
# ສະຫຼຸບອະພິປາຍຜົນ ແລະ ຂໍ້ສະເໜີແນະ

ການສຶກສາວິໄຈ ເລື່ອງພຶດຕິກຳຄວາມຮຸນແຮງຂອງນັກຮຽນໄວລຸ້ນ ເປັນການສຶກສາລາຍກໍລະນີ (Case study) ເພື່ອຄົ້ນຫາຄວາມຈິງ ໃນທາງສັງຄົມທີ່ມີສ່ວນກ່ຽວຂ້ອງ ແລະ ເຊື່ອມໂຍງຕໍ່ພຶດຕິກຳຄວາມຮຸນແຮງຂອງນັກຮຽນໄວລຸ້ນທັງປັດໄຈພາຍໃນຂອງບຸກຄົນ, ປັດໄຈດ້ານຄອບຄົວ ແລະ ປັດໄຈດ້ານສັງຄົມ ຂອງໄວລຸ້ນກຸ່ມໜຶ່ງຈຳນວນ 10 ຄົນ ໃນໂຮງຮຽນແຫ່ງໜຶ່ງໃນໂຮງຮຽນມັດທະຍົມສາທິດວິທະຍາໄລຄູສາລະວັນ ຜູ້ວິໄຈໄດ້ໃຫ້ຄຳປຶກສາເປັນລາຍບຸກຄົນກັບກໍລະນີຕົວຢ່າງ ເພື່ອເປັນແນວທາງໃນການຊ່ວຍເຫຼືອໃຫ້ປັບພຶດຕິກຳອັນເກົ່າໄປສູ່ພຶດຕິກຳອັນໃໝ່ໃຫ້ມີຄວາມເໝາະສົມຕໍ່ໄປ.

## 1. ຈຸດປະສົງຂອງການວິໄຈ

ເພື່ອສຶກສາສາເຫດທີ່ເຮັດໃຫ້ເກີດພຶດຕິກຳຄວາມຮຸນແຮງຂອງນັກຮຽນໄວລຸ້ນ ແລະ ແນວທາງໃນການຊ່ວຍເຫຼືອ.

## 2. ຂອບເຂດຂອງການວິໄຈ

ແຫຼ່ງຂໍ້ມູນທີ່ໃຊ້ໃນການສຶກສາຄັ້ງນີ້ເປັນນັກຮຽນໄວລຸ້ນທີ່ກຳລັງສຶກສາໃນລະດັບມັດທະຍົມສຶກສາມີ ອາຍຸຕັ້ງແຕ່ 14-18 ປີ ພາກຮຽນທີ 2 ປີສຶກຮຽນ 2018 - 2019 ຂອງໂຮງຮຽນມັດທະຍົມສາທິດວິທະຍາໄລຄູສາລະວັນ ຈຳນວນ 10 ຄົນ ໂດຍວິທີການສຸ່ມແບບເຈາະຈົງ (Purposive sampling) ໂດຍຄູອາຈານປະຈຳຊັ້ນແນະນຳໃຫ້ສຶກສານັກຮຽນທັງ 10 ຄົນ ທີ່ມີພຶດຕິກຳຄວາມຮຸນແຮງມີເກນການຄັດເລືອກດັ່ງນີ້:

1) ລັກສະນະຂອງພຶດຕິກຳຄວາມຮຸນແຮງທີ່ສະແດງອອກທາງກາຍໄດ້ແກ່: ການໃຊ້ຕີນເຕະ ຫຼືຖີບ, ການໃຊ້ກຳປັ້ນຕ່ອຍ, ການໃຊ້ຝ່າມືຕົບຕີ ຫຼື ດຶງ, ການໃຊ້ອາວຸດ ຫຼື ສິ່ງຂອງທຳຮ້າຍຮ່າງກາຍເປັນເຫດໃຫ້ຜູ້ອື່ນໄດ້ຮັບບາດເຈັບ.

2) ລັກສະນະຂອງພຶດຕິກຳຄວາມຮຸນແຮງທີ່ສະແດງອອກທາງວາຈາໄດ້ແກ່: ເວົ້າເຍາະເຍີຍ, ເວົ້າຈາດູໝິ່ນຄົນຕົນອື່ນ, ໃຊ້ຄຳເວົ້າທີ່ມີລັກສະນະມຸ່ງຮ້າຍໃຫ້ຄົນອື່ນໄດ້ຮັບຜົນກະທົບທາງດ້ານຈິດໃຈ, ໃຊ້ຄຳເວົ້າຂົ່ມຂູ່ຄຸກຄາມໃຫ້ຄົນອື່ນຮູ້ສຶກຫວາດຢ້ານກົວ ແລະ ມີຄວາມຮູ້ສຶກບໍ່ປອດໄພ.

## 3. ເຄື່ອງມືທີ່ໃຊ້ໃນການສຶກສາງານວິໄຈ

ເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ໄດ້ແກ່:

1. ແບບສອບຖາມໄດ້ແກ່: ແບບສອບຖາມຂໍ້ມູນສ່ວນບຸກຄົນ
2. ແບບສຳພາດໄດ້ແກ່: ແບບສຳພາດຂໍ້ມູນດ້ານບຸກຄົນ, ແບບສຳພາດຂໍ້ມູນດ້ານຄອບຄົວ, ແບບສຳພາດຂໍ້ມູນດ້ານອິດທິພົນທາງສັງຄົມ.

3. ແບບສັງເກດ

4. ການຢ້ຽມຢາມເຮືອນ

5. ລະບຽບສະສົມ

6. ບັນທຶກປະຈຳວັນ

## 4. ການເກັບກຳລວບລວມຂໍ້ມູນຜູ້ວິໄຈ

ດຳເນີນການເກັບກຳລວບລວມຂໍ້ມູນຕາມຂັ້ນຕອນດັ່ງຕໍ່ໄປນີ້:

1) ກຳນົດບັນຫາ
2) ລວບລວມຂໍ້ມູນ ແລະ ການວິເຄາະຂໍ້ມູນ
3) ແນວທາງການຊ່ວຍເຫຼືອ
4) ການສະຫຼຸບຜົນ ແລະ ຂໍ້ສະເໜີແນະ

## 5. ສະຫຼຸບຜົນການວິໄຈ

ຈາກການສຶກສາພົບວ່າຂະບວນການເກີດພຶດຕິກຳຄວາມຮຸນແຮງຂອງນັກຮຽນໄວລຸ້ນນັ້ນ ເກີດຈາກ ປັດໄຈຫຼາຍໆດ້ານທັງປັດໄຈດ້ານບຸກຄົນ, ປັດໄຈດ້ານຄອບຄົວ ແລະ ປັດໄຈທາງສັງຄົມ ລ້ວນແຕ່ມີຄວາມສຳພັນຕໍ່ພຶດຕິກຳຄວາມຮຸນແຮງຂອງນັກຮຽນໄວລຸ້ນດັ່ງຕໍ່ໄປນີ້:

1. ສາເຫດດ້ານຕົນເອງ ພົບວ່າ: ນັກຮຽນໄວລຸ້ນມີເລື່ອງທະເລາະຜິດກັນກັບຜູ້ປົກຄອງເປັນປະຈຳ ມີທັດສະນະຄະຕິຕໍ່ພຶດຕິກຳຄວາມຮຸນແຮງວ່າເປັນພຶດຕິກຳທີ່ເປັນປົກກະຕິທຳມະດາ ແລະ ການມີພຶດຕິກຳຄວາມຮຸນແຮງແບບນີ້ເຮັດໃຫ້ເປັນທີ່ຍອມຮັບຂອງກຸ່ມໝູ່ເພື່ອນປະກອບກັບນັກຮຽນເປັນໄວລຸ້ນມີລັກສະນະໃຈຮ້ອນເປັນຄົນໂມໂຫງ່າຍ ແລະ  ອາລົມປ່ຽນແປງໄດ້ງ່າຍ.

2. ສາເຫດດ້ານຄອບຄົວພົບວ່າ: ເກີດຈາກການມີຄອບຄົວທີ່ບໍ່ສົມບູນ, ຄອບຄົວຢ່າຮ້າງ, ພໍ່ ຫຼື ແມ່ເສັຍຊີວິດ, ນັກຮຽນຂາດການດູແລ ແລະ ເອົາໃຈໃສ່ຈາກຜູ້ປົກຄອງ, ບັນຍາກາດໃນເຮືອນບໍ່ໜ້າຢູ່ອາໄສມີການທະເລາະຜິດກັນລະຫວ່າງສະມາຊິກໃນຄອບຄົວ.

3. ສາເຫດທາງດ້ານສັງຄົມ

3.1 ດ້ານໝູ່ເພື່ອນ ຈາກການສຶກສາພົບວ່າ: ນັກຮຽນຖືກໝູ່ເພື່ອນຊັກຊວນໃຫ້ມີເລື່ອງຊົກຕ່ອຍທະເລາະວິວາດ, ຄົບເພື່ອນທີ່ເຄີຍກໍ່ເຫດທະເລາະວິວາດ.

3.2 ສາເຫດທາງດ້ານສື່ອອນໄລຈາກການສຶກສາພົບວ່າ: ນັກຮຽນມັກຕິດຕາມຂ່າວສານທາງນີ້ຫຼາຍເຮັດໃຫ້ນັກຮຽນນັກສຶກສາຍສ້າງຄວາມຮຸນແຮງທຳຮ້າຍຮ່າງກາຍຈົນສິ່ງຜົນໃຫ້ເກີດຄວາມຊິນເຄີຍຕໍ່ພຶດຕິກຳຄວາມຮຸນແຮງວ່າເປັນເລື່ອງທຳມະດາຂອງໄວລຸ້ນ.

3.3 ສາເຫດດ້ານເກມອອນໄລ ຈາກການສຶກສາພົບວ່າ: ນັກຮຽນຫຼິ້ນເກມທີ່ມີເນື້ອຫາກ່ຽວກັບຄວາມຮຸນແຮງເປັນປະຈຳຈະເຮັດໃຫ້ຊຶມຊັບເອົາພຶດຕິກຳຄວາມຮຸນແຮງໄວ້ກັບຕົວເອງ ແລະ ມາສະແດງພຶດຕິກຳຄວາມຮຸນແຮງຕໍ່ໝູ່ເພື່ອນ ຫຼື ຄົນທີ່ອ່ອນແອກວ່າ.

## 6. ການໃຫ້ຄວາມຊ່ວຍເຫຼືອປ້ອງກັນ ແລະ ແກ້ໄຂ

ໄວລຸ້ນທີ່ມີພຶດຕິກຳຄວາມຮຸນແຮງທັງ 10 ຄົນໄດ້ຮັບການຊ່ວຍເຫຼືອໂດຍການໃຫ້ຄຳປຶກສາເປັນລາຍບຸກຄົນ ຫຼັງຈາກໃຫ້ຄຳປຶກສາແລ້ວພົບວ່າ ກຸ່ມຕົວຢ່າງມີຄວາມເຂົ້າໃຈຕົນເອງຫຼາຍຂຶ້ນ ຕະຫຼອດຈົນມີການ ປ່ຽນແປງ ແລະ ພັດທະນາຕົນເອງໄປໃນທິດທາງທີ່ດີ ເຊັ່ນ: ເຫັນຄຸນຄ່າໃນຕົນເອງ, ເຫັນອົກເຫັນໃຈຜູ້ອື່ນ ແລະ ໃຊ້ເວລາວ່າງໃຫ້ເປັນປະໂຫຍດ.

## 7. ອະພິປາຍຜົນ

ສາເຫດຂອງພຶດຕິກຳຄວາມຮຸນແຮງຂອງນັກຮຽນໄວລຸ້ນທັງ 10 ຄົນສາມາດສະຫຼຸບ ແລະ ອະພິບາຍຜົນໄດ້ດັ່ງຕໍ່ໄປນີ້:

**1. ດ້ານບຸກຄົນພົບວ່າ:** ມີຄວາມສຳພັນກັບພຶດຕິກຳຄວາມຮຸນແຮງຂອງນັກຮຽນໄວລຸ້ນໂດຍນັກຮຽນໄວລຸ້ນທັດສະນະຄະຕິຕໍ່ພຶດຕິກຳຄວາມຮຸນແຮງວ່າເປັນພຶດຕິກຳທີ່ເປັນປົກກະຕິທຳມະດາ ເປັນທີ່ຍອມຮັບ ຂອງກຸ່ມໝູ່ເພື່ອນ ເປັນການສະແດງອອກເຖິງຄວາມກ້າຫານ ປະກອບກັບນັກຮຽນເປັນໄວລຸ້ນມີລັກສະນະເປັນຄົນໃຈຮ້ອນ, ໂມໂຫງ່າຍ, ຄວບຄຸມອາລົມຂອງຕົນເອງບໍ່ຄ່ອຍໄດ້ດີ ແລະ ມັກແກ້ໄຂບັນຫາດ້ວຍຄວາມຮຸນແຮງ ຄົບເພື່ອນທີ່ເຄີຍມີປະຫວັດບໍ່ດີດ້ານການທະເລາະວິວາດ ຫຼື ມັກຕໍ່ຕ້ານສັງຄົມ ເຊັ່ນ: ບໍ່ເຊື່ອຟັງຄູອາຈານ, ຂີ້ດື້, ເອົາແຕ່ໃຈ, ມັກເຮັດຜິດກົດລະບຽບຂອງທາງໂຮງຮຽນ ເຊັ່ນ: ໜີຮຽນ, ມັກຄວາມເປັນອິດສະຫຼະ ສອດຄ່ອງກັບ ສີເຮືອນແກ້ວ ກັງວານ (2006) ເວົ້າວ່າ: ເດັກໄວລຸ້ນມີອາລົມປ່ຽນແປງງ່າຍ, ສັບສົນ, ອ່ອນໄຫວ, ມີຄວາມເຂັ້ມຂອງອາລົມສູງ ບາງຄັ້ງຂີ້ດື້, ເອົາແຕ່ໃຈຕົນເອງບໍ່ວ່າຈະອາລົມປະເພດໃດມັກມີຄວາມຮຸນແຮງ ເຊັ່ນ ກຸ່ມທິດສະດີຂອງໄວລຸ້ນ (2003) ເວົ້າວ່າ: ເດັກໄວລຸ້ນອາຍຸລະຫວ່າງ 14-18 ປີ ມີລັກສະນະທາງຮ່າງກາຍທີ່ຈະເລີນເຕີບໂຕເຕັມທີ່ ລັກສະນະທາງອາລົມຕ້ອງການຄວາມອິດສຫຼະຫຼາຍຂຶ້ນ ຈຶ່ງມັກຂັດແຍ່ງກັບພໍ່ ແລະ ແມ່ຢູ່ສະເໝີເຮັດໃຫ້ເກີດຊ່ອງວ່າງລະຫວ່າງໄວ ມີການສະແດງອອກທີ່ແຂງກະດ້າງ ເປັນການປ່ຽນແປງຈາກໄວເດັກສູ່ໄວຜູ້ໃຫຍ່ ເຮັດຕາມກຸ່ມໝູ່ເພື່ອນມີຄວາມຂັດແຍ່ງກັບຜູ້ໃຫຍ່ຫຼາຍຂຶ້ນ ນອກຈາກນີ້ ທິດສະດີສັນຊາດຍານຂອງ ຊິກມັນຟຣອຍ ນັກຈິດຕະວິທະຍາແນວຄວາມຄິດຈິດວິເຄາະເວົ້າວ່າ ມະນຸດເຮົາມີສັນຊາດຍານ 2 ຢ່າງທີ່ຕິດຕົວມາແຕ່ກຳເນີດຄື: ສັຍຊາດຍານແຫ່ງການດຳລົງຊີວິດ (Life Instinct ) ແລະ ສັນຊາດຍານການທຳລາຍຊີວິດ (Death Instinct ) ມະນຸດມີຄວາມໂຫດຮ້າຍຕ້ອງການທຳຮ້າຍຜູ້ອື່ນເກີດຂຶ້ນມາຈາກພາຍໃນຕົວຂອງບຸກຄົນນັ້ນເອງ ສອດຄ່ອງກັບ ລະພີບພັດ ສີມາລາ (2004) ສຶກສາປັດໄຈ ແລະ ຄວາມຄິດເຫັນຂອງນັກຮຽນມັດທະຍົມສຶກສາຕໍ່ການໃຊ້ຄວາມຮຸນແຮງໃນຕ່າງປະເທດພົບວ່າ ສາເຫດທີ່ນັກຮຽນມັດທະຍົມສຶກສາໃຊ້ຄວາມຮຸນແຮງເກີດຈາກປັດໄຈພາຍໃນຕົວເດັກເອງໄດ້ແກ່ ການຂາດຄວາມຄວບຄຸມອາລົມ, ການສະແດງອອກເພື່ອສ້າງຈຸດເດັ່ນຕົນເອງໃຫ້ຜູ້ອື່ນຍອມຮັບລວມທັງເປັນຄ່ານິຍົມ ແລະ ເລື່ອງຂອງສັກສີ ນອກຈາກນີ້ ອຸມາພອນ ຕັງສອນສົມບັດ (2006) ສຶກສາກ່ຽວກັບຄວາມຮຸນແຮງໃນໄວລຸ້ນ ພົບວ່າ ສາເຫດການເກີດຄວາມຮຸນແຮງກ່ຽວຂ້ອງກັບປັດໄຈສ່ວນຕົວຂອງໄວລຸ້ນເອງເຊັ່ນ ຄ່ານິຍົມ ແລະ ທັດສະນະຄະຕິທີ່ນິຍົມ

ໃຊ້ຄວາມຮຸນແຮງໃນການແກ້ໄຂບັນຫາຮ່ວມກັນໄປກັບຄ່ານິຍົມເລື່ອງຂອງສັກສີ ເມື່ອມີເຫດການທີ່ເຮັດໃຫ້ຮູ້ສຶກຖືກທ້າທາຍສັກສີ ກໍຈະເຮັດໃຫ້ເກີດພຶດຕິກຳຄວາມຮຸນແຮງຂຶ້ນມາ ມັກເປັນຄວາມຄຽດ, ການຄວບຄຸມອາລົມຕົນເອງບໍ່ໄດ້ ແລະ ຖືກໝູ່ເພື່ອນຊັກຊວນໃຫ້ກະທຳຜິດ.

**2. ດ້ານຄອບຄົວ ພົບວ່າ**: ມີຄວາມສຳພັນກັບພຶດຕິກຳຄວາມຮຸນແຮງຂອງນັກຮຽນໄວລຸ້ນນັກຮຽນໄວລຸ້ນສ່ວນຫຼາຍມີຄອບຄົວທີ່ບໍ່ສົມບູນ ເກີດຈາກພໍ່ແມ່ຢ່າຮ້າງ ຫຼື ເສຍຊີວິດ ນັກຮຽນອາດຈະຢູ່ກັບຍາດພີ່ນ້ອງ ຂາດການດູແລເອົາໃຈໃສ່ ພົບເຫັນຄວາມຮຸນແຮງໃນຄອບຄົວ ສະມາຊິກພາຍໃນຄອບຄົວມີການຂັດແຍ່ງ ແລະ ຜິດກັນເປັນປະຈຳ ປະກອບກັບພໍ່ແມ່ມີຄວາມເຂັ້ມງວດກວດກາໃນເລື່ອງການຮຽນ ແລະ ເລື່ອງຄົບໝູ່ເພື່ອນຫຼາຍເກີນໄປ ຈົນເຮັດໃຫ້ລູກເກີດຄວາມຕໍ່ຕ້ານ ແລະ ຕ້ອງການຄວາມເປັນອິດສະຫລະ ປະກອບກັບສະພາບສັງຄົມ ແລະ ເສດຖະກິດໃນປະຈຸບັນທີ່ຕ້ອງແຂ່ງຂັນກັນໃນການດຳລົງຊີວິດ ສິ່ງຜົນໃຫ້ຜູ້ປົກຄອງສົນໃຈແຕ່ການເຮັດວຽກຈົນບໍ່ຄ່ອຍມີເວລາດູແລເອົາໃຈໃສ່ລູກ ເຖິງວ່າສະຖາບັນຄອບຄົວຈະມີຄວາມສຳຄັນໃນການພັດທະນາບຸກຄົນ ແຕ່ດ້ວຍສະຖານນະການທາງເສດຖະກິດ ແລະ ສັງຄົມສິ່ງຜົນໃຫ້ເກີດບັນຫາໃນຄອບຄົວເຊັ່ນ: ສະມັດຕະພາບທີ່ຫ່າງເຫີນຂອງຄົນໃນຄອບຄົວໂດຍສະເພາະລູກ ທີ່ບໍ່ໄດ້ຮັບການລ້ຽງດູຢ່າງຖືກຕ້ອງ ແລະ ເປັນສາເຫດໃຫ້ລູກຫັນໄປຫາສິ່ງອື່ນທົດແທນ ຫລື ຮຽກຮ້ອງຄວາມສົນໃຈເຊັ່ນ: ກໍ່ເຫດຄວາມຮຸນແຮງຂຶ້ນກັບກຸ່ມໝູ່ເພື່ອນ, ໜີຮຽນ, ຕິດຢາເສບຕິດສອດຄ່ອງກັບ ລັກທະນາ ສິວັດ (2545:32) ເວົ້າວ່າ ຜົນທີ່ເກີດຈາກການອົບຮົມລ້ຽງດູຂອງຄອບຄົວທີ່ມີຕໍ່ບຸກຄົນນັ້ນ ຕັ້ງແຕ່ເກີດຈົນເຕີບໂຕເປັນຜູ້ໃຫຍ່ ບຸກຄົນທີ່ມີສຸຂະພາບກາຍ ແລະ ສຸຂະພາບຈິດດີຈະສາມາດປັບຕົວໄດ້ຢ່າງເໝາະສົມ ນັ້ນກໍ່ເພາະໄດ້ຮັບການອົບຮົມດູແລຈາກພໍ່ແມ່ ຫລື ຜູ້ປົກຄອງດ້ວຍຄວາມຮັກ, ຄວາມອົບອຸ່ນ, ຄວາມເອົາໃຈໃສ່ຢ່າງໃກ້ຊິດ ແລະ ໄດ້ຮັບຄວາມສຸກຢ່າງສະໝ່ຳສະເໝີ ຄວາມສຸກດັ່ງກ່າວຈະຊຶມຊັບເຂົ້າໄປຍັງຈິດໃຈຜູ້ນັ້ນໄດ້ເມື່ອເຕີບໂຕຂຶ້ນກໍຈະມີບຸກຄະລິກລັກສະນະທີ່ປັບຕົວໄດ້ ເຮັດໃຫ້ຈິດໃຈໜັກແໜ້ນ, ເຂັ້ມແຂງ ແລະ ພ້ອມທີ່ຈະປະເຊີນຕໍ່ອຸປະສັກຕ່າງໆໃນຊີວິດໄປໃນທາງທີ່ຈະບໍ່ສ້າງບັນຫາໃຫ້ກັບຕົນເອງ ແລະ ສັງຄົມ ແຕ່ຫາກສະພາບຄອບຄົວມີບັນຫາ ເຊັ່ນ: ຜົວເມຍຂັດແຍ່ງຜິດກັນ ຫລື ແຍກທາງກັນສະມາຊິກໃນຄອບຄົວກໍຈະເກີດບັນຫາທາງຈິດໃຈ ຄື: ບໍ່ມີຄວາມສຸກມີແຕ່ຄວາມຫວາດລະແວງ ແລະ ຄວາມຢ້ານ ສະມາຊິກໂດຍສະເພາະລູກໆຈະຂາດຄວາມຮັກຄວາມອົບອຸ່ນ ຂາດທີ່ເພິ່ງເຂົາກໍ່ຈະຫັນໄປເພິ່ງທີ່ອື່ນນອກເຮືອນທີ່ໃກ້ຊິດທີ່ສຸດຄືເພື່ອນ ເຊິ່ງອາດນຳໄປສູ່ການຄົບໝູ່ເພື່ອນທີ່ບໍ່ດີຖືກຊັກຈູງໄປໃນທາງທີ່ຜິດ ຫລື ຫັນໄປເພິ່ງຢາເສບຕິດ ສາເຫດເພາະມີບັນຫາຈາກຄອບຄົວ ເຊິ່ງໄດ້ແກ່: ພໍ່ແມ່ເລີກກັນ ຫລື ຢ່າຮ້າງກັນ ນອກຈາກນີ້ຄອບຄົວທີ່ອົບຮົມລ້ຽງດູລູກດ້ວຍຄວາມເຂັ້ມງວດສິ່ງຜົນໃຫ້ເດັກຕໍ່ຕ້ານກົດລະບຽບ ເຊັ່ນ: ອົງການອະນາໄມໂລກ (2002 ) ກ່າວວ່າສາເຫດຂອງຄວາມຮຸນແຮງໃນໄວລຸ້ນເກີດຈາກສິ່ງແວດລ້ອມທາງຄອບຄົວເປັນປັດໄຈທີ່ສຳຄັນໃນການພັດທະນາພຶດຕິກຳຄວາມຮຸນແຮງຂອງໄວລຸ້ນ ຄື: ພໍ່ແມ່ຜູ້ປົກຄອງຂາດການດູແລເອົາໃຈໃສ່ຄວບຄຸມຕັ້ງແຕ່ນ້ອຍ ແລະ ໃຊ້ການລົງໂທດເດັກນ້ອຍດ້ວຍ ຄວາມຮຸນແຮງ, ດ່າດ້ວຍຄວາມຫຍາບຄາຍ ພໍ່ແມ່ມີຄວາມຂັດແຍ່ງກັນຄອບຄົວຂາດຄວາມສຳພັນກັນ ມັກມີການທຳຮ້າຍກັນພາຍໃນຄອບຄົວ ມີປະສົບການທີ່ພໍ່ແມ່ແຕກແຍກ ຫລື ຢ່າຮ້າງກັນ ຕັ້ງແຕ່ຍັງ

ນ້ອຍ ຄົບໝູ່ ເພື່ອນບໍ່ດີ ສອດຄ່ອງກັບ ເຄນ (Kent.1976;ອ້າງອີງຈາກ ຄະນະກໍາມາທິການກິດຈະການແມ່ຍິງເຍົາວະຊົນ ແລະ ຜູ້ສູງອາຍຸ ) ກ່າວວ່າຜົນກະທົບຈາກກໍລະນີຄວາມບົກຜ່ອງຂາດການປະຊາສໍາພັນຈາກການລ້ຽງດູອາດຈະສົ່ງຜົນກະທົບຈຕໍ່ຮ່າງດ້ານຮ່າງກາຍ, ສະຕິປັນຍາ ແລະ ພຶດຕິກໍາທາງສັງຄົມ ສ່ວນທາງດ້ານຮ່າງກາຍໄດ້ແກ່ພັດທະນາການດ້ານຮ່າງກາຍຂະຫຍາຕົວຊ້າ ຮ່າງກາຍຂາດສານອາຫານ ສ່ວນທາງດ້ານສະຕິປັນຍານັ້ນ ເຄນທ໌ ກ່າວວ່າ 82% ຂອງກຸ່ມເດັກທີ່ຖືກປ່ອຍປະລະເລີຍ ພົບວ່າບໍ່ປະສົບຜົນສໍາເລັດທາງດ້ານການຮຽນ ນອກຈາກນີ້ ພົບວ່າ 87% ຂອງກຸ່ມເດັກທີ່ປ່ອຍປະລະເລີຍ ມີລະດັບຄະແນນສະຕິປັນຍາ ນ້ອຍກວ່າ ຫລື ເທົ່າກັບ 89 ສໍາລັບພຶດຕິກໍາທາງສັງຄົມນັ້ນ ເດັກຈະມີຄວາມບົກຜ່ອງທາງອາລົມເດັກຈະບໍ່ສະແດງອາລົມຄວາມຮູ້ສຶກ, ມີສຸຂະພາບຈິດທີ່ບໍ່ປົກກະຕິມີຄວາມຮຸນແຮງເປັນຕົ້ນ.

**3. ດ້ານອິດທິພົນທາງສັງຄົມ**

3.1 ດ້ານໝູ່ເພື່ອນຈາກການສຶກສາພົບວ່າ ມີຄວາມສໍາພັນກັບພຶດຕິກໍາຄວາມຮຸນແຮງຂອງນັກຮຽນໂດຍຖືກໝູ່ເພື່ອນຊັກຊວນໃຫ້ມີເລື່ອງທະເລາະວິວາດ ຄົບໝູ່ເພື່ອນບໍ່ດີ ແລະ ມີກິດຈະກໍາດ້ານລົບຕໍ່ຕ້ານສັງຄົມ ເຊັ່ນ: ໜີຮຽນ, ຕີກັນ ເມື່ອເກີດບັນຫາດ້ານຄວາມຮຸນແຮງນັກຮຽນຈະປຶກສາໝູ່ເພື່ອນກ່ອນໝູ່ ຈຶ່ງນໍາໄປສູ່ການຜິດຖຽງກັນ ແລະ ຕີກັນ ບາງຄົນມາເຂົ້າກຸ່ມໝູ່ເພື່ອນ ເພື່ອໃຫ້ເປັນທີ່ຍອມຮັບ, ບາງຄົນມາເຂົ້າກຸ່ມໝູ່ເພື່ອນເພື່ອໜີຄວາມເບື່ອໜ່າຍຈາກຄອບຄົວ ເຊິ່ງຈາກການຖືກປະລະເລີຍບໍ່ໄດ້ຮັບການໃຫ້ຄໍາປຶກສາຢ່າງຖືກຕ້ອງຈາກຜູ້ໃຫ່ຍ ນັກຮຽນກໍ່ມັກສະແດງພຶດຕິກໍາທີ່ບໍ່ເໝາະສົມຕ່າງໆກັບກຸ່ມໝູ່ເພື່ອນ ສອດຄ່ອງກັບ ສີເຮືອນ ແກ້ວກັງວານ (2006) ກ່າວວ່າ ເດັກເຂົ້າກຸ່ມກັນໄດ້ດີນແໜ້ນແຟ້ນ ແລະຜູກພັນກັບໝູ່ເພື່ອນໃນກຸ່ມຫລາຍຂຶ້ນ ເພາະສາມາດຮ່ວມສຸກຮ່ວມທຸກແກ້ໄຂ ແລະ ເຂົ້າໃຈບັນຫາຂອງກັນ ແລະ ກັນດີກວ່າຄົນຕ່າງໄວ ການລວມກັນເປັນກຸ່ມຂອງເດັກເປັນໄປໂດຍທໍາມະຊາດ ຄອບຄົວເລີ່ມມີອິດທິພົນນ້ອຍລົງ ສະນັ້ນລັກສະນະຊົ່ວດີຂອງກຸ່ມຈຶ່ງເປັນເຄື່ອງຊີ້ຕາຊີວິດຂອງເດັກໃນໄລຍະໄວລຸ້ນ ແລະໄລຍະໄວຜູ້ໃຫຍ່ ແຕ່ໃນກົງກັນຂ້າມ ໝູ່ເພື່ອນກໍອາດຊັກຊວນນໍາໄວລຸ້ນໄປໃນທາງເສື່ອມຖອຍ ຜູ້ເປັນຄະດີໄວລຸ້ນຫລວງຫລາຍໃນຫລາຍປະເທດ ເມື່ອຄົ້ນຫາສາເຫດ ກໍມັກຈະພົບວ່າປັດໄຈໜຶ່ງເກີດຈາກໝູ່ເພື່ອນຊັກຈູງໃຈ ສອດຄ່ອງກັບ ເພັດຈັນ ປະດໍາຊຸເຊີເລີ ແລະ ຄະນະ (2008) ສຶກສາກ່ຽວກັບຄວາມຮຸນແຮງໃນຕົວເດັກ ແລະ ເຍົາວະຊົນ ພົບວ່າການທີ່ໝູ່ເພື່ອນບອກ ຫລື ແນະນໍາໃຫ້ໃຊ້ຄວາມຮຸນແຮງ ແລະການມີກຸ່ມໝູ່ເພື່ອນຊະນິດທີ່ມີກິດຈະກໍາທາງລົບ ຫລື ຕໍ່ຕ້ານສັງຄົມ ເຊັ່ນ: ຜິດຖຽງກັນ, ດື່ມສິ່ງມຶນເມົາ, ຫຼີ້ນການພະນັນເປັນຕົວແປທີ່ສໍາພັນກັບການໃຊ້ຄວາມຮຸນແຮງຂອງເດັກ ແລະ ໄວລຸ້ນໃນເວລາຕໍ່ມາ.

3.2 ດ້ານສື່ສານ ຈາກການສຶກສາພົບວ່າ ມີຄວາມສໍາພັນກັບພຶດຕິກໍາຄວາມຮຸນແຮງຂອງນັກຮຽນໂດຍນັກຮຽນໄວລຸ້ນມັກຕິດຕາມຂ່າວທີ່ກ່ຽວກັບນັກຮຽນນັກສຶກສາສາຍຜິດຖຽງກັນ ຈາກ ສື່ໂທລະທັດ ແລະ ຄລິບວີດີໂອທາງໂທລະສັບມືຖືທີ່ສົ່ງໃຫ້ກັນໃນກຸ່ມໝູ່ເພື່ອນໆໄວລຸ້ນ ເຊິ່ງການຮັບຊົມພາບຂ່າວທີ່ມີເນື້ອໃນພຶດຕະກໍາຄວາມຮຸນແຮງທໍາໃຫ້ມີອິດທິພົນຕໍ່ທັດສະນະຄະຕິຂອງນັກຮຽນວ່າພຶດຕິກໍາການໃຊ້ຄວາມຮຸນແຮງເປັນເລື່ອງປົກກະຕິທໍາມະດາ ນອກຈາກນີ້ເນື່ອງຈາກປັດຈຸບັນເທັກໂນໂລຍີດ້ານສື່ສານມີ

ຄວາມພັດທະນາກ້າວໜ້າຫລາຍເຮັດໃຫ້ຄົນທຸກເພດທຸກໄວເຂົ້າເຖິງສື່ໄດ້ຢ່າງງ່າຍດາຍ ແລະ ວ່ອງໄວ ສຽງ ແລະ ພາບທີ່ນັກຮຽນໄດ້ຮັບຊົມຈາກສື່ຫຼາຍໆຄັ້ງ ນອກຈາກຈະປູກຝັງຄ່ານິຍົມຄວາມຮຸນແຮງແລ້ວຍັງສົ່ງຜົນໃຫ້ເກີດການຮຽນແບບພຶດຕິກຳຄວາມຮຸນແຮງໄດ້ອີກທາງໜຶ່ງ ດັ່ງເຊັ່ນ ຍິງທຸດ ວິງພິນມະສານ (2004) ກ່າວວ່າ ອິດທິພົນຂອງສື່ໂທລະທັດ ແລະ ສື່ໂທລະສັບມືຖືທີ່ມີຜົນຕໍ່ພຶດຕິກຳເດັກວ່າບັນຫາຄອບຄົວໂດຍສະເພາະໃນເມືອງໃຫຍ່ ສ່ວນໃຫຍ່ພໍ່ແມ່ບໍ່ມີເວລາໃຫ້ລູກ ເນື່ອງຈາກບໍ່ຮູ້ວິທີຈັດການເວລາ ເມື່ອຕ້ອງເຮັດພາລະກິດຂອງຕົນຈຶ່ງມັກປ່ອຍໃຫ້ລູກຢູ່ນິ່ງໆໜ້າໂທລະທັດ ຫຼື ໃຫ້ຫຼິ້ນມືຖື ນອກຈາກນີ້ຍັງບໍ່ມີກິດຈະກຳສ້າງສັນ ເນື່ອງຈາກບໍ່ເຫັນຜົນຮ້າຍທີ່ຈະຕາມມາ ດັ່ງນັ້ນຈຶ່ງບໍ່ຄວນໃຫ້ເດັກເບິ່ງໂທລະທັດ ຫຼື ມືຖືດົນເກີນ 1 - 2 ຊົ່ວໂມງຕໍ່ມື້ເພາະພຶດຕິກຳແບບນີ້ຈະເຮັດໃຫ້ເດັກມີສະມະທິສັ້ນ ບໍ່ຮູ້ຈັກການເຮັດວຽກໃຫ້ສຳເລັດ, ຄວາມຄິດສ້າງສັນຫຼຸດລົງມີບັນຫາເລື່ອງສະຕິປັນຍາເກີດບັນຫາຮຸນແຮງໃນດ້ານການຮຽນແບບຄວາມຊິນຊາ ສອດຄ່ອງກັບຄະນະກຳມາທິການກິດຈະການແມ່ຍິງເຍົາວະຊົນ ແລະ ຜູ້ສູງອາຍຸ (2007) ກ່າວວ່າສາເຫດແຫ່ງຄວາມຮຸນແຮງປະການໜຶ່ງເກີດຈາກສື່ທີ່ຜະລິດໃນຮູບແບບຕ່າງໆມີຄວາມພົວພັນກັບພຶດຕິກຳການຮຽນຮູ້ ບຸກຄົນອາດຈະຮຽນຮູ້ການຮຽນແບບຄວາມຮຸນແຮງຈາກສື່ໃນຮູບແບບຕ່າງໆ ດົນໆໄປຈົນກາຍເປັນຄ່ານິຍົມ ຫລື ຄວາມຊິນຊາທີ່ຮູ້ສຶກວ່າການສະແດງພຶດຕິກຳນັ້ນເປັນເລື່ອງປົກກະຕິທຳມະດາບໍ່ເປັນຄວາມຜິດແຕ່ຢ່າງໃດໂດຍສາມາດຖ່າຍທອດຈາກລຸ້ນໜຶ່ງສູ່ຄົນອີກລຸ້ນໜຶ່ງໄດ້ເຊັ່ນ ຄວາມຮຸນແຮງຈາກສື່ສານ ໂທລະທັດ, ຮູບເງົາ, ຄລິບວິດີໂອຈາກມືຖື ເປັນຕົ້ນ

3.3 ດ້ານເກມອອນໄລ ຈາກການສຶກສາພົບວ່າ ມີຄວາມກ່ຽວຂ້ອງກັບພຶດຕິກຳຄວາມຮຸນແຮງຂອງນັກຮຽນໂດຍນັກຮຽນໄວລຸ້ນມັກຫລິ້ນເກມປະເພດທີ່ມີເນື້ອຫາກ່ຽວກັບຄວາມຮຸນແຮງ ເຊິ່ງມີອິດທິພົນຕໍ່ນັກຮຽນໃຫ້ຊຶມຊັບເອົາພຶດຕິກຳຄວາມຮຸນແຮງນັ້ນໄວ້ກັບຕົນເອງກາຍເປັນຄົນໂມໂຫງ່າຍ, ຫງຸດຫງິດ , ເອົາແຕ່ໃຈ ແລະ ຈະສະແດງພຶດຕິກຳຄວາມຮຸນແຮງອອກຫລາຍກັບໝູ່ເພື່ອນນັກຮຽນນຳກັນ ຫລື ຂົ່ມເຫງຄົນທີ່ອ່ອນແອ ກວ່າ ທັງການຫລິ້ນເກມອອນໄລມື້ລະຫຼາຍໆຊົ່ວໂມງກໍເຮັດໃຫ້ຂາດການພົບປະເວົ້າກັບສະມາຊິກໃນ ຄອບຄົວສົ່ງຜົນໃຫ້ສຳພັນຕະພາບຫ່າງເຫີນລະຫວ່າງສະມາຊິກໃນະຄອບຄົວ ແລະ ເນື່ອງຈາກການຫລິ້ນເກມທີ່ມີເນື້ອຫາກ່ຽວກັບຄວາມຮຸນແຮງທຳໃຫ້ນັກຮຽນສາມາດຄວບຄຸມຕົວລະຄອນທີ່ຢູ່ໃນເກມໄດ້ ແລະ ສາມາດເຮັດຫຍັງກໍໄດ້ຢ່າງອິດສະຫລະເສລີ ເຊິ່ງແຕກຕ່າງຈາກຊີວິດຈິງທີ່ບໍ່ສາມາດເຮັດໄດ້ເຮັດໃຫ້ຮູ້ສຶກມ່ວນ ແລະ ມີຄວາມທ້າທາຍ ເມື່ອຫຼິ້ນຊະນະກໍຈະນຳໄປອວດໝູ່ເພື່ອນໆໃນກຸ່ມໄດ້ ການຫລິ້ນເກມອອນໄລທີ່ມີຄວາມຮຸນແຮງນອກຈາກຈະເປັນການສົ່ງເສີມຄວາມຮຸນແຮງຂອງນັກຮຽນແລ້ວຍັງເປັນສາເຫດຂອງການຮຽນແບບພຶດຕິກຳດ້ານຄວາມຮຸນແຮງໃຫ້ນັກຮຽນອີກຊ່ອງທາງໜຶ່ງໂດຍຜ່ານຕົວລະຄອນ, ໃຊ້ອາວຸ ເນື້ອຫາການທຳຮ້າຍກັນໃຫ້ອີກຝ່າຍເສຍຊີວິດ ສອດຄ່ອງ ກັບສົມຊາຍ ຈະເລີນອຳນວຍສຸກ (2006 :ອອນໄລ ) ກ່າວວ່າ ສຳລັບຜົນກະທົບຂອງການຫລິ້ນເກມອອນໄລນັ້ນ ສົ່ງຜົນໃຫ້ສຸຂະພາບເສື່ອມໂຊມ, ສາມັດຕະພາບລະຫວ່າງໝູ່ເພື່ອນຫຼຸດລົງເຮັດໃຫ້ເກີດບັນຫາການໜີຮຽນ ແລະ ການຫລິ້ນເກມທີ່ມີເນື້ອຫາກ່ຽວກັບຄວາມຮຸນແຮງເຮັດໃຫ້ເດັກກາຍເປັນຄົນອາລົມຮ້ອນ ສ່ວນສາເຫດການຫລິ້ນເກມມາຈາກຄວາມຢາກລອງເກມມີຄວາມທ້າທາຍ, ໝູ່ເພື່ອນຊັກຊວນ ຮູ້ສຶກເຂົ້າກຸ່ມໝູ່

ເພື່ອນມີເລື່ອງເວົ້ານຳໃນເກມອອນໄລຕ່າງໆມີຄວາມຫຼາກຫຼາຍ  ສອດຄ່ອງກັບ ສົມຊາຍ ຈັກພັນ (2008: ອອນໄລ )  ກ່າວວ່າ ການຫລິ້ນເກມອອນໄລ ຈະມີຜົນຕໍ່ສຸຂະພາບຈິດຂອງເດັກ ແລະ ເດັກຈະຫຼຸດຄວາມສຳພັນກັບໝູ່ເພື່ອນໆລົງໄປ ແຕ່ຈະໄປຕິດກັບເຄື່ອງຄອມພິວເຕີ ຫຼື ມືຖືແທນເພາະສາມາດເອົາຊະນະທຸກຢ່າງໄດ້ໃນເກມ ເຊິ່ງຊີວິດຈິງບໍ່ໄດ້ເປັນແບບນັ້ນ ເດັກຕ້ອງຮູ້ພ່າຍແພ້ຮູ້ຊະນະ ບໍ່ແມ່ນຮູ້ແຕ່ຢາກໄດ້ໄຊຊະນະຢ່າງດຽວ ອາດຈະກາຍເປັນເດັກໃຈຮ້ອນ ດັ່ງນັ້ນເດັກເຫຼົ່ານີ້ບໍ່ຮູ້ຈັກຊີວິດແທ້ຈິງຈະຮັບພຽງຊີວິດຈຳລອງທີ່ຢູ່ໃນເກມ ເຮັດໃຫ້ເດັກຢູ່ໃນໂລກຂອງການຈຳລອງໃນຈິນຕະນາການ ສະນັ້ນເມື່ອ ເດັກກຸ່ມນີ້ເຕີບໃຫຍ່ຂຶ້ນກໍ່ຈະມີບັນຫາໃນການໃຊ້ຊີວິດປົກກະຕິຢ່າງຄົນທົ່ວໄປໄດ້ລຳບາກເພາະການເອົາຊະນະໃນເກມຕ່າງຈາກການເອົາຊະນະໃນຊີວິດຈິງ ເດັກຈະບໍ່ຮູ້ວິທີການເອົາຊະນະວ່າໄດ້ມາແບບໃດ ແລະ ຜົນທີ່ຈະເກີດຕາມມາຈາກການເອົາຊະນະຈະເປັນແບບໃດ ເຊິ່ງຈະສົ່ງຜົນໃຫ້ເດັກຈະເປັນຄົນມັກເອົາຊະນະຄົນຫລື ອາດຈະບໍ່ຄຳນຶງເຖິງຄວາມຮູ້ສຶກຄົນອື່ນເລີຍໃນອະນາຄົດ.

## 8. ຂໍ້ສະເໜີແນະ

ໃນການສຶກສາວິໄຈໃນຄັ້ງນີ້ຜູ້ວິໄຈມີຂໍ້ສະເໜີແນະດັ່ງນີ້:

### 8.1. ຂໍ້ສະເໜີຜົນຂອງການວິໄຈ

1. ຂໍ້ສະເໜີແນະສຳລັບໄວລຸ້ນທີ່ມີພຶດຕິກຳຄວາມຮຸນແຮງ ສິ່ງທີ່ຄວນນຳໄປປະຕິບັດຄື: ການໃຊ້ເວລາ ວ່າງໃຫ້ເປັນປະໂຫຍດ ເຊັ່ນ ອອກກຳລັງກາຍ ຫຼື ເຮັດວຽກອະດິເລດທີ່ຕົນມັກຫາໂອກາດເຮັດກິດຈະກຳຮ່ວມກັບສະມາຊິກໃນຄອບຄົວ, ຝຶກຄວບຄຸມອາລົມຮ້ອນ ແລະ ຮຽນຮູ້ທີ່ຈະຢູ່ຮ່ວມກັນກັບຜູ້ອື່ນໂດຍປາດສະຈາກການໃຊ້ຄວາມຮຸນແຮງ, ຝຶກແກ້ບັນຫາດ້ວຍເຫດຜົນບໍ່ໃຊ້ອາລົມໃນການຕັດສິນບັນຫາ ເມື່ອມີເລື່ອງບໍ່ສະບາຍໃຈຄວນປຶກສາຜູ້ປົກຄອງ ຫຼື ຜູ້ໃຫຍ່ທີ່ໄວ້ໃຈໄດ້ວ່າຈະຊ່ວຍແນະນຳໃນການແກ້ໄຂບັນຫາທີ່ດີໄດ້ ເລືອກຄົບໝູ່ເພື່ອນທີ່ດີບໍ່ຊວນໄປຫາເລື່ອງກັບຄົນອື່ນເພື່ອຫຼີກລ້ຽງຄວາມຮຸນແຮງ.

2. ຂໍ້ສະເໜີແນະສຳລັບ ພໍ່ແມ່ຜູ້ປົກຄອງ ຄວນຫາໂອກາດເຮັດກິດຈະກຳກັບລູກເພື່ອສ້າງສຳພັນສະມັດຕະພາບທີ່ດີໃຫ້ລູກຮູ້ສຶກວ່າຕົນເປັນສະມາຊິກຄົນສຳຄັນໃນຄອບຄົວ ເປີດໂອກາດໃຫ້ລູກໄດ້ໃຊ້ຄວາມສາມາດເຕັມຕາມສະພາບຂອງຕົນເອງໃນສິ່ງທີ່ເຮັດໄດ້ໂດຍມີພໍ່ແມ່ຄ່ອຍຖ້າໃຫ້ຄຳແນະນຳຢ່າງໃກ້ຊິດບໍ່ຄວນເຂັ້ມງວດ ຫລື ປ່ອຍປະລະເລີຍກັບລູກຫລາຍເກີນໄປ ພໍ່ແມ່ຄວນໃຫ້ຄວາມຮັກຄວາມເຂົ້າໃຈກັບລູກສ້າງບັນຍາກາດທີ່ດີພາຍໃນຄອບຄົວໃຫ້ຄວາມຮັກຄວາມອົບອຸ່ນກັບລູກຢ່າງພຽງພໍ ເພາະໄວລຸ້ນເປັນໄວທີ່ມີຄວາມປ່ຽນແປງທັງໃນດ້ານຮ່າງກາຍ, ສະຕິປັນຍາ ແລະ ອາລົມ ຢ່າງຊັດເຈນໃນທຸກດ້ານ ດັ່ງນັ້ນພໍ່ແມ່ຜູ້ປົກຄອງຈຶ່ງຄວນດູແລເອົາໃຈໃສ່ລູກໄວລຸ້ນຢ່າງໃກ້ຊິດ.

3. ໝູ່ເພື່ອນ ເປັນຄົນທີ່ໄວລຸ້ນໃຫ້ຄວາມສຳຄັນເປັນທຳອິດ ດັ່ງນັ້ນການຄົບໝູ່ເພື່ອນທີ່ດີຈຶ່ງມີຄວາມສຳຄັນຕໍ່ພຶດຕິກຳຂອງໄວລຸ້ນດ້ວຍ ຄວນມີກິດຈະກຳທີ່ສ້າງສັນເຮັດຮ່ວມກັນ ເຊັ່ນ ຫລິ້ນດົນຕີ ຫຼື ກິລາ ຮ່ວມກັນສ້າງປະໂຫຍດຊ່ວຍເຫຼືອສັງຄົມຫາໂອກາດຄວນຮູ້ຈັກເຮັດກິດຈະກຳທີ່ເປັນສາທາລະນະປະໂຫຍດຮ່ວມກັນໃຫ້ຄຳປຶກສາທີ່ດີມີເຫດຜົນກັບໝູ່ເພື່ອນໄດ້.

4. ສື່ຕ່າງໆທີ່ນຳສະເໜີພາບຂ່າວສານກ່ຽວກັບຄວາມຮຸນແຮງ ຄວນກວດສອບຂ່າວໃຫ້ລະອຽດທຸກແງ່ມຸມລາຍລະອຽດ ຄວນຄຳນຶງເຖິງເດັກ ແລະ ເຍົາວະຊົນທີ່ຍັງບໍ່ມີພິຈາລະນາສິ່ງທີ່ຄວນເຮັດ ແລະ ບໍ່ຄວນເຮັດເມື່ອສື່ນຳສະເໜີຂ່າວຄວາມຮຸນແຮງແລ້ວຄວນມີການນຳສະເໜີຄວາມຄິດເຫັນຂອງນັກວິຊາການເພື່ອຊີ້ໃຫ້ເຫັນຜົນເສຍ ແລະ ສາເຫດຂອງພຶດຕິກຳດັ່ງກ່າວບໍ່ຄວນສະເໜີຂ່າວທີ່ຈະເຮັດໃຫ້ຜູ້ຮູ້ບິດເຫັນແລ້ວຮູ້ສຶກແຄ້ນເຄືອນ ເພາະຈະເປັນການສົ່ງເສີມຄວາມຮຸນແຮງເຂົ້າໄປໃນໃຈຂອງເດັກເກມອອໄລທີ່ມີເນື້ອຫາຄວາມຮຸນແຮງຄວນໄດ້ຮັບການຈັດລະບຽບທາງກົດຫມາຍຈາກພາກລັດກຳໜົດກຸ່ມອາຍຸຜູ້ຫລິ້ນ ແລະ ກວດກາບໍ່ໃຫ້ມີຮ້ານເກມອອນໄລເປີດຢູ່ໃກ້ບໍລິເວນໂຮງຮຽນ.

8.2. ຂໍ້ສະເໜີແນະເພື່ອເຮັດການວິໄຈໃນຄັ້ງຕໍ່ໄປ

1. ໃນການສຶກສາ "ພຶດຕິກຳຄວາມຮຸນແຮງຂອງນັກຮຽນໄວລຸ້ນ" ໃນຄັ້ງນີ້ເປັນການສຶກສາກັບກຸ່ມໄວລຸ້ນທີ່ໃຫ້ຄວາມຮ່ວມມືກຸ່ມນ້ອຍໆ ບໍ່ສາມາດທີ່ຈະສະຫລຸບຄອບຄຸມເຖິງສາເຫດດ້ານພຶດຕິກຳຄວາມຮຸນແຮງຂອງນັກຮຽນໄວລຸ້ນໄດ້ທັງໝົດ ດັ່ງນັ້ນຜົນການສຶກສາຈຶ່ງເປັນພຽງແງ່ມຸມໜຶ່ງທີ່ສາມາດອະທິບາຍໄດ້ພຽງກຸ່ມໜຶ່ງເທົ່ານັ້ນ ຖ້າຫາກການສຶກສາໃນຄັ້ງຕໍ່ໄປມີການສຶກສາສາເຫດຄວາມຮຸນແຮງຂອງໄວລຸ້ນທີ່ມີລັກສະນະແຕກຕ່າງອອກໄປຈາກການສຶກສາໃນຄັ້ງນີ້ ກໍ່ອາດຈະເຮັດໃຫ້ຮູ້ຜົນສະຫລຸບອື່ນໆທີ່ມີຄວາມສົນໃຈຫລາຍຂຶ້ນ.

2. ການວິໄຈຄັ້ງຕໍ່ໄປຄວນມີການສຶກສາໃນ ເຊິ່ງຄຸນນະພາບ (Qualitative Research) ເພາະຈະເຮັດໃຫ້ຜູ້ວິໄຈສາມາດເກັບຂໍ້ມູນໄດ້ເລິກຊຶ່ງຫລາຍຕາມທີ່ຕ້ອງການໃນການອອກແບບການໃຊ້ເຄື່ອງມືສຳລັບເກັບຂໍ້ມູນ ແລະ ການດຳເນີນການວິໄຈຈະເຮັດໃຫ້ໄດ້ຮູ້ເຖິງສາເຫດປະກົດການ ແລະ ຄວາມຈິງໃນເລື່ອງທີ່ສຶກສາໄດ້ເລິກຊຶ້ງຫລາຍຂຶ້ນ.

# ບັນນານຸກົມ

# ບັນນານຸກົມ


ກົມລັດ ຫຼ້າສຸວງ. (1984). ການສຶກສາບຸກຄົນເປັນລາຍກໍລະນີ. ກຸງເທບ : ພາກວິຊາການແນະແນວ ແລະ ຈິດຕະວິທະຍາການສກຶສາ ຄະນະສຶກສາສາດ ມະຫາວິທະຍາໄລສີກະລິນວິໂຣດ.

ຄະນະກຳມາທິການກິດຈະການແມ່ຍິງເຍົາວະຊົນ ແລະ ຜູ້ສູງອາຍຸ . (2007). ຄວາມຮຸນແຮງເດັກນ້ອຍ, ແມ່ຍິງ ແລະ ຜູ້ສູງອາຍຸໃນ ຄອບຄົວ. ກຣຸງເທບ : ສຳນັກງານເລຂາທິການວຸດທິສະພາ.

ຖຸ້ນພິມທົມ ອິນທະປຸດ. (2007). ເອກະສານຄຳສອນວິຊາຈິດຕະວິທະຍາການສຶກສາ . ເພັດບູນ : ສະຖາບັນການພົນສຶກສາ ວິທະຍາເຂດເພັດບູນ.

ເທວິນທອກຫນຽຍກາງ.ນັກຮຽນຊາຍຝັກໃຝ່ຄວາມຮຸນແຮງ.ສຶກຄົ້ນຄວ້າເມື່ອວັນທີ 22 ພະຈິກ 2009, ຈາກ http//www.ipoll.th.org/article/boy/boy.htm.

ບັນດິດ ສິນໄພສານ. ຈິດຕະແພດແນະແນວບັນຫາເດັກຕິດເກມເປັນວາລະແຫ່ງຊາດ .(ອອນໄລ) ແຫຼ່ງທີ່ມາ:http//www.thaimental.com/modules.php.ວັນທີ່ສຶກຄົ້ນຄວ້າ 25 ສິງຫາ 2009.

ປາຊະຍາ ກ້າຜົນ.(2005).ຈະລິຍະທຳຈັນຍາບັນຕໍ່ວິຊາຊີບ.ພິມຄັ້ງທີ 2 .ກຸງເທບ.ຂໍ້ມູນ ທາງບັນນາກົມຂອງຫໍສະໝຸດແຫ່ງຊາດ.

ພົນດີ ລິມປະລັດນາກອນ. (2004). ຜົນຂອງໂປແກມສຸຂະສຶກສາໂດຍປະຍຸກໃຊ້ການເສີມສ້າງທັກຊະຊີວິດດ້ວຍການຮຽນຮູ້ແບບມີສ່ວນຮ່ວມເປັນກຸ່ມຕໍ່ທັກຊະຊີວິດໃນການປ້ອງກັນພຶດຕິກຳຄວາມຮຸນແຮງຂອງນັກຮຽນຊັ້ນມັກທະຍົມສຶກສາປີທີ 1 ໂຮງຮຽນມັດທະຍົມ ດັດສຸຕາລາມ. ປະລິນຍານິພົນ. ( ສຸຂະສຶກສາ ). ກຸງງເທບ: ການສຶກສາມະຫາບັນດິດ ມະຫາວິທະຍາໄລສີກະລິນວິໂຣດ.

ເພັດຈັນ ປະດັບມຸກເຊີເລີ ແລະ ໝູ່ຄະນະ. (2008). ລາຍງານການວິໂຈມິຕິທາງສັງຄົມ ວັດທະນະທຳທີ່ສົ່ງຜົນຕໍ່ຄວາມຮຸນແຮງໃນເດັກ ແລະ ເຍົາວະຊົນ. ນະຄອນປະຖົມ : ຟ້າໃສການພິມ.

ຍິງຍຸດ ວົງສິນມະມົນສານ (2004). ລວບລວມບົດຄວາມເຊີ່ງວິຊາການກ່ຽວກັບຜົນກະທົບທີ່ເດັກໄດ້ຮັບຈາກສື່ ແລະ ແນວທາງໃນການຈັດການທີ່ມາ ມູນນິທິເພື່ອການພັດທະນາເດັກ . ກຣຸງເທບ : ສຳນກັງນົກອົງທະນຸສົນບັດນະນຸການສ້າງເສີມສຸຂະພາບ

ລະພີພັດ ສີມາລາ . (2004). ປັດໄຈ ແລະ ຄວາມຄິດເຫັນຂອງນັກຮຽນມັດທະຍົມສຶກສາຕໍ່ການໃຊ້ຄວາມຮຸນແຮງ ຈາກ http://www.prachatai.com/journal/2006/06/8744

ນະພາພົນ ສັງກະແສ . (2003). ເລື່ອງເພດສຶກສາຕໍ່ຄວາມຮູ້, ເຈດຕະຄະຕິ ແລະ ການສອນເພດສຶກສາໄວລຸ້ນຕອນຕົ້ນ. ວິທະຍານິພົນປະລິນຍາມະຫາບັນດິດ ມະຫາວິທະຍາໄລຊຽງໃໝ.

ນິພາ ສີໄພໂລດ. (2004). ການວິໄຈ ບັນລະຍາຍ. ສຶກສາຄົ້ນຄວ້າເມື່ອວັນທີ 29 ຕຸລາ 2008, ຈາກ http://www.watpon.com/elearning/res15.htm

ລັກຂະນາ ສີລະວັດ. (2002). ຈິດຕະວິທະຍາ ແລະ ການປັບຕົວ. ການສຶກສາລາຍກໍລະນີ. ກຸງເທບ

ວິໂລດ ອາລີຍະກຸນ . (2007). ຄວາມຮຸນແຮງໃນເດັກໄວລຸ້ນ ແລະ ສື່ ( Violence in Adolescent and Media). ສຶກສາຄົ້ນຄວ້າ ຈາກ http://www.teenrama.com/dad_mam/old_dad_mam6.htm

ວິລະພົນ ໃຫຍ່ອະລຸນ. (1999). ປັດໄຈທີ່ມີຜົນຕໍ່ຄວາມຮຸນແຮງໃນຄອບຄົວ ສຶກສາສະເພາະກໍລະນີ ວິທະຍານິພົນ

ສີເຮືອນ ແກ້ວກັງວານ.(2002). ຈິດຕະວິທະຍາພັດທະນາການຊີວິດທຸກໄວ . ກຸງເທບ : ໂຮງພິມ ມະຫາວິທະຍາໄລທໍາມະສາດ.

ສີເຮືອນ ແກ້ວກັງວານ. (2004). ຈິດຕະວິທະຍາພັດທະນາການຊີວິດທຸກໄວ ເຫຼັ້ມທີ 2 ໄວລຸ້ນ - ໄວຜູ້ສູງອາຍຸ. ກຸງເທບ : ໂຮງພິມ ມະຫາວິທະຍາໄລທໍາມະສາດ.

ສີເຮືອນ ແກ້ວກັງວານ. (2006).ຈິດຕະວິທະຍາພັດທະນາການຊີວິດທຸກໄວ ໄວລຸ້ນ - ໄວຜູ້ສູງອາຍຸ. ພິມຄັ້ງທີ9. ກຸງເທບ : ໂຮງພິມມະຫາວິທະຍາໄລທໍາມະສາດ.

ແສງສຸລີ ສໍາອີງກູ. (2000). ຈິດຕະວິທະຍາບຸກຄະລິກກະພາບ ພາກຈິດຕະວິທະຍາ ຄະນະມະນຸດສາດ ມະຫາໄລຊຽງໃໝ່

ສຸຊາ ຈັນທະເອັມ. (1999). ຈິດຕະວິທະຍາພັດທະນາການ ແລະ ຈິດຕະວິທະຍາທົ່ວໄປສະບັບແກ້ໄຂ. ພິມຄັ້ງທີ13.ກຸງເທບ ໂຮງພິມໄທພັດທະນາພານິດຈໍາກັດ.

ສົມຊາຍ ຈະເລີນອໍານວຍສຸກ.(2005). ແກ້ໄຂບັນຫາເດັກຕິດເກມ.ສຶກສາຄົ້ນຄວ້າຈາກ http://www.srisangworn.go.th/modules.php

ອຸມາພົນ ຕັງສົມບັດ. (2006). ຄວາມຮຸນແຮງໃນໄວລຸ້ນ: ລາຍງານການທົບທວນຄວາມຮູ້ ແລະ ຂໍ້ສະເໜີແນະ ແລະ ນະໂຍບາຍ. ກຸງເທບ : ອົງການສົງເຄາະທະຫານຜ່ານສຶກ.

Arthur, L., Brende, O;& Quiroz, E. (2003, January). " Violence : Incidence and Frequency of Physical and Psychological Assaults Affecting Mental Health Providers in Georgia." The Journal of General Psychology. 130 (1) : 22-45.

Barden, Renardo. (1994). Juvenile violence. New York : Marshall Cavendish: A Pracy Cororation.

Blair ;&Jones.Psychology of Adolescence for Teacher. New York : Mc Millin

Company,1964

Crow, Lester Donald.(1961)Education in The Secondary School. New York : America.

Freud, Sigmund. (1973). Abstract of Standard Edition of the Complete Psychological Work of Sigmund Freud. New York : International Universities.

Hall. Psychology of adolescence . New York : Holt, Rinchit and Winston , 1964

Hurlock,E.B. Adoescence Development. New York : Mc Graw – Hill Kogakuka Company, 1973.

Johnson, M. P. & Ferraro, K. J. (2000). Research on domestic violence in the 1990 s: Makingdistinctions. Journal of Marriage and the Family, 62, November, 948-963.

Reiso, Albert J ; & Roth, Jeffrey A. (1993). Understanding and Preventing Violence. Washington, D.C. : National Academy Press.

World Health Organization. (2002). World report on violence and health . Geneva : World HealthOrganization.

# ພາກຜະໜວກ ກ

## ລາຍຊື່ຜູ້ຊ່ຽວຊານເຄື່ອງມື

## ລາຍຊື່ຜູ້ຊ່ຽວຊານທີ່ກວດເຄື່ອງມື

1. ຜູ້ຊ່ຽວຊານ ທ່ານ ປອ ໂພທອງ ພົງສີງຄາມ
2. ຜູ້ຊ່ຽວຊານ ທ່ານ ນ ພູວຽງ ອິນທະສອນ
3. ຜູ້ຊ່ຽວຊານ ທ່ານ ປທ ສົມບູນ ຊາມຸນຕີ

# ພາກຜະໜວກ ຂ

ເຄື່ອງມືທີ່ໃຊ້ໃນການວິໄຈ

# ເຄື່ອງມືທີ່ໃຊ້ໃນການວິໄຈ

**ໃນການວິໄຈຄັ້ງນີ້ ຜູ້ວິໄຈໄດ້ດຳເນີນການຕາມຂັ້ນຕອນດັ່ງນີ້:**

1. ແຫຼ່ງຂໍ້ມູນທີ່ໃຊ້ໃນການວິໄຈ
2. ເຄື່ອງມືທີ່ໃຊ້ໃນການວິໄຈ
3. ການສ້າງເຄື່ອງມືໃນການວິໄຈ
4. ການເກັບລວບລວມຂໍ້ມູນ
5. ການວິເຄາະຂໍ້ມູນ

**1. ແຫຼ່ງຂໍ້ມູນທີ່ໃຊ້ໃນການວິໄຈ**

ແຫຼ່ງຂໍ້ມູນທີ່ໃຊ້ໃນການສຶກສາຄັ້ງນີ້ເປັນນັກຮຽນໄວລຸ້ນທີ່ກຳລັງສຶກສາໃນລະດັບຊັ້ນມັດທະຍົມສຶກສາມີອາຍຸຕັ້ງແຕ່ 14-18 ປີ ພາກຮຽນທີ 2 ສົກຮຽນ 2018-2019 ຂອງໂຮງຮຽນມັດທະຍົມສາທິດໃນວິທະຍາໄລຄູສາລະວັນ ຈຳນວນ 10 ຄົນໂດຍວິທີການສຸ່ມແບບເຈາະຈົ່ງ (Purposive sampling) ໂດຍອາຈານຝ່າຍແນະນຳໃຫ້ສຶກສານັກຮຽນທັງ 10 ຄົນທີ່ມີພຶດຕິກຳຄວາມຮຸນແຮງມີເກນການຄັດເລືອກດັ່ງນີ້:

1) ລັກສະນະຂອງພຶດຕິກາຄວາມຮຸນແຮງທີ່ສະແດງອອກທາງກາຍໄດ້ແກ່: ການໃຊ້ຕີນເຕະ ຫຼື ຖີບ, ການໃຊ້ກຳປັ້ນຕ່ອຍ, ການໃຊ້ຝ່າມືຕົບຕີ ຫລື ດຶງ, ການໃຊ້ອາວຸດ ຫຼື ສິ່ງຂອງທຳຮ້າຍຮ່າງກາຍເປັນເຫດໃຫ້ຜູ້ອື່ນໄດ້ຮັບບາດເຈັບ.

2) ລັກສະນະຂອງພຶດຕິກາຄວາມຮຸນແຮງທີ່ສະແດງອອກທາງວາຈາໄດ້ແກ່: ເວົ້າເຢາະເຢີຍ, ເວົ້າຈາຈູດູມິ້ນຄົນຕົນອື່ນ, ໃຊ້ຄຳເວົ້າທີ່ມີລັກສະນະມຸ່ງຮ້າຍໃຫ້ຄົນອື່ນໄດ້ຮັບຜົນກະທົບທາງດ້ານຈິດໃຈ, ໃຊ້ຄຳເວົ້າຂົ່ມຂູ່ຄຸກຄາມໃຫ້ຄົນອື່ນຮູ້ສຶກຫວາດຢ້ານກົວ ແລະ ມີຄວາມຮູ້ສຶກບໍ່ປອດໄພ.

**2. ເຄື່ອງມືທີ່ໃຊ້ໃນການສຶກສາງານວິໄຈ**

ເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ໄດ້ແກ່:

1.1. ແບບສອບຖາມໄດ້ແກ່: ແບບສອບຖາມຂໍ້ມູນສ່ວນບຸກຄົນ

1.2. ແບບສຳພາດໄດ້ແກ່: ແບບສຳພາດຂໍ້ມູນດ້ານບຸກຄົນ, ແບບສຳພາດຂໍ້ມູນດ້ານຄອບຄົວ, ແບບ

ສຳພາດຂໍ້ມູນດ້ານອິດທິພົນທາງສັງຄົມ.

1.3. ແບບສັງເກດ

1.4. ການຢັ້ຽມຢາມເຮືອນ

1.5. ລະບຽບສະສົມ

1.6. ບັນທຶກປະຈຳວັນ

**3. ການສ້າງເຄື່ອງມືໃນການວິໄຈ**

❖ ແບບສອບຖາມໄດ້ແກ່ແບບສອບຖາມຂໍ້ມູນສ່ວນບຸນຄົນ.

ຜູ້ວິໄຈໄດ້ສ້າງແບບສອບຖາມເພື່ອຫາຂໍ້ມູນກ່ຽວກັບປະຫວັດສ່ວນຕົວແລ້ວນຳໄປໃຫ້ກຸ່ມຕົວຢ່າງຕອບແບບສອບຖາມໃຫ້ຄົບທຸກຂໍ້ ເພື່ອເປັນປະໂຫຍດໃນການວິເຄາະຂໍ້ມູນ

ຕົວຢ່າງແບບສອບຖາມ

## ຄຳຊີ້ແຈ້ງ:

ກະລຸນາໃຫ້ລາຍລະອຽດກ່ຽວກັບຂໍ້ຂອງນັກຮຽນໃຊ້ເຄື່ອງໝາຍ ✓ ລົງໃນຫ້ອງ ☐ ທີ່ທ່ານເຫັນວ່າແມ່ນຄວາມເປັນຈິງຂອງທ່ານຫຼາຍທີ່ສຸດ.

1. ຊື່.................................ນາມສະກຸນ.............................................
2. ເພດ

   ☐ ຊາຍ ☐ ຍິງ

**3.** ອາຍຸ

☐ 12 - 15 ປີ ☐ 16 – 18 ປີ ☐ 19 ຂື້ນໄປ

**4.** ສະຖານພາບທາງຄອບຄົວ

☐ ອາໄສຢູ່ກັບພໍ່ແມ່

☐ ອາໄສຢູ່ກັບພີ່ນ້ອງ

ອື່ນໆ.....................................

**5.** ປັດຈຸບັນມີສະມາຊິກທີ່ອາໄສຢູ່ນຳກັນໃນຄອບຄົວທັງໝົດ.............ຄົນ, ອ້າຍນ້ອງຄີງ........... ຄົນ

**6.** ລະດັບການສຶກສາ:

☐ ມັດທະຍົມສຶກສາປີທີ 1

☐ ມັດທະຍົມສຶກສາປີທີ 2

☐ ມັດທະຍົມສຶກສາປີທີ 3

❖ ແບບສຳພາດ (Interview)

ຜູ້ວິໄຈໄດ້ສຶກສາການສ້າງເຄື່ອງມື ແລະ ເກັບລວບລວມຂໍ້ມູນຕາມວິທີຂອງການສຶກສາເປັນລາຍກໍລະນີດັ່ງນີ້:

1. ການກຽມ ແລະ ສ້າງແນວຄໍາຖາມໃນການສໍາພາດ ແລະ ກວດສອບ

1.1 ກ່ອນລົງມືເກັບຂໍ້ມູນສໍາພາດຜູ້ວິໄຈສ້າງຫົວຂໍ້ ແລະ ແນວຄໍາຖາມຕ່າງໆໃຫ້ຊັດເຈນວ່າຈະຖາມກ່ຽວກັບຫັຍງ ແລະ ເລື່ອງຫຍັງ ທີ່ກ່ຽວຂ້ອງກັບເນື້ອໃນຂອງການວິໄຈແນວທາງ ແລະ ຄໍາຖາມໄດ້ແກ່ເລື່ອງຫຍັງ ທີ່ກ່ຽວຂ້ອງກັບເນື້ອໃນຂອງການວິໄຈທີ່ຕ້ອງການຈະຮູ້ໃຫ້ເລີກຊຶ່ງເລືອກຫົວຂໍ້ທີ່ຈະສໍາພາດຫົວຂໍ້ທີ່ຈະສໍາພາດໃນກຄັ້ງໜຶ່ງໆ ຄວນຈໍາກັດໃຫ້ພໍເໝາະກັບເວລາບໍ່ຖາມຫຼາຍໆເລື່ອງໃນການສໍາພາດຄັ້ງດຽວເວລາໃນການສໍາພາດທີ່ພໍເໝາະຄືເວລາປະມານ 30-45 ນາທີ.

1.2 ການສ້າງຄໍາຖາມແຕ່ລະຂໍ້

1.4.2 ເລືອກສັບໃຫ້ເໝາະສົມກັບຄວາມຮູ້ອາຊີບ, ໄວອາຍຸ, ອາລົມ, ຂອງຜູ້ໃຫ້ສໍາພາດ

1.2.2 ໃຊ້ຄໍາຖາມເປີດ ເຊັ່ນ ແນວໃດບໍ່ໃຊ້ຄໍາຖາມທີ່ແນະໃຫ້ຕອບ ເຊັ່ນ: ແມ່ນ ຫຼື ບໍ່ແມ່ນ.

1.2.3 ຕ້ອງກຽມຄໍາຖາມຫຼາຍໆຄໍາຖາມສໍາລັບຄໍາຕອບໃນເລື່ອງດຽວກັນເມື່ອຜູ້ຕອບບໍ່ເຂົ້າໃຈຄໍາຖາມທໍາອິດກໍຈະໄດ້ໃຊ້ຄໍາຖາມຕໍ່ໄປທັນທີ.

1.3 ຜູ້ວິໄຈນໍາຫົວຂໍ້ແນວທາງໃນການສໍາພາດໄປຫາຄວາມຖືກຕ້ອງຂອງເນື້ອໃນ ແລະ ສອດຄອງກັບບັນຫາຂອງການວິໄຈໂດຍໃຫ້ຜູ້ຊ່ຽວຊານຈໍານວນ 3 ທ່ານ ກວດສອບຄວາມຖືກູຕ້ອງເໝາະສົມແລ້ວຈຶ່ງນໍາໄປໃຊ້ກັບກຸ່ມຕົວຢ່າງຕໍ່ໄປ.

❖ **ຕົວຢ່າງຫົວຂໍ້ການສໍາພາດ**

1. ຕົວຢ່າງແນວທາງການສໍາພາດກ່ຽວກັບກບັດທັດສະນະຄະຕິມິດຕໍ່ຄວາມຮຸນແຮງຈາກເຫດການຄວາມຮຸນແຮງໃນຄັ້ງນັ້ນນັກຮຽນຄິດແນວໃດ.
2. ຕົວຢ່າງແນວທາງການສໍາພາດກ່ຽວກັບຄອບຄົວລອງເລົ່າເລື່ອງຄອບຄົວໃຫ້ຟັງເບິ່ງ
3. ຕົວຢ່າງແນວທາງການສໍາພາດກ່ຽວກັບການໃຊ້ຄວາມຮຸນແຮງນັກຮຽນເຂົ້າກ່ຽວຂ້ອງກັບຄວາມຮຸນແຮງໄດ້ແນວໃດລອງເລົ່າໃຫ້ຟັງເບິ່ງ
4. ຕົວຢ່າງແນວທາງການສໍາພາດກ່ຽວກັບອິດທິພົນຂອງກຸ່ມເພື່ອລອງເລົ່າເລື່ອງເພື່ອນໆຂອງນັກຮຽນໃຫ້ຟັງເບິ່ງ
5. ຕົວຢ່າງແນວທາງການສໍາພາດກ່ຽວກັບອິດທິພົນຈາກສື່ມວນຊົນເຄີຍເຫັນພາບຂ່າວນັກຮຽນນັກສຶກສາພວກຕີກັນ ຫຼື ບໍ່ ( ຖ້າເຄີຍ ) ຄິດແບບໃດກັບເຫດການນີ້
6. ຕົວຢ່າງແນວທາງການສໍາພາດກ່ຽວກັບອິດທິພົນຈາກເກມອອນໄລຣ ນັກຮຽນຫຼີ້ນເກມປະເພດໃດລອງເລົ່າໃຫ້ຟັງເບິ່ງ

**ຕົວຢ່າງແບບຟອມສໍາລັບບັນທຶກການສໍາພາດ**

**ການສໍາພາດຄັ້ງທີ.....**

ຊື່..........................................ນາມສະກຸນ.......................................ອາຍຸ..............ປີ

ວັນທີ................................ເດືອນ...........................................ປີ. ..........................

ເວລາ................................ ສະຖານທີ່.........................................................

ຈຸດມຸ່ງໝາຍໃນການສໍາພາດ...............................................................................

ສະຫລຸບຜົນຈາກການສໍາພາດ.....................................................................................

..................................................................................................................................

..................................................................................................................................

ຄວາມຄິດເຫັນ…………………….……………….................................

..................................................................................................................................

..................................................................................................................................

ຂໍ້ສະເໜີແນະ..........................................................................................................

..................................................................................................................................

……………………………………………………………………………………

……………………………………………………………………………………

…………...........…………………………………………………………………

ນັດສໍາພາດຄັ້ງຕໍ່ໄປວັນທີ......................................................ເວລາ....................

ສະຖານທີ່..................................................................................................

ຜູ້ສໍາພາດ

................................................

ຕໍາແໜ່ງ

................................................

ຕົວຢ່າງແບບຟອມການບັນທຶການສັງເກດ

ການບັນທຶກການສັງເກດຄັ້ງທີ….

ຊື່ຜູ້ຖືກສັງເກດ………………………………….. ອາຍຸ………..ປີ ເພດ ………………

ວັນ ແລະ ເວລາທີ່ສັງເກດ …………………………………………………….……………...

ສະຖານທີ່……………………………………………………………………..............

ເຫດການທີ່ເກີດຂຶ້ນ( ບັນລະຍາຍພຶດຕິກຳພ້ອມກັບຄວາມຄິດເຫັນ )......................................

……………………………………………………………………………………

……………………………………………………………………………………

……………………………………………………………………………………

……………………………………………………………………………………

……………………………………………………………………………………

……………………………………………………………………………………

…………………………………

ຂໍ້ສະເໜີແນະ...................................................................................................

……………………………………………………………………………………

……………………………………………………………………………………

……………………………………………………………………………………

……………………………………………………………………………………

……………………………………………………………………………………

……………………………

ຜູ້ສຳພາດ

...............................................

ຕຳແໜ່ງ

...............................................

## 4. ການເກັບລວບລວມຂໍ້ມູນ

ເທັກນິກໃນການລວບລວມຂໍ່ມູນມີ 6 ເທັກນິກດັ່ງຕໍ່ໄປນີ້:

1. **ແບບສອບຖາມ** ໄດ້ແກ່ແບບສອບຖາມຂໍ້ມູນສ່ວນບຸກຄົນຜູ້ໃຈໄດ້ສ້າງແບບສອບຖາມເພື່ອຫາຂໍ້ມູນກ່ຽວກັບປະຫວັດສ່ວນຕົວແລ້ວນໍາໄປໃຫ້ກຸ່ມຕົວຢ່າງຕອບແບບສອບຖາມໃຫ້ຄົບທຸກຂໍ້ຄໍາຖາມເພື່ອເປັນປະໂຫຍດໃນການວິເຄາະຂໍ້ມູນ.

2. **ແບບສໍາພາດ** ໄດ້ແກ່ແບບສໍາພາດຂໍ້ມູນດ້ານບຸກຄົນແບບສໍາພາດຂໍ້ມູນດ້ານຄອບຄົວ, ແບບສໍາພາດຂໍ້ມູນດ້ານອິດທິພົນທາງສັງຄົມ, ເພື່ອຫາຂໍ້ມູນກັບນັກຮຽນ ແລະ ບຸກຄົນທີ່ກ່ຽວຂ້ອງກັບນັກຮຽນໂດຍສໍາພາດ ກັບບຸກຄົນຕໍ່ໄປນີ້

2.1 ນັກຮຽນທີ່ເປັນກຸ່ມຕົວຢ່າງ

2.2 ອາຈານປະຈໍາຫ້ອງອາຈານຝ່າຍປົກຄອງ ອາຈານປະຈໍາວິຊາ

2.3 ເພື່ອນສະນິດໃນຫ້ອງ ແລະ ເພື່ອນພາຍໃນໂຮງຮຽນ

2.4 ຜູ້ປົກຄອງເມື່ອໄປຢ້ຽມຢາມເຮືອນ

3. **ການສັງເກດ** ເພື່ອເກັບຂໍ້ມູນໄວ້ພິຈາລະນາປະກອບຂໍ້ມູນການວິນິໃສເພື່ອໃຫ້ເຂົ້າໃຈພຶດຕິກໍາ ແລະ ຫາແນວທາງການຊ່ວຍເຫຼືອຕໍ່ໄປໂດຍການສັງເກດໃນສະຖານນະການຕ່າງໆທັງທີ່ຢູ່ໃນຫ້ອງຮຽນ ແລະ ນອກຫ້ອງຮຽນ ເຊັ່ນ ໃນຫ້ອງຮຽນການເຮັດກິດຈະກໍາຕ່າງໆ ໃນການສັງເກດແຕ່ລະຄັ້ງໃຊ້ເວລາປະມານ 30 ນາທີໂດຍຫຼັງຈາກການສັງເກດສາມາດບັນທຶກ ແລະ ສະຫຼຸບພຶດຕິກໍາທີ່ສະແດງອອກມາ.

4. **ການເມືອຢ້ຽມຢາມເຮືອນ** ເພື່ອສໍາພາດນລວບລວມຂໍ້ມູນກ່ຽວກັບທາງຄອບຄົວ ແລະ ເປັນການຮ່ວມມື ກັບຜູ້ປົກຄອງທີ່ຈະຫາທາງຊ່ວຍເຫຼືອນັກຮຽນ ແລະ ສັງເກດສໍາພັດສະພາບລະຫວ່າງຜູ້ຮັບການສຶກສາກັບຜູ້ປົກຄອງ ແລະ ຮູ້ຂໍ້ມູນດ້ານທັດສະນະຄະຕິຂອງຜູ້ປົກຄອງຕໍ່ຜູ້ຮັບການສຶກສາ.

5. **ລະບຽບສະສົມ** ເພື່ອຫາຂໍ້ມູນຂອງຜູ້ຮັບການສຶກສາຈາກທາງໂຮງຮຽນທີ່ໄດ້ຮຽບຮຽງໄວ້ແລ້ວຜູ້ວິໄຈໄດ້ນໍາຂໍ້ມູນມາຈາກການກະທໍາ ແລະ ຂໍ້ມູນຈາກແຫຼ່ງອື່ນໆມາປະກອບການພິຈາລະນາເຖິງສາເຫດຂອງພຶດຕິກໍາ ຄວາມຮຸນແຮງ

6. **ບັນທຶກປະຈໍາວັນ** ຄືການໃຫ້ຜູ້ຮັບການສຶກສາບັນທຶກເລື່ອງລາວຂອງຕົນເອງເປັນການເປີດເຜີຍຄວາມຮູ້ສຶກຂອງຕົນເອງທີ່ມີຕໍ່ເຫດການ ຫຼື ສະພາບສິ່ງແວດລ້ອມອ້ອມຕົວໂດຍຊີ້ແຈ້ງເຖິງເຫດຜົນທີ່ຜູ້ຮັບການສຶກສາຂຽນບັນທຶກປະຈໍາວັນຕະຫຼອດໄລຍະເວລາ 1 ອາທິດໂດຍມີຂັ້ນຕອນດັ່ງນີ້:

- ຊື່, ເພດ, ອາຍຸຂອງຜູ້ບັນທຶກ
- ວັນ, ເດືອນ, ປີທີ່ບັນທຶກ
- ກິດຈະກໍາທີ່ເຮັດໃນວັນນັ້ນ

ນຳຂໍ້ທີ່ໄດ້ຈາກການບັນທຶກປະຈຳວັນມາວິເຄາະເພື່ອຫາຂໍ້ມູນໃນການດຳເນີນຊີວິດປະຈຳວັນ ແລະ ທັດສະນະຄະຕິຕໍ່ເຫດການນັ້ນໆ

# ປະຫວັດຫຍໍ້ຜູ້ວິໄຈ

# ປະຫວັດຜູ້ວິໄຈ



ຊື່ ແລະ ນາມສະກຸນ:        ທ້າວ ສີເພືອງ ຈອມພະຈັນ

ວັນເດືອນປີເກີດ: 28. ກຸມພາ. ປີ 1988

ສະຖານທີ່ເກີດ:              ບ້ານ ນາກົກໂພ ເມືອງສາລະວັນ ແຂວງສາລະວັນ

ສະຖານທີ່ຢູ່ປະຈຸບັນ:       ບ້ານ ນາກົກໂພ ເມືອງສາລະວັນ ແຂວງສາລະວັນ.

**ປະຫວັດການເຮັດວຽກ**

**2014 – 2015** ເປັນຄູສອນຢູ່ທີ່ວິທະຍາໄລຄູສາລະວັນ.

**2015 – 2017** ເປັນຄູສອນ ແລະ ເປັນສະມະຊິກໜ່ວຍງານພັດທະນາຄູ ຫ້ອງການພັດທະນາຄູ.

**2017 – 2018** ເປັນຄູສອນ ແລະ ເປັນສະມະຊິກໜ່ວຍງານວິໄຈພາກປະຕິບັດ ຫ້ອງການພັດທະນາຄູ.

**2018 – 2019** ເປັນຄູສອນ ແລະ ເປັນສະມະຊິກໜ່ວຍງານວິໄຈພາກປະຕິບັດ ຫ້ອງການພັດທະນາຄູ.

**2019 – 2020** ເປັນຄູສອນ ແລະ ເປັນສະມະຊິກໜ່ວຍງານວິໄຈພາກປະຕິບັດ ຫ້ອງການພັດທະນາຄູ.

**ປະຫວັດການສຶກສາ**

**2007 – 2012** ຮຽນທີ່ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດລາວ ລະດັບປະລິນຍາຕີ ສາຂາ ຈິດຕະວິທະຍາການສຶກສາ ແລະ ສຶກສາສາດ.

ຍເຫຼືອໝູ່ເພື່ອນເມື່ອມີເຫດທະເລາະວິວາດ, ຄວບຄຸມອາລົມຕົນເອງບໍ່ໄດ້ມັກຫາເລື່ອງກໍກວນຜູ້ອື່ນ.

7. ສາເຫດດ້ານຄອບຄົວ

ຈາກການສັງເກດການສຳພາດ ແລະ ການຢ້ຽມຢາມເຮືອນເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ທ້າວປອງມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນເກີດຈາກການທີ່ພໍ່ແມ່ບໍ່ຄ່ອຍໃຫ້ຄວາມເອົາໃຈໃສລາວເທົ່າທີ່ຄວນເຮັດໃຫ້ຂາດຄວາມໄວ້ໃຈບໍ່ກ້າທີ່ຈະປຶກສາບັນຫາຂອງຕົນເອງ ມີເລື່ອງຜິດກັນກັບພໍ່ແມ່ ແລະ ອ້າຍຄວາມສຳພັນລະຫ່າງສະມາຊິກໃນຄອບຄົວຄ່ອນຂ້າງຫ່າງເຫີນ.

8. ສາເຫດທາງສັງຄົມ

ຈາກການສຳພາດ ແລະ ການສັງເກດເຮັດໃຫ້ຮູ້ວ່າສາເຫດທີ່ເປັນແນວໂນ້ມເຮັດໃຫ້ທ້າວປອງມີພຶດຕິກຳຄວາມຮຸນແຮງໃນໂຮງຮຽນເກີດຈາກອິດທິພົນຂອງກຸ່ມໝູ່ເພື່ອນລາວໃຫ້ຄວາມສຳຄັນກັບໝູ່ເພື່ອນຫລາຍເມື່ອເພື່ອນມີເລື່ອງຕີກັນຕ້ອງເຂົ້າໄປຮ່ວມຕີນຳທຸກຄັ້ງທ້າວປອງມັກຕິດຕາມຮັບຊົມພາບກ່ຽວກັບນັກຮຽນຕີກັນທາງໂທລະທັດເລື່ອຍໆຈົນເກີດຄວາມຊິນຊາ ແລະ ມີທັດສະນະຄະຕິຕໍ່ພາບທີ່ໄດ້ຮັບຊົມວ່າຄວາມຮຸນແຮງໃນໄວຍລຸ້ນເປັນເລື່ອງທຳມະດາ ທ້າວປອງໃຊ້ເວລາໃນການຫລິ້ນເກມອອນໄລຣທີ່ມີເນື້ອຫາກ່ຽວຂ້ອງກັບຄວາມຮຸນແຮງມື້ລະ 4 ຊົ່ວໂມງ ຈຶ່ງເປັນແນວໂນ້ມໃຫ້ທ້າວປອງຊຶມຊັບຮັບເອົາພຶດຕິກຳຄວາມຮຸນແຮງນັ້ນໄວ້ ແລະ ຍັງສົ່ງຜົນຕໍ່ຄວາມສຳພັນໃນຄອບຄົວໃຫ້ມີຄວາມຫ່າງເຫີນ.

ແນວທາງໃນການຊ່ວຍເຫລືອຈາກການວິເຄາະແນວໂນ້ມທີ່ເປັນສາເຫດຂອງການເກີດພຶດຕິກຳຄວາມຮຸນແຮງຂອງທ້າວ ປອງທັງ 3 ດ້ານ ໄດ້ແກ່ ດ້ານຕົນເອງ, ດ້ານຄອບຄົວ ແລະ ດ້ານອິດທິພົນທາງສັງກຄົມຜູ້ວິໄຈໄດ້ດຳເນີນການຫາແນວທາງຊ່ວຍເຫຼືອດັ່ງຕໍ່ໄປນີ້.

1. ແນວທາງການຊ່ວຍເຫຼືອທີ່ໂຮງຮຽນ

1.1 ຄູແນະແນວທາງໃຫ້ມີການປັບປ່ຽນພຶດຕິກຳໃຫ້ມີຄວາມເໝາະສົມ ແລະ ມີກຄວາມຮັບຜິດຊອບຮູ້ຈັກຕຳນຶງເຖິງຜົນເສຍຂອງພຶດຕິກຳຄວາມຮຸນແຮງຂອງຕົນເອງມີຄວາມຮັບຜິດຊອບໃນຖານະລູກ ແລະ ການເປັນນັກຮຽນໃຫ້ຄວາມໝັ້ນໃຈ ແລະ ໃຫ້ກຳລັງໃຈຕະຫລອດຈົນເອົາໃຈໃສ່ຢ່າງໃກ້ຊິດກັບທ້າວປອງ ເພື່ອໃຫ້ມີຄວາມອົບອຸ່ນເຊື່ອໝັ້ນໃນຕົນເອງ ສາມາດປັບປຸງພຶດຕິກຳໃຫ້ມີຄວາມເໝາະສົມຫຼຸດຈາກພຶດຕິກຳຄວາມຮຸນແຮງ.

1.2 ຂໍຄວາມຊ່ວຍເຫລືອຈາກໝູ່ເພື່ອນໃນຫ້ອງໂດຍສະເພາະໝູ່ເພື່ອນສະໜິດຂອງທ້າວປອງເມື່ອມີເວລາວ່າງໃຫ້ເຮັດກິດຈະກຳທີ່ສ້າງສັນແທນທີ່ຈະໃຊ້ເວລາສ່ວນໃຫຍ່ໄປກັບການຍ່າງທ່ຽວ ຫລື ຫຼິ້ນເກມອອນໄລຣທີ່ມີເນື້ອຫາຄວາມຮຸນແຮງ.

2. ແນວທາງການຊ່ວຍເຫຼືອຢູ່ເຮືອນມີດັ່ງຕໍ່ໄປນີ້

2.1 ປຶກສາບັນຫາທີ່ເກີດຂຶ້ນກັບຜູ້ປົກຄອງຢູ່ເຮືອນຂອງຜູ້ຮັບການສຶກສາ ເພື່ອໃຫ້ເຂົ້າໃຈໃນຕົວຂອງ ທ້າວປອງຫລາຍຂື້ນຂໍໃຫ້ພໍ່ແມ່ກັບອ້າຍໃຫ້ຄວາມຮັກຄວາມອົບອຸ່ນ ແລະ ໃຫ້ເວລາກັບລາວໃຫ້ຫລາຍຂື້ນ ການທຳນາຍຜົນຈາກການສຶກສາບັນຫາຂອງທ້າວປອງ ພົບວ່າ ການມີພຶດຕິກຳຄວາມຮຸນແຮງ

ຂອງລາວນັ້ນມີແນວທາງໃນການຊ່ວຍເຫລືອໃຫ້ປັບປຸງພຶດຕິກຳທີ່ບໍ່ເໝາະສົມໄດ້ຫາກທ້າວປອງໄດ້ຮັບຄວາມຮັກ ແລະ ການເອົາໃຈໃສ່ ໃຫ້ກຳລັງໃຈຈາກຄອບຄົວຫລາຍຂຶ້ນຕະຫລອດຈົນສະມາຊິກໃນຄອບຄົວໃຫ້ຄວາມຮ່ວມມືໃນແນວທາງການຊ່ວຍເຫຼືອເປັນອຢ່າງດີ.

- ຂໍ້ສະເໜີແນະ

1. ຂໍ້ສະເໜີແນະສຳລັບບຜູ້ຮັບການສຶກສາທ້າວປອງຄວນຄິດວ່າພຶດຕິກຳການໃຊ້ຄວາມຮຸນແຮງນັ້ນເປັນພຶດຕິກຳທີ່ບໍ່ເໝາະສົມ ແລະ ສົ່ງຜົນເສຍຕໍ່ຕົນເອງ ແລະ ສະມາຊິກໃນຄອບຄົວ ຄວນຫາເວລາເວົ້າກັບຜູ້ປົກຄອງນຳ ເພື່ອຄວາມໃກ້ຊິດ ແລະ ສ້າງບັນຍາກາດພາຍໃນຄອບຄົວໃຫ້ມີຄວາມອົບອຸ່ນເລືອກທີ່ຈະປະຕິເສດໝູ່ເພື່ອນເວລາໝູ່ເພື່ອນມີເລື່ອງບັນຫາກັບຄົນອື່ນ ເລືອກຄົບໝູ່ເພື່ອນທີ່ດີ ແລະ ມີກິດຈະກຳທີ່ສ້າງສັນຮ່ວມກັນ ແລະ ຂໍໃຫ້ປະຕິບັດຕາມແນວທາງໃນການຊ່ວຍເຫຼືອຢ່າງຈິງຈັງ.

2. ຂໍ້ສະເໜີແນະສຳລັບຜູ້ທີ່ກ່ຽວຂ້ອງມີດັ່ງຕໍ່ໄປນີ້

2.1 ສະມາຊິກໃນຄອບຄົວຄວນໃຫ້ກຳລັງໃຈໃນສິ່ງທີ່ເດັກຊາຍປອງເຮັດໄດ້ດີ ເພື່ອໃຫ້ລາວເກີດຄວາມພາກພູມໃຈໃນຕົນເອງ ໃຫ້ກຳລັງໃຈເມື່ອປັບປຸງພຶດຕິກຳໃຫ້ດີຂຶ້ນ ເພື່ອສ້າງຄວາມໝັ້ນໃຈໃນຕົນເອງ ໃຫ້ຄຳປຶກສາກັບຄູເມື່ອມີບັນຫາ.

2.2 ອາຈານປະຈຳຊັ້ນແນະແນວ ແລະ ອາຈານປະຈຳວິຊາ ຄວນໃຫ້ຄວາມສົນໃຈ ແລະ ດູແລແບບຕໍ່ເນື່ອງ ແລະ ເຂົ້າໃຈຍອມຮັບຄວາມແຕກຕ່າງລະຫວ່າງບຸກຄົນ ຄວນໃຫ້ຄວາມຮັກກັບລາວຢ່າງຈິງໃຈ ເພື່ອໃຫ້ເກີດຄວາມໄວ້ວາງໃຈເຊື່ອໃຈບໍ່ຢ້ານຄູກ້າທີ່ຈະປຶກສາເລື່ອງພຶດຕິກຳຄວາມຮຸນແຮງຊົມເຊີຍ ແລະ ໃຫ້ກຳລັງໃຈເມືອທ້າວປອງສາມາດປັບປຸງພຶດຕິກຳຂອງຕົນເອງໃຫ້ດີຂຶ້ນ.

2.3 ໝູ່ເພື່ອນຂອງທ້າວປອງຄວນທົບທວນວ່າການຍົກພວກທຳຮ້າຍກັນເປັນພຶດຕິກຳທີ່ບໍ່ເໝາະສົມ ແລະ ຄຳນຶ່ງເຖິງຜົນເສຍທີ່ຈະຕາມມາ ແລະ ໃຫ້ກຳລັງໃຈເຊິ່ງກັນ ແລະ ກັນທີ່ຈະເລີກພຶດຕິກຳການທະເລາະວິວາດເຮັດກິດຈະກຳທີ່ສ້າງສັນເມືອມີເວລາວ່າງ.